ຫນັງສື

ມູລະຕັນໄຕ

ລິດຈະນາ ໂດຍ

ສຳລິດ ບົວສີສະຫວັດ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ໂຄງການຂຶ້ນບັນຊີໃບລານ

ມູນນິທິ ໂຕໂຍຕາ ແຫ່ງປະເທດຍີ່ປຸ່ນ

1992

ໜັງສື

ມູລະຕັນໄຕ

ລິດຈະນາ ໂດຍ

ສຳລິດ ບົວສີສະຫວັດ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ໂຄງການຂື້ນບັນຊີໃບລານ

ມູນນິທິ ໂຕໂຍຕາ ແຫ່ງປະເທດຍີ່ປຸ່ນ

1992

ທະບຽນອະນຸຍາດພິມ ເລກທີ 239/ພປ
ລົງວັນທີ 17/2/1992

ມູລະຕັນໄຕ

ລິດຈະນາໂດຍ : ມະຫາ ສຳລິດ ບົວສີສະຫວັດ

ເຕັກນິກຈັດໜ້າ ໂດຍ ທອງໃບ ໄພທີສານ
ມາລີ ທອງທຸມມາ
ສົມພອນ ທຸມມາວົງ

ພິມເທື່ອທີໜຶ່ງ 1992
ສະຫງວນ ລິຂະສິດ

ພິມທີ່ ລັດວິສາຫະກິດໂຮງພິມແຫ່ງລັດ
ພິມຈຳນວນ 1.500 ຫົວ

ຄຳນຳ

ການຄົ້ນຄວ້າວິໄຈໜັງສື ແລະ ວັນນະຄະດີ ບູຮານ ມີອາກັບດຶງດູດ ແລະ ທ້າທາຍໃຫ້ພວກເຮົາໜັບເຂົ້າຫາໂດຍບໍ່ຄຳນຶງເຖິງເງື່ອນໄຂ ທັງພາຍນອກ ແລະພາຍໃນຂອງຕົນ. ເມື່ອໂອກາດອັນເອື້ອອຳນວຍມາເຖິງ ກໍຍ່ອມເປັນທຳມະດາ ທີ່ພວກເຮົາຕ້ອງຄວາກຳໄວ້ດ້ວຍຄວາມປີຕິຊົມຊື່ນແຝງທະນົງໃຈ.

ໂດຍທົ່ວໄປ ປະຊາຊົນລາວ ເຄີຍໄດ້ຍິນໄດ້ຟັງເລື່ອງມູລະຕັນໄຕ ຈາກການອ່ານໜັງສືຜູກໃບລານຂອງຄູບາອາຈານ ຕາມວັດວາ ຫຼືຜູ້ອາວຸໂສທີ່ເລົ່າສືບຕໍ່ກັນມາຫລາຍເຊັ່ນຄົນ. ດັ່ງນັ້ນປຶ້ມຫົວນີ້ຈຶ່ງເປັນຄວາມພະຍາຍາມຢ່າງຍິ່ງ ຂອງໂຄງການຂຶ້ນທະບຽນບັນຊີໃບລານ ທີ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງຜູ້ອ່ານ ໂດຍສະເພາະຜູ້ທີ່ບໍ່ສາມາດອ່ານໜັງສືທຳໃນໃບລານໄດ້. ອີກປະການໜຶ່ງ ໜັງສືໃບລານ ເລື່ອງມູລະຕັນໄຕ ທີ່ມີຢູ່ໃນປະຈຸບັນກໍນັບມື້ທີ່ຈະກຸດຫລ້ຽນໄປຍ້ອນການເວລາ. ຖ້າບໍ່ມີການຄົ້ນຄວ້າລິດຈະນາແລະຂຶ້ນມາພິມເຜີຍແຜ່ແລ້ວເລື່ອງລາວທີ່ມີຄຸນຄ່າເຫລົ່ານີ້ກໍຈະສູນຫາຍໄປ ຢ່າງໜ້າເສັຽດາຍ. ສະນັ້ນ ໃນຂະບວນວຽກງານຂຶ້ນບັນຊີໃບລານໃນທົ່ວປະເທດ ຂອງກະຊວງກະແຫຼງຂ່າວ ແລະ ວັດທະນະທຳ ໂດຍໄດ້ຮັບທຶນສະໜັບສະໜູນ ຈາກມູນນິທິໂຕໂຍຕາ (Toyota Foundation) ແຫ່ງປະເທດຍີ່ປຸ່ນ ຊຶ່ງດຳເນີນມາເປັນເວລາ 3 ປີ ແລ້ວນີ້ ພວກເຮົາຈຶ່ງຕົກລົງຄົ້ນຄວ້າແລະລິດຈະນາໜັງສືມູລະຕັນໄຕເປັນພາສາລາວໃນປະຈຸບັນ.

ຂໍຂອບໃຈທ່ານອາຈານ ມະຫາສຳລິດ ບົວສີສະຫວັດ ທີ່ໄດ້ບາກບັ່ນພະຍາຍາມ ຄົ້ນຄວ້າ ແລະ ລິດຈະນາໜັງສື ເລື່ອງມູລະຕັນໄຕນີ້ຂຶ້ນມາ. ເຊື່ອວ່າຄົງມີສ່ວນຊ່ວຍໃຫ້ຜູ້ອ່ານເຂົ້າໃຈເລື່ອງລາວທີ່ມີມາແຕ່ບູຮານນະການ ໂດຍສະເພາະ ການສຳນຶກເຫັນສະພາບຂອງສັງຄົມ ແລະ ການດຳເນີນຄະດີ, ຕັດສິນຄວາມໃນສະໄໝກ່ອນໄດ້ເປັນຢ່າງດີ. ເປັນທຳມະດາວ່າ ບໍ່ອາດປາສະຈາກໄດ້ຂໍ້ຂາດຕົກບົກພ່ອງໃນການຄົ້ນຄວ້າຄັ້ງທຳອິດນີ້, ແຕ່ກໍຫວັງວ່າ ຜົນງານສ່ວນນີ້ ຈະມີສ່ວນປະກອບໃຫ້ການສຶກສາ ແລະ ຄົ້ນຄວ້າວິໄຈໃຫ້ເລິກເຊິ່ງຄືບກ້ວນກວ່າເກົ່າໃນຂັ້ນຕໍ່ໄປ.

ຂໍຂອບໃຈມູນນິທິໂຕໂຍຕາ ແຫ່ງປະເທດຍີ່ປຸ່ນ ທີ່ໃຫ້ທຶນອຸປະກຳດຳເນີນໂຄງການຄົ້ນຄວ້າວິໄຈ ແລະ ຈັດພິມ.

ກຸສົນຜົນບຸນອັນໃດ ທີ່ຈະອຸບັດຂຶ້ນຈາກໜັງສືເຫລັ້ມນີ້ ພວກເຮົາຂໍອຸທິດໃຫ້ແກ່ ນັກປາດອາຈານ ແລະ ຜູ້ຊົງຄຸນນະວຸດທິທຸກທ່ານ ທີ່ໄດ້ສ້າງສົມບັດ ອັນມີຄ່າຂອງຊາດ ເພື່ອເປັນມໍລະດົກຕົກທອດໃຫ້ແກ່ລູກຫລານໄດ້ສືບທອດຕໍ່ກັນໄປພາຍໜ້າ.

ວັນທີ 12 ຕຸລາ 1991

ດາລາ ກັນລະຍາ
ຫົວໜ້າໂຄງການຂົນທະບຽນບັນຊີໃບລານ

ຄຳນຳຂອງກົມວັນນະຄະດີ

ການສຶກສາຄົ້ນຄວ້າ ວິພາກ ວິໄຈ ວິຈານ ແລະ ພິມເຜີຍແຜ່ມໍລະດົກທາງປັນຍາຂອງນັກປາດອາຈານບູຮານນັ້ນກໍໄດ້ວ່າເປັນການຫຼໍ່ລູກກຸນແຈຄຳຍື່ນໃສ່ມືອະນຸຊົນຄົນຮຸ່ນໃໝ່ ໃຫ້ຮູ້ຈັກໄຂປະຕູທຳໄດ ຕູ້ຄຳພີໃບລານ ເພື່ອຊອກສະແຫວງຫາຄວາມຮູ້ຫຼາຍປະການທີ່ເຊື່ອງຊ້ອນຢູ່ໃນຕຳນານວັນນະກຳອັນເກົ່າແກ່ຫຼາຍຮ້ອຍປີ ແຫ່ງປະຫວັດ ວິວັດທະນາການທາງດ້ານສິລະປະວັດທະນະທຳ ຂອງຊາດລາວເຮົາ.

ນັກອ່ານ ນັກຄົ້ນຄວ້າຜູ້ມີສາຍຕາແຫຼມຄົມ ນັກວິຈານຜູ້ມີຈິນຕະນາການລ້ຳເລີກຜ່ອງໃສ ແລະຫຼັງການໄກ ປັນຍາຊົນ - ນັກປາດອາຈານຜູ້ສະຫຼາດສະຫຼຽວ ແລະ ກະທົບອົມກ່ອມຕົວນັກໃຫ້ຄວາມເຫັນຢ່າງເປັນເອກະສັນວ່າ : ການສືບຄົ້ນຊອກຫາວິຊາຄວາມຮູ້ຈາກແຫຼ່ງພູມປັນຍາອັນຍອດຍິ່ງຂອງມວນມະນຸດນັ້ນ ຍ່ອມບໍ່ຮູ້ຈັກກັບຍາມແກ່ເກົ້າຫຼືພົ້ນສະໄໝ ເປັນຈັກເທື່ອ. ຜົນງານທາງມັນສະໝອງຂອງບັນພະບູລຸດລາວ ທີ່ໄດ້ອຸທິດມອບໄວ້ເປັນສົມບັດຄ່າສູງ ໃຫ້ແກ່ຊາດຂອງຕົນ ແຕ່ລະກ້ອນແຕ່ລະຕ່ອນນັ້ນ ກໍເປັນສ່ວນໜຶ່ງ ທີ່ລືບໍ່ສູນ ແລະ ສ່ອງແສງປະກາຍ ຢູ່ໃນຄັງປັນຍາລວມຂອງໂລກເໝືອນກັນ.

ການນຳສະເໜີປຶ້ມກົດໝາຍບູຮານລາວສະໄໝ 400-500 ປີທີ່ຜ່ານມາ ບໍ່ໄດ້ໝາຍຄວາມວ່າ ພວກເຮົາພວມລະດົມດຶງເອົາຄົນໃໝ່ສະໄໝວິທະຍາສາດ - ເຕັກໂນໂລຊີສູງ ທີ່ພວມດຳລົງຊີວິດຢ່າງເອກອ້າງ ຢູ່ໃນອຸ່ນອາຍຂອງຄວາມຮຸ່ງເຮືອງສີວິໄລທາງດ້ານວັດຖຸ ແຫ່ງຍຸກສະໄໝ ໃຫ້ກອຍຫຼັງຄືນເຂົ້າສູ່ ແສງໄຟກະບອງ ແຫ່ງປະຫວັດສາດຍຸກເກົ່າ ແຕ່ຢ່າງໃດ. ກົງກັນຂ້າມ ການມີໂອກາດໄດ້ອ່ານໄດ້ສຳຜັດ ແລະ ເຂົ້າໃຈກົດໝາຍເກົ່າ ເຊັ່ນເລື່ອງມູລະຕັນໄຕຫຼືຄຳລາກົດໝາຍລາວບູຮານຫຼາຍຜູກຫຼາຍມັດ ທີ່ຍັງບໍ່ທັນໄດ້ຈົດກ່າຍອອກຈາກໜັງສືທຳ ຫຼືໜັງສືລາວບູຮານ ໃຫ້ເປັນຕົວໜັງສືທີ່ໃຊ້ກັນຢູ່ໃນປັດຈຸບັນນີ້ນັ້ນ ຍ່ອມມີຄຸນຄ່າ ແລະ ປະໂຫຍດສູງທາງດ້ານບຳລຸງສະໝອງ ເສີມສ້າງປັນຍາ ອັນຈະພາໃຫ້ເກີດຄວາມພູມໃຈ ແລະ ຊື່ນຊົມຊາບຊຶ້ງນຳຮອຍມື ຮອຍຄວາມດີ ຮອຍວັດທະນະທຳ ແລະ ອາລະຍະທຳ ຂອງບັນພະຊົນລາວບູຮານເຊິ່ງພວມຈະສູນຫາຍໄປກັບວັນເວລາ ຍ້ອນຂາດການຄົ້ນຄວ້າຮວບຮວມ ຂຽນກ່າຍປົກປັກຮັກສາ ແລະ ພິມເຜີຍແຜ່.

ຜົນງານການຄົ້ນຄວ້າ ແລະ ປະລິວັດ ເລື່ອງມູລະຕັນໄຕທີ່ທ່ານອາຈານ ມະຫາສຳລິດ ບົວສີສະຫວັດ ໄດ້ພາກພຽນພະຍາຍາມສ້າງຂຶ້ນມາ ຈົນປາກົດແກ່ສາຍຕາມະຫາຊົນເປັນປຶ້ມເຫຼັ້ມສຳຄັນນີ້ ນັບວ່າ ເປັນຜົນສຳເລັດອັນສະຫງ່າງາມ ເປັນໄຊຊະນະທີ່ໄຫຼຫຼັ່ງອອກມາຈາກ ຢາດ

ເຫື່ອແຮງຄວາມຄິດສ້າງສັນ ແລະ ພູມປັນຍາຂອງທ່ານ ຢ່າງໜ້າສັນລະເສີນຍິ່ງ. ກົມວັນນະຄະດີ ກະຊວງກະແຫຼງຂ່າວ ແລະ ວັດທະນະທຳ ຂໍສັນລະເສີນ ມານະຈິດອັນລໍ້າເລີກດ້ວຍແຮງເສຍສະຫຼະ ໝາກຜົນການຄົ້ນຄວ້າຂອງທ່ານ ຢ່າງເລີກເຊິ່ງ ແລະ ຈິງໃຈ. ຫວັງເປັນຢ່າງຍິ່ງວ່າ ທ່ານອາຈານ ມະຫາສຳລິດ ບົວສີສະຫວັດ ຈະຄົ້ນຄວ້າ ແລະ ຜະລິດ ຜົນງານກ້ອນໃໝ່ອອກມາໃຫ້ສັງຄົມໄດ້ຊົມໃຊ້ຕໍ່ໄປຢ່າງບໍ່ຂາດສາຍ :

> ສັງຂານ ແລະ ຮ່າງກາຍຂອງມວນມະນຸດຍ່ອມແຕກສະຫຼາຍ,
> ຄວາມຕາຍ ຄື ຈຸດຈົບຂອງຊີວິດທຸກຊີວິດ,
> ແຕ່ສິ່ງທີ່ນັກປາດຄິດ, ຂຽນ, ຄົ້ນ ແລະ ສ້າງເປັນຜົນງານຂຶ້ນມານັ້ນ ຍ່ອມບໍ່ອັນຕະລະທານ ຈາກໂລກໄປ.

ວຽງຈັນ, ວັນທີ 1 ຕຸລາ 1991

ດຣ. ທອງຄຳ ອ່ອນມະນີສອນ
ຫົວໜ້າກົມວັນນະຄະດີ

ຄຳພາຣົບ ແລະ ທັດສະນະ
ຂອງ
ຜູ້ຊຳຣະ ແລະ ປະຣິວັດ

-:-:-:-

ປະຊາຊາດລາວ ມີປະຫວັດສາດ ຄວາມເປັນມາອັນຍາວນານ ນັບເປັນພັນໆປີ ມີຮີດຄອງປະເພນີ ແລະ ວັດທະນະທຳຂອງຕົນເອງມາກມາຍຫລາກຫລາຍໃນຫລາຍດ້ານ ແລະ ຫລາຍຮູບຫລາຍສີ ອາດເວົ້າໄດ້ວ່າ ມີສາຣະພັດ ອຸດົມສົມບູນໄປດ້ວຍວັດທະນະທຳເກົ່າແກ່ ທີ່ຍັງຫລົງເຫລືອຢູ່ໃນເວລານີ້ ກໍຫລາຍ ທີ່ຫາຍສາບສູນໄປແລ້ວກໍມີ. ອັນນີ້ກໍບໍ່ແມ່ນເລື່ອງແປກປະຫລາດ ຄືງເປັນໄປຕາມກົດເກນ ແລະ ທຳມະຊາດຂອງວັດຖຸທີ່ມີການປ່ຽນແປງຕະຫລອດເວລາ. ແຕ່ກໍຍັງບໍ່ທັນສວາຍເກີນໄປ ທີ່ເຮົາຈະຫາທາງຮັກສາໄວ້ ຕາມຄວາມສາມາດ ແລະ ເງື່ອນໄຂ. ໃນເວລານີ້ນັບວ່າເປັນໂອກາດທີ່ດີກວ່າເວລາໃດຫມົດ ທີ່ພັກ ແລະ ລັດຂອງເຮົາເຂົ້າໃຈ ແລະເອົາໃຈໃສ່ຄຸນຄ່າທາງວັດທະນະທຳ ຕົວຢ່າງໄດ້ມີ ການປົກປັກຮັກສາ ແລະ ສົ່ງເສີມ ວັດທະນະທຳທີ່ກ້າວຫນ້າ ເລືອກເຟັ້ນປັບປຸງວັດທະນະທຳບາງຢ່າງທີ່ເຫມາະສົມກັບກາລະສະໄຫມ ແລະ ສ້າງສັນວັດທະນະທຳໃຫມ່ໃຫ້ສອດຄ່ອງກັບຍຸກສະໄຫມ ແລະ ສະພາບຕົວຈິງທາງສັງຄົມ ປ້ອງກັນການຮຸກຮານດ້ານວັດທະນະທຳໃນສະຫນາມຮົບ ວັດທະນະທຳ ໃນປັດຈຸບັນ ເຊິ່ງເປັນສະຫນາມຮົບອັນສຳຄັນ ຈະປະຫມາດບໍ່ໄດ້ ນັ້ນແມ່ນທ່າດີທີ່ຄວນທະນຶງໃຈ ແລະ ໃຫ້ການສະຫນັບສະຫນູນ.

ເວົ້າໂດຍສະເພາະ ວັດທະນະທຳເກົ່າແກ່ ທີ່ຍັງປາກົດເປັນຫລັກຖານ ສ່ວນຫລາຍແມ່ນຢູ່ໃນເອກະສານໃບລານ ເຊິ່ງປັດຈຸບັນນີ້ ນັບມື້ຈະລົດນ້ອຍຖອຍລົງ ແລະ ຊຸດໂຊມໄປຕາມກາລະເວລາ ທັງຜູ້ຈະສ້າງ ແລະ ປົກປັກຮັກສາຄົ້ນຄວ້າ ກໍມີນ້ອຍ ແມ່ນແຕ່ຜູ້ຈະອ່ານໄດ້ ເຂົ້າໃຈ ກໍຫາຍາກ ເນື່ອງຈາກສະພາວະການຂອງບ້ານເມືອງ ແລະ ຂອງໂລກປ່ຽນແປງໄປ ການສຶກສາໃນດ້ານນີ້ ຈຶ່ງກົກຍົກເລີກໂດຍປະຣິຍາຍ ແຕ່ສາຣະຄຸນຄ່າ ພູມສະຕິປັນຍາອັນຊົງຄ່ານັ້ນ ຍັງເປັນສິ່ງຈຳເປັນຢູ່ ຜູ້ມີວິຈາຣະນະຍານ ຄົງຊາບດີໃນເລື່ອງນີ້.

ດັ່ງນັ້ນ ໃນປັດຈຸບັນນີ້ ບຸກຄົນ ສະຖາບັນ ແລະ ປະເທດທີ່ກ້າວຫນ້າ ເຂົາເຈົ້າຈຶ່ງຫັນມາສົນໃຈໃນເລື່ອງນີ້ຫລາຍຂຶ້ນ ປາກົດວ່າ ພວກນັກສຶກສາຕ່າງປະເທດສາມາດອ່ານຫນັງສືທຳ ຫນັງສືລາວແບບເກົ່າຂອງເຮົາໄດ້ເປັນຢ່າງດີ ມີບາງຄົນໄດ້ມາສຶກສາຄົ້ນຄວ້າ ແລະ ເຮັດປະລິນຍາຂັ້ນສູງໃນດ້ານນີ້ໄປແລ້ວ ກໍມີ ນີ້ສະແດງວ່າ ເຂົາເຈົ້າເຂົ້າໃຈດີ ແລະ ຕີລາຄາສູງໃນເອກະສານບູຮານ ໂດຍສະເພາະ ໃນຫນັງສືໃບລານ ອັນເປັນພູມປັນຍາຂອງຄົນສະໄຫມກ່ອນ.

ເມື່ອເວົ້າເຖິງວັດທະນະທຳເກົ່າແກ່ ທີ່ມີຄຸນຄ່າ ປາກົດຢູ່ໃນເອກະສານໃບລານ ມີຢູ່ຫລາຍປະການ ຫລາຍດ້ານ ໃນທີ່ນີ້ ຢາກລົງເລິກໂດຍສະເພາະວັດທະນະທຳດ້ານນິຕິທຳ ຄືດ້ານກົດໝາຍ ເພາະບໍ່ມີການກ່າວເຖິງຫລາຍປານໃດ ໃນປັດຈຸບັນ ແຕ່ຕາມທີ່ໄດ້ຄົ້ນຄວ້າ ປາກົດວ່າກົດໝາຍບູຮານ ມີຢູ່ຫລາຍສະບັບ ແລະ ນັບວ່າ ກ້າວໜ້າພໍສົມຄວນ ເມື່ອທຽບໃສ່ກາລະສະໄໝ ເປັນທີ່ໜ້າທະນົງໃຈ ໃນພູມປັນຍາ ແລະ ຄວາມຮູ້ຄວາມສາມາດຂອງບຸບພະຊົນ ປູ່ຍ່າຕານາຍຂອງພວກເຮົາເປັນຢ່າງຍິ່ງ.

ເທົ່າທີ່ໄດ້ສຶກສາ ແລະ ຄົ້ນຄວ້າທີ່ພົບເຫັນເປັນລາຍລັກອັກສອນແລ້ວມີຢູ່ 4 ສະບັບຄື :

1. ໜັງສືຄຳພີ ທຳມະສາດຫລວງ
2. ໜັງສືຄຳພີ ມູລະຕັນໄຕ
3. ໜັງສືຄຳພີ ສ້ອຍສາຍຄຳ
4. ໜັງສືຄຳພີ ກົດໝາຍພະມະນູ

ແຕ່ລະຄຳພີທີ່ກ່າວມານີ້ ມີສາລະເນື້ອໃນແຕກຕ່າງກັນໄປຕາມວັດຖຸປະສົງ ແລະ ບ່ອນອ້າງອີງ ເວົ້າລວມແລ້ວ ແມ່ນໄດ້ອິດທິພົນດ້ານແນວຄິດມາຈາກສະມຸດຖາ 2 ປະການຄື :

1.- ຮີດຄອງປະເພນີເກົ່າກ່ອນຂອງລາວເຮົາ ແຕ່ດັ້ງເດີມ ບວກກັບອິດທິພົນວັດທະນະທຳ ແລກປ່ຽນກັບປະເທດເພື່ອນບ້ານທັງໃກ້ ແລະ ໄກຕາມເງື່ອນໄຂ ແລະ ຍຸກສະໄໝ.

2.- ພຸດທະປະຣັຊຍາ ແລະ ທຳມະວິໄນຂອງພະພຸດທະສາດສະໜາ ພ້ອມທັງວັນນະຄະດີ ແລະ ວັດຖຸນິທານຈາກພຸທະສາສະໜາ ດ້ານນີ້ ນັບວ່າມີອິດທິພົນຫລາຍ ເຫັນໄດ້ຈາກເນື້ອໃນຂອງກົດໝາຍນັ້ນໆ ເພື່ອຄວາມເຂົ້າໃຈຂັ້ນພື້ນຖານ ກ່ຽວກັບກົດໝາຍບູຮານລາວດັ່ງກ່າວນີ້ ຂ້າພະເຈົ້າຂໍຖືໂອກາດອະທິບາຍຈັກເລັກນ້ອຍ ໂດຍທົ່ວໄປໃນ 3 ຂໍ້ ແຕ່ຈະຂໍລົງເລິກເປັນພິເສດໃນຄຳພີມູລະຕັນໄຕ ທີ່ໄດ້ຊຳຣະ ແລະ ປະຣິວັດ ຈັດພິມເປັນຫົວ ແລ້ວນີ້ ໃນທານອງຄົ້ນຄວ້າວິໄຈ ແລະ ວິຈານ ຕາມທັດສະນະຂອງຜູ້ຊຳຣະເພື່ອເປັນແນວທາງພິຈາລະນາສຶກສາຄົ້ນຄວ້າຕໍ່ໄປ.

ຕາມຄວາມຈິງແລ້ວ ໜັງສືປະເພດນີ້ ບໍ່ແມ່ນຕຳຣາ ເພາະວ່າກາຍຍຸກສະໄໝແລ້ວ ແຕ່ວ່າເປັນໜັງສືປະເພດຄົ້ນຄວ້າທີ່ດີ ເພື່ອເຮືອງປັນຍາຂອງຜູ້ປາຖະໜາຄວາມຮູ້ກວ້າງຂວາງທາງບູຮານຄະດີ ແລະ ນິຕິສາດ.

ຍ້ອນວ່າ ໜັງສືເຫລົ່ານີ້ ຂຽນດ້ວຍອັກສອນທຳ ເປັນພາສາລາວບູຮານສຳນວນເກົ່າແກ່ ແລະຂຽນສືບຕໍ່ກັນມາຫລາຍສະຕະວັດ ໂດຍບໍ່ມີການກວດສອບແກ້ໄຂໃຫ້ຖືກຕ້ອງ ບາງທີ່ຜູ້ຂຽນຈານ ພໍແຕ່ວ່າອ່ານໄດ້ຂຽນເປັນ ບໍ່ເຂົ້າໃຈເລື້ອງ ຂຽນໄປຕາມຕົ້ນສະບັບ ຂາດຕົກແນວໃດບໍ່ໄດ້ຫົວຊາ ຍິ່ງກວ່ານັ້ນ ກ້າບໍ່ເຂົ້າໃຈ ຢາກຕື່ມບ່ອນໃດກໍຕື່ມໄດ້ ຕາມໃຈມັກ ໃຫ້ແລ້ວໆໄປເປັນພໍ ຜູ້ສ້າງ ກໍພຽງແຕ່ຕ້ອງການບຸນກຸສົນ ເພິ່ນຂຽນໃຫ້ຕົນແນວໃດ ບໍ່ໄດ້ກວດກາ ຕຶກລົງວ່າ ບໍ່ໄດ້ຄະນຶງເຖິງຄຸນນະພາບ. ດັ່ງນັ້ນ ໜັງສືເກົ່າແກ່ເຫລົ່ານີ້ ຈຶ່ງຍາກທີ່ຈະອ່ານເຂົ້າໃຈທັງອັກສອນສະ

ໄໝ ແລະພາສາກໍເກົ່າແກ່ ແລະ ຜູ້ທີ່ຈະສືບຕໍ່ຮ່ຳຮຽນກໍບໍ່ຄ່ອຍມີ ຈຶ່ງຈຳເປັນຕ້ອງປະຣິວັດ ຄື ປ່ຽນລະບົບອັກສອນທຳບູຮານມາເປັນລະບົບອັກສອນລາວ ປັດຈຸບັນ. ເປັນທີ່ເຂົ້າໃຈກັນແລ້ວວ່າ ໜັງສືບູຮານນັ້ນ ບໍ່ມີໄມ້ເອກໄມ້ໂທ ແລະ ວັກຕອນ ສະກົດ ກາຣັນ ກໍບໍ່ຄ່ອຍເອົາຫົວຊາ ສະນັ້ນ ຈຳເປັນຈຶ່ງຕ້ອງໄດ້ຊຳຣະ ຄືແກ້ໄຂໃຫ້ຖືກຕ້ອງ ເລື່ອງນີ້ ບໍ່ແມ່ນຂອງງ່າຍ ເພາະມັນຮຽກຮ້ອງຕ້ອງການຄວາມຮູ້ຄວາມຊຳນານຫລາຍດ້ານ ເປັນຕົ້ນທາງອັກສອນສາດ ພາສາສາດ ແລະ ຮີດຄອງປະເພນີ ຂະໜົບທຳນຽມເກົ່າກ່ອນ ບາງທີ່ກໍຍາກທີ່ຈະຕັດສິນໃຈ ເພາະສົງໄສ ຈຳເປັນຕ້ອງຄົ້ນຄວ້າປຽບທຽບຫລາຍຜູກຫລາຍມັດ ແລະ ຫລາຍສຳນັກ ເພື່ອການວິນິດໄສ ຕັດສິນແກ້ໄຂ ກ້າບໍ່ຄັກໃຈຕ້ອງຄົງໄວ້ຕາມເດີມ ນັ້ນແມ່ນຄວາມຫຍຸ້ງຍາກໃນການຊຳຣະສະສາງ.

ສຳລັບການປະຣິວັດ ແລະ ຊຳຣະຄຳພີ ມູລະຕັນໄຕ ໃນຄັ້ງນີ້ ຂ້າພະເຈົ້າໃຊ້ຕົ້ນສະບັບເກິງ 4 ມັດ ຄື ຕົ້ນສະບັບຂອງທ່ານອາຈານ ມະຫາ ສີລາ ວິຣະວົງ ກ່າຍອອກເປັນອັກສອນລາວ ກ່າວວ່າ ໄດ້ມາຈາກຣານອຍ, ຕົ້ນສະບັບຂອງຫໍສະໝຸດແຫ່ງຊາດວຽງຈັນ, ຕົ້ນສະບັບຂອງຫໍໄຕ ວັດນາໄຊ ແລະ ຕົ້ນສະບັບຂອງຊຽງໃໝ່ ປະເທດໄທ ປະຣິວັດ ເປັນອັກສອນໄທ ບາງກອກ. ຈາກຕົ້ນສະບັບ ທັງ 4 ທີ່ກ່າວນີ້ ໄດ້ກວດສອບໃສ່ກັນແລ້ວ ສ່ວນໃຫຍ່ຄື ເນື້ອໃນ ແລະ ສຳນວນພາສາເໝືອນກັນ ແຕ່ການແບ່ງຜູກແຕກຕ່າງກັນ ຄື ສະບັບຂອງທ່ານອາຈານມະຫາສີລາ ວິຣະວົງມີ 10 ຜູກ ສຳລັບ ສະບັບຊຽງໃໝ່ ບໍ່ປາກົດເຫັນເລື່ອງກະທູ້ລັກກິນກ້າ, ສຳນວນພາສາຍວນຊຽງໃໝ່ ບູຮານສາມາດເຂົ້າໃຈໄດ້ ເພາະໃກ້ຄຽງກັບພາສາລາວເຮົາ.

ໜັງສືຄຳພີທຳມະສາດຫລວງ

ຄຳພີທຳມະສາດນີ້ ເປັນກົດໝາຍພື້ນຖານ ຂອງປະເທດທີ່ນັບຖືພຸດທະສາດສະໜາ ນິກາຍຫີນະຍານ ໃນສະໄໝບູຮານ ທຸກປະເທດ ເພາະຖືເອົາສິນ 5 ເປັນຫລັກການໃຫຍ່ ໂດຍແບ່ງອອກເປັນ 5 ບັ້ນຄື :

1. ບັ້ນປານາຕິບາດ 2. ບັ້ນ ອະທິນນາທານ 3. ບັ້ນກາເມສຸມິດສາຈານ
4. ບັ້ນມຸສາວາດ 5. ບັ້ນສຸຣາເມໄລ.

ໃນຄຳພີ ທຳມະສາດລາວ ສະບັບຫໍສະໝຸດແຫ່ງຊາດວຽງຈັນ ທີ່ກວດ ເຫັນແຕ່ຜູກຕົ້ນນອກນັ້ນບໍ່ຮູ້ວ່າເສຍຫາຍໄປທາງໃດ ມີເລື່ອງເປັນທີ່ໜ້າສົນໃຈ ຄືຕົວຢ່າງພະຣາຊະສານ ທີ່ສົ່ງໄປຜູກສຳພັນທະໄມຕີ ກັບປະເທດເພື່ອນບ້ານໃນສະໄໝນັ້ນ ໂດຍບອກແຈ້ງວ່າ ຣາຊະສານໄປກຸງສີອະຍຸດທະຍາວ່າແນວນີ້ ໄປກຸງກຳພູຊາ ວ່າແນວນີ້ ໄປກຸງຫົງສາວະດີ ວ່າແນວນີ້ ສານພະຣາຊິນີວ່າແນວນີ້ ສານມະຫາອຸປະຣາດວ່າແນວນີ້ ແລະ ສານສົມເດັດພະສັງຄະຣາດ ວ່າແນວນີ້ ໃນຄຳຂຶ້ນຕົ້ນ ແລະ ລົງທ້າຍ ສ່ວນໃຈຄວາມນັ້ນສຸດແລ້ວແຕ່ວັດຖຸປະສົງ ອັນນີ້ສະແດງໃຫ້ເຫັນວ່າ ໃນສະໄໝນັ້ນ ມີລະບຽບທຳນຽມ ແລະ ວັດທະນະທຳທີ່ເປັນລາຍລັກອັກສອນສູງທີ່ສຸດ ແຕ່ເປັນທີ່ໜ້າເສັຍດາຍ ເພາະເສັຍຫາຍໄປຫລາຍຜູກ ທີ່ຍັງ ກໍຊຳຣຸດຂາດຫ້ອນໄປເປັນສ່ວນຫລາຍ

ຫວັງໃຈວ່າ ໃນການສຳຫລວດຕໍ່ໄປ ອາດຈະໄດ້ພົບສະບັບສົມບູນກໍໄດ້.

ສ່ວນການຈັດແບ່ງກົດໝາຍອອກເປັນ 5 ບັ້ນ ຕາມສິນ 5 ຫ້າຂໍ້ນັ້ນ ເພິ່ນອະທິບາຍວ່າ:

ບັ້ນປານາຕິບາດ ເວົ້າເຖິງໂທດອາດຍາ ການປຸ້ນສະດົມ ການຂ້າ ການຕີ ແລະ ການທຳຮ້າຍຮ່າງກາຍເປັນຕົ້ນ.

ບັ້ນອະທິນນາທານ ເວົ້າເຖິງການ ລັກການຂະໂມຍ ສ່ວນຫລາຍທອບໃສ່ອະວະຫານ 25 ຂອງວິໄນພະພິກຂຸ.

ບັ້ນກາເມສຸມິດສາຈານ ເວົ້າເຖິງລັກສະນະກົດໝາຍຄອບຄົວ ການແຕ່ງດອງ ການປະຮ້າງ ການຫລິ້ນຊູ້ສູ່ສາວ ແລະ ການຂົ່ມຂືນຊຳເຮົາເປັນຕົ້ນ.

ບັ້ນມຸສາວາດ ເວົ້າເຖິງການສໍ້ໂກງຫລອກລວງ ຍົວະເຍົ້າເອົາຊັບສິນ ແລະ ລ່ວງເກີນສິດອະທິປະໄຕຂອງບຸກຄົນ ເປັນຕົ້ນ.

ສ່ວນບັ້ນສຸຣາເມໄລ ນັ້ນເວົ້າເຖິງຄວາມມົວເມົາ ປະມາດ ກະທຳຄວາມຜິດ ຫລືລ່ວງເກີນຜູ້ອື່ນ ໂດຍການມົວເມົາ ບໍ່ໄດ້ຈິງໃຈ ໃນເລື່ອງນີ້ ເພິ່ນຍົກຕົວຢ່າງໃຫ້ຕະລາການພິຈາລະນາ ເປັນເລື່ອງແປກທີ່ເຮົາບໍ່ເຄີຍຄິດຫລືຄິດບໍ່ເຖິງ ຕົວຢ່າງຜູ້ຕ້ອງຫາໃຫ້ການວ່າຕົນໄດ້ກະທຳຜິດຈິງ ແຕ່ວ່າໂດຍບໍ່ໄດ້ຈິງໃຈ ຄືກະທຳຄວາມຜິດໃນເວລາເມົາ ປາດສະຈາກສະຕິສຳປະຊັນຍະ ຕະລາການຈະພິສູດແນວໃດ ວ່າຜູ້ກ່ອວເມົາແທ້ ຈົນບໍ່ຮູ້ສຶກຕົວ ສຳລັບເລື່ອງນີ້ ເພິ່ນແນະນຳວ່າ ຄວນຖາມຜູ້ກ່ອວວ່າ ກິນເຫລົ້າຊະນິດໃດ ໜ້ອຍຫລາຍປານໃດ ກິນໃນເວລາ ແລະສະຖານະການແນວໃດ ກິນແລ້ວນານປານໃດ ຈິ່ງເມົາ ເມື່ອເອົາລາຍລະອຽດເຫລົ່ານີ້ໄດ້ແລ້ວຈິ່ງເອົາເຫລົ້າໃຫ້ຜູ້ກ່ອວກິນຕາມທີ່ໃຫ້ການນັ້ນ ຄັນໄດ້ເວລາແລ້ວ ຈິ່ງເອົາອຸດຈາຣະ (ອາຈົມ)ມາໃຫ້ກິນ ຖ້າມັນກິນໄດ້ ໝາຍຄວາມວ່າ ມັນເມົາແທ້ ແຕ່ຖ້າມັນບໍ່ກິນ ຫລືກິນບໍ່ໄດ້ ກໍໝາຍຄວາມວ່າ ມັນແກ້ຕົວ ໃຫ້ຕັດສິນລົງໂທດຕາມໂທສານຸໂທດນັ້ນ ອັນນີ້ຄັນຫາກທອບໃສ່ສະໄໝນີ້ ກໍເຫັນວ່າ ຫລ້າສະໄໝ ແຕ່ຖ້າທ່ານຫາກກຸອຍຫລັງ ຄິດໄປວ່າປະມານ 500-1.000 ປີ ທ່ານອາດຈະເຫັນໃຈແລະ ຊົມເຊີຍໃນຄວາມຊ່າງຄິດຂອງຄົນສະໄໝນັ້ນ ທີ່ນຳມາເລົ່າສູ່ກັນຟັງ ກໍເພາະເຫັນວ່າເປັນເລື່ອງແປກປະຫລາດ.

ທີ່ນີ້ ຈະຂໍເວົ້າເລື່ອງໜັງສືຄຳພີສ້ອຍສາຍຄຳ ຂໍ້ທີ 3 ສຳລັບຂໍ້ 2 ຄື ໜັງສືຄຳພີ ມູລະຕັນໄຕນັ້ນ ຈະວິໄຈວິຈານໃນທີຫລັງ ເພາະຈະໄດ້ລົງເລິກລາຍລະອຽດເນື້ອໃນຫລາຍສົມຄວນ ຍ້ອນວ່າຈະໄດ້ພິມເຜີຍແຜ່ ເພື່ອເປັນເອກະສານຄົ້ນຄວ້າ ແລະ ເຮືອງປັນຍາຂອງທ່ານຜູ້ປະສົງໃນປື້ມຫົວນີ້.

ຄຳພີສ້ອຍສາຍຄຳ.

ຄຳພີສ້ອຍຄຳຂ້ອນຂ້າງສັ້ນ ມີປະມານບໍ່ເກີນ 100 ລານ ມີຜູກດອວຈົບ ແລະ ບອກໄວ້

ຈະແຈ້ງວ່າ ເປັນກົດໝາຍສະໄໝພະເຈົ້າໂພທິສາຣະຣາດ ປະມານ ສະຕະວັດທີ 13-14 ຄຳພີນີ້ ກໍມີລັກສະນະໄປອີກຮູບໜຶ່ງ ຄືເອົາພະປາຕິໂມກ ຄືສິນ 227 ຂອງພະພິກຂຸ ທີ່ເປັນພຸດທະບັນຍັດ ຂຶ້ນເປັນຫລັກ ແລ້ວປຽບທຽບຄູ່ຄຽງກັນໄປໃນທຳນອງວ່າ ທາງສາດສະໜາສຳລັບພະພິກຂຸເປັນອາບັດແນວນີ້ ທາງບ້ານເມືອງຕ້ອງເປັນໂທດແນວນີ້ ມີກຳນົດກັກຂັງ ແລະ ປັບໄໝຕາມສະຖານໜັກ ແລະ ເບົາ ຕາມລຳດັບ ຄືປາຣະຊິກ 4 ສັງຄາທິເສດ 13 ອະນິຍົດ 2 ນິດສັກຄີປາຈິດຕີ 30 ສຸດທິກະປາຈິດຕີ 92 ປະຕິເທດສະນີ 4 ເສກຂິຍະວັດ 75 ອະທິກະຣະນະສະມະຖະ 7 ໂຮມເປັນ 227.

ທ່ານຜູ້ອ່ານ ອາດຈະແປກໃຈວ່າ ວິໄນຂອງພະສົງກັບກົດໝາຍຂອງຄະຫັດຈະເຂົ້າກັນໄດ້ແນວໃດ ເພາະການດຳລົງຊີວິດແຕກຕ່າງກັນ ແນ່ນອນເລື່ອງນີ້ ຈະນຳເອົາວິໄນພະສົງມາໃຊ້ໂດຍກົງ ຍ່ອມຂັດຂ້ອງ ແລະ ບໍ່ເໝາະສົມເປັນຢ່າງຍິ່ງ ປາກົດວ່າເພິ່ນເຂົ້າໃຈດີໃນເລື່ອງນີ້ ດັ່ງຈະເຫັນໄດ້ໃນຕົວຢ່າງປາຣະຊິກສິກຂາບົດທີ່ 1 ວ່າ ພິກຂຸເສບເມຖຸນ ຕ້ອງປາຣະຊິກ ແຕ່ປາຣະຊິກຂອງຄະຫັດ ເພິ່ນບໍ່ໄດ້ຫ້າມເສບເມຖຸນ ຫລື ເພດສຳພັນ ແຕ່ເພິ່ນໄປເວົ້າເຖິງການເປັນຊູ້ສູ່ສາວກັບຣາຊະເທວີ, ນາງນັກສະໜົມ ກົມມະວັງ, ນາງເສນາ ແລະ ເສຣີຊິນ ຂ້າທາດບໍຣິວານ ຕະຫລອດຮອດການເສກສົມກັບສັດເດັຽຣະສານ ວ່າມີໂທດຂັ້ນນັ້ນໆ ເຊັ່ນ ປະຫານ ໃສ່ຄອກຂັງ ໃສ່ສິນໄໝ ຕາມຖານະຂອງບຸກຄົນຜູ້ກະທຳຜິດ ແລະ ຜູ້ເສຍຫາຍ ຕອນນີ້ ຂໍແຊກປະເພນີເລື່ອງສັກດີນາ ຫລື ຂັນຄາຄໍຂອງບູຮານຈັກເລັກນ້ອຍ ເພາະມັນກ່ຽວກັນກັບການລົງໂທດໃສ່ສິນໄໝຂອງຄົນບູຮານ.

ການປົກຄອງຄົນບູຮານຕິດພັນກັບລະບອບສົມບູຣນາຍາສິດທິຣະ ຄື ລະບອບພະມະຫາກະສັດ ມີສິດສົມບູນເດັດຂາດ ພະຣາຊະດຳຣັດເປັນກົດໝາຍ. ຕາມຄຳພີ ທຳມະສາດຂອງລາວ ມີການຈັດຕັ້ງເປັນຫລັກໃຫຍ່ໆ ດັ່ງນີ້ຄື :

1. ພະມະຫາກະສັດ ຫລື ພະເຈົ້າມະຫາຊີວິດ ເປັນປະມຸກສູງສຸດ
2. ພະມະຫາອຸປະຣາດ
3. ພະຣາຊະບຸດ
4. ພະຣາຊະວົງ

ທັງ 4 ນີ້ ຕ້ອງແມ່ນເຊື້ອເຈົ້າ ບໍ່ປາກົດວ່າໄດ້ກຳນົດສັກດີນາ ຫລື ຂັນຄາຄໍ.

ສ່ວນເຊື້ອຂຸນນາງ ເປັນປະຊາຊົນ ບໍ່ແມ່ນເຊື້ອເຈົ້າ ແຕ່ຕະກຸນສູງ ມີ 2 ຕຳແໜ່ງສູງສຸດຄື :

1. ເຈົ້າພະຍາເມືອງແສນ ສັກດີນາ ຫລື ຂັນຄາຄໍ 1600 ຮັບຜິດຊອບຝ່າຍທະຫານ.

2. ເຈົ້າພະຍາເມືອງຈັນ ສັກດິນາ ຫລື ຂັນຄາຄໍາ 1600 ເຊັ່ນດຽວກັນ ແຕ່ຮັບຜິດຊອບຝ່າຍພົນລະເຮືອນ.

ນອກຈາກນີ້ ກໍມີຈະຕຸສະດົມ 4 ຕໍາແຫນ່ງ ແລະ ອັດຖະສະດົມ 8 ຕໍາແຫນ່ງ ແລະ ຕໍ່ໆໄປ ພວກເຫລົ່ານີ້ ກໍມີສັກດິນາ ຫລື ຂັນຄາຄໍາ ຫລຸດຫລັ່ນກັນໄປ ຕາມລໍາດັບຈົນເກືອງເສຣີຊົນທົ່ວໄປ ບໍ່ເປັນຂ້າທາດຂອງຜູ້ໃດ ເພິ່ນກໍານົດໃຫ້ມີຂັນຄາຄໍາ 200.

ເລື່ອງຂັນຄາຄໍານີ້ ບໍ່ແມ່ນມີໄວ້ລ້າໆ ມີຜົນທັງທາງບວກ ແລະ ທາງລົບ ຕໍ່ຜູ້ກືສັກດິນາ ໃນດ້ານປະຕິບັດທາງກົດຫມາຍດ້ວຍ ອັນນີ້ກໍສະແດງໃຫ້ເຫັນຄວາມພະຍາຍາມຂອງຄົນບູຮານ ຢາກສ້າງຄວາມຍຸຕິທໍາໃນສັງຄົມ ສົມມຸດວ່າ ຄົນທໍາມະດາ ກະທໍາຜິດ ຕາມກົດຫມາຍໃຫ້ປັບໄຫມໄດ້ 1.000 ກີບ ແຕ່ຖ້າຜູ້ມີສັກດິນາ ຫລື ຂັນຄາຄໍາສູງ ສົມມຸດວ່າ ມີຂັນຄາຄໍາ 1.200 ໄດ້ກະທໍາຜິດໃນກໍລະນີດຽວກັນ ຄ່າສິນໄຫມຍ່ອມປ່ຽນໄປຄື

$$\frac{1200 \times 1000}{200} = 6000$$

ກີບ ທັງນີ້ ເພາະກືວ່າ ຜູ້ສັກດັນາສູງ ຍ່ອມຮັບຜິດຊອບສູງດ້ວຍ ໃນທາງກັບກັນ ຖ້າມີຜູ້ກະທໍາຕໍ່ຜູ້ມີສັກດິນາສູງ ກໍຕ້ອງເສັຽຄ່າສິນໄຫມສູງໄປຕາມສັກດິນາເພິ່ນດ້ວຍ ສົມມຸດ ທໍາຄວາມຜິດຕໍ່ຄົນທໍາມະດາ ເສັຍຄ່າສິນໄຫມ 500 ກີບ ຖ້າທໍາຄວາມຜິດຕໍ່ຜູ້ມີສັກດິນາ 1000 ຄ່າສິນໄຫມ ຕ້ອງເປັນ

$$\frac{500 \times 1000}{200} = 2.500$$

ດັ່ງນັ້ນ ສັກດິນາ ຈຶ່ງຮອງຂັນຄາຄໍາ ອີກຊື່ຫນຶ່ງ ເພາະ ເປັນຂໍບັງຄັບ ຄາຄໍຢູ່ຫມົດຊູ່ຄົນ.

ນອກຈາກທີ່ກ່າວມາແລ້ວ ສໍາລັບປະກຶມມະປາຣະຊິກຂອງພິກຂຸ ເມື່ອທຽບກັບຄະທັດແລ້ວຍັງຕ່າງກັນໄປອີກ ຄືຂອງຄະທັດ ເວົ້າເລື່ອງຫຍິບຫຍ່ອຍ ເຊັ່ນວ່າ (ຂໍໂທດ ຈໍາເປັນຕ້ອງເວົ້າຕາມພາສາຕົ້ນສະບັບ) ພໍ່ຄົນ ສີ້ຫມາ ໃຫ້ໄຫມເທົ່ານີ້ ລູກຄົນ ສີ້ຫມາໃຫ້ໄຫມເທົ່ານີ້ ສີ້ມ້າ ສີ້ຄວາຍ ກໍແຕກຕ່າງກັນໄປຕາມເລື່ອງ ເລື່ອງໃນທໍານອງນີ້ ຖ້າເຮົາບໍ່ພິຈາລະນາໃຫ້ຄັກແນ່ ຈະເຫັນວ່າ ບໍ່ສຸພາບ ຫຍາບຊ້າ ແຕ່ຖ້າເບິ່ງໃຫ້ເລິກ ຈະເຫັນຄວາມລະອຽດລະອໍຂອງຄົນບູຮານຍິ່ງຂຶ້ນ ແນ່ນອນໂລກທັດຂອງຄົນສະໄຫມນັ້ນ ກັບສະໄຫມນີ້ ອາດຈະບໍ່ຄືກັນ ແຕ່ຄວາມປະສົງຕົ້ນຕໍແມ່ນຢາກໃຫ້ສັງຄົມມີລະບຽບແບບແຜນ ດັ່ງດຽວກັນ. ຂ້າພະເຈົ້າຍົກມາເວົ້າເປັນຕົວຢ່າງພຽງສິກຂາບົດດຽວສ່ວນສິກຂາບົດອື່ນໆ ກໍແຕກຕ່າງກັນໄປຕາມເນື້ອໃນ ແລະ ເປົ້າຫມາຍ ການທີ່ເພິ່ນເອົາວິໄນພິກຂຸສິງມາທຽບກັບກົດຫມາຍບ້ານເມືອງນັ້ນ ມັນສະແດງໃຫ້ເຫັນອິດທິພົນທາງພຸທະສາສະຫນາຕໍ່ການປົກຄອງບ້ານເມືອງສະໄຫມນັ້ນ ພຽງໃດ ແລະ ນັກປົກຄອງສະໄຫມນັ້ນໄດ້ຫມູນໃຊ້ຄວາມຮູ້ທາງພຸທະສາສະຫນາເຊັ່ນໃດ.

ຄຳພີ ກົດຫມາຍພະມະນູ

ສຳລັບຄຳພີນີ້ ຍັງບໍ່ທັນຄົ້ນພົບຕົ້ນສະບັບ ຈຶ່ງຍາກທີ່ຈະເຂົ້າໃຈໃຫ້ລະອຽດ ຮູ້ໄດ້ແຕ່ພຽງວ່າ ເປັນກົດຫມາຍພື້ນຖານບູຮານແຕ່ງໂດຍນັກປາດຊາວອິນເດັຍສະໄຫມນັ້ນຊື່ວ່າ ພະມະນູ ຈຶ່ງໄດ້ຊື່ຕາມຜູ້ລິຈະນາ ເປັນກົດຫມາຍຫລັກ ຄ້າຍລັດຖະທຳມະນູນ ສັນນິດຖານວ່າ ຄຳວ່າ ທຳມະນູນ ອາດຈະມີເຄົ້າມາຈາກເລື່ອງນີ້ກໍໄດ້ ຢ່າງໃດກໍດີ ຍັງຈະຊອກຫາຫລັກຖານຕື່ມອີກ.

ຄຳພີ ມູລະຕັນໄຕ

ຄຳພີນີ້ ມີແຜ່ຫລາຍໃນບັນດາປະເທດນັບຖືພຸດທະສາດສະຫນາທັກຂິນະນິກາຍ ສະບັບຂອງລ້ານນາຊຽງໃຫມ່ ປະເທດໄທຊື່ວ່າ ມູລະກັນໄຕ ເຂົາເຈົ້າໄດ້ປະຣິວັດ ຈາກອັກສອນທຳແບບຊຽງໃຫມ່ ເຊິ່ງນິຍົມຮຽກກັນວ່າ ຕົວຫນັງສືເມືອງມາເປັນອັກສອນໄທກາງໃນປັດຈຸບັນ ແຕ່ພາສາຍັງຄົງເປັນພາສາລ້ານນາຊຽງໃຫມ່ ຄືເກົ່າ ຂ້າພະເຈົ້າໄດ້ກວດກາປຽບທຽບເບິ່ງແລ້ວ ເນື້ອໃນບໍ່ມີຫຍັງແຕກຕ່າງກັນກັບຂອງເຮົາ ນອກຈາກສຳນວນ ພາສາຕ່າງກັນພຽງເລັກນ້ອຍ ພໍເຂົ້າໃຈກັນໄດ້ ທີ່ເຫັນຂອງເພິ່ນຫາຍໄປຄືເລື່ອງກະທູ້ລັກກິນກ້າ ອາດຈະເປັນການຕົກຫລົ່ນ.

ຂ້າພະເຈົ້າຍົກສະບັບຊຽງໃຫມ່ຂຶ້ນມາປຽບທຽບ ກໍເພາະວ່າໃນບູຮານ ພື້ນຖານວັດທະນະທຳ ແມ່ນອັນດຽວກັນ ແລະ ມີການແລກປ່ຽນຄຳພີດີກາກັນມາແລ້ວ. ການທີ່ຊື່ຜ້ຽນກັນໄປນັ້ນ ບໍ່ເປັນເລື່ອງສຳຄັນແຕ່ປະການໃດ ເພາະຕາມຫລັກພາສາສາດ ຕ ປ່ຽນເປັນ ກ ໄດ້ ເຊັ່ນ ຕະກຸນເປັນກະກຸນ ດັ່ງນັ້ນ ມູລະຕັນໄຕ ກໍປ່ຽນເປັນມູລະກັນໄຕ ໄດ້ເຊັ່ນດຽວກັນ ຄຳຫມາຍບໍ່ມີປ່ຽນແປງຄື ຫມາຍຄວາມວ່າ ຄຳພີ ຫລື ຕຳຣາ ອັນເປັນຕົ້ນເຄົ້າເຫງົ້າກໍ ດັ້ງເດີມ ຄຳວ່າຕັນໄຕ ຫລືກັນໄຕນັ້ນ ແປວ່າຄຳພີ. ເລື່ອງນີ້ ມີອະທິບາຍລະອຽດຢູ່ໃນຕົວຄຳພີເອງແລ້ວ.

ເປັນທີ່ຫນ້າເສຍດາຍ ທີ່ພໍ່ມີບ່ອນໃດບອກໄວ້ວ່າແຕ່ງຂຶ້ນ ໃນສະໄຫມໃດ ວັນເດືອນປີໃດໃຫ້ຄັກແນ່ ແຕ່ສາມາດບອກໄດ້ຢ່າງຫມັ້ນໃຈວ່າ ເກົ່າແກ່ບໍ່ຕ່ຳກວ່າ 500-1000 ປີໂດຍປະມານ ຍ້ອນການສັງເກດຈາກພາສາສຳນວນໂວຫານ ນິທານ ທີ່ອ້າງອີງ ຂ້າພະເຈົ້າຂໍຍົກມາພຽງ 2 ຄຳ ຄືຄຳວ່າ ອຸທາຫອນ ກັບ ກະທູ້ ເຊິ່ງບໍ່ປາກົດໃຊ້ໃນພາສາລາວ ປັດຈຸບັນ ແຕ່ໃນມູລະຕັນໄຕ ມີຢູ່ຫລາຍບ່ອນ ສະແດງໃຫ້ເຫັນວ່າ ຄຳເຫລົ່ານີ້ ເປັນຄຳເກົ່າເຄີຍໃຊ້ມາແລ້ວ ແຕ່ບໍ່ໄດ້ຄ່ອຍໃຊ້ຈົນເກືອບຫລົງລືມໄປແລ້ວ ຄວາມຈິງທັງ 2 ຄຳນີ້ ຂ້າພະເຈົ້າ ເຄີຍຮູ້ຈັກ ແຕ່ເຂົ້າໃຈຜິດ ຄິດວ່າບໍ່ແມ່ນຄຳລາວ ເປັນຄຳຂອງປະເທດອື່ນ ເພາະບໍ່ເຄີຍເຫັນໃຊ້ ໃນພາສາລາວ ໃນໄວຍາກອນພາສາປາລີ ໃນທີ່ໃດເພິ່ນຕ້ອງການຍົກຕົວຢ່າງ ເພິ່ນມັກຈະບອກວ່າ ເຊັ່ນ ອຸທາຫອນ... ດັ່ງນີ້ກໍຫມາຍຄວາມວ່າ ອຸທາຫອນ ກໍຄືຕົວຢ່າງນັ້ນເອງ ເປັນເຄົ້າປາລີວ່າ ອຸທາຫະຣະນັງ ຫລື ອຸທາຫະຣະນະ ຂຽນຕາມເຄົ້າເປັນ ອຸທາຫຣນ໌ ອ່ານວ່າ ອຸທາຫອນ.

ຄຳວ່າ ກະທູ້ ຜູ້ເຄີຍຮຽນນັກທຳຈະໄດ້ຮຽນວິຊາຫນຶ່ງ ເພິ່ນຮຽກວ່າວິຊາແຕ່ງກະທູ້ທຳ ຄືຍົກເອົາຫລັກທຳຂໍ້ໃດຂໍ້ຫນຶ່ງມາຕັ້ງໄວ້ ແລ້ວໃຫ້ແຕ່ງເລື່ອງບັນຍາຍອະທິບາຍໃຫ້ສົມເຫດສົມຜົນ

ເຊັ່ນວ່າ ນັດກີໂລເກ ອະນິນທິໂຕ ຄົນບໍ່ກິກບິນທາ ບໍ່ມີໃນໂລກ ເປັນຕົ້ນ ສະນັ້ນ ຄຳວ່າ ກະທູ້ ຈຶ່ງໝາຍເຖິງຫລັກການຫລື ຫລັກໝັ້ນ ແຕ່ໃນໜັງສືມູລະຕັນໄຕ ເພິ່ນໝາຍເຖິງຫລັກຮົ້ວ ຫລື ຫລັກໂຄນ ດັ່ງເລື່ອງກະທູ້ ຫລັກກິນກ້າ ເຊິ່ງຂ້າພະເຈົ້າຈະເລົ່າໃນພາຍຫລັງ ທີ່ເອົາ 2 ຄຳມາ ເປັນອຸທາຫອນນີ້ ກໍເພື່ອສະແດງໃຫ້ເຫັນວ່າ ການຄົ້ນຄວ້າເອກະສານເກົ່າ ຈະທຳໃຫ້ເຮົາໄດ້ຮູ້ ພາສາເຮົາເອງຕື່ມຂຶ້ນ ຈະບໍ່ເຂົ້າໃຈຜິດໃນບາງຄຳດັ່ງກ່າວແລ້ວ ອັນນີ້ຊີ້ໃຫ້ເຫັນພຽງປະໂຫຍດ ນ້ອຍໆດ້ານພາສາ ບາດນີ້ ວ່າກັນໃນດ້ານເນື້ອໃນ ຈະສ່ອງແສງໃຫ້ເຫັນແນວຄິດຈິດໃຈຮີດຄອງ ປະເພນີ ຄວາມເຊື່ອກື ແລະ ຣິດນິຍົມຂອງຄົນສະໄໝນັ້ນ ແລ້ວແຕ່ເຮົາຈະເບິ່ງໃນດ້ານໃດ. ຈິງຢູ່ໜັງສືມູລະຕັນໄຕ ອາດຈະບໍ່ເປັນປະເພດວັນນະຄະດີ ແຕ່ເປັນປະເພດວິຊາການ ສະແດງ ເຖິງພູມປັນຍາຂອງຄົນບູຮານ ນັ້ນກໍມີຄຸນຄ່າຢ່າງມະຫາສານສຳລັບຜູ້ຕ້ອງການຢາກຄົ້ນຄວ້າ. ເວົ້າເຖິງ ການປະພັນຄຳພີ ມູລະຕັນໄຕ ຂຽນເປັນທຳນອງຮ້ອຍແກ້ວ ແບບຮຽງຄວາມທຳມະ ດາ ມີພາສາປາລີສັບປົນຫລາຍຢູ່ ໂດຍສະເພາະ ຕອນຂຶ້ນຕົ້ນ ແລະບາງຜູກ ມີຍົກສັບປາລີຂຶ້ນ ມາແປໂດຍພະຍັນຊະນະເລີຍກໍມີ ຄວາມຫຍຸ້ງຍາກມີຢູ່ບ່ອນວ່າ ເພິ່ນບໍ່ຄ່ອຍທືວຊາດ້ານໄວຍາກອນ ເທົ່າໃດ ເຮັດໃຫ້ເຮົາຜູ້ບໍ່ເກັ່ງປາລີຫຍຸ້ງຍາກໄປນຳ ເພາະລະດັບເຮົາຕ່ຳ ຈຳເປັນອາໄສໄວຍາ ກອນເປັນແນວທາງ ແຕ່ສຳລັບຜູ້ເພິ່ນຊຳນານແທ້ ໄວຍາກອນບໍ່ສຳຄັນ ເຊັ່ນດຽວກັບເຮົາເວົ້າຫລື ຂຽນພາສາລາວ ແມ່ນຜູ້ບໍ່ຮູ້ໄວຍາກອນລາວ ກໍໃຊ້ໄດ້ໂດຍສະດວກສະບາຍ.

ເມື່ອເບິ່ງໃຫ້ເລິກເຖິງສາຣະເນື້ອໃນຂອງຄຳພີມູລະຕັນໄຕນີ້ ເຮົາຈະເຫັນວ່າ ເພິ່ນແບ່ງ ອອກເປັນ 3 ຕອນ ຫລື 3 ບັ້ນ ຄື :

1.- ການພິຈາລະນາຄະດີ ທີ່ຫາສັກຂີພະຍານບໍ່ໄດ້ ຫລື ຄະດີ ລຶກລັບສັບສົນ ມີຫລາຍ ຕົວຢ່າງ ເຊິ່ງເກີດມີໃນສະໄໝນັ້ນ.

2.- ປຣິດສະໜາ ບັນຫາການເມືອງ (Politic Pazzle) ຫລືທີ່ຮຽກກັນວ່າ ທຳ ມະຍຸດ (ການຕໍ່ສູ້ໂດຍທາງທຳມະ) (Politic Ethics).

3.- ລັດທະຈະຣິຍະສາດ ແລະນິທານຕົວຢ່າງໃນການບໍລິຫານບ້ານເມືອງຂອງຄົນບູ ຮານ.

ຂໍຍົກຕົວຢ່າງ ຕອນລະເລື່ອງ ເພື່ອເປັນແນວທາງພິຈາລະນາ ແລະ ວິໄຈຕໍ່ໄປ.

1. <u>ການພິຈາລະນາຄະດີທີ່ຫາສັກຂີບໍ່ໄດ້.</u>

ເລື່ອງລັກເມັຽກັນ.

ເລື່ອງມີຢູ່ວ່າ ຊາຍຄົນໜຶ່ງປະເມັຽ ແລະ ລູກນ້ອຍໄວ້ກັບພໍ່ເຖົ້າ ແລະ ແມ່ເຖົ້າ ສ່ວນ ຕົນເອງໄດ້ໜີໄປຄ້າເປັນເວລານານຫລາຍເດືອນ. ສ່ວນເມັຽຢູ່ບ້ານລັກຫລິ້ນຊູ້ ເຂົາເຈົ້າຢາກ

ໄດ້ກັນຫລາຍ ຈຶ່ງຫາອຸບາຍເອົາສິບມານອນທີ່ມຜ້າໄວ້ໃນທີ່ນອນຂອງຜູ້ຍິງ ແລ້ວພາກັນລັກຫນີໄປຢູ່ບ້ານອື່ນເມືອງອື່ນ ຝ່າຍພໍ່ແມ່ຜູ້ຍິງ ພ້ອມດ້ວຍຍາດພີ່ນ້ອງ ເມື່ອບໍ່ເຫັນຍິງຄົນນັ້ນຕື່ນມາຕາມປົກກະຕິ ຈຶ່ງຮ້ອງກຫາ ຄັນບໍ່ມີສຽງຕອບ ຈຶ່ງໄປເບິ່ງ ເຫັນສິບນອນທີ່ມຜ້າ ໂດຍບໍ່ພິຈາລະນາໃຫ້ຄັກເຂົ້າໃຈວ່າລູກ ຕົນຕາຍແທ້ ຈຶ່ງເລີກຊາກສົ່ງສະການ ແລະ ທຳບຸນໃຫ້ທານຕາມປະເພນີ ດ້ວຍຄວາມໂສກເສົ້າເສັຍໃຈ ເລື່ອງທັງຫມົດນີ້ ກໍປາກົດແກ່ບ້ານເມືອງທົ່ວໄປ.

ຄັນເວລາຕໍ່ມາ ຝ່າຍຊາຍຜູ້ເປັນຜົວກັບມາບ້ານ ຖາມຫາເມັຽກໍ່ໄດ້ຮັບບອກວ່າ ຕາຍເສັຍແລ້ວ ມັນກໍໂສກເສົ້າເສັຍໃຈທ້ອງໃຍເປັນຢ່າງຍິ່ງ ໂດຍເຂົ້າໃຈວ່າຕາຍຈິງແທ້ ສິ່ງທີ່ຍັງເຫລືອໄວ້ສຳຄັນນັ້ນແມ່ນລູກຍິງນ້ອຍຜູ້ຫນຶ່ງ ກັບຫມາໂຕຫນຶ່ງ ແລະ ມັນກໍຝາກໄວ້ກັບພໍ່ເມັຽແມ່ເມັຽມັນເອງ.

ຕໍ່ມາອີກ ຊາຍຜູ້ຜົວໄດ້ເດີນທາງໄປຄ້າ ໃນເມືອງທີ່ຊາຍຊູ້ ແລະ ເມັຽມັນຫນີໄປຢູ່ນັ້ນຈຶ່ງເຫັນເມັຍມັນ ແລະ ຈື່ໄດ້ຄັກແນ່ ມັນຈຶ່ງຕໍ່ວ່າ ຊາຍຊູ້ວ່າ ເຫດໃດມຶງຈຶ່ງລັກເມັຽກູມາ ຊາຍຊູ້ຕອບວ່າ ມຶງເປັນບ້າ ຫລືຈັ່ງໃດ ຈຶ່ງມາຕູ່ເອົາເມັຍກູ ຝ່າຍນາງເມັຽກໍປະຕິເສດສອງແຂງວ່າ ບໍ່ເຄີຍຮູ້ເຄີຍເຫັນຊາຍຜູ້ນີ້ຈັກເທື່ອ ມັນຮ່າວມາຕູ່ວ່າເປັນເມັຍມັນລ້າໆ ຫນ້າດ້ານບໍ່ອາຍ ຊາຍຜູ້ຜົວບໍ່ຍອມ ຈຶ່ງໄປຫາເສນາຜູ້ໃຫຍ່ຕັດສິນໃຫ້ ເສນາຜູ້ໃຫຍ່ບໍ່ສາມາດຕັດສິນ ໄດ້ຈຶ່ງໄປໄຫວ້ພະຍາໆໃຫ້ປະຊຸມ ເສນາອາມາດ ແລະ ນຳພາໃນການພິຈາລະນາ ຕາມຂັ້ນຕອນດັ່ງຕໍ່ໄປນີ້ ຄື : ສືບປະຫວັດໂດຍລະອຽດຈາກຊາຍຜູ້ເປັນຜົວ, ຊາຍຊູ້ ແລະ ນາງເມັຽໂດຍລຳດັບ ແລ້ວໃຫ້ຄົນໃຊ້ໄປນຳເອົາພໍ່ແມ່ຂອງຜູ້ຍິງມາຊັກຖາມ ແລະ ສືບສວນ ກໍໄດ້ຮັບການຢືນຢັນວ່າ ລູກຕົນຕາຍແລ້ວ ແລະ ໄດ້ປົງສົບເຜົາຜີ ແຈກທານທາຕາມປະເພນີ ຊາວບ້ານຊາວເມືອງກໍ່ຮູ້ເຫັນກັນທົ່ວໄປ ດັ່ງນັ້ນຄົນອາດຄືກັນກໍໄດ້.

ເມື່ອເປັນດັ່ງນັ້ນ ພະຍາຈຶ່ງເອົາຊາຍຊູ້ມາຖາມວ່າ ມຶງຢູ່ດ້ວຍກັນຕັ້ງສິບປີມຶງເຫັນຕຳຫນິອັນໃດແດ່ໃນຕົນຕົວເມັຽມຶງເປັນຕົ້ນວ່າ ໄຝຫລື ຂີ້ແມງວັນ ແລະ ປານແດງປານດຳເປັນຕົ້ນ ມັນບອກວ່າ ຕຳຫນິທີ່ວ່ານີ້ ບໍ່ມີປາກົດເລີຍ. ແລ້ວພະຍາຈຶ່ງເອົາຊາຍຜູ້ຜົວມາຊັກຖາມທຳນອງດຽວກັນ ມັນຕອບວ່າ ເມັຽມັນມີປານແດງຢູ່ໃຕ້ຕົນນົມເບື້ອງຊ້າຍ ແລະ ມີຂີ້ແມງວັນປະມານທໍ່ເມັດງາຢູ່ຮິມສາຍບືດ້ານຂວາ ພະຍາຈຶ່ງໃຫ້ພະນັກງານກວດເບິ່ງ ປາກົດວ່າເປັນຄວາມຈິງຕາມຜົວໃຫ້ການ ເມື່ອເປັນດັ່ງນັ້ນ ພະຍາຈຶ່ງໃຫ້ພະນັກງານເອົາຍິງຜູ້ນັ້ນໄປເຮືອນພໍ່ແມ່ມັນ ແລະ ໃຫ້ສັງເກດພຶດຕິການທົ່ວໄປລະອຽດ.

ເມື່ອຍິງນັ້ນໄປເຖິງເຮືອນ ຫມາທີ່ມັນລ້ຽງໄວ້ເຫັນກໍແລ່ນເຂົ້າຫາ ພັນແຄ່ງພັນຂາເຕັ້ນດີດດ້ວຍຄວາມດີໃຈ ສ່ວນເດັກຍິງນ້ອຍເມື່ອເຫັນຫນ້າແມ່ກໍຮ້ອງໄຫ້ແລ່ນເຂົ້າຫາຢ່າງສະຫນິດສະຫນົມຊອກດູດນົມດ້ວຍຄວາມເຄີຍຊິນ ຄົນໃຊ້ຂອງພະຍາເຫັນດັ່ງນັ້ນກໍກັບມາລາຍງານຕາມຄວາມຈິງທີ່ຕົນໄດ້ເຫັນ ເມື່ອເປັນເຊັ່ນນີ້ ພະຍາກໍແນ່ພະໄທ ຈຶ່ງໃຫ້ຂ້ອນການ ທັງສອງຍອມຮັບສາລະພາບວ່າ ພວກຕົນໄດ້ເອົາຊາກຜີມານອນໄວ້ແທນ ເພື່ອເປັນອຸບາຍຈະໄດ້ຫລົບຫນີສະດວກນັ້ນ ທຸກປະການ.

ເມື່ອປະຈັກຄວາມຈິງເຊັ່ນນີ້ ພະຍາກໍຕັດສິນຕາມກະບິນເມືອງ ລະອຽດຈະເຫັນໄດ້ໃນ

ປຶ້ມຫົວນີ້ຕໍ່ໄປ ທີ່ຍົກມານີ້ພຽງເປັນຕົວຢ່າງເພື່ອພິຈາລະນາ.

2. ປຣິສະໜາການເມືອງ ຫລື ທຳມະຍຸດ

ໃນສະໄໝບູຮານ ກໍມີການພະຍາຍາມຫລີກເວັ້ນການໃຊ້ກຳລັງທະຫານແກ້ໄຂຂໍ້ຂັດແຍ່ງ ໂດຍໃຊ້ວິທີການຕ່າງໆ ຫລາຍຢ່າງ ໃນນັ້ນມີວິທີການໜຶ່ງທີ່ຮຽກກັນວ່າທຳມະຍຸດ ຄືຕໍ່ສູ້ກັນດ້ວຍສະຕິປັນຍາຄວາມຮູ້ ເພື່ອແກ້ບັນຫາປຣິສະໜາຕ່າງໆ ວ່າໃຜຈະມີປັນຍາສ້ອມແຫຼມກວ່າກັນ ແລະ ທຸກຝ່າຍກໍຈິງໃຈຕັ້ງຢູ່ໃນສັດຈະປະຕິຍານຕໍ່ກັນ ປາກົດວ່າ ກະສັດບູຮານຍຶດໝັ້ນໃນສັດຈະເປັນຢ່າງດີ ກ້າເສັຽສັດ ກືວ່າເສັຍກອູດຂາດຄວາມນັບຖືເປັນທີ່ດູໝິ່ນຢຽດຫຍາມ ບໍ່ສົມກັບນາມວ່າກະສັດ ແຕ່ຈະເປັນກະສັດອອກໂຮງເອງ ຫລື ໃຫ້ນັກປາດຜູ້ໃດຜູ້ໜຶ່ງເປັນຕົວແທນກໍແລ້ວແຕ່ກໍລະນີ ເລື່ອງເຊັ່ນນີ້ ມີຕົວຢ່າງຢູ່ໃນປະຫວັດສາດຂອງຫລາຍປະເທດ ສ່ວນລາຍລະອຽດຈະເຫັນໄດ້ໃນປຶ້ມຫົວນີ້.

3. ລັດທະຈະຣິຍະສາດ ແລະ ນິທານຕົວຢ່າງ ໃນການບໍຣິຫານ

ຫລັກການໃຫຍ່ໃນການບໍຣິຫານບ້ານເມືອງຂອງເຈົ້າແຜ່ນດິນສະໄໝບູຮານນັ້ນ ແມ່ນທົດສະພິຣາຊະທຳ 10 ປະການ ປະຈຳຂັນທະສັນດານຂອງກະສັດທີ່ດີ ນອກຈາກນີ້ ກໍຍັງມີຫລັກ 12 ຂອງເພິ່ນອີກຄື : ຫລັກມັງຄະລະວຸດທິສະທັດສະດີ 12 ປະການຄື:

1. ໃຫ້ຮັກສາ ລຳເມືອງ
2. ໃຫ້ຮັກສາ ແທ້ງເມືອງ
3. ໃຫ້ຮັກສາ ຂຸ່ມເມືອງ
4. ໃຫ້ຮັກສາ ຫູເມືອງ
5. ໃຫ້ຮັກສາ ຕາເມືອງ
6. ໃຫ້ຮັກສາ ໃຈເມືອງ
7. ໃຫ້ຮັກສາ ຝາເມືອງ
8. ໃຫ້ຮັກສາ ເມກເມືອງ
9. ໃຫ້ຮັກສາ ແກ້ວເມືອງ
10. ໃຫ້ຮັກສາ ປະຕູເມືອງ
11. ໃຫ້ຮັກສາ ຫລັກເມືອງ
12. ໃຫ້ຮັກສາ ແກ່ນເມືອງ

ທັງ 12 ປະການນີ້ ຂໍບໍ່ອະທິບາຍ ເພາະມີຢູ່ໃນປຶ້ມຫົວນີ້ແລ້ວ ຍົກມາເພື່ອຊີ້ໃຫ້ເຫັນຫລັກການຂອງເພິ່ນເທົ່ານັ້ນ.

ສ່ວນນິທານຕົວຢ່າງໃນການບໍຣິຫານນັ້ນ ຂໍຍົກເລື່ອງກະທູ້ລັກກິນກ້ານມາເປັນຕົວຢ່າງເພາະເປັນເລື່ອງແປກປະຫລາດ ແລະ ໜ້າຄິດ.

ເລື່ອງກະທູ້ລັກກິນກ້າ.

ຂ້າພະເຈົ້າໄດ້ເລົ່າໄວ້ແລ້ວໃນເບື້ອງຕົ້ນວ່າ ກະທູ້ນັ້ນແມ່ນຫລັກຮ້ອ ສະນັ້ນເລື່ອງກໍແມ່ນ ຫລັກຮ້ອລັກກິນກ້າ ນັ້ນເອງ ເປັນໄປໄດ້ບໍ່? ຫລັກຮ້ອຈະກິນກ້າ ນັ້ນແມ່ນຄຳອຸປະມາ ອຸປະໄມ ເພື່ອຄວາມເຂົ້າໃຈ ຂໍນຳນິທານມາເລົ່າໂດຍຫຍໍ້ ດັ່ງຕໍ່ໄປນີ້ :

ຍັງມີເມືອງຫນຶ່ງ ເປັນເມືອງທີ່ອຸດົມສົມບູນ ມີພະຍາປົກຄອງ ແລະ ພະຍາມີເສນາສຳຄັນຄົນຫນຶ່ງ ຊື່ວ່າ ໄຊຍະເສນາ ຕໍ່ມາເສິກເຂົ້າມາຕິດຊາຍແດນພະນະຄອນ ພະຍາຈຶ່ງສັ່ງໃຫ້ໄຊຍະເສນາບໍດີ ໄປຂັດຕາທັບ ແລະ ຮັບເສິກ ຄັນກອງທັບອອກໄປແລ້ວ ພະຍາຈຶ່ງມາຄິດວ່າ ເສນາບໍດີໄປສູ້ເສິກ ຈັກໄດ້ໄຊຊະນະ ຫລື ປະຣາໄຊກໍຍັງບໍ່ທັນຮູ້ໄດ້ ເພື່ອຄວາມບໍ່ປະຫມາດ ອາດຕະມາຄວນຈັດການປ້ອງກັນພະນະຄອນໄວ້ກ່ອນ ວັນຕໍ່ມາພະຍາຈຶ່ງຂີ່ຊ້າງພ້ອມດ້ວຍບໍຣິວານ ອອກລຽບພະນະຄອນ ກວດກາເບິ່ງກຳແພງປະຕູ ແລະ ຫໍຮົບເພື່ອປ້ອງກັນຂ້າເສິກ ໃນເມື່ອກອງທັບຂອງໄຊຍະເສນາຫາກບັງເອີນຕ້ານທານບໍ່ຢູ່. ໃນຂະນະທີ່ລຽບພະນະຄອນຢູ່ນັ້ນ ນາງເສນາບໍດີ ເມັຽໄຊຍະເສນາ ໄດ້ອອກມາເບິ່ງຂະບວນແຫ່. ພະຍາເຫັນນາງມີລັກສະນະກັນລະຍານີ ມີຮູບງາມຈຶ່ງເກີດປະຕິພັດ ຄືຄວາມຮັກຂຶ້ນທັນທີ ທັນໃດ ຈົນລະງັບໃຈໄວ້ບໍ່ໄດ້ ຈຶ່ງກັບເຂົ້າພະຣາຊະວັງຄິດຫາທາງຈະເອົານາງມາເປັນເມັຽ. ຕົກເວລາກາງຄືນ ຄົນນອນສະຫງັດ ພະຍາຈຶ່ງສຸບເກີບຕີນຄຳແລ້ວໄປຍັງເຮືອນຂອງໄຊຍະເສນາບໍດີ ໂດຍຫວັງວ່າຈະເຂົ້າຫານາງເສນາ ແລະ ເອົາມາເປັນເມັຽ. ເມື່ອໄຊຍະເສນາກັບມາ ກໍ່ຈະຫາທາງຂ້າເສັຽ.

ເມື່ອໄຊຍະເສນາຈະໄປລະງັບເສິກນັ້ນ ມັນໄດ້ສັ່ງຫມາແມ່ລູກ ແລະ ນົກແຂກເຕົ້າທີ່ລ້ຽງໄວ້ໃນເຮືອນ ໃຫ້ຮັກສາເບິ່ງເຮືອນ ຖ້າຊໍາຊາໄດ້ກັບມາ. ຄັນພະຍາເຂົ້າໄປ ຫມາຕົວແມ່ເຫັນຮູ້ເປັນພະຍາ ບໍ່ກ້າເຫົ່າ ສ່ວນຫມາຕົວລູກບໍ່ຮູ້ຈຶ່ງເຫົ່າດ້ວຍສຽງອັນດັງ ຫມາຕົວແມ່ຈຶ່ງເຕືອນວ່າ ອັນນີ້ອັນຕະຣາຍ ຄວາມຈິບຫາຍຈະມາເຖິງ ລູກບໍ່ຄວນເຫົ່າ. ພະຍາເຂົ້າໄປຮອດກາງເຮືອນນົກແຂກເຕົ້າເຫັນເຂົ້າ ຈຶ່ງເວົ້າກັບຫມາແມ່ລູກວ່າ ມື້ນີ້ເຮົານອນບໍ່ຫລັບຈຶ່ງຢາກເລົ່ານິທານ ກະທູ້ລັກກິນກ້າໃຫ້ເຈົ້າຟັງ ຫວັງວ່າເຈົ້າຄົງພໍໃຈ. ຫມາຕອບວ່າ ຈົ່ງເລົ່າໄປເທີນ ພະຍາໄດ້ຍິນຈຶ່ງຢຸດຟັງ ນົກແຂກເຕົ້າເລົ່າຕໍ່ໄປວ່າ ຊາວນາຜູ້ຫນຶ່ງໄດ້ຫວ່ານກ້າໄວ້ ແລະ ໄດ້ຝັງຫລັກຮ້ອ ຫລັກໂຄນອ້ອມຮອບ ອັດຮີ້ໄວ້ເປັນຢ່າງດີ ແລ້ວກໍເອົາຫນ້າໄມ້ເຂົ້າໄປນົກ ແລະ ສັດສາວາສິ່ງອື່ນໆບໍ່ໃຫ້ມາກິນກ້າ. ແຕ່ເມື່ອຊາວນາຍັງບໍ່ທັນກັບມາ ກະທູ້ຮ້ອຊ້ຳຜັດມາລັກກິນກ້າເສັຽເອງ ນົກແຂກເຕົ້າເວົ້າກັບຫມາວ່າ ໂຕຮູ້ບໍ່ເລື່ອງກະທູ້ລັກກິນກ້ານີ້ຫມາ, ຫມາຕອບວ່າ ເຖິງຮູ້ ກໍບໍ່ຄວນເວົ້າ ບໍ່ຄວນມີຄວາມເຫັນເພາະເຮົາເປັນສັດເດັຽຣະສານ ເວົ້າໄປກໍ່ເປົ່າປະໂຫຍດ ເຮົາເປັນສັດຊັ້ນຕ່ຳໃຫ້ມະນຸດຜູ້ເປັນສັດຊັ້ນສູງຄິດຫງ່ຳກໍແລ້ວກັນ ຝ່າຍພະຍາໄດ້ຍິນຈຶ່ງຄິດວ່າ ມື້ນີ້ໂອກາດບໍ່ດີ ນົກແຂກເຕົ້າຕົວນີ້ຮູ້ຈັກເຮົາແລ້ວ ຈຶ່ງຮີບກັບດ້ວຍຄວາມຟັ່ງຟ້າວ ລືມສຸບເອົາເກີບຕີນຄຳຂອງຕົນ.

ຕື່ນເຊົ້າມາ ນາງເສນາເຫັນເກີບຕີນຄຳ ຈຶ່ງຕົກໃຈເພາະຕົນເອງບໍ່ຮູ້ວ່າພະຍາເຂົ້າມາ ນົກແຂກເຕົ້າຈຶ່ງເລົ່າເລື່ອງໃຫ້ຟັງ ແລ້ວຕົກລົງໃຫ້ນົກແຂກເຕົ້າເອົາຂ່າວໄປບອກໃຫ້ໄຊຍະເສນາບໍດີຊາບ.

ຝ່າຍໄຊຍະເສນາໄປລະງັບຂ້າເສິກ ກໍໄດ້ໄຊຊະນະ ຈັບຊະເລີຍ ໄດ້ຊັບສິນຊ້າງມ້າຂ້າຄົນເປັນອັນມາກ ຈຶ່ງມາຄິດວ່າ ຖ້າເຮົາເຂົ້າໄປໃນເວລານີ້ອາດເປັນອັນຕະລາຍ ຈຶ່ງຫາອຸບາຍໃຊ້ຄົນຂອງຕົນໄປແຈ້ງແກ່ພະຍາວ່າ ບັດນີ້ຕົນປາບສັດຕູໄດ້ຮາບຄາບແລ້ວ ແຕ່ຍັງຢ້ານຢູ່ ເພາະຝັນບໍ່ດີ ຕົນໄດ້ຝັນເຫັນຣາຊະສີຕົວໜຶ່ງອອກຈາກຖ້ຳ ຈະລົງໄປອາບນ້ຳຫລິ້ນໃນສະໂບກຂະຣະນີອັນສວຍງາມອັນເປັນບ່ອນກິນ ແລະ ອາບຂອງໝາຈິ້ງຈອກຕົວໜຶ່ງມາກ່ອນ ຣາຊະສີຮູ້ຄວາມຈິງດັ່ງນັ້ນຈຶ່ງບໍ່ຮ່ວມອາບກັບໝາຈິ້ງຈອກອັນເປັນຊາດຕ່ຳກວ່າ ແລ້ວຈຶ່ງກັບຄືນມາຫາທີ່ຢູ່ຂອງຕົນຕາມເດີມ ຄວາມຝັນເຊັ່ນນີ້ ຈະເປັນມົງຄະລະ ຫລືວ່າເປັນອັນຕາຍກໍບໍ່ຮູ້ ຕົນເອງຍັງຢ້ານຢູ່. ພະຍາເຂົ້າໃຈວ່າ ເສນາບໍດີຮູ້ເລື່ອງທັງໝົດແລ້ວ ຈຶ່ງສັ່ງໃຫ້ຄົນໃຊ້ຕອບໄປວ່າ ຄວາມຝັນເຊັ່ນນັ້ນເປັນມົງຄະລະ ດີ ບໍ່ມີເຫດໄພອັນໃດ ໃຫ້ຮີບມາເທີ້ນ ທັງສອງເຂົ້າໃຈປຣິສະໜາກັນດີ ຄັນໄຊຍະເສນາ ມາຮອດເຮືອນແລ້ວ ນາງເສນາຈຶ່ງເອົາເກີບຄຳມາໃຫ້ເບິ່ງ ໄຊຍະເສນາຄິດອຸບາຍເອົາເກີບ ຄຳໄປສົ່ງພະຍາດ້ວຍວິທີການອັນແນບນຽນ ໂດຍກະກຽມຫີບທາງຈາກເຮືອນຕົນໄປເຖິງພະຣາຊະວັງ ໃຫ້ປະດັບປະດາຢ່າງງົດງາມ ແລ້ວເອົາເກີບຄຳໃສ່ເທິງຫົວຊ້າງ ແຫ່ເຂົ້າໃນພະຣາຊະວັງ ໂດຍໃຫ້ໂຄສະນາວ່າ ດ້ວຍເດຊານຸພາບທີ່ພະຍາໃຫ້ເກີບຄຳໄປເປັນໄຊຍະມຸຄຸນກອງທັບຈຶ່ງໄດ້ໄຊຊະນະຂ້າເສິກ ຖ້າພະອົງສະເດັດໄປເອງ ຄົງຈະໄດ້ຮອດບ້ານເມືອງຂອງຂ້າເສິກພຸ້ນແລ້ວ ປະຊາຊົນໄດ້ຍິນ ກໍຍົກຍ້ອງຊົມເຊີຍເຈົ້າແຜ່ນດິນຂອງຕົນວ່າມີບຸນຍາທິການຫລວງຫລາຍ ພະຍາສຳນຶກຜິດ ຄິດເຫັນບຸນຄຸນຂອງໄຊຍະເສນາ ທີ່ບໍ່ຄິດຮ້າຍໃຫ້ຕົນ ຖ້າປະຊາຊົນຮູ້ຄວາມປະພຶດຮ້າຍຂອງຕົນ ອາດຈະກຳຈັດຕົນຈາກຣາຊະສົມບັດກໍໄດ້ ແຕ່ຍ້ອນເສນາຜູ້ມີພະໜຍາໄດ້ແກ້ໄຂອັນຮ້າຍໃຫ້ກາຍເປັນດີຈຶ່ງຮັກແພງນັບຖືໄຊຍະເສນາບໍດີ ໄດ້ພະຣາຊະທານບ້ານສ່ວຍ ແລະ ເລື່ອນຍົດຍິ່ງໆ ຂຶ້ນໄປອີກ.

ຂ້າພະເຈົ້າຍົກບາງເລື່ອງເລັກນ້ອຍ ຂຶ້ນມາປະກອບອະທິບາຍກໍເພື່ອວາດພາບໃຫ້ເຫັນສາຣະເນື້ອໃນຄວາມສຳຄັນຂອງຄຳພີ ມູລະຕັນໄຕ ອັນເປັນພືນທາງພູມປັນຍາຂອງຄົນບູຮານເທົ່ານັ້ນ ແຕ່ໃນອີກດ້ານໜຶ່ງເຊິ່ງເປັນທຳມະດາ ສຳລັບເອກະສານຕຳນານບູຮານມັກຈະມີແນວຄິດຕິດພັນກັບອິດທິປະຕິຫານຂອງເທວະບຸດເທວະດາແບບໄສຍະສາດຫລວງຫລາຍຢູ່ ເລື່ອງນີ້ສຳລັບຄົນສະໄໝໃໝ່ຕ້ອງທຳໃຈໃຫ້ກວ້າງ ເບິ່ງບັນຫາໃຫ້ເປັນແບບສັດຈະວິພາກຄື : ຢ່າເອົາປັດຈຸບັນໄປຍັດໃສ່ໃນອະດີດ ໄລຍະພັນປີ ຫລື ຫ້າຮ້ອຍປີທີ່ຜ່ານມາແລ້ວ ຍ່ອມມີຫລາຍອັນແຕກຕ່າງກັນກັບປັດຈຸບັນ. ເລື່ອງຕຳນານນິທານ ຫລື ແມ່ນແຕ່ເລື່ອງວິຊາການ ຖ້າເກົ່າແກ່ເທົ່າໃດ ຍິ່ງມີເລື່ອງມະຫັດສະຈັນລຶກລັບແຊກແຊງແອບແຝງຫລາຍເທົ່ານັ້ນ ປຽບເໝືອນຕົ້ນໄມ້ ຖ້າຕົ້ນໃຫຍ່ຫລາຍປີເທົ່າໃດ ຍິ່ງມີແກ່ນນອກເປືອກ ແລະ ເກັດຫລາຍເທົ່ານັ້ນ ຂໍ້ສຳຄັນແມ່ນເຮົາຕ້ອງການອັນໃດແທ້ ແຕ່ລະອັນຍ່ອມມີພົນນຳໃຊ້ ໃນທາງແຕກຕ່າງກັນ ແມ່ນແຕ່ເກັດໄມ້ ກໍຍັງເປັນຢາຝົນໃສ່ບາດ ຢ່າງເກັດໂພເປັນຕົ້ນ ປັນຍາຊົນຄວນໃຊ້ວິຊາກິນອ້ອຍຄື ຫຍໍ້າກືນກິນແຕ່ນ້ຳຫວານ ສ່ວນກາກທີ່ບໍ່ຕ້ອງ

ການກໍຄາຍກຶ້ມໄປ ຫລື ກ້າຫວງຫລາຍຈະເກັບໄວ້ດັງໄຟກໍ່ຕາມໃຈ ແຕ່ບໍ່ຄວນກືນກາກ ຈະລຳບາກແກ່ຕົນເອງ. ນີ້ສັນໃດໃນການຄົ້ນຄວ້າເອກະສານເກົ່າແກ່ ກໍມີອຸປະໄມສັນນັ້ນ.

ເວົ້າໃຫ້ສັ້ນ ສຳລັບຄຳພີ ມູລະຕັນໄຕນີ້ ກໍສັນນັ້ນ ຄືມີທັງສາຣະແກ່ນສານ - ວິຊາການ ຄວາມຮູ້ ໜ້າຄິດໜ້າພິຈາລະນາຄົ້ນຄວ້າ ພ້ອມດຽວກັນນັ້ນ ກໍມີສິ່ງເລີກລັບ ອິດທິປະຕິຫານ ຂອງເທບພະເຈົ້າເຫລົ່າເທວາ ທີ່ຄົນສະໄໝນີ້ບາງທ່ານກໍວ່າເປັນສິ່ງງົມງາຍ (Superstition).

ເລື່ອງນີ້ ກ້າທ່ານເຂົ້າໃຈພູມຫລັງ (Background) ຂອງລາວ ບັນຫາຈະໝົດໄປເອງ ດັ້ງເດີມລາວແທ້ໆ ແມ່ນກືສາດສະໜາຜີ (Animism) ຕໍ່ມາໄດ້ຮັບອິດທິພົນສາສະໜາພາມ ເຊິ່ງກືເທວະດາ ຄັນຕໍ່ມາອີກ ໄດ້ຮັບນັບກືສາສະໜາພຸດ ພື້ນຖານວັດທະນະທຳຂອງລາວ ຫລີກເວັ້ນຈາກອິດທິພົນຂອງສາສະໜາທັງ 3 ນີ້ ໄປບໍ່ໄດ້. ສະນັ້ນໃນແນວຄິດ ແລະ ພຶດຕິກຳຕົວຈິງ ບໍ່ສະເພາະຄົນບູຮານ ແມ່ນຄົນປັດຈຸບັນນີ້ ກໍຍັງຫລົງເຫລືອຢູ່ ໜ້ອຍຫລາຍ ແລ້ວແຕ່ລະດັບຂອງໃຜລາວບໍ່ຄວນກືເປັນເລື່ອງຈຳແນກກັນ ທາງທີ່ດີທີ່ຖືກ ແມ່ນຍົກລະດັບການສຶກສາເທົ່ານັ້ນ.

ການວິຈານເລື່ອງນີ້ ເປັນແນວຄິດຂອງຂ້າພະເຈົ້າ ຕາມທັດສະນະຄວາມຮັບຮູ້ທີ່ສະສົມມາຈາກການສຶກສາ ແລະປະສົບການ ອາດຈະແຕກຕ່າງກັບຂອງທ່ານຜູ້ອື່ນກໍໄດ້ ຈຶ່ງຫວັງວ່າທ່ານຜູ້ຮູ້ຈະຊ່ອຍປະກອບຄວາມຄິດເຫັນ ຕໍ່ບັນຫາທີ່ກ່າວມານີ້ ໃຫ້ກວ້າງຂວາງເລິກເຊິ່ງຕໍ່ໆໄປ.

ວຽງຈັນ, ວັນທີ 2 ມີນາ 1991

ສຳລິດ ບົວສີສະຫວັດ
ທີ່ປຶກສາໂຄງການຂຶ້ນບັນຊີຄຳພີໃບລານ

ມູລະຕັນໄຕ

" ນະໂມ ຕັສສັຕຖຸ ນະມັສສາ ຊູລີ ສີສີສິດທິ ໄຊຍະມັງຄະລະ ສີສະວັສສະດີ ປີຕິໂສມະນັສສາ ອັຕຖຸໂນ ໂລໂກປະກາຣະກັມມຸທທິ ວະຍາ ວະຫາລັພພະເວທິນາມະ ນະມິຕະວາ ທັມມະຕະທຸພພູຕະ ສັງຄັນຈະລາພາຄະໂນທທິ ນາມະວັກເຂ ຕັງ ມູລະຕັນໄຕຍະ ປະຕະຍູທາທະຣະນັງ ກັງເກ ມູລະຕັນໄຕຍະນາມາ ນິທາຍະວະຫາຣັຕກະສາທະກະ ວະຍະວະຫາຣິກະມາຕະຍານາມະ ສະທາ ພຸທທິວິວັທທະເຍ ທິຕາຍະມັນທະພຸທທິນາມະປະຣະໄມຍາ ປະເທສະຕາ ".

ອະທັງ ອັນວ່າຜູ້ຂ້າ ນະມິຕະວາ ໄຫວ້ແລ້ວ ພຸທທັງ ຍັງພະພຸດທະເຈົ້າຕົນຕັດສະຣູ້ທັມທັງມວນ ໂລໂກປະກາຣະກັມມັງ ຕົນຫອນຍ່ອມໃຫ້ເປັນຄຸນແກ່ສັດຕະໂລກທັງຫລາຍທັງມວນ ວະຍາ ວະຫາລັພພະ ເວທິນາມະ ຕົນມີປົກກະຕິອັນພະລັນແທ່ງກ້ອຍຄຳທັງມວນ ຈະບໍ່ທໍ່ແຕ່ຜູ້ຂ້າໄຫວ້ພະພຸດທະເຈົ້າແລ້ວແລຢູ່ສິ່ງດອວເລີ່ຍ ນະມິຕະວາ ຂ້າກໍໄຫວ້ ທັມມັງ ຍັງພະທັມມະເຈົ້າ ຕະທຸພພູຕັງອັນເກີດແຕ່ອີກແທ່ງພະພຸທທະເຈົ້ານັ້ນ ຈະບໍ່ທໍ່ແຕ່ຜູ້ຂ້າໄຫວ້ພະພຸທທະເຈົ້າ ແລະ ພະທັມມະເຈົ້າແລ້ວແລຢູ່ສິ່ງດອວເລີຍ ນະມິຕະວາ ຂ້າກໍໄຫວ້ສັງຄັງ ຍັງພະອະຣິຍະສັງຄະເຈົ້າ ຄະໂນຕະມັງຄືຫມູ່ແຫ່ງອະຣິຍະເຈົ້າແປດຈຳພວກ ອັນອຸດົມ ແລະ ປະເສີດ ວັກເຂ ກໍຈັກກ່າວ ປະຕະຍູທາທະຣະນະນາມະ ຍັງອຸທາຫອນ ອັນລອນກັນສືບມາປາກົດຕ່າງໆກັນແລ ຕັງປະຕະຍູທາທະຣະນະອັນວ່າອຸທາຫອນ ອັນສືບໆມານັ້ນ ສະສັທທິນາ ອັນປາກົດວ່າ ມູລະຕັນໄຕຍະນາມະ ດ້ວຍຊື່ວ່າມູລະຕັນໄຕ ພະຍາວະຫາລັພພະສາທະກະ ຫອນຍ່ອມໃຫ້ແລ້ວ ຍັງປະໂຍຊະນະແຫ່ງກ້ອຍຄຳທັງມວນແທ້ດີຫລີແລ ຕະ ອຸທາທະຣະນະນາມະ ອັນວ່າອຸທາຫອນອັນນັ້ນ ສາສະຕິ ກໍໃຫ້ຕັ້ງຢູ່ພຸທທິວິວັທທະເຍ ເພື່ອໃຫ້ຈຳເຣີນຜະຫຍາ ພະລະເວຫາຣິກະມາຕະຍານາມະ ແຫ່ງອຳນາດທັງຫລາຍ ອັນເປັນຂຸນ ພິຈາລະນ່າໄຕກ້ອຍຄຳສະທາ ທຸກເມື່ອ ທິຕາຍະ ເພື່ອໃຫ້ເປັນຄຸນມັນທະພຸດທິນາມະ ແຫ່ງຄົນທັງຫລາຍຝູງມີປະຫຍາ ອັນວາ ປະລະເມໂຍ ປະເທສະຕະ ດ້ວຍອຸບປະເຫດ ສືບສືບກັນມາ ແຕ່ບຸບພາຈາຣະຍະເຈົ້າທັງຫລາຍ ແຕ່ກ່ອນນັ້ນແທ້ດີຫລີແລ.

ອັດເຖໂທເສຈະ ອຸບປັນເນອັດເຖນັດຕັນຈະ ບັນດິໂຕ ວິຍະໄຊໂຍນຸຣູເປນະ ໂທສັນໂທເສນະສິນທິເຍ ທັດກິຄັນໄທຍະ ທັດກິນາ ຍະຖາ ຕັດເຖວະນະໂຍຸ ຄັນເທ ນາວາຍະນາວັນຈະ ເອວັງກະເຕ ນະທຸກກະຣັງ ອັນຍະຖາທຸກກະຣັງ ພະເວ ພະໂລ ອະກາລະວະທາໂຕ ຕັດສະມາ ອັດຕະນາເອເຕນະ ອິດຕັນຈະ ວິສະໄຊຍະ ບັນດິໂຕນະໂຣ ຕະຖາໂທສັນຈະ ວິນິດສະຍະ ກະໄຣຍະ ທີໂຣ ອັດໂຖ ອັນວ່າອະທິບາຍແຫ່ງຄາຖາອັນນີ້ ບຸກຄະລະຜູ້ມີປະຫຍາເພິງຮູ້ດັ່ງນີ້ເທິ້ນ. ກິດເຈຈະ ເມື່ອກິດຈະກໍດີ ໂທເສຈະ ໃນເມື່ອໂທດກໍດີ ອຸບປັນເນ ແລະເກີດມີດັ່ງນັ້ນ ບັນດິໂຕ ອັນວ່ານັກປາດ ວິສະໄຊຍະ ກໍເພິງແກ້ອັດຖັງອັດເຖນະ ດ້ວຍກ້ອຍຄຳ ອະນຸຣູເປນະ ດ້ວຍອັນສົມຄວນແກ່ກ້ອຍຄຳ ແລະໂທດອັນນັ້ນແລ ບັນດິໂຕ ອັນວ່າ ນັກປາດ ສິນທິເຍ ກໍເພິງພິຈາຣະນາຕັດ ໂທສັງ ຍັງໂທດ ໂທເສນະ ດ້ວຍໂທດອະນຸຣູເປນະ ດ້ວຍອັນສົມຄວນແກ່ໂທດອັນນັ້ນເທິ້ນ ນະໂຣ ອັນວ່າຄົນ ຄັນໄທຍະ ກໍເພິງກີເອົາຍັງຊ້າງ ທັດກິນາ ດ້ວຍຊ້າງ ຍະຖາ ແລມີໂດຍປະການສັນໃດ ອະຍັງນະໂຍ ອັນວ່າໄນຍະໜຶ່ງໂທຕິ ກໍເປັນ ຕະຖາ ໂດຍປະການດັ່ງນັ້ນແລ. ເອວັງກະເຕ ໃນເມື່ອກ້ອຍຄຳພິຈາລະນາຕັດໂທດ ແລະຄຸນນັ້ນ ອັນນັກປາດທຳໂດຍປະການດັ່ງນີ້ ທຸກກະຣັງ ແລຈັກເປັນອັນຍາກ ນະໂທຕິ ກໍບໍ່ມີແລ ອັນຍະຖາ ໃນເມື່ອກະທຳໂດຍປະການສັນອື່ນດັ່ງນັ້ນ ທຸກກະຣັງ ກໍເປັນອັນຍາກນັກ ພະເວກໍເພິງມີແທ້ດີຫລີແລ ພາໂລອິວະເປັນປະດຸດຈະດັ່ງ ວັດຖຸທັງຫລາຍເປັນຕົ້ນວ່າ ເຫລັກ ທອງອັນໜັກໄດ້ສອງແສນນັ້ນ ພະໂລອະວະທິໂຕ ອັນເດັກນ້ອຍແລຈັກຍົກກໍບໍ່ໄດ້ ອັນນັ້ນແລ ມີໂດຍປະການສັນໃດ ຕັດສະມາ ເທດດັ່ງນັ້ນ ນະໂຣ ອັນວ່າຄົນ ບັນດິໂຕ ອັນຜູ້ເປັນນັກປາດ ວິສະໄຊຍະກໍເພິງແກ້ ອັດຖັງ ຍັງກ້ອຍຄຳ ອັດເຖນະດ້ວຍກ້ອຍຄຳ ທີໂຣ ອັນນັກປາດ ກະໄຣຍະ ເພິງກະທຳ ວິນິສະຍະກິດຈັງ ຍັງການອັນພິຈາຣະນາຕັດ ໂທສັງ ຍັງໂທດ ໂທເສນະ ດ້ວຍໂທດນັ້ນແລດ້ວຍມີແທ້ ອະທິບາຍໃນຄາຖາ 3 ບົດນີ້ ສັນນີ້ແລ ມັກວ່າ ກ້ອຍຄຳອັນຍົກໃສ່ຕົນກໍດີ ໃສ່ທ່ານຜູ້ອື່ນກໍດີ ແມ່ນວ່າເປດສະໜາອັນທ່ານຫາກມາສ່ອງມາຖາມນັ້ນ ນັກປາດກໍດີ ແມ່ນວ່າໂທດເກີດມີໃນຜູ້ໃດ ຜູ້ໜຶ່ງກໍດີ ນັກປາດຕົນມີພະຫຍາ ອັນພິຈາລະນາຕັດກ້ອຍຄຳດັ່ງນັ້ນ ໃຫ້ເອົາຄຳແກ້ຄຳ, ໃຫ້ເອົາໂທດແກ້ໂທດເທິ້ນ ເປັນປະດຸດຈະດັ່ງຊ້າງປ່ອຍ ເອົາຊ້າງໄປນຳ ເຮືອໄຫລເອົາເຮືອໄປນຳເອົານັ້ນເທິ້ນ ຄັນວ່າກະທຳດັ່ງນີ້ແກ້ໂທດແກ້ຄຳເປັນງ່າຍນັກບໍ່ຍາກສັງແລ ຄັນວ່າບໍ່ກະທຳດັ່ງນີ້ພອຍເອົາອັນອື່ນມາຕັດມາແກ້ນັ້ນ ເປັນອັນຍາກນັກ ເປັນດັ່ງເດັກນ້ອຍຍົກຍັງກ້ອນເຫລັກກ້ອນທອງອັນໜັກໄດ້ສອງແສນນັ້ນໃຫ້ໄດ້ກໍເປັນອັນຍາກ ບໍ່ອາດຈັກໄດ້ແລ ເຫດດັ່ງນັ້ນ ນັກປາດຜູ້ມີປະຫຍາຈັກແກ້ເປດສະໜາບັນຫາ ອັນທ່ານຫາກມາຖາມຕົນກໍດີ ຈັກແກ້ຕາງທ້າວພະຍາມະຫາກະສັດກໍດີ ໃນເມື່ອເປດສະໜາບັນຫາເກີດມີຈັກແກ້ດັ່ງນັ້ນ ໃຫ້ເອົາຄຳອັນສົມຄວນອັນນີ້ສວນສະເໜີດັ່ງບັນຫາອັນນັ້ນມາແກ້ເທິ້ນ ໃນເມື່ອກ້ອຍຄຳອັນມີກໍດີ ອັນບໍ່ມີກໍດີ ອັນທ່ານຫາກຍົກໃສ່ຕົນກໍດີ ແກ່ທ່ານຜູ້ອື່ນກໍດີ ໃຫ້ເອົາຄຳແກ້ຄຳເທິ້ນ ແມ່ນວ່າໃຫ້ພິຈາຣະນາໄຕ່ກ້ອຍຄວາມກໍດີ ໃຫ້ເອົາຄວາມແກ້ຄວາມໃຫ້ເອົາໂທດແກ້ໂທດ ກະທຳສັນນີ້ ກໍຫາກເປັນຕາມຈາຮີດແຫ່ງໂປຣານາຈານເຈົ້າທັງຫລາຍສືບໆມາແຕ່ກ່ອນແທ້ດີຫລີແລ ກໍຫຼຸນຍ່ອມໃຫ້ແລ້ວຍັງປະໂຍຊະນະແກ່ຕົນ ແກ່ທ່ານເປັນດັ່ງນັກປາດຜູ້ເປັນແລ້ວ ເມື່ອກ່ອນເປັນຕົ້ນວ່າ ວິທຸຣະພານມະນາພັດທາຈະຣິຍາປາງນັ້ນແລບຸກຄະລະຜູ້ມີປະຫຍາເພິງຮູ້ສັນນີ້ເທິ້ນ :

1. ໃນກາລະເມື່ອລ່ວງແລ້ວ ພົ້ນໄປແລ້ວ ວັນນັ້ນ ຍັງມີພານມະນາພັດທາຈະຣິຍາ ຊື່ວິທຸຣະພານ ຢູ່ໃນເມືອງໂກໄລຍະ ພານຜູ້ນັ້ນ ມີລູກຊາຍຜູ້ໜຶ່ງຊື່ວ່າ ໂຊຕະກະກຸມມານແລ ສ່ວນພານຜູ້ເປັນພໍ່ນັ້ນເປັນນາຍໝູ່ພໍ່ຄ້າສະເພົາຫ້າຮ້ອຍເຫລັ້ມ ຕໍ່ມາພາກັນຕະເດີນໄປຄ້າໃນປະເທດບ້ານນ້ອຍເມືອງໃຫຍ່ທັງຫລາຍ ທຸກແຫ່ງຫັ້ນແລ ຍັງມີໃນກາລະຄາບໜຶ່ງ ສ່ວນສະເພົາທັງຫລາຍຝູງນັ້ນ ກໍຫລົງເຂົ້າໄປເຖິງຍັງເມືອງອັນໜຶ່ງຊື່ວ່າ ພາຫາລະນະຄອນແລ ຄັນວ່າຈອດສະເພົາແລ້ວ ຊາວເມືອງທັງຫລາຍ ເຂົາກໍບອກເລົ່າແກ່ພະຍາເຈົ້າແຫ່ງເຂົາວ່າດັ່ງນີ້ ພໍ່ຄ້າສະເພົາຝູງນີ້ຈັກມາໂຄບຊິງເອົາສີສົມບັດບ້ານເມືອງແຫ່ງມະຫາຣາຊະເຈົ້າກໍຂ້າແລ ວ່າສັ້ນນີ້ແລ້ວ ພະຍາບໍ່ພິຈາລະນາ ກໍໃຫ້ເຂົາຮິບເອົາເຂົ້າຂອງພໍ່ຄ້າສະເພົາທັງຫລາຍ ຫ້າຮ້ອຍເຫລັ້ມເມືອໝົດສັ້ງແລ້ວແລ. ຍາມນັ້ນ ວິທຸຣະພານ ກໍເປັນພະຍາດບໍ່ຫາຍເທື່ອ ເມື່ອມັນຫາຍພະຍາດແລ້ວ ຈຶ່ງຄະນຶງໃນໃຈດ້ວຍຜະຫຍາແຫ່ງຕົນວ່າດັ່ງນີ້ ກໍເປັນແຕ່ກາລະອັນຈິບຫາຍແກ່ຄົນທັງຫລາຍແທ້ນໍ ເຫດວ່າອຳນາດອາດຍາທ້າວພະຍາມາຂົ່ມເຫັງເຕັງເອົາດ້ວຍຫຍາບຊ້າກ້າແຂງແຮງຍິ່ງນັກແທ້ແລ ອາດຕະມາຈັກກະທຳອຸບບາຍອັນໜຶ່ງກ່ອນວ່າດັ່ງນັ້ນ ເຖິງກາລະຍາມຄົນທັງຫລາຍລົງຕຳເຂົ້ານັ້ນ ມັນກໍເອົາເມັ້ອມັນໄປເຊື່ອງໄວ້ໃນສວນຫ້ອມແຫ່ງຊາວເມືອງ ອັນເປັນກະກຸນແຫ່ງພະຍານັ້ນຫັ້ນແລ ວັນຈຸນຮຸ່ງເຊົ້າ ມັນໄປໄຫວ້ພະຍາດ້ວຍຄຳວ່າດັ່ງນີ້ ເທວະ ຂ້າໄຫວ້ມະຫາຣາຊະເຈົ້າ ຝູງຂ້າທັງຫລາຍກໍມີຄຳຍິນດີ ເຊິ່ງບ້ານເມືອງແຫ່ງມະຫາຣາຊະເຈົ້າແທ້ ຝູງຂ້າທັງຫລາຍຈຶ່ງໄດ້ມາຂາບຝູງຂ້າທັງຫລາຍບໍ່ໄດ້ມາບອຸດບອຸນກະທຳຮ້າຍແກ່ບ້ານເມືອງມະຫາຣາຊະເຈົ້າສັ້ງແທ້ດີຫລີ ອັນໜຶ່ງໃນວັນອັນຝູງຂ້າທັງຫລາຍມາຮອດຈອດສະເພົາວັນນັ້ນ ເມັ້ອຂ້າກໍລົງໄປທ່າ ກໍລວດເສື້ອເມັ້ອແຫ່ງຂ້າ ຝູງຂ້າທັງຫລາຍກໍພາກັນຊອກຫາກໍບໍ່ເຫັນແທ້ດີຫລີ ຂໍມະຫາຣາຊະເຈົ້າເມດຕາກູນາ ຝູງຂ້າອັນຍິນດີເຂົ້າມາໃນບ້ານເມືອງມະຫາຣາຊະເຈົ້າແດ່ເທີ້ນ ເມື່ອນັ້ນ ພະຍາກໍໃຫ້ພິຈາລະນາດູຍັງຄຳຊາວເມືອງ ອັນເຂົາໄປໃສ່ໂທດແກ່ນາຍສະເພົານັ້ນ ກໍຮູ້ວ່າຫາໂທດບໍ່ໄດ້ແທ້ ສວນດັ່ງເມັ້ອນາຍສະເພົາ ເຂົາກໍຫາບໍ່ໄດ້ ພະຍາກໍໃຫ້ຄົນໄປຫາຊ່ອຍ ກໍຈຶ່ງໄດ້ທີ່ສວນຫ້ອມແຫ່ງກະກຸນແຫ່ງພະຍາແທ້ຫັ້ນແລ ເມື່ອນັ້ນ ພະຍາກໍກ່າວເຊິ່ງວິທຸຣະພານວ່າ ດູລາວິທຸຣະພານ ຄອງວ່າຈັກໄດ້ພອຍເລົ່າມາເສື້ອນໍ ດັ່ງນີ້ແລ້ວ ພະຍາກໍຄືນເຂົ້າຂອງທັງມວນ ແກ່ນາຍສະເພົາຄ້າທັງຫລາຍຫ້າຮ້ອຍເຫລັ້ມນັ້ນແລ ພະຍາກໍຖາມວິທຸຣະພານວ່າ " ດູລາ ວິທຸຣະພານ ເມັ້ອທ່ານນັ້ນມີຄ່າທໍ່ໃດຈາ " ວິທຸຣະພານກ່າວວ່າ " ຂ້າໄຫວ້ມະຫາຣາຊະເຈົ້າ ເມັ້ອຂ້ານີ້ຄ່າຫ້າຮ້ອຍກະຫະປະນະແລ ພະຍາຈຶ່ງໃຫ້ກະກຸນອັນເປັນເຈົ້າສວນຫ້ອມນັ້ນເສື້ອໃຫ້ແກ່ວິທຸຣະພານ ເປັນພັນກະຫະປະນະໃຫ້ເປັນສິນໄໝເຫດວ່າລັກເອົາເມັ້ອທ່ານໄປຊ້ອນໄວ້ນັ້ນແລ ຜິຈັກໃຊ້ທ່ານ ກໍທໍ່ຈັກໄດ້ຫ້າຮ້ອຍກະຫາປະນະແລ ທີ່ນີ້ເປັນການລັກໄດ້ເສື້ອແກ່ທ່ານ ທ່ານກໍເປັນໄປກັບດ້ວຍໂທດແລ ພະຍາຈຶ່ງໃຫ້ໃຊ້ສອງທໍ່ພັນກະຫາປະນະເພື່ອດັ່ງນັ້ນແລ ຜິວ່າຂ້າເມັ້ອແທ້ ກໍໃຫ້ໄດ້ໃຊ້ເຈັດທໍ່ແລ ສວນດັ່ງຊາວເມືອງ ຝູງເຂົາຍົກໂທດໃສ່ນາຍສະເພົາ ແລະໄດ້ເອົາເຂົ້າຂອງນາຍສະເພົາທັງຫລາຍໄວ້ນັ້ນ ພະຍາກໍໃຫ້ໃຊ້ສອງທໍ່ຫັ້ນແລ ພໍ່ຄ້າທັງຫລາຍກໍເສີກເສີນຍ້ອງຍໍນາຍສະເພົາມາກນັກກໍມີວັນນັ້ນແລ.

2. ທີ່ນີ້ຈັກຈາລູກສາວພະຍາກ່ອນແລ ສ່ວນພະຍາຕົນນັ້ນມີລູກສາມຄົນ ບໍລະບວນດ້ວຍ

ຮູບໂສມຕະໂນມພັນ ວັນນະອັນງາມລ້ອນກ້ອນທຸກແຫ່ງຫາທີ່ຈັກຕິຈັກຕອນບໍ່ໄດ້ຫັ້ນແລ ເລົ່າຍັງມີພະຍາເມືອງຫນຶ່ງຮູ້ຂ່າວສານ ກໍໄດ້ເອົາລິພິນເສນາໂຍທາທັງຫລາຍມານຳກັນກັວ່າຈະຮົບເຮວ ເອົາລູກຍິງພະຍາວ່າດັ່ງນີ້ ຄັນວ່າມາຮອດແດນເມືອງແລ້ວ ຈຶ່ງໃຫ້ເອົາສັດສອງຕົວຜູ້ ຕົວຫນຶ່ງ ແມ່ຕົວຫນຶ່ງ ຄືວ່າຈີເຂັບສອງຕົວພີ່ນ້ອງໃສ່ໃນອູບຄຳ ກັບທັງຫມາສອງຕົວ ອັນໄດ້ໃນເກາະສະຫມຸດໃສ່ໃນໂຂງ (ກົງ)ຄຳແລ້ວກໍໃຊ້ມາໃຫ້ເປັນບັນຫາ ດ້ວຍຄຳວ່າດັ່ງນີ້ ຜີວ່າຍັງມີພະຫຍາ ແລະ ຮູ້ວ່າ ຈີເຂັບສອງຕົວນີ້ວ່າ ຕົວນີ້ຕົວຜູ້ ຕົວນີ້ຕົວແມ່ ຕົວນີ້ຕົວພີ່ ຕົວນີ້ຕົວນ້ອງ ແລະ ຜີວ່າ ຍັງຮູ້ດັ່ງນີ້ແທ້ໃຫ້ຫມາຍມາເທີ້ນ ຜີວ່າພະຍາເຈົ້າບໍ່ຮູ້ດັ່ງນັ້ນຕູຈັກຮົບເອົາເມືອງແທ້ວ່າດັ່ງນັ້ນ ເຂົາຈຶ່ງເສັ່ງກັນວ່າ ເຂົາຍັງຮູ້ດັ່ງນັ້ນ ເຮົາໄປຮົບເຂົາບໍ່ໄດ້ແລ ຜີວ່າເຂົາບໍ່ຮູ້ແທ້ເຮົາໄດ້ງ່າຍນັກແລວ່າດັ່ງນັ້ນແລ້ວ ກໍ່ຈຶ່ງໃຊ້ໄປຫັ້ນແລ ຄັນວ່າຄົນໃຊ້ໄປຮອດແລ້ວ ກ່າວຕາມພະຍາເຈົ້າເຂົາຫາກສັ່ງຊູ່ອັນຫັ້ນແລ ຄັນວ່າພະຍາໄດ້ຍິນຄຳອັນນັ້ນຊັ້ນແລ້ວ ກໍ່ຈຶ່ງໃຫ້ຊຸມມາຍັງອຸບປະຣາດ ເສນາປະໂຣຫິຕະພາມະນາຈະຣິຍະທັງຫລາຍມາແລ້ວ ກໍໃຫ້ພິຈາລະນະດູເກີງເຈັດວັນແລ້ວ ກໍບໍ່ອາດເພື່ອວ່າໃຫ້ແກ້ໄດ້ຈັກຄົນຫັ້ນແລ.

ເມື່ອນັ້ນ ຊາວເມືອງທັງຫລາຍທັງມວນ ກໍຂໍາເຂືອກເຍືອກຕື່ນຕົກໃຈກົວທົ່ວທັງເມືອງຫັ້ນແລ ພະຍາກໍນ້ອຍໃຈນັກ ກໍຕຶຄະນຶງໃນໃຈວ່າ ຈັກເສັຽລູກກູເອົາແທ້ລື ຜີວ່າເສັຽລູກກູແທ້ດັ່ງນັ້ນເສນາຝູງນີ້ ກໍບໍ່ເພິງວ່າຈັກໄດ້ເປັນເສນາດັ່ງເກົ່າແລ ເຫດວ່າບໍ່ຮູ້ແກ້ເປດສະຫນາບັນຫາຕາງກູໄດ້ຈັກຄົນແລ ກໍຈັກໄດ້ເຂົ້າລຸກ ອຳນາດອາດຍາແຫ່ງທ່ານແທ້ບໍ ຄະນຶງດັ່ງນີ້ແລ້ວ ຈຶ່ງຄະນຶງເກີງວິທຸຣະພາມວ່າດັ່ງນີ້ ສວນດັ່ງວິທຸຣະພາມຜູ້ນີ້ ມັນຍັງມີປະຫຍາແທ້ແລ ວ່າດັ່ງນີ້ແລ້ວພະຍາກໍຫາຄໍາເພິງລັກອາຍບໍ່ໄດ້ແລ້ວ ກໍໃຫ້ໄປຮັບຫາທັນມາຫັ້ນແລ ຄັນວ່າວິທຸຣະພາມມາແລ້ວກໍບອກເລົ່າປະຈຸດຕິການທັງມວນ ແກ່ວິທຸຣະພາມວ່າ ບັນຫາເບື່ອງນີ້ທ່ານຈັກແກ້ໄດ້ບໍຈາ ວິທຸຣະພາມຂານວ່າຂ້າໄຫວ້ມະຫາຣາຊະເປັນເຈົ້າ ຜີວ່າມະຫາຣາຊະເຈົ້າຮ້ອນໃຈແທ້ດັ່ງນັ້ນ ຂ້າກໍຈັກແກ້ດູແລທໍ່ວ່າຈັກໄດ້ຫາສັກຂີໃຫ້ເປັນທີ່ເຊື່ອແກ່ຄົນທັງຫລາຍແລ ພະຍາກໍໃຫ້ມັນແກ້ຫັ້ນແລ ມັນຈຶ່ງໄຫວ້ເທວະດາຕົນຮັກສາ ພູມເສດຕະສັດພະຍາດັ່ງນີ້ ຂ້າໄຫວ້ເທວະດາເປັນເຈົ້າ ຜີວ່າຜູ້ຂ້າແກ້ບັນຫາສອງປະການນີ້ ຍັງຊອບຄອງໂລກທັງຫລາຍ ແຕ່ບູຮານແທ້ ດັ່ງນັ້ນ ເທວະດາເຈົ້າທັງຫລາຍຈົ່ງໃຫ້ສັກຂີອັນຫນຶ່ງໃຫ້ປາກົດແກ່ຄົນທັງຫລາຍເທີ້ນ ຄັນວ່າມັນກ່າວດັ່ງນີ້ແລ້ວ ຈຶ່ງໃຫ້ຄົນໄຂປາກອູບອັນນັ້ນໃຫ້ຈີເຂັບອອກມາແລ້ວ ມັນກໍຊີ້ຈີເຂັບທັງສອງຕົວນັ້ນວ່າ ຈີເຂັບຕົວຫົວໃຫຍ່ ແລະ ຕົວນ້ອຍເປັນພີ່ ຕົວຫົວນ້ອຍ ແລະ ຄີງໃຫຍ່ນີ້ ເປັນຕົວແມ່ ແລະ ເປັນນ້ອງແລ ວ່າດັ່ງນັ້ນແລ້ວ ເມື່ອພາຍລຸນ ມັນຈຶ່ງໃຫ້ຄົນໄຂປາກໂຂງຄຳໃຫ້ຫມາອອກມາແລ້ວ ມັນກໍໄດ້ຮູ້ແຕ່ບູຮານມາ ມັນຈຶ່ງຊີ້ຕົວອອກມາກ່ອນນັ້ນເປັນຕົວພີ່ ແລ ຕົວອອກມາລຸນນັ້ນ ເປັນຕົວນ້ອງແລ ວ່າດັ່ງນັ້ນແລ້ວ ທ່ານພາມແກ້ບັນຫາສອງປະການນີ້ ກໍຊອບຄະດີໂລກທັງຫລາຍແທ້ແລ ເມື່ອນັ້ນເທວະດາຕົນຮັກສາພູມເສດຕະສັດພະຍານັ້ນ ຈຶ່ງຜາຍເຂົ້າຕອກດອກໄມ້ທິບລົງມາບູຊາ ໃຫ້ເປັນສັກຂີແກ່ຄົນທັງຫລາຍຫາຄຳສົງກາບໍ່ໄດ້ແລ ເມື່ອນັ້ນ ຊາວເມືອງທັງຫລາຍ ກໍສາທຸການຊົມຊື່ນຍິນດີທົ່ວເມືອງກໍມີແລ

ເມື່ອນັ້ນຄົນໃຊ້ພະຍາຕ່າງເມືອງ ກໍອຳລາພະຍາແລ້ວ ກໍໜີໄປແລ ເມື່ອນັ້ນຊາວເມືອງທັງຫລາຍມີພະຍາເປັນຕົ້ນ ກໍຢູ່ສຸກສຳລານບານໃຈມາກນັກກໍມີວັນນັ້ນແລ ພະຍາກໍບູຊາວິທຸຣະພາມດ້ວຍກະຫາປະນະພັນໜຶ່ງແລ້ວ ຈຶ່ງກາມວ່າດັ່ງນີ້ ດູລາທ່ານພາມຜູ້ມີຜະຫຍາ ຕູກໍຮູ້ກໍເຫັນສັກຂີ ອັນເທວະດາຫາກໃຫ້ເປັນອັນແຈ້ງໃນບັນຫາສອງອັນນີ້ ບໍ່ສົງໄສແລ ເຫດສັນໃດແລເປັນທີ່ຊື່ທີ່ຫອມມາແຕ່ບູຮານນັ້ນຈາ ຕູທັງຫລາຍກໍໃຄ່ຮູ້ນຳທ່ານແລ ວິທຸຣະພາມຂານວ່າ ເທວະ ຂ້າແກ່ມະຫາຣາຊະເຈົ້າຍັງໄຄ່ຮູ້ດັ່ງນັ້ນ ຜູ້ຂ້າກໍຈັກກ່າວໃຫ້ມະຫາຣາຊະເຈົ້າແຈ້ງແລ ວ່າດັ່ງນີ້ແລ້ວ ມັນຈຶ່ງກ່າວແຕ່ໂປຣານາຈານຝູງລ່ວງແລ້ວແຕ່ພາຍຫລັງມຶນນານນັກ ຫາກກ່າວຫອມໂລກໄວ້ສືບມາວ່າ ຢ່າໃຫ້ມີຄຳຕິຕອນສົງໄສແກ່ຄົນໃບ້ ຝູງບໍ່ຮູ້ນັ້ນດັ່ງນີ້ແລ ຂ້າໄຫວ້ມະຫາຣາຊະເຈົ້າ ຍັງມີພະຍາຕົນໜຶ່ງ ຊື່ວ່າໂກຣັບພະຍົນດີໃນສາດສະໜາມັກໄຄ່ບວດ ຍັງມີລູກຊາຍສອງຄົນພີ່ນ້ອງ ອັນເປັນຣາຊະບຸດ ພະຍາກໍເວນເມືອງໃຫ້ແກ່ 2 ພີ່ນ້ອງແລ້ວ ພະຍາກໍໃຫ້ໂອວາດຄຳສັ່ງສອນແກ່ຣາຊະບຸດຕົນວ່າດັ່ງນີ້ ດູລາເຈົ້າຣາຊະບຸດ ເມື່ອເຈົ້າຈັກໄປທາງໃດກໍດີເປັນຕົ້ນວ່າ ຂີ່ຊ້າງ ຂີ່ມ້າ ຣາຊະຣົດສີວິກາຍົວະຍານຄານຫາມກໍດີ ເຈົ້າຢ່າໄດ້ໄປກ່ອນພີ່ເຈົ້າເນີ ຈົ່ງໃຫ້ພີ່ໄປກ່ອນທຸກເມື່ອເນີ ວ່າດັ່ງນີ້ແລ ອັນນີ້ຫາກເປັນປະເວນີແຫ່ງນ້ອງພີ່ກັນມາແຕ່ທ້າວພະຍາມາແຕ່ກ່ອນດັ່ງນີ້ ກໍຫາກເປັນສັກຂີແຫ່ງສຸນັກຂາສອງຕົວພີ່ນ້ອງ ແຕ່ໂປຣານາຈານມາແຕ່ກ່ອນແທ້ແລ ເທວະ ຂ້າໄຫວ້ມະຫາຣາຊະເຈົ້າ ສັກຂີແຫ່ງຈິເຂັບ ກໍຍັງມີແລ ພະຍາຈຶ່ງກ່າວວ່າ ສັກຂີແຫ່ງຈິເຂັບນັ້ນເປັນດັ່ງລືຈາ ທີນັ້ນວິທຸຣະພາມຂານພະຍາວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ສັກຂີແຫ່ງຈິເຂັບນັ້ນມີສັນນີ້ແລ ຍັງມີມານະວະຜູ້ໜຶ່ງຂຶ້ນໃຈນັກຢູ່ໃນເມືອງໂທລະໄທຍະຣາດ ມັນກໍອອກໄປເປັນຣັດສີຢູ່ໃນປ່າທີ່ໜຶ່ງຫັ້ນແລ ຍັງມີໃນວັນໜຶ່ງເຈົ້າຣັດສີກໍລົງໄປສ່ວຍໜ້າໃນທ່ານ້ຳເມື່ອເຊົ້າ ຍັງມີຈິເຂັບຕົວໜຶ່ງຕົກຢູ່ໃນນ້ຳ ປູຕົວໜຶ່ງຄີບໄວ້ດ້ວຍກ້າມແຫ່ງມັນ ມັນວ່າຈັກກິນຫັ້ນແລ ຈິເຂັບຕົວນັ້ນເຫັນເຈົ້າຣັດສີມາ ມັນຈຶ່ງວ່າຂ້າແກ່ພະຣັດສີເປັນເຈົ້າ ເຈົ້າຈົ່ງເອົາຊີວິດແຫ່ງຂ້າແດ່ເທີ້ນວ່າດັ່ງນີ້ ເຈົ້າຣັດສີໄດ້ຍິນແລ້ວ ຈຶ່ງເອົາປາຕາຍຕົວໜຶ່ງໄປແລກເອົາມາໄວ້ໃນອາສົມບົດແຫ່ງຕົນຫັ້ນແລ ວັນລຸນນັ້ນ ຈິເຂັບຕົວນັ້ນມັນຈະອອກລູກມັນຈຶ່ງກ່າວວ່າ ຂ້າແກ່ເຈົ້າກູ ເຈົ້າກູຈົ່ງໃຫ້ທ່ອນໄມ້ປ່ອງອັນໜຶ່ງແກ່ຂ້າແດ່ເທີ້ນວ່າດັ່ງນີ້ ເຈົ້າຣັດສີກໍໃຫ້ທ່ອນໄມ້ປ່ອງອັນໜຶ່ງແກ່ຈິເຂັບຫັ້ນແລ ຈິເຂັບຕົວນັ້ນກໍອອກລູກໃນປ່ອງໄມ້ອັນນັ້ນສອງຕົວແລ ລ້ຳຈິເຂັບສອງຕົວນັ້ນ ຕົວອອກກ່ອນນັ້ນຕົວພີ່ ຮູທະວານແມ່ມັນໄປ່ຫັນກວ້າງຄືງມັນນ້ອຍເກັດມັນຫ່າງ ຕາມັນໃຫຍ່ຫົວມັນໃຫຍ່ ເພື່ອອັນແລ ຕົວນ້ອງອອກລຸນນັ້ນ ຮູທະວານແມ່ມັນກວ້າງ ຄືງມັນໃຫຍ່ ຫົວມັນນ້ອຍ ຕານ້ອຍ ເກັດກີ່ ຫາງສ້ວຍ ເພື່ອດັ່ງນັ້ນແລ ອັນນີ້ກໍໂປຣານາຈານເຈົ້າຕົນປະກອບດ້ວຍຜະຫຍາຮູ້ແລ້ວ ຈຶ່ງກ່າວສືບມາຫອມໂລກທັງຫລາຍໄວ້ແລ.

ເມື່ອນັ້ນຄົນທັງຫລາຍກໍມາສາທຸການມາກນັກກໍມີແລ ເມື່ອນັ້ນພະຍາກໍໃຫ້ອຸບປະຣາດແຕ່ງສະເພົາຫ້າຮ້ອຍເຫລັ້ມອັນເຕັມໄປດ້ວຍເຂົ້າຂອງທັງມວນແລ ກໍໃຫ້ຄົນກີສະເພົາໄປສົ່ງແກ່ວິທຸຣະພາມ ເພື່ອໃຫ້ເປັນຂອງບູຊາຄຸນແຫ່ງພາມຫັ້ນແລ ພໍ່ຄ້າສະເພົາທັງຫລາຍ ເຂົາກໍສັ່ງອຳລາພະຍາແລ້ວ ກໍໜີເມືອຫາເມືອງເກົ່າເຂົາກໍມີແລ ຄັນວ່າເມືອຮອດແລ້ວ ບໍ່ນານທໍ່ໃດວິທຸຣະພາມກໍຈັກໃກ້ຕາຍ ກໍສັ່ງລູກຊາຍໄວ້ວ່າ ດູລາເຈົ້າໂຊຕິມານະວະ ເຈົ້າຢ່າໄດ້ໄປຄ້າໃນເມືອງພາຫາລະ

ນະຄອນນັ້ນພໍ່ເນີ ເຫດວ່າຊາວເມືອງພາຫາລະນະຄອນ ນັ້ນພາໂລນັກ ຜູ້ໃດມີພະຫຍາແກ້ບັນຫາ ຕາງເຂົາກໍຈິ່ງໄດ້ເຂົ້າຂອງແທ່ງເຂົາດາຍ ເຫດວ່າພະຍາເຈົ້າເຂົານັ້ນ ມີລູກຍິງສາມຄົນງາມນັກ ທ້າວພະຍາຕ່າງເມືອງຢາກໄດ້ນັກໃສ່ບັນຫາມາມາກນັກແລ ຜູ້ໃດແກ້ໄດ້ ຈິ່ງບໍ່ທຳການຮ້າຍແລ ເຈົ້າຍັງໜຸ່ມຍັງນ້ອຍນັກຢ່າໄດ້ໄປແທ້ພໍ່ເນີ ສັ່ງລູກດັ່ງນີ້ແລ້ວຢູ່ບໍ່ນານເທົ່າໃດ ມັນກໍຕາຍໄປທັ້ນແລ ເມື່ອນັ້ນເຈົ້າໂຊຕິກະກຸມມານ ກໍພາໝູ່ພໍ່ຄ້າສະເພົາທັງຫລາຍຫ້າຮ້ອຍເຫລົ້ມໄປດ້ວຍລຳດັບບ້ານ ນ້ອຍ ເມືອງໃຫຍ່ທັງຫລາຍ ກໍໄປຮອດໄປເຖິງເມືອງພາຫາລະນະຄອນ ຄັນວ່າສະເພົາ ຈອດທ່າ ແລ້ວ ດັ່ງນັ້ນ ຍາມນັ້ນ ຍັງມີນົກຍາງແດງຕົວໜຶ່ງລອຍຝັ່ງນ້ຳມະຫາສະໝຸດຂື້ນມາໂຊຕິກະກຸມ ມານກໍຍິງເອົານົກຍາງແດງຕົວນັ້ນທັ້ນແລ ເມື່ອນັ້ນ ຍັງມີຜູ້ຊາຍຊາວເມືອງຜູ້ໜຶ່ງ ກໍແລ່ນມາວ່າ ດູລາກຸມມານທ່ານມາຍິງເອົານົກຍາງພໍ່ກູສັ່ງຈາ ກູບໍ່ຍອມຄວາມແກ່ທ່ານແລ ວ່າດັ່ງນີ້ແລ້ວ ກໍ ໜີໄປທັ້ນແລເລົ່າຍັງມີຜູ້ໜຶ່ງມາວ່າ ເຈົ້າກຸມມານມາດີແລ ພໍ່ທ່ານຍັງເອົາແກ້ວກູເມືອເຕັມນ້ຳບໍ່ ຊາຍແລ ທ່ານຍັງເອົາມາບໍ່ຈາ ກູຈັກການເອົານຳທ່ານແລ ແຕ່ນັ້ນເລົ່າຍັງມີຜູ້ໜຶ່ງມາວ່າ ເຈົ້າ ກຸມມານມາດີແລ ພໍ່ທ່ານຍັງຢືມເອົາລູກໝູເຜືອກກູເມືອຕົວໜຶ່ງໃຫ້ເປັນມັງຄະລະໃນນ້ຳສະໝຸດ ວ່າ ດັ່ງນັ້ນແລ ແມ່ມັນກໍໄຫ້ຫາທຸກວັນແລ ເຈົ້າມາສັນນີ້ເຮົາຈະເອົານຳທ່ານແລ ຍັງມີຜູ້ໜຶ່ງມີ ຕາກ້ຳດຽວເລົ່າມາວ່າເຈົ້າກຸມມານມາດີແລ ພໍ່ທ່ານມາຢືມຕາກູເມືອກ້ຳໜຶ່ງແລ ເຈົ້າກູມາ ກູຈັກເອົາຄອມທ່ານແລ ເຂົາກໍເມື່ອບອກເລົ່າພະຍາເຈົ້າເຂົາທັ້ນແລ ພະຍາກໍໃຫ້ຄົນໄປຮອກຫາ ທັນມາຍັງເຈົ້າໂຊຕິກະກຸມມານມາແລ້ວ ພະຍາກໍເຫັນໂຊຕິກະກຸມມານນັ້ນ ຍັງໜຸ່ມນ້ອຍ ພະຍາ ຈິ່ງການວ່າ ດູລາກຸມມານທ່ານນີ້ຜູ້ຊື່ ໂຊຕິກະກຸມມານເປັນລູກວິທຸຣະພານນັ້ນລື ກຸມມານຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຂ້ານີ້ກໍຫາກແມ່ນລູກວິທຸຣະພານແລ ພໍ່ຜູ້ຂ້າຄ້ອມເມືອຮອດເຮືອນກໍລວດ ໄດ້ພະຍາດ ເມື່ອຈັກໃກ້ ຕາຍນັ້ນ ກໍຍັງສັ່ງຂ້າໄວ້ວ່າ ເຈົ້າຈິ່ງໄປຄ້າໃນເມືອງອັນຊື່ວ່າ ພາຫາ ລະນະຄອນ ນັ້ນເນີ ເມືອງອື່ນເຈົ້າຢ່າໄປພໍ່ເນີ ສັ່ງຜູ້ຂ້າແລ້ວກໍຕາຍໄປທັ້ນແລ ຂ້າກໍຍິນດີເຊິ່ງ ບ້ານເມືອງມະຫາຣາຊະເຈົ້າຂ້າຈິ່ງມາແລ ເມື່ອນັ້ນ ພະຍາກໍເຫັນເຈົ້າໂຊຕິກະກຸມມານ ອັນ ຍັງໜຸ່ມຍັງນ້ອຍແລ ປະກອບດ້ວຍຮູບອັນຄວນຮັກສະເໝີລູກຄີງ ຈິ່ງມີຄຳກູນາການວ່າ ດູລາ ກຸມມານ ຄຳອັນເຂົາວ່ານັ້ນມີແທ້ລື ເຈົ້າກຸມມານຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຄຳອັນ ເຂົາວ່ານັ້ນ ມີກໍດີບໍ່ມີກໍດີ ເຂົາຫາກວ່າມີຊູອັນແກ່ຜູ້ຂ້າແລ ພະຍາການວ່າ ມຶງຍັງໜຸ່ມ ຍັງນ້ອຍນັກຈັກແກ້ຄຳເຂົາໄດ້ແດ່ລື ກຸມມານຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຈິ່ງມີ ຄຳເມດຕາກູນາຕັ້ງຢູ່ໃນອັນຊອບຄອງທຳແກ່ຜູ້ຂ້າເທີ້ນ. ເມື່ອນັ້ນ ໂຊຕິກະກຸມມານກໍຄະນຶງໃນ ໃຈວ່າ ຄຳອັນບໍ່ມີເຂົາກໍວ່າມີ ຕົບາບໄຫມໃສ່ໂທດແກ່ອາດຕະມາສັນນີ້ ກູຈັກເອົາອັນອື່ນ ມາແກ້ບໍ່ຄວນແລ ກູເພິ່ງເອົາອັນບໍ່ມີນີ້ມາແກ້ຄຳກໍຄວນແລ ຄະນຶງດັ່ງນີ້ແລ ຈິ່ງໄຫວ້ພະຍາ ວ່າ ຂ້າໄຫວ້ມະຫາຣາຊະເຈົ້າໃນເມື່ອໂທດເກີດມີແກ່ຕົນສັນນີ້ ໃຜຈັກມາແກ້ຕາງບໍ່ໄດ້ກໍຂ້າ ແລ ເມື່ອນັ້ນ ຊາຍຜູ້ນັ້ນ ກໍມາການເອົາຄ່ານົກຍາງແດງຕົວເປັນພໍ່ນຳກຸມມານໄຈ້ວງທັ້ນແລ ເມື່ອນັ້ນກຸມມານໄຫວ້ພະຍາວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຂ້ານີ້ແລຈັກຫາສັງກິນບໍ່ໄດ້ ຈິ່ງ ຍິງເອົາພໍ່ມັນມາກິນສັງບໍ່ມີດາຍ ພໍ່ຂ້າຕາຍໄປແລ້ວກໍເກີດເປັນປາຕົວໜຶ່ງ ນົກຍາງແດງຕົວນີ້ ມັນມາສັບຕອດພໍ່ຜູ້ຂ້າເສັຽ ຂ້າຈິ່ງໄດ້ຍິງເອົາເພື່ອອັນແລ ເມື່ອນັ້ນ ພະຍາການກຸມມານວ່າ

ດູລາກຸມມານເຫດສັນໃດແລ ມາຮູ້ຈັກວ່າ ພໍ່ມຶງຕາຍເປັນປານຸ້ນຈາ ກຸມມານຂານວ່າ
ຂ້າໄທວ້ມະຫາຣາຊະເຈົ້າ ຈິ່ງຖາມຜູ້ເປັນເຄົ້າກິດຈະກໍາກ່ອນເທີ້ນ ພະຍາຈິ່ງຖາມຊາຍຜູ້ນັ້ນວ່າ
ເຫດສັນໃດມຶງຈິ່ງມາຮູ້ຈັກວ່າພໍ່ມຶງຕາຍເປັນນົກຍາງນັ້ນຈາ ເມື່ອນັ້ນຊາຍຜູ້ນັ້ນ. ກໍຫາທີ່ອັນຈັກບອກ
ບໍ່ໄດ້ແກ່ພະຍາແລ ເມື່ອນັ້ນເຈົ້າໂຊຕິກະມານະວະ ຈິ່ງໄຫວ້ພະຍາວ່າສັນນີ້ ຂ້າໄຫວ້ມະຫາຣາ
ຊະເຈົ້າ ເຫດອັນພໍ່ຂ້າຕາຍເປັນປານັ້ນມີສັນນີ້ ເມື່ອພໍ່ຂ້າຍັງເປັນຄົນ ວັນນັ້ນໄດ້ມາຄ້າຂາຍໃນ
ບ້ານເມືອງມະຫາຣາຊະເຈົ້ານີ້ ເປັນອັນຍິນດີກືກເນື້ອເພິ່ງໃຈນັກ ເມື່ອຈັກໃກ້ຕາຍກໍສັ່ງຜູ້ຂ້າຜູ້
ເປັນລູກນີ້ໄວ້ວ່າ ມຶງຢ່າໄປຄ້າຂາຍເມືອງໃດເນີ ຈິ່ງໃຫ້ໄປຄ້າຂາຍໃນເມືອງພາຫາລະນະຄອນ
ນັ້ນເທີ້ນ ວ່າດັ່ງນີ້ ເມື່ອຈັກຕາຍແທ້ ພໍ່ຂ້າກໍມີໃຈກັດຕິຄະນຶງເຊິ່ງບ້ານເມືອງມະຫາຣາຊະເຈົ້ານັກ
ກວ່າຊູ່ອັນ ບາດຕາຍໄປແລ້ວ ກໍຈິ່ງມາເກີດເປັນປາເພື່ອດັ່ງນັ້ນແລ ຊາດໃກ້ຕາຍ ແລະ ຄຶດ
ເຖິງອັນໃດກ່ອນຫລອນຍ່ອມເກີດເປັນເຜດດ້ວຍວັດຖຸອັນນັ້ນ ເພື່ອເຈດຕະນາເຖິງນັ້ນແລ ເຫດດັ່ງ
ນັ້ນ ຂ້າຈິ່ງໄດ້ວ່າ ພໍ່ຂ້າເກີດເປັນປາເພື່ອດັ່ງນັ້ນແລ ໂຊຕິກະມານະວະຊັກເອົາເຫດອັນນັ້ນມາ
ແກ້ເປັນຊອບທໍາແລ ຮອກວ່າແພ້ຜູ້ນົກຍາງແດງນັ້ນແລ ພະຍາຈັກຕັດຄໍາອັນນັ້ນຈິ່ງກ່າວວ່າ ມຶງ
ກໍຫາສັກຂີບໍ່ໄດ້ ກໍຮອກວ່າ ຕີບາບໄຫມໃສ່ໂທດແກ່ທ່ານເປົ່າດາຍແລ ໂທດຈັກມີແກ່ມຶງແລ ພະ
ຍາຈັກໃສ່ສິນໄໝແກ່ມັນ ຈິ່ງຖາມເສນາທັງຫລາຍແລ ເສນາບໍ່ອະທິບາຍຮອດອັນພະຍາຖາມນັ້ນ
ສັກຄົນ ພະຍາຈິ່ງກ່າວເຊິ່ງຜູ້ນົກຍາງແດງນັ້ນວ່າ ນົກຍາງແດງນັ້ນບໍ່ໃຊ້ນົກມຶງລ້ຽງ ມຶງວ່າພໍ່ມຶງ
ຕາຍເປັນນົກຍາງນັ້ນ ມຶງກໍຫາສັກຂີບໍ່ໄດ້ ມຶງຫາກຕີບາບໄຫມໃສ່ໂທດແກ່ກຸມມານເປົ່າດາຍແລ
ພະຍາຈິ່ງຊັກນິທານມາຫອມໄວ້ແກ່ເສນາທັງຫລາຍວ່າ ດັ່ງນີ້ ສ່ວນດັ່ງກຸມມານນີ້ ກໍໄດ້ຄໍາພໍ່ສັ່ງ
ໄວ້ ເມື່ອຍັງເປັນຄົນນັ້ນເປັນສັກຂີແລ ມັນຈັກໄດ້ໃຊ້ກຸມມານນັ້ນເຈັດຄ່າຄົນແລ ມຶງວ່າພໍ່ມຶງເປັນ
ນົກຍາງນັ້ນ ເປັນຂອງລ້ຽງມຶງແທ້ດັ່ງນັ້ນ ຜິວ່າມີສັກຂີແທ້ດັ່ງນັ້ນ ກຸມມານຈັກໄດ້ໃຊ້ມຶງສອງຕົວ
ແລ ຜິວ່າສັດສີ່ຕີນ ຄືວ່າງົວຄວາຍນັ້ນ ອັນເປັນຂອງລ້ຽງທ່ານນັ້ນ ຈັກໄດ້ໃຊ້ສອງທໍ່ແລ ທີ່ນີ້
ບໍ່ໃຊ້ພໍ່ມຶງ ບໍ່ໃຊ້ຂອງລ້ຽງມຶງ. ມຶງຫາກຕີບາບໄຫມໃສ່ໂທດທ່ານເປົ່າດາຍແລ ພະຍາກໍໃສ່ໂທດ
ແກ່ມັນໄດ້ໃຊ້ສອງຮ້ອຍກະຫາປະນະ ເປັນສິນໄໝໃຫ້ແກ່ກຸມມານທັ້ນແລ ຜິວ່າມັນແພ້ ກຸມມານ ກໍ
ຈັກໄດ້ໃຊ້ສອງທໍ່ແລ ທີ່ນີ້ມັນໄດ້ເສັຽແກ່ທ່ານ ກໍດ້ວຍໂທດມັນຕີບາບໄຫມໃສ່ໂທດແກ່ທ່ານເປົ່າດາຍ
ນັ້ນແລ ຈິ່ງໄດ້ໄຫມມັນສອງທໍ່ ເພື່ອດັ່ງນັ້ນແລ ສິນໄໝສອງທໍ່ສິນໄໝໄພ່ແລ ພະຍາຈິ່ງສອນ
ມັນວ່າ ແຕ່ນີ້ເມືອໜ້າ ມຶງຢ່າໄດ້ຜິໄຫມທ່ານສັນນີ້ເທີ້ນ ບໍ່ດີແລ ພະຍາຈິ່ງສອນເສນາໄວ້ວ່າ
ແຕ່ນີ້ເມືອໜ້າ ຜູ້ໃດໄດ້ຂ້າຄົນທ່ານເສັຽກໍດີ ຂ້າສັດອັນເປັນຂອງລ້ຽງຂອງດູທ່ານເສັຽກໍດີ ນັກ
ປາດຜູ້ມີພະຫຍາຈັກຕັດແຕ່ງໃຫ້ແຍງດູວັດຖຸອັນໜັກອັນເບົາສັນນີ້ເທີ້ນ ຜິວ່າໄດ້ຂ້າຄົນ ຜູ້ມີສິນ ມີ
ພະຫຍາໃຫ້ຂ້າມັນຕອບເທີ້ນ ຜິວ່າມັນບໍ່ຢາກຕາຍດັ່ງນັ້ນໃຫ້ທີຄ່າຜູ້ມີສິນມີພະຫຍານັ້ນ ໃຫ້ທີພັນກະ
ຫາປະນະນຶ່ງແລ ໃຫ້ມັນໃຊ້ເຈັດທໍ່ຄ່າຄົນເທີ້ນ ຜິວ່າມັນໄຮ້ ບໍ່ມີສິ່ງໃຊ້ໃຫ້ໄດ້ສອງທໍ່ຄ່າຄົນ ຜິວ່າ
ຫາພີ່ນ້ອງບໍ່ໄດ້ໃຫ້ນັກບຸນເຈົ້າຄຸນໃຊ້ຕາງສອງທໍ່ ເອົາຕົວມັນໃຫ້ເຈົ້າພິກຂຸບວດມັນໃຫ້ມີອານິສົງແກ່
ຜູ້ໃຊ້ຕ່າງມັນນັ້ນເທີ້ນ ພະຍາຕັດຄໍາສັນນີ້ ເປັນສຸຄະຕິຄະມະນະແລ ທີ່ນັ້ນ ມັນຜູ້ເປັນເຈົ້າແກ້ວ
ນັ້ນ ກໍມາຖາມເອົາແກ້ວດອມກຸມມານເຈົ້າແລ ໂຊຕິກະກຸມມານໄຫວ້ພະຍາວ່າ ຂ້າແຕ່ມະຫາ
ຣາຊະເປັນເຈົ້າ ພໍ່ຜູ້ຂ້າຍັງສັ່ງຜູ້ຂ້າໄວ້ວ່າ ເມື່ອເອົາແກ້ວພໍ່ຜູ້ຂ້າ ກໍຄວັດນໍ້າບໍ່ຊາຍນັ້ນໃຫ້ບົກ

ໃຫ້ແຫ້ງແລ້ວຈຶ່ງເອົາແກ້ວນັ້ນພອງໃສ່ໃຫ້ເຕັມວ່າອັນດາຍ ໃຫ້ມັນຄວັດນ້ຳບໍ່ຊາຍໃຫ້ແຫ້ງ ດັ່ງພໍ່ຜູ້ຂ້າສັ່ງມັນເທີ້ນ ຂ້າຈັກພອງແກ້ວໃຫ້ແກ່ມັນແລ ພະຍາກໍໃຫ້ມັນຄວັດນ້ຳບໍ່ຊາຍນັ້ນ ມັນໄປຄວັດກໍເປັນອັນອິດແຮງນັກ ນ້ຳບໍ່ຊາຍກໍບໍ່ບົກບໍ່ແຫ້ງໃຫ້ແກ່ມັນຈັກເທື່ອ ມັນຈຶ່ງວ່າບໍ່ອາດຈັກຄວັດນ້ຳບໍ່ຊາຍນັ້ນໃຫ້ບົກໃຫ້ແຫ້ງໄດ້ແລວ່າດັ່ງນັ້ນ ພະຍາຈຶ່ງວ່າມັນນີ້ ເປັນຄົນໄບ້ນັກແທ້ນໍ ບໍ່ຄຶດຈັກເສັຽແກ່ທ່ານນໍ ທໍ່ຄຶດແຕ່ວ່າຈັກໄດ້ຂອງທ່ານເປົ່າດາຍແລ ພະຍາຈັກໃສ່ໂທດໃສ່ສິນໄໝແກ່ມັນ ພະຍາກໍພິຈາລະນາດູວ່າ ຜີວ່າມັນຄວັດນ້ຳບໍ່ຊາຍແຫ້ງແທ້ ໂຊຕິກະມານະວະ ຈັກໄດ້ໃຊ້ແກ້ວແກ່ມັນເປັນສອງທໍ່ແລ ທີ່ນີ້ມັນຄວັດນ້ຳບໍ່ຊາຍບໍ່ແຫ້ງເປັນອັນຕົບາບໄໝໃສ່ໂທດແກ່ທ່ານເປົ່າດາຍ ກໍຈຶ່ງໃສ່ສິນໄໝຕາມອັນຕໍໄໝໃສ່ໂທດແກ່ທ່ານນັ້ນ ພະຍາຈຶ່ງຫລິງຄຸນຄ່າແກ້ວນັ້ນ ຮູ້ແລ້ວ ຈຶ່ງໃຫ້ມັນຂາບໄຫວ້ແທບຕີນແຫ່ງກຸມມານນັ້ນແລ້ວ ພະຍາກໍໃຫ້ກຸມມານອົດໂທດແກ່ມັນ ຢ່າໃຫ້ເປັນກຳແກ່ຜູ້ຕັດຄວາມນັ້ນແລ້ວ ພະຍາກໍໃສ່ສິນໄໝແຫ່ງມັນເກິ່ງກ່ອງແກ້ວນັ້ນແລ ຕັດຄຳສັນນີ້ເປັນສຸຄະຕິຄະມະນະແລ ພະຍາຈຶ່ງສອນເສນາທັງຫລາຍວ່າດັ່ງນີ້ ຈັກຕັດກ້ອຍຄຳອັນໃດກໍດີໃຫ້ເພິ່ງດູອັນຈັກເສັຽນັ້ນເທີ້ນ ທີ່ນັ້ນຊາຍຜູ້ມີຕາກ້ຳາດອົນັ້ນ ກໍມາກາມເອົາຕາດອມເຈົ້າໂຊຕິກະມານະວະແລ ເມື່ອນັ້ນ ກຸມມານໄຫວ້ພະຍາວາ ຂ້າໄຫວ້ມະຫາຣາຊະເຈົ້າ ພໍ່ຜູ້ຂ້າສັ່ງໄວ້ວ່າ ເມື່ອກູຈັກເອົາຕາດອມມັນນັ້ນ ພໍ່ກໍຄວັດເອົາລູກຕາພໍ່ອອກໄວ້ເປັນຮາງກ່ອນແລ້ວ ພໍ່ຈຶ່ງຄວັດເອົາຕາມັນມາໃສ່ຕາພໍ່ໄວ້ດາຍ ພໍ່ຜູ້ຂ້າສັ່ງໄວ້ສັນນີ້ແລ ບັດນີ້ໃຫ້ມັນຄວັດເອົາຕາມັນອອກເປັນຮາງໄວ້ກ່ອນແລ້ວ ຈຶ່ງຄວັດເອົາຕາຂ້າອອກໄປໃສ່ໃຫ້ມັນແລ ພະຍາກໍໃຫ້ມັນຄວັດຕາມັນອອກ ມັນກໍບໍ່ອາດຈັກຄວັດຕາມັນໄດ້ ພະຍາຈຶ່ງວ່າມັນມາຕົບາບໄໝໃສ່ໂທດແກ່ທ່ານເປົ່າດາຍແລ ມາບໍ່ຮໍາເພິ່ງດູເນື້ອຕົນຈັກກະທຳໄດ້ແລະບໍ່ໄດ້ນັ້ນ ຫວັງວ່າຈັກໄດ້ກິນຂອງທ່ານເປົ່າດາຍນັ້ນແລ ພະຍາກໍຊ້ຳາກາມມັນວ່າ ມຶງຈັກຄວັດຕາມຶງອອກໄດ້ແທ້ລື ມັນວ່າອັນນີ້ກໍເປັນການອັນກະທຳຍາກນັກແລ ມຶງບໍ່ຄວັດຕາມຶງໄວ້ໃຫ້ເປັນຮາງໄດ້ດັ່ງນັ້ນ ກໍຫາທີ່ຈັກໃສ່ບໍ່ໄດ້ແລ ອັນນີ້ເປັນອຸບປະມາເປັນດັ່ງຊ່າງຂອດແຫວນນັ້ນແລ ເຂົາກໍທອນຍ່ອມແປງໂຮງຕາໄວ້ດີແລ້ວ ຈຶ່ງເອົາແກ້ວຕາແຫວນມາຍັດໃສ່ແທ້ດາຍອັນນີ້ກໍເປັນດັ່ງນັ້ນແລ ມັນວ່າຂ້າບໍ່ອາດຈັກຄວັດໄດ້ແລ ເມື່ອນັ້ນພະຍາຈັກໃສ່ສິນໄໝແກ່ມັນ ຈຶ່ງພິຈາລະນາດູອັນມັນມາໃສ່ໂທດແກ່ທ່ານເປັນອັນໜັກແທ້ແລ ຊາຕິຕານີ້ບໍ່ອາດຈັກຄະນະນາຫາຄ່າໄດ້ແທ້ດີຫລີແລ ຜີວ່າ ຈັກໃຫ້ຕາມຄ່າຕາແທ້ ກໍບໍ່ຮ່າງວ່າຈັກໄດ້ແລ ພະຍາຈຶ່ງໃສ່ໂທດແກ່ມັນແຄວນເບົາ ເປັນພັນກະຫາປະນະໜຶ່ງແລ ພະຍາຕັດຄ່າສັນນີ້ເປັນສຸຄະຕິແລ ກ້ອຍຄຳອັນໃດກໍດີ ໃຫ້ຫລິງຫາໂທດໜັກໂທດເບົາເທີ້ນ ສຸຄະຕິແລ ທີ່ນີ້ຊາຍຜູ້ໜຶ່ງວ່າເປັນເຈົ້າໝູເຜືອກ ມັນມາກາມເອົາລູກໝູເຜືອກມັນເລົ່າແລ ເມື່ອນັ້ນ ກຸມມານຈຶ່ງໄຫວ້ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ເມື່ອພໍ່ຜູ້ຂ້າເອົາລູກໝູເຜືອກນັ້ນ ໝູຕົວນັ້ນຍັງນ້ອຍນັກ ບັດນີ້ໝູຕົວນັ້ນກໍໃຫ່ຍມາແລ້ວມັນຮູ້ຈັກແມ່ມັນບໍຈາ ຕົວແມ່ມັນຈັກຮູ້ລູກມັນບໍຈາ ໃຫ້ເອົາແມ່ມັນມາກ່ອນ ບໍ່ດັ່ງນັ້ນ ກໍບໍ່ຮ່າງວ່າແມ່ນແມ່ມັນ ມັນຈະແລ່ນໜີເສຍເດ ພະຍາຈຶ່ງວ່າມຶງຈຶ່ງເອົາແມ່ມັນມາຫາລູກມັນເທີ້ນ ຂ້າບໍ່ອາດຈັກໄປເອົາມາໄດ້ແລ ພະຍາກ່າວວ່າ ຄຳອັນນີ້ບໍ່ມີເລົ່າມາວ່າມີ ອັນນີ້ກໍຜີໄໝໃສ່ໂທດທ່ານເປົ່າດາຍແທ້ ທໍ່ຄຶດວ່າຈັກໄດ້ໄໝທ່ານກິນດ້ວຍງ່າຍ ບໍ່ຄຶດອັນຈັກຫາໄດ້ແລະ ຫາບໍ່ໄດ້ນັ້ນແລ ພະຍາຈັກໃສ່ສິນໄໝແກ່ມັນ ຈຶ່ງພິຈາລະນາດູວ່າ ຜີວ່າມັນຫາຕົວແມ່ມາໄດ້ແທ້ດັ່ງນັ້ນກຸມມານຈັກ

ໄດ້ໃຊ້ໜູເຜືອກແກ່ມັນສອງຕົວແລ ບັດນີ້ມັນຫາບໍ່ໄດ້ຮອກວ່າຄຳບໍ່ແພ້ທ່ານເຫດວ່າຫາສັກຂີບໍ່ໄດ້ ບໍ່ແພ້ທ່ານແລ ພະຍາຈັກໃສ່ສິນໄໝແກ່ມັນຈຶ່ງພິຈະລະນາດູວ່າ ຊາຕິໜູເຜືອກນີ້ ບໍ່ຮ່າງວ່າຈັກມີແກ່ມັນແລ ແມ່ນມີແຕ່ງໃດກໍເປັນມັງຄະລະແກ່ທ້າວພະຍາດີຫລີແລພະຍາກໍທີຄ່າໜູນັ້ນ ເປັນພັນກະຫາປະນະໜຶ່ງ ຈຶ່ງໄໝມັນເປັນສອງທີ່ ເປັນສອງພັນກະຫາປະນະນັ້ນແລ ເຫດວ່າບໍ່ມີມັນມາລ່າຍວ່າມີນັ້ນ ຈຶ່ງແຕ່ງສິນໄໝອັນໜັກແກ່ມັນ ເພື່ອອັນແລບຸກຄະລະຜູ້ມີປະຫຍາເພິງພິຈາລະນາ ຕາມຄຳຕຳນານນິທານອັນນີ້ເທີ້ນ.

ທີ່ນັ້ນ ຍັງມີພະຍາສາມເມືອງ ກໍໄດ້ຍິນຂ່າວສານວ່າ ລູກສາວພະຍາມີສາມນາງງາມນັກວ່າດັ່ງນັ້ນ ກໍໄຄ່ໄດ້ຕ່າງຄົນກໍຕ່າງວ່າຈັກຊີງກັນເອົາ ພະຍາເມືອງໜຶ່ງກໍໃຊ້ໃຫ້ເອົາແຫວນທຳມະໂຮງສາມລູກມາກາມແກ່ທ້າວພະຍາພາຫາລະນະຄອນນັ້ນວ່າ ດັ່ງນີ້ແຫວນລູກໜຶ່ງໄດ້ໃນຝັ່ງນ້ຳສະໝຸດລູກໜຶ່ງ ໄດ້ໃນກ້ຳກາງນ້ຳສະໝຸດລູກໜຶ່ງໄດ້ໃນພື້ນນ້ຳສະໝຸດ ລ່ຳແຫວນສາມລູກນີ້ມີຄ່າແລະລູກແລະສາມພັນແລ ທີ່ວ່າລູກໃດຍັງແຄວນປະເສີດນັ້ນຈາວ່າດັ່ງນັ້ນກໍແຕ່ງໃຫ້ເປັນບັນຫາມາສ່ອງ ຜີວ່າພະຍາຍັງຮູ້ແຫວນລູກປະເສີດນັ້ນແທ້ ໃຫ້ແກ້ມາຮີບ ຜີວ່າບໍ່ຮູ້ດັ່ງນັ້ນຕູຈັກມາຮີບເອົາລູກສາວແລ ວ່າດັ່ງນັ້ນແລ້ວກໍໃຊ້ມາຫັ້ນແລ ດັ່ງພະຍາເມືອງໜຶ່ງກໍເລົ່າໃຊ້ໃຫ້ນຳມາຍັງແຫວນສາມລູກ ລູກໜຶ່ງໄດ້ແຕ່ຈອມເຂົາ ວິມຸລລະບັບພິດ ລູກໜຶ່ງໄດ້ແຕ່ເມືອງນາກ. ລູກໜຶ່ງໄດ້ໃນທ່າມກາງແຜ່ນດິນມາແລ ລ້ຳແຫວນ ສາມລູກນີ້ ລູກໃດຍັງແວນປະເສີດຈາ ກີຄ່າແສນຄຳຊູ່ລູກແລ ຜີວ່າພະຍາຍັງຮູ້ດັ່ງຕູນັ້ນ ຈິ່ງໄວ້ແກ່ນາງກຸມມາລີທັງສາມເທີ້ນ ຜີວ່າບໍ່ຮູ້ດັ່ງຕູແທ້ດັ່ງນັ້ນ ຕູຈັກມາຮີບເອົາລູກສາວແລ ວ່າດັ່ງນັ້ນແລ້ວກໍໃຊ້ມາແລ ເລົ່າຍັງມີພະຍາເມືອງໜຶ່ງ ກໍໃຊ້ໃຫ້ນຳມາຍັງແຫວນທຳມະໂຮງສາມລູກແລ ລູກໜຶ່ງໄດ້ແຕ່ເຂົາສີເນໂລຣາດມາແລ ລູກໜຶ່ງໄດ້ມາແຕ່ເຂົາສຸວັນນະຄີລີມາແລ ລູກໜຶ່ງໄດ້ແຕ່ເຂົາຊາຕະນາໂກປູນນະຄີລີມາແລ ກໍຄວນຄ່າແສນຄຳຊູ່ລູກແລ ທີ່ວ່າລູກໃດຍັງແວນປະເສີດຈາ ຜີວ່າຍັງຮູ້ດັ່ງຕູນີ້ ແຫວນລູກປະເສີດນັ້ນຈິ່ງໄວ້ແກ່ນາງກຸມມາຣີ ຜູ້ພີ່ເທີ້ນ ຜີວ່າພະຍາບໍ່ຮູ້ດັ່ງນັ້ນ ຕູຈັກມາຮີບເອົາລູກສາວພະຍາແລວ່າດັ່ງນັ້ນແລ້ວ ກໍໃຊ້ໃຫ້ມາຫັ້ນແລ ດ້ວຍມີແທ້ ອັນວ່າອະທິບາຍ ພະຍາທັງສາມເມືອງນັ້ນ ກໍຢູ່ໃນລະແວກຫວ່າງກາງເມືອງທັງຫລາຍແລ. ທ້າວພະຍາປະເທສະຣາດຕ່າງເມືອງ ມັກແປງບັນຫາມາສ່ອງມາທວາຍເຂົາ ເຂົາແກ້ບໍ່ໄດ້ ຈຶ່ງໃຊ້ໃຫ້ມາແລ ເຫດວ່າເຂົາໄຄ່ຮູ້ໄຄ່ຮອນນຳແລ ເຂົາຈັກໄປແກ້ທ້າວພະຍາຝູງອື່ນ ອັນແຕ່ງມາຫາເຂົານັ້ນແລ ໃນຍະໜຶ່ງເປັນດັ່ງແມງພູ່ທັງຫລາຍໄປຄວ່າສະແຫວງຫາໄກສອນດອກໄມ້ທັງຫລາຍນັ້ນແລ ດັ່ງຈັກຮູ້ມານີ້ ອາຈານເຈົ້າທັງຫລາຍຝູງຮູ້ແລ້ວເມື່ອກ່ອນຈຶ່ງກ່າວສືບໆມາວ່າ ເມື່ອເຂົາຈັກຕັ້ງແຕ່ງເມືອງໃໝ່ໃຫ້ໄດ້ຫ້າຮ້ອຍສີ່ສິບປີ ເຂົາຫາກຮູ້ໂທດຕົວ ຢູ່ບໍ່ໄດ້ຈຶ່ງໃຫ້ໄປສະແຫວງຫາເອົາສາດຕະສິນແຫ່ງນັກປາດຜູ້ມີປະຫຍາແຫ່ງເຂົາ ເພື່ອອັນແລ ຕຳນານອັນນີ້ເປັນຄຳແຫ່ງອາຈະຣິຍະເຈົ້າ ຜູ້ຊື່ວ່າບັນທະພານອັນເປັນອາຈານແຫ່ງພະຍາລັງກາ ຜູ້ພິຈາລະນາໄຕ່ກ້ອຍສອນຄວາມຕາງຫູຕາງຕາທ້າວພະຍາ ໂດຍດັ່ງອັນຊອບທຳສືບມາແຕ່ກ່ອນພຸ້ນແລ ພິຈາລະນາດັ່ງນີ້ຈຶ່ງແຕ້ມໄວ້ ດ້ວຍນ້ຳຮັກແລ ຈຶ່ງຮອມມາໄວ້ໃນຫີບແກ້ວພະລຶກໃນເມືອງອັດກາລະນະຄອນ ອັນເປັນລູກເມືອງລັງກາທີບນັ້ນ ເພື່ອຈັກໃຫ້ຄອງເສີມແກ່ນັກ

ປາດ ຝູງຈັກເປັນເສນາພິຈາລະນາກ້ອຍທັງຫລາຍ ຕາງທ້າວພະຍາໃຫ້ຊອບຄອງທຳເປັນຄອງສຸຄະຕິຄະມະນະ ເພື່ອໃຫ້ທັບທັບເສັຽຍັງປະຕູອະບາຍທັງສີ່ແກ່ນັກປາດທັງຫລາຍແລ. ທີ່ນີ້ຈັກກ່າວເຖິງຄົນໃຊ້ພະຍາສາມເມືອງນັ້ນເລົ່າ ເຂົາກໍກ່າວກິດຈະກຳທັງມວນ ອັນພະຍາເຈົ້າ ເຂົາສັ່ງມາຖວາຍແກ່ພະຍາພາຫາຣະນະຄອນ ຊູ່ປະການຫັ້ນແລ ພະຍາໄດ້ຍິນແລ້ວ ຈຶ່ງໃຊ້ໃຫ້ຊຸມນຸມມາຍັງເສນາອາມາດ ແລະ ນັກປາດອຸບປະຣາດ ແລະ ປະໂຣຫິດພາມມາແລ້ວ ພະຍາຈຶ່ງຖາມວ່າ ດູລາທ່ານທັງຫລາຍ ຄຳອັນເປັນບັນຫາເບື້ອງນີ້ແຕ່ກ່ອນຍັງເຄີຍໄດ້ຍິນແດ່ລື ນັກປາດ ທັງຫລາຍກ່າວວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ແຕ່ຝູງຂ້າທັງຫລາຍເກີດມານີ້ ບໍ່ທ່ອນຮູ້ຈັກເທື່ອແລ ພະຍາກ່າວວ່າ ໃນບ້ານເມືອງເຮົານີ້ ບຸກຄະລະຜູ້ໃດຈັກຮູ້ຍັງມີບໍຈາ ອຸບປະຣາດກ່າວວ່າ ຜິວ່າມີດັ່ງນັ້ນ ເຮົາເພິ່ງຕີຄ້ອງຮ້ອງປ່າວຫາດູແລ ພະຍາກ່າວວ່າ ດູລາອຸບປະຣາດບໍ່ຄວນແລ ເມື່ອນັ້ນ ລູກສາວພະຍາຜູ້ຊື່ວ່າໂຊຕິກະກຸມມາຣີ ນັ້ນກ່າວວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ສ່ວນດັ່ງນາຍສະເພົາ ຜູ້ຊື່ວ່າ ໂຊຕິກະມານະວະ ມີຄາວ່າບໍ່ຮູ້ຍັງບັນຫາຝູງນັ້ນກໍຂ້າລື ທີ່ນັ້ນພະຍາກ່າວວ່າເອີແທ້ບໍ ລືມເສັຽແທ້ບໍ ລືມເສັຽແທ້ວ່າດັ່ງນີ້ແລ້ວ ພະຍາຈຶ່ງໃຊ້ໃຫ້ພວກນ້ອຍໄປຫັນມາ ຈຶ່ງຖາມວ່າ ດູລາໂຊຕິກະມານະວະ ເປດສະໜາບັນຫາອັນນີ້ ທ່ານຍັງຈັກແກ້ໄດ້ບໍຈາ ຜິວ່າກຸມມານຍັງແກ້ໄດ້ດັ່ງນັ້ນ ເຂົ້າຂອງທັງມວນອັນມີຢູ່ໃນເມືອງນີ້ ເຮົາກໍຈັກເວນໃຫ້ແກ່ທ່ານຊະແລ ກຸມມານຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຜິວ່າມະຫາຣາຊະເຈົ້າຈັກໃຫ້ແກ່ແທ້ດັ່ງນັ້ນ ຜູ້ຂ້າກໍຈັກແກ້ດູແລ ທີ່ນັ້ນກຸມມານອັນຈັກຍ້ອງຍໍຄຸນແຫ່ງຕົນ ຈຶ່ງກ່າວແກ່ພະຍາວ່າ ເທວະ ຂ້າໄຫວ້ມະຫາຣາຊະເຈົ້າ ຄົນທັງຫລາຍອັນມີໃນເມືອງແຫ່ງມະຫາຣາຊະເຈົ້າທັງມວນອັນກວ້າງໄດ້ຫ້າສິບສອງໂຍຊະນະ ບຸກຄະລະຜູ້ໃດຈັກອາດແກ້ບັນຫາຕາງມະຫາຣາຊະເຈົ້າສະເໝີດັ່ງຜູ້ຂ້ານີ້ຍັງມີບໍຈາ ເມື່ອນັ້ນ ພະຍາກ່າວວ່າ ດູລາກຸມມານ ບໍ່ຮ່າງວ່າຈັກມີແລ ກຸມມານໄຫວ້ພະຍາວ່າ ຊາຕິນັກປາດທັງຫລາຍນີ້ ຈັກກະທຳອັນໃດໃຫ້ມີສັກຂີແກ່ຄົນທັງຫລາຍຈຶ່ງຊອບ ຈຶ່ງບໍ່ມີຄຳສິງກາດາຍວ່າດັ່ງນັ້ນແລ້ວ ຈຶ່ງຕຶກະນຶງໃນໃຈແຫ່ງຕົນວ່າດັ່ງນີ້ ນັກປາດທັງຫລາຍ ແຕ່ກ່ອນນັ້ນຈັກກະທຳອັນໃດກໍດີ ຫອນຍ່ອມພິຈາລະນາດູຍັງກິດຈະອັນຈັກກະທຳນັ້ນແຈ້ງແລ້ວ ຈຶ່ງກະທຳນັ້ນແທ້ດີຫລີແລ ຜິວ່າເຫດຫາກເກີດມີໃຫ້ເອົາເຫດນັ້ນແກ້ ຄວາມເກີດໃຫ້ເອົາຄວາມນັ້ນແກ້ ອຸບປະມາດັ່ງຊ້າງປ່ອຍເອົາຊ້າງໄປນຳ ເຮືອໄຫລເອົາເຮືອໄປນຳ ອັນນີ້ກໍຫາກຊອບໂປຣານະທັມຄຳຊອບຄອງໂລກທັງຫລາຍແທ້ແລ ໃນກາລະເມື່ອນັ້ນ ພະຍາກໍ່ໃຫ້ຊຸມນຸມມາຍັງເສນາອາມາດທັງຫລາຍແລ້ວ ກໍໃຫ້ຫັນມາຍັງຄົນໃຊ້ພະຍາທັງສາມເມືອງນັ້ນມາ ເພື່ອຈັກແກ້ບັນຫາຫັ້ນແລ ເມື່ອນັ້ນ ໂຊຕິກະມານະວະ ຈຶ່ງໄຫວ້ ຣາດທະນາເທວະດາ ອັນຮັກສາພູມເສດຕະສັດພະຍານັ້ນວ່າ ຂ້າໄຫວ້ ເທວະດາເຈົ້າ ເປດສະໜາ ບັນຫາ ອັນທ້າວພະຍາຕ່າງເມືອງໃຊ້ມາສ່ຽງຂ້ານີ້ ຂ້າຈັກແກ້ຕາມພະທຍາແຫ່ງຂ້າກ່ອນແລ ຜິວ່າຍັງຊອບຄອງໂລກທັງຫລາຍດັ່ງນັກປາດເຈົ້າທັງຫລາຍ ແກ້ບັນຫາມາແຕ່ກ່ອນແທ້ດັ່ງນັ້ນ ເທວະດາເຈົ້າຈຶ່ງໃຫ້ສັກຂີອັນໜຶ່ງໃຫ້ປາກົດແກ່ຄົນທັງຫລາຍກໍຂ້າເທີ້ນ ໄຫວ້ເທວະດາແລ້ວຈຶ່ງກ່າວວ່າ ດູລານັກປາດເຈົ້າທັງຫລາຍ ອັນມາປະສຸມຊຸມນຸມກັນໃນກາລະບັດນີ້ ຈົ່ງຟັງເທີ້ນ ຂ້າຈັກກ່າວບັດນີ້ແລ ວ່າດັ່ງນັ້ນແລ້ວ ຈຶ່ງວ່າກັບດ້ວຍຄົນໃຊ້ພະຍາວ່າດູລາເຈົ້ານາຍໃຊ້ ສວນດັ່ງແຫວນສາມລູກນັ້ນ ຂ້າຫລິງ

ດູກໍຫາກເປັນມັງຄະລະແກ່ທ້າວພະຍາຊູ່ລູກແທ້ແລ ລ້ຳແຫວນສາມລູກນັ້ນ ອັນມາແຕ່ພື້ນນ້ຳສະ
ໝຸດນັ້ນ ຍັງແອນປະເສີດກວ່າສອງລູກນັ້ນແລ ເມື່ອນັ້ນຄົນໃຊ້ພະຍາຈຶ່ງຖາມວ່າ ດູລາເຈົ້າກຸມ
ມານເຫດໃດ ຈຶ່ງວ່າປະເສີດນັ້ນຈາ ຕູກໍຍັງໄດ່ຮູ້ນຳແລ ເຈົ້າກຸມມານກ່າວວ່າ ດູລາຄົນໃຊ້
ທ່ານຍັງໄດ່ຮູ້ດັ່ງນັ້ນແທ້ ເຮົາກໍຈັກກ່າວໃຫ້ຮູ້ນຳແລ ວ່າດັ່ງນັ້ນ ຈຶ່ງກ່າວວ່າ ມາຕຸລະ ດູລາລຸງ
ຊາຕິ ຝັ່ງນ້ຳທັງຫລາຍອັນມີໃນສະກະລະຊົມພູທີບນີ້ ກໍຫອນຍ່ອມບໍ່ໝັ້ນບໍ່ທ່ຽງສັກອັນດາຍແມ່ນວ່າ
ຝັ່ງສະໝຸດກໍດີ ເມື່ອລົມມະຫາເມຄະອັນໃຫຍ່ແລພັດ ຟັດຕີລະລອກນ້ຳສະໝຸດກະຈັດອອກຝັ່ງທັ່ງ
ກຸບຮີບນອງໄຫລ ດັ່ງຝັ່ງທັງຫລາຍອັນມີໃນສະກະລະຊົມພູທີບນີ້ ກໍຫອນຍ່ອມເກື່ອນເພໄປດ້ວຍກຳ
ລັງນ້ຳທຸກເມື່ອດາຍ ຊາຕິແມ່ນ້ຳໃຫຍ່ ແມ່ນ້ຳນ້ອຍກໍດີ ອັນມີໃນຊົມພູທີບນີ້ ກໍຮູ້ບົກຮູ້ແຫ້ງໄປດາຍ
ກໍບໍ່ໝັ້ນບໍ່ທ່ຽງແທ້ດີຫລີແລ ອັນວ່າສະພາວະພື້ນນ້ຳທັງຫລາຍ ອັນມີໃນຊົມພູທີບກໍຫອນຍ່ອມເປັນທີ່
ຕັ້ງຢູ່ແຫ່ງວັດຖູເຂົ້າຂອງເງິນຄຳທັງຫລາຍແທ້ດີຫຼີແລ ເຫດດັ່ງນັ້ນຈຶ່ງໄດ້ວ່າພື້ນນ້ຳສະໝຸດນັ້ນປະ
ເສີດເພື່ອດັ່ງນັ້ນແລ ຄຳອັນນີ້ກໍຊອບຄະດີທຳ ແຕ່ໂປຣານະທຳມະດາແທ້ແລ ເມື່ອນັ້ນເທວະດາ
ກໍພາຍເຂົ້າຕອກດອກໄມ້ທິບລົງມາ ບູຊາເຈົ້າກຸມມານໃຫ້ເປັນສັກຂີແກ່ຄົນທັງຫລາຍແລ ເມື່ອນັ້ນ
ພະຍາກໍໃຫ້ຫາມາຍັງຄົນໃຊ້ພະຍາເມືອງກ້ອນສອງນັ້ນມາແລ້ວ ເມື່ອນັ້ນ ເຈົ້າໂຊຕິກະມານະວະ
ອັນຈັກແກ້ບັນຫາອັນນັ້ນວ່າດັ່ງນີ້ ດູລາຄົນໃຊ້ສວນດັ່ງແຫວນທຳມະໂຮງສາມລູກນີ້ ກໍເປັນຂອງມັງ
ຄະລະແກ່ທ້າວພະຍາຊູ່ລູກແລ ຄ່າກໍມີຊູ່ລູກແລ ທີ່ວ່າ ລູກໄດ້ໃນແຜ່ນດິນນັ້ນແອນປະເສີດກວ່າ
ສອງລູກນັ້ນແລ ຄົນໃຊ້ພະຍາກ່າວວ່າ ດູລາເຈົ້າກຸມມານເຫດດັ່ງລືແລວ່າ ປະເສີດນັ້ນຈາ ຂ້າ
ທັງຫລາຍກໍໄດ່ຮູ້ນຳແລ ເມື່ອນັ້ນເຈົ້າກຸມມານກ່າວວ່າ ດູລາອາວຣາຊະທູຕາ ຜິວ່າທ່ານຍັງໄດ່
ຮູ້ນຳແທ້ ເຮົາກໍຈັກກ່າວໃຫ້ຮູ້ນຳແລ ຊາຕິກຳເນີດອັນເກີດພິຊະ ອັນເກີດມາແຫ່ງແກ້ວທັງຫລາຍ
ໃນຊົມພູທີບນີ້ ຫອນຍ່ອມເກີດມາແຕ່ເຂົາວິມູລະບັບພົດດາຍ ລູກອັນມາແຕ່ເມືອງນາກນັ້ນກໍປະເສີດ
ແທ້ແລ ຜິແລໄດ້ເຂົ້າຂອງສົມບັດກໍດີ ທີ່ຢູ່ທີ່ນອນກໍດີ ເຄື່ອງປະດັບປະດາກໍດີ ກໍຫອນຍ່ອມເປັນ
ທິບຊູ່ອັນແລ ເຫດນິມິດດັ່ງລື ເປັນສັນນີ້ ເມື່ອໃດຄັນວ່າສ້ຽງອາຍຸອັນເປັນນາກນັ້ນ ສົມປັດຕິ
ເຂົ້າຂອງ ຝູງນັ້ນກໍຫອນຍ່ອມ ກັບກາຍຫາຍເສັ້ຽສ້ຽງແລ ເຫດດັ່ງນັ້ນ ຂ້າຈຶ່ງວ່າແຫວນລູກ
ເກີດເມືອງນາກນັ້ນ ບໍ່ປະເສີດຫລາຍແລ ອັນວ່າແຜ່ນດິນນັ້ນ ເປັນທີ່ທະລົງເຂົ້າຂອງສົມປັດຕິ
ທັງມວນດາຍ ເຫດດັ່ງນັ້ນ ຂ້າຈຶ່ງວ່າລູກເກີດມາແຕ່ແຜ່ນດິນນັ້ນ ແອນປະເສີດກວ່າສອງລູກນັ້ນ
ເພື່ອອັນແລ ເມື່ອນັ້ນ ເທວະດາ ກໍພາຍເຂົ້າຕອກດອກໄມ້ທິບລົງມາບູຊາເຈົ້າກຸມມານ
ເພື່ອໃຫ້ເປັນສັກຂີ ແກ່ຄົນທັງຫລາຍແລ ເມື່ອນັ້ນ ພະຍາກໍໃຫ້ຫາມາຍັງຄົນໃຊ້ ພະຍາເມືອງ

ກ້ອນສາມມາແລ້ວ ເຈົ້າກຸມມານກໍກ່າວວ່າ ດູລາ ພີ່ຊາຍຄົນໃຊ້ ດັ່ງແຫວນທຳມະໂຮງສາມ
ລູກນີ້ ຮອຍວ່າມີເສນາ ຜູ້ໜຶ່ງ ມີພະຫຍາອັນຍິ່ງ ຈຶ່ງໃຊ້ມາສ່ຽງຕູທັງຫລາຍແລ ວ່າດັ່ງນີ້ ຜິ
ວ່າຍັງຮູ້ດັ່ງຕູນີ້ ຈັກບູຊາແລ ຜິວ່າບໍ່ຮູ້ຕູຈັກໄປຮົບເອົາເມືອງຊະແລ ວ່າສັນນັ້ນ ບັດນີ້ ເຮົາຈັກ
ແກ້ດູແລສວນດັ່ງແຫວນທຳມະໂຮງ ສາມລູກນີ້ ກໍເປັນຂອງອັນປະເສີດ ແກ່ທ້າວພະຍາ ຕົນເປັນ
ເຈົ້າບ້ານເຈົ້າເມືອງໃຫຍ່ທັງຫລາຍແລ ດ້ວຍແທ້ລູກອັນມາແຕ່ເຂົານາໂກໂຊຕະຄີລີນັ້ນຍັງແອນປະ
ເສີດກວ່າສອງລູກນັ້ນແລ ເມື່ອນັ້ນ ຄົນໃຊ້ຖາມວ່າ ດູລາເຈົ້າກຸມມານ ເຫດດັ່ງລືແລວ່າປະເສີດ

ຫໍໄຕ ວັດສີສະເກດ

ນັ້ນຈາ ຕູກໍຍັງໄຄ່ຮູ້ນໍາແລ ເຈົ້າກຸມມານກ່າວວ່າ ດູລາ ພີ່ຣາຊະທູດ ຜີທ່ານຍັງໄຄ່ຮູ້ແທ້ດັ່ງນັ້ນ ເຮົາກໍຈັກກ່າວໃຫ້ຮູ້ນໍາແລ ທ່ານທັງຫລາຍມາສ່ອງມາຖາມຫາຮູ້ນໍາຕູ ອັນວ່າເຂົາສີເນໂລຣາດນັ້ນ ກໍປາກົດແກ່ເຂົານ້ອຍທັງຫລາຍແທ້ແລ ຫາກເປັນທີ່ຮັກແກ່ຄົນແລະເທວະດາ ຣັດສີແລະສັດສີຕີນສອງຕີນ ກໍດີ ຕີວຫາຕີນບໍ່ໄດ້ກໍດີ ຄື ປາທັງຫລາຍນັ້ນ ກໍຫາກປະກົດແກ່ໂລກທັງມວນແລ ເຂົາຈັກເອົາມາເປັນບັນຫາສ່ອງຕູດັ່ງລືຈາ ສ່ວນເຂົາສຸວັນນະຄະຄີລີກໍດີ ກໍປະກອບດ້ວຍສົມປັດຕີແກ້ວແຫວນເງິນຄໍາ ກໍຫາກປະກົດແກ່ຄົນ ແລະເທວະດາທັງຫລາຍ ກໍຫາກຮູ້ທົ່ວໂລກນີ້ດາຍ ເລົ່າຈັກໃຫ້ເສີກເສີນຍ້ອງຍໍໃຫມ່ •ສິ່ງໃດນີ້ຈາ ອັນວ່າ ເຂົາມາໂກໂຊຕະຄີລີນີ້ ກໍຍັງມີທີ່ຊີ້ທີ່ຫອມແກ່ໂລກແລ ຫອນຍ່ອມໃຫ້ເປັນທີ່ເພິ່ງທີ່ອາໄສ ຫອນຍ່ອມກະທໍາໃຫ້ເປັນມຸງຄຸນ ແລະ ກູນາແກ່ສັດທັງຫລາຍ ອາໄສໄປຮອດໄປເຖິງທີ່ນັ້ນດາຍ ເມື່ອນັ້ນຄົນໃຊ້ກ່າວວ່າ ດູລາເຈົ້າມານະວະ ເປັນດັ່ງລື ແລະຈັກວ່າເປັນທີ່ເພິ່ງນັ້ນຈາ ຕູຂ້າກໍໄຄ່ຮູ້ນໍາແລ ກຸມມານກ່າວວ່າ ດູລາ ພີ່ຊາຍຣາຊະທູດ ຜີວ່າໄຄ່ຮູ້ນໍາແທ້ດັ່ງນັ້ນ ຂ້າຈັກກ່າວໃຫ້ຮູ້ນໍາແລ ວ່າດັ່ງນີ້ແລ້ວ ຈິ່ງກ່າວວ່າດັ່ງນີ້ ດັ່ງໄດ້ຍິນມານີ້ ອາຈານເຈົ້າທັງຫລາຍ ຝູງປະກອບໄປດ້ວຍປັນຍາຮູ້ແຈ້ງ ຈິ່ງກ່າວສືບໆມາວ່າ ຢ່າໄດ້ໃຫ້ມີຄໍາສົງໄສ ແກ່ຄົນຝູງບໍ່ສະຫລາດນັ້ນແລ ເມື່ອນັ້ນຍັງມີມານະວະຜູ້ຫນຶ່ງ ມັນເປັນຄົນທຸກໄຮ້ຂືນໃຈນັກຢູ່ໃນເມືອງພັດຊະນະນະຄອນ ຍັງມີໃນວັນຫນຶ່ງມັນກໍກີເອົາທະນູ ມັນໄດ້ແລ້ວ ກໍຕະເດີນໄປແອ່ວປ່າ ກໍຈິ່ງຫລົງປ່າໄດ້ເຈັດວັນ ບໍ່ຮູ້ທີ່ອັນຈັກຫນີມັນຫລົງໄປເຖິງເຂົາມາໂກໂຊຕະຄີລີທີ່ນັ້ນ ເສືອໂຄ່ງຈັກກິນມັນ ມັນກໍຂຶ້ນສູ່ຈອມຜາທີ່ຫນຶ່ງ ເສືອຕົວນັ້ນກໍເຝົ້າຢູ່ເພື່ອວ່າຈັກກິນທັ້ນແລ ມັນກໍກົວນັກຈິ່ງຮ້ອງໄຫ້ດ້ວຍສຽງອັນມາກ ເມື່ອນັ້ນເທວະດາອັນຢູ່ຮັກສາຕີນເຂົານັ້ນ ໄດ້ຍິນສຽງອັນຮ້ອງໄຫ້ ຈິ່ງລົງມາດ້ວຍຄໍາກູນາຈິ່ງຣະເສືອຫນີຈາກທີ່ນັ້ນແລ ເທວະດາລາງຜ່ອງກໍເອົາລູກໄມ້ມາໃຫ້ແກ່ມັນ ລາງຜ່ອງກໍເອົາເຂົ້າທິບມາໃຫ້ມັນກິນ ລາງຜ່ອງກໍເອົາອາດສະຫນາມາໃຫ້ມັນນອນກໍມີແລ ວັນລຸນຮຸ່ງເຊົ້າເທວະດາຈິ່ງເອົາມັນໄປສິ່ງໄວ້ໃນສວນອຸດທິຍານພະຍາເຫນືອຫີນສີລາບາດ ໃນເມືອງພັດຊະນະຄອນນັ້ນ ແລ້ວເທວະດາທັງຫລາຍກໍໃຫ້ແກ້ວເຈັດປະການແກ່ມັນ ແລ້ວຈິ່ງສັ່ງມັນວ່າດັ່ງນີ້ ດູລາມານະວະບຸກຄະລະຜູ້ໃດມາຖາມດ້ວຍຄໍາອັນໃດອັນຫນຶ່ງກໍດີ ທ່ານຈິ່ງວ່າ ອາມະດັ່ງນີ້ເທີ້ນ ຄໍາສະຫວັດດີ ກໍຈັກມີແກ່ທ່ານແລເທວະດາສັ່ງດັ່ງນີ້ແລ້ວ ກໍຫນີເມື່ອສູ່ທີ່ຢູ່ແຫ່ງຕົນກໍມີແລ ຍາມນັ້ນພະຍາຕົນເປັນເຈົ້າເມືອງພັດຊະນະຄອນຕາຍແລ້ວ ອາມາດທັງຫລາຍກໍສ່ອງບຸດສະຣົດຫາຜູ້ຈັກຄວນເປັນພະຍາແກ່ເຂົາ ເມື່ອນັ້ນ ເຂົາກໍຈາກັນວ່າ ບຸດສະຣົດນີ້ໄປຫາຜູ້ໃດ ເຮົາກໍຄວນຖາມມັນດູ ຜີວ່າມັນຂານຕອບຊອບຄອງເຮົາ ເຮົາກໍຄວນເອົາມັນມາເປັນພະຍາແກ່ເຮົາແລ ວ່າດັ່ງນີ້ແລ້ວ ເຂົາກໍປ່ອຍບຸດສະຣົດໄປທັ້ນແລ ບຸດສະຣົດອັນນັ້ນ ເຂົ້າໄປຮອງຫີນສີລາບາດທີ່ນັ້ນທັ້ນແລ ເຂົາກໍຖາມມານະວະ ຜູ້ນັ້ນວ່າ ດູລາ ເຈົ້າມານະວະ ທ່ານແລມາຢູ່ທີ່ນີ້ເຫດສັນໃດຈາວ່າດັ່ງນີ້ ເມື່ອນັ້ນມານະວະຂານຕອບວ່າ ອາມະ ອາມະ ດັ່ງນີ້ ຕາມຄວາມເທວະດາສັ່ງນັ້ນແລ ເມື່ອນັ້ນອາມາດກ່າວວ່າ ເຈົ້າຜູ້ນີ້ກໍຄວນເປັນທ້າວພະຍາແກ່ເຮົາທັງຫລາຍແທ້ແລ ວ່າດັ່ງນັ້ນ ເຂົາກໍນໍາເອົາເມືອມຸດທາພິເສກກັບດ້ວຍລູກສາວພະຍາ ຜູ້ຊື່ວ່າໂກຕິກຸມມາຣີນັ້ນ ໃຫ້ເປັນທ້າວພະຍາແກ່ເຂົາ ດ້ວຍອັນປະກອບໄປດ້ວຍ ຍັດສະສົມປັດຕິສະຫວັດສະດີ ອັນຮຸ່ງເຮືອງດ້ວຍເດດສົມພານໃນຣາຊະການບ້ານເມືອງແຫ່ງຕົນນັ້ນແລ ເມື່ອນັ້ນ ມານະວະຜູ້ນັ້ນໄດ້ເປັນພະຍາແລ້ວ ຈິ່ງຄະນຶງໃນໃຈວ່າຕູໄດ້

ເປັນພະຍາແກ່ເຂົານີ້ ກໍເຫດເທວະດາທັງຫລາຍແລ ວ່າດັ່ງນີ້ແລ້ວພະຍາຈຶ່ງໃຫ້ຄົນໄປຕັ້ງບ້ານອັນໜຶ່ງໃນຕີນເຂົາອັນນັ້ນ ເພື່ອວ່າໃຫ້ຮັກສາເທວະດາທັ້ນແລ ເມື່ອມັນໄດ້ເປັນພະຍາກໍເພື່ອເທວະດາກູນາຈຶ່ງໄດ້ເປັນພະຍາ ໃນເມືອງພັດຊະນະຄອນອັນກວ້າງໄດ້ສີ່ສິບສີ່ໂຍຊະນະກໍມີແລ ເຫດດັ່ງນັ້ນ ຂ້າຈຶ່ງຮູ້ວ່າປະເສີດ ເພື່ອດັ່ງນັ້ນແລ ເມື່ອນັ້ນ ເທວະດາໄດ້ຍິນຄຳຊອບຄະດີໂລກແລະຄະດີທຳດັ່ງນັ້ນ ຈຶ່ງພາຍເຂົ້າຕອກດອກໄມ້ທິບລົງມາບູຊາ ໃຫ້ປະກົດແກ່ຄົນທັງຫລາຍເປັນສັກຂີແລ ເມື່ອນັ້ນຄົນໃຊ້ພະຍາຕ່າງເມືອງເຂົາກໍເຫັນເປັນອັດສະຈັນນັກແລ້ວ ເຂົາກໍໄຫວ້ອຳລາພະຍາແລ້ວກໍໜີເມືອບອກຂ່າວແກ່ພະຍາແຫ່ງເຂົາຊູ່ເມືອງກໍມີແລ.

ເມື່ອນັ້ນ ສ່ວນດັ່ງພະຍາທັງສາມເມືອງນັ້ນ ໄດ້ຍິນແລ້ວກໍຍິນດີມາກນັກທັ້ນແລ ແລ້ວກໍໃຊ້ບັນນາການມາກວາຍມາກນັກເປັນຕົ້ນວ່າ ເງິນຄຳ ແລເມືອງແລພັນກະຫາປະນະຊູ່ເມືອງມາບູຊາເຫດວ່າ ຮູ້ຈັກຄຸນຜູ້ມີຜະຫຍາແລ ເມື່ອນັ້ນພະຍາກໍລວດໃຫ້ລູກຍິງຜູ້ຊື່ວ່າໂຊຕິກະກຸມມາຣີ ແກ່ເຈົ້າໂຊຕິກະມານະວະກູມມານນັ້ນແລ້ວ ລວດຕັ້ງໄວ້ໃນທີ່ອັນເປັນເສນາໃຫຍ່ ໃຫ້ພິຈາລະນາກ້ອຍຄຳທັງມວນທັ້ນແລ ແຕ່ນັ້ນໄປພາຍໜ້າບໍ່ນານເທົ່າໃດ ພະຍາຈັກໃກ້ຕາຍກໍໃຫ້ມຸດທາພິເສກ ເປັນພະຍາແທນຕົນແລ້ວ ຢູ່ບໍ່ນານເທົ່າໃດພະຍາກໍຈຸຕິຕາຍທັ້ນແລ ຄັນວ່າເຈົ້າກຸມມານເປັນພະຍາແລ້ວກໍສັ່ງສອນເສນາອາມາດນັກປາດທັງຫລາຍ ຝູງພິຈາລະນາກ້ອຍຄຳທັງຫລາຍວ່າດັ່ງນີ້ ດູລາ ເສນາແລະນັກແລະນັກປາດທັງຫລາຍຊາຕິຕັດກ້ອຍຄຳທັງຫລາຍຝູງໃດກໍ່ດີ ອາຈານເຈົ້າທັງຫລາຍສັ່ງສອນສືບໆມາວ່າ ດັ່ງນີ້ ເປັນຄວາມໃຫ້ເອົາຄວາມແກ້ ເປັນໂທດໃຫ້ເອົາໂທດແກ້ ທ່ານກາມເປດສະໜາ ໃຫ້ເອົາເປດສະໜາແກ້ເທີ້ນ ເປັນດັ່ງແທວນທຳມະໂຮງສາມລູກນີ້ ອັນທ້າວພະຍາຕ່າງເມືອງມາສ່ອງມາທວາຍເຮົານັ້ນ ສ່ວນດັ່ງລູກອັນມາແຕ່ນ້ຳສະໝຸດນັ້ນ ກໍເອົານ້ຳສະໝຸດເປັນສັກຂີແລ ສ່ວນລູກອັນມາແຕ່ເມືອງນາກ ກໍເອົານາກເປັນສັກຂີແລ ລູກມາແຕ່ເຂົາສີເນໂນຣາດກໍເອົາເຂົາສີເນໂນຣາດນັ້ນເປັນສັກຂີແລ ອັນປະກົດມາກ່າວຊີ້ບອກແລ ອັນນີ້ກໍຫາກເປັນອະທິບາຍກ້ອຍຄຳ ແຫ່ງນັກປາດທັງຫລາຍແລ.

ເມື່ອກຸມມານ ເປັນພະຍາແລ້ວດັ່ງນັ້ນ ກໍລືຊາປະກົດໄປທົ່ວປະເທດ ເຂດບ້ານເມືອງທັງຫລາຍຊູ່ແຫ່ງແລ ເມື່ອນັ້ນທ້າວພະຍາທັງຫລາຍກໍແຕ່ງບັນນະການຂອງຝາກສືບຄອງໄມຕີ ປະເວນີມາຈິໄຈ້ວບໍ່ຂາດແລ ແຕ່ນັ້ນເມື່ອໜ້າເສນາອາມາດທັງຫລາຍ ກໍພິຈາລະນາກ້ອຍຄຳຕາງຫູຕາງຕາພະຍາເຈົ້າດ້ວຍອັນຊອບປະກອບໄປຕາມທຳຊູ່ປະການ ບ້ານເມືອງກໍວຸດທິສະຫວັດສະດີມາກນັກແລ.

ແຕ່ນີ້ໄປພາຍໜ້າຈັກກ່າວ ໄຕ່ກ້ອຍສວນຄວາມກ່ອນແລ ໃນກາລະນັ້ນ ຍັງມີຊາຍສອງຄົນຢູ່ບ້ານທີ່ໜຶ່ງ ຂາກໍຢູ່ບ້ານໃຕ້ເໜືອກັນແລ ຜູ້ໜຶ່ງກໍປູກໝາກມ່ວງຕົ້ນໜຶ່ງ ງ່າໜຶ່ງ ກໍຕາກໄປໃນບ້ານຜູ້ໜຶ່ງທັ້ນແລ, ສອງງ່ານັ້ນກໍຢູ່ໃນສວນແຫ່ງມັນທັ້ນແລ ເມື່ອໝາກຫຼົ່ນຕົກລົງໃນບ້ານຜູ້ນັ້ນ ເຈົ້າໝາກມ່ວງກໍໄປເກັບເອົາມາຂາຍທຸກວັນ ແຕ່ລະວັນນັ້ນ ໄດ້ໝື່ນເບ້ຍແລ ງ່າໄມ້

ຕົກສວນເພິ່ນນັ້ນ ມັນກໍ່ໄປເກັບເອົາທຸກວັນແລ ທີ່ນັ້ນ ຍັງມີໃນວັນຫນຶ່ງ ເຈົ້າສ່ວນກໍລັກເກັບເອົາຫມາກມ່ວງອັນຫລົ່ນຕົກໃນສວນມັນນັ້ນໄດ້ບຸງຫນຶ່ງແລ ພາຍລູນເຈົ້າຫມາກມ່ວງຈຶ່ງໄປເກັບບໍ່ໄດ້ ກໍຮູ້ວ່າ ເຈົ້າສວນລຶງລັກເກັບເອົາກ່ອນໄດ້ບຸງຫນຶ່ງ ດັ່ງນັ້ນ ເຈົ້າຫມາກມ່ວງບໍ່ຍອມຈຶ່ງໄປຫາເສນາຕັດ ເສນາຈຶ່ງຕັດວ່າ ມຶງລັກເອົາຫມາກມ່ວງເພິ່ນບຸງຫນຶ່ງໃຫ້ໃຊ້ສອງບຸງຄືນແລ ວ່າດັ່ງນັ້ນ ເຈົ້າຫມາກມ່ວງບຸງນັ້ນ ມັນບໍ່ເຂົ້າໃຈ ຈຶ່ງພາໄປໄຫວ້ພະຍາ ກ່າວກົດຈະທັງມວນໃຫ້ຮູ້ແຈ້ງຊູ່ປະການ ພະຍາຈຶ່ງຖາມເຈົ້າຫມາກມ່ວງວ່າ ຍາມເມື່ອເຈົ້າບ້ານບໍ່ລັກນັ້ນມຶງໄປເກັບກີ່ເທື່ອ ເອົາໄປຂາຍກີ່ເທື່ອຈາ ເຈົ້າຫມາກມ່ວງຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າແຕ່ຂ້າເກັບເອົາມາຂາຍໄດ້ຫມື່ນເບ້ຍແລ ທີ່ນີ້ມັນກໍລັກເກັບເອົາກ່ອນຂ້າແລ ພະຍາຈຶ່ງກ່າວເຫັດອັນຜິດນັ້ນໃຫ້ປະກົດແກ່ຄົນທັງຫລາຍວ່າ ກໍຫາກແມ່ນຫມາກມ່ວງມັນປູກແທ້ແລດ້ວຍແທ້ຫມາກມ່ວງຫລົ່ນຕົກລົງໃນບ້ານທ່ານດາຍ ມັນໄປເອົາຂາຍໄດ້ຫມື່ນເບ້ຍຫນຶ່ງດາຍ ໃຫ້ມັນໃຊ້ແກ່ເຈົ້າບ້ານສອງທີ່ ເປັນສອງຫມື່ນເບ້ຍແລ ສ່ວນວ່າຜູ້ເຈົ້າບ້ານນັ້ນ ມັນໄປເກັບກໍ່ບໍ່ຜິດສັງດາຍ ທີ່ວ່າມັນເອົາກິນບໍ່ຊ່າງ ພອຍມາລັກເສັຍ ຜິດເສັຍຫນ້ອຍຫນຶ່ງແລ ຈຶ່ງໃຫ້ມັນໃຊ້ແກ່ເຈົ້າຫມາກມ່ວງພັນເບ້ຍຫນຶ່ງແລ ຜີບໍ່ຕີມັນສັ້ນນີ້ ມັນຕາຍກໍຈັກໄດ້ເປັນເຜດ ເພາະວ່າບໍ່ຊ່າງນັ້ນແລ ຂອງມັນຫາກເປັນໂທດແກ່ມັນແລ ເຫດວ່າບໍ່ແມ່ນອັນຈັກລັກແລ ຜີວ່າມັນລັກແທ້ຈັກໄດ້ໃຊ້ເກົ້າທີ່ແລ ອັນເຈົ້າຫມາກມ່ວງໄດ້ໃຊ້ສອງທີ່ນັ້ນກໍບໍ່ກືກອັນລັກແທ້ດັ່ງນັ້ນ ກໍຈັກໄດ້ໃຊ້ເກົ້າທີ່ແລ ຜີວ່າບໍ່ໃຫ້ມັນໃຊ້ດັ່ງນັ້ນ ມັນຕາຍກໍ່ຈັກໄດ້ເປັນເຜດແລ ເມື່ອນັ້ນພະຍາຈັກກ່າວເຫດ ອັນນັ້ນແກ່ຄົນທັງຫລາຍບໍ່ໃຫ້ສົງກາວ່າ ກໍຫາກແມ່ນຂອງມັນແທ້ແລຈັກໃຫ້ມັນເສັຍສັງຈາ ວ່າສັ້ນນັ້ນ ພະຍາຈຶ່ງກ່າວວ່າ ດູລາເສນາທັງຫລາຍ ຂອງອັນໃດອັນຫນຶ່ງກໍດີ ຄືວ່າຊ້າງ ມ້າ ງົວຄວາຍຂ້າຄົນ ຜູ້ໃດຜູ້ຫນຶ່ງ ລັກຫນີໄປຕົກປະເທດເຂດບ້ານເມືອງເພິ່ນທີ່ອື່ນ ດັ່ງນັ້ນ ເຈົ້າຂອງຫາກໄປເອົາຫນີເປົ່າດາຍນັ້ນ ບໍ່ໄດ້ດາຍ ກໍຍັງມີຂອງໄກ່ເອົາຈຶ່ງໄດ້ດາຍ ແມ່ນວ່າຈັກໄປລັກເອົາຫນີທ່ານຈັກໄຫມເອົາໄດ້ແລ ອັນນັ້ນແລະມີດ້ວຍປະການສັນໃດ ເຫດອັນນີ້ ກໍເປັນດັ່ງນັ້ນແລ ເຈົ້າບ້ານໄປເກັບເອົາ ກາຍເຂດບ້ານມັນກໍຜິດແລ ພະຍາຕັດຄຳສັນນີ້ຊອບແລ ກ່າວຫມາກມ່ວງແລ້ວເທົ່ານີ້ກ່ອນແລ.

ເມື່ອນັ້ນ ພະຍາຕ່າງເມືອງຮູ້ຂ່າວຄຳພະຍາຕົນນັ້ນ ປະກອບຊອບທຳດັ່ງນັ້ນ ກໍຍິນດີມາກນັກ ຈຶ່ງແຕ່ງໃຫ້ພໍ່ຄ້າສະເພົາທັງຫລາຍໄປຄ້າໃນເມືອງນັ້ນມາກນັກແລ ເມື່ອກ່ອນບໍ່ທ່ອນໄປທໍ່ເວັ້ນໄວ້ແຕ່ສະເພົາຫາກຫລິງໄປນັ້ນແລ ແຕ່ພະຍາຕົນນີ້ ກໍຮຸ່ງເຮືອງດ້ວຍພະຫຍາມາກນັກແລ ຍັງມີພະຍາຕົນຫນຶ່ງຢູ່ໃນເມືອງຊື່ວ່າໂກຣັມພະນະຄອນ ກໍຮູ້ຂ່າວສານ ກໍຍິນດີມາກນັກ ຈຶ່ງແຕ່ງສະເພົາຫ້າຮ້ອຍເຫລັ້ມໃຫ້ມາຊູ່ປີແລ ເມື່ອນັ້ນພະຍາໄດ້ຕັ້ງໄວ້ຍັງອາມາດຜູ້ຫນຶ່ງ ໃຫ້ເກັບທ່າສະເພົາທັງຫລາຍທຸກປີແລ ເມື່ອອາມາດຜູ້ນັ້ນ ຕາຍແລ້ວ ພະຍາເລົ່າພັດຕັ້ງໄວ້ ຍັງອາມາດຜູ້ຫນຶ່ງໃຫ້ແທນໄວ້ ຊື່ວ່າເວຫາຣະພາມ ໃຫ້ເກັບທ່າສະເພົາທັງຫລາຍ ເມື່ອນັ້ນ ເວຫາຣະພາມຜູ້ນັ້ນມັນເກັບເອົາຜ້າພໍ່ຄ້າສະເພົາທັງຫລາຍ ເຫລືອຮີດເຫລືອຄອງບໍ່ເກັບຕາມດັ່ງເມື່ອກ່ອນນັ້ນແລ ເມື່ອອາມາດຜູ້ກ່ອນເກັບທ່າສະເພົານັ້ນກໍທໍ່ຕີເປັນຄ່າວັດຖຸໃນເມືອງນີ້ແລ ເມື່ອເວຫາຣະພາມນີ້

ເກັບມັນຕີເອົາອັດກຸ ພໍ່ຄ້າຊື້ມາແຕ່ເມືອງເຂົ້າພຸ້ນມາວ່າແລ ເມື່ອນັ້ນພໍ່ຄ້າທັງຫລາຍກໍຄະນະນາດູຄ່າຜ້າເຂົາແລ ເບື້ອງນັ້ນຂາດທຶນກະທາປະນະພັນຫນຶ່ງແລ ພໍ່ຄ້າທັງຫລາຍກໍກ່າວເຫດອັນນັ້ນແກ່ພະຍາເຈົ້າແຫ່ງເຂົາ ໃນເມື່ອຮອດຈອດເຖິງບ້ານເມືອງແຫ່ງຕົນວ່າ ບ້ານເມືອງເພິ່ນ ພະຍາເຈົ້າກໍດີດາຍທໍ່ຫາກຮ້າຍແຕ່ຜູ້ຮ້າຍ ເອົາຕາມໃຈມັກ ແຕ່ນັ້ນ ພໍ່ຄ້າສະເພົາກໍພັກຢູ່ບໍ່ໄປຄ້າເປັນກາລະອັນມິນນານ.

ເມື່ອນັ້ນ ຍັງມີໃນກາລະຄາບຫນຶ່ງພະຍາໂກລຳພະນະຄອນ ກໍແຕ່ງພໍ່ຄ້າສະເພົາຫ້າຮ້ອຍເຫລັ້ມໃຫ້ໄປເລົ່າຫັ້ນແລ ຄັນວ່າເຂົາໄປຮອດແລ້ວ ກໍແຕ່ງບັນນະການຂອງຝາກເມືອໄຫວ້ພະຍາຕາມຄຳພະຍາເຈົ້າແຫ່ງເຂົາສັ່ງຊູ່ອັນແລ ພະຍາຈິ່ງກ່າວວ່າ ແຕ່ກ່ອນພໍ່ຄ້າທັງຫລາຍກໍຍັງຫມັ່ນມາຄ້າຮອດເມືອງເຮົາບໍ່ຂາດສາຍນາ ທີ່ນີ້ກໍມາເຖິງເມືອງເຮົາດູນານມັກນໍ ວ່າດັ່ງນີ້ ພໍ່ຄ້າທັງຫລາຍ ຈິ່ງກ່າວເຫດອັນນາຍເກັບທ່າສະເພົາ ດ້ວຍອຸບາຍວ່າດັ່ງນີ້ ຂ້າແກ່ມະຫາຣາຊະເຈົ້າ ເມື່ອກ່ອນຝູງຂ້າທັງຫລາຍກໍຍັງພອນມາຄ້າຂາຍໃນເມືອງມະຫາຣາຊະເຈົ້າແທ້ແລ ເມື່ອກ່ອນນັ້ນເມືອງມະຫາຣາຊະເຈົ້າກໍຍັງຫນຸ່ມດາຍ ບັດນີ້ ບ້ານເມືອງມະຫາຣາຊະເຈົ້າພອຍເປ່ເພເກົ້າຄ່ຳເສື້ອ ພໍ່ຄ້າທັງຫລາຍຈິ່ງບໍ່ມາເພື່ອອັນແລ ເມື່ອນັ້ນ ພະຍາກໍຖາມຫາເຫດອັນນັ້ນວ່າ ດູລາພໍ່ຄ້າທັງຫລາຍເຫດດັ່ງລືສູມາວ່າ ເມືອງເຮົາເກົ້າແກ່ຄ່ຳເສື້ອນັ້ນຈາ ເມື່ອນັ້ນພໍ່ຄ້າທັງຫລາຍຈິ່ງກ່າວເຫດອັນເວຫາຣະພາມ ຕີເອົາຄ່າຜ້າແຕ່ເຂົາຊື້ແຕ່ເມືອງເຂົາພຸ້ນມາໃຫ້ພະຍາຮູ້ຊູ່ອັນແລ ພະຍາຈິ່ງພິຈາລະນາດູແຈ້ງແລ້ວ ພະຍາກໍໃຫ້ຊຸມນຸມມາຍັງເສນາອາມາດທັງຫລາຍມາໂຮມໃນໂຮງທີ່ພິຈາລະນາວ່າ ດັ່ງນີ້ ຊາຕິທ້າວພະຍາທັງຫລາຍອັນເປັນທຳມະດາ ແຕ່ກ່ອນວ່າຕົກເມືອງໃດໃຫ້ເອົາຮີດເມືອງນັ້ນແຕ່ງດາຍ ຕົກເມືອງຫນຶ່ງເອົາຮີດເມືອງຫນຶ່ງມາແຕ່ງນັ້ນບໍ່ຊອບທຳມະດາຈາຮີດດາຍ ຄ່າອັດກຸເມືອງຫນຶ່ງພອຍເລົ່າມາຕີຄ່າເປັນກັບເມືອງຫນຶ່ງບໍ່ຊອບແລ ມັນນີ້ບໍ່ຊອບທຳມະດາແລ ມັນແກ້ງຈະໃຫ້ບ້ານເມືອງເຮົາຈິບຫາຍແທ້ແລ ພະຍາຈິ່ງໃຫ້ມັນໄປໃຊ້ຂອງພໍ່ຄ້າອັນມາເອົາເຫຼືອບູຮານນັ້ນສອງທໍ່ແລ້ວ ຈິ່ງໃຫ້ອາມາດເຫຄືອມັນຕຶງສ້ຽງແລ້ວກໍຂັບມັນຫນີຈາກເມືອງຫັ້ນແລ ພາຍລຸນມາຈິ່ງກ່າວເຫດອັນເວຫາຣະພາມ ກະທຳຜິດຮີດບູຮານນັ້ນ ໃຫ້ແກ່ເສນາອາມາດທັງຫລາຍວ່າດັ່ງນີ້ ດູລາເສນາອາມາດທັງຫລາຍ ຈິ່ງກຸ່ເອົາໄວ້ຊູ່ຄົນເທີ້ນ ອັນວ່າເຫຄືອເວຫາຣະພາມນີ້ ກໍເຫດວ່າເກັບເອົາຜ້າທ່າສະເພົາດ້ວຍອັນບໍ່ຊອບທຳມະດາ ຄືວ່າພໍ່ຄ້າທັງຫລາຍຊື້ຜ້າໃນເມືອງໂກລຳພະນະຄອນພຸ້ນແລ ມັດຜ້າກໍຄ່າພັນຄຳແລ ຜີວ່າມາຂາຍເມືອງເຮົາໄດ້ຫມື່ນແລ ແລະ ຜ້າແລຮຳກໍຄ່າຮ້ອຍຄຳ ຜີມາຂາຍເມືອງເຮົາໄດ້ພັນຄຳແລ ເວຫາຣະພາມນີ້ມັນບໍ່ເກັບຕາມບູຮານແຕ່ກ່ອນ ບັດນີ້ມັນກໍເອົາຜ້າກໍຄ່າພັນຄຳແລ ຜ້າແລຮຳກຶກຄ່າຮ້ອຍຄຳແລ ມັນກໍເອົາດັ່ງນີ້ ຜິດຮີດເມື່ອກ່ອນ ເຫດດັ່ງນັ້ນພໍ່ຄ້າທັງຫລາຍເຂົາບໍ່ມາໄດ້ສາມປີນີ້ເຂົາຈິ່ງມາປີນີ້ແລ ເຫດວ່າເຂົາບໍ່ໄດ້ກິນບໍ່ມາເພື່ອອັນແລມັນຫາກກະທຳຜິດສັນນີ້ຈິ່ງໄດ້ເຫຄືອມັນແລ ແຕ່ນີ້ເມື່ອຫນ້າອັນໃດແລ ເປັນທຳມະດາ ຈິ່ງກະທຳເທີ້ນອັນໃດບໍ່ເປັນທຳມະດາຢ່າກະທຳເທີ້ນ ຜູ້ໃດແລກະທຳສັນນີ້ບໍ່ດີແທ້ແລ ຈັກເປັນດັ່ງເວຫາຣະພາມນັ້ນແລ ສວນດັ່ງເວຫາຣະພາມຜູ້ນັ້ນ ອັນພະຍາຂັບຫນີມັນກໍເອົາລູກແລະເມັຍຂີ່ສະເພົາ

ໄປກັບດ້ວຍພໍ່ຄ້າທັງຫລາຍ ຝູງອື່ນໄປນານເຈັດວັນ ສະເພົາບໍ່ໄປເຂົາທອດສາກດູກໍໄດ້ເອຫາຣະພາມນັ້ນ ຜີເສື້ອນໍ້າຈັກກິນມັນວ່າສັນນັ້ນ ເຂົາກໍເອົາມັນທອດລົງ ຜີເສື້ອນໍ້າກິນມັນເສັຍແລ ເຫດວ່າມັນບໍ່ຊອບທໍາມະດາແລ ກ່າວເອຫາຣະພາມເກັບທ່າສະເພົາແລ້ວ ເທົ່ານີ້ແລ.

ບັດນີ້ ຍັງມີນາຍສະເພົາຜູ້ໜຶ່ງ ຊື່ວ່າ ກຸຣຸນະພາມ ຜິດກັບພະຍາໂກລໍາພະນະຄອນ ມັນກໍໜີມາຢູ່ເມືອງພາຫະຣະນະຄອນທີ່ນັ້ນນານນັກແລ ໃນເມື່ອພໍ່ຄ້າທັງຫລາຍມາຄ້າໃນເມືອງພາຫະຣະນະຄອນ ມັນກໍເຫັນນາຍສະເພົາຜູ້ລັກແກ່ນຈັນແດງມັນມີນໍ້າໜັກໝື່ນໜຶ່ງ ແຕ່ເມື່ອຢູ່ເມືອງໂກຣັມພະນະຄອນພຸ້ນແລ ມັນບໍ່ຍອມຈຶ່ງພາໄປຫາເສນາໄຕ່ແລ ເສນາທັງຫລາຍກໍ່ຮູ້ເຫດອັນນັ້ນແຈ້ງແລ້ວ ມັນກໍຂານວ່າ ມັນລັກແທ້ ເສນາຈຶ່ງພາຂາເມືອໄຫວ້ພະຍາກ່າວເຫດທັງມວນແລ້ວ ພະຍາຈຶ່ງຖາມວ່າແກ່ນຈັນແດງໃນເມືອງໂກລໍາພະນະຄອນພຸ້ນ ຈັກມີຄ່າທໍ່ໃດຈາ ຂາທັງສອງຄົນຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຜີວ່າຂາຍໃນເມືອງໂກລໍາພະນະຄອນພຸ້ນ ໝື່ນແກ່ນຈັນແດງ ກໍຄ່າພັນຄໍາແລ ພະຍາຖາມວ່າ ມາຂາຍໃນເມືອງເຮົາພີ້ ເປັນຄ່າທໍ່ໃດຈາ ຂາທັງສອງຂານວ່າ ຂາຍໃນເມືອງມະຫາຣາຊະເຈົ້າພີ້ ໝື່ນແກ່ນຈັນແດງມີຄ່າໝື່ນຄໍາ ພະຍາໄດ້ຍິນແລ້ວ ຈຶ່ງຕັດວ່າໃຫ້ນາຍສະເພົາຜູ້ລັກນັ້ນໃຊ້ສອງທໍ່ໝື່ນຄໍາແລ ຕັດຄໍາສັນນີ້ຊື່ວ່າ ສຸຄະຕິແລ ພະຍາກ່າວເຫດອັນລັກນັ້ນແກ່ເສນາທັງຫລາຍວ່າດັ່ງນີ້ ແມ່ນລັກກິນກໍດີ ກູ້ຂອງກໍດີ ກໍເພິ່ງຕັດຕາມຕົວອັນກີກອັນແພງນັ້ນແລ ຕ່າງເມືອງກໍດີເມືອງດຽວກໍດີ ກໍສັນດຽວນີ້ແລ ຕັດຄໍາສັນນີ້ ສຸຄະຕິແລ.

ທີ່ນີ້ຍັງມີພໍ່ນາສອງຄົນຜິດກັນດ້ວຍງົວກິນເຂົ້າ ກໍຈຶ່ງພາກັນໄປໃຫ້ເສນາໄຕ່ ເສນາຮູ້ແຈ້ງແລ້ວຈຶ່ງພາກັນໄປໄຫວ້ພະຍາຫັ້ນແລ ພະຍາກໍຖາມເຂົາວ່າ ຍາມເມື່ອງົວກິນເຂົ້າປານໃດຈາ ເຈົ້າງົວຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າຍາມເມື່ອງົວກິນເຂົ້ານັ້ນ ເຂົ້າປູກຍັງພົງງາມ ພະຍາຕັດວ່າໃຫ້ເຈົ້າງົວໃຊ້ທໍ່ໜຶ່ງແລ ຊໍ້າແທນຮອຍຕີນງົວອັນໄດ້ຢໍ່າເສັຍນັ້ນເທີ້ນ ເຫດວ່າຜູ້ລັອງບໍ່ຮູ້ ຜີວ່າຜູ້ລັອງຮູ້ໄດ້ໃຊ້ສອງທໍ່ແລ ເຫດວ່າເຂົ້າຍັງໜຸ່ມມັນຫາກຈັກປົ່ງມາໃໝ່ ຢ່າວ່າສັງແກ່ກັນເທີ້ນ ຕັດຄໍາສັນນີ້ເປັນສຸຄະຕິຄະມະນະແລ. ພະຍາຈຶ່ງສອນເສນາຝູງພິຈາລະນາກ້ອຍຄໍາ ດັ່ງນີ້ຜີວ່າງົວຄວາຍກິນເຂົ້າໄຮ່ນາກໍດີ ໃຫ້ພິຈາລະດູໃຫ້ຮູ້ແຈ້ງແລ້ວຈຶ່ງຕັດເທີ້ນ ຜີວ່າກິນເຂົ້າເມື່ອຍັງໜຸ່ມນັ້ນ ຜີວ່າງົວຄວາຍລັອງໃຫ້ໃຊ້ທໍ່ໜຶ່ງແລ ແທນຮອຍຕີນອັນຢໍ່າເສຍນັ້ນແລ ໃຫ້ນັບກໍເຂົ້າດູມີທໍ່ໃດກໍດີໃຫ້ທີຄ່າສີ່ເບັ້ຍຊອບແລ ເຫດວ່າມັນຈັກອອກມາແລ ຜີວ່າເຈົ້າງົວຄວາຍບໍ່ລັອງງົວໃຫ້ໃຊ້ສອງທໍ່ເທີ້ນ ຄວນແລ ຜີກິນຍາມເຂົ້າທ້ອງນັ້ນໃຫ້ໃຊ້ສາມທໍ່ ໃຫ້ທີກໍເຂົ້າແລ ຄ່າຮ້ອຍເບັ້ຍ ຜີວ່າກິນຍາມເມື່ອເຂົ້າມັນນັ້ນ ຜີຂ້ອຍລັອງໃຫ້ໃຊ້ສາມທໍ່ແລ ເຈົ້າລັອງໃຫ້ໃຊ້ສີ່ທໍ່ແລ ທີຄ່າ ສອງຮ້ອຍເບັ້ຍແລ ເມື່ອເຂົ້າເປັນຮວງຈັກພໍກ່ຽວ ຜີວ່າຂ້ອຍລັອງໃຫ້ໃຊ້ສີ່ທໍ່ ຜີວ່າເຈົ້າລັອງໃຫ້ໃຊ້ຫ້າທໍ່ໃຫ້ທີກໍເຂົ້າ ແລະກໍຫ້າຮ້ອຍເບັ້ຍ, ອັນນີ້ຊາວເມືອງລັງກາ ອາຈານຜູ້ຊື່ວ່າອັນທິພາມຜູ້ພິຈາລະນາຄໍາຕາງພະຍາລັງກາຫາກຕັ້ງໄວ້ໃຫ້ເປັນອັນໜັກ ມັກວ່າຢ່າໄທ້ຄົນທັງຫລາຍເຮັດງ່າຍແກ່ແລ ເຫດວ່າເຂົ້ານີ້ ຫາກເປັນຂອງລ້ຽງຊີວິດ ຄົນທັງຫລາຍແລ ຄັນວ່າ

ເຂົ້າບໍ່ມີໃນບ້ານເມືອງໃດ ບ້ານເມືອງອັນນັ້ນກໍຈິບຫາຍແລ ເຫດດັ່ງນັ້ນ ຈຶ່ງຕັ້ງໄວ້ເປັນໜັກເພື່ອດັ່ງນັ້ນແລ ໄນຍະໜຶ່ງ ອາຈານເຈົ້າຄົນນັ້ນກ່າວໄວ້ແກ່ຄົນທັງຫລາຍວ່າ ເສນາອາມາດທັງຫລາຍຝູງອາດທະລົງ ໃຫ້ພິຈາລະນາດູຕາມກາລະອັນນັ້ນເທີ້ນ ມັກວ່າ ເຈົ້າເຂົ້າເປັນດີເຈົ້າງົວທຸກໄຮ້ ກໍໄດ້ແຕ່ງຕາມອັນທຸກໄຮ້ ເຫດວ່າເຈົ້າຂຸນມູນນາຍທັງຫລາຍຫາກເປັນທີ່ເພິ່ງແຫ່ງໄພ່ນ້ອຍທັງຫລາຍແລ.

ທີ່ນີ້ ຍັງມີພໍ່ນາສອງຄົນຫາບກ້າໄປນາແຫ່ງຕົນ ຂາກໍໄປເກີ້ງກາງຂົວ ຂາກໍເລົ່າຊູນຕໍາກັນ ຫາບກ້າຂາກໍຕົກໄປເສັຍທັງສອງຫາບ ຂາບໍ່ຍອມກັນຈຶ່ງພາກັນໄປຫາເສນາໄຕ່ ເສນາກ່າວວ່າ ກ້າເຂືອກໍໄຫລເສັຍທັງສອງ ເຂືອຢ່າວ່າໃຫ້ແກ່ກັນເທີ້ນ ຂາບໍ່ຟັງຈຶ່ງພາກັນໄປໄຫວ້ພະຍາ ກ່າວກິດຈະທັງມວນແກ່ພະຍາຊູ່ອັນນັ້ນແລ ພະຍາຈຶ່ງຖາມວ່າ ກ້າເຂືອຜູ້ໃດມີຊື່ດັ່ງລືຈາ ຜູ້ໜຶ່ງຂານວ່າ ກ້າແຫ່ງຂ້າເຂົ້າປີດາຍ ຜູ້ໜຶ່ງຂານວ່າ ກ້າແຫ່ງຂ້າເຂົ້າດໍດາຍ ວ່າດັ່ງນີ້ແລ້ວ ພະຍາຕັດວ່າກ້າເຂົ້າປີ ໃຊ້ຜູ້ກ້າເຂົ້າດໍຂອນໜຶ່ງ ດັ່ງຂອນໜຶ່ງນັ້ນ ຫາກເສັຍດ້ວຍເຖາະມຶງແລ ເຫດວ່າກ້າມັນຜູ້ນີ້ ເຂົ້າປີຍັງນານດາຍໃຫ້ແມ່ນແທ້ໃຫ້ຫລີກຜູ້ກ້າເຂົ້າດໍດາຍມັນຟ້າວ ແລະ ມັນບໍ່ຫລີກຈຶ່ງໃຫ້ມັນໃຊ້ເພື່ອດັ່ງນັ້ນແລ ຕັດຄໍາສັນນີ້ ໃຫ້ພິຈາລະນາດູອັນຊ້າອັນພະລັນເທີ້ນ ເປັນສຸຄະຕິແລ.

ທີ່ນີ້ ຍັງມີຊາຍໂກງສອງຄົນໄປແອ່ວຫລີ້ນ ຜູ້ໜຶ່ງພໍ່ມັນຕາຍ ຜູ້ໜຶ່ງໄຟໄໝ້ເຮືອນ ຊູ່ຄົນຊູ່ມາຟ້າວຮີບ ຂາກໍກີບຊູນກັນຕົກຂົວທີ່ນັ້ນ ຂາບໍ່ຍອມຈຶ່ງພາກັນໄປໄຫວ້ເສນາໃຫ້ເສນາຕັດໄຕ່ ເສນາກ່າວວ່າ ຜູ້ໜຶ່ງພໍ່ຕາຍ ຜູ້ໜຶ່ງໄຟໄໝ້ເຮືອນ ຢ່າວ່າສັງແກ່ກັນເທີ້ນ ວ່າດັ່ງນັ້ນ ຂາບໍ່ຍອມຈຶ່ງໄປໄຫວ້ພະຍາ ກ່າວກິດຈະທັງມວນໃຫ້ພະຍາແຈ້ງແລ້ວ ພະຍາຈຶ່ງຖາມຝູງນັກປາດທັງຫລາຍວ່າ ສ່ວນຜູ້ໄຟໄໝ້ເຮືອນມັນນັ້ນ ມັນໄປທັນມັນຈັກກະທໍາດັ່ງລືຈາ ນັກປາດທັງຫລາຍຂານວ່າ ຂ້າແກ່ມະຫາຣາຊະເຈົ້າຊາຕິໄຟໄໝ້ເຮືອນນີ້ ຄັນວ່າເຈົ້າເຮືອນໄປທັນຫອູນຍ່ອມມອດເສັຍແລ ຜີວ່າມອດບໍ່ໄດ້ກໍເອົາຂອງໜີແລ ພະຍາຈຶ່ງຖາມວ່າດັ່ງນີ້ ດັ່ງຜູ້ພໍ່ຕາຍນັ້ນມັນໄປທັນ ມັນຈັກກະທໍາດັ່ງລືຈາ ນັກປາດທັງຫລາຍກ່າວວ່າ ຊາຕິອັນຕາຍໃນໂລກນີ້ ແມ່ນວ່າພີ່ນ້ອງເຜົ່າພົງວົງສານາທັນເທົ່າໃດກໍດີແລ ຈັກມາປຸກລຸກເປັນຄົນດີດັ່ງເກົ່າກໍບໍ່ໄດ້ແລ ເມື່ອນັ້ນ ພະຍາໃຫ້ຜູ້ພໍ່ຕາຍນັ້ນໃຊ້ຂອງຜູ້ໄຟໄໝ້ເຮືອນນັ້ນ ໃຫ້ນັບອ່ານດູເຂົ້າຂອງອັນໄຟໄໝ້ນັ້ນ ມີເທົ່າໃດໃຫ້ປູນເປັນສາມສ່ວນແລ້ວໃຫ້ມັນໃຊ້ສ່ວນໜຶ່ງແລ ເຫດວ່າໃພບໍ່ໄດ້ຈໍາໃຫ້ໄຟໄໝ້ ບໍ່ຮູ້ຮໍາເພິງຫາກໄໝ້ດາຍ ຈຶ່ງໃຫ້ມັນໃຊ້ທໍ່ໜຶ່ງເພື່ອອັນແລ ພໍຢ່າໃຫ້ຂາມີເວນກໍາແກ່ກັນແລ ຕັດຄໍາສັນນີ້ເອົາເຫດຕັດ ສຸຄະຕິແລ.

ທີ່ນີ້ ຍັງມີມານະວະສອງຄົນຊິງເອົາເຮືອນກັນເປັນປະກົມທົວທີດັ່ງນີ້ : ຍັງມີມານະວະຜູ້ໜຶ່ງຫອວທາງມາຂໍແອ່ເຮືອນຜູ້ໜຶ່ງ ມານະວະຜູ້ເຈົ້າເຮືອນນັ້ນລວດຣອູກເປັນສະຫາຍກັນທັ້ນແລ ຢູ່ບໍ່ນານເທົ່າໃດເຈົ້າເຮືອນໄຕ່ໄປຄ້າ ຈຶ່ງຝາກເຮືອນໄວ້ແກ່ມັນຜູ້ມາແອ່ນັ້ນ ດັ່ງຜູ້ມາແອ່

ເຮືອນນັ້ນ ມັນກໍໄຄ່ໄດ້ເຮືອນສະຫາຍຜູ້ໄປຄ້ານັ້ນເປົ່າດາຍແລ ມັນຈຶ່ງແທກຂື່ແທກແປ ແລະເຄື່ອງທັງມວນໝາຍໝັ້ນຂອບໜັງສືໄວ້ຊູ່ອັນແລ ເຈົ້າເຮືອນມັນໄປຄ້າຄືນມາຮອດແລ້ວ ມັນຈຶ່ງຂຶ້ນສູ່ເຮືອນມັນດັ່ງເກົ່າທັ້ນແລ ເມື່ອນັ້ນມານະວະຜູ້ມາແວ່ເຮືອນນັ້ນ ມັນກະທຳຕື່ນຕື່ນດ້ວຍຄຳການວ່າ ດູລາສະຫາຍທ່ານລຸກແຕ່ທີ່ໃດມາຈາ ທ່ານມາຈອດມາແວ່ເຮືອນຂ້າພອຍບໍ່ວ່າຕູສັ່ງຈາວ່າດັ່ງນີ້ ຜູ້ເຈົ້າເຮືອນກ່າວວ່າ ຫາກແມ່ນເຮືອນຕູດາຍ ຕູໄປຄ້າຝາກໄວ້ດອມເພິ່ນແລ ຂາບໍ່ຍອມກັນຈຶ່ງໄປຫາເສນາໄຕ່ ເສນາກໍຖາມຫາສັກຂີດອມຜູ້ມາຈອດນັ້ນ ກໍເອົາໜັງສືອັນມັນກິດໄວ້ນັ້ນມາຕໍ່ວ່າ ເມື່ອຂ້າປຸກເຮືອນນັ້ນກໍຍັງໄດ້ໝາຍໜັງສືໄວ້ດັ່ງນີ້ແລ ເສນາເລົ່າຖາມເຈົ້າເຮືອນວ່າ ທ່ານປຸກເຮືອນທ່ານຍັງໄດ້ໄວ້ໃຫ້ເປັນສັກຂີອັນໃດແດ່ ມັນຜູ້ເຈົ້າເຮືອນວ່າ ກໍຫາກແມ່ນເຮືອນຂ້າແທ້ແລ ທີ່ວ່າເມື່ອຈັກປຸກຈັກແປງນັ້ນ ຂ້າກໍບໍ່ກິດໝາຍໄວ້ສັ່ງແລ ບໍ່ຮູ້ວ່າຈັກເປັນສັນນີ້ແລ ເມື່ອນັ້ນເສນາກ່າວວ່າ ມັນຜູ້ນີ້ ຍັງໄດ້ແທກໝາຍໄວ້ຊູ່ອັນແລ ຮອກວ່າມີສັກຂີແລຜູ້ນີ້ຮອກວ່າ ບໍ່ໄດ້ກິດໝາຍໄວ້ສັກອັນ ຮອກວ່າຫາສັກຂີບໍ່ໄດ້ແລ ເສນາທັງຫລາຍກໍຕັດວ່າໃຫ້ເປັນເຮືອນຜູ້ໄດ້ກິດໄວ້ນັ້ນແລ ເຈົ້າເຮືອນບໍ່ຍອມຈຶ່ງພາກັນໄປໄຫວ້ພະຍາ ກ່າວກິດຈະທັງມວນແລ້ວ ພະຍາຖາມຜູ້ໝາຍໄວ້ນັ້ນວ່າ ເຄື່ອງເຮືອນມຶງພາຍບົນມຶງຍັງໄດ້ໝາຍໜັງສືໄວ້ແດ່ລື ກົກເສົາອັນຝັງລົງໃນດິນກໍຍັງໄດ້ກິດໝາຍໄວ້ເປັນສັນໃດຈາ ມັນວ່າຂ້າບໍ່ໄດ້ກິດໝາຍໄວ້ແລ ພະຍາຈຶ່ງຖາມເຈົ້າເຮືອນວ່າ ມຶງວ່າເຮືອນມຶງແທ້ດັ່ງນັ້ນເຄື່ອງເຮືອນມຶງພາຍບົນ ກໍຍັງໄດ້ກິດໝາຍໄວ້ແດ່ລື ກົກເສົາອັນຝັງລົງໃນດິນນັ້ນ ມຶງຍັງກິດໝາຍດ້ວຍປະການສັນໃດຈາ ມັນວ່າຂ້າປຸກເຮືອນນັ້ນ ຂ້າກໍເອົາແຜ່ນຫີນມາຮອງກົກເສົາແທ້ດີຫລີແລ ເມື່ອນັ້ນພະຍາກໍໃຫ້ຄືນໄປຂຸດດູ ກໍເຫັນແຜ່ນຫີນຮອງກົກເສົາດັ່ງມັນວ່າແທ້ແລ ພະຍາວ່າ ມັນບໍ່ກິດໝາຍຮອງຕີນເສົາເຮືອນມັນແທ້ ກໍຈັກເສັຽເຮືອນມັນແທ້ແລ ສ່ວນດັ່ງຊາຍຜູ້ນີ້ມັນເຫັນແຕ່ອັນໄດ້ ມໍ່ຕາກໍກິດໝາຍໄວ້ທີ່ແຕ່ຕາເຫັນນັ້ນແທ້ແລ ມັນນີ້ລ່າຍພາງເອົາເຮືອນເພິ່ນເປົ່າດາຍ ພະຍາກໍຕັດໃຫ້ໃຊ້ສອງທໍ່ຜີວ່າມັນໄດ້ເພິ່ນຈັກໄດ້ທໍ່ໜຶ່ງແລ ທີ່ນີ້ມັນເສັຍແກ່ທ່ານສອງທໍ່ເພື່ອດັ່ງນັ້ນແລ ເຫດວ່າຢ່າໃຫ້ຄົນທັງຫລາຍຄືວະເອົາເຮືອນທ່ານວ່າເປັນເຮືອນຕົວແລ ພະຍາກໍສອນມັນວ່າ ແຕ່ນີ້ເມືອໜ້າມຶງຢ່າກະທຳສັນນີ້ເທີ້ນ ບໍ່ດີແລ ວ່າດັ່ງນີ້ແລ້ວ ພະຍາກໍຂັບໜີຈາກເຮືອນທັ້ນແລ ພະຍາຈຶ່ງສອນເສນາອາມາດທັງຫລາຍວ່າ ຄຳອັນໃດກໍດີ ຜູ້ຈັກເພິ່ງພິຈາລະນາດູ ຜູ້ສະຫລັບສັບພະຫລີ້ຂ້ຽວອນສັນນີ້ ເຫັນແຈ້ງແລ້ວຈຶ່ງຄວນຕັດ ຕັດຄຳສັນນີ້ເປັນສຸດຄະຕິແລ.

ທີ່ນີ້ຍັງມີພານປ່າສອງສະຫາຍໄປແອ່ວປ່າ ຂາກໍເຫັນຮອຍຕີນລະມັ່ງຫລວງຫາງ ຂາກໍຈາກັນວ່າ ດູລາສະຫາຍ ມາຮາລີ້ຢູ່ນີ້ ຕີເອົາລະມັ່ງເມືອກິນຮາຕົວໜຶ່ງເທີ້ນ ຂາຈາກັນສັນນີ້ແລ້ວກໍຕັດຄ້ອນອັນນ້ອຍອັນໃຫຍ່ທໍ່ກັນ ອັນສັ້ນອັນຍາວທໍ່ກັນແລ້ວ ຂາກໍລີ້ຢູ່ຂ້າງທາງລະມັ່ງທັ້ນແລ ຍາມນັ້ນລະມັ່ງຕົວໜຶ່ງ ກໍມາແທ້ ຂາກໍຕີລົງພ້ອມກັນລະມັ່ງຕົວນັ້ນກໍຕາຍແທ້ທັ້ນແລ ເມື່ອນັ້ນຂາກໍປັນກັນຊູ່ຄົນຊູ່ຄົນວ່າຈັກເອົາຫົວ ຂາ ປັນກັນກິນບໍ່ກຶກບໍ່ແມ່ນ ຂາຈຶ່ງໄປໃຫ້ເສນາໄຕ່ ເສນາຕອງດູຮູ້ແຈ້ງແລ້ວ ຈຶ່ງກ່າວວ່າຄ້ອນເຂືອກໍຄ່າກັນໃຫຍ່ນ້ອຍກໍທໍ່ກັນເຂືອກິນທໍ່ກັນຄວນແລ ຂາບໍ່ຟັງຈຶ່ງພາກັນໄປໄຫວ້ພະຍາ ກ່າວກິດຈະທັງມວນແກ່ພະຍາແລ້ວ ພະຍາກໍໃຫ້ເອົາຄ້ອນມາຊັ່ງດູ ຄ້ອນ

ຜູ້ຫນຶ່ງກໍແຄວນຫນັກກວ່າທັ້ນແລ ພະຍາຈິ່ງໃຫ້ຜູ້ຄ້ອນຫນັກແລ ເຫດວ່າລະມັ່ງຕົວນັ້ນ ພະລັນຕາຍທ່ອງເພື່ອຄ້ອນຫນັກແລ ຜີຈັກໄດ້ບາບກໍແອນໄດ້ຫນັກ ເຫດດັ່ງນັ້ນ ໃຫ້ມັນກິນຫົວ ເພື່ອອັນແລ ຕັດຄຳສັນນີ້ ສຸຄະຕິແລ.

ທີ່ນີ້ຍັງມີສອງສະຫາຍຢູ່ບ້ານນອກທີ່ຫນຶ່ງ ເກິ່ງກາລະເມື່ອຈັກກະທຳນາຂາ ກໍຈັກກະທຳດອມກັນ ຜູ້ຫນຶ່ງໄປໄກ່ຂ້ອຍມາກະທຳນາ ຜູ້ຫນຶ່ງໄປຊື້ງົວມາກະທຳນາ ຜູ້ຊື້ງົວນັ້ນ ງົວກໍລັກຫນີ ຜູ້ໄກ່ຂ້ອຍນັ້ນ ຂ້ອຍກໍລັກຫນີ ຂາກໍໄປທ່ອງຫານຳຮອຍຕີນ ຜູ້ໄກ່ຂ້ອຍເມືອທາງເຫນືອ ຜູ້ໄກ່ງົວໄປທາງໃຕ້ ຂາກໍໄປພົບກັນກາງຂົວທີ່ຫນຶ່ງ ຂາບໍ່ຫລີກຊູນກັນຕົກລົງຂົວທັງສອງຂາທັ້ນແລ ຂາບໍ່ຍອມກັນຈິ່ງພາກັນໄປຫາເສນາໄຕ່ ເສນາກ່າວວ່າ ຜູ້ຫນຶ່ງຂ້ອຍລັກຫນີ ຜູ້ຫນຶ່ງງົວລັກຫນີ ຢ່າວ່າສັງແກ່ກັນເທີ້ນ ຂາບໍ່ຟັງຈິ່ງພາກັນເມືອໄຫວ້ພະຍາ ກ່າວເຫດທັງມວນໃຫ້ພະຍາຮູ້ແລ້ວ ພະຍາຈິ່ງຖາມເຂົາວ່າ ເຫດສັນໃດ ຈິ່ງຮູ້ວ່າ ຂ້ອຍກູໄປທາງນີ້ ງົວກູໄປທາງນີ້ຈາ ເຈົ້າງົວກ່າວວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຂ້າກໍເຫັນຮອຍຕີນງົວ ຂ້າໄປທາງນີ້ ຂ້າຈິ່ງໄປຕາມຮອຍຕີນງົວຂ້າດາຍ ຜູ້ເຈົ້າຄົນກ່າວວ່າ ຂ້າກໍເຫັນຮອຍຕີນຄົນຂ້າໄປທາງນີ້ ຂ້າຈິ່ງໄປຕາມແລ ເມື່ອນັ້ນພະຍາກ່າວວ່າ ມຶງໄປໄຕ່ຮອຍຕີນງົວແທ້ແລ ດ້ວຍແທ້ງົວມຶງບໍ່ໄຕ່ຂົວທັ້ນໄປ ງົວມຶງຫາກໄປທາງດິນດາຍ ມຶງສັງບໍ່ນຳຮອຍຕີນງົວມຶງຈາ ມຶງຈິໄຕ່ຂົວສັງຈາ ພະຍາກໍຕັດວ່າ ໃຫ້ມັນຜູ້ເຈົ້າງົວໃຊ້ຄ່າຄົນ ເພິ່ນເອົາຄ່າຄົນນັ້ນມາຜ່າສາມສ່ວນງົວໃຊ້ສ່ວນຫນຶ່ງ ເສັຍເຄາະຜູ້ເຈົ້າຄົນນັ້ນສອງສ່ວນແລ ແຕ່ນີ້ເມື່ອຫນ້າຜູ້ຈັກພິຈາລະນາໄຕ່ກ້ອຍຄຳເພິ່ງໄຕ່ຫາທີ່ຜິດທີ່ແມ່ນສັນນີ້ຈິ່ງຕັດເທີ້ນ ສຸຄະຕິແລ.

ທີ່ນີ້ຍັງມີພານເຈັດຄົນ. ເຂົາເປັນສະຫາຍກັນ ເວົ້າຈາກັນວ່າ ເຮົາຈັກກະທຳນາ ທີ່ດອງກັນແລ ເມື່ອໄດ້ເຂົ້າເຮົາຈິ່ງປັນກັນເທີ້ນວ່າດັ່ງນັ້ນ ເຂົາກໍພ້ອມກັນວ່າດີງຊູ່ຄົນແລ ຜູ້ຫນຶ່ງວ່າ ຂ້າຈັກເອົາຫຍ້າເສັຍແລ ຜູ້ຫນຶ່ງວ່າຂ້າຈັກກ່ອງເຂົ້າແລ ຜູ້ຫນຶ່ງວ່າຂ້າຈັກຂົນເຂົ້າເມືອບ້ານແລ ວ່າອັນແລ ເຂົາຈິ່ງພ້ອມກັນສ້າງທີ່ຫນຶ່ງໃຫ້ເປັນນາມີແລ ເກິ່ງກາລະເມື່ອເຂົ້າພໍກິນແລ້ວ ເຂົາກໍວ່າຄຸນຂ້າມີມາກ ຄຸນຂ້າມີມາກວ່າດັ່ວນີ້ຊູ່ຄົນເຂົາແລ ເຂົາປັນກັນບໍ່ແມ່ນຈິ່ງຫາເສນາໄຕ່ເສນາຮູ້ເຫດແຫ່ງເຂົາແລ້ວ ຈິ່ງພາເຂົາຝູງນັ້ນເມືອໄຫວ້ພະຍາກ່າວກິດຈະທັງມວນໃຫ້ພະຍາຮູ້ແລ້ວ ພະຍາຈິ່ງຕັດວ່າ ລ້ຳເຂົາເຈັດຄົນນັ້ນ ຍັງມີຄຸນແວນມາກງູ່ຄົນແລ ພະຍາຈິ່ງປັນເຂົາເປັນເຂົ້າເຈັດສ່ວນໃຫ້ແກ່ເຂົາທີ່ກັນແລ້ວ ພະຍາຈິ່ງມາກອດເອົາດອມເຂົາຫ້າຄົນນັ້ນແລ ຄົນແລ ເກິ່ງມາໃຫ້ແກ່ຜູ້ເອົາຫຍ້ານັ້ນເກິ່ງຫນຶ່ງ ໃຫ້ແກ່ຜູ້ຂົນເຂົ້າເມືອບ້ານຮັກສາໄວ້ເກິ່ງຫນຶ່ງແລ ຂາສອງຄົນນີ້ໄດ້ຫລາຍກວ່າເຂົາຫ້າຄົນນັ້ນແລ ເມື່ອນັ້ນ ນັກປາດທັງຫລາຍກ່າວເຊິ່ງພະຍາວ່າ ຂ້າໄຫວ້ມະຫາຣາຊະເຈົ້າສວນດັ່ງເຂົາທັງຫລາຍເຈັດຄົນນີ້ ກິດຈະການອັນເຂົາກະທຳມານີ້ ເປັນອັນກະທຳສະເຫມີກັນແທ້ດີຫລີແລ ເຫດສັນໃດຂາສອງຄົນນີ້ມາມີຄຸນອັນມາກນີ້ຈາ ຂໍມະຫາຣາຊະເຈົ້າຈິ່ງບອກກິດຈະອັນນັ້ນໃຫ້ແຈ້ງແກ່ຝູງຂ້າທັງຫລາຍແດ່ເທີ້ນ ເມື່ອນັ້ນພະຍາຈິ່ງກ່າວຄຸນແຫ່ງຂາທັງສອງໃຫ້ແຈ້ງແກ່ເສນາ ແລະ ນັກປາດທັງຫລາຍວ່າດັ່ງນີ້

ລ້ຳເຂົາເຈົ້າຄົນນີ້ກະທຳການສະເໝີກັນແທ້ແລ ທີ່ແທ້ອັນຈັກເປັນຄຸນອັນຍິ່ງນັ້ນ ກໍຍັງມີດາຍ ຊາຕິກະທຳນາໃຫ້ໄດ້ກິນເຂົ້ານີ້ ກໍເປັນການອັນຍາກນັກແລ ອັນຈັກໄດ້ເຂົ້າແທ້ເປັນແຫ່ງຜູ້ເອົາ ຫຍ້ານັ້ນດາຍ ຜີບໍ່ມີຜູ້ຂົນເຂົ້າເມືອບ້ານນັ້ນກໍບໍ່ໄດ້ກິນເຂົ້າດາຍ ເຫດດັ່ງນັ້ນ ຄຸນແຫ່ງຊາ ສອງຄົນນີ້ແວນມາກນັກແທ້ແລ ເມື່ອພາຍລຸນພະຍາຈຶ່ງອຸບປະມາຫອມເຫດແຫ່ງຊາສອງຄົນນັ້ນ ອັນບຸກຄະລະຄິດບໍ່ກ້ອງ ແລະ ການ ບຸກຄູະລະຜູ້ຈັກແກ້ ກໍເພິ່ງແກ້ສັນນີ້ເທີ້ນ ກິຍາອັນເຂົາ ທຳນານັ້ນກໍດັ່ງດອວກັນແທ້ແລ, ເຫດດັ່ງພະຍາໃຫ້ໄປຮີບເສິກແພ້ທ່ານກໍດ້ວຍຮິພົນມະຫິນລະ ໃຍຫາມາກຫລາຍແລ ດ້ວຍທີ່ແທ້ຜູ້ໃດແລໄດ້ຊ້າງມ້າຂ້າຄົນມາກວາຍແກ່ພະຍາເຈົ້າແຫ່ງຕົນ ກໍລືຊາປາກົດມາກນັກ ພະຍາກໍໃຫ້ຄຸນນະວິເສດເປັນຮາງວັນອັນມາກນັກແລ ບຸກຄະລະຜູ້ໃດແລ ບໍ່ໄດ້ຊ້າງມ້າງົວຄວາຍຂ້າຄົນມາກວາຍແກ່ພະຍາກໍບໍ່ປາກົດແລ ອັນນັ້ນແລ ມີໂດຍປະການສັນ ໃດ ໃນເຂົາເຈົ້າຄົນນີ້ ເຂົາກະທຳນາອັນດອວກັນແທ້ແລ ທີ່ແທ້ອັນປາກົດແກ່ເຂົາກໍເປັນດັ່ງຜູ້ ໄດ້ຊ້າງມ້າຂ້າຄົນມາກວາຍແກ່ພະຍາທັ້ນແລ ກ້ອຍຄຳອັນໃດເປັນສັນນີ້ ນັກປາດຜູ້ມີພະຫຍາ ກໍ ຄວນພິຈາລະນາດູ ອັນມີຄຸນມາກ ແລະ ມີຄຸນໜ້ອຍ ແລະ ມີຄຸນປານກາງສັນນີ້ເທີ້ນ ສຸຄະ ຕິແລ.

ທີ່ນີ້ ຍັງມີໂຈນຜູ້ໜຶ່ງໄປລັກກິນໝາກມ່ວງໃນສວນອຸດທິຍານ ຈ່າສວນອຸດທິຍານໄລ່ຂ້າ ໂຈນຜູ້ນັ້ນ ມັນກໍແລ່ນເຂົ້າໄປໃນສາລາເຈົ້າຣັດສີຕົນຢູ່ໃນສວນອຸດທິຍານນັ້ນແລ້ວ ກໍສອດແສ້ວ ໜີໄປທາງອື່ນເສັຍຈ່າສວນອຸດທິຍານ ບໍ່ພິຈາລະນາດູຄື ກໍຕູ່ວ່າເຈົ້າຣັດສີລັກກິນໝາກມ່ວງພະຍາ ຈ່າສວນກໍລວດຂ້າເຈົ້າຣັດສີເສັຍແລ້ວ ພະຍາຮູ້ຈຶ່ງໃຫ້ໃຊ້ຄ່າເຈົ້າຣັດສີເຈັດທໍ່ເປັນເຈັດພັນຄຳແລ ເພື່ອວ່າເຈົ້າຣັດສີ ນຸ່ງຜ້າຍ້ອມຝາດແລະໜັງເສືອ ເປັນນັກບວດສ້າງສີນພົມມະຈາຣີ ທະລົງອິນທີມໍຣະຍາດເປັນທີ່ໄຫວ້ນົບຄົມຣົບຢຳແຍງ ຄວນຮັບເອົາທານແຫ່ງຄົນທັງຫລາຍ ຫອມ ຍ່ອມນຳສັດທັງຫລາຍຂ້າມຝັ່ງແຫ່ງສົງສານແລ ອັນຈັກຫາເຈົ້າຣັດສີແລະສຳມະນະເຈົ້າຕົນ ທະລົງສີນຍາກນັກແລ ຈ່າສວນບໍ່ພິຈາລະນາກ້ອຍ ພອຍເລົ່າໄປຂ້າເຈົ້າຣັດສີເສັຍດັ່ງນັ້ນ ພະ ຍາຈຶ່ງໃຫ້ໃຊ້ຄ່າເຈົ້າຣັດສີເປັນເຈັດທໍ່ເພື່ອອັນແລ ພະຍາກໍກອດມັນເສັຍທັ້ນແລ ເມື່ອນັ້ນພະຍາ ກໍພິຈາລະນາດູຄຳອັນເປັນຄ່າເຈົ້າຣັດສີນັ້ນວ່າ ກູຈັກກະທຳອັນໃດກໍບໍ່ຊອບບໍ່ດີຈັກໄດ້ວິບາກໜັກ ໜາ ພະຍາຈຶ່ງປູນຄ່າເຈົ້າຣັດສີ ເຈັດພັນຄຳນັ້ນໃຫ້ເປັນສອງສ່ວນ ສ່ວນໜຶ່ງໃຫ້ຫລໍ່ເປັນຮູບ ເຈົ້າຣັດສີໄວ້ແທນ ພະຍາ ກໍໃຫ້ກໍ່ເຈດີກວມຝຸ່ນເຈົ້າຣັດສີໄວ້ແລ ຍັງເຫລືອສ່ວນໜຶ່ງ ພະຍາກໍໃຫ້ ຕີເປັນແຜ່ນຟອກເຈດີໄວ້ທັ້ນແລ ອັນນີ້ກໍເປັນທຳມະດາມາແຕ່ກ່ອນແລ ນັກປາດຜູ້ມີພະຫຍາຈິ່ງ ຮຳເພິງໄວ້ເທີ້ນ ແຕ່ນີ້ເມືອໜ້າຈັກກ່າວຕຳນານໄຕ່ກ້ອຍຄຳຫາສັກຂີບໍ່ໄດ້ແລ.

ທີ່ນີ້ຍັງມີນາງພາມສອງຄົນ ຜູ້ໜຶ່ງມີຜົວຜູ້ໜຶ່ງບໍ່ມີຜົວ ຊາໄປທາງກັບກັນ ຊາກໍເຫັນໄຫ ຄຳໜ່ວຍໜຶ່ງ ຊາປັນກັນບໍ່ແມ່ນ ຊູ່ຄົນວ່າ ກູເຫັນກ່ອນ ກູຈັກເອົາຫລາຍແລວ່າດັ່ງນັ້ນ ຊາກໍ່ ບໍ່ຍອມກັນ ຈຶ່ງພາກັນໄປໄຫວ້ພະຍາໃຫ້ປັນໃຫ້ແກ່ຊາທັງສອງ ພະຍາກໍປັນໃຫ້ສາມສ່ວນແລ ສ່ວນ ໜຶ່ງນັ້ນພະຍາເອົາເສຍແລ ເລົ່າຍັງຄຳສອງສ່ວນ ພະຍາພິຈາລະນາໃຫ້ຊາວ່າໃຜເຫັນກ່ອນຈາ

ຂາກໍຂານພະຍາວ່າຂ້າເຫັນກ່ອນວ່າດັ່ງນີ້ຊູ່ຄືນແລ ພະຍາເລົ່າຖາມວ່າ ໃຜຍັງຮັກສາສິນດັ່ງລືຈາ ນາງຜູ້ມີຜົວຂານວ່າຂ້າໄຫວ້ມະຫາຣາຊະເຈົ້າຂ້ານີ້ ເມື່ອເດືອນເພັງ ຂ້າຮັກສາສິນແປດຊູ່ສິນແລ ວ່າສັ້ນນີ້ ນາງຜູ້ບໍ່ມີຜົວຂານວ່າ ຂ້ານີ້ຮັກສາສິນຫ້າ ບໍ່ຂາດສັກວັນແລ ເມື່ອເດືອນເພັງເດືອນ ດັບນັ້ນ ຂ້າກໍສຳມະທານເອົາສິນແປດທຸກວັນເປັນປົກກະຕິແທ້ແລ ພະຍາກໍປັນໃຫ້ແກ່ນາງຜູ້ມີຜົວ ແລະ ມີສິນໃນວັນອຸໂປສົດນັ້ນ ທໍ່ໜຶ່ງແລໃຫ້ແກ່ນາງຜູ້ບໍ່ມີຜົວນັ້ນທໍ່ເກິ່ງແລ ເຫດວ່ານາງມີສິນ ແວນຍິ່ງບໍ່ຂາດສາຍແລ ຮອຍທີ່ມັນເຫັນກ່ອນບໍ່ຢ່າແລ ເຫດວ່າມັນມີສິນມີສັດຈະທ່ຽງແລ ເຫດ ດັ່ງນັ້ນພະຍາຈຶ່ງໃຫ້ມັນແວນຍິ່ງ ເພື່ອດັ່ງນັ້ນແລ ເມື່ອນັ້ນນາງຜູ້ມີຜົວກໍກິນແໜງວ່າກູຊິເສັຍແທ້ ດີເດ ກໍຍັງຈັກໄດ້ມາກບໍ່ຢ່າແລ ວ່າດັ່ງນີ້ແລ້ວຈຶ່ງບອກແກ່ພະຍາວ່າ ນາງຜູ້ບໍ່ມີຜົວເຫັນກ່ອນກໍ ຂ້າແລ ເມື່ອນັ້ນພະຍາຊ້ຳຕື່ມໃຫ້ ແລ້ວວ່າກູຕັດຄວາມນີ້ຊອບແທ້ແລ.

ເມື່ອນັ້ນ ຍັງມີງູສອງໂຕຍາດກັນກິນອາຫານ ຄືວ່າຂຽດຕົວດຽວ ລ້ຳງູສອງໂຕນັ້ນ ຕົວ ໜຶ່ງກິນທາງຫົວ ຕົວໜຶ່ງກິນທາງຫາງຊູ່ຕົວຊູ່ວາກູໄດ້ກ່ອນວ່າດັ່ງນັ້ນ ຍາມນັ້ນ ເຈົ້າຣັດສີລົງ ໄປອາບນ້ຳໃນສະ ງູສອງຕົວນັ້ນເຫັນເຈົ້າຣັດສີລົງໄປອາບນ້ຳຈຶ່ງກ່າວວ່າ ຂ້າໄຫວ້ເຈົ້າກູ ເຈົ້າກູຈິ່ງມາພິຈາລະນາໃຫ້ເຜືອຂ້າທັງສອງແດ່ເທີ້ນ ວ່າດັ່ງນັ້ນ ເຈົ້າຣັດສີຈຶ່ງກ່າວວ່າ ດູລາ ງູເຂືອຈະໃຫ້ກູພິຈາລະນາດັ່ງລືຈາ ງູສອງຕົວກ່າວວ່າ ເຜືອຜິດກັນດ້ວຍຊີງກັນກິນອາຫານກໍຂ້າ ແລ ເຈົ້າກູຈິ່ງກູນາມາພິຈາລະນາໃຫ້ເຜືອຂ້າທັງສອງແດ່ເທີ້ນວ່າດັ່ງນັ້ນ ເຈົ້າຣັດສີຈຶ່ງກ່າວວ່າ ຂາຜິດກັນດ້ວຍອາຫານດັ່ງລືຈາ ງູຕົວໜຶ່ງກ່າວວ່າ ຂ້າໄດ້ຂຽດຫລືນກິນບໍ່ທັນສ້ຽງເທື່ອ ງູຕົວນີ້ ກໍມາຊີງຂ້າກິນແລ ຕົວໜຶ່ງເລົ່າວ່າຂ້າໄດ້ກ່ອນຫລືນກິນບໍ່ທັນສ້ຽງເທື່ອ ງູຕົວນີ້ກໍມາຊີງຂ້າກິນແລ ວ່າດັ່ງນີ້ ເຈົ້າຣັດສີຈຶ່ງຄະນຶງໃນໃຈວ່າ ຄຳອັນນີ້ຫາສັກຂີບໍ່ໄດ້ນໍ ຈຶ່ງຮຳເພິງເມື່ອພາຍລຸນ ວ່າຊາຕິງູກິນຂຽດນີ້ ບໍ່ຫ່ອນວ່າຈັກຄ້ອງກິນແລ ກໍຫຽນຍ່ອມຫລືນສິ່ງດຽວແລ ແລະ ເມື່ອຫລືນ ນັ້ນ ກໍຫຽນຍ່ອມຫລືນທາງຫົວກ່ອນດາຍ ບໍ່ຫ່ອນຫລືນທາງຫາງສັກເທື່ອແລ ອັນນີ້ກໍຫາກເປັນ ຈາຮີດແຫ່ງງູກິນຂຽດແລ ຕົວມັນຫລືນທາງຫົວນີ້ມັນໄດ້ກ່ອນແລ ຄວນເປັນອາຫານແຫ່ງມັນແລ ຕົວຫລືນທາງຕີນນັ້ນມັນມັກມາກໂລພາ ຊີງກິນອາຫານແຫ່ງທ່ານເປົ່າດາຍແລ ເຈົ້າຣັດສີຄະນຶງ ດັ່ງນີ້ ແລ້ວເຈົ້າຣັດສີຈຶ່ງຕັດວ່າ ໃຫ້ໄດ້ແກ່ຕົວຫລືນທາງຫົວນັ້ນທັ້ນແລ ເຈົ້າຣັດສີຕັດສັນນີ້ແລ້ວ ງູຕົວຫລືນທາງຕີນນັ້ນ ມັນກໍ່ບໍ່ວາງຂຽດຍັງຄາບຢູ່ນັ້ນເທວະດາເຫັນເຈົ້າຣັດສີ ຕັດຄຳສັນນີ້ຊອບ ນັກເທວະດາກໍທອດຄ້ອນອັນໜຶ່ງລົງມາໃຫ້ກີກງູຕົວນັ້ນແລ້ວ ງູຕົວນັ້ນກໍຢ້ານກໍວາງຂຽດເສັຍ ທັ້ນແລ ເຈົ້າຣັດສີກ່າວວ່າ ທະເຣ ! ດູລາ ງູຕົວກ້ອຍຮ້າຍ ມຶງມາຊີງເອົາອາຫານແຫ່ງທ່ານສັ່ງ ຈາ ງູກ່າວວ່າ ຂ້າກໍຄຶດວ່າຈັກໄດ້ກິນດ້ວຍງ່າຍດາຍ ຂ້າຈຶ່ງໄດ້ຊີງເອົາອາຫານແຫ່ງທ່ານເພື່ອ ອັນແລ ປົກກາມີ ມັນກໍໜີໄປທັ້ນແລ ເຈົ້າຣັດສີເອົາວິໄສແຫ່ງຂາມາເປັນສັກຂີແຈ້ງແລ້ວຈຶ່ງຕັດແລ ນັກປາດຜູ້ມີພະທຍາກໍເພິງເອົາວິໄສ ມາທຽມໃຫ້ເປັນສັກຂີຮູ້ແຈ້ງແລ້ວຈຶ່ງຕັດເທີ້ນ.

ບັດນີ້ຍັງມີຈິແຂ້ຕົວໜຶ່ງໃຫຍ່ນັກ ມັນກໍຢູ່ຂ້າງຝັ່ງມະຫາສະໝຸດທີ່ໜຶ່ງ ມັນກໍຫຽນຍ່ອມ ໄປຄວ່າສະແຫວງຫາຊ້າງມາກິນເປັນອາຫານຊູ່ວັນແລະວັນລະຕົວທັ້ນແລ ເລົ່າຍັງມີນົກຫັດກີລີງ

ຕົວໜຶ່ງຢູ່ໃນເກາະສະໝຸດບໍ່ໄກຈິນແຂ້ຕົວນັ້ນທີ່ໃດ ນົກທັດກີລິງຕົວນັ້ນ ກໍໄປເອົາຊ້າງມາກິນທີ່ນັ້ນຊູ່ວັນທັ້ນແລ ຍັງມີໃນວັນໜຶ່ງ ນົກທັດກີລິງຕົວນັ້ນ ກໍໄປເອົາຊ້າງມາກາຍທີ່ໜັ້ນ ທີ່ນັ້ນຈິ່ແຂ້ຕົວນັ້ນເຫັນແລ້ວມັນກໍຄະນຶງໃນໃຈວ່າ ກູໄປຫາກິນກໍເປັນອັນຍາກນັກແລ ກູຈັກໄປຊິງເອົາດອມນົກທັດກີລິງຕົວນີ້ມາກິນເທີ້ນໄດ້ງ່າຍແລ ມັນຄະນຶງໃນໃຈດັ່ງນີ້ແລ້ວ ກໍແລ່ນໄປຄາບເອົາຊ້າງທັ້ນແລ ນົກທັດກີລິງຕົວນັ້ນເຫັນຈິນແຂ້ ມາຄາບເອົາຊ້າງມັນກ່າວວ່າ ດູລາຈິນແຂ້ຕົວກ່ອຍມຶງມາຄາບເອົາຊ້າງກູສັງຈາວ່າອັນຂາ ກໍຍາດຊິງກັນດ້ວຍຄຳວ່າ ກູຫາກໄດ້ ກູຫາກໄດ້ລວດກອງກັນຢູ່ທັ້ນແລ ທີ່ນັ້ນ ເຈົ້າຣັດສີກໍມາດ້ວຍທາງອາກາດ ຂາເຫັນເຈົ້າຣັດສີຈິ່ງໃອ້ນເຈົ້າຣັດສີວ່າ ຂ້າແກ່ພະຣັດສີ ເປັນເຈົ້າ ເຈົ້າກູຈິ່ງມາໂຜດກູນາພິຈາລະນາໃຫ້ເພື່ອຂ້າທັງສອງແດ່ເທີ້ນ ວ່າດັ່ງນີ້ ເມື່ອນັ້ນເຈົ້າຣັດສີໄດ້ຍິນແລ້ວ ກໍລົງມາທັ້ນແລ ນົກທັດສະດີລິງກ່າວວ່າ ຂ້າໄຫວ້ພະຣັດສີ ຂ້າໄປເອົາຊ້າງມາກິນຊູ່ວັນດາຍ ວັນນີ້ຈິນແຂ້ຕົວນີ້ລວດມາຍາດເອົາຊ້າງອັນຂ້າຫາກໄປຫາມາກິນນີ້ເສັຍດາຍ ຈິນແຂ້ກໍກ່າວສັນດອວນັ້ນແລ ເຈົ້າຣັດສີຈິ່ງຄະນຶງໃນໃຈວ່າ ຄຳອັນນີ້ຫາສັກຂີບໍ່ໄດ້ແລ ຈັກເອົາອັນອື່ນມາຕັດກໍເປັນອັນຍາກນັກແລ ຄວນກູເອົາວິໄສແຫ່ງຂາມາຕັດໃຫ້ເປັນສັກຂີແກ່ຂາທັງສອງຊອບແລ ເຈົ້າຣັດສີກ່າວວ່າ ຊາຕິນົກທັດກີລິງນີ້ ຄັນວ່າຂ້າເບື້ອກໍຫອນຍ່ອມຂ້າດ້ວຍງາມັນດາຍ ຊາຕິຈິນແຂ້ນີ້ ຂ້າເບື້ອກໍຫອນຍ່ອມຂ້າດ້ວຍແຂ້ວແຫ່ງມັນແລ ຄະນຶງດັ່ງນີ້ແລ້ວ ເຈົ້າຣັດສີຈິ່ງພິຈາລະນາດູບາດໃນຕົວຊ້າງນັ້ນແລ້ວຈິ່ງຮູ້ວ່າແມ່ນຮອຍງານົກທັດກີລິງແທ້ທັ້ນແລ ເຈົ້າຣັດສີກໍຕັດໃຫ້ນົກທັດກີລິງທັ້ນແລ ເຈົ້າຣັດສີກ່າວວ່າ ດູລາຈິນແຂ້ ມຶງຈັກຟັງຄຳກູຕັດບໍຈາ ຈິນແຂ້ກ່າວວ່າ ຂ້າຈັກຟັງຄຳເຈົ້າກູຕັດແລ ຂ້າກໍຄຶດວ່າຈັກໄດ້ກິນງ່າຍ ຂ້າຈິ່ງມາຊິງເອົາແທ້ແລ ເຈົ້າຣັດສີກ່າວວ່າ ແຕ່ນີ້ເມື່ອໜ້າມຶງຢ່າໄດ້ຍາດເອົາຂອງທ່ານສັນນີ້ເທີ້ນ ວ່າດັ່ງນີ້ແລ້ວຈິນແຂ້ກໍໜີໄປທັ້ນແລ ຕຳນານອັນນີ້ເຈົ້າຣັດສີ ພິຈາລະນາໃຫ້ແກ່ນົກທັດກີລິງກັບຈິນແຂ້ຊິງກັນກິນອາຫານອັນຫາສັກຂີບໍ່ໄດ້ ກໍທີ່ເອົາວິໄສແຫ່ງຂາມາຕັດໃຫ້ແກ່ຂາແລ ເຈົ້າຣັດສີຕັດຄຳສັນນີ້ເປັນສຸຄະຕິແລ.

ເລົ່າຍັງມີພໍ່ຄ້າສອງໝູ່ ໝູ່ໜຶ່ງຈອດບ້ານ ໝູ່ໜຶ່ງຈອດສາລານອກບ້ານ ເມື່ອກາງຄືນພໍ່ຄ້າຜູ້ໜຶ່ງໄປລັກເອົາໄກ່ຊາວບ້ານ ເຈົ້າບ້ານຮູ້ເມື່ອ ກໍໄລ່ໂຈນຜູ້ນັ້ນອອກໄປທັ້ນແລ ຍາມນັ້ນພໍ່ຄ້າຜູ້ໜຶ່ງໄດ້ຍິນວ່າ ຕ້ອນໂຈນ ມັນກໍແລ່ນໄປຕາມໄດ້ກັບມືໂຈນຂາກໍກຸມກັນຢູ່ ຊູ່ຄົນຊູ່ວ່າມຶງເປັນໂຈນແລ ວ່າດັ່ງນີ້ ເຈົ້າໄກ່ກໍໄປທັນ ໄດ້ຍິນຂາກອງກັນຢູ່ດັ່ງນັ້ນ ກໍບໍ່ຮູ້ຈັກວ່າຄົນຮ້າຍຄົນດີ ເຂົາກໍມັດເອົາທັງສອງຄົນຈິ່ງໄປຫາເສນາໄຕ່ ກໍຮູ້ວ່າຫາສັກຂີບໍ່ໄດ້ ຈັກຕັດກໍບໍ່ໄດ້ເຫລືອກຳລັງພະຫຍາແຫ່ງເສນາຈິ່ງພາເອົາເມືອໄຫວ້ພະຍາ ກ່າວກິດຈະທັງມວນແກ່ພະຍາແລ້ວ ພະຍາຈິ່ງກ່າວວ່າ ຄຳອັນໃດເປັນກັບດ້ວຍຊິງກັນເອົາເຂົ້າຂອງແລ ມາຫາສັກຂີບໍ່ໄດ້ສັນນີ້ ຈັກເອົາອັນອື່ນມາຕັດກໍເປັນອັນຍາກດາຍ ຄວນເອົາກຳລັງຂາມາຕັດ ໃຫ້ເປັນສັກຂີແຫ່ງຂາເທີ້ນເມື່ອວັນລຸນນັ້ນ ພະຍາກໍໃຊ້ຄົນທັງຫລາຍຫລິ້ນມະໂຫລະສົບ ໂດຍໄນດັ່ງຫລິ້ນເມື່ອກ່ອນ ຄືວ່າຝູງຮູ້ຫລິ້ນອັນໃດ ກໍໃຫ້ເຂົາຫລິ້ນຕາມໃຈມັກອັນເຂົາຮູ້ນັ້ນແລ ເມື່ອນັ້ນ ພະຍາກໍໃຫ້ຂາປ້ຳກັນຫລິ້ນທັ້ນແລ ເມື່ອຂາປ້ຳກັນນັ້ນ ຜູ້ໜຶ່ງແພ້ທັ້ນແລ ພະຍາກໍເຫັນແລ້ວຈິ່ງກ່າວວ່າ ຊາຕິໂຈນ

ແລະ ຄົນດີກຸມກັນນີ້ ຜິວ່າໂຈນແຮງແທ້ກໍສ່ວນວ່າຈັກພົ້ນຈາກມືຄົນດີແລ ອັນນີ້ຄົນດີແຮງຈຶ່ງກຸມໂຈນໄດ້ດາຍ ເຫດວ່າມັນມີກຳລັງແຮງແພ້ໂຈນບໍ່ປ່ອຍແທ້ດີຫລີແລ ຄົນທັງຫລາຍວ່າ ກໍຫາກເປັນດັ່ງມະຫາຣາຊະເຈົ້າວ່າແທ້ແລ ພະຍາຈຶ່ງຖາມຜູ້ປ້ຳບໍ່ແພ້ນັ້ນວ່າ ດູລາທ່ານມຶງ ເປັນໂຈນລັກໄກ່ທ່ານແທ້ລື ມັນກໍຂານດ້ວຍຄຳຊື່ວ່າ ຂ້າກໍໄດ້ລັກແທ້ແລ ວ່າດັ່ງນັ້ນ ພະຍາຈຶ່ງໃຫ້ໄໝຕາມໂທດມັນແລ ຄຳອັນຫາສັກຂີ ບໍ່ໄດ້ສັນນີ້ ບຸກຄະລະຜູ້ມີປຸະຫຍາ ເພິ່ງພິຈາລະນາດູຕາມກຳອັນເປັນວິໄສແຫ່ງວັດຖຸຄຳໃຫ້ແຈ້ງໃຫ້ເປັນສັກຂີສັນນີ້ແລ້ວ ຈຶ່ງຕັດເທີ້ນ ຫາຍຄຳສົງກາແລ

ເລົ່າຍັງມີພານຜູ້ໜຶ່ງ ໄປໄກນາແລ້ວກໍແລ່ງງົວໄວ້ຍັງຍົນໃຫ້ກິນຫຍ້າຢູ່ ແລະ ເຫດວ່າຫາຄົນລ້ອງບໍ່ໄດ້ແລ ຍັງມີຊາຍຜູ້ງານມັກກໍມາຟັນຍົນລ້ອງງົວນັ້ນເສັຽ ເຈົ້າງົວເຫັນບໍ່ຍອມຈຶ່ງໄປໄຫວ້ເສນາໄຕ່ ເສນາໄຕ່ບໍ່ໄດ້ ຈຶ່ງພາຂາໄປໄຫວ້ພະຍາ ກ່າວກົດຈະທັງມວນແກ່ພະຍາ ແລ້ວພະຍາກໍຕັດວ່າ ໃຫ້ຜູ້ຟັນຍົນລ້ອງງົວນັ້ນໃຊ້ຄ່າເປັນໝື່ນທຶກພັນຮ້ອຍເບັ້ຽແລ ຍົນລ້ອງງົວນັ້ນ ກໍສະເໝີດັ່ງຂ້ອຍຄົນລ້ອງນັ້ນແທ້ດີຫລີດາຍ ເຫດດັ່ງນັ້ນ ຈຶ່ງໃຫ້ມັນໃຊ້ໝື່ນທຶກພັນທຶກຮ້ອຍເບັ້ຽ ເປັນເຄິ່ງຄ່າຂ້ອຍເພື່ອອັນນັ້ນແລ. ເຫດວ່າຫາວິນຍານບໍ່ໄດ້ແລຕັດຄຳສັນນີ້ ສຸຄະຕິແລ.

ຍັງມີພານຜູ້ໜຶ່ງ ມັນກະທຳພະລີກຳ ຄືວ່າ ບູຊາເທວະດາເຮືອນນັ້ນ ມັນກະທຳກົດໝາຍຍັງເສົາເຮືອນໄວ້ໃຫ້ເປັນເສົາກຳເສົາໜຶ່ງທັ້ນແລ ຍາມນັ້ນຍັງມີງົວຊາວບ້ານຕົວໜຶ່ງກໍມາຖຸກມາສີເສົາກຳນັ້ນແລ ເມື່ອນັ້ນ ພານຜູ້ເຈົ້າເຮືອນນັ້ນບໍ່ຍອມ ຈຶ່ງພາໄປຫາເສນາຕັດ ເສນາຕັດບໍ່ໄດ້ ຈຶ່ງພາເມືອໄຫວ້ພະຍາກ່າວກົດຈະແກ່ພະຍາທັງມວນ ຮູ້ແລ້ວພະຍາຈຶ່ງກ່າວວ່າ ຕົວໃດຜິດເອົາຕົວນັ້ນ ທີ່ຢ່າຂ້າດາຍບໍ່ດີແລ ເມື່ອບໍ່ໃຫ້ຂ້ານັ້ນ ອະທິບາຍວ່າສັນນີ້ແລ ໃຫ້ທີຄ່າສັດຕົວນັ້ນມາເປັນເຄື່ອງພະລີກຳເທີ້ນ ຈຶ່ງດີດາຍ ຢ່າຂ້າສັດຕົວນັ້ນ ເຫດໃດແລວ່າບໍ່ໃຫ້ຂ້ານັ້ນຈາໂລກທັງຫລາຍນີ້ຫອນຍ່ອມມີຜີເຂັດຕົວນັ້ນ ຄັນວ່າຂ້າສັດຕົວນັ້ນແທ້ ສ່ວນວ່າ ຜີອາຮັກຢູ່ໃນສັດຕົວນັ້ນມັນຫາທີ່ຢູ່ບໍ່ໄດ້ ມັນຈັກມາຢູ່ໃນເສົາເຮືອນນັ້ນດາຍ ຄັນວ່າຜີເຂັດມາຢູ່ໃນເສົາເຮືອນດັ່ງນັ້ນກໍໃຫ້ຈິບຫາຍແລ ເຫດໃດວ່າອັນຈາ ແມ່ນວ່າສັດຕົວໃດກໍດີມາເຮັດເຂັ້ນດັ່ງນັ້ນ ບໍ່ເພິ່ງຂ້າທີ່ເພິ່ງປ່ອຍເສັຽຍັງແຄວນດີກວ່າຂູ້ອັນແລ. ພະຍາຈຶ່ງໃຫ້ເອົາເງິນນຳເຈົ້າງົວເຄິ່ງໜຶ່ງແລ້ວໃຫ້ເປັນເຄື່ອງພະລີກຳເທີ້ນ ເຄິ່ງໜຶ່ງໃຫ້ຄືນແກ່ເຈົ້າງົວເທີ້ນຊອບແລ ເຫດວ່າເຈົ້າງົວບໍ່ໄດ້ບອກມັນມາດາຍ ສັດບໍ່ຮູ້ຫາກກະທຳແລ ພະຍາຈຶ່ງໃຫ້ຄຳສອນແກ່ເສນາວ່າ ແມ່ນວ່າງົວຄວາຍເກືອກເຂົ້າໄຮ່ນາກໍດີ ໃຫ້ແປງຂວັນເທີ້ນ ຢ່າວ່າໃຫ້ເປັນເບັ້ຽເປັນເງິນເທີ້ນ ຜີບໍ່ຍອມກັນແທ້ໃຫ້ນັບຕົ້ນເຂົ້າດູເສັຽທີ່ໃດໃຫ້ຮູ້ແລ້ວ ຈຶ່ງໃຫ້ທັງຫຼາຍພິຈາລະນາຈັກໄດ້ທີ່ໃດ ໃຫ້ແທນເຂົ້າທີ່ນັ້ນເທີ້ນ ເຫດວ່າອາໄສເຊື້ອງົວຄວາຍຈຶ່ງເປັນນາດາຍ ປະການໜຶ່ງຄົນຕຳເຂົ້າ ໄກ່ບິນໄປຕົກຄົກໄດ້ຕຳໄກ່ຕາຍເສັຽດັ່ງນັ້ນ ຜິວ່າເຈົ້າໄກ່ເອົາໄກ່ເມືອກິນດັ່ງນັ້ນ ໃຫ້ເຈົ້າໄກ່ແປງຂວັນເຂົ້າເທີ້ນ ຜິວ່າເຈົ້າໄກ່ບໍ່ກິນດັ່ງນັ້ນ ໃຫ້ເຈົ້າເຂົ້າເອົາໄກ່ຕົວນັ້ນເມືອແປງຂວັນເຂົ້ານັ້ນເທີ້ນ ຢ່າວ່າສັງແກ່ເຈົ້າໄກ່ເທີ້ນ ເຫດວ່າ ໄກ່ຕົວນັ້ນຫາກກະທຳໃຫ້ເປັນເຂັ້ນແລ ຜິວ່າໄກ່ບໍ່ຕາຍດັ່ງນັ້ນ ຢ່າວ່າສັງແກ່ກັນເທີ້ນ ຜິວ່າຊ້ຳຂ້າເສັຽແທ້ບໍ່ດີແລ.

ທີ່ນີ້ ຍັງມີໄກ່ສອງຕົວຢູ່ໃນອາສົມບົດສາລາ ເຈົ້າຣັດສີຕົນໜຶ່ງ ໄກ່ສອງຕົວນັ້ນຟັກໄຂ່ ຊູ່ຕົວຊູ່ວ່າໄຂ່ກູວ່າດັ່ງນີ້ ຂາບໍ່ຍອມກັນຈຶ່ງໄປໄຫວ້ເຈົ້າຣັດສີໃຫ້ພິຈາລະນາທັ້ນແລ ເຈົ້າຣັດສີກ່າວວ່າ ຄໍາອັນນີ້ຫາສັກຂີບໍ່ໄດ້ສັນນີ້ ເມື່ອກູຈັກເອົາອັນອື່ນມາຕັດໃຫ້ເປັນສັກຂີບໍ່ຊອບແລ ຄວນກູເອົາວິໄສແຫ່ງຂາມາຕັດໃຫ້ເປັນສັກຂີຊອບແລ, ເປັນອັນຫາມະລະມຶນທຶນບໍ່ໄດ້ແລ ເຈົ້າຣັດສີເອົາວິໄສແຫ່ງໄກ່ມາເປັນສັກຂີສັນນີ້ ຊາຕິໄກ່ທັງຫລາຍ ເມື່ອໄຂ່ມັນສຸດແລ້ວຈຶ່ງຟັກນັ້ນ ຈຶ່ງຢູ່ເທິງແລ ເຫດວ່າຮວາຍໄຂ່ນັ້ນບໍ່ມີ ໄສ້ນັ້ນກໍຕັນ ມັນຟັກໄຂ່ບໍ່ຢາກເຂົ້າບໍ່ຢາກນໍ້າ ມັນກັ້ນອາຫານໄດ້ແລ ວັນໜຶ່ງອອກຮັງ ແລະເທື່ອແລ ສອນດັ່ງຕົວບໍ່ຟັກນັ້ນ ໄສ້ມັນໂກນ ມັນຕ້ານອາຫານບໍ່ໄດ້ແລ ທໍ່ເວັ້ນໄວ້ແຕ່ກາງຄືນນອນຫລັບມັນຈຶ່ງບໍ່ຄວ່າຫາກິນແລ ເຈົ້າຣັດສີກໍຮູ້ດັ່ງນີ້ແລ້ວ ຈຶ່ງໃຫ້ຕົວໜຶ່ງໄປຟັກດູກ່ອນທັ້ນແລ ໄກ່ຕົວນັ້ນຟັກຢູ່ບໍ່ນານທໍ່ໃດກໍອອກໄປຫາກິນ ແລະວັນລະທ້າເທື່ອທິກເທື່ອທັ້ນແລ ເຈົ້າຣັດສີກໍຊອມຢູ່ທັ້ນແລ ເຈົ້າຣັດສີພັດເລົ່າໃຫ້ໄກ່ຕົວໜຶ່ງໄປຟັກທັ້ນແລ ໄກ່ຕົວນັ້ນຟັກໄຂ່ ວັນໃດອອກຮັງແລະເທື່ອທັ້ນແລ ເຈົ້າຣັດສີຈຶ່ງກ່າວວ່າໄກ່ຕົວຟັກກ່ອນນັ້ນ ມັນອອກຮັງວັນລະທ້າເທື່ອ ທິກເທື່ອບໍ່ໃຊ່ເຈົ້າໄຂ່ແລ ໄກ່ຕົວຟັກໄຂ່ອອກຫາກິນວັນລະເທື່ອນີ້ ແມ່ນເຈົ້າໄຂ່ແທ້ແລ. ເຈົ້າຣັດສີຮູ້ດັ່ງນີ້ແລ້ວ ຈຶ່ງຕັດວ່າໃຫ້ເປັນໄຂ່ແກ່ຕົວຟັກອອກຮັງໄປຫາກິນວັນລະເທື່ອນັ້ນແລ ເຈົ້າຣັດສີຕັດຄໍາສັນນີ້ ສຸຄະຕິຄະມະນະແທ້ແລ.

ເລົ່າຍັງມີມານະວະຜູ້ໜຶ່ງ ຢູ່ໃນບ້ານນິຄົມທີ່ໜຶ່ງ ກາລະອັນໜຶ່ງ ເກີງລະດູໝາກມ່ວງເປັນລູກນັ້ນ ມານະວະຜູ້ນັ້ນກໍໄປຄວ່າສະແຫວງຫາໝາກມ່ວງມາກິນ ມັນກໍໄປເຫັນໄມ້ມ່ວງຕົ້ນໜຶ່ງເປັນລູກງາມນັກ ມັນຈຶ່ງຂຶ້ນເອົາເກາະບໍ່ໝັ້ນກໍພະລາດຕົກຕົ້ນມ່ວງ ມັນຈຶ່ງຄວາມີເກາະກິ່ງໜຶ່ງໄວ້ ແລ້ວກໍແຂວນຢູ່ທັ້ນແລ ຍາມນັ້ນຍັງມີຄວານຊ້າງຜູ້ໜຶ່ງໄປລ້ອງຊ້າງ ແລະ ມານະວະຜູ້ແຂວນກິ່ງໄມ້ມ່ວງນັ້ນເຫັນ ແລ້ວກໍເອີ້ນວ່າ ດູລາເຈົ້ານາຍຊ້າງ ເຈົ້າຈິ່ງຂີ່ຊ້າງມາເອົາຂ້າແດ່ ຂ້າກໍຈັກໃຫ້ຄໍາຮ້ອຍໜຶ່ງແລ ວ່າດັ່ງນັ້ນຄວານຊ້າງໄດ້ຍິນກໍໄຄ່ໄດ້ຄໍາຮ້ອຍນັ້ນ ມັນກໍໄສຊ້າງມາເອົາແທ້ແລ ຄວານຊ້າງນັ້ນຢູ່ຄໍຊ້າງຈັກເອົາກໍບໍ່ເຖິງ ຈຶ່ງລຸກຢືນເໜືອຄໍຊ້າງຢື້ເອົາຕີນມັນລອດໄສຊ້າງຕົວນັ້ນມັນກໍໄວ້ໃຈວ່າ ຄວາມໄສມັນໄປ ຊ້າງຕົວນັ້ນກໍຜູດໄປໜ້າເສີອຄວານຊ້າງຢ້ານຕົກ ກໍຢຸບເອົາແຄ່ງມານະວະຜູ້ແຂວນກິ່ງໄມ້ມ່ວງນັ້ນ ແລ້ວຂາກໍແຂວນກັນຢູ່ທັ້ນແລ ຍາມນັ້ນພານປ່າຜູ້ໜຶ່ງ ໄປແອ່ວປ່າກໍໄປເຖິງທີ່ນັ້ນທັ້ນແລ ເມື່ອນັ້ນຄວານຊ້າງກໍເອີ້ນວ່າ ດູລາເຈົ້ານາຍພານ ທ່ານຈິ່ງມາເອົາເພື່ອລີງແດ່ຫາກຈັກໃຫ້ຄໍາຮ້ອຍໜຶ່ງແລ ວ່າດັ່ງນັ້ນພານປ່າຜູ້ນັ້ນກໍໄຄ່ໄດ້ຄໍາຮ້ອຍນັ້ນ ມັນກໍໄປຕັດໄມ້ມາກະທໍາໃຫ້ເປັນເກີນ ມາກ່າຍເອົາຄວານຊ້າງກັບທັງມານະວະຜູ້ນັ້ນລົງ ແລ້ວພານກໍຖາມເອົາຄໍາຮ້ອຍນັ້ນດອມຂາ ຂາກໍໜຶ່ງກັນວ່າ ຊູ່ຄົນຊູ່ວ່າຈັກເອົາຄໍາແຫ່ງກັນ ອອກໃຫ້ພານປ່າຜູ້ນັ້ນທັ້ນແລ ພານປ່າເອົາຂາສອງຄົນນັ້ນໄປໃຫ້ເສນາໄຕ່ ແລະ ພິຈາລະນາດູທັ້ນແລ ພະຍາຮູ້ເຫດອັນນັ້ນແລ້ວ ຈຶ່ງຕັດຕາມປະໜຍາແຫ່ງຕົນວ່າ ຄວານຊ້າງມີການກັບໂຕມັນ ຫາກມີດ້ວຍເອົາຊ້າງໄປລ້ອງນັ້ນແລ ມັນເລົ່າມີໃຈໂລພາໄຄ່ໄດ້ສິນຈ້າງທ່ານມັນກໍບໍ່ພິຈາລະນາດູກໍ່ ບໍ່ຄຶດວ່າສັດບໍ່ເປັນດັ່ງຫົວໃຈຄົນ ມັນເລົ່າລຸກຢືນເໜືອຄໍຊ້າງ ຊ້າງຈຶ່ງຜູດໄປແລ ມັນຈຶ່ງແຂວນແຄ່ງທ່ານຢູ່ໄຄ່ໄດ້ສິນຈ້າງຂອງທ່ານ ມັນບໍ່ພິຈາລະນາດູກໍ່ ມັນຈຶ່ງໄດ້ໄປອາ

ໄສເຊິ່ງແກ່ງມານະວະຜູ້ນັ້ນຈຶ່ງມີຊີວິດດາຍ ມັນກິນຈ້າງທ່ານ ກໍລອດເລົ່າມາໃຫ້ມານະວະຜູ້ນັ້ນ ຊ້ຳເກິງທຸກຂະເວທະນະມາກນັກສັນນີ້ ພະຍາຈຶ່ງປັນຄຳຮ້ອຍນັ້ນໃຫ້ເປັນສາມສ່ວນ ຈຶ່ງໃຫ້ຄວານຊ້າງເສັອສອງສ່ວນມານະວະຜູ້ນັ້ນເສັອສ່ວນໜຶ່ງແລ ເພື່ອວ່າມັນມາອາໄສເຊິ່ງນາຍຄວານຊ້າງ ອັນກ່າວວ່ານາຍພານປ່າຈຶ່ງມາເອົາເຫືອຂ້າລຶງແດ່ເຫີ້ນວ່າອັນແລ ນາຍພານປ່າຈຶ່ງເອົາເກີນມາກ່າຍເອົາ ຈຶ່ງມີຊີວິດຍ້ອນພານປ່າແລ ເຫດດັ່ງນັ້ນ ນາຍຊ້າງຈຶ່ງໄດ້ເສັອສອງທໍ່ເພື່ອອັນແລ ພະຍາຕັດຄຳສັນນີ້ ສຸຄະຕິແລ.

ເລົ່າຍັງມີພານຜູ້ໜຶ່ງ ໄປທ່ອງວສະແຫວງຂໍເຂົ້າຂອງເງິນຄຳທ່ານນານນັກ ຈຶ່ງມາໄດ້ຄຳພັນໜຶ່ງເລົ່າຫາກົງຈັກໃສ່ຄຳບໍ່ໄດ້ແລ ຍັງມີວັນໜຶ່ງ ພານຜູ້ນັ້ນມັນຫາກເວົ້າກັບຕົວມັນວ່າ ອາດຕະມານີ້ ມີຄຳພັນໜຶ່ງແລ້ວຫາຜ້າຈັກມາເປັນກົງໃສ່ຄຳໄວ້ບໍ່ໄດ້ນໍ ດັ່ງລື ອາດຕະມາຈັກຫາຜ້າ ໄດ້ພໍຫຍິບກົງໃສ່ຄຳໄວ້ນີ້ຈາ ວ່າດັ່ງນັ້ນ ຫຼວທາງມາບໍ່ຫລຽວຫລັງ ຍັງມີຊາຍຜູ້ໜຶ່ງໄປຕາມຫລັງ ໄດ້ຍິນພານຜູ້ນັ້ນມັນກໍຄະນຶງໃນໃຈວ່າ ອາດຕະມາ ຈັກພິປອງເອົາເຂົ້າຂອງຊາຍຜູ້ນີ້ໃຫ້ຈິງໄດ້ ຄະນຶງໃນໃຈວ່າດັ່ງນີ້ແລ້ວ ມັນຈຶ່ງແວໜີໄປທາງອື່ນ ພານຜູ້ນັ້ນມັນເຫັນແລ້ວຈຶ່ງແລ່ນໄປພາຍໜ້າທີ່ພານຜູ້ນັ້ນຈັກໄປນັ້ນແລ້ວ ມັນຈຶ່ງຕັດຜ້າມັນເປັນມົນທົນກວ້າງໄດ້ສອກໜຶ່ງເປັນສີ່ແຈ່ງ ກໍໄວ້ຕົນທາງພັ້ນແລ້ວ ມັນກໍລີ້ລັບຢູ່ທີ່ໜຶ່ງພັ້ນແລ ເມື່ອພານຜູ້ນັ້ນໄຕ່ທາງມາຮອດເຫັນຜ້າເປັນມົນທົນກວ້າງສີ່ແຈ່ງນັ້ນແລ້ວ ມັນກໍບາຍເອົາແລ້ວກໍມີໃຈຍິນດີມາກນັກ ດ້ວຍຄຳວ່າ ອາດຕະມານີ້ ມີບຸນມາກຍິ່ງຈຶ່ງໄດ້ຜ້າແລ ວ່າດັ່ງນີ້ແລ້ວ ຈຶ່ງເອົາຜ້າອັນນັ້ນພົກຄຳໄວ້ ຫຼວທາງໄປວັນຄ່ຳແລ ເມື່ອນັ້ນ ຊາຍລັກຜູ້ນັ້ນມັນກໍຊອມພານຜູ້ນັ້ນໄປພັ້ນແລ ເມື່ອລະດູພິຍາມນອນພານຜູ້ນັ້ນກໍເຂົ້າໄປຈອດນິຄົມທີ່ໜຶ່ງ ເຈົ້າບ້ານກໍໃຫ້ພານນອນສາລາທີ່ໜຶ່ງພັ້ນແລ ຊາຍລັກຜູ້ນັ້ນມັນກໍເຂົ້າໄປນອນນຳພານພັ້ນແລ ເກິງຍາມຈັກໃກ້ຮຸ່ງ ຊາຍລັກຜູ້ນັ້ນກໍສ້າແດງຮ້ອງໄອໄລເອີ້ນປ່າວບ້ານວ່າ ຂ້ານີຄຳພັນໜຶ່ງພົກຜ້າມາໄວ້ໂຈນມາລັກເອົາເສັອແລວ່າອັນ ເຈົ້າບ້ານກໍໄຕ້ໄຟມາຊອກດູກໍໄດ້ຄຳພັນໜຶ່ງພົກນັ້ນກັບມີພານແລ ເຂົາເຫັນຜ້າພົກຄຳອັນນັ້ນ ແລະຜ້າຊາຍຜູ້ນັ້ນເປັນເນື້ອດຽວກັນແທ້ແລ ຊາຍຜູ້ລັກນັ້ນກ່າວວ່າ ພານຜູ້ນີ້ເປັນໂຈນມາລັກປາດຜ້າເອົາຄຳແລ ວ່າດັ່ງນີ້ ຂາບໍ່ຍອມກັນ ຈຶ່ງພາກັນເອົາເຈົ້າບ້ານໄປເປັນສັກຂີໃຫ້ ໃຫ້ເສນາພິຈາລະນາ ເສນາໄຕ່ບໍ່ກ້ອງ ຈຶ່ງພາໄປໄຫວ້ພະຍາກ່າວກິດຈະທັງມວນແກ່ພະຍາ ພະຍາໄດ້ຍິນຄຳອັນນັ້ນແລ້ວ ກໍຮູ້ແຈ້ງວ່າຊາຍຜູ້ນີ້ລັກຄຳພານແທ້ແລ ພະຍາກໍຖາມຊາຍຜູ້ລັກນັ້ນວ່າ ມຶງລຸກແຕ່ທີ່ໃດມາຈາ ຄຳພັນນີ້ມຶງໄດ້ແຕ່ທີ່ໃດມາຈາ ຊາຍຜູ້ລັກນັ້ນວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຂ້ານີ້ເກີດວົງສາອັນໜຶ່ງ ຢູ່ໃນເມືອງສາວະກີນະຄອນພຸ້ນພໍ່ແມ່ແຫ່ງຂ້າກໍຕາຍເສັອ ຈຶ່ງໄດ້ຄຳພັນໜຶ່ງແກ່ຂ້າແລ ຂ້າກໍຍິນດີເຊິ່ງບ້ານເມືອງມະຫາຣາຊະເຈົ້າຈຶ່ງຕະເດີນມາ ເພື່ອວ່າຈັກຊື້ເອົາຂອງວິເສດເມືອຂາຍເມືອງຂ້າຢູ່ພຸ້ນ ຂ້າມາຮອດນິຄົມບ້ານທີ່ໜຶ່ງ ເຈົ້າບ້ານໃຫ້ຂ້ານອນກວ້ານຈອດເຫັນທ່ານພານຜູ້ນັ້ນມາຈອດກ່ອນຂ້າແລ ເມື່ອຂ້າທັງສອງນອນສາລາທີ່ດຽວກັນ ນອນບໍ່ທັນຮຸ່ງທ່ານພານຜູ້ນີ້ກໍມາລັກຕັດເອົາພົກຄຳຂ້າເສັອ ຂ້າກໍຄຳດູບໍ່ເຫັນທີ່ໃດຂ້າຈຶ່ງຮ້ອງເຈົ້າບ້ານໄຕ້ໄຟມາຊອກດູ ກໍໄດ້ພົກຄຳນີ້ກັບມີພານຜູ້ນີ້ແລ ເມື່ອນັ້ນພະຍາຖາມພານວ່າ ຄຳພັນນີ້ມຶງໄດ້ແຕ່ທີ່

ໃດມາຈາ ພານຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຂ້ານີ້ຫາກເປັນພານຢູ່ໃນເມືອງມະຫາຣາຊະເຈົ້ານີ້ແລ ຄຳພັນນີ້ ຂ້າກໍຄວ່າສະແຫວງຂໍນານນັກຈິ່ງໄດ້ ແລະແຫ່ງແລະນ້ອຍຂ້າກໍຮິບຮອມຫອມຍັບໄວ້ຈິ່ງໄດ້ພໍພັນແລ ເມື່ອຂ້າຫຼົງທາງມານັ້ນ ຂ້າຫາກເວົ້າຜູ້ດຽວຂ້າວ່າ ອາດຕະມາມີຄຳພັນໜຶ່ງ ຫາຜ້າຈັກພິກຈັກທີ່ໃຫ້ເປັນກິງໃສ່ຄຳໄວ້ກໍບໍ່ໄດ້ນໍ ວ່າດັ່ງນີ້ແລ້ວ ຂ້າຈິ່ງໄປພາຍໜ້າກໍຈິ່ງໄດ້ຜ້າຜືນໜຶ່ງ ກວ້າງສອກໜຶ່ງເປັນມິນທິນສີ່ແຈ່ງ ຂ້າກໍເອົາພິກຄຳຂ້ານີ້ຫໍ່ດີໄວ້ແລ້ວ ກໍຫຼົງທາງວັນຄ່ຳ ກໍຈິ່ງມາເຖິງບ້ານທີ່ໜຶ່ງຂ້າກໍຈິ່ງນອນ ເຈົ້າບ້ານກໍໃຫ້ຂ້ານອນສາລາກວ້ານຈອດທັ້ນແລ ຢູ່ໜ້ອຍໜຶ່ງບໍ່ນານທໍ່ໃດ ທ່ານຊາຍຜູ້ນີ້ກໍມາຈອດນອນດອມຂ້າທັ້ນແລ ບໍ່ທັນຮຸ່ງ ຊາຍຜູ້ນີ້ກໍຮ້ອງວ່າເສັຽພິກຄຳ ຜູ້ໃດມາຕັດເອົາບໍ່ຮູ້ວ່າດັ່ງນີ້ແລ້ວ ກໍເອີ້ນປ່າວ ເຈົ້າບ້ານຮູ້ເມື່ອຈິ່ງໄຕ້ໄຟມາຊອກດູຈິ່ງເຫັນຄຳແຫ່ງຜູ້ຂ້ານີ້ ຈິ່ງໄດ້ພິກຄຳກັບມີຜູ້ຂ້າຈິ່ງວ່າຂ້າເປັນໂຈນ ວ່າດັ່ງນັ້ນດາຍ ພະຍາກໍຖາມເຈົ້າບ້ານ ເຈົ້າບ້ານກໍເລົ່າຕາມເຫດອັນມີແກ່ພະຍາຊູ່ອັນທັ້ນແລ ພະຍາກໍໃຫ້ເອົາຜ້າພິກຄຳກັບທັງຜ້ານຸ່ງມາທຽມກັນດູ ກໍເປັນເນື້ອດຽວກັນສະເໝີກັນຊູ່ອັນທັ້ນແລ ພະຍາກໍຖາມຂາທັງສອງດ້ວຍປະຣິຍາຍຫລາຍອັນນັກແລ ກໍຫາສັກຂີບໍ່ໄດ້ດັ່ງນັ້ນ ພະຍາກໍຮ່ຳເພິງວ່າເຮົາພະອິງຈະເອົາຄວາມມາຕັດບໍ່ຄວນແລ ອາດຕະມາ ກໍເພິງເອົາວັດຖຸມາທຽມໃຫ້ເປັນສັກຂີແກ່ຄວາມອັນນີ້ຄວນແລ ຍາມນັ້ນ ພິກຄຳນັ້ນພະຍາກໍມາໄວ້ແກ່ເສນາຜູ້ຍໍຄວາມມາກ່ອນພະຍາທີວທີ່ນັ້ນແລ້ວ ພະຍາພັດເລົ່າຖາມ ດ້ວຍປະຫຍາຄຳພິລະເລີກແລບເຊິ່ງຊາຍລັກຜູ້ນັ້ນວ່າ ຄຳມຶງມີກີ່ສຽນຈາ ມັນກໍລ່າຍພະຍາວ່າ ຄຳຂ້ານີ້ສິບສຽນແລ ແລະສຽນນັ້ນມີສິບບາດແລວ່າດັ່ງນັ້ນ ພະຍາກໍຖາມພານສັນດຽວນັ້ນແລ ພານຂານວ່າ ຄຳຂ້າມີສິບສອງສຽນແລະ ສຽນສິບບາດນັ້ນມີແປດສຽນ ສຽນຫ້າບາດມີສອງສຽນແລວ່າດັ່ງນີ້ ແລ້ວພະຍາກໍໃຫ້ເອົາພິກຄຳນັ້ນມາໄຊດູ ກໍເຫັນຄຳພັນນັ້ນ ມີສິບສອງສຽນ ດັ່ງຄຳມັນວ່ານັ້ນແທ້ທັ້ນແລ ພະຍາຈິ່ງເວົ້າຊາຍຂີ້ລັກຜູ້ນັ້ນວ່າ ມຶງຫາກກະທຳກົນເອົາພິກຄຳທ່ານແທ້ແລ ມຶງຫາກຕັດຜ້ານຸ່ງມຶງໄວ້ກາງທາງ ທ່ານພານຜູ້ນີ້ຫຼົງທາງມາເຫັນ ຈິ່ງເອົາຜ້າພິກຄຳນັ້ນໄວ້ດາຍ ພະຍາວ່າດັ່ງນີ້ແລ້ວເມື່ອນັ້ນຊາຍຂີ້ລັກຜູ້ນັ້ນມັນກໍຫາອັນຈັກກອງພະຍາບໍ່ໄດ້ ມັນກໍຂານວ່າ ກໍຫາກມີດັ່ງມະຫາຣາຊະເຈົ້າວ່າດັ່ງນັ້ນຊູ່ອັນກໍຂ້າແລ ຜູ້ຂ້າກໍຮູ້ວ່າຄຳທ່ານຜູ້ນີ້ມີພັນໜຶ່ງ ຜູ້ຂ້າກໍໄຄ່ໄດ້ກໍຈິ່ງຜິປອງກະທຳສັນນີ້ແລ ພະຍາກໍຕັດສິນໄໝໃສ່ມັນເປັນພັນຄຳແກ່ຊາຍຜູ້ລັກນັ້ນໃຫ້ແກ່ພານນັ້ນແລ. ລັກວັດຖຸອັນໃດກໍດີ ຄ່າມີທໍ່ໃດ ໃຫ້ໄໝທໍ່ນັ້ນເທີ້ນ ຢ່າໃຫ້ໄໝຕາມໂທດອັນລັກນັ້ນເທີ້ນ ເມື່ອພະຍາຕັດໂທດໃສ່ຊາຍລັກນັ້ນ ມັນກໍບໍ່ມີອັນເສັຽໂທດ ພະຍາກໍໃຫ້ມັນມາເປັນຂ້ອຍພານຕາບຕໍ່ເທົ້າຊີວິດທັ້ນແລ ພະຍາຕັດຄຳສັນນີ້ເປັນສຸຄະຕິແລ ນັກປາດທັງຫລາຍ ຈິ່ງຈື່ຈຳນຳໄວ້ໃຫ້ເປັນທີ່ແທກທຽມເທີ້ນ ວັດຖຸເຍື່ອງໃດກໍດີ ພິວ່າເຮັດເໝືອນດັ່ງກ່າວມານີ້ ຄັນວ່າເຂົາເອົາວັດຖຸເຖິງກວ້ານທີ່ພິຈາລະນາຄຳດັ່ງນັ້ນ ຜູ້ພິຈາລະນາເພິງເອົາວັດຖຸເຂົ້າຂອງນັ້ນມາໄວ້ພະລັນເທີ້ນ ຢ່າທັນໃຫ້ຂາທັງສອງເຫັນເທີ້ນ ແລ້ວຈິ່ງພິຈາລະນາຕັດໃຫ້ແມ່ນເທີ້ນອັນໜຶ່ງ ຄຳຄວນເປັນລະຫັດບໍ່ເພິງຈາກໍຢ່າຈາ ເທົ່າເພິງໄວ້ໃນໃຈຕົນແລ ພິວ່າມັກຈາແທ້ ກໍໃຫ້ຫລິງດູທິດສາສິບດ້ານແລ້ວ ຄວນຈາຈິ່ງຈາເທີ້ນ ບໍ່ຄວນຈາຈິ່ງໄວ້ໃນໃຈເທີ້ນ ພິວ່າບໍ່ຫລິງດັ່ງນັ້ນຄຳຄວນເປັນໂທດກໍຈັກເປັນໂທດ ແລະຄຳຄວນເສັຽກໍຈັກເສັຽ ເປັນດັ່ງພານຜູ້ນີ້ແລ ນັກປາດທັງຫລາຍຈິ່ງຈື່ຈຳໄວ້ເປັນທີ່ທຽມເມືອ

ໜ້າເທີ້ນ.

ເລົ່າຍັງມີ ເສດຖີຜູ້ໜຶ່ງຊື່ວ່າ ລຸດທະເສດຖີ ຢູ່ໃນບ້ານໃຫຍ່ທີ່ໜຶ່ງ ເສດຖີຜູ້ນັ້ນກໍໃຫ້ຄົນໄປປີ້ງຊີ້ນໃນໂຮງຄົວມາກິນ ຊີ້ນປີ້ງສຸກແລ້ວກໍມີຣົດສາອັນຫອມມາກນັກແລ ຍາມນັ້ນ ຍັງມີຊາຍຜູ້ໜຶ່ງ ມັນຫລອຫາງກໍຈອດສາລາອັນໜຶ່ງ ໃກ້ເຮືອນຄົວອັນເສດຖີໃຫ້ຄົນປີ້ງຊີ້ນທັ້ນແລ ຊາຍຜູ້ນັ້ນມັນກິນເຂົ້າມັນຫາອາຫານຈະກັບບໍ່ໄດ້ ຍາມນັ້ນລົມກໍມາພັດຄັນທະກິ່ນຊີ້ນປີ້ງນັ້ນໄປກຸ້ກຕ້ອງຊາຍນັ້ນ ເມື່ອມັນກິນເຂົ້ານັ້ນ ມີແຕ່ເຂົ້າຫາອາຫານບໍ່ໄດ້ ມັນກໍກະສັນດ້ວຍກິ່ນອາຍແຫ່ງປີ້ງຊີ້ນນັ້ນມັນກໍໄຄ່ກິນກັບເຂົ້າມັນ ມັນກໍປັ້ນເຂົ້າໃຫ້ເປັນຄໍາ ແລ້ວກໍແກວ່ງເອົາຣົດສະອາຍຊີ້ນນັ້ນໄປກິນວ່າອາດຕະມາກິນເຂົ້າກັບອາຍຊີ້ນປີ້ງນີ້ລໍາແທ້ນໍ ວ່າດັ່ງນີ້ ເສດຖີຜູ້ນັ້ນໄດ້ຍິນ ມັນບໍ່ຍອມ ວ່າຊາຍຜູ້ນີ້ມາລັກກິນອາຍຊີ້ນປີ້ງແຫ່ງເຮົາເສັ້ງສັງຈາ ເສັ້ງຣົດສະຊີ້ນກູແລ ວ່າດັ່ງນີ້ແລ້ວຈິ່ງພາໄປໃຫ້ເສນາໄຕ່ ເສນາກໍຕັດບໍ່ໄດ້ ຈິ່ງພາໄປໄຫວ້ພະຍາກ່າວກິດຈະທັງມວນໃຫ້ພະຍາຊູ່ອັນແລ້ວ ພະຍາຈິ່ງຕັດຕາມປະທຍາແຫ່ງຕົນດັ່ງນີ້ວ່າ ໃນເມື່ອຄໍາລຸດທະມຸກຂະເສດຖີກ່າວນີ້ ກໍສະເໝີດັ່ງຈັກເປັນໂທດແກ່ຊາຍຜູ້ນັ້ນແທ້ທັ້ນແລ ທີ່ແທ້ຊາຍຜູ້ນັ້ນກໍ່ເປັນລະຫຸບໍ່ເພິ່ງຈະໃຫ້ໃສ່ໂທດແກ່ມັນດາຍເປັນເປົານັກແລ ພະຍາກໍເອົາສັດຈະວາຈາ ກູຈັກພິຈາລະນາໃຫ້ເຂືອ ເຂືອຈັກເອົາຄວາມເຮົາບໍຈາຂາທັງສອງກ່າວວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຈັກຕັດສິ່ງໃດ ເພື່ອຂ້າກໍຈັກເອົາແລວ່າດັ່ງນີ້ທີ່ນັ້ນພະຍາກໍອຸບາຍຕັດດ້ວຍຄໍາວ່າດັ່ງນີ້ ພະຍາກໍໃຫ້ຊາຍຜູ້ນັ້ນເອົາຄໍາອອກມາຮ້ອຍໜຶ່ງ ມາແຂວນໄວ້ຊ່ອງໜ້າແວ່ນ ແລ້ວພະຍາກໍໃຫ້ເສດຖີເຈົ້າຊີ້ນປີ້ງໄປເອົາຄໍາຮ້ອຍນັ້ນໃນໜ້າແວ່ນທັ້ນແລ ເມື່ອນັ້ນເສດຖີເອົາເງົາຄໍາບໍ່ໄດ້ດັ່ງນັ້ນ ກໍເປັນອັນຍິນອາຍມາກນັກແລ ພະຍາກ່າວວ່າຜີວ່າທ່ານເສດຖີເອົາເງົາຄໍາໃນໜ້າແວ່ນບໍ່ໄດ້ດັ່ງນັ້ນ ອັນນັ້ນແລມີດ້ວຍປະການສັນໃດ ຊາຍຜູ້ນັ້ນມັນເອົາປັ້ນເຂົ້າແກວ່ງເອົາຣົດສະອາຍຊີ້ນປີ້ງແຫ່ງທ່ານນັ້ນ ກໍເປັນດັ່ງນັ້ນແລ ສ່ວນອັນວ່າຊາຍຜູ້ນັ້ນມັນກໍໄຄ່ກິນຊີ້ນປີ້ງແຫ່ງທ່ານແທ້ແລ ທີ່ແທ້ມັນບໍ່ໄດ້ກິນທໍ່ແຕ່ສູບເອົາຣົດສະເປົ່າດາຍແທ້ດີຫລີແລ ອັນທ່ານເສດຖີໄຄ່ຢາກໄດ້ຄໍາອັນນີ້ໃນໜ້າແວ່ນ ແລະຢຸບເອົາບໍ່ໄດ້ນັ້ນແລຄໍາສອງປະການນີ້ກໍສະເໝີກັນແລ ຢ່າວ່າສັ້ງແກ່ກັນເທີ້ນ ພະຍາກໍຄືນຄໍາຮ້ອຍນັ້ນແກ່ຊາຍຜູ້ນັ້ນດັ່ງເກົ່າແລ້ວ ຂາກໍໜີໄປສູ່ທີ່ຢູ່ແຫ່ງຂາແລ ຕັດຄໍາສັນນີ້ສຸກະຕິແລ.

ທີ່ນີ້ ຈັກກ່າວຕໍານານລັກເອົາເມັຽທ່ານແລ ຍັງມີມານະວະຊາຍໜຸ່ມຜູ້ໜຶ່ງ ມັນໄປຄ້າໄປ່ທັ້ນມາ ເມັຽຢູ່ບ້ານມີຊູ້ໄຄ່ຢາກໄດ້ກັນນັກ ຂາກໍໄປແອ່ວຫາຄົນຕາຍອັນທ່ານທອດເສັ້ຽ ໃນປ່າຊ້າຜີດິບໄດ້ແລ້ວ ຂາກໍເອົາມານອນໄວ້ໃນທີ່ນອນຜູ້ຍິງ ເອົາຜ້າຜູ້ຍິງນັ້ນປົກໄວ້ ກໍເໝືອນດັ່ງຕົວມັນແລ້ວ ຂາກໍພາກັນໜີໄປທີ່ອື່ນພຸ້ນແລ ເມື່ອວັນລຸນຮຸ່ງເຊົ້າ ພໍ່ແມ່ຜູ້ຍິງມາບໍ່ເຫັນມັນກໍຈິ່ງລິງໄປຫລໍ່າຫລິງດູ ໄປຫາໄປນໍາຊູ່ທີ່ຊູ່ແຫ່ງບໍ່ເຫັນ ຈິ່ງເອີ້ນຮອກຫາມັນ ມັນບໍ່ປາກ ເຂົາຈິ່ງຂຶ້ນໄປດູ ກໍເຫັນຊາກຜີນອນຢູ່ກາງທີ່ນອນກໍໄວ້ໃຈວ່າມັນນອນຕື່ນສວາຍ ກໍປຸກມັນ ກໍເລີກຜ້າຫົ່ມນັ້ນອອກເສັ້ຽບໍ່ຕື່ງ ພໍ່ແມ່ທັງສອງວ່າ ລູກຮາເປັນພະຍາດຮ້າຍນັກ ລັກຕາຍເສັ້ຽກາງຄືນເຮົາບໍ່ຮູ້ເມື່ອແທ້ດີຫລີນໍ ຝູງຍາຕິພີ່ນ້ອງເຜົ່າພົງວົງສາເພື່ອນບ້ານຊາວເມືອງເຂົາກໍຮູ້ຊູ່ຄົນ ເຂົາ

ກໍເລີກຊາກສິ່ງສະການຫັ້ນແລ ແຕ່ນັ້ນຢູ່ບໍ່ນານເທົ່າໃດຊາຍຜູ້ເປັນຜົວໄປຄ້າມາແລ້ວ ກໍບໍ່ເຫັນເມັຍມັນ ມັນຈຶ່ງຖາມຫາເມັຍນຳພໍ່ແມ່ມັນເຂົາເລົ່າວ່າ ຕາຍເສັຍແລ້ວແລວ່າດັ່ງນີ້ ມັນກໍທຸກໂສກເສົ້າຫາເມັຍມາກນັກ ກໍໃສ່ໃຈວ່າ ເມັຍມັນຕາຍແທ້ດັ່ງຄຳເຂົາວ່າແທ້ນັ້ນຫັ້ນແລ ຢູ່ບໍ່ນານເທົ່າໃດ ມັນກໍຕະເດີນໄປຄ້າມັນກໍເຫັນເມັຍມັນພາຍຫນ້າພຸ້ນແລ້ວ ມັນກໍແກວດກົດຫມາຍ ຮູ້ວ່າເມັຍມັນແທ້ ມັນກໍກ່າວເຊິ່ງຊາຍຜູ້ນັ້ນວ່າ ມຶງລັກເອົາເມັຍກູມາສັງກວ່ານີ້ຈາວ່າດັ່ງນັ້ນ ຊາຍຜູ້ນັ້ນກ່າວວ່າ ກູລາຊາຍກ່ອຍຮ້າຍ ມຶງຢ່າວ່າດັ່ງນີ້ເນີບໍ່ດີດາຍ ຊາຍຜົວເກົ່ານັ້ນກໍຍັງຄືນວ່າເມັຍມັນແທ້ຫັ້ນແລ ຂາບໍ່ຍອມກັນຈຶ່ງໄປໃຫ້ເສນາໄຕ່ ເສນາໄຕ່ບໍ່ກ້ອງ ຈຶ່ງພາກັນໄປໄຫວ້ພະຍາກ່າວກົດຈະທັງມວນແກ່ພະຍາຮູ້ຊູ່ອັນແລ ພະຍາກໍຮູ້ເຫດອັນນັ້ນແລ້ວ ພະຍາກໍໃຫ້ໄປເອົາພໍ່ແມ່ຜູ້ຍິງມາຖາມດູຫັ້ນແລ ພໍ່ແມ່ຜູ້ຍິງນັ້ນວ່າ ຂ້າໄຫວ້ມະຫາຣາຊະເຈົ້າລູກເພື່ອຂ້າກໍຕາຍເສັຍ ແຕ່ເຮືອນມັນພຸ້ນແລ້ວ ຕູຂ້າຫາກສິ່ງສະການເຜົາມັນເສັຍແລ້ວແທ້ດີຫລີແລ ຮູບໂສມທັງຫລາຍນີ້ເຫມືອນກັນກໍຍັງມີນາ ເມື່ອລູກຂ້າຕາຍເສັຍນັ້ນກໍຍັງມີລູກຍິງນ້ອຍຜູ້ຫນຶ່ງ ກັບຫມາໂຕຫນຶ່ງເພື່ອຂ້າກໍຍັງເອົາເມືອໄວ້ເຮືອນເພື່ອຂ້າຫັ້ນແລ ເມື່ອນັ້ນພະຍາກ່າວວ່າ ຄຳອັນນີ້ຫລາກແທ້ນໍ ເພິ່ງອັດສະຈັນແທ້ນໍ ວ່າດັ່ງນັ້ນແລ້ວພະຍາກໍໃຫ້ຂາເມືອກ່ອນຫັ້ນແລ ພະຍາກໍຈາກັບເສນາແລະນັກປາດທັງຫລາຍວ່າ ກົດຈະເບື່ອງນີ້ທ່ານທັງຫລາຍ ຍັງຈັກພິຈາລະນາໄດ້ບໍ່ຈາ ຍັງຈັກຫາສັກຂີໄດ້ບໍ່ຈາ ທີ່ນັ້ນເສນາແລະນັກປາດທັງຫລາຍຂານຄຳພະຍາວ່າ ກົດຈະອັນນີ້ເປັນລ້ຽວລັບນັກ ຄວນອັດສະຈັນນັກແລ ຝູງຂ້າທັງຫລາຍບໍ່ອາດຈະຮູ້ໄດ້ແທ້ຫລີແລ ວັນລູນນັ້ນ ພະຍາກໍໃຫ້ຫັນມາຍັງຊາຍຜູ້ລັກນັ້ນມາຖາມວ່າ ກູລາທ່ານຜູ້ຊາຍ ເມື່ອມຶງເອົາເມັຍມຶງຊື້ເອົາລີ ຮູ້ວ່າມຶງໄປສູ່ຈາ ມັນວ່າ ຂ້າຊື້ເອົາມາເຮືອນຂ້າພີ້ແລ ພະຍາຖາມວ່າມຶງຊື້ມີຄ່າທໍ່ໃດຈາ ມັນວ່າຂ້າຊື້ເອົາເມັຍນັ້ນມີກະຫາປະນະຮ້ອຍຫນຶ່ງແລ ພະຍາຖາມວ່າ ເຂົາຢູ່ດອມກັນໄດ້ກີ່ປີຈາ ຍັງມີລູກຍິງຊາຍແດ່ລີ ມັນວ່າເພື່ອຂ້າເອົາກັນຜ່ານານແລ້ວ ໄດ້ສິບປີ ມີລູກຍິງດອວກໍຕາຍຈາກເພື່ອຂ້າທັງສອງເສັຍນາ ພະຍາຖາມວ່າລູກມຶງມີຊື່ດັ່ງລີນັ້ນຈາ ລູກເພື່ອຂ້າໄປ່ທັນມີຊື່ຕາຍເສັຍແຕ່ນ້ອຍພຸ້ນແລ່ ພະຍາຖາມຕົວມຶງ ເມັຍມຶງນັ້ນມີຊື່ດັ່ງລີນັ້ນຈາ ເມື່ອເຂົາເອົາກັນເມັຍມຶງສາວລີຮູ້ວ່າແມ່ຮ້າງແມ່ຫມ້າຍຈາ ມັນວ່າ ຕົວຂ້າຊື່ວ່າ ສາລະທິນາແລ ເມັຍຂ້າຊື່ວ່ານາງສັງກາລີແລ ເພື່ອຂ້າເອົາກັນເມັຍຂ້າກໍຍັງເປັນສາວຫນຸ່ມນ້ອຍແທ້ແລ ພະຍາຖາມວ່າ ອາຍຸເມັຍມຶງໄດ້ກີ່ປີຈາ ອາຍຸຕົວມຶງໄດ້ກີ່ປີຈາ ມັນວ່າ ອາຍຸເມັຍຂ້າໄດ້ສາມສິບຫົກປີ ເພື່ອຂ້າເອົາກັນໄດ້ສິບປີແລ້ວ ພະຍາຖາມວ່າ ມຶງຍັງເຫັນເນື້ອຄີງເມັຍມຶງເປັນທີ່ດີ ຄືວ່າໄຝດຳໄຝແດງແລະຂີ້ແມງວັນ ແລະເປັນປື້ວເປັນປານນັ້ນ ກໍຍັງມີແດ່ລີ ມັນຂານວ່າ ເບື່ອງທັງຫລາຍຝູງນີ້ຫາກບໍ່ປາກົດໃນເນື້ອຄີງເມັຍຂ້າຈັກເບື່ອງແທ້ດີຫລີແລ ພະຍາຖາມວ່າ ພໍ່ແມ່ເມັຍມຶງຊື່ດັ່ງລີຈາ ມັນຂານວ່າ ພໍ່ເມັຍຂ້າຊື່ວ່າໂລນະພາມແລ ແມ່ເມັຍຂ້າຊື່ວ່ານາງສານາພາມະນີແລ ວ່າດັ່ງນີ້ແລ້ວ ພະຍາກໍໃຫ້ກົດຫມາຍຄຳປາກຊາຍລັກຜູ້ນັ້ນຊູ່ອັນແລ້ວກໍສິ່ງຫນີແລ ພະຍາກໍໃຫ້ເອົາຍິງຜູ້ນັ້ນມາຖາມດູສັນດອນນັ້ນແລ ຍິງຜູ້ນັ້ນກ່າວວ່າຂ້າໄຫວ້ມະຫາຣາຊະເຈົ້າ ຕົວຂ້າຊື່ວ່ານາງໂລນາຕິດສະແລ ຜົວຂ້າຊື່ວ່ານັນທະມານະວະ ພໍ່ຜູ້ຂ້າຊື່ວ່າໂຄທາລະພາມແລ ແມ່ຜູ້ຂ້າຊື່ວ່າພິມພາສາລາ ຕົວຂ້ານີ້ເປັນແມ່ຫມ້າຍ ອາຍຸຕົວຂ້າໄດ້ສາມສິບຫ້າປີແລ ຜົວຂ້ານີ້ປີເດືອນບໍ່ຮູ້ໄດ້ແລ ຜົວຂ້າມາສູ່ຂ້າບໍ່ນານເທົ່າໃດ ກໍໃຫ້ຄ່າແກ່ພໍ່ແມ່ຜູ້ຂ້າຮ້ອຍກະຫາປະ



★ ລວດລາຍບານປະຕູ ຫໍພະແກ້ວ

ນະຫນຶ່ງແລ ຕູຂ້າທັງຫລາຍພໍ່ແມ່ລູກ ຢູ່ບ້ານອັນມີຊື່ວ່າ ໂຄທະຄາມມີແລ ເພື່ອຂ້າທັງສອງຈິ່ງເດີນມາຄ້າຂາຍ ກໍມາເຖິງບ້ານເມືອງມະຫາຣາຊະເຈົ້ານີ້ແລ ຜູ້ຍິງກ່າວດັ່ງນີ້ແລ້ວ ພະຍາກໍ່ໃຫ້ກົດຫມາຍຄຳປາກມັນໄວ້ ແລ້ວກໍສົ່ງຫນີໄປແລ ພະຍາເລົ່າໃຫ້ເອົາຜົວເກົ່ານັ້ນມາຖາມດູສັນຖອງນັ້ນ ຊາຍຜົວເກົ່ານັ້ນວ່າ ຂ້າໄຫວ້ມະຫາຣາຊະເຈົ້າຕົນເປັນໃຫຍ່ເຫນືອແຜ່ນດິນທັງມວນຕົວຂ້າຊື່ວ່າ ເວນະພາມແລ ພໍ່ຜູ້ຂ້າຊື່ວ່າໂຄທະພາມແລ ແມ່ຜູ້ຂ້າຊື່ວ່າ ສາໄນຍະພາມມະນີແລ ຕູຂ້າຢູ່ບ້ານອັນມີຊື່ມະນີຄາມ ທີ່ບໍ່ໄກປະຕູວອງເທົ່າໃດ ຂ້ານີ້ເປັນພໍ່ຫມ້າຍ ເມັຽຂ້າກໍເປັນແມ່ຫມ້າຍແລ ຊື່ວ່າ ສາຍິທິພາມມະນີແລ ພໍ່ເມັຽຊື່ວ່າ ໂສມັນທະພາມແລ ແມ່ເມັຽຊື່ວ່າ ເວລິທາໂຄພາມມະນີແລ ຍາມເມື່ອຂ້າໄປເອົາເມັຽນັ້ນ ເມັຽຜູ້ຂ້າອາຍຸໄດ້ຊາວຫ້າປີ ເພື່ອຂ້າຢູ່ດອມກັນໄດ້ສິບປີ ມີລູກຜູ້ຫນຶ່ງ ຊື່ວ່າ ສາລິວາ ລູກຂ້າພໍ່ຮູ້ຍ່າງຂ້າກໍຫນີໄປຄ້າ ປະຂາແມ່ລູກໄວ້ຍັງເຮືອນແລ ເມື່ອຂ້າໄປຄ້າຄືນມາບໍ່ເຫັນເມັຽຜູ້ຂ້າ ຜູ້ຂ້າຈິ່ງຖາມຫາເມັຽຜູ້ຂ້າ ເຂົາວ່າເມັຽທ່ານຕາຍເສັຽແລ້ວວ່າດັ່ງນີ້ ຜູ້ຂ້າກໍເຫັນລູກຂ້າກັບສຸນັກຂາຕົວຫນຶ່ງ ຢູ່ໃນເຮືອນພໍ່ເມັຍ ແມ່ເມັຽຂ້າແລ ຂ້າກໍໃສ່ໃຈວ່າເມັຽຂ້າຕາຍເສັຽແທ້ ຂ້າກໍໂສກຫາມາກນັກແລ ຢູ່ບໍ່ນານເທົ່າໃດຂ້າຈິ່ງເດີນມາຄ້າໃນເມືອງມະຫາຣາຊະເຈົ້າ ຂ້າກໍເຫັນເມັຽຜູ້ຂ້າ ຜູ້ຂ້າຈິ່ງຖາມຊາຍຊູ້ ອັນເມັຽຂ້າຜູ້ໃຈບາບລ່າຍກ່າວວ່າ ຂ້າບໍ່ຮູ້ຈັກເຈົ້າເດ ເຈົ້າບໍ່ໃຊ່ຜົວຂ້າດາຍວ່າສັນນີ້ແລ ຂ້າຈິ່ງກ່າວແກ່ຊາຍຊູ້ຜູ້ນັ້ນວ່າ ທ່ານຈັກລັກເອົາເມັຽຂ້າມາສັງກ໋ວາພີ້ ມັນກໍກອງຜູ້ຂ້າວ່າ ຫາກແມ່ນເມັຽຂ້າດາຍວ່າດັ່ງນີ້ ຜູ້ຂ້າບໍ່ຍອມກັນຈິ່ງພາກັນໄປຫາເສນາຕັດ ເສນາຕັດບໍ່ໄດ້ ຈິ່ງພາກັນມາໄຫວ້ມາຫາຣາຊະເຈົ້າ ເພື່ອອັນແລ ພະຍາເລົ່າຖາມວ່າ ເມື່ອມຶງໄປສູ່ຂໍພໍ່ແມ່ມຶງເສັຽຄ່າທໍ່ໃດ ມັນຂານວ່າ ພໍ່ແມ່ຂ້າເສັຽຄ່າເມັຽຜູ້ຂ້າເປັນຫ້າຮ້ອຍກະຫາປະນະແລ ພະຍາເລົ່າຖາມວ່າ ມຶງໄປຢູ່ນຳເມັຽນານສິບປີ ມີລູກຍິງຜູ້ຫນຶ່ງວ່າດັ່ງນັ້ນແທ້ມຶງຍັງຈື່ສັກຂີໃນຄີງເມັຽມຶງ ອັນໃດອັນຫນຶ່ງໄດ້ແດ່ລີ ມັນຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຜູ້ຂ້າກໍຍັງຈື່ສາກສີໃນຄີງເມັຽໄດ້ຊູ່ອັນແລ ຄືວ່າບ່ອນໃດກໍດີ ແລະ ອັນຫນຶ່ງມີປານດຳໃນແຂນກ້ຳຂວາບ່ອນຫນຶ່ງ ອັນຫນຶ່ງມີໄຝຈັບຮິມສາຍບືກ້ຳຊ້າຍທໍ່ເມັດງາຫນຶ່ງແລ ພະຍາກໍໃຫ້ກົດຫມາຍຫນັງສືໄວ້ຊູ່ອັນດັ່ງຄວາມມັນວ່ານັ້ນ ແລ້ວກໍສົ່ງມັນໄປສູ່ທີ່ຫນຶ່ງຫັ້ນແລ ພະຍາກໍໃຫ້ເອົາພໍ່ແມ່ຜູ້ຍິງມາຖາມສັນຖອງ ເຂົາຟູງນັ້ນແລ ເມື່ອນັ້ນຂາທັງສອງຄົນ ອັນເປັນພໍ່ແມ່ ກໍກ່າວວ່າ ເຊິ່ງຊາດປີເດືອນຫນຸ່ມແກ່ທັງມວນ ກໍຄ່ອງຄຳຜົວຊູ່ອັນແລ ພະຍາກໍໃຫ້ບ່າວພະຍາສອງຄົນເມືອກັບຜູ້ຍິງ ກັບຍາຕິເພື່ອນບ້ານສູ່ເຮືອນ ກັບພໍ່ແມ່ຜູ້ຍິງນັ້ນ ຄັນວ່າເຂົ້າໄປເຖິງເຕົາຮາງແລ້ວ ຫມາຜູ້ຕົວນັ້ນເຫັນຍິງຜູ້ເປັນເຈົ້າມັນມາແລ້ວ ຫມາຕົວນັ້ນກໍແລ່ນເຂົ້າໄປຊົມເຈົ້າມັນແລ ແລ້ວກໍເຕັ້ນຂຶ້ນເມືອຢູ່ໃນຕັກຜູ້ຍິງນັ້ນແລ້ວ ກໍດິດກ້າມໄປມາຫັ້ນແລ ເມື່ອຍິງຜູ້ນັ້ນເມືອຮອດເຮືອນແລ້ວ ແລະນັ່ງຢູ່ດັ່ງນັ້ນ ລູກຍິງນ້ອຍຜູ້ນັ້ນເຫັນແມ່ມັນມາ ມັນກໍຮູ້ຈັກວ່າແມ່ນແມ່ມັນ ມັນກໍຮ້ອງໄຫ້ແຕ່ໄກ ເຂົ້າມາຢູ່ໃນຕັກແມ່ມັນແລ້ວກໍດູດກິນນົມຫັ້ນແລ ເມື່ອນັ້ນບ່າວພະຍາເຫັນແລ້ວ ກໍຄືນໄປໄຫວ້ພະຍາ ກ່າວກົດຈະອັນເຂົາເຫັນນັ້ນແກ່ພະຍາຊູ່ອັນຫັ້ນແລ ພະຍາໄດ້ຍິນຄຳອັນນັ້ນແລ້ວກໍຮູ້ແຈ້ງໃນໃຈຕົນຫັ້ນແລ ເມື່ອຈັກຕັດກ້ອຍຄຳອັນນັ້ນ ກໍໃຫ້ຊຸມນຸມມາຍັງເສນາອາມາດນັກປາດປະໂຣຫິດທັງຫລາຍມາພ້ອມກັນຊູ່ຄົນແລ້ວ ພະຍາກໍໃຫ້ຄົນດູສັກຂີໃນຄີງມັນດັ່ງຜົວເກົ່າມັນວ່ານັ້ນ ຄືວ່າປານ ແລະໄຝດຳນັ້ນ ກໍເຫັນເປັນດັ່ງຜົວມັນວ່າຊູ່ອັນແລ ເມື່ອນັ້ນພະຍາກໍໃຫ້ຂ້ອນຖາມເຂົາທັງສອງຫັ້ນແລ

ຂາທັງສອງກໍຂານຄຳພະຍາວ່າອັນນີ້ ກໍຫາກແມ່ນຄຳເພືອຂ້າທັງສອງແທ້ແລ ເພືອຂ້າໄຄ່ໄດ້ກັນນັກ ກໍໄດ້ກ່າວແທ້ແລ ວ່າດັ່ງນີ້ແລ້ວ ເມື່ອນັ້ນຄົນທັງຫລາຍກໍຮູ້ວ່າ ຂາກະທຳກຸທະກະມາຍາ ພາກັນຫນີສັນນີ້ ກໍບໍ່ທ່ອນມີແລ ມາມີສັນນີ້ນໍວ່າດັ່ງນີ້ແລ້ວ ຄົນທັງຫລາຍກໍຈຶ່ງຮູ້ວ່າແມ່ນເມັຽຜູ້ໄປຄ້າແທ້ທັ້ນແລ ພະຍາກໍກ່າວວ່າ ກຳອັນຂາກະທຳນີ້ກໍເປັນຄອງອັນຈິບຫາຍແກ່ຢ້າວເຮືອນຂານັກແລ ເປັນຄົນຈັງໄຣຮ້າຍດີຫລີບໍ ວ່າດັ່ງນີ້ແລ້ວ ຈຶ່ງກ່າວແກ່ຜົວເກົ່າວ່າ ດູລາມານະວະພານ ເມັຽມຶງນີ້ແມ່ນວ່າຄືນມາຢູ່ດອມມຶງກໍຫາກເປັນສ້ຽນເປັນຫອກ ເປັນດາບເປັນຂ້າເສິກສັດຕູມຶງນັກແລ ບໍ່ຄວນເອົາເປັນເມັຽມຶງດັ່ງເກົ່າແທ້ແລ ພໍ່ແມ່ມຶງເສັຽຄ່າເມັຽມຶງທໍ່ໃດຈາ ມັນກ່າວວ່າ ພໍ່ແມ່ຜູ້ຂ້າເສັຽຄ່າເມັຽຂ້າເປັນຄ່າຫ້າຮ້ອຍກະຫາປະນະ ຄືວ່າ ຫ້າຮ້ອຍຄຳ ແລ້ວພະຍາກໍໃຫ້ມັນເສັຽສາມທໍ່ເປັນພັນຫ້າຮ້ອຍຄຳແລ ຜີວ່າຂາຫາກມາມັກກັນແລ້ວ ແລະພາກັນຫນີດ້ວຍຊື່ແທ້ ຈັກໄຫມສອງທໍ່ແລ ອັນນີ້ຂາມາເອົາຂອນຜີເມືອໄວ້ໃນເຮືອນ ເປັນອັນຜິດຮີດມາກນັກດາຍ ແມ່ນວ່າຈັກຂ້າເສັຽກໍຄວນແລ ເຫດດັ່ງນັ້ນຈຶ່ງໄຫມສາມທໍ່ເພື່ອອັນແລ່ ພະຍາກໍຂັບຂາຫນີຈາກເມືອງທັ້ນແລ ສອນດັ່ງລູກນັ້ນກໍໃຫ້ໄດ້ແກ່ພໍ່ມັນແລ ໃນຄຳພັນຫ້ານັ້ນ ພະຍາກໍກອດເອົາສອງຮ້ອຍໃສ່ໃນຣາຊໂກດແລ ຮ້ອຍຫນຶ່ງໃຫ້ແກ່ເສນາອາມາດນັກປາດປະໂຣຫິດ ຝູງໄດ້ພິຈາລະນາກ້ອຍຄຳກິນທັ້ນແລ ຍັງຄຳພັນສອງພະຍາກໍໃຫ້ແກ່ມັນແລ ຕັດຄຳສັນນີ້ ສຸຄະຕິແລ. ສອນດັ່ງພໍ່ແມ່ຜູ້ຍິງນັ້ນ ບໍ່ໄດ້ສັງສັກອັນແລ ພະຍາບໍ່ໃຫ້ແກ້ມັນແລບູກຄະລະຜູ້ຈັກໂຈທະນາວ່າ ພະຍາຕັດຄຳສັນນີ້ຜິດດາຍ ພໍ່ແມ່ຜູ້ຍິງຄວນໄດ້ດາຍ ວ່າດັ່ງນີ້ກໍດີເທີ້ນ ນັກປາດຜູ້ຈັກແກ້ກໍຄວນແກ້ສັນນີ້ ສ່ວນວ່າ ພໍ່ແມ່ຜູ້ຍິງນັ້ນແມ່ນວ່າບໍ່ຮູ້ກໍດີ ກໍຄວນໄວ້ນັກແກ່ພະຍາເຈົ້າແດ່ດັ່ງນັ້ນກໍຍັງຈັກໄດ້ແດ່ດາຍ ພະຍາເຈົ້າຫາກຖາມຂາແລ້ວ ຂາກໍເຫັນຕໍ່ຕາຂາກໍກອງພະຍາເຈົ້າວ່າ ບໍ່ແມ່ນລູກຂ້າດາຍ ຂາວ່າຫາກຕາຍຢູ່ໃນເຮືອນພຸ້ນແລ້ວ ຕູຂ້າທັງຫລາຍຫາກມັ່ນມັນແທ້ແລ ອັນນີ້ຫາກໄດ້ດ້ວຍອັນຈີ່ສັງເກດກົດຫມາຍໃນຕຶງແທ່ງຜູ້ຍິງນັ້ນດາຍ ເຫດດັ່ງນັ້ນ ພະຍາຈຶ່ງບໍ່ໃຫ້ສັງແກ່ພໍ່ແມ່ເພື່ອອັນແລ ຜີຈັກໃຫ້ວ່າແທ້ ພະຍາກໍເພິ່ງໃຫ້ຂາແມ່ດ້ວຍດາຍອັນນີ້ຫາກເປັນຄຳຜູ້ແກ້ແລ ເມື່ອນັ້ນພະຍາກໍສັ່ງສອນເສນາທັງຫລາຍວ່າ ກົດຈະການກ້ອຍຄຳອັນລ້ຽວລັບສັນນີ້ ກໍຫາກເປັນກຸທະກະມາຍາແທ່ງຊາຍດາຍ ກໍເພິ່ງພິຈາລະນາຕຶງທີ່ແທ້ແລ ພະຍາຕັດຄຳສັນນີ້ ສຸຄະຕິຄະມະນະແທ້ແລ. (ໂກທິກ).

ບັດນີ້ ຍັງມີສາມສະຫາຍກັນ ຄືວ່າ ແມວຕົວຫນຶ່ງ ນົກຍາງຕົວຫນຶ່ງ ນົກການ້ຳຕົວຫນຶ່ງ ສັດສາມຕົວນີ້ເຂົາກໍເວົ້າວາຈາກັນວ່າ ເຮົາຈັກໄປຫາກິນປາໃນສະພະຍາເວສາລີພຸ້ນແລ ວ່າດັ່ງນີ້ ນົກການ້ຳວ່າຂ້າຈັກດຳນ້ຳຫາປາທີ່ເລິກແລ ນົກຍາງກ່າວວ່າຂ້າດຳນ້ຳເລິກບໍ່ໄດ້ ຂ້າຈັກຫາປາແຕ່ຂອກແຕ່ແຄມສະແລ ແມວກ່າວວ່າ ຂ້າຈັກຫາກິນນຳເຂືອບໍ່ໄດ້ແລ ຂ້າຈັກຢູ່ຮັກສາເຂືອທັງສອງ ດ້ວຍໄພຍໄພອັນໃດອັນຫນຶ່ງອັນຈັກມາຮາວີແກ່ເຂືອທັງສອງ ຄືວ່າຮຸ້ງແລະແຫລວອັນຈັກມາພາຍບິນນັ້ນແລ ເຂືອຈຶ່ງປັນພູດປາໃຫ້ແກ່ຂ້າພູດຫນຶ່ງເທີ້ນ ແມວກ່າວວ່າດັ່ງນີ້ ນົກທັງສອງກ່າວວ່າດີງແລ ແຕ່ນັ້ນເມືອຫນ້າ ນົກທັງສອງກໍດຳນ້ຳເອົາປາມາໃຫ້ແມວກິນຊູ່ວັນທັ້ນແລ ເມື່ອນັ້ນຍັງມີໃນວັນຫນຶ່ງ ແມວກໍນອນຝັງແດດຢູ່ແຄມສະທັ້ນກໍນອນຫລັບໄປ ທັ້ນແລ ນົກທັງສອງເອົາປາມາສົ່ງໃຫ້ແມວກິນເຫັນແມວຫລັບຢູ່ ຂາກໍວາງປາໄວ້ແລ້ວກໍຫນີໄປທັ້ນແລ ເມື່ອນັ້ນ ຍັງມີຮຸ້ງຕົວ

ໜຶ່ງ ແປງຮັງຢູ່ປາຍໄມ້ງິ້ວຕົ້ນໜຶ່ງແຄມສະນັ້ນ ມັນກໍເຫັນປາສ່ວນແມວນັ້ນເຫັນນອນຢູ່ນັ້ນ ເລົ່າ
ຫລັບຢູ່ ມັນກໍຊູດມາເອົາປາແມວນັ້ນໄດ້ແລ້ວກໍບິນໜີໜັ້ນແລ ແມວນອນຫລັບສະດຸ້ງຕື່ນມືນຕາ
ເຫັນຮຸ້ງເອົາປາໜີໄປດັ່ງນັ້ນ ແມວກ່າວວ່າ ດູລາຮຸ້ງຕົວກ່ອຍຮ້າຍມຶງມາເອົາປາກູໜີສັງຈາ ກູ
ຈັກຂຶ້ນເມືອເອົາລູກມຶງກິນແລ ວ່າດັ່ງນີ້ ຮຸ້ງຕົວນັ້ນໄດ້ເອົາແລ້ວຈັກຄືນກໍບໍ່ໄດ້ ມັນກໍໄປຫາເທວະ
ດາຕົນຕັ້ງວິມານຢູ່ໄມ້ງິ້ວນັ້ນວ່າ ຂ້າໄຫວ້ເທວະດາເຈົ້າ ຂ້າກໍໄດ້ໄປລັກເອົາປາແມວມາກິນເສີ້ອ
ກໍຂ້ານາເຈົ້າກູຈິ່ງອີດູກູນາຂ້າແດ່ ຈິ່ງເອົາປາໄປສົ່ງແກ່ແມວແດ່ເທີ້ນ ພີວ່າບໍ່ສົ່ງມັນຈັກຂຶ້ນມາກິນ
ລູກຂ້າເສັຽວ່າດັ່ງນີ້ ຈົ່ງກູນາຂ້າແດ່ເທີ້ນ ເມື່ອນັ້ນເທວະດາກ່າວວ່າ ມຶງຫາກໄປລັກເອົາປາແມວ
ດາຍກູເອົາໄປສົ່ງດັ່ງນັ້ນເປັນດັ່ງກູບັງຄັບໃຫ້ມຶງໄປລັກເອົາແລ ກູໄປສົ່ງບໍ່ດີແລ ວ່າດັ່ງນັ້ນ ເທວະ
ດາກໍບໍ່ໄປສົ່ງໃຫ້ມັນແລ ຮຸ້ງຕົວນັ້ນກໍຮ້ອນໃຈນັກຈິ່ງຄະນຶງໃຈວ່າ ກູນີ້ບໍ່ປອງຫາທີ່ເພິ່ງບໍ່ດີຢູ່ແລວ່າ
ດັ່ງນີ້ແລ້ວ ມັນກໍເອົາປານັ້ນເມື່ອຫາສຸຣິຍະເທວະດາວ່າດັ່ງນີ້ ຂ້າແກ່ສຸຣິຍະເທວະດາເປັນເຈົ້າ
ເຈົ້າກູຈົ່ງອີດູກູນາຂ້າແດ່ເທີ້ນ ຂ້າຜິດແມວເສັຽແລ້ວ ເຫດຂ້າໄດ້ໄປລັກເອົາປາແມວ ແມວມັນ
ວ່າ ກູຈັກເມືອກິນລູກມຶງແລວ່າດັ່ງນີ້ ເຈົ້າກູຜູ້ຮຸ່ງເຮືອງແກ່ໂລກທັງຫລາຍແລ ຈົ່ງເປັນທີ່ເພິ່ງແກ່
ຂ້າແດ່ເທີ້ນ ສຸຣິຍະເທວະດາກ່າວວ່າ ກູນີ້ກໍຮຸ່ງເຮືອງກວ່າໂລກທັງຫລາຍແທ້ແລ ທີ່ແທ້ຍາມເມື່ອ
ຟ້າເມກມາບັງກູດັ່ງນັ້ນກໍຍັງມືດເສັຽດາຍ ເຫດດັ່ງນັ້ນ ກູຈັກເປັນທີ່ເພິ່ງແກ່ມຶງບໍ່ໄດ້ແລ ມັນກໍໄປ
ຫາເມຄະເທວະດາ ວອນໃຫ້ເປັນທີ່ເພິ່ງແກ່ມັນແລ ເມຄະເທວະດາກໍກ່າວ ກູນີ້ກັ້ງບັງຣັດສະໝີ
ຣັງສີສຸຣິຍະເທວະດາກໍໄດ້ແທ້ແລ້ວ ທີ່ແທ້ຍາມເມື່ອລົມມາພັດກະຈັດກູດັ່ງນັ້ນ ກູກໍຍັງຜ່າຍໜີດ້ວຍ
ກໍາລັງລົມແທ້ດີຫລີແລ ເຫດດັ່ງນັ້ນ ກູຈັກເປັນທີ່ເພິ່ງແກ່ມຶງບໍ່ໄດ້ແລ ມັນກໍໄປຫາວາຕະເທວະດາ
ກໍເລົ່າວອນໃຫ້ເປັນທີ່ເພິ່ງແກ່ມັນສັບດຽວແລ ເມື່ອນັ້ນວາຕະເທວະດາກ່າວວ່າ ກູກໍກໍາຈັດຟ້າເມກ
ກໍໄດ້ແລ ແມ່ນວ່າຕົ້ນໄມ້ໃຫຍ່ກໍດີ ໄມ້ນ້ອຍກໍດີ ນ້ຳກໍດີ ບໍ່ອາດທະລົງຢູ່ໄດ້ແລ ທີ່ວ່າກູຈັກໄປພັດ
ຈູມປອກ ກໍບໍ່ໄດ້ແລ ເຫດດັ່ງນັ້ນ ກູຈັກເປັນທີ່ເພິ່ງແກ່ມຶງບໍ່ໄດ້ແລ ມັນກໍໄປສູ່ວັມມີກະເທວະດາ ກໍ
ຂໍໃຫ້ເປັນທີ່ເພິ່ງແກ່ມັນສັບດຽວນັ້ນແລ ວັມມີກະເທວະດາກໍວ່າ ກູນີ້ແມ່ນລົມມາພັດກໍາຈັດປານໃດ
ກໍບໍ່ເຟືອນບໍ່ໄຫວໄດ້ແລ ຍາມເມື່ອຄວາຍມາຣຸກມາສີ ມາຊົດມາຊົນດັ່ງນັ້ນ ກໍບໍ່ອາດຈັກທະລົງຢູ່ໄດ້
ກໍເກື່ອນເພໄປດ້ວຍກໍາລັງອັນມາກແຫ່ງມັນແລ ເຫດດັ່ງນັ້ນ ໃຫ້ເປັນທີ່ເພິ່ງແກ່ມຶງບໍ່ໄດ້ແລ ມັນ
ກໍໄປສູ່ອາຣັກຂະມະຫິງສາ ກໍວອນໃຫ້ເປັນທີ່ເພິ່ງແກ່ມັນສັບດຽວນັ້ນແລ ເມື່ອນັ້ນ .ອາຣັກຂະມະ
ຫິງສາ ກ່າວວ່າ ກູກໍໄປກໍາຈັດວັມມີກະຈອມປວກກໍໄດ້ແກ່ກູແທ້ແລ ເມື່ອໃດຕົ້ນໄມ້ ໂປດ
ກຸະກະ ຄືວ່າໄມ້ປີຄືນເອົາຝັ້ນເປັນເຊືອກໄວ້ ຄັນວ່າຜູກກູ ກູກໍບໍ່ອາດຈັກທະລົງໄດ້ແກ່ມັນແລ ເຫດ
ດັ່ງນັ້ນ ກູກໍເປັນທີ່ເພິ່ງແກ່ມຶງບໍ່ໄດ້ແລ ມັນກໍໄປຫາເທວະດາຕົນຮັກສາໄມ້ປີ ກໍວອນໃຫ້ເປັນທີ່ເພິ່ງ
ແກ່ມັນແລ ເທວະດາຮັກສາໄມ້ປີກ່າວວ່າ ຍາມຄົນໄປຟັ້ນເຊືອກຜູກມະຫິງສານັ້ນມັນກໍບໍ່ອາດຈັກ
ທະລົງໄດ້ແລ ທີ່ແທ້ ເມື່ອມຸສິກະແລະມາກັດເຊືອກນັ້ນກໍຂາດໄປແກ່ມັນແລ ເຫດດັ່ງນັ້ນ ກູຈັກ
ເປັນທີ່ເພິ່ງແກ່ມຶງບໍ່ໄດ້ແລ ມັນກໍໄປເພິ່ງມຸສິກະ ໜູກໍວອນໃຫ້ເປັນທີ່ເພິ່ງແກ່ມັນແລ ມຸສິກະໜູ
ກ່າວວ່າ ກູນີ້ກໍບໍ່ກັດແຕ່ເຊືອກສິ່ງດຽວດາຍ ແມ່ນວ່າເສື້ອຜ້າກໍດີ ໄມ້ກໍດີ ສັບພະທັງມວນກູກໍກັດໄດ້
ສັ້ງແລ ເບື່ອງທັງຫລາຍຝູງນັ້ນກໍບໍ່ທະລົງໄດ້ແກ່ກູແລ ເມື່ອໃດແມວແລະເຫັນກູດັ່ງນັ້ນ ກູຈັກປ່ອຍ
ພົ້ນຈາກມັນ ກໍເປັນການອັນຍາກນັກແລ ດັ່ງໄດ້ຍິນມານີ້ ປານັ້ນຫາກແມ່ນປາແມວດາຍ ກູຈັກເອົາ

ໄປສິ່ງແກ່ມັນບໍ່ໄດ້ແລ ມັນເຫັນກູໄປດັ່ງນັ້ນມັນກໍຊ້ຳຈັກກິນກູເສັຽແລ ເຫດວ່າກູນີ້ເປັນອາຫານແກ່ແມວແລ ເຫດດັ່ງນັ້ນ ກູກໍບໍ່ເປັນທີ່ເພິ່ງແກ່ມຶງໄດ້ແລ ເມື່ອຮຸ້ງໄດ້ຍິນໜູກ່າວນັ້ນ ກໍເຮັ່ງຊ້ຳແກມກິວມາກນັກແລ ມັນຈິ່ງໄປສູ່ສິມພະລິເທວະດາໄມ້ງິ້ວ ນະມັດສະການໄຫວ້ວ່າ ຂ້າແກ່ເທວະດາຕົນເປັນເຈົ້າ ເຈົ້າກູຈິ່ງອິດູກູນາຂ້າແດ່ ຂໍເພິ່ງເອົາປາໄປສິ່ງແມວໃຫ້ຂ້າແດ່ເທີ້ນ ບໍ່ດັ່ງນັ້ນ ແມວມັນຈັກມາກິນລູກຂ້າເສັຽໃນຄືນນີ້ແລ ເມື່ອນັ້ນ ເທວະດາກໍກະຣຸນາມັນ ຈິ່ງເອົາປາໄປສິ່ງໃຫ້ແກ່ແມວແລ ຍາມນັ້ນປາກໍເນົ່າເສັຽມີກິ່ນອັນເໝັນນັກ ແມວກໍບໍ່ເອົາແລ ເມື່ອນັ້ນເທວະດາຈິ່ງທີ່ຄ່າປານັ້ນໃຫ້ຮຸ້ງໃຊ້ເປັນຄຳ ກະສາບໜຶ່ງ ຮຸ້ງຕົວນັ້ນຫາສັງໃຊ້ບໍ່ໄດ້ຈິ່ງເອົາຄຳກະໂຈມທົວເປັນສິນໄໝໃຊ້ແກ່ປາແມວທັ້ນແລ ແຕ່ກ່ອນຮຸ້ງແຫລວຍ່ອມມີກະໂຈມທົວຊູ່ຕົວດາຍ ຈິ່ງບໍ່ມີແຕ່ນັ້ນມາແລຄຳນີ້ເທວະດາໄມ້ງິ້ວຕັດແລ ນັກປາດຜູ້ມີປະໜຍາພິຈາລະນາກ້ອຍຄຳ ຈິ່ງເອົານິຍາຍອັນນີ້ໄວ້ເປັນທີ່ທຽມເທີ້ນ ນັກປາດຜູ້ມີປະໜຍາຈິ່ງພິຈາລະນາໃຫ້ຊອບຄອງໂລກຄອງທຳເທີ້ນ ຜີວ່າຕັດຊອບແທ້ກໍເພິງໃຈນັກແລ ເປັນດັ່ງຮຸ້ງນັ້ນແລ ເທວະດາຕັດຄຳສັນນີ້ ເປັນສຸຄະຕິຄະມະນະແລ.

ແຕ່ນີ້ເມື່ອໜ້າ ຈັກກ່າວຕຳນານ ອັນສຸກກະເສີມແກ່ໂລກ ໄວ້ແກ່ນັກປາດທັງຫລາຍ ຝູງເປັນຊຸນກິນບ້ານກິນເມືອງແລ ຝູງຈັກພິຈາລະນາໄຕ່ກ້ອຍຄຳ ຢ່າໃຫ້ເປັນອາວົນສິນເທ ຢ່າໃຫ້ໂລກທັງຫລາຍຊຸ່ນມົວ ໃຫ້ຮຸ່ງເຮືອງຊະເທືອງງາມ ເມື່ອໜ້າຢ່າໃຫ້ເປັນກຳແກ່ໂລກຊື່ວນີ້ຊື່ວໜ້າແກ່ຕົນແກ່ທ່ານເທີ້ນ ນັກປາດທັງຫລາຍຈິ່ງຈື່ຈຳໄວ້ເທີ້ນ.

ບັດນີ້ ຈັກກ່າວຕຳນານມາແຕ່ອາມາດຜູ້ຊື່ວ່າ ນັນທະພາມມະນາຈະຣິຍະ ອັນເປັນອາຈານແກ່ພະຍາລັງກາ ພິຈາລະນາຄຳຊອບສຸຄະຕິຄະມະນະແລ ຈິ່ງຕຶກະນຶງໃນໃຈໃຫ້ແຈ້ງແກ່ນັກປາດທັງຫລາຍ ຍັງມີເມືອງອັນໜຶ່ງ ຊື່ວ່າເມືອງມູລະຕະມະຫານະຄອນ ເມືອງອັນນັ້ນໂສດມີແຕ່ມະຫາພົມຫາກແຣກຕັ້ງໃຫ້ເປັນບ້ານເມືອງ ແຕ່ປະກົມມະກັບທົວທີມາວັນນັ້ນ ຍັງມີວັນໜຶ່ງ ພະຍາເຈົ້າເມືອງນັ້ນກໍໃຫ້ຊຸມນຸມມາຍັງເສນາສີ່ຈຳພວກ ແລະອຸບປະຣາດນັກປາດປະໂຣຫິດ ພາມຜູ້ສະຫລາດດ້ວຍໂວຫານ ພະຍາກໍຈາລະຈາວ່າ ດູລານັກປາດທັງຫລາຍອັນມີໃນອານາລັດກະການບ້ານເມືອງອັນໃຫຍ່ກວ່າເມືອງທັງຫລາຍແທ້ແລ ທີ່ແທ້ດັ່ງເຮົາມາຮຳເພິງດູນີ້ ເມື່ອໜ້າເຮົາທໍ່ເມືອງດຽວເປັນເອກເປັນໂທນຢູ່ແທ້ແລ ກໍຍັງດູເປັນການອັນປ່ຽວແທ້ດີຫລີ ເຫດວ່າ ຫາມິດຫາສະຫາຍບໍ່ໄດ້ ເຮົາກໍເພິງປອງຫາມິດຕິດກັບດ້ວຍອຸບາຍອັນຈັກເປັນຣາຊະໄມຕີໄວ້ໃຫ້ເປັນສະຫາຍສືບໄວ້ເມື່ອພາຍໜ້າ ໃນເມືອງທັງຫລາຍຝູງອື່ນແທ້ດີຫລີແລ ເຮົາທັງຫລາຍເພິງຕຶອຸບບາຍດ້ວຍປະການສັນໃດດີນີ້ຈາ ເມື່ອພະຍາກາມດັ່ງນີ້ ປຸະໂຣຫິດຜູ້ໃຫຍ່ຈິ່ງກ່າວ ເຊິ່ງພະຍາວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຜີວ່າມະຫາຣາຊະເຈົ້າຍັງມີພະທີລະໄທອັດຊາໄສ ໃຈອັນມັກຈັກກະທຳດ້ວຍໄມຕີສັນການກັບທ້າວພະຍາທັງຫລາຍຕ່າງປະເທດ ໃຫ້ເປັນວົງສາສາຍສືບໄວ້ດ້ວຍຣາຊະໄມຕີດັ່ງນີ້ແທ້ ເຮົາກໍເພິງແຕ່ງບັນຫາອັນໜຶ່ງໄປສ່ຽງຄວນແລ ບັນຫາອັນນັ້ນຄືວ່າ ຈັກເອົານາງສອງຄົນ ອັນມີຮູບອັນງາມລ້ອນກ້ອນທຸກແຫ່ງ ຄວນຫລ່ຳຫລິງດູແກ່ຕາຜູ້ຊາຍທັງຫລາຍໄປສ່ຽງຄວນແລ ເຮົາກໍຄວນໄດ້ນາງຜູ້ໜຶ່ງ ອັນມີຄັບພະໃນທ້ອງເປັນຜູ້ຊາຍ ຜູ້ໜຶ່ງອັນທະລຶງຄັບພະໃນທ້ອງເປັນຜູ້ຍິງນັ້ນໄດ້ ແລ້ວຈິ່ງໃຊ້ໃຫ້ເອົານາງສອງຄົນນັ້ນໄປສ່ຽງ ດ້ວຍຄຳວ່າດັ່ງນີ້ ຜີວ່າພະຍາ

ເຈົ້າເມືອງພາຫາຣະນະຄອນແລ ຍັງຮູ້ຈັກວ່ານາງສອງຄົນນີ້ ອັນທະລົງຄັບພະລູກໃນທ້ອງວ່ານາງຜູ້ນີ້ລູກເປັນຍິງ ນາງຜູ້ນີ້ລູກເປັນຊາຍແລ ຜິວ່າຍັງຮູ້ດັ່ງນີ້ແທ້ ເມື່ອນາງສອງຄົນປະສູດລູກນັ້ນ ກໍແມ່ນດັ່ງຄວາມພະຍາເຈົ້າທວຍແທ້ດັ່ງນັ້ນ ສ່ວນນາງສອງຄົນນີ້ ກໍຈິ່ງໄດ້ຕອບຄຸນຜູ້ມີປະຫຍາເຫັນວ່າດັ່ງນັ້ນແລ ຄັນວ່ານາງສອງຄົນນີ້ປະສູດລູກແລ້ວດັ່ງນັ້ນ ເມືອງອັນນັ້ນກໍຫາກຈັກເປັນເຊື້ອສາຍສືບໄປພາຍໜ້າແທ້ກໍຂ້າແລ ປະໂຣຫິດຜູ້ນັ້ນ ກ່າວເຊິ່ງພະຍາດັ່ງນີ້ແລ້ວ ເມື່ອນັ້ນພະຍາກໍຮັບເອົາຄວາມປະໂຣຫິດວ່າດີງແລ ວ່າດັ່ງນີ້ແລ້ວ ພະຍາກໍໃຫ້ແຕ່ງນາງສະໜົມຜູ້ໜຶ່ງ ອັນມີຮູບໂສມອັນງາມ ແລະທະລົງຄັບພະລູກໃນທ້ອງເປັນຜູ້ຊາຍ ເລົ່າແຕ່ງນາງຜູ້ໜຶ່ງ ອັນເປັນເມັອນ້ອຍອຸບປະຮາດ ແລະມີຄັບພະລູກໃນທ້ອງເປັນຜູ້ຍິງຫັ້ນແລ ບຸກຄະລະຜູ້ຈັກໂຈທະນາກາມວ່າ ເຫດສິ່ງໃດເຂົາຈິ່ງຮູ້ວ່າລູກໃນທ້ອງຜູ້ນີ້ເປັນຜູ້ຊາຍ ລູກໃນທ້ອງຜູ້ນີ້ເປັນຍິງແລວ່າດັ່ງນີ້ແລ ຜູ້ຈັກແກ້ເພິງກ່າວວ່າດັ່ງນີ້ ເຂົາຮູ້ດ້ວຍອັນເຂົາໄດ້ຮຽນສາດຕະສິນ ໃນສຳນັກແຫ່ງທິສາປາໂມກຂະອາຈານບໍລະບວນໄດ້ຊູ່ອັນແລ ຄັນວ່າພະຍາແຕ່ງບັນຫາໂດຍປະການສັນນີ້ແລ້ວ ກໍໃຊ້ໃຫ້ຄົນທັງຫລາຍ ເອົານາງສອງຄົນນັ້ນໄປສົ່ງແກ່ພະຍາພາຫະຣະນະຄອນຫັ້ນແລ ເມື່ອນັ້ນຄົນໃຊ້ທັງຫລາຍກໍໄປດ້ວຍລຳດັບ ຂ້າມບ້ານນ້ອຍເມືອງໃຫຍ່ທັງຫລາຍ ໝາຍວ່າໄດ້ສັດກີນະຄະຣາ ຄືວ່າໄດ້ຫີກສິບເມືອງແລ້ວຈິ່ງໄປຊອດຈອດເຖິງເມືອງພາຫະລະນະຄອນພຸ້ນແລ ຄົນໃຊ້ໄປຮອດແລ້ວ ກໍກວາຍນາງທັງສອງນັ້ນກັບທັງບັນນາການທັງຫລາຍແກ່ພະຍາແລ້ວ ກໍໄຫວ້ພະຍາກ່າວກິດຈະອັນພະຍາເຂົາສັ່ງນັ້ນຊູ່ອັນວ່າ ເທວະຂ້າໄຫວ້ມະຫາຣາຊະເຈົ້າຕົນເປັນໃຫຍ່ເໜືອແຜ່ນດິນທັງມວນ ຜິວ່າມະຫາຣາຊະເຈົ້າຍັງຮູ້ລູກໃນທ້ອງຜູ້ນີ້ເປັນຜູ້ຍິງ ແລະລູກໃນທ້ອງຜູ້ນີ້ເປັນຜູ້ຊາຍແລວ່າດັ່ງນັ້ນເມື່ອນາງທັງສອງປະສູດລູກອອກມານັ້ນ ກໍແມ່ນດັ່ງຄວາມມະຫາຣາຊະເຈົ້າທວາຍແທ້ດັ່ງນັ້ນ ນາງທັງສອງຄົນນີ້ກໍຈິ່ງໃຫ້ບຳເຣີກັບພື້ນບາດເມືອງມະຫາຣາຊະເຈົ້າເທີ້ນ ຜິວ່າບໍ່ຮູ້ແຈ້ງດັ່ງນັ້ນຈັກເອົາຄຳແສນເປັນສ່ວຍໄຣ ແລະປີລະແສນ ພະຍາເຈົ້າຕູຂ້າທັງຫລາຍສັ່ງມາ ດັ່ງນີ້ແລ ເມື່ອອັນລຸນພະຍາພາຫະລະນະຄອນ ຈິ່ງຈາລະຈາກັບດ້ວຍເສນາອາມາດ ນັກປາດປະໂຣຫິດທັງຫລາຍດ້ວຍຄຳວ່າດັ່ງນີ້ ດູລາເສນາອາມາດນັກປາດປະໂຣຫິດທັງຫລາຍ ທ່ານທັງຫລາຍຍັງຈັກແກ້ບັນຫາເຍື່ອງນີ້ໄດ້ບໍຈາ ເສນາອາມາດ ນັກປາດປະໂຣຫິດພາມທັງຫລາຍຂານວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ບັນຫາເຍື່ອງນີ້ ແຕ່ຕູຂ້າທັງຫລາຍເກີດມາເປັນຄົນຫົວກໍຫງອກປານນີ້ແລ້ວ ໄປ່ໄດ້ເຫັນສັກເທື່ອແລ ຈິ່ງມາເຫັນເທື່ອດຽວນີ້ແລ ວ່າດັ່ງນີ້ຊູ່ຄົນຫັ້ນແລ ເມື່ອນັ້ນພະຍາກໍຄຶດຮູ້ແຈ້ງໃນບັນຫານັ້ນດ້ວຍທິບພະຄຸນສາດຕະສິນ ອັນຕົນໄດ້ຮຽນແຕ່ສຳນັກອາຈານເຈົ້າມາ ພະຍາຮູ້ແຈ້ງເຫດອັນນັ້ນແລ້ວກໍໃຫ້ຄົນທັງຫລາຍແຕ່ງວັດຖຸສອງປະການ ເພື່ອຈັກແກ້ບັນຫາອັນນັ້ນໃຫ້ປາກົດແຈ້ງແກ່ຄົນທັງຫລາຍຫັ້ນແລ ວັດຖຸສອງປະການນັ້ນ ຫາກເປັນບຸບພະວິໄສແຫ່ງຜູ້ຊາຍ ຜູ້ຍິງທັງຫລາຍໃນໂລກນີ້ແລ ຄືວ່າໃຫ້ເອົາຜ້າຜືນໜຶ່ງ ຄວນຄ່າໄດ້ພັນຄຳ ແລະ ດອກໄມ້ຄຳດວງໜຶ່ງ

ອັນຄວນຄ່າໄດ້ພັນຄຳ ແລ້ວຈິ່ງໃຫ້ຄົນເອົາໄປທອດໄວ້ ເໜືອແທ່ນອັນຄົນທັງຫລາຍ ຫາກແປງໄວ້ໃຫ້ເປັນທີ່ຕັ້ງເຂົ້າຕອກດອກໄມ້ ເຄື່ອງບູຊາພະມະຫາເຈດີນັ້ນແລ້ວ ພະຍາກໍອະທິການ

ໄຫວ້ເທວະດາຜູ້ງຮັກສາພະມະຫາເຈດີເຈົ້ານັ້ນ ເພື່ອໃຫ້ຮູ້ບຸບພະວິໄສລູກໃນທ້ອງນັ້ນວ່າເປັນຜູ້ຍິງຜູ້ຊາຍ ຄັນວ່າ ອະທິການແລ້ວ ກໍຈຳນາງທັງສອງໄປເອົາດ້ວຍຄຳ ວ່າດັ່ງນີ້ ດູລານາງທັງສອງ ວັດຖຸສອງປະການນັ້ນແລະເພິງໃຈນາງອັນໃດ ນາງທັງສອງກໍຈຶ່ງເອົາວັດຖຸອັນນັ້ນມາກວາຍແກ່ເຮົາພະອົງ ຕາມອັນມັກແຫ່ງນາງທັງສອງເທີ້ນ ວ່າດັ່ງນີ້ແລ້ວ ສ່ວນວ່ານາງຜູ້ເປັນເມັຽນ້ອຍພະຍານັ້ນກໍໄປເອົາຜ້າພືນນັ້ນ ມາກວາຍແກ່ພະຍາກ່ອນແລ ສ່ວນດັ່ງນາງຜູ້ເປັນເມັຽນ້ອຍອຸບປະຮາດ ຈຶ່ງໄປເອົາດອກໄມ້ຄຳນັ້ນເມື່ອລຸນມາກວາຍແກ່ພະຍາແລ ເມື່ອນາງທັງສອງກວາຍແລ້ວດັ່ງນັ້ນ ພະຍາກໍຮູ້ບຸບພະວິໄສ ລູກໃນທ້ອງນາງທັງສອງນັ້ນວ່າ ນາງຜູ້ເປັນເມັຽພະຍານັ້ນລູກໃນທ້ອງເປັນຜູ້ຊາຍແລ ນາງຜູ້ເປັນເມັຽອຸບປະຮາດນັ້ນລູກໃນທ້ອງເປັນຜູ້ຍິງແລ ພະຍາຮູ້ດັ່ງນີ້ກໍໄວ້ໃນໃຈ ໄປ່ໃຫ້ປາກົດເທື່ອແລ ໃນເມື່ອວັນລຸນນັ້ນເປັນວັນປັນນະຣະສີ ຄືວ່າເດືອນເພັງນັ້ນ ພະຍາກໍໃຫ້ຊຸມນຸມມາຍັງຄົນກ້ອນໜ້າ ຊຸນຄ້າ ແລະເສດຖີ ບ່າວນິງຣາມຜູ້ດີ ມາກ້ອນແລ້ວພະຍາກໍໃຫ້ຫລິ້ນມະໂຫລະສົບຕາມພາສາເຂົາແຕ່ກ່ອນແລ ດັ່ງຜູ້ຍິງກໍໃຫ້ຫລິ້ນຕາມຜູ້ຍິງ ດັ່ງຜູ້ຊາຍກໍໃຫ້ຫລິ້ນຕາມຜູ້ຊາຍທັ້ນແລ ເມື່ອຄົນທັງຫລາຍຍັງພິງຫລິ້ນດັ່ງນັ້ນ ພະຍາກໍໃຫ້ນາງທັງສອງໄປຍູ້ໄມ້ສ້າວທັ້ນແລ ເມື່ອນາງທັງສອງໄປຍູ້ໄມ້ສ້າວກັນດັ່ງນັ້ນ ນາງຜູ້ເປັນເມັຍພະຍາກໍແພ້ນາງຜູ້ເປັນເມັຍນ້ອຍອຸບປະຮາດນັ້ນແລ ເມື່ອນັ້ນພະຍາກໍຮູ້ບູບພະວິໄສແຫ່ງນາງທັງສອງນັ້ນວ່າ ນາງຜູ້ຍູ້ໄມ້ສ້າວແພ້ນັ້ນລູກໃນທ້ອງເປັນຜູ້ຊາຍແລ ຜູ້ບໍ່ແພ້ນັ້ນລູກເປັນຜູ້ຍິງແລ ພະຍາກໍຮູ້ແຈ້ງນັກໃນໃຈຕົນກ້ອນຄົບສອງທີ ດັ່ງນີ້ແລ ໃນເມື່ອວັນປະຕິບົດຄືວ່າແຮມຄ່ຳໜຶ່ງນັ້ນ ພະຍາຈັກທວາຍລູກໃນທ້ອງນາງທັງສອງນັ້ນ ພະຍາຈຶ່ງກະທຳໃຫ້ມີສັກຂີເປັນທີ່ເຊື່ອແຫ່ງຄົນໃຊ້ພະຍາພິມປັດຕິນັ້ນ ພະຍາຈຶ່ງຣາດທະນາເທວະດາ ອັນຮັກສາພູມມະເສດຕະສັດແຫ່ງຕົນນັ້ນ ດ້ວຍຄຳວ່າດັ່ງນີ້ ຂ້າໄຫວ້ເທວະດາເຈົ້າ ບັດນີ້ຂ້າຈັກທວາຍລູກໃນທ້ອງທັງສອງນີ້ ອັນພະຍາພິມປັດຕິຫາກໃຊ້ມາເປັນບັນຫາມາສ່ອງຂ້ານີ້ ຜິວ່າຜູ້ຂ້າທວາຍຊອບບຸບພະວິໄສໃນສາດຕະສົນມາແຕ່ກ່ອນດັ່ງນັ້ນ ເທວະດາເຈົ້າຈຶ່ງໃຫ້ສັກຂີອັນໜຶ່ງແກ່ຂ້າ ຢ່າໃຫ້ຄົນທັງຫລາຍສົງກາເທີ້ນ ວ່າດັ່ງນີ້ແລ້ວ ພະຍາຈຶ່ງກ່າວວ່າດູລານັກປາດທັງຫລາຍ ສວນດັ່ງນາງສອງຄົນນີ້ ນາງຜູ້ເອົາຜ້ານີ້ ແລະຍູ້ໄມ້ສ້າວແພ້ນັ້ນລູກໃນທ້ອງເປັນຜູ້ຊາຍແລ ເຫດວ່າລູກຊາຍເກີດໃນທ້ອງຍິງຜູ້ໃດ ວິໄສຍິງຜູ້ນັ້ນ ກໍຍ່ອມເພິງໃຈດ້ວຍວັດຖຸເຄື່ອງບໍລິໂພກແຫ່ງຜູ້ຊາຍເປັນຕົ້ນວ່າ ເສື້ອແລະຜ້າຜ່ອນພືນດີນັ້ນແລ ປະການໜຶ່ງ ຍິງຜູ້ເປັນແມ່ນັ້ນກໍຍ່ອມມີກຳລັງອັນແຮງກວ່າຍິງຜູ້ທະລົງຄັບພະລູກຜູ້ຍິງນັ້ນແລ ຜິວ່າຍິງຜູ້ໃດ ອັນທະລົງຄັບພະລູກໃນທ້ອງເປັນຜູ້ຍິງ ວິໄສແຫ່ງຜູ້ຍິງຜູ້ເປັນແມ່ນັ້ນຫລຸນຍ່ອມເພິງໃຈດ້ວຍວັດຖຸເຄື່ອງບໍຣິໂພກແຫ່ງຜູ້ຍິງນັ້ນເປັນຕົ້ນວ່າ ດອກໄມ້ດວງນີ້ອັນຄວນທັດທະລົງນັ້ນແລ · ປະການໜຶ່ງຍິງຜູ້ເປັນແມ່ນັ້ນຫລຸນຍ່ອມມີປັກກະຕິອ່ອນບໍ່ແຮງແລ ອັນນີ້ຫາກເປັນບຸບພະວິໄສແຫ່ງຜູ້ຍິງທັງຫລາຍ ອັນທະລົງຄັບພະລູກໃນທ້ອງນັ້ນແລ ພະຍາພາຫາລະນະຄອນທວາຍລູກໃນທ້ອງແຫ່ງນາງທັງສອງສັນນີ້ ກໍຊອບກໍແມ່ນບູບພະວິໄສແທ້ແລ ພະຍາທວາຍເຫດສອງປະການນີ້ໃຫ້ປາກົດແກ່ຄົນທັງຫລາຍດັ່ງນີ້ແລ້ວ ເມື່ອນັ້ນເທວະດາຮັກສາພູມມະເສດຕະສັດພະຍານັ້ນ ກໍພາຍເຂົ້າຕອກດອກໄມ້ທິບລົງມາບູຊາທັ້ນແລ ຍາມນັ້ນ ຄົນໃຊ້ພະຍາພິມປັດຕິຣາດນັ້ນກໍເຫັນເປັນອັດສະຈັນມາກນັກ ກໍສາທຸການມາກນັກແລ້ວກໍໄຫວ້ພະຍາກາມວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ເຫດດັ່ງລີແລມະຫາຣາຊະເຈົ້າ

ຈິ່ງຕັດສະຣູ້ບັດດອວ ເປັນດັ່ງພະຍາອິນທາທິປະຕິຣາດເຫັນດ້ວຍຕາທິບນີ້ຈາ ຄວນອັດສະຈັນມາກນັກແທ້ແລ ມີຊື່ວ່າ ເທວະດາຫາກບອກແກ່ມະຫາຣາຊະເຈົ້າບໍ່ໃຫ້ປາກົດແກ່ຕູຂ້າທັງຫລາຍອັນຊະລື ຂໍມະຫາຣາຊະເຈົ້າ ຈິ່ງສໍາແດງຍັງບຸບພະວິໄສແຕ່ກ່ອນນັ້ນໃຫ້ແຈ້ງປາກົດແກ່ຕູຂ້າທັງຫລາຍແດ່ເທີ້ນ ເມື່ອນັ້ນພະຍາກ່າວວ່າ ດູລາຄົນໃຊ້ ທ່ານທັງຫລາຍຫາກຮູ້ແຈ້ງແລ້ວຈິ່ງເອົາມາທວາຍເຮົາດາຍ ທ່ານທັງຫລາຍຮູ້ໂດຍປະການສັນໃດ ເຮົາພະອິງກໍຮູ້ໂດຍປະການສັນນັ້ນແລ ເມື່ອນັ້ນຄົນໃຊ້ກ່າວວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ອັນພະຍາເຈົ້າຕູຂ້າທັງຫລາຍຕົນເປັນໃຫຍ່ແກ່ແຜ່ນດິນ ກໍສະເຫມີດັ່ງມະຫາຣາຊະເຈົ້ານີ້ທໍ່ຫາກຮູ້ໂດຍປັນຍາຕົນດາຍ ບັດນີ້ຕູຂ້າທັງຫລາຍຫາກຂໍຮູ້ຍ້ອນປັນຍາແຫ່ງມະຫາຣາຊະເຈົ້າແລ ເມື່ອນັ້ນ ພະຍາກ່າວວ່າທ່ານທັງຫລາຍມັກໄຄ່ຮູ້ນໍາແທ້ດັ່ງນັ້ນ ເຮົາກໍຈັກກ່າວບອກໃຫ້ແຈ້ງນໍາແລ ວ່າດັ່ງນີ້ແລ້ວ ພະຍາຈິ່ງກ່າວອະທິບາຍອັນຕົນໄດ້ຮຽນມາແຕ່ສໍານັກອາຈານເຈົ້າ ຕົນມີປັນຍາແຕ່ກ່ອນຈິ່ງກ່າວສືບໆມາໄວ້ໃຫ້ເປັນທີ່ຫອມໂລກຢ່າໃຫ້ມີຄໍາສົງກາ ແກ່ເສນາອາມາດຜູ້ຈັກພິຈາລະນາກ້ອຍຄໍາຕາງເຈົ້າພະຍາດັ່ງນີ້ແລ ທ່ານທັງຫລາຍຈິ່ງຟັງເທີ້ນ ຍັງມີຕໍານານອັນໜຶ່ງແຕ່ປະຖົມມະກັບທີວທີນັ້ນ ຍາມນັ້ນຄົນຫາກແຣກໃຫ້ເປັນຄົນເປັນສັດ ດັ່ງຈັກຮູ້ມານີ້ແລ ຍັງມີພະຍາຕົນໜຶ່ງ ຊື່ວ່າທໍາມະປັດຕິຣາດໃນເມືອງປັດຕິນະຄອນນັ້ນແລ ເມືອງອັນນັ້ນພົມຫາກແຣກໃຫ້ເປັນເມືອງຍັງມີເມືອງອັນໜຶ່ງ ຊື່ວ່າລະຕະຣາດ ພະຍາເຈົ້າເມືອງນັ້ນຫາລູກຍິງຊາຍບໍ່ໄດ້ຈິ່ງໃຊ້ໃຫ້ມາຂໍເອົາລູກຍິງຊາຍ ເຊິ່ງພະຍາທໍາມະປັດຕິຣາດຍາມນັ້ນ ພະຍາທໍາມະຕິຣາດ ກໍຫາລູກຍິງລູກຊາຍບໍ່ໄດ້ແລ ຍັງມີລູກເສດຖີສອງຄົນພີ່ນ້ອງ ທະລົງຄັບພະລູກໃນທ້ອງໄດ້ສີ່ເດືອນ ຜົວຕາຍເສັຍທັງສອງຄົນນັ້ນແລ ພະຍາທໍາມະປັດຕິຣາດຈິ່ງຖາມອາມາດທັງຫລາຍວ່າ ດັ່ງລື ເຮົາທັງຫລາຍຈັກຮູ້ວ່າ ຜູ້ນີ້ມີລູກໃນທ້ອງເປັນຜູ້ຍິງຜູ້ຊາຍແລ ຈັກຮູ້ດັ່ງນີ້ຈາ ພະຍາທໍາມະປັດຕິຣາດເສັງຖາມປະໂຣຫິດດັ່ງນີ້ແລ ເມື່ອນັ້ນປະໂຣຫິດກ່າວວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ບໍ່ທໍ່ຖາມເທວະດາແລ ເມື່ອນັ້ນພະຍາກໍເຂົ້າໃຈແລ້ວ ຈິ່ງໃຫ້ເອົາເຂົ້າຕອກດອກໄມ້ຄັນທະຂອງຫອມໄປບູຊາເທວະດາ ອັນຢູ່ຮັກສາຕົ້ນໄມ້ຊື່ສິນທະວາລິຕາ ອັນມີພາຍບົນປະຕູວຽງທິສະຫັນວັນອອກນັ້ນວ່າດັ່ງນີ້ ຂ້າໄຫວ້ເທວະດາເຈົ້ານາງສອງຄົນພີ່ນ້ອງທະລົງຄັບພະລູກໃນທ້ອງຜູ້ໃດເປັນຜູ້ຍິງ ຜູ້ໃດເປັນຜູ້ຊາຍນັ້ນຈາ ເທວະດາເຈົ້າຈິ່ງບອກໃຫ້ແຈ້ງແກ່ຂ້າແດ່ເທີ້ນ ວ່າດັ່ງນີ້ແລ້ວ ເມື່ອນັ້ນເທວະດາກ່າວວ່າ ດູລາມະຫາຣາດ ເມື່ອຈັກບອກແກ່ມະຫາຣາດໂດຍປະການສັນອື່ນ ກໍບໍ່ປາກົດແກ່ຄົນທັງຫລາຍແລ ເຫດດັ່ງນັ້ນມະຫາຣາຊະເຈົ້າຈິ່ງສ່ອງດ້ວຍບຸບພະວິໄສແຫ່ງຍິງທັງຫລາຍ ແລ້ວຈິ່ງໃຫ້ນາງທັງສອງໄປເທີ້ນ ອັນນີ້ກໍຈັກປາກົດແກ່ຄົນທັງຫລາຍແທ້ແລ ວ່າດັ່ງນີ້ແລ້ວເທວະດາຈິ່ງບອກພະຍາພົມປັດຕິວ່າ ໃຫ້ມະຫາຣາຊະເຈົ້າແຕ່ງບຸບພະວິໄສສັນນີ້ ຄືວ່າເອົາຜ້າຜືນຄ່າພັນຄໍາກັບດອກໄມ້ຄໍາດວງໜຶ່ງ ຄວນຄ່າໄດ້ພັນຄໍາແລະເອົາໄປໄວ້ທີ່ໜຶ່ງ ຈິ່ງໃຫ້ນາງທັງສອງໄປເອົາເທີ້ນ ຜູ້ໃດມັກອັນໃດກໍໃຫ້ເອົາອັນນັ້ນ ຕາມຄໍາມັກເທີ້ນວ່າດັ່ງນີ້ ຜູ້ໃດເອົາຜ້ານັ້ນຄັບພະລູກໃນທ້ອງຜູ້ຊາຍແລ ຄັນວ່ານາງທັງສອງໄປເອົາແລ້ວ ພະຍາທໍາມະປັດຕິຣາດ ກໍຮູ້ດ້ວຍບຸບພະວິໄສລູກໃນທ້ອງນາງສອງຄົນນັ້ນວ່າ ຜູ້ນີ້ເປັນຜູ້ຍິງຜູ້ນີ້ເປັນຜູ້ຊາຍແລ ຄັນວ່າພະຍາທໍາມະປັດຕິຣາດຮູ້ແລ້ວ ກໍສົ່ງນາງທັງສອງອັນເປັນລູກເສດຖີນັ້ນເມື່ອໃຫ້ແກ່ພະຍາລະຕະຣາດ ກໍມີແລ ເມື່ອນາງທັງສອງຢູ່ໃນສໍານັກພະຍາລະຕະຣາດແລ້ວ ນາງທັງສອງກໍປະສູດໄດ້ລູກ

ຊາຍລູກຍິງ ໃນສຳນັກພະຍາລະຕະຣາດ ພະຍາກໍໃຫ້ສືບເຊື້ອຊາດປະເວນີທ້າວພະຍາຕາບຕໍ່ເທົ້າກາລະບັດນີ້ແລ.

ພະຍາພາຫາລະນະຄອນກໍເອົາຕຳນານນິທານ ອັນນີ້ມາກ່າວໃຫ້ຄົນໃຊ້ພະຍາປັດຕິຣາດຟັງດັ່ງນີ້ແລ, ເມື່ອນັ້ນຄົນໃຊ້ພະຍານັ້ນເຂົາກໍເຂົ້າໃຈແຈ້ງນັກ ແລ້ວຈິ່ງມອບເວນນາງທັງສອງຕົນນັ້ນໄວ້ໃຫ້ບຳເຣີນພະຍາພາຫາລະນະຄອນແລ້ວ ເຂົາກໍສັ່ງອຳລາພະຍາແລ້ວກໍໜີໄປຫັ້ນແລ ຢູ່ບໍ່ນານທໍ່ໃດນາງທັງສອງກໍປະສູດລູກຫັ້ນແລ ສວນດັ່ງນາງເມັຍນ້ອຍພະຍາພິມມະປັດຕິຣາດນັ້ນ ກໍປະສູດໄດ້ລູກຊາຍແລ ສວນດັ່ງນາງເມັຍນ້ອຍອຸບປະຣາດນັ້ນກໍປະສູດໄດ້ລູກຍິງກໍມີແລ ກຸມມານທັງສອງນັ້ນມີຮູບອັນງາມລ້ອນກ້ວນທຸກແຫ່ງແລ ບໍ່ທໍ່ໃດຈິ່ງໃສ່ຊື່ກຸມມານທັງສອງຄົນນັ້ນໃນວັນອັນສູ່ຂວັນວ່າດັ່ງນີ້ ດັ່ງກຸມມານລູກເມັຍນ້ອຍພະຍາພິມມະປັດຕິຣາດນັ້ນ ຊື່ວ່າມູລະຕັນໄຕກຸມມານຫັ້ນແລ ສວນດັ່ງກຸມມາຣີ ລູກເມັຍນ້ອຍອຸບປະຣາດນັ້ນກໍຊື່ວ່າ ມູລະຕັນໄຕ ກຸມມາຣີຫັ້ນແລ ເຫດວ່ານາງທັງສອງມາແຕ່ເຄົ້າເມືອງອັນຊື່ວ່າມູລະຕັນໄຕນະຄອນແລ ເມື່ອນັ້ນພະຍາພາຫາລະນະຄອນກໍຍິນດີນັກແລ້ວ ກໍຈິ່ງຕັ້ງໄວ້ຍັງກຸມມານທັງສອງໃນທີ່ອັນເປັນລູກຍິງລູກຊາຍແຫ່ງຕົນນັ້ນແລກ່າວຄັບພະບັນຫາແລ້ວ ທໍ່ນີ້ແລ.

ໃນເມື່ອ ມູລະຕັນໄຕກຸມມານຂຶ້ນໃຫຍ່ມາໄດ້ເຈັດປີດັ່ງນັ້ນກໍປະກອບໄປດ້ວຍປັນຍາມາກນັກແລ.

ເມື່ອນັ້ນ ພະຍາເວສາລີ ກໍໃຊ້ໃຫ້ເອົາໄຂ່ນົກຕົວໜຶ່ງ ຊື່ວ່າເວນະສະກຸນີ ອັນຢູ່ໃນຝັ່ງມະຫາສະໝຸດນັ້ນມາເປັນບັນຫາມາສ່ອງແກ່ພະຍາພາຫາລະນະຄອນຫັ້ນແລ ດັ່ງໄຂ່ນົກນັ້ນມີສີ່ສິບຫ້າໜ່ວຍມາໃສ່ເກົ້າຫັບ ຄືວ່າຫັບໜຶ່ງໃສ່ລູກໜຶ່ງ ຫັບສອງໃສ່ສອງລູກ ຫັບສາມໃສ່ສາມລູກ ຫັບສີ່ໃສ່ສີ່ລູກ ຫັບຫ້າໃສ່ຫ້າລູກ ຫັບກ້ອນຫົກໃສ່ຫົກລູກ ຫັບກ້ອນເຈັດໃສ່ເຈັດລູກ ຫັບກ້ອນແປດໃສ່ແປດລູກ ຫັບກ້ອນເກົ້າໃສ່ເກົ້າລູກ ດັ່ງນີ້ແລ້ວ ກໍຕິດຈິດດີນັກ ຈິ່ງຂ່ອນບານຊີໃສ່ຫັບໂດຍດັ່ງໜ່ວຍໄຂ່ນັ້ນແລ ເພື່ອວ່າໃຫ້ມີສັກຂີໄຂ່ມີໃນຫັບທໍ່ນັ້ນຫັ້ນແລ ຄັນວ່າພະຍາແຕ່ງບັນຫາແລ້ວບໍລະບວນດັ່ງນີ້ ກໍໃຊ້ໃຫ້ໄປກວາຍທວາຍແກ່ພະຍາພາຫາລະນະຄອນຫັ້ນແລ ຄັນວ່າຄົນໃຊ້ໄປຮອດແລ້ວກໍກວາຍຫັບໄຂ່ແກ່ພະຍາ ແລ້ວກໍກ່າວກິດຈະກ້ອຍຄຳທັງມວນໂດຍໄນຍະດັ່ງພະຍາເຈົ້າຕົນສັ່ງສອນວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຈິ່ງປັນໄຂ່ເກົ້າຫັບນີ້ແກ່ຣາຊະທິດາສາມຄົນ ຄົນລະສິບຫ້າລູກເທີ້ນ ຜິວ່າຍັງຮູ້ເປັນດັ່ງຝູງຂ້າແທ້ຈັກບູຊາຄຳແສນໜຶ່ງໃຫ້ເປັນສ່ວຍໄຮຊູ່ປີແລ ຜິວ່າບໍ່ຮູ້ເປັນດັ່ງຝູງຂ້າຈັກເອົາຄຳປີລະແສນມາເປັນສ່ວຍໄຮແກ່ເຈົ້າຝູງຂ້າຊູ່ປີແລ ເມື່ອນັ້ນ ພະຍາໄດ້ຍິນແລ້ວໃນວັນລຸນພະຍາກໍໃຫ້ຊຸມນຸມມາຍັງເສນາອາມາດນັກປາດປະໂຣຫິດ ພາມທັງຫລາຍມາກາມດູຊູ່ຄົນແລ ເຂົາກໍບໍ່ອາດຈັກຮູ້ໄດ້ສັກຄົນແລ ວັນລຸນນັ້ນພະຍາກໍຮູ້ປັນຍາເຈົ້າມູລະຕັນໄຕກຸມມານນັ້ນພະຍາຈິ່ງກ່າວວ່າ ດູລາກຸມມານ ບັນຫາມີປະການສັນນີ້ ກໍຍັງປາກົດແກ່ປັນຍາແຫ່ງເຈົ້າກຸມມານບໍຈາ ທີ່ນັ້ນເຈົ້າກຸມມານກໍຂານຄຳພະຍາວ່າ ຂ້າແຕ່ມະຫາຣາຊະເຈົ້າ ບັນຫາທັງຫລາຍຝູງນີ້ອັນ

ເປັນກັບດ້ວຍອັດຖຸມາສັນນີ້ ເປັນຂອງກິນງ່າຍແທ້ດາຍ ແມ່ນວ່າອ່ານກໍດີ ບໍ່ອ່ານກໍດີ ເຫດວ່າເຂົາຫາກໃສ່ບານຊີໄວ້ຊູ່ທັບແລ້ວແລ ເຫດດັ່ງນັ້ນຂ້າຈຶ່ງວ່າບໍ່ຍາກສັງແລ ບໍ່ໃຊ່ບັນຫາອັນລັລວອັນລັບສັງແລ ຈັກແກ້ກໍບໍ່ເປັນອັນຍາກສັງແລ ຈັກໃຫ້ເປັນບັນຫາທີ່ນີ້ພອຍວ່າແຕ່ງແຕ່ເມືອງມາສ່ຽງນີ້ນໍ ເຂົານັ້ນສັກແຕ່ວ່າມີຄໍາແລແສນຈັກຮັກສາໄວ້ກໍບໍ່ໄດ້ແທ້ນໍ ພອຍວ່າກັບຄັ່ງແຄ້ນແໜ້ນໃຈເຂົາຈຶ່ງເອົາມາເປັນສ່ວຍໄຮແກ່ເຮົາເສັຍນໍ ວ່າດັ່ງນີ້ ເມື່ອນັ້ນ ຄົນໃຊ້ພະຍາເມືອງເວສາລີໄດ້ຍິນຄໍາແຫ່ງເຈົ້າມູລະຕັນໄຕກຸມມານ ກ່າວນັ້ນເປັນອັນອົງອາດ ສະຫລາດດ້ວຍໂວຫານມາກນັກດັ່ງນັ້ນ ກໍດູຈັກເສັຍຍົດສັກພະຍາເຈົ້າແຫ່ງຕົນເຂົາຈຶ່ງຕົກະທໍາກົນແກ້ຄໍາວ່າດັ່ງນີ້ ຄໍາອັນນີ້ກໍບໍ່ໃຊ່ພະຍາເຈົ້າຕູຂ້າທັງຫລາຍໃຊ້ມາດາຍ ຫາກແມ່ນຄໍາອຸບປະຮາດໃຊ້ມາແລ ທີ່ນັ້ນເຈົ້າມູລະຕັນໄຕກຸມມານກ່າວວ່າ ຜີວ່າບໍ່ໃຊ່ຄໍາພະຍາເຈົ້າແຫ່ງທ່ານທັງຫລາຍແທ້ ຫາກແມ່ນຄໍາອຸບປະຮາດໃຊ້ໃຫ້ມາແທ້ດັ່ງນັ້ນ ຈຶ່ງໄວ້ທັ້ນກ່ອນເທີ້ນ ພະຍາເຈົ້າແຫ່ງຕູກໍບໍ່ຄອນປັນໄຂ່ຝູງນີ້ແລ ຄອນກູຜູ້ດຽວນີ້ຫາກຈັກຕອບບັນຫາອຸບປະຮາດ ເອົາຄໍາແສນມາໄວ້ສ່ວຍໄຮກູອັນເປັນເດັກນ້ອຍນີ້ ຂຶ້ນເມືອຕາບຕໍ່ເທົ້າຊີວິດແລ ກ່າວດັ່ງນີ້ແລ້ວຈຶ່ງປັນໄຂ່ແກ່ນາງລູກສາວພະຍາພາຫາລະນະຄອນທັງສາມຄົນນັ້ນເປັນອັນງ່າຍນັກ ເປັນດັ່ງເດັກນ້ອຍປັນເຂົ້າໃຫ້ແກ່ກັນໃນຂ່ອງຫລອງກາງບ້ານເມື່ອຫລິ້ນນັ້ນແລທີ່ແທ້ກໍຍາກດາຍເຈົ້າກຸມມານມີປັນຍາກໍດູງ່າຍແທ້ດາຍ ເມື່ອເຈົ້າກຸມມານປັນສັນນີ້ໃຫ້ແກ່ນາງຜູ້ພີ່ສາມທັບ ທັບໜຶ່ງມີໄຂ່ສີ່ລູກ ທັບໜຶ່ງມີໄຂ່ເກົ້າລູກ ທັບໜຶ່ງມີໄຂ່ສອງລູກ ສາມທັບນີ້ມີໄຂ່ສິບຫ້າລູກແລ ໃຫ້ແກ່ນາງຜູ້ກາງນັ້ນກໍສາມທັບ ທັບໜຶ່ງມີໄຂ່ສາມລູກ ທັບໜຶ່ງມີໄຂ່ຫ້າລູກ ທັບໜຶ່ງມີໄຂ່ເຈັດລູກ ສາມທັບນີ້ມີໄຂ່ສິບຫ້າລູກແລ ປັນໃຫ້ຜູ້ຫລ້າກໍສາມທັບ ທັບໜຶ່ງມີໄຂ່ແປດລູກ ທັບໜຶ່ງມີໄຂ່ລູກໜຶ່ງ ທັບໜຶ່ງມີໄຂ່ຫົກລູກ ເຈົ້າມູລະຕັນໄຕປັນໄຂ່ນົກສັນນີ້ ກໍດ້ວຍນິຍົມເທວະດາຮັກສາອິດູກູນາມາຊ່ວຍຄາຖາວ່າສັນນີ້ ຈັຕຕາໂຣນະວະໂມທະເວຈະຕົນິປັນຈະ ສັຕຕະກາອັດກະເອໂກພະໂວສະຕິ ປັນຈະຈັຕຕາຣິສະອັນດະກາ ມູລະຕັນໄຕຍະນາເມນະ ຣາຊະປຸຕເຕນະ ພາສີຕາເທວະຕາກະກິເຕນະນິຍາເມນະສຸພາຊິຕາ. ປັນຈະຈັຕຕາຣິສະ ອັນດະກາ ອັນວ່າໄຂ່ທັງຫລາຍສີ່ສິບຫ້າໜ່ວຍ ຣາຊະປຸຕເຕນະ ອັນເຈົ້າຣາຊະບຸດມູລະຕັນໄຕຍະ ນາເມນະຕົນຊື່ວ່າ ມູລະຕັນໄຕພາສີຕາ ກໍຫາກກ່າວສຸພາຊິຕາ ກໍຫາກແຈກແລ້ວດີນັກ ນິຍາເມນະ ດ້ວຍນິຍົມ ເທວະຕາກະກິເຕນະອັນເທວະດາຫາກບອກ ອິຕິໂດຍປະການດັ່ງນີ້ແລ ຈັຕຕາໂຣ ອັນວ່າໄຂ່ສີ່ລູກ ນະວະໂມໄຂ່ເກົ້າລູກທະເວຈະ ສອງລູກ ສາມທັບນີ້ມີໄຂ່ສິບຫ້າລູກ ປັນໃຫ້ແກ່ນາງຜູ້ພີ່ແລ ຕິນິ ໄຂ່ສາມລູກປັນຈະ ໄຂ່ຫ້າລູກສັຕຕະກາ ໄຂ່ເຈັດລູກ ສາມທັບນີ້ມີສິບຫ້າລູກ ປັນໃຫ້ແກ່ນາງຜູ້ກາງແລ ອັດກະໄຂ່ແປດລູກ ເອໂກໄຂ່ລູກໜຶ່ງ ສະກິ ໄຂ່ຫົກລູກ ສາມທັບນີ້ມີໄຂ່ສິບຫ້າລູກ ປັນໃຫ້ແກ່ນາງຫລ້າແລ ເຈົ້າກຸມມານຄົນມີປັນຍາ ປັນຕາມຄາຖາເທວະດາຫາກສອນຮູ້ງ່າຍນັກແລ ທີ່ແທ້ນັກປາດຕົນມີປັນຍາກໍເພິ່ງວ່າຮອມເອົາຈໍາໄວ້ຫອມປັນຍາຕົນແລ ເຈົ້າກຸມມານປັນໄຂ່ແລ້ວຈຶ່ງອວາຍໜ້າຕໍ່ກັບຄົນໃຊ້ພະຍາເວສາລີວ່າ ຄໍາອັນນີ້ບໍ່ໃຊ່ຄໍາພະຍາເຈົ້າແຫ່ງທ່ານ ກໍເປັນຄໍາອຸບປະຮາດບໍດາຍ ສູພອຍມາລ່າຍວ່າ ຄໍາພະຍາມາສ່ຽງພະຍາເຈົ້າຕູນີ້ຈາ ສູພອຍມາເອົາອຸບປະຮາດມາປອບເຈົ້າຕູດາຍ ກູບໍ່ວາງເມືອດ້ວຍງ່າຍແລ ວ່າດັ່ງນີ້ແລ້ວ ເຈົ້າກຸມມານກໍກຸມເອົາຄົນຜູ້ເປັນຄົນໃຊ້ໄວ້ ກໍວາງແຕ່ຜູ້ເປັນນາຍນ້ອຍໃຫ້ເມືອກ່າວແກ່ພະຍາເວສາລີໂດຍຄໍາມີຊູ່ອັນແລ ເມື່ອນັ້ນພະຍາເວສາ

ລິກໍຮູ້ເຫດອັນນັ້ນແລ້ວ ຈິ່ງແຕ່ງຄຳແສນຫນຶ່ງໃຫ້ມາສ່ວຍໄຣຕາມປັກກະຕິອັນໄດ້ວ່ານັ້ນແລ້ວ ກໍຊ້ຳແຕ່ງຫມື່ນປາຍພັນຫນຶ່ງມາແລ ຄຳຫມື່ນນັ້ນໃຫ້ມາໄກ່ເອົາຄືນໃຊ້ນຳເຈົ້າກຸມມານ ຄຳພັນຫນຶ່ງນັ້ນໃຫ້ມາບູຊາເຈົ້າກຸມມານເຫດວ່າຍັງເປັນເດັກນ້ອຍແລ ມີປັນຍານັກອັນແກ້ບັນຫາໄດ້ນັ້ນແລ ເຂົາກໍລອດເວນບ້ານເມືອງໃຫ້ເປັນບ້ານຫນຶ່ງເມືອງດຽວກັນທັ້ນແລ ເຈົ້າກຸມມານຈິ່ງວາງຄືນໃຊ້ພະຍາເມືອທັ້ນແລ ກ່າວຈາອັນດະກະບັນຫາ ກໍແລ້ວເທົ່ານີ້ແລ.

ເມື່ອນັ້ນ ພະຍາພາຫາລະນະຄອນເຫັນເຈົ້າມູລະຕັນໄຕກຸມມານມີປັນຍາມາກນັກ ຫາທີ່ຈັກປຽບທຽມບໍ່ໄດ້ກໍ່ມີຄຳປິຕິຍິນດີມາກນັກທັ້ນແລ ເຈົ້າກຸມມານໃຫຍ່ສິບຫ້າປີແລ້ວພະຍາກໍອຸດສາພິເສກຍັງນາງມູລະຕັນໄຕກຸມາຣີ ໃຫ້ເປັນເມຍເຈົ້າມູລະຕັນໄຕກຸມມານ ແລ້ວພະຍາກໍຕັ້ງໄວ້ຍັງເຈົ້າກຸມານໃຫ້ເປັນຣາຊະບຸດແທ່ງຕົນທັ້ນແລ.

ແຕ່ນັ້ນໄປພາຍຫນ້າບໍ່ນານເທົ່າໃດ ຍັງມີພໍ່ຄ້າສະເພົາຫມູ່ຫນຶ່ງຫ້າຮ້ອຍເຫລັ້ມມາຄ້າໃນເມືອງພາຫາລະນະຄອນທີ່ນັ້ນທັ້ນແລ ຍາມນັ້ນ ພໍ່ຄ້າເຂົາກໍລັກຂອງແຫ່ງກັນແລ ຄືວ່າລັກຂອງດອກເຫດອັນເປັນຂອງຄ້າຂອງຂາຍແຫ່ງເຂົານັ້ນເສັຍຮ້ອຍດອກ ເຈົ້າຂອງບໍ່ຍອມຮູ້ຜູ້ລັກແລ້ວຈິ່ງພາກັນໄປໄຫວ້ເຈົ້າຣາຊະບຸດມູລະຕັນໄຕກຸມານ ພິຈາລະນາ ຈິ່ງກ່າວເຫດທັງມວນແກ່ເຈົ້າຣາຊະບຸດກຸມານ ແລ້ວຜູ້ລັກນັ້ນກໍຂານວ່າໄດ້ລັກແທ້ ເຈົ້າກຸມານຖາມວ່າ ຂອງດອກເຫດຮ້ອຍນັ້ນສູຊື້ມີຄ່າທໍ່ໃດຈາ ຂາເລົ່າຂານວ່າຕູຂ້າມາຂາຍເມືອງພີ້ ຮ້ອຍດອກນີ້ເປັນຄ່າຫມື່ນຄຳແລ ເຈົ້າຣາຊະບຸດຈິ່ງວ່າ ໃຫ້ໃຊ້ສອງຫມື່ນຄຳແລ ເຫດວ່າເມື່ອຊື້ນັ້ນຄ່າຖືກແທ້ແລ ທີ່ວ່າມາຕຶກປະເທດທີ່ແພງມັນຈິ່ງລັກເອົາດາຍ ຜິວ່າມັນບໍ່ລັກເອົາແທ້ດັ່ງນັ້ນ ເຈົ້າຂອງກໍຈັກໄດ້ຂາຍເອົາຄ່າແພງແລ ບັດນີ້ມັນກໍລັກເອົາຈິ່ງເສັຍສ່ວນເຈົ້າຂອງຈັກໄດ້ນັ້ນດາຍ ຈິ່ງໄດ້ໄຫມມັນໃສ່ຕາມປະເທດທີ່ຂອງແພງເພື່ອດັ່ງນັ້ນແລ ເຈົ້າຣາຊະບຸດຕັດຄຳສັບນີ້ສຸດຕະຕິແລ ເຈົ້າຣາຊະບຸດຈິ່ງຈາລະຈາກັບເສນາທັງຫລາຍວ່າດັ່ງນີ້ ຜິວ່າລັກຂອງໃນປະເທດທີ່ຖືກກໍຕັດຕາມຂອງຖືກ ທີ່ແພງກໍຕັດຕາມຂອງແພງ ອັນມັນລັກນັ້ນເປັນປະມານແລ ຕັດຄຳສັບນີ້ ຮຽກວ່າ ໄຟລຸກເມືອງໃດເອົານ້ຳເມືອງນັ້ນມາມອດແລ ເສນາອາມາດທັງຫລາຍກໍຂານວ່າຊອບແທ້ແລ.

ແຕ່ນີ້ເມືອຫນ້າ ເລົ່າຍັງມີພາມຜູ້ຫນຶ່ງໄປໄກນາແລ້ວ ເມື່ອຄໍ່າມັນເອົາງົວມາແຫລ່ງໄວ້ໃຕ້ລ່າງເຮືອນມັນທັ້ນແລ ເມື່ອກາງຄືນ ໂຈນກໍລັກເອົາງົວມັນໄປຟັນກິນຊີ້ນແລ້ວຈິ່ງເອົາຊີ້ນໄປຊ້ອນໄວ້ໃນສວນພາມຜູ້ຫນຶ່ງ ເຈົ້າສວນກໍບໍ່ເຫັນແລ ຄັນວ່າບາດຮຸ່ງເຊົ້າເຈົ້າງົວໄປໄຕ່ ຈິ່ງເຫັນຊີ້ນຢູ່ໃນສວນດັ່ງນັ້ນຈິ່ງວ່າ ພາມຜູ້ນີ້ມຶງຫາກລັກຂ້າງົວກູກິນແລ້ວແລ ມັນກໍມັດເອົາພາມເຈົ້າສວນນັ້ນໄປໃຫ້ເຈົ້າຣາຊະບຸດມູລະຕັນໄຕພິຈາລະນາທັ້ນແລ ເມື່ອນັ້ນເຈົ້າຣາຊະບຸດພິຈາລະນາດູ ກໍຮູ້ກົດຈະອັນພາມເຈົ້າຂອງສວນບໍ່ເປັນໂຈນລັກນັ້ນ ຈິ່ງອຸບາຍໃຫ້ເຈົ້າງົວຟັງດັ່ງນີ້ ຍັງມີໂຈນຜູ້ຫນຶ່ງລັກວັດຖຸອັນຫນຶ່ງ ໃນທີ່ອື່ນມາຊ້ອນໄວ້ໃນປະຕູເຮືອນມຶງດັ່ງນັ້ນ ມຶງກໍບໍ່ຮູ້ເມື່ອແທ້ດັ່ງນັ້ນເຈົ້າຂອງຈິ່ງໄປເຫັນວັດຖຸອັນທ່ານລັກເອົາມາໄວ້ນັ້ນ ເຈົ້າຂອງຈິ່ງວ່າເຈົ້າເຮືອນນີ້ລັກເອົາແລ້ວວ່າດັ່ງນີ້

ມຶງກໍຈັກຂານວ່າກູລັກເອົາແລ ມຶງຈັກວ່າດັ່ງນີ້ລື ພານຜູ້ເປັນເຈົ້າງົວວ່າຂ້າບໍ່ໄດ້ລັກຈັກຂານວ່າລັກກໍບໍ່ໄດ້ແລ ທີ່ນັ້ນເຈົ້າຣາຊະບຸດຈິ່ງກ່າວວ່າ ງົວມຶງກໍຢູ່ໃນທີ່ນອນມຶງໃກ້ຫູມຶງເດ ໂຈນມາລັກເອົາໄປມຶງກໍຍັງບໍ່ຮູ້ດາຍ ພານຜູ້ນີ້ ສວນມັນຢູ່ໄກເຮືອນມັນນັກກວ່າມຶງໄວ້ງົວນັ້ນດາຍ ໂຈນຫາກລັກເອົາ ງົວມຶງໄປຊ້ອນໄວ້ໃນສວນທ່ານ ເຈົ້າສວນທ່ານຈັກຮູ້ນັ້ນຈາ ເຈົ້າຣາຊະບຸດມູລະຕັນໄຕພິຈາລະດູແຈ້ງແລ້ວ ຈິ່ງຕັດວ່າ ເມື່ອໃດມຶງຮູ້ຜູ້ລັກມຶງນັ້ນແລ້ວມຶງຈິ່ງໄຫມເອົາເທີ້ນ ເຫດວ່າບໍ່ໄດ້ຂອງກັບມືມັນດາຍ ທ່ານບໍ່ພິຈາລະນາ ໄດ້ຜູກທ່ານຜິດແລ ເຈົ້າຣາຊະບຸດໃຫ້ມັນເສຍພັນເບັ້ຍເປັນສິນໄຫມແລ .ເຫດວ່າທ່ານບໍ່ຜິດແລ ມັນຜູກທ່ານແລ ຜີວ່າລັກແທ້ກໍດີ ໂທດກໍບໍ່ພໍຜູກແລ ເຫດວ່າງົວນັ້ນມີຄ່າສອງພັນເບັ້ຍຫນຶ່ງແລ ຈິ່ງໃຫ້ມັນເສັຍສອງພັນເບັ້ຍເປັນຂົນທີ່ຕູ່ແລ ຜີຈັກໄຫມດ້ວຍໂທດອັນຜູກທ່ານນັ້ນ ໃຫ້ໄຫມແສນສອງຫມື່ນເບັ້ຍແລ ຕັດຄຳສັນນີ້ສຸຄະຕິແລ ເຈົ້າຣາຊະບຸດ ມູລະຕັນໄຕກຸມານກ່າວວ່າ ດູລາເສນາອາມາດ ລຸງອາວຊາວພໍ່ທັງຫລາຍລັກວັດກຸເບື້ອງໃດກໍດີ ບໍ່ໄດ້ຂອງກັບມືດັ່ງນັ້ນ ຢ່າໄດ້ຕັດສິນໄຫມໃສ່ເທີ້ນ ບໍ່ຊອບແກ່ນັກປາດແລ ເປັນດັ່ງແປງທາງໄປສູ່ອະບາຍຫັ້ນແລ ເຈົ້າຣາຊະບຸດຈິ່ງຊັກຕຳນານອັນຫນຶ່ງມາປອບວ່າດັ່ງນີ້ ດູລານັກປາດທັງຫລາຍຍາມນັ້ນຍັງມີເສນາລັງກາຜູ້ຫນຶ່ງ ຊື່ວ່າເວສາຍະພານ ຢູ່ພິຈາລະນາກ້ອຍຄຳຕາງພະຍາຫັ້ນແລ ຍັງມີພານສອງຄົນຢູ່ບ້ານດຽວກັນ ພານຜູ້ຫນຶ່ງມີຄຳພັນຫນຶ່ງໃສ່ກົງໄວ້ ໂຈນກໍມາລັກເອົາທັງກົງຄຳຂອງພານຜູ້ນັ້ນໄປແລ້ວກໍເອົາຄຳເສັຍແລ້ວ ກໍກົ້ມກົງໄວ້ໃຕ້ຂັ້ນໄດແຫ່ງພານນັ້ນແລ້ວກໍຫນີໄປຫັ້ນແລ ພານເຈົ້າຄຳໄຕ່ໄປເຫັນກົງຄຳຢູ່ໃຕ້ຂັ້ນໄດຫັ້ນແລ້ວ ກໍຕູ່ວ່າເຈົ້າເຮືອນນີ້ ລັກເອົາຄຳກູມາແລ ວ່າດັ່ງນີ້ບໍ່ຍອມກັນ ຈິ່ງພາກັນໄປໃຫ້ເສນາຜູ້ຊື່ວ່າເວສາຍະພານພິຈາລະນາແລ ເວສາຍະພານພິຈາລະນາບໍ່ໃຫ້ກີ່ກໍລວດຕັດຂັນໄຫມໃສ່ພານຜູ້ເຈົ້າເຮືອນນັ້ນເສັຍສອງພັນຄຳແລ ເມື່ອນັ້ນພານຜູ້ເປັນເຈົ້າຄຳນັ້ນ ມັນກໍຍິນດີມາກນັກ ມັນກໍເສີກເສີນຍ້ອງຍໍວ່າ ເສນາຜູ້ນີ້ມີປັນຍາມາກນັກແທ້ແລ ວ່າດັ່ງນີ້ເມື່ອນັ້ນ ເວສາຍະພານຜູ້ນັ້ນ ກໍຍົກຕົນມັນຂຶ້ນວ່າກູນີ້ເປັນເສນາພະຍາດາຍ ໃຜຈັກມີປັນຍາຍິ່ງກວ່າກູບໍ່ມີແລ ຄັນວ່າມັນພິຈາລະນາດັ່ງນີ້ແລ້ວ ມັນກໍລົງໄປອາບນ້ຳໃນທ່າຜີເສື້ອນ້ຳກໍກິນມັນເສັຍຫັ້ນແລ ສ່ວນວ່າພານຜູ້ເປັນເຈົ້າຂອງຄຳນັ້ນ ມັນກໍໄດ້ສິນໄຫມແລ້ວ ມັນກໍຫນີເມື່ອເຖິງກາງທາງ ບໍ່ທັນຮອດເຮືອນ ເສືອໂຄ່ງຕົວຫນຶ່ງກໍເບີບກິນມັນເສັຍຫັ້ນແລ ເຫດວ່າເມືອງອັນນັ້ນມີທຳມາກນັກກະທຳອັນໃດຜິດທຳ ກໍຫາກເຫັນຕໍ່ຫນ້າທັນຕາເພື່ອດັ່ງນັ້ນແລ ສ່ວນວ່າເວສາຍະພານຕັດຄຳຜິດ ຜີເສື້ອນ້ຳກິນມັນຕາຍນັ້ນ ກໍໄປເກີດເປັນເຜດເປືອຍແລ້ວກໍມາຮ້ອງກ່າວແກ່ເສນາທັງຫລາຍ ອັນໄດ້ພິຈາລະນາຄຳຕໍ່ນີ້ວ່າ ທ່ານທັງຫລາຍ ອັນມີກູເປັນເຄົ້າໄດ້ຕັດຄຳຕໍ່ນີ້ຜິດ ບໍ່ພິຈາລະນາໃຫ້ກີ່ ບໍ່ໄດ້ວັດກຸກັບໂຈນລວດຕັດສິນຄຳຜິດ ກູຕາຍໄດ້ເປັນເຜດເປືອຍສັນນີ້ແລ ຕັດຄຳຕໍ່ໃດສະເຫມີກໍດີບໍ່ສະເຫມີກໍດີ ສູຢ່າໄດ້ຕັດງ່າຍເທີ້ນ ຈິ່ງພິຈາລະນາດູກີ່ ແລ້ວຈິ່ງຕັດຕາມທຳເທີ້ນ ສ່ວນວ່າພານຜູ້ເປັນເຈົ້າຄຳອັນເສືອໂຄ່ງກິນຕາຍນັ້ນ ມັນກໍໄດ້ເກີດເປັນຍັກຕົວຫນຶ່ງ ມາກາງຄືນເອີ້ນກ່າວແກ່ລູກເມັຍມັນວ່າ ກູໄດ້ຕູ່ພານຜູ້ນັ້ນເປັນໂຈນລັກຄຳກູ ໃຫ້ທ່ານເວສາຍະພານໄຫມມັນໄດ້ຄຳສອງພັນ ຜິດເສັຍ ເສືອໂຄ່ງຈິ່ງກິນກູເພື່ອດັ່ງນັ້ນ ກູຕາຍໄດ້ເກີດເປັນຍັກແລ ສູຈິ່ງເອົາຄຳສອງພັນນັ້ນໄປຄືນແກ່ພານເຈົ້າຄຳນັ້ນເທີ້ນ ບໍ່ສິງກູຈັກຕາຍຈາກອັນເປັນຍັກນີ້ແລ້ວ ກໍຈັກໄດ້ໄປຕົກນະຣົກແທ້ດີຫລີແລ ເມື່ອນັ້ນຝູງຍາຕິມັນຈິ່ງຄືນຄຳນັ້ນໃຫ້ແກ່ພານເຈົ້າຄຳດັ່ງເກົ່າຫັ້ນ

ແລ. ຄຳອັນນັ້ນກໍລືຊາປາກົດໄປແກ່ຄົນທັງຫລາຍທີ່ວລັງກາທີບທັ້ນແລ ຕັ້ງແຕ່ນີ້ເມື່ອໜ້ານັກປາດທັງຫລາຍໄດ້ພິຈາລະນາກ້ອຍຄຳໃຫ້ຄິດດູກໍ່ ຈຶ່ງຄວນຕັດສິນແທ້ດີຫລືດາຍ ຜີຕັດບໍ່ຊອບທຳດັ່ງນັ້ນ ຜູ້ພິຈາລະນາກໍເປັນກຳອັນໜັກ ຜູ້ເອົາກໍເປັນກຳອັນໜັກສິ່ງດອ້ວກັນແລ ເຈົ້າຣາຊະບຸດມູລະຕັນໄຕຊົກຕຳນານອັນນີ້ມາສັ່ງສອນເສນາອາມາດ ລຸງອາວຊາວພໍ່ດັ່ງນີ້ແລ ເມື່ອນັ້ນເທວະດາຕົນຮັກສາເສດຕະສັດພະຍາໄດ້ຍິນແລ້ວ ກໍບູຊາເຈົ້າຣາຊະບຸດດ້ວຍດອກໄມ້ສັງກະທີບເຈັດດອກ ໃຫ້ເປັນສັກຂີແກ່ເສນາທັງຫລາຍທັ້ນແລ.

ເລົ່າຍັງມີເມືອງອັນໜຶ່ງຊື່ວ່າ ເພທະມະຫານະຄອນ ພະຍາຕົນເປັນເຈົ້າເມືອງນັ້ນຊື່ວ່າ ເພທະຣາດ ພະຍາຕົນນັ້ນມີລູກສາວສາມຄົນ ມີຮູບງາມລ້ວນກ້ວນທຸກແຫ່ງທຸກພາຍແລ ພະຍາກໍໃຫ້ຢູ່ປາສາດແຕ່ນ້ອຍ ດັ່ງນາງສາມຄົນພີ່ນ້ອງນັ້ນ ສ່ວນວ່ານາງຜູ້ພີ່ນັ້ນເມື່ອຈະປະສູດນັ້ນ ນາງຜູ້ເປັນແມ່ຝັນເຫັນພະອາທິດເອົາລູກໄມ້ມາໃຫ້ໜຶ່ງລູກ ເຫດດັ່ງນັ້ນຈຶ່ງຮອກຊື່ວ່າ ສຸຣິຍະກຸມາຣີແລ ດັ່ງຜູ້ກາງນັ້ນເມື່ອຈະປະສູດນັ້ນ ຝັນວ່າລົມມາພັດຍອດຜາສາດມີສຽງດັ່ງຄົນຂັບນັ້ນຈຶ່ງໃສ່ຊື່ວ່າ ວາຕະກຸມາຣີແລ ສ່ວນດັ່ງນາງຜູ້ຫລ້ານັ້ນ ວັນຈະປະສູດນັ້ນຝັນວ່າ ເຈົ້າຮັດສີເອົາຊ້ອງມາໃຫ້ອັນໜຶ່ງ ອັນກະທຳແລ້ວດ້ວຍພົມງາມນັກ ມາໃຫ້ແກ່ນາງແລ ເຫດດັ່ງນັ້ນຈຶ່ງໃສ່ຊື່ວ່າເກສີກຸມາຣີແລ ນາງສາມຄົນນີ້ມີຊື່ດ້ວຍເຫດນິມິດຄຳຝັນແຫ່ງນາງຜູ້ເປັນແມ່ນັ້ນແລ ລ້ຳນາງສາມຄົນພີ່ນ້ອງນັ້ນ ຄັນວ່າບໍ່ອັດບໍ່ຮີ່ປ່ອງຜາສາດໃຫ້ແຈບໃຫ້ດີດັ່ງນັ້ນ ຄັນຮັດສະໝີພະອາທິດສ່ອງເຂົ້າມາຕ້ອງກີກເນື້ອຕົນ ນາງກໍສຸກພອງຮ້ອນກະຫາຍນັກແລ ນາງຜູ້ກາງນັ້ນຄັນວ່າບໍ່ອັດຮີ່ຜາສາດໃຫ້ແຈບດີ ຄັນວ່າລົມພັດເຂົ້າມາກົກຕ້ອງເນື້ອຕົນນາງເມື່ອໃດ ເນື້ອຕົນນາງກໍເຢັນເປັນອັນກະດ້າງແຂງທ່ອງທ່ວວໄປມາບໍ່ໄດ້ເປັນອັນລຳບາກມາກນັກແລ ນາງຜູ້ຫລ້ານັ້ນ ວັນໃດນາງຟູງບົວລະບັດໄປປັດເສື່ອສາດອາດສະໜາ ບໍ່ໃຫ້ໝົ່ນໃຫ້ດີ ມາຕາວ່າພົມເສັ້ນດອ້ວໜຶ່ງກໍດີແລມາຫລໍຢູ່ເໜືອອາດສະໜາທີ່ນອນນາງໄດ້ນອນເຕັງພົມນັ້ນ ເນື້ອຄີງນາງກໍເປັນຮອຍເສັ້ນພົມບາດເປັນອັນລຳບາກແສບຮ້ອນກະຫາຍໃຈນັກແລເຫດວ່າເນື້ອຕົນນາງສາມຄົນນີ້ອ່ອນນັກເປັນດັ່ງສຳລີຝ້າຍ ອັນທ່ານຟັດໄດ້ຮ້ອຍຄາບນັ້ນແລ ເມື່ອນັ້ນພະຍາມະຫາເພທະຣາດ ຕົນພໍ່ຈຶ່ງກ່າວວ່າ ລູກກູສາມຄົນນີ້ເກີດມາມີບຸນພະລະສົມພານມາກນັກແລ ມີເນື້ອຕົນອັນອ່ອນສຸຂຸມານນັກແລ ພະຍາກໍຖາມເສນາແລະນັກປາດທັງຫລາຍວ່າ ລູກກູສາມຄົນນີ້ ຜູ້ໃດຍັງຈັກຄວນເປັນເມັຍທ້າວພະຍາດີຈາ ເມື່ອນັ້ນປະໂຣຫິດຜູ້ໜຶ່ງກ່າວວ່າ ຂ້າໄທວ້ມະຫາຣາຊະເຈົ້າດັ່ງໄດ້ຍິນມານີ້ ເມືອງພາຫາລະນະຄອນພຸ້ນ ຍັງມີຣາຊະບຸດຜູ້ໜຶ່ງຊື່ວ່າມູລະຕັນໄຕກຸມານ ມີປັນຍາຫາທີ່ຈັກປຽບທຽບບໍ່ໄດ້ວ່າດັ່ງນີ້ແລ ເຮົາເພິ່ງໃຊ້ໃຫ້ໄປເປັນບັນຫາສ່ອງດູເທີ້ນ ເຮົາຫາກຈັກຮູ້ແລ ເມື່ອນັ້ນພະຍາກໍເຂົ້າໃຈແລ້ວວ່າດັ່ງນີ້ດີງແລ ວ່າດັ່ງນີ້ແລ້ວ ກໍໃຊ້ຂ່າວສານອັນນັ້ນໄປເຖິງເມືອງພາຫາລະນະຄອນ ໂດຍນິຍົມເຫດນາງທັງສາມຄົນນັ້ນແລ ຄັນວ່າຄົນໃຊ້ເມືອຮອດແລ້ວ ກ່າວເຫດທັງມວນທັ້ນແລ ເມື່ອນັ້ນພະຍາພາຫາລະນະຄອນ ກໍຖາມເສນາອາມາດນັກປາດທັງຫລາຍວ່າ ທ່ານທັງຫລາຍຍັງຮູ້ບໍຈາ ເສນາອາມາດ ແລະ ນັກປາດທັງຫລາຍກ່າວວ່າຂ້າທັງຫລາຍກໍບໍ່ອາດຈະຮູ້ໄດ້ແລ ພະຍາເລົ່າຖາມເຈົ້າຣາຊະບຸດມູລະຕັນໄຕກຸມານວ່າ

ດູລາເຈົ້າຣາຊະບຸດຂ່າວສານແຫ່ງນາງທັງສາມຄົນ ຍັງຈັກຮູ້ບໍຈາ ເມື່ອນັ້ນເຈົ້າຣາຊະບຸດກ່າວວ່າ
ຂ້າໄຫວ້ມະຫາຣາຊະເຈົ້າ ຊາຕິບັນຫາອັນສຸຊຸມານປານນີ້ຜູ້ຈັກແກ້ກໍຍັງດູຍາກແລ ສ່ວນວ່າຂ້ານີ້
ຄິດດູກໍຍັງປາກົດໃນປັນຍາແຫ່ງຂ້າແທ້ແລ ເມື່ອນັ້ນພະຍາກໍໃຫ້ພາມາຍັງຄົນໃຊ້ພະຍາເພທະຣາດ
ນັ້ນມາແລ້ວ ກໍໃຫ້ເຂົາກ່າວຍັງບັນຫາອັນນັ້ນແກ່ເຈົ້າຣາຊະບຸດທັ້ນແລ ຄັນວ່າເຈົ້າຣາຊະບູດໄດ້
ຍິນຂ່າວສານອັນນັ້ນແລ້ວ ກໍຕັດສະຮູ້ໃນໃຈແຈ້ງນັກເປັນດັ່ງອຸບປັດຊາອາຈານສັ່ງສອນນັ້ນ ເຈົ້າຈຶ່ງ
ຕຶກະນຶງໃນໃຈວ່າດັ່ງນີ້ ກູນີ້ຍັງເປັນກຸມານຫນຸ່ມນ້ອຍນັກແລ ຈັກແກ້ບັນຫາອັນເປັນຄຳສ່ຽງທ້າວພະ
ຍາສັນນີ້ ແມ່ນວ່າຊອບກໍດີຫາຜູ້ຈັກເປັນສັກຂີບໍ່ໄດ້ແລ ກໍຈັກເປັນຄຳສິງກາແຫ່ງຄົນທັງຫລາຍ
ກູບໍ່ເພິ່ງກ່າວດ້ວຍງ່າຍແລ ເພິ່ງກູຫາສັກສີຈຶ່ງຄວນແລ ຕຶກະນຶງດັ່ງນີ້ແລ້ວ ເຈົ້າຈຶ່ງກ່າວສ່ຽງ
ເທວະດາວ່າ ຂ້າໄຫວ້ເທວະດາເຈົ້າຕົນຮັກສາປາສາດ ຂ້າຈັກແກ້ບັນຫາທ່ານມາສ່ຽງສັນນີ້ ຂ້າ
ຈັກກ່າວຕາມຂ້າຮູ້ນັ້ນ ຜີຍັງຊອບຄອງໂລກແລະຄອງທຳມະດາມາແຕ່ກ່ອນນັ້ນແທ້ ເທວະດາ
ເຈົ້າຈຶ່ງໃຫ້ເປັນສັກຂີອັນຫນຶ່ງແກ່ຄົນທັງຫລາຍເທີ້ນ ວ່າດັ່ງນີ້ແລ້ວຈຶ່ງກ່າວວ່າ ດູລາຄົນໃຊ້ດັ່ງນາງ
ທັງສາມຄົນພີ່ນ້ອງອັນເປັນລູກພະຍາເຈົ້ານັ້ນກໍຫາກປະເສີດແລ້ວແທ້ດີຫລີແລ ຈັກໃຫ້ປາກົດດ້ວຍ
ເຫດສັນໃດຈາ ຈັກໃຫ້ກ່າວດັ່ງລືຈາພະຍາເຈົ້າມັກໄຄ່ໃຫ້ເປັນເມັຍພະຍາຕົນໃດກໍດີກໍຫາກຢູ່
ໃນພະຍາເຈົ້າຕົນພໍ່ຊູ່ອັນແລ ເມື່ອນັ້ນ ຄົນໃຊ້ກ່າວວ່າ ຂ້າແຕ່ເຈົ້າຣາຊະບຸດ ທ້າວພະຍາຕົນໃດ
ແລໄຄ່ໄດ້ກໍຈັກໃຫ້ຕາມອັນມັກແລ ແມ່ນວ່າກ່ອຍກໍດີປະເສີດກໍດີແລ ທີ່ນີ້ກໍໃຫ້ຮູ້ອັນຍັງແອນປະເສີດ
ອັນເປັນທຳມະດາມາແຕ່ຫລັງນັ້ນແລ ເມື່ອນັ້ນເຈົ້າຣາຊະບຸດກ່າວວ່າ ຜີວ່າທ່ານທັງຫລາຍຍັງໄຄ່
ຮູ້ອັນເປັນທຳມະດາແທ້ດັ່ງນັ້ນ ເຮົາກໍຈັກກ່າວໃຫ້ຮູ້ແລວ່າດັ່ງນີ້ ເຈົ້າຣາຊະບຸດກ່າວວ່າ ດັ່ງ
ນາງສາມຄົນນີ້ກໍຫາກເປັນລູກພະຍາ ແລະສຸຊຸມານຊູ່ຄົນດັ່ງກັນແລ ດັ່ງນາງອັນຮັດສະຫມີພະອາທິດ
ມາກຶກຕ້ອງຢູ່ບໍ່ສຳຣານນັ້ນກໍດີ ນາງຜູ້ລົມມາພັດຕ້ອງເນື້ອຕົນຢູ່ບໍ່ສຳຣານນັ້ນກໍດີ ກໍຫາກເປັນປະເວ
ນີແຫ່ງລູກທ້າວພະຍາມາແຕ່ທຳມະດາແທ້ແລ ຊາຕິລູກທ້າວພະຍານີ້ນາກໍບໍ່ທ່ອນຕ້ອງລົມໄດ້ແລ
ນາງທ້າວພະຍາກໍດີ ນາງຂຸນກໍດີເຂົາທັງຫລາຍຝູງນີ້ ຫອນຍ່ອມຢູ່ຮົ່ມຢູ່ເຢັນ ບໍ່ທ່ອນຕ້ອງແດດຕ້ອງ
ລົມດັ່ງນັ້ນ ກໍຫອນຍ່ອມລຳບາກຢູ່ບໍ່ສຳຣານດາຍ ເຫດດັ່ງນັ້ນ ຈັກໃຫ້ກ່າວດັ່ງລືຈາ ບໍ່ເປັນອັດສະ
ຈັນສັງແລ ສ່ວນວ່ານາງຜູ້ນອນເຕັງຜົມແລະເສັ້ນນັ້ນກໍເປັນຮອຍພົມບາດໃນເນື້ອຄີງແສບຮ້ອນຢູ່ບໍ່
ສຳຣານດັ່ງນັ້ນ ຜູ້ມີສັນນີ້ໃນປະເທດບ້ານນ້ອຍເມືອງໃຫຍ່ທັງຫລາຍ ໃນຊົມພູທີບທັງມວນນີ້ອັນຈັຣ
ໄດ້ເຫັນກໍດີ ຮູ້ຂ່າວວ່າກໍດີ ຝັນເຫັນກໍດີ ກໍບໍ່ມີສັກແຫ່ງແລ ນາງຜູ້ມີສະພາວະປານດັ່ງນີ້ແລ ເກີດ
ມາເປັນລູກທ້າວພະຍາສັນນີ້ກໍປະກອບໄປດ້ວຍບຸນຍະສົມພານມາກນັກ ນາງຜູ້ນັ້ນກໍຄວນເປັນນາງ
ອັກຄະມະເຫສີແກ່ທ້າວພະຍາມະຫາກະສັດຕາທິຣາດຕົນເປັນໃຫຍ່ໃນໄຮ່ນາແທ້ດີຫລີແລ ເຈົ້າຣາ
ຊະບຸດມູລະຕັນໄຕກຸມານແກ້ບັນຫາສາມນາງພີ່ນ້ອງດັ່ງນີ້ ກໍຊອບຄອງໂລກມາກນັກເທວະດາກໍຍິນດີ
ນັກຈຶ່ງພາຍເຂົ້າຕອກດອກໄມ້ທີບລົງມາບູຊາທັ້ນແລ ເມື່ອນັ້ນຄົນໃຊ້ພະຍາມະຫາເພທະຣາດ ກໍ
ໄດ້ຍິນຄຳເຈົ້າຣາຊະບຸດແກ້ບັນຫານັ້ນ ກໍຍິນດີມາກນັກ ຈຶ່ງສາທຸການແລ້ວ ກໍສັ່ງອຳລາພະຍາພາ
ຫາລະນະຄອນແລ້ວ ກໍຫນີໄປບອກຂ່າວສານອັນເຈົ້າຣາຊະບຸດກ່າວນັ້ນ ແກ່ພະຍາເຈົ້າຊູ່ປະການ
ທັ້ນແລ່ ພະຍາເພທະຣາດໄດ້ຍິນແລ້ວກໍຍິນດີຍິ່ງນັກ ຈຶ່ງກ່າວວ່າ ດັ່ງເຈົ້າຣາຊະບຸດຕົນນີ້ບໍ່ທໍ່ແຕ່
ຈັກເປັນຣາຊະບຸດສິ່ງດຽວ ກໍຈັກໄດ້ເປັນພະຍາຜາບຊົມພູທັງມວນນີ້ບໍ່ຢ່າຊະແລ ຄວນກູເອົາລູກ

ໄປໃຫ້ແກ່ຣາຊະບຸດຕົນນີ້ຄອນແລ ວ່າດັ່ງນີ້ແລ້ວກໍໃຫ້ເອົາລູກຍິງຕົນຜູ້ຊື່ວ່າ ນາງເກສີກຸມາຣີໄປໃຫ້ແກ່ເຈົ້າຣາຊະບຸດທັ້ນແລ ເມື່ອນັ້ນ ນັກປາດທັງຫລາຍກໍໂຈທະນາກັນວ່າດັ່ງນີ້ ເຈົ້າຣາຊະບຸດນີ້ມາໄດ້ລູກສາວພະຍາເປັນອັນງ່າຍນັກສັນນີ້ ກໍໄດ້ດ້ວຍເປັນເຫດແຫ່ງປັນຍາຕົນແລ ອັນວ່າສະຕິປັນຍານີ້ຈັກນັບຄ່າບໍ່ໄດ້ ເງິນຄຳແກ້ວແຫວນຊ້າງມ້າຂຸນນາງຍັງນັບຄ່າໄດ້ແລ ອັນວ່າປັນຍານີ້ໃຜບໍ່ອາດຈັກນັບຄ່າໄດ້ແລ ນັກປາດທັງຫລາຍໂຈທະນາກັນດັ່ງນີ້ແລ ເພື່ອໃຫ້ວ່າປັນຍາປະເສີດທັ້ນແລ ຢູ່ບໍ່ນານທໍ່ໃດ ພະຍາຕົນພໍ່ກໍໃຫ້ເສນາອາມາດນັກປາດປະໂຣຫິດທັງຫລາຍ ອະພິເສກເຈົ້າຣາຊະບຸດໃຫ້ເປັນພະຍາແທນຕົນແລ ບໍ່ນານທໍ່ໃດ ພະຍາຕົນພໍ່ກໍຈຸຕິຈາກຂັນທັງຫ້າໄປສູ່ບໍລະໂລກພາຍໜ້າແຫ່ງຂັນທັ້ນແລ ກ່າວຣາຊະທິຕາບັນຫາກໍແລ້ວເທົ່ານີ້ກ່ອນແລ.

ໃນເມື່ອເຈົ້າຣາຊະບຸດ ມູລະຕັນໄຕເປັນພະຍາແລ້ວ ກໍລືຊາປາກົດໄປທົ່ວທິສະບ້ານນ້ອຍເມືອງໃຫຍ່ທັງຫລາຍທຸກແຫ່ງທຸກພາຍແລ ເມື່ອນັ້ນ ທ້າວພະຍາໃຫຍ່ທັງຫລາຍກໍຂຳເຂືອກເຍືອກຕື່ນວ່າ ພະຍາມູລະຕັນໄຕຣາດນີ້ ເມື່ອຍັງເປັນຣາຊະບຸດໜຸ່ມນ້ອຍປາງນັ້ນກໍປະກອບໄປດ້ວຍປັນຍາ ແລະເຕຊະມາກນັກແລບັດນີ້ຊ້ຳໄດ້ເປັນພະຍານີ້ ກໍຊ້ຳຈັກປະກອບໄປດ້ວຍເຕຊະອະນຸພາບອັນແກ່ກ້າມາກນັກບໍ່ຢ່າຊະແລວ່າດັ່ງນີ້ກໍມີແລ ສ່ວນວ່າພະຍາມູລະຕັນໄຕຣາດນັ້ນກໍສະເຫວີຍຣາດບ້ານເມືອງ ກໍປະກອບຊອບທຳສິບປະການແທ້ທັ້ນແລ.

ເມື່ອນັ້ນ ຍັງມີພະຍາຕົນໜຶ່ງ ຊື່ວ່າ ເຕຊະຊາ ເປັນພະຍາໃນເມືອງຊື່ວ່າ ຊຸມພູທິກະຣະນະຄອນ ກໍຄະນຶງຫາບັນຫາໄດ້ແລ້ວ ກໍໃຊ້ຂ່າວສານໄປເຖິງພະຍາຊູ່ເມືອງດ້ວຍຄຳວ່າ ບັດນີ້ ຣາຊະບຸດມູລະຕັນໄຕໄດ້ເປັນພະຍາແລ້ວສັນນີ້ ເຮົາທັງຫລາຍເພິ່ງພິປອງຫາຍັງບັນຫາໄປສ່ອງມັນເທີ້ນ ສ່ວນຕົນເຮົານີ້ຈັກໄດ້ສາມອັນແລ ດັ່ງບັນຫາສາມອັນນັ້ນ ທໍ່ເອັ້ນໄວ້ແຕ່ພະຍາອິນ ແລະເທວະດາແລ ບຸກຄະລະຜູ້ອື່ນບໍ່ອາດຈັກແກ້ໄດ້ແລ ສ່ວນວ່າຄົນໃຊ້ກໍໄປຮອດແລ້ວ ພະຍາຕ່າງເມືອງທັງຫລາຍກໍຂານຄຳພະຍາເຕຊາວ່າ ເຮົາທັງຫລາຍກໍເພິ່ງແຕ່ງໄປແທ້ແລວ່າດັ່ງນີ້ ທີ່ນັ້ນພະຍາເຕຊາກໍແຕ່ງບັນຫາສາມອັນໄປສ່ອງແທ້ທັ້ນແລ ດັ່ງບັນຫາສາມອັນນັ້ນເຮົາເພິ່ງຮູ້ສັນນີ້ ຄືວ່າດາບເກື່ອນດວງໜຶ່ງ ຫອກດວງໜຶ່ງ ປືນເຫລັ້ມໜຶ່ງແລ ດາບເກື່ອນນັ້ນພະຍານາກເອົາມາແຕ່ເມືອງນາກມາໃຫ້ ຄັນວ່າກອດອອກຈາກຝັກແລ້ວ ກໍເປັ່ງຣັດສະໝີອອກໄປທົ່ວທິດທັງມວນແທ້ດີຫລີແລ ສ່ວນວ່າຫອກດວງນັ້ນພິຍັກອັນຮັກສາສັດຕະສະເອົາມາໃຫ້ ຄັນວ່າປຸກປາຍຂຶ້ນເມືອບົນເປັນດັ່ງສາຍຟ້າແມບນັ້ນແທ້ດີຫລີແລ ອັນວ່າປືນເຫລັ້ມນັ້ນເຈົ້າຣັດສີຕົນຢູ່ສວນອຸດທິຍານພະຍານັ້ນໄດ້ແຕ່ສຳນັກແຫ່ງຍັກຕົວຢູ່ຕີນດອຍຊື່ວ່າ ຄັນທະມາທະນະເອົາມາໃຫ້ແລ ປືນເຫລັ້ມນັ້ນ ຄັນວ່າຕັ້ງປາກຂຶ້ນເມືອບົນກໍຄອນອັດສະຈັນນັກເປັນດັ່ງຄວັນເທົ້າຟ້ານັ້ນແລ ອັນວ່າວັດຖຸສາມປະການນີ້ ພະຍາເຕຊາກໍເອົາໄປກວາຍພະຍາມູລະຕັນໄຕ ດ້ວຍຄຳສັ່ງວ່າ ວັດຖຸສິ່ງຄາມສາມປະການນີ້ ອັນໃດຍັງແວນປະເສີດນັ້ນຈາ ພິຍັງຮູ້ແທ້ກູຈັກບູຊາ ພິວ່າບໍ່ຮູ້ກູຈັກຮິບເອົາເມືອງແທ້ແລ ວ່າດັ່ງນີ້ແລ້ວກໍໃຫ້ເມືອແລ ຄັນວ່າຄົນໃຊ້ເມືອຮອດແລ້ວ ກໍກວາຍກິດຈະຄຳທັງມວນແຕ່ພະຍາມູລະຕັນໄຕຣາດທັ້ນແລ ເມື່ອນັ້ນພະຍາມູລະຕັນໄຕກໍຈາຣະຈາກັບດ້ວຍຄົນໃຊ້ວ່າ ບັດນີ້ນໍ ຢູ່ສະເຫວີຍຣາຊະສົມບັດຕິ

★ ★ ສິມ ວັດອົງຕື້ ທີ່ ວຽງຈັນ

ບ້ານເມືອງມັນດາຍ ພອຍເລົ່າເອົາບັນຫາມາສ່ອງທ່ານສັນນີ້ຈາ ສູຫາກຢູ່ຄັນຄິງສູນໍ ວ່າດັ່ງນີ້ຈຶ່ງ ກ່າວວ່າ ດູລາຄົນໃຊ້ຮອຍທີ່ພະຍາສູວ່າກູນີ້ຍັງໜຸ່ມນ້ອຍນັກ ບໍ່ອາດຈັກແກ້ບັນຫາອັນນີ້ວ່າລືນໍ ບັນຫາອັນນີ້ກູຫາກຈັກແກ້ເອົາເປົ່າດາຍສັນນັ້ນ ກໍ່ບໍ່ມີແລ ດັ່ງວັດຖຸສາມອັນນັ້ນກໍເປັນຂອງສົມຄາມສູ່ອັນ ແທ້ແລ ດ້ວຍແທ້ອັນໜຶ່ງກໍຍັງແອນປະເສີດກວ່າອັນໜຶ່ງແລ ກູຈັກກ່າວເປົ່າດາຍໄປ່ເປັນເທື່ອແລ ກູຈັກມີສັກຂີແກ່ທ່ານທັງຫລາຍເປັນທີ່ເຊື່ອເມື່ອໜ້າແລ ວ່າດັ່ງນີ້ແລ້ວ ພະຍາກໍໃຫ້ຕີກອງບອກຂ່າວ ແກ່ຊາວບ້ານຊາວເມືອງທັງຫລາຍ ໃຫ້ໄປຊຸມນຸມກັນໃນສວນອຸດທິຍານອັນກວ້າງຂວາງໄດ້ສາມໂຍຊະນະທີ່ນັ້ນ ໂສຣາຊາ ອັນວ່າພະຍາມູລະຕັນໄຕຣາດຕົນນັ້ນມີເສນາສີ່ຈຳພວກຫາກແອດລ້ອມເປັນ ປະຣິວານກໍເຂົ້າໄປສູ່ສວນອຸດທິຍານນັ້ນແລ້ວ ພະຍາກໍກະທຳສັກກາຣະບູຊາເທວະດາທັງຫລາຍອັນ ຢູ່ຮັກສາສວນອຸດທິຍານທັງມວນ ແລ້ວຈຶ່ງຣາດທະນາວ່າ ຂ້າໄຫວ້ເທວະດາເຈົ້າທັງຫລາຍ ຝູງ ຂ້າຈັກແກ້ບັນຫາວັດຖຸອັນເປັນເຄື່ອງສົມຄາມ ທ້າວພະຍາມາໃຫ້ສ່ອງທວາຍຜູ້ຂ້າສັນນີ້ ໃນວັດຖຸສາມປະການນີ້ ຂ້າວ່າອັນໜຶ່ງຍັງແອນປະເສີດແລ ຜິຜູ້ຂ້າຈັກທວາຍຍັງຊອບຄອງໂລກແທ້ດັ່ງນັ້ນ ຂໍເທວະດາເຈົ້າທັງຫລາຍ ຈົ່ງໃຫ້ສັກຂີອັນໜຶ່ງໃຫ້ເປັນທີ່ເຊື່ອແກ່ຄົນທັງຫລາຍກໍຂ້າເທີ້ນ ວ່າດັ່ງນີ້ແລ້ວ ພະຍາກໍໃຫ້ຄົນໃຊ້ເອົາວັດຖຸສາມປະການອັນນັ້ນມາດູຫັ້ນແລ ກໍເຫັນມີລິດທີມາກນັກ ເປັນດັ່ງຈັກຄອບງຳຄົນທັງຫລາຍ ກໍພະລຶກສາເພິງກົວມາກນັກແທ້ແລ ຄັນວ່າພະຍາເຫັນແລ້ວ ຈຶ່ງ ກ່າວວ່າດູລາຄົນໃຊ້ ວັດຖຸສາມປະການນີ້ກໍເປັນເຄື່ອງສົມຄາມທ້າວພະຍາຊູ່ອັນແລ ຜິວ່າຈັກເອົາ ໃຫ້ເປັນໄຊແທ້ ປືນນັ້ນແອນເປັນໄຊຍິ່ງກວ່າຫອກກວ່າດາບນັ້ນດາຍ ເມື່ອນັ້ນຄົນໃຊ້ພະຍາເຕຊາ ໄດ້ຍິນແລ້ວກໍໄຫວ້ພະຍາມູລະຕັນໄຕວ່າ ເທວະຂ້າໄຫວ້ມະຫາຣາຊະເຈົ້າ ເຫດດັ່ງລືມະຫາຣາຊະເຈົ້າ ແລະ ວ່າປືນນັ້ນແອນປະເສີດ ຂໍແກ່ມະຫາຣາຊະເຈົ້າຈົ່ງກ່າວເຫດອັນນັ້ນໃຫ້ແຈ້ງແກ່ຕູຂ້າ ທັງຫລາຍແດ່ເທີ້ນ ຂ້າທັງຫລາຍກໍຍັງໄດ່ຮູ້ນຳມະຫາຣາຊະເຈົ້າແລ ພະຍາກ່າວວ່າ ຜິທ່ານທັງຫລາຍຍັງໄດ່ຮູ້ນຳເຮົາແທ້ ເຮົາຈັກກ່າວໃຫ້ແຈ້ງແກ່ທ່ານທັງຫລາຍແລ ວ່າດັ່ງນີ້ແລ້ວ ພະຍາກໍ ຊັກເອົາມາຍັງນິທານອັນຕົນຫາກໄດ້ຮູ້ແຕ່ໃນກາລະເມື່ອກ່ອນນັ້ນມາວ່າດັ່ງນີ້ ດູລາຄົນໃຊ້ຕຳນານ ອັນນີ້ອາຈານເຈົ້າແຕ່ກ່ອນກ່າວສືບໆມາໄວ້ທອມໂລກ ເພື່ອວ່າໃຫ້ນັກປາດທັງຫລາຍຝູງມີປັນຍາ ຮູ້ດັ່ງນີ້ແລ ຍັງມີໃນກາລະປາງໜຶ່ງ ແຕ່ປະຖົມມະກັບວັນນັ້ນ ເມື່ອຄົນທັງຫລາຍແຣກໃຫ້ເປັນ ທ້າວພະຍານັ້ນ ຍັງມີພະຍາສາມຕົນພີ່ນ້ອງ ເປັນລູກພົມຕ່າງຕົນສະເຫວີຍຣາດບ້ານເມືອງແຫ່ງຕົນ ແລ ໃນກາລະປາງໜຶ່ງ ເຂົາກໍຊິງກັນເອົາບ້ານເມືອງເຊິ່ງກັນຂ້າຟັນກັນມາກນັກແລ ໃຜກໍສະເໜີກັນຫັ້ນແລ ພາຍລຸນມາຊ້ຳຣົບກັນຫັ້ນແລ ຍາມນັ້ນ ພົມຕົນເປັນພໍ່ນັ້ນກໍແອນຮັກພະຍາຕົນນ້ອງ ຫລ້ານັ້ນຈຶ່ງເອົາປືນໄປໃຫ້ພະຍາຕົນນ້ອງນັ້ນ ພະຍາຕົນນ້ອງກໍເອົາປືນໄປລະງັບໂຍທາເສນາພະຍາຕົນພີ່ກໍໜີດ້ວຍກຳລັງປືນນັ້ນແລ ພະຍາຕົນພີ່ອ່ອນໂຍນ ພະຍາຕົນນ້ອງນັ້ນແລ້ວຈຶ່ງມີເມດຕາໄມຕີແກ່ກັນຫັ້ນແລ ມີດັ່ງນັ້ນ ເຮົາຈຶ່ງວ່າປືນນັ້ນແອນປະເສີດເພື່ອອັນແລ ພະຍາມູລະຕັນໄຕຊ້ຳ ເອົາຕຳນານນິທານອັນນີ້ ມາເປັນສັກຂີໃຫ້ແຈ້ງແກ່ຄົນທັງຫລາຍແລ້ວດັ່ງນີ້ ເທວະດາທັງຫລາຍ ຝູງຮັກສາສວນອຸດທິຍານທັງມວນ ຈຶ່ງພາຍເຂົ້າຕອກດອກໄມ້ທິບລົງບູຊາພະຍາມູລະຕັນໄຕໃຫ້ປາກົດແກ່ຄົນທັງຫລາຍຫັ້ນແລ ເມື່ອນັ້ນຄົນໃຊ້ພະຍາເຕຊາເຂົາກໍບໍ່ທ່ອນເຫັນແລ ມາເຫັນດັ່ງນັ້ນ ເປັນອັດສະຈັນມາກນັກກໍສາທຸການມາກນັກວ່າ ພະຍາເຈົ້າຕົນນີ້ ກໍປະກອບດ້ວຍບຸນຍະສົມພານ

ແລະປັນຍາອະນຸພາບມາກນັກແລ ວ່າດັ່ງນີ້ ເມື່ອນັ້ນພະຍາກໍຈາລະຈາກັບເສນາທັງຫລາຍວ່າ ອັນວ່າຄຸນແຫ່ງເຄື່ອງສົມຄາມປະການນີ້ ປີນນັ້ນຍ່ອມລະງັບຂ້າເສິກສັດຕູແຕ່ໄກ ຄັນວ່າສ້ອງປືນແລ້ວຈິ່ງມາເກິງຫອກ ສ້ອງຫອກແລ້ວຈິ່ງມາເກິງດາບດາຍ ເຫດນັ້ນປືນນັ້ນແອນປະເສີດກວ່າຫອກ ເພື່ອດັ່ງນັ້ນແລ ເມື່ອນັ້ນພະຍາມູລະຕັນໄຕກໍກຸມຄົນໃຊ້ພະຍາເຕຊາຜູ້ເປັນແກ່ໄວ້ ກໍອາງໃຫ້ຄົນເມືອແຕ່ຜູ້ເປັນນາຍນ້ອຍໃຫ້ເມືອກ່າວບອກຂ່າວແກ່ພະຍາເຕຊາດ້ວຍຄໍາສັ່ງວ່າດັ່ງນີ້ ສ່ວນວ່າເຈົ້າທັງຫລາຍ ຕ່າງຄົນຕ່າງສະເຫວີຍຣາດບ້ານເມືອງແຫ່ງຕົນດາຍພອຍເລົ່າແຕ່ງບັນຫາມາສ່ອງກູຊູ່ບ້ານຊູ່ເມືອງສັງຈາ ກູກໍແກ້ໄດ້ຊູ່ອັນແລ ບັດນີ້ ກູຈັກແປງບັນຫາອັນຫນຶ່ງໄປສ່ອງສູທ່ານທັງຫລາຍແລ ສູຍັງແກ້ໄດ້ຈິ່ງກ່າວມາເທີ້ນ ບໍ່ແກ້ໄດ້ກູຈັກໄປຣົບເອົາເມືອງສູທ່ານທັງຫລາຍແລວ່າດັ່ງນີ້ແລ້ວ ກໍໃຊ້ໃຫ້ເຂົາຄົນໄປຫັ້ນແລ ຄັນວ່າຄົນໃຊ້ໄປຮອດແລ້ວ ກໍບອກກ່າວແກ່ພະຍາເຕຊາອັນເປັນເຈົ້າແຫ່ງເຂົາໂດຍດັ່ງຄໍາພະຍາມູລະຕັນໄຕສັ່ງນັ້ນຊູ່ປະການຫັ້ນແລ ຄັນວ່າພະຍາເຕຊາໄດ້ຍິນຄໍາຄົນໃຊ້ກ່າວນັ້ນແລ້ວ ພະຍາກໍກ່າວວ່າບັນຫາອັນເຮົາໃຊ້ໄປນັ້ນ ບຸກຄະລະຜູ້ຈັກແກ້ກໍເປັນການອັນຍາກນັກດີຫລີດາຍ ທ່ານແລມາແກ້ໄດ້ດ້ວຍງ່າຍດາຍແລ ບັນຫາແຫ່ງມັນອັນຈັກໃຊ້ມານັ້ນ ກໍຈັກເປັນອັນເລີກແລບມາກນັກດາຍ ເຮົາຈັກແກ້ບໍ່ໄດ້ດາຍວ່າດັ່ງນີ້ແລ້ວ ກໍຈິ່ງເອົາຄໍາແສນຫນຶ່ງໄປເປັນເຄື່ອງບູຊາພະຍາມູລະຕັນໄຕ ແລ້ວກໍຂໍເອົາຄົນໃຊ້ຜູ້ພະຍາກຸມໄວ້ນັ້ນຄືນມາຫັ້ນແລ ກ່າວສັດທະບັນຫາກໍແລ້ວເທົ່ານີ້ກ່ອນແລ.

ທີ່ນີ້ຈັກກ່າວຕໍານານເພຊກິນຫມາກຂີ້ກາ ໃຫ້ແຈ້ງແກ່ນັກປາດທັງຫລາຍມີສັ້ນນີ້ແລ.

ເມື່ອນັ້ນ ຍັງມີນັກປາດສີ່ຄົນ ເຂົ້າມາສົນທະນາກັນໃນສາລາແຫ່ງຫນຶ່ງ ກັບດ້ວຍຄົນທັງຫລາຍໂດຍປະຣິຍາຍ ຫລາຍປະການຕ່າງໆ ຫັ້ນແລ ຍາມນັ້ນຍັງມີມານະວະຜູ້ຫນຶ່ງໄດ້ຍິນນັກປາດທັງຫລາຍສົນທະນາກັນດັ່ງນັ້ນ ມັນກໍໄຄ່ຮູ້ກິດຈະອັນຈັກໃຫ້ວຸທິຈໍາເຣີນວັດຖຸເຂົ້າຂອງ ຍົດສັກປະຣິວານດັ່ງນັ້ນ ມັນກໍຖາມນັກປາດສີ່ຄົນນັ້ນວ່າ ຂ້າແກ່ນັກປາດເຈົ້າທັງຫລາຍກະທໍາກິດຈະການເຍື່ອງໃດແລ ຈັກຊອບຈັກແມ່ນໃຈທ້າວພະຍາ ຂຸນນາງຈັກໄດ້ກິນບ້ານກິນເມືອງ ຈັກໄດ້ຍົດສະປະຣິວານ ແລະພາໃຫ້ສໍາຣານບານໃຈແກ່ຕົນນີ້ຈາ ເຈົ້ານັກປາດທັງຫລາຍຮູ້ຈິ່ງບອກແກ່ຂ້າແດ່ເທີ້ນ ວ່າດັ່ງນີ້ແລ ເມື່ອນັ້ນນັກປາດສີ່ຄົນກໍກ່າວວ່າ ດູລາມານະວະ ຊາຕິບຸກຄະລະຜູ້ໃດແລໄຄ່ຢາກເປັນເຈົ້າເປັນຂຸນ ໄຄ່ກິນບ້ານ ກິນເມືອງ ໄຄ່ໄດ້ໄຮ່ນາ ນາມະຍົດສະປະຣິວານແຫ່ຫນ້າຕາມຫລັງດັ່ງນັ້ນ ເພິ່ງກະທໍາຕາມອັດຕະໂນມັດຕິ ແຫ່ງຜູ້ເປັນເຈົ້າເປັນນາຍຕົນເປັນຕົ້ນ ວ່າທ້າວພະຍາເຈົ້າຜູ້ເປັນໃຫຍ່ຫາກບັງຄັບດ້ວຍຕົນມີ ຄໍາວ່າ ມຶງຈິ່ງໄປກະທໍາເຍື່ອງອັນນີ້ ມຶງຈິ່ງໄປກໍາຈັດຊາວບ້ານຊາວມືອງເສັຽເນີແລ້ວເອົາວັດຖຸເຂົ້າຂອງມາໃຫ້ກູເນີ ວ່າດັ່ງນີ້ກໍດີ ອັນຫນຶ່ງທ້າວພະຍາເຈົ້າຂຸນອັນຕົນໄດ້ກິນຍ້ອນນັ້ນ ຫາກເສັງກ້ອຍຄໍາອັນໃດກໍດີ ຢ່າໄດ້ຂືນໃຈທ້າວພະຍາເຈົ້າຂຸນສັກອັນ ແມ່ນວ່າວັດຖຸຂອງກິນອັນຫວານ ພະຍາວ່າໃຫ້ຂົມກໍວ່າຂົມນໍາ ແມ່ນວ່າພະຍາວ່າຫວານ ກໍໃຫ້ຫວານນໍາຕາມຄໍາພະຍານັ້ນຊູ່ອັນ ບຸກຄະລະຜູ້ນັ້ນຈັກພະລັນໄດ້ເປັນເຈົ້າເປັນໃຫຍ່ຈັກໄດ້ກິນບ້ານກິນເມືອງຍົດສະປະຣິວານພະລັນແລ ວ່າດັ່ງນັ້ນ. ຍາມນັ້ນຍັງມີມານະວະຜູ້ຫນຶ່ງ

ມັນໄປຮຽນສາດຕະສິນໃນເມືອງຕັກກະສິລາ ຄືນມາເຊົາໃນສາລາທີ່ນັ້ນ ມັນກໍໄດ້ຍິນນັກປາດທັງສີ່ຄົນນັ້ນສອນມານະວະຜູ້ນັ້ນດ້ວຍອັນຜິດໂປຣານະທຳມະດາ ມາແຕ່ຫລັງນັ້ນ....

ມັນກໍຄະນຶງໃນໃຈວ່າກູໄດ້ຮຽນສາດຕະສິນ ໃນເມືອງຕັກກະສິລາກໍສັງ ເຄື່ອງບູຊາອາຈານກໍມາກນັກແລ ເພິ່ງກູສອນເອົາເຄື່ອງບູຊາແຫ່ງນັກປາດສີ່ຄົນນີ້ ອັນເຂົາຫາກກ່າວຜິດທຳມະດານັ້ນ ເພິ່ງກູເອົານິທານອັນພະຍາໃຫ້ເສນາກິນຫາກຂີ້ການັ້ນ ມາສອນແກ່ນັກປາດຝູງໄປນີ້ ຄວນແລ ຕຶຄະນຶງດັ່ງນີ້ແລ້ວຈຶ່ງກ່າວວ່າ ດູລານັກປາດທັງຫລາຍເອີຍ ທ່ານທັງຫລາຍຈາກັນຍັງຄຳເບື່ອງນັ້ນ ຈັກປະໂຍຊະນະເພື່ອວ່າໃຫ້ເປັນເຈົ້າເປັນຂຸນ ຢູ່ສຸກສຳຣານບານໃຈນັ້ນບໍ່ມີແລ ຄຳອັນນັກປາດກ່າວນັ້ນ ແມ່ນບຸກຄະລະຜູ້ໃດໄດ້ກະທຳຕາມຄຳອັນນັ້ນ ກໍຈັກໄດ້ພັດພາກຈາກເສັຍໃນທີ່ອັນຈັກໄດ້ເປັນເຈົ້າເປັນຂຸນນັ້ນແລ ແມ່ນວ່າໄດ້ເກີງສູກທໍ່ໃດກໍດີ ຈັກຄາດຄາຈາກຄຳສູກ ໃນຂະນະບັດດຽວນັ້ນແທ້ດີຫລີແລ ຄຳສັນນີ້ ບໍ່ຄວນນັກປາດເຈົ້າທັງຫລາຍຈັກກ່າວແລ ເມື່ອນັ້ນນັກປາດເຈົ້າທັງຫລາຍຝູງນັ້ນກ່າວວ່າ ດູລາເຈົ້າມານະວະ ຜິວ່າເຈົ້າຍັງຮູ້ກິດຈະ ອັນກະທຳໃຫ້ວຸດທິຈຳເຣີນ ໄດ້ເປັນເຈົ້າເປັນຂຸນໄດ້ກິນບ້ານກິນເມືອງນັ້ນ ເຈົ້າຈຶ່ງກ່າວເຫດອັນນັ້ນມາແກ່ຕູອັນຜິດທຳມະດານັ້ນເທີ້ນ ຕູຫາກຈັກໃຫ້ຂອງບູຊາອັນໜຶ່ງແກ່ທ່ານແລ ມານະວະກ່າວວ່າ ຜິວ່ານັກປາດເຈົ້າທັງຫລາຍຈັກຮູ້ດ້ວຍສາມາດດັ່ງນັ້ນ ຂ້າກໍເພິ່ງກ່າວແລ ນັກປາດສີ່ຄົນວ່າ ດູລາມານະວະ ຕູຈັກຮຽນເອົາເພື່ອຈັກກະທຳໃຫ້ວຸດທິຈຳເຣີນແກ່ຕົນນັ້ນແລ ທ່ານຈຶ່ງກ່າວແກ່ຕູເທີ້ນ ມານະວະຈຶ່ງກ່າວວ່າ ຜິວ່ານັກປາດທັງຫລາຍຈັກຮຽນເອົາແທ້ດັ່ງນັ້ນ ນັກປາດທັງຫລາຍກໍຄວນລົງຈາກທີ່ປັ້ນແລະຈຶ່ງນັ່ງທີ່ຕ່ຳເທີ້ນ ຂ້າຈັກກ່າວແລ ເມື່ອນັ້ນນັກປາດສີ່ຄົນນັ້ນກໍລົງທີ່ຕ່ຳແລ້ວກໍໃຫ້ມານະວະນັ່ງທີ່ສູງທັ້ນແລມານະວະຈຶ່ງກ່າວວ່າ ດູລານັກປາດເຈົ້າເມື່ອຂ້າໄປຮຽນສາດຕະສິນໃນເມືອງຕັກກະສິລານະຄອນວັນນັ້ນ ພະຍາຕັກກະສິລາກໍຄອດໃຫ້ເມັຍຮັກຜູ້ໜຶ່ງ ກໍໃຫ້ຂ້າເສັຍບັດດຽວນັ້ນເມື່ອພາຍລຸນພະຍາກໍຄຶດເກີງ ຈຶ່ງມີຄຳກິນແໜງໃຈມາກນັກບໍ່ກິນເຂົ້າໄດ້ເຈັດວັນແລ້ວ ພະຍາກໍຄະນຶງໃນໃຈວ່າດັ່ງນີ້ກູນີ້ເປັນທ້າວພະຍາທີ່ມີໃຈດຽວ ຫາເສນາອາມາດນັກປາດບັນດິດຝູງມີປະຫຍາຈັກຮູ້ວ່າ ພະຍາກະທຳສັນນີ້ບໍ່ຊອບແລ ຫາຜູ້ຈັກວ່າດັ່ງນີ້ກໍ່ບໍ່ໄດ້ ຫາຜູ້ຈັກຫ້າມກູກໍ່ບໍ່ໄດ້ແທ້ນໍ ທີ່ນັ້ນ ກູຈັກລອງປະຫຍາເຂົາດູເທີ້ນວ່າດັ່ງນີ້ແລ້ວ ພະຍາກໍອານັດພວກນ້ອຍຜູ້ໜຶ່ງວ່າ ວັນພຸກນີ້ພໍເມື່ອເສນາອາມາດທັງຫລາຍ ມາໂຮມຊຸມນຸມກັນໃນໂຮງກູດັ່ງນັ້ນແລ້ວ ມຶງຈຶ່ງໄປເອົາໝາກຂີ້ກາແລະໝາກຊຸມພູອັນສຸກນັ້ນມາພະລັນໃສ່ໄຕອັນດຽວ ແລ້ວຈຶ່ງເອົາມາກວາຍກູ ຊ້ອງໜ້າເສນາອາມາດທັງຫລາຍເທີ້ນວ່າດັ່ງນີ້ ເມື່ອນັ້ນພວກນ້ອຍຜູ້ນັ້ນ ກໍກະທຳຕາມຄຳພະຍາອານັດມັນ ແລ້ວກໍນຳມາກວາຍພະຍາຊ້ອງໜ້າເສນາອາມາດທັງຫລາຍທັ້ນແລ ພະຍາຕິຕື່ນຖາມພວກນ້ອຍວ່າ ມຶງໄປໄດ້ລູກໄມ້ເຄືອເຂົາ ອັນເປັນຂອງກິນອັນຫລາກມາສັນນີ້ນໍ ວ່າດັ່ງນີ້ແລ້ວ ພະຍາກໍເອົາມີດນ້ອຍມາປາດຜ່າໝາກຊຸມພູປອກກິນ ແລ້ວກໍກ່າວວ່າ ລູກໄມ້ອັນເປັນດັ່ງນີ້ບໍ່ຫລ້າງຈັກຫວານແລະມີຣົດດຸດຈະດັ່ງນ້ຳເຜີ້ງນັ້ນແທ້ດີຫລີນໍ ວ່າດັ່ງນີ້ແລ້ວພະຍາກໍຜ່າໝາກຂີ້ກາແຈກອາມາດທັງຫລາຍໃຫ້ຄູ່ຊູ່ຄົນມີແລ ເຂົາກິນຂົມນັກ ຈັກວ່າຂົມກໍບໍ່ໄດ້ ເຫດວ່າກົວພະຍາທັ້ນແລ ກໍລວດວ່າຫວານນຳພະຍາທັ້ນແລ ວັນລຸນ

ພະຍາ ກໍວ່າໃຫ້ພວກນ້ອຍເອົາໝາກຊຸມພູອັນສຸກງາມສະເໝີດັ່ງໝາກຂີ້ກາ ໃສ່ໄຕມາໃຫ້ພະຍາ ພະຍາກໍຜ່າກິນສັນດອອວັນກ່ອນນັ້ນ ພະຍາກິນກີບໜຶ່ງແລ້ວກໍຄາຍເສັຍດ້ວຍຄຳວ່າ ໝາກຊຸມພູນີ້ກູກິນມີຣົດອັນຫວານນັກດາຍ ມື້ນີ້ມາຂົມເສັຍນີ້ຈາວ່າດັ່ງນີ້ແລ້ວ ພະຍາກໍຕິອຸບາຍຄອດໃຫ້ພວກນ້ອຍຜູ້ນັ້ນດ້ວຍຄຳວ່າ ມຶງຫາກແກ້ງເລືອກເອົາອັນຂົມມາໃຫ້ກູກິນນີ້ຈາບໍ່ດີແລ ສູຈິ່ງເອົາພວກນ້ອຍຜູ້ນີ້ໄປໃສ່ຄອກໄວ້ເທີ້ນ ເກິງເຈັດວັນກູຈັກຂ້າມັນບໍ່ສົງແລ ເມື່ອນັ້ນ ເຂົາກໍເອົາພວກນ້ອຍຜູ້ນັ້ນໄປໃສ່ຄອກໄວ້ຕາມຄຳພະຍາຫັ້ນແລ ພະຍາກໍຈິ່ງຜ່າໝາກຊຸມພູນັ້ນແລ້ວ ກໍປັນໃຫ້ແກ່ເສນາອາມາດນັກປາດປະໂຣຫິຕາຈານກິນຊູ່ຄົນແລ ພະຍາເລົ່າຖາມວ່າ ດູລາເສນາອາມາດທັງຫລາຍສູກິນໝາກໄມ້ອັນນີ້ຫວານລືຮູ້ວ່າຂົມດັ່ງກູວ່ານັ້ນລື ຮູ້ວ່າກູຫາກມັກກ່າວນັ້ນຈາ ເມື່ອນັ້ນ ເສນາອາມາດທັງຫລາຍ ຈັກວ່າດັ່ງລືກໍບໍ່ໄດ້ ເຫດວ່າເຂົາເຫັນພະຍາຄອດແກ່ພວກນ້ອຍນັ້ນ ເຂົາກໍລວດວ່າຂົມດອມພະຍາຫັ້ນແລ ຍາມນັ້ນຍັງມີບ່າວເສນາຜູ້ໜຶ່ງ ມັນກໍ່ຂານພະຍາວ່າໃນວັນວານນີ້ ລູກໄມ້ອັນມະຫາຣາຊະເຈົ້າໃຫ້ທານຕູຂ້າທັງຫລາຍກິນນັ້ນຂົມນັກເປັນດັ່ງກິນບີນັ້ນແທ້ດີຫລີແລ ໃນວັນນີ້ລູກໄມ້ອັນນີ້ກໍດູຫວານ ເປັນດັ່ງນ້ຳຕານອັນເຈືອດ້ວຍນ້ຳເຜິ້ງນັ້ນແທ້ດີຫລີແລ ຣອຍວ່າເກີດເປັນອັນຫວານດ້ວຍເຕຊະສົມພານມະຫາຣາຊະເຈົ້າບໍ່ຢ່າຊະແລ ວ່າດັ່ງນີ້ ທີ່ນັ້ນພະຍາກໍຮູ້ໃຈເສນາອາມາດທັງຫລາຍຝູງນັ້ນວ່າ ເປັນພາວະອັນໄບ້ບອດຫາປະຫຍາບໍ່ໄດ້ແທ້ດີຫລີແລ ພະຍາກໍຮູ້ຈັກໃຈແຫ່ງບ່າວເສນາຜູ້ນັ້ນວ່າ ເປັນສະພາວະອັນສະຫລາດເບື່ອງດີ ແລະເບື່ອງຮ້າຍອັນຄວນບໍ່ຄວນແທ້ດີຫລີແລ ວັນລຸນມາ ພະຍາກໍຄະນຶງໃນໃຈວ່າເສນາອາມາດທັງຫລາຍຝູງນີ້ ກໍບໍ່ເພິ່ງໃຫ້ເຂົາເປັນເສນາໃຫຍ່ສັກຄົນແລ ກູມີຄຳຄອດ ແລະໄດ້ຂ້າເມັຍກູເສັຍດັ່ງນັ້ນ ເຂົາກໍຈັກມີຄຳຫ້າມຄຳຕິວ່າ ພະຍາເຈົ້າມາກະທຳກຳເບື່ອງນີ້ ບໍ່ຊອບບໍ່ຄວນແລ ເຂົາຈັກວ່າດັ່ງນີ້ກໍບໍ່ມີສັກຄົນແລ ກູໄດ້ຂ້າເມັຍຮັກກູເສັຍດັ່ງນັ້ນ ເປັນດັ່ງເສັຍເມືອງກູເກິ່ງໜຶ່ງແລ ບັດນີ້ກູຈັກລອງໃຈແຫ່ງເຂົາອັນຂົມກໍວ່າຫວານເສັຍ ອັນຫວານກໍວ່າຂົມເສັຍສັນນີ້ ເຂົານີ້ບໍ່ຄວນໃຫ້ເປັນເສນາສັກຄົນແລ ສ່ວນດັ່ງບ່າວເສນາຜູ້ນັ້ນ ມັນຜູ້ນ້ອຍຜູ້ທຸກດອກດາຍມັນກໍຍັງຮູ້ເບື່ອງດີເບື່ອງຮ້າຍດາຍ ຜີມັນໄດ້ເກີງກາມັນຕະຣະສັກດັ່ງນັ້ນ ມັນບໍ່ຫຼາງວ່າຈັກນຳກູຊູ່ອັນແລ ອັນຄວນມັນກໍຈັກວ່າຄວນອັນບໍ່ຄວນມັນກໍຈັກວ່າບໍ່ຄວນແລ ພະຍາຄະນຶງດັ່ງນີ້ແລ້ວ ວັນລຸນນັ້ນພະຍາກໍກອດເອົາອາດຍາດອມເສນາທັງຫລາຍແລ້ວ ຈິ່ງໃຫ້ບ່າວເສນາຜູ້ນັ້ນເປັນໃຫຍ່ແທນນາຍມັນຫັ້ນແລ ເຫດດັ່ງນັ້ນ ນັກປາດເຈົ້າທັງຫລາຍ ຈາລະຈາກັບສັນນັ້ນ ບໍ່ຄວນເພິງຈາດັ່ງນີ້ແລ ເສນາທັງຫລາຍຝູງນັ້ນເຂົາກໍທໍ່ໃຫ້ແມ່ນໃຈພະຍາ ບໍ່ຂືນຄວາມພະຍາຄືພະຍາວ່າຂົມກໍວ່າຂົມນຳ ພະຍາວ່າຫວານກໍວ່າຫວານນຳ ໂດຍດັ່ງຄວາມພະຍາຊູ່ອັນແລ ເມື່ອພະຍາຈັກຂ້າເມັຍຮັກເສັຍນັ້ນ ເຂົາບໍ່ຫ້າມພະຍາ ພະຍາຈິ່ງກອດການາເສັຍເພື່ອດັ່ງນັ້ນແລ ເມື່ອນັ້ນ ນັກປາດສີ່ຄົນໄດ້ຍິນຕຳນານນິທານອັນນີ້ແຫ່ງມານະວະຜູ້ນັ້ນເຂົາກໍຍິນດີມາກນັກ ແລ້ວກໍບູຊາຍັງມານະວະຜູ້ນັ້ນດ້ວຍຄຳພັນໜຶ່ງແລ ຕຳນານເສນາກິນໝາກຂີ້ກາອັນນີ້ ມານະວະໄດ້ຮອບເອົາບູຊາຄຳພັນໜຶ່ງແລ ແກ່ທິສາປາໂມກຂະອາຈານໃນເມືອງຕັກກະສິນະຄອນ ຈິ່ງໄດ້ມາແທ້ດີຫລີແລ ບຸກຄະລະຜູ້ມີປັນຍາ ຈັກມັກເປັນຊຸນກິນບ້ານເມືອງ ແລະຈັກພິຈາລະນາກ້ອຍຄຳ ຫວັງສຸກສຳຣານເມືອພາຍໜ້າເພິງຈື່ຈຳນຳໄວ້ແທ້ແລ ຊາຕິບຸກຄະລະຜູ້ເປັນເສນາອາມາດສຸກກັບທ້າວພະຍານັ້ນ ແມ່ນວ່າທ້າວພະຍາຜິດສູດ ຜິດທຳກໍບໍ່ເພິງຫລໍ່າດູດາຍ

ແລ. ອັນໜຶ່ງນັກປາດຜູ້ມີປະໜຍາ ພີແລະເຫັນໂທດແຫ່ງທ່ານຜູ້ໄປ້ກໍບໍ່ເພິງອຳໄວ້ ກໍເພິງປຸກເຕີນໃຫ້ທ່ານຮູ້ຄືງ ຮູ້ໂທດແຫ່ງມັນໃຫ້ມັນພົ້ນຈາກໂທດ ດ້ວຍຄຳພິເລີກແລບຄວນແລ ຊາຕິເສນາຜູ້ໃຫຍ່ ແລະໄດ້ກະທຳຜິດ ກໍສະເໜີດັ່ງຊ້າງສານຕົວໃຫຍ່ກິ້ງຕົກເຫວນັ້ນແລ ເຫດດັ່ງນັ້ນຜູ້ຈັກໄຄ່ເປັນໃຫຍ່ໃຫ້ສຸກເມືອໜ້າ ໃຫ້ຮັກສາຕົນດີນັກເທີ້ນ ກ່າວຕຳນານເພື່ອກິນໝາກຂີ້ກາກໍ່ແລ້ວທໍ່ນີ້ກ່ອນແລ.

ທີ່ນີ້ຈັກກ່າວຕຳນານໂລກສຳມຸດຕິວ່າ ກະທູ້ລັກກິນກ້ານັ້ນແລ ຕຳນານອັນນີ້ອາຈານເຈົ້າຕົນມີປະໜຍາຮູ້ຕຳນານນິທານແຕ່ກ່ອນ ຈຶ່ງກ່າວໄວ້ໃຫ້ແຈ້ງແກ່ທ້າວພະຍາເສນາອາມາດ ອັນກະທຳຜິດຄອງທຳ ແລະຊອບທຳດັ່ງນີ້ແລ ເມື່ອໂທດຈັກເກີດມີແກ່ຕົນດັ່ງນັ້ນ ຜູ້ມີປະໜຍາເພິງອຸບາຍແກ້ໂທດອັນນີ້ແລ້ວ ເພິງກ່າວໃຫ້ຜູ້ຈັກກະທຳແກ່ຕົນນັ້ນ ໃຫ້ຮູ້ດ້ວຍຄຳອຸບາຍອັນໃດອັນໜຶ່ງເລີກແລບບໍ່ໃຫ້ພາກົດແກ່ຜູ້ອື່ນແລ້ວໃຫ້ຜູ້ຈັກກະທຳໂທດແກ່ຕົນ ໃຫ້ພະລັນກັບຫາຍດ້ວຍຄອງສະຫວັດສະດີແກ່ຕົນເທີ້ນ ຕຳນານອັນນີ້ເຮົາເພິງຮູ້ສັນນີ້ເທີ້ນ.

ຍັງມີມານະວະຜູ້ໜຶ່ງ ຢູ່ໃນເມືອງໄພສາລີ ຈຶ່ງຕະເດີນໄປສະແຫວງຫາຮຽນສາດຕະສິນສິບປະຖຸນອັນດີມີຕົ້ນວ່າ ສາດຕະສິນອັນໃດແລ ບໍ່ປາກົດແກ່ຄົນທັງຫລາຍເທື່ອດັ່ງນັ້ນ ມັນກໍຄວ່າສະແຫວງຫາຮຽນເອົາ ດຸດຈະດັ່ງແມງເຜິ້ງແມງພູ່ ອັນສະແຫວງຫາຣົດສະໄກສອນແຫ່ງດອກໄມ້ນັ້ນແລ ມັນກໍໄປເຖິງປະເທດບ້ານເມືອງທີ່ໜຶ່ງ ມັນກໍຮູ້ຂ່າວວ່າ ພາມມະນະປະໂຣຫິດຜູ້ໜຶ່ງ ຮູ້ສາດຕະສິນອັນໜຶ່ງຫລາກກວ່າທັງຫລາຍແລຈົບເພດຊູ່ປະການ ມັນກໍໄປສູ່ສຳນັກພາມມະນະປະໂຣຫິດຜູ້ນັ້ນ ມັນກໍໄຫວ້ນົບຄົນຣົບຢຳແຢງດີແລ້ວຈຶ່ງກາມວ່າ ຂ້າແກ່ປະໂຣຫິຕະເປັນເຈົ້າບຸກຄະລະຜູ້ໃດ ຍັງປະກອບໄປດ້ວຍສຳປັດຕິເຂົ້າຂອງອັນມາກດັ່ງນັ້ນ ບຸກຄະລະຜູ້ນັ້ນ ມີລູກຍິງຊາຍກໍມາກພີ່ນ້ອງກໍມາກ ຂ້າຍິງຂ້າຊາຍກໍມາກ ໃນເຂົ້າຂອງໝູ່ນີ້ ຈັກຄວນໃຫ້ຜູ້ໃດຢູ່ຮັກສາເຂົ້າຂອງຝູງເປັນມັງຄະລະດີຈາວ່າດັ່ງນີ້ແລ້ວ ເມື່ອນັ້ນ ປະໂຣຫິຕະພາມ ໄດ້ຍິນຄຳມະນະວະກາມດັ່ງນັ້ນ ກໍຄະນິງໃນໃຈວ່າແຕ່ກູໄດ້ເປັນປະໂຣຫິດຊາວເມືອງວັດຕະມະຫານະຄອນ ອັນຢູ່ໃນເຂດຂົງກົງເມືອງທັງມວນນີ້ກໍດີແລ ຄົນທັງຫລາຍຝູງລຸກແຕ່ປະເທດບ້ານເມືອງຕ່າງໆມາກໍດີ ເຂົາກໍບໍ່ທ່ອນກາມຫາຄຳອັນເປັນບັນຫາອັນໃຫຍ່ສັນນີ້ ບໍ່ທ່ອນມີສັກຄົນແລ ບັດນີ້ມານະວະຜູ້ນີ້ ດູສະຫລາດຮູ້ນັກ ທ່ານເຄີຍແກ້ບັນຫາອັນເລີກອັນແລບຫລາຍເທື່ອມີ ບໍ່ຢ່າຊະແລ ມັນຈຶ່ງສະແຫວງຫາສາດຕະສິນແລະຄຸນອັນເປັນບັນຫາສັນນີ້ແລ ຄັນວ່າມັນຮູ້ບັນຫາອັນມັນກາມນີ້ແຈ້ງແລ້ວ ມັນກໍຈັກໄດ້ເປັນເສນາໃຫຍ່ແທ້ດີຫລີແລ ເຫດດັ່ງລີແລວ່າອັນຈາແທ້ແລ ຄຳອັນເປັນບັນຫານີ້ ກໍປາກົດນອກສາດຕະສິນແກ່ທ້າວພະຍາເສນາອາມາດ ແລະ ຄົນທັງຫລາຍ ຜູ້ເຖົ້າຜູ້ແກ່ນ້ອຍໜຸ່ມຊູ່ບ້ານຊູ່ເມືອງທຸກແຫ່ງທຸກຫົນແທ້ດີຫລີແລ ກໍບໍ່ປາກົດເປົ່າດາຍແລ ເປັນດັ່ງບຸກຄະລະຜູ້ໜຶ່ງກິນເຂົາໜົດໝໍ້ໜຶ່ງ ຄັດທ້ອງເປັນດັ່ງຈັກແຕກ ເລົ່າບໍ່ອີ່ມກໍ່ໃຈຕົນນັ້ນແລ ຜິບໍ່ມີດັ່ງນັ້ນ ເປັນດັ່ງບຸກຄະລະຜູ້ໜຶ່ງຝັນໄດ້ກ້ອນຄຳແລ້ວສະດຸ້ງຕື່ນ ຊອກຫາບໍ່ເຫັນນັ້ນແລ ຜິບໍ່ມີດັ່ງນັ້ນ ເປັນດັ່ງນາງພະຍາທະລິງເຄື່ອງປະດັບອັນງາມນັກມັກໄຄ່ໄປສະໜຸກກັບດ້ວຍຍິງໜຸ່ມທັງຫລາຍເລົ່າໄປບໍ່ໄດ້ນັ້ນແລ ຜິບໍ່ມີດັ່ງນັ້ນ ເປັນດັ່ງນັກປາດຜູ້

ໜຶ່ງ ໂອດອ້າງວ່າຕົວມີປະໜຍາເລົ່າໄປຮຽນທຳຕໍ່ປາກອາຈານເຈົ້າເປົ່າດາຍ ຫາໜັງສືບໍ່ໄດ້ ເມື່ອພາຍລຸນຮູ້ຕົວໜັງສືນັ້ນແລ ແມ່ນວ່າສາດຕະສິນເບື້ອງໃດກໍດີ ແມ່ນວ່າຂຶ້ນໃຈໄດ້ທີ່ໃດກໍ່ດີ ເມື່ອທ່ານເອົາໜັງສືມາໃຫ້ອ່ານເລົ່າບໍ່ອ່ານເປັນນັ້ນແລ ບຸກຄະລະສີ່ຈຳພວກນີ້ແລມີໂດຍປະການສັນໃດ ຄົນທັງຫລາຍອັນປາກົດດ້ວຍປະໜຍາ ອັນມີພາຍນອກເປົ່າດາຍແລ ປາກົດໃນບັນຫາກໍພໍ່າດັ່ງນັ້ນແລ ຄະນຶງດັ່ງນີ້ແລ້ວ ຈຶ່ງກ່າວວ່າ ດູລາມານະວະດັ່ງເຂົາຟູງນີ້ ຈັກຄວນວ່າໃຫ້ຜູ້ນີ້ຮັກສາເຂົ້າຂອງດີແລ ວ່າດັ່ງນີ້ບໍ່ຄວນວ່າໄດ້ເລີຍ ແມ່ນວ່າເຂົາສີ່ປະການນີ້ ຢຊວ່າຈັກເປັນດັ່ງບັນຫານົກແຂກເຕົ້ານັ້ນ ອັນຄົນທັງຫລາຍແຮ່ງກ່າວວ່າ ເປັນດັ່ງກະທູ້ລັກກິນກ້ານັ້ນເດ ເປັນດັ່ງກະທູ້ລັກກິນກ້ານັ້ນບໍຈາ ຄົນທັງຫລາຍແຮ່ງວ່າດັ່ງນີ້ທີ່ອບ້ານທີ່ວເມືອງຊູ່ແຫ່ງຊູ່ພາຍແລ ດ້ວຍແທ້ ເຂົາກໍບໍ່ຮູ້ຈັກກິດຈະແຫ່ງຄຳອັນນັ້ນໄດ້ສັກຄົນແລ ນັບວ່າເປົ່າດາຍແລ ເມື່ອນັ້ນມານະວະຜູ້ນັ້ນກ່າວວ່າ ຂ້າແຕ່ປະໂຣຫິຕະເປັນເຈົ້າ ໃນເມືອງໄພສາລີຫູຂ້າພຸ້ນກໍຫຼຸນຍ່ອມກ່າວຍັງຄຳສັນນີ້ແລ ທີ່ບໍ່ປາກົດຮູ້ໃນຕຳນານດ້ວຍຣາຊະກິດຈະອັນນັ້ນສັກຄົນແລ ເຫດດັ່ງນັ້ນ ຂ້າຈຶ່ງມາຮຽນໃນສຳນັກເຈົ້າກູແລ ເມື່ອນັ້ນປະໂຣຫິດຈັກກ່າວຕຳນານບັນຫາອັນນັ້ນມາໃຫ້ແຈ້ງແກ່ມານະວະຜູ້ນັ້ນ ວ່າດັ່ງນີ້ ດູລາມານະວະ ຕຳນານບັນຫາອັນນີ້ ອາຈານເຈົ້າຕົນມີປະໜຍາແຕ່ກ່ອນສືບມາ ໄວ້ແກ່ທ້າວພະຍາເສນາອາມາດນັກປາດເຈົ້າທັງຫລາຍແຕ່ງບ້ານແປງເມືອງມີໄພຍໄພອັນມາກ ຫາກເກີດມີແກ່ຕົນກໍດີ ແກ່ທ່ານກໍດີ ເພິ່ງຕີຜີປອງໃຫ້ລະງັບກັບຫາຍເສັຍແກ່ຕົນແກ່ທ່ານແລ ບັດນີ້ ທ່ານມານະວະຈຶ່ງຕັ້ງຫູຟັງເທີ້ນ ວ່າດັ່ງນີ້ແລ້ວຈຶ່ງກ່າວວ່າ ດູລາມານະວະຍັງມີເມືອງອັນໜຶ່ງ ຊື່ວ່າ ໂກລັບພະລະກະມະຫານະຄອນ ພະຍາເຈົ້າຕົນສະເຫວີຍເມືອງນັ້ນກໍຊື່ວ່າ ໂກລັບພະກະຣາດແລ ຍັງມີພານຜູ້ໜຶ່ງ ຊື່ວ່າໄຊຍະພານປັດຕິເສນາແລ ຍັງມີໃນກາລະວັນໜຶ່ງ ເສິກກໍມາຕົກທີ່ວເມືອງ ອັນເປັນລະແວກແຄ້ວນເມືອງໂກລັບພະກະນັ້ນແລ ພະຍາໂກລັບພະກະອັນເປັນເຈົ້າເມືອງນັ້ນ ກໍບັງຄັບໄຊຍະເສນາປັດຕິຜູ້ນັ້ນ ໃຫ້ກຶເອົາຣິພົນໂຍທາໄປລະງັບຂ້າເສິກຟູງນັ້ນ ເມື່ອໄຊຍະເສນາປັດຕິຜູ້ນັ້ນຈັກໄປ ມັນກໍສັ່ງນົກແຂກເຕົ້າຕົວໜຶ່ງ ອັນເປັນນົກລ້ຽງແຫ່ງຕົນດ້ວຍຄຳວ່າ ດູລານົກແຂກເຕົ້າ ມຶງຈຶ່ງຮັກສາຢ້າວເຮືອນກູເນີ ຢ່າໃຫ້ບຸກຄະລະຜູ້ໃດມາບຊດບຊນແກ່ຢ້າວເຮືອນກູເນີດັ່ງນີ້ແລ ເລົ່າໄປສັ່ງສຸນັກຂາໝາແມ່ລູກວ່າ ເຂືອແມ່ລູກຈົ່ງເອົາກັນຮັກສາກາງບ້ານໃຕ້ລຸ່ມໃຕ້ລ່າງກູເນີ ຢ່າໃຫ້ຄົນມາບຊດບຊນຢ້າວເຮືອນເນີ ແລ້ວກໍໄປລະງັບຂ້າເສິກສັດຕູພັ້ນແລ ເມື່ອນັ້ນ ພະຍາຄະນຶງໃຈວ່າ ເສນາໄປລະງັບຂ້າເສິກແພ້ກໍບໍ່ຮູ້ໄດ້ແລ ຜິວ່າແພ້ຂ້າເສິກກໍດີພັ້ນແລ ຜິວ່າບໍ່ແພ້ຂ້າເສິກດັ່ງນັ້ນ ຂ້າເສິກກໍຈັກມາຮອດບ້ານເຖິງເມືອງບໍ່ຢ່າຊະແລ ອັນວ່າທາດກ້ານປາການວຽງນີ້ ຈັກວ່າດີຫລືຮູ້ວ່າບໍ່ທັກຄໍ່າເກື່ອນເພພັງເສັຍດ້ວຍປະການສັນໃດກໍບໍ່ຮູ້ ເພິ່ງກູຢັ້ຽມດູຄວນແລ ພະຍາຄະນຶງໃຈດັ່ງນີ້ແລ້ວ ຈຶ່ງໃຫ້ຕີກອງປ່າວໃຫ້ຄົນທັງຫລາຍຊຳຣະຫົນທາງເສັຍ ພະຍາກໍຂຶ້ນຂີ່ຊ້າງມັງຄະລະໄປລຽບວຽງຊູ່ແຫ່ງພັ້ນແລ ເມື່ອພະຍາລຽບໄປເຖິງບ້ານໄຊຍະເສນານັ້ນ ເມື່ອນັ້ນເມັຍໄຊຍະເສນາອອກມານອກຫລໍ່າຫລິງດູຣິພົນແຫ່ງພະຍາຍາມນັ້ນ ພະຍາເຫັນເມັຍໄຊຍະເສນາຜູ້ນັ້ນ ມີຮູບໂສມຕະໂນມພົນອັນງາມລ້ວນກ້ວນທຸກແຫ່ງຫາຜູ້ຈັກປຽບທຽມບໍ່ໄດ້ ພະຍາກໍມີໃຈປະຕິພັດກັບຄອມນາງຜູ້ນັ້ນມາກນັກພັ້ນແລ ພະຍາລຽບວຽງແລ້ວກໍເມືອສູ່ປາສາດແຫ່ງຕົນແລ ເຖິງຍາມຄໍ່າ ຄົນທັງຫລາຍນອນແລ້ວພະຍາກໍສຸບເກີບຕີນຄຳ ແລ້ວກໍລົງຈາກປາສາດແຫ່ງຕົນໄປສູ່ບ້ານເສນາເກິງ

ກາງບ້ານຫັ້ນແລ ຍາມນັ້ນໝາແມ່ເຫັນພະຍາແລ້ວກໍຮູ້ວ່າພະຍາມາດັ່ງນັ້ນ ມັນກໍຂາບຢູ່ບໍ່ເຫົ່າຫັ້ນແລ ໝາຕົວລູກນັ້ນບໍ່ຮູ້ວ່າພະຍາມັນກໍເຫົ່າແລ ເມື່ອນັ້ນໝາຕົວແມ່ຈິ່ງກ່າວຫ້າມດ້ວຍຄຳວ່າ ດູລາເຈົ້າລູກຮັກແມ່ ເຈົ້າຢ່າເຫົ່າເຫີ້ນອັນນີ້ເປັນການອັນຈິບຫາຍກໍແມ່ແລ ວ່າດັ່ງນັ້ນແລ້ວກໍຢູ່ຫັ້ນແລ ເມື່ອນັ້ນ ພະຍາກໍຂຶ້ນໄປເຖິງກາງເຮືອນແລ້ວກໍກອດເກີບຕີນຄຳໄວ້ແລ້ວ ກໍເຂົ້າໄປໃກ້ທີ່ນອນນາງເສນາຫັ້ນແລ ວັນນັ້ນເປັນວັນເດືອນເພັງສິບຫ້າຄ່ຳບໍລະສຸດແຈ້ງສ່ອງນັກແລ ເມື່ອນັ້ນນົກແຂກເຕົ້າຕົວນັ້ນມັນເຫັນພະຍາໄປດັ່ງນັ້ນ ມັນບໍ່ກ່າວດັ່ງລີ ກໍກົວພະຍານັກ ມັນຈິ່ງຕິອຸບາຍກາມໝາສອງຕົວແມ່ລູກນັ້ນດ້ວຍບັນຫາອັນໜຶ່ງວ່າດັ່ງນີ້ ດູລາສະຫາຍ ໃນຣາຕີກືນນີ້ເຮົານອນບໍ່ຫລັບນໍ ກູຈັກກ່າວບັນຫາອັນໜຶ່ງໃຫ້ເຂືອແມ່ລູກຟັງເນີ ເມື່ອນັ້ນພະຍາໄດ້ຍິນຄຳນົກແຂກເຕົ້າດັ່ງນັ້ນ ພະຍາກໍຄ່ອຍຢອງເຂົ້າໄປບໍ່ທັນຮອດເມັຍເສນາເທື່ອ ສ່ວນວ່ານາງເສນາຜູ້ນັ້ນ ກໍບໍ່ຮູ້ວ່າພະຍາມາຫາຕີນດັ່ງນັ້ນຫັ້ນແລ ພະຍາກໍຍັງຢູ່ກາງເຮືອນຟັງນົກແຂກເຕົ້າຕົວນັ້ນຈາຫັ້ນແລ ນົກແຂກເຕົ້າມັນເອີ້ນເວົ້າໝາແມ່ລູກ ດ້ວຍຄຳວ່າດັ່ງນີ້ ສັມມະ ດູລາສະຫາຍສຸນັກຂາ ເຂືອແມ່ລູກເຮີຍ ຍັງມີບັນຫາອັນໜຶ່ງນັ້ນນາຍັງຄວນຈັກແກ້ໄດ້ ມີແຕ່ທ້າວພະຍາຕີນເປັນເຈົ້າແຜ່ນດິນຕີນລ້ຳເລີດປະເສີດກວ່າຄົນທັງຫລາຍ ຈິ່ງຈັກແກ້ໄດ້ແລ ຄົນສາມານຜູ້ໃດຜູ້ໜຶ່ງບໍ່ອາດຈັກແກ້ໄດ້ແລ ນົກແຂກເຕົ້າວ່າດັ່ງນີ້ແລ້ວ ຈິ່ງກ່າວວ່າດູລາສະຫາຍສຸນັກຂາ ຍັງມີເມືອງອັນໜຶ່ງຊື່ວ່າໂກໄລຍະ ພະຍາເຈົ້າຕີນສະເຫວີຍເມືອງນັ້ນກໍ່ຊື່ວ່າໂກໄລຍະແລ ໃນເມື່ອລະດູຄົນທັງຫລາຍກະທຳນາດັ່ງນັ້ນ ພະຍາກໍໃຫ້ຫາມາຍັງນາຍພໍ່ນາມາແລ້ວກໍບອກວ່າ ດູລາພໍ່ນາ ມຶງຈິ່ງຫວ່ານກ້າໃນນາກູ ແລ້ວມັນກໍຢອວ່າເນື້ອແລະນົກຈັກມາຕົກກິນ ມັນກໍເອົາໄມ້ມາປັກແວດລ້ອມກ້າແລ້ວ ມັນກໍກີເອົາໝ້າກິ່ງມັນກໍເຂົ້າໄປສູ່ປ່າ ເພື່ອຈັກລະວັງເສັຍຍັງນົກທັງຫລາຍອັນຈັກມາກິນກ້ານັ້ນ ມັນໄປບໍ່ທັນມາດັ່ງນັ້ນຍາມນັ້ນກະທູ້ ກໍມາລັກກິນກ້າພາຍຫລັງເສັຍ ບັນຫາອັນນີ້ເຂືອແມ່ລູກຍັງຈັກແກ້ໄດ້ບໍຈາ ເມື່ອນັ້ນໝາສອງຕົວແມ່ລູກກ່າວວ່າ ດູລານົກແຂກເຕົ້າບັນຫາອັນນີ້ ແມ່ນວ່າເຜືອຮູ້ກໍບໍ່ຄວນແກ້ແລ ເຫດວ່າເຜືອນີ້ເປັນສັດຕົວກ່ອຍກວ່າເຈົ້າກູແລ ເມື່ອນັ້ນພະຍາໄດ້ຍິນບັນຫາອັນນັ້ນ ພະຍາກໍຮູ້ວ່ານົກແຂກເຕົ້າຕົວນີ້ ຮອຍວ່າເຫັນກູມານີ້ບໍ່ຢ່າແລ ເມື່ອໃດໄຊຍະເສນາມາແລ້ວກູຈັກຂ້າມັນເສັຍແລ້ວກູຈັກເອົາເມັຍມັນຍາມນັ້ນຄວນແລ ວັນນີ້ ກູບໍ່ຄວນຢູ່ນອນກັບນາງເສນາແລ ເຫດວ່ານົກແຂກເຕົ້າຕົວນີ້ເຫັນກູ ຈັກກ່າວບອກແກ່ຄົນທັງຫລາຍບໍ່ຢ່າຊະແລ ຄັນວ່າຊາວເມືອງຮູ້ດັ່ງນັ້ນ ເຂົາຈັກວ່າກູນີ້ຮ້າຍແລ້ວເຂົາຈັກກະທຳແກ່ກູກໍບໍ່ຮູ້ໄດ້ແລ ອັນໜຶ່ງກູມາກະທຳສັນນີ້ກໍບໍ່ຄວນແກ່ກູແທ້ດີຫລີແລ ພະຍາກໍຮຳເພິງດັ່ງນີ້ ແລ້ວກໍຮີບລົງເຮືອນລືມສະຕິ ແລ້ວກໍລະປະເສັຍຍັງເກີບຕີນຄຳໄວ້ໃນເຮືອນເສນາຫັ້ນແລ ກໍຂຶ້ນເມືອສູ່ຜາສາດແຫ່ງຕົນດັ່ງເກົ່າ ກະທຳເພດອັນໜັກພິຕິໃຫຍ່ຢູ່ຫັ້ນແລ ວັນລຸນຮຸ່ງເຊົ້ານາງເສນາ ກໍເຫັນເກີບຕີນຄຳພະຍານັ້ນແລ້ວກໍສະດຸ້ງຕົກໃຈກົວໄພຍໄພມາກນັກແລ ເມື່ອນັ້ນນົກແຂກເຕົ້າກໍບອກເລົ່າກິຍາອາການອັນພະຍາມານັ້ນ ແກ່ນາງເສນາໃຫ້ແຈ້ງຫັ້ນແລ ນາງເສນາກໍຈາກັບດ້ວຍນົກແຂກວ່າ ກູຈັກໃຊ້ມຶງໄປບອກເລົ່າແກ່ເສນາອັນເປັນເຈົ້າແຫ່ງທ່ານພຸ້ນແລ ວ່າດັ່ງນັ້ນ ນົກແຂກເຕົ້າກ່າວວ່າດີງແລ ວ່າດັ່ງນີ້ແລ້ວ ນາງເສນາກໍກະທຳເຂົ້າຕອກອັນຕະໜົມຄົນໄປດ້ວຍນ້ຳເຜີ້ງໃຫ້ນົກແຂກເຕົ້າຕົວນັ້ນກິນ ແລ້ວກໍໃຊ້ໃຫ້ໄປບອກແກ່ຜົວຕົນທີ່ໜ້າເສິກພຸ້ນແລ ເມື່ອນັ້ນເສນາກໍຮູ້ກິດຈະອັນພະຍາກະທຳນັ້ນຊູ່ປະການຫັ້ນແລ ເມື່ອໄຊຍະເສນາໄປ

ລະວັບຂ້າເສິກແພ້ແລ້ວ ກໍໄດ້ຊ້າງມ້າຂ້າຂ້ອຍຄົນມາກນັກແລ້ວຈຶ່ງຄືນມາເກິງລະແວກຕະເດີນປ່າ ກາງທາງທີ່ໜຶ່ງ ແລ້ວກໍໃຫ້ຣິພົນທັງຫລາຍຢັ້ງຕັ້ງຢູ່ທີ່ໜຶ່ງ ແລ້ວກໍຄະນຶງໃຈວ່າ ກູຈັກເມືອດ້ວຍຣິບນັ້ນບໍ່ຄວນແລ ເຫດວ່າພະຍາເຫັນເມັຍກູມີຮູບອັນງາມແລະປະຕິພັດກັບດອມເມັຍແຫ່ງກູສັນນີ້ ຊາຕິທ້າວພະຍານີ້ ມີກຳລັງເປັນດັ່ງໄຟນັ້ນແລ້ວ ຄັນວ່າຈູຈູດທີ່ໃດກໍໄໝ້ທີ່ນັ້ນແລ ແມ່ນຂ້າເສັຍກໍດາຕາຍ ຊາຍເສັຍກໍໄດ້ໄປແທ້ດີຫລີແລ ເຫດແລະມີດັ່ງນີ້ ກູບໍ່ຄວນເມືອດ້ວຍງ່າຍ ກູບໍ່ເພິງໃຫ້ພະຍາຮູ້ດ້ວຍອັນແປນແທ້ແລ ກູເພິງຕິອຸບາຍອັນໜຶ່ງເລີກແລບ ຄະນຶງໃຈດັ່ງນີ້ແລ້ວ ກໍຕິອຸບາຍຫາບັນຫາອັນໜຶ່ງ ໄດ້ແລ້ວກໍຈຶ່ງໃຊ້ບ່າວແຫ່ງຕົນເມືອໄຫວ້ພະຍາຫັ້ນແລ ຄົນໃຊ້ເມືອຮອດແລ້ວກໍເມືອໄຫວ້ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ຂ້າໄດ້ລະວັບຂ້າເສິກກໍແພ້ແລ້ວ ກໍໄດ້ຊ້າງມ້າຂ້າຄົນທັງຫລາຍກໍມາກນັກແລ ຂ້າກໍຄືນມາເກິງທີ່ໜຶ່ງ ຂ້າກໍນອນຈຶ່ງຝັນເຫັນສະອັນໜຶ່ງ ມີນົນທົນຝັ່ງຮາບງາມນັກ ແລະປະກອບໄປດ້ວຍນ້ຳບໍລະສຸດໃສງາມນັກແລ ມີທ່າອັນຮາບງາມບໍລະສຸດດີນັກ ຄວນແກ່ທ້າວພະຍາບໍລະໂພກແທ້ດີແລ ດ້ວຍມີແທ້ສະອັນນັ້ນເປັນທີ່ລົງອາບ ແລະລົງຟູນແຫ່ງໝາຈິກຈອກຕົວໜຶ່ງແລ ເລົ່າຍັງມີຣາຊະສີຕົວໜຶ່ງປະເສີດນັກ ກໍລົງຈາກກ້ຳຄູຫາຄຳ ອັນເປັນທີ່ຢູ່ແຫ່ງຕົນແລ້ວ ເພື່ອວ່າຈັກລົງມາອາບນ້ຳທີ່ນັ້ນກໍມາຈອບສິງຄາລະໝາຈິກຈອກຕົວນັ້ນ ແລະອາບຟຸ່ນຢູ່ດັ່ງນັ້ນ ກໍລວດບໍ່ອາບຮ່ວມໝາຈິກຈອກຕົວນັ້ນແລ້ວກໍຄືນເມືອສູ່ກ້ຳຄູຫາຄຳ ອັນເປັນທີ່ຢູ່ແຫ່ງຕົນດັ່ງເກົ່າຫັ້ນແລ ຄຳຝັນອັນນີ້ກໍເປັນທີ່ອັດສະຈັນແທ້ແລ ຂ້າບໍ່ທ່ອນເຫັນສັນນີ້ສັກເທື່ອ ຂ້າກໍກົວນັກແທ້ແລ ຂ້າໄຫວ້ມະຫາຣາຊະເຈົ້າໃຫ້ຮູ້ເຫດແຫ່ງຄຳຝັນຂ້ານີ້ ສັນນີ້ແລ ເມື່ອນັ້ນພະຍາກໍຮູ້ບັນຫາອັນນັ້ນແລ້ວ ກໍຄະນຶງໃນໃຈວ່າເສນາຜູ້ນີ້ຮອຍວ່າມັນຮູ້ເຫດອັນກູໄປກະທຳສັນນີ້ແລ້ວ ກໍກົວກູບໍ່ຢ່າຊະແລ ຄະນຶງດັ່ງນີ້ແລ້ວຈຶ່ງກ່າວແກ່ຄົນໃຊ້ນັ້ນວ່າ ມຶງຈົ່ງໄປກ່າວແກ່ໄຊຍະເສນາຊູ່ປະການເທີ້ນ ອັນວ່ານິມິຕະຄຳຝັນ ອັນໄຊຍະເສນາຫາກຝັນເຫັນຊູ່ປະການນັ້ນ ຄຳຝັນສັນນີ້ກໍເປັນກັບດ້ວຍເຫດໃຫ້ວຸດທິສະຫວັດດີແທ້ຫລີແລ ຈົ່ງໃຫ້ໄຊຍະເສນາມາເມືອງບໍ່ເປັນອົນຕາຍສັງສັກອັນແລ ກ່າວດັ່ງນີ້ແລ້ວໃຫ້ຄົນໃຊ້ຄືນໄປແລ ຄັນວ່າຄົນໃຊ້ໄປຮອດໄຊຍະເສນາແລ້ວ ກໍກ່າວບອກເລົ່າແກ່ໄຊຍະເສນາຊູ່ປະການ ໂດຍດັ່ງພະຍາຫາກສັ່ງຊູ່ອັນແລ ເມື່ອນັ້ນໄຊຍະເສນາໄດ້ຍິນຄຳຄົນໃຊ້ດັ່ງນັ້ນ ກໍຮູ້ວ່າຫາອົນຕາຍບໍ່ໄດ້ດັ່ງນັ້ນແລ້ວຈຶ່ງພາເອົາຣິພົນເມືອຫັ້ນແລ ຄັນວ່າເມືອຮອດແລ້ວ ນາງເສນາກໍເອົາເກີບຕີນຄຳມາໃຫ້ໄຊຍະເສນາຫັ້ນແລ ໄຊຍະເສນາເຫັນແລ້ວ ຈຶ່ງຄະນຶງໃນໃຈວ່າ ກູຈັກເອົາເກີບຕີນຄຳອັນນີ້ ເມືອໃຫ້ພະຍາເປົ່າດາຍດັ່ງນັ້ນ ກໍເຊີນແກ່ພະຍາເຈົ້າແທ້ແລ ເຫດວ່າຊ້ອງໜ້າແຫ່ງຄົນທັງຫລາຍແລ ເມື່ອພະຍາແລເຊີນດັ່ງນັ້ນ ກໍຈັກເກີດລັກອາຍ ກໍຈັກມີແລ ພະຍາຈັກກະທຳອັນໃດອັນໜຶ່ງແກ່ກູຊະແລ ຄະນຶງດັ່ງນີ້ ແລ້ວຈຶ່ງຕິອຸບາຍ ໃຫ້ຄົນທັງຫລາຍປະດັບປະດາຍັງຫົນທາງແຕ່ເຮືອນຕົນເທົ່າເກິງຄຸ້ມພະຍາແລ້ວ ກໍເອົາເກີບຄຳອັນນັ້ນໃສ່ຫລັງຊ້າງມັງຄະລະຕົວປະເສີດ ອັນພະຍາໃຫ້ເອົາໄປລະວັບຂ້າເສິກນັ້ນ ເມືອເກິງຄຸ້ມພະຍາຫັ້ນແລ ເມື່ອນັ້ນຊາວເມືອງທັງຫລາຍເຫັນເກີບຄຳພະຍາຢູ່ເໜືອຫລັງຊ້າງມັງຄະລະນັ້ນ ເຂົາກໍກະທຳສາທຸການມາກນັກດ້ວຍຄຳວ່າ ພະຍາເຈົ້າເຮົາໃຫ້ເກີບຄຳແກ່ເສນາໄປລະວັບຂ້າເສິກ ກໍແພ້ໄດ້ຊ້າງມ້າຂ້າຄົນມາກນັກແທ້ບໍ ຜິວ່າພະຍາເຈົ້າເຮົາໄປແທ້ ກໍຈັກໄດ້ບ້ານເມືອງເຂົາບໍ່ຢ່າຊະແລ ຄຳສັນນີ້ກໍລືຊາປາກົດໄປທົ່ວເມືອງທັງມວນ ຄົນທັງຫລາຍກໍພາຍເຂົ້າຕອກດອກໄມ້ບູຊາມາກ

ນັກແລ ເສນາເມືອເຖິງແລ້ວ ກໍຖວາຍຊ້າງມ້າຂ້າຄົນເງິນຄຳທັງມວນອັນຕົນໄດ້ມານັ້ນແກ່ພະຍາເຈົ້າຕົນນັ້ນ ແລ້ວກ່າວກິດຈະອັນຕົນໄດ້ໄປລະວັງບ້ຂ້າເສິກນັ້ນ ແລະຊະນະແພ້ຂ້າເສິກສັດຕູ ດ້ວຍເດຊະອະນຸພາບປຸນຍະສົມພາບແຫ່ງມະຫາຊະເຈົ້າເມືອເຫລື່ອມງໍາ ທີ່ນີ້ຂ້າກໍຖວາຍໄວ້ແກ່ມະຫາຣາຊະເຈົ້າດັ່ງເກົ່າແລ ເມື່ອນັ້ນພະຍາໄດ້ຍິນຄຳໄຊຍະເສນາ ກ່າວດັ່ງນັ້ນກໍຍິນດີມາກນັກ ກໍຄະນຶງໃນໃຈວ່າ ເສນາກູຜູ້ນີ້ມີພະຫຍາຍິ່ງນັກນໍ ກູໄດ້ກະທຳກຳອັນຜິດສັນນີ້ຄວນຈັກເກີງອັນພັດພາກຈາກຣາຊະສຳປັດຕິບ້ານເມືອງແທ້ດີຫລີແລ ເສນາຜູ້ນີ້ມີພະຫຍາຮູ້ຕົປອງບໍ່ໃຫ້ປາກົດແກ່ຄົນທັງຫລາຍດ້ວຍອຸບາຍວຸດທິສະຫວັດດີ ຫາມະລະມົນທົນບໍ່ໄດ້ແທ້ດີຫລີ ກູເພິ່ງໃຫ້ມີຄຸນແກ່ມັນຄວນແລຄະນຶງດັ່ງນີ້ແລ້ວ ກໍໃຫ້ຍົດສັກອັນມາກນັກຂຶ້ນຊື່ ວ່າຣຸຈິໄຊຍະເສນາມະຫາບໍດີ ແລ້ວກໍໃຫ້ບ້ານທັງຫລາຍພັນໜຶ່ງເປັນສ່ວຍໃຫ້ມີແລ.

ທີ່ນີ້ຈັກກ່າວໄຂກິດຈະບັນຫາສາມອັນນັ້ນໃຫ້ແຈ້ງກ່ອນແລ ອັນວ່າບັນຫານິກແຂກເຕົ້າສ່ອງຫວາຍ ແກ່ໝາສອງຕົວແມ່ລູກນັ້ນ ອັນວ່າກະທູ້ລັກກິນກ້າຄືພະຍາແລ ກ້ານັ້ນຄືນາງເສນາແລນາຍພໍ່ນານັ້ນແມ່ນໄຊຍະເສນາແລ ອັນເສນາໃຊ້ໃຫ້ກ່າວແກ້ບັນຫານັ້ນ ອັນວ່າສະນັ້ນຄືນາງເສນາແລ ຣາຊະສີນັ້ນຄືພະຍາແລ ໝາຈິກຈອກນັ້ນຄືໄຊຍະເສນາແລ ບັນຫາອັນພະຍາສັ່ງຕອບໄປແກ່ເສນານັ້ນ ເປັນບັນຫາອັນຜູ້ມີໂທດແລຈັກແກ້ໂທດດ້ວຍພະຫຍາອຸບາຍ ແລະບັນຫາເສນານັ້ນ ກໍເປັນບັນຫາແຫ່ງນັກປາດ ອັນທ່ານຈັກກະທຳໂທດແກ່ຄົນນັ້ນແລ ຜູ້ໃດເປັນເຈົ້າເປັນຂຸນເສນາອາມາດຜູ້ໃຫຍ່ ກັບທ້າວພະຍາຈັກຕັດກ້ອຍຄຳອັນເປັນຄຳບ້ານຄຳເມື່ອງອັນລ້ອລັບແກ່ທ່ານ ເພິ່ງທີ່ເອົາເຂົ້າໃຈໄວ້ອູ່ປະການແລ ຕຳນານກະທູ້ລັກກິນກ້າ ອັນພາມມະນະປະໂຣຫິດ ກ່າວສອນມານະວະດັ່ງນີ້ແລ ມານະວະຜູ້ນັ້ນຮູ້ແຈ້ງແລ້ວ ກໍບູຊາພາມມະນະປະໂຣຫິດດ້ວຍຄຳພັນໜຶ່ງແລ ກໍສັ່ງອໍາລາອາຈານແຫ່ງຕົນເມືອສູ່ເມືອງໄພສາລີ ອັນເປັນທີ່ຢູ່ແຫ່ງຕົນດັ່ງເກົ່າຫັ້ນແລ ແຕ່ນັ້ນເມືອໜ້າບໍ່ນານທໍ່ໃດ ຊາວເມືອງໄພສາລີທັງຫລາຍເຂົາກໍນັ່ງຢູ່ ເຂົາຫອູນຍ່ອມຈາກັນໃນລະແວກທົນທາງໃຫຍ່ ແລະທາງນ້ອຍທັງຫລາຍທຸກແຫ່ງວ່າ ເປັນດັ່ງກະທູ້ລັກກິນກ້ານັ້ນສາເນີ ເປັນດັ່ງກະທູ້ລັກກິນກ້ານັ້ນບໍຈາ ຄົນທັງຫລາຍຫອູນຍ່ອມກ່າວສັນນີ້ ທຸກເມື່ອແລ ຄຳອັນນັ້ນກໍເຮື່ອເຮືອງເກີງພະຍາໄພສາລີຕົນເປັນເຈົ້າເມືອງນັ້ນແລ ພະຍາກໍໃຫ້ຫາມາຍັງຄົນຜູ້ກ່າວນັ້ນມາຖາມດູຍັງກິດຈະການແຫ່ງກ້ອຍຄຳອັນນັ້ນ ກໍຫາຜູ້ຈັກຮູ້ບໍ່ໄດ້ສັກຄົນແລ ພະຍາກ່າວວ່າຊາຕິກ້ອຍຄຳອັນໃດກໍດີ ຄົນຮູ້ເຄົ້າແຫ່ງກ້ອຍຄຳອັນນັ້ນແລ້ວ ຈິ່ງກ່າວດາຍ ບໍ່ທ່ອນຈັກຈາເປົ່າດາຍແລ ຮອຍວ່ານີ້ເປັນຄຳລະຫັດກໍດີ ຄຳອັນໃດອັນໜຶ່ງກໍດີ ເພິ່ງມີແທ້ດີຫລີແລ ວ່າດັ່ງນີ້ແລ້ວ ພະຍາກໍໃຫ້ເອົາຄົນທັງຫລາຍຝູງກ່າວນັ້ນມາໃສ່ຄອກໄວ້ອູ່ຄົນແລ້ວ ຈິ່ງກ່າວວ່າ ເມື່ອໃດ ກູຮູ້ເຫດແຫ່ງກະທູ້ລັກກິນກ້ານັ້ນແຈ້ງແລ້ວ ກູຈິ່ງຈັກປ່ອຍຄົນທັງຫລາຍຝູງນີ້ແລ ກູໄປ່ຮູ້ແຈ້ງກິດຈະຄຳເບື່ອງນັ້ນ ກູບໍ່ປ່ອຍເຂົາຕາບຕໍ່ເທົ່າຊີວິດແຫ່ງເຂົາແລ ວ່າດັ່ງນັ້ນແລ້ວ ພະຍາກໍໃຫ້ຄົນໄປປ່າວຄ້ອງຫາຜູ້ຮູ້ກິດຈະອະທິບາຍແຫ່ງຄຳວ່າກະທູ້ລັກກິນກ້ານັ້ນ ດ້ວຍຄຳວ່າ ບຸກຄະລະຜູ້ໃດ ຍັງຮູ້ກິດຈະອະທິບາຍຄຳວ່າກະທູ້ລັກກິນກ້າແຈ້ງ ກູຈັກເອົາມາລ້ຽງໃຫ້ຍົດສັກສຳປັກຕິເປັນເສນາໃຫຍ່ໃຫ້ແກ່ມັນຜູ້ຮູ້ນັ້ນ ວ່າດັ່ງນີ້ແລ້ວ ຄົນທັງຫລາຍກໍໄປປ່າວຄ້ອງຕາມຄຳພະຍາຫັ້ນແລ ຍາມນັ້ນມານະວະຜູ້ນັ້ນ ໄດ້ຍິນສອງຄົນປ່າວຄ້ອງດັ່ງ

ນັ້ນ ມັນກໍຖາມຄົນຜູ້ມາປ່າວຄ້ອງນັ້ນມາ ດູລາເພິ່ນທັງຫລາຍພະຍາເຈົ້າໃຫ້ປ່າວຄ້ອງດ້ວຍເຫດດັ່ງລືຈາ ເມື່ອນັ້ນຄົນທັງຫລາຍຝູງປ່າວຄ້ອງນັ້ນກ່າວວ່າ ດູລາມານະວະ ພະຍາເຈົ້າໃຫ້ກູທັງຫລາຍມາປ່າວຫາຄົນຜູ້ຮູ້ກິດຈະແຫ່ງຄຳວ່າ ກະທູ້ລັກກິນກ້ານັ້ນ ບຸກຄະລະຜູ້ໃດແລຮູ້ເຫດແຫ່ງກິດຈະກະທູ້ລັກກິນກ້ານັ້ນແຈ້ງແທ້ ພະຍາເຈົ້າຈັກໃຫ້ເປັນເສນາໃຫຍ່ແລ ເມື່ອນັ້ນມານະວະກ່າວວ່າ ຜິວ່າມີດັ່ງນັ້ນແທ້ດີຫລີແລ ຄົນຝູງປ່າວຄ້ອງໄດ້ຍິນຄຳມານະວະກ່າວທີ່ນັ້ນແລ້ວ ເຂົາກໍເມື່ອກ່າວແກ່ພະຍາທັ້ນແລ ພະຍາກໍໃຫ້ຫາມາຍັງມານະວະຜູ້ນັ້ນມາຖາມດູທັ້ນແລ ຄັນວ່າມານະວະເມືອຮອດແລ້ວ ພະຍາກໍຖາມມານະວະຜູ້ນັ້ນດ້ວຍຄຳວ່າ ດູລາມານະວະທ່ານ ຍັງຮູ້ແຫ່ງກິດຈະກະທູ້ລັກກິນກ້ານັ້ນບໍຈາຜິທ່ານຍັງຮູ້ກ່າວມາແກ່ເຮົາເທີ້ນ ມານະວະຜູ້ນັ້ນໄຫວ້ພະຍາວ່າ ຂ້າກໍຮູ້ແລວ່າດັ່ງນີ້ແລ້ວ ມັນກໍກ່າວເຫດແຫ່ງກິດຈະກະທູ້ລັກກິນກ້ານັ້ນ ໃຫ້ພະຍາເຈົ້າຟັງສູ່ປະການທັ້ນແລ ພະຍາຮູ້ແລ້ວກໍຖາມມັນວ່າ ດູລາມານະວະ ບັນຫາອັນນີ້ທ່ານໄດ້ແຕ່ສຳນັກບຸກຄະລະຜູ້ໃດນັ້ນຈາ ມານະວະກ່າວວ່າຂ້າແກ້ມະຫາຣາຊະເຈົ້າຂ້າໄດ້ແຕ່ສຳນັກພາມມະນະປະໂຣຫິດ ອັນເປັນອາຈານແຫ່ງພະຍາເວລະຕະມະຫານະຄອນນັ້ນແລ ເປັນບັນຫາແຫ່ງນົກແຂກເຖົ້າຕົວໜຶ່ງອັນມີໃນເມືອງກາຍະນະຄອນແລແຕ່ທຳມະດາມາແລ ມັນກໍກ່າວກິດຈະແຫ່ງບັນຫາອັນນັ້ນທັງມວນ ໃຫ້ແຈ້ງແກ່ພະຍານັ້ນທັ້ນແລ ເມື່ອນັ້ນພະຍາກໍຮູ້ກິດຈະແຫ່ງຄຳວ່າ ກະທູ້ລັກກິນກ້ານັ້ນແຈ້ງນັກແລ້ວ ກໍຊື່ນຊົມຍິນດີມາກນັກແລພະຍາກ່າວວ່າບັນຫາອັນນີ້ບໍ່ທ່ອນໄດ້ຍິນສັກເທື່ອແລ ແຕ່ໃນກາລະເມື່ອກ່ອນພຸ້ນ ຈຶ່ງມາໄດ້ຍິນບັດນີ້ບໍ ບັນຫາອັນນີ້ ກໍເປັນບັນຫາແຫ່ງນັກປາດເຈົ້າທັງຫລາຍຝູງມີພະຫຍາແທ້ແລ ກໍຍ້ອງຍໍຄຸນມານະວະຜູ້ນັ້ນ ກໍບູຊາດ້ວຍຄຳພັນໜຶ່ງ ແລ້ວກໍໃຫ້ເປັນເສນາໃຫຍ່ຜູ້ໜຶ່ງແລ ດັ່ງຄົນຝູງໃສ່ຄອກໄວ້ນັ້ນກໍໃຫ້ປ່ອຍເສັຍ ແລ້ວກໍໃຫ້ເປັນບ່າວປະຣິວານແຫ່ງມັນແລ ເຂົາຝູງນັ້ນຄັນວ່າພົ້ນຈາກຄອກຂັງແລ້ວ ເຂົາກໍຍິນດີເຊີ່ງມານະວະຜູ້ນັ້ນມາກນັກແລ ເຂົາກໍບູຊາຍັງເສນາຜູ້ນັ້ນແລະຄົນລະຮ້ອຍຄຳກໍມີແລ ເມື່ອມານະວະຜູ້ນັ້ນ ໄດ້ເປັນເສນາໃຫຍ່ແລ້ວຈຶ່ງສັ່ງສອນຄົນທັງຫລາຍວ່າ ດູລາເຈົ້າທັງຫລາຍ ຄຳອັນໃດກໍດີອັນຄວນເປັນລະຫັດກໍດີ ອັນບໍ່ຄວນເປັນລະຫັດກໍດີ ຜີ ແລະ ບໍ່ຮູ້ເຄົ້າແຫ່ງກ້ອຍຄຳອັນນັ້ນແຈ້ງ ບໍ່ເພິ່ງກ່າວດາຍ ແມ່ນວ່າຮູ້ກໍດີ ກໍເພິງໄວ້ໃຈຕົນບໍ່ເພິງກ່າວແທ້ດີຫລີແລແມ່ນວ່າພໍ່ແມ່ຍາຕິພີ່ນ້ອງກໍດີເທີ້ນ. ບໍ່ເພິ່ງກ່າວແລ ກ່າວຕຳນານນິທານ ກະທູ້ລັກກິນກ້າແລ້ວທໍ່ນີ້ແລ.

ຍັງມີມານະວະຜູ້ໜຶ່ງ ໄປຄ້າສະເພົາເປັນສ້ອງເຈ້ອຣະການນານນັກແລ ລູກເມັຍຍາຕິພີ່ນ້ອງຢູ່ບ້ານ ໄດ້ຍິນຂ່າວສານວ່າມັນຕາຍເສັຍແລ້ວວ່າດັ່ງນີ້ແທ້ທັ້ນແລ ເຂົາກະທຳບຸນໃຫ້ທານຫາມັນຊາວບ້ານຊາວເມືອງ ກໍຮູ້ຊູ່ຄົນທັ້ນແລ ຢູ່ບໍ່ນານທໍ່ໃດຜູ້ເຖົ້າຜູ້ແກ່ກໍເອົາຜົວໃຫ້ແກ່ເມັຽມັນເສັຍທັ້ນແລ ເມື່ອພາຍລຸນຜົວເກົ່າໄປຄ້າຄືນມາຮອດບ້ານ ກໍ່ເຫັນເມັຍເອົາຜົວໃໝ່ເສັຍດັ່ງນັ້ນ ມັນກໍບໍ່ຍອມຈຶ່ງພາກັນໄປຫາໃຫ້ເສນາໄຕ່ສວນ ກ່າວກິດຈະຄຳທັງມວນໃຫ້ເສນາແຈ້ງແລ້ວ ເສນາກ່າວວ່າຄຳອັນເປັນສັນນີ້ ເຮົາບໍ່ທ່ອນໄດ້ຮູ້ສັກເທື່ອແລ ເຮົາບໍ່ອາດຈັກຕັດໄດ້ແລ ຈຶ່ງພາກັນໄປຫາພະຍາກ່າວກິດຈະທັງມວນໃຫ້ພະຍາແຈ້ງແລ້ວ ພະຍາຈຶ່ງກ່າວວ່າຄຳອັນນີ້ ກູຈັກເອົາອັນອື່ນມາຕັດບໍ່ຄວນແລ ຍັງຄວນແຕ່ເອົາຄຳຜູ້ຍິງນັ້ນມາຕັດແລ ຜິວ່າຜູ້ຍິງຮັກຜົວໃໝ່ ໃຫ້ເອົາຜົວໃໝ່ ຜິວ່າມັນ

ຮັກຜົວເກົ່າໃຫ້ເອົາຜົວເກົ່າເທີ້ນຊອບແລ ຜູ້ຍິງຮັກຜົວໃໝ່ ກໍໃຫ້ຂາເປັນຜົວເມັຍກັນ ທີ່ວ່າໃຫ້ສິນມາຜົວເກົ່າເສັຍຄວນແລ ເຂົ້າຂອງກະທໍາໄດ້ເທົ່າໃດກໍໃຫ້ປັນກັນເສັຍແລ ຜິວ່າຜູ້ເກົ່າມາສູ່ໃຫ້ປັນຂອງເຄິ່ງໜຶ່ງການເມືອງ ໄວ້ແກ່ຜູ້ຍິງແລ ຜິວ່າຜູ້ຍິງມາເຮືອນຜົວ ປັນຂອງໄວ້ແກ່ຜົວສອງສ່ວນເມັຍສ່ວນໜຶ່ງແລ ຄ່າຜູ້ຍິງມີເທົ່າໃດໃຫ້ຜົວເກົ່າເອົາທີ່ນັ້ນເທີ້ນ ໄວ້ການເມືອງແກ່ຂາຜົວເມັຽໃຫ້ເອົາຕາມຜົວເກົ່ານັ້ນເທີ້ນ ຜິວ່າການເມືອງຜົວເກົ່າບໍ່ມີ ໃຫ້ຜົວໃໝ່ຄືນຄ່າດອງເມັຍແກ່ຜົວເກົ່າ ຜົວເກົ່າມູນຂອງມີເທົ່າໃດອັນຂາກະທໍາໄດ້ດອມກັນ ໃຫ້ປັນກ່ອງຄວນແລ ຕັດຄໍາສັນນີ້ຊອບແລ ພະຍາກ່າວວ່າ, ຂາເອົາກັນນັ້ນຈັກວ່າຜິດກໍບໍ່ໄດ້ເຫດວ່າ ຜົວເກົ່າໄປຄ້າກໍຂ້າມເດືອນເປັນອັນມາກນັກບໍ່ມາ ເລົ່າໄດ້ຍິນຂ່າວສານວ່າ ຕາຍເສັຍແລ້ວວ່າດັ່ງນັ້ນແທ້ ຊາວບ້ານ ຊາວເມືອງກໍຮູ້ຊູ່ຄົນແທ້ ເມັຍມັນກໍແຕ່ງບຸນແຕ່ງທານຫາມັນແທ້ ຍາຕິກໍຮູ້ຊູ່ຄົນແທ້ແລ ຂາເອົາກັນນັ້ນຜູ້ເກົ້າຜູ້ແກ່ກໍຮູ້ຊູ່ຄົນ ຈັກວ່າຂາລັກເອົາກັນກໍບໍ່ໄດ້ແລ ຣອຍວ່າບຸນຂາໄດ້ສ້າງມານໍາກັນຫາກໝົດທີ່ນັ້ນແລ ດັ່ງປັນຂອງສັນນີ້ເຫດວ່າ ມັນໄດ້ສ້າງເຮືອນມາດອມກັນກໍຍາກດາຍ ຜິວ່າຜູ້ຍິງຮັກຜົວເກົ່າກໍໃຫ້ເອົາຜົວເກົ່າ ດັ່ງເກົ່ານັ້ນເທີ້ນ ໃຫ້ຜູ້ຍິງແຕ່ງສິນມາຜົວໃໝ່ເທີ້ນ ເງິນມີທໍ່ໃດໃຫ້ຄືນແກ່ຜົວໃໝ່ຕົນເສັຍເທີ້ນອັນວ່າຂອງອັນມັນຫາມາສູ່ເຮືອນນັ້ນ ກໍໃຫ້ຄືນຕົງສ້ອງແລ້ວໃຫ້ແຕ່ງຜ້າຜືນໜຶ່ງເສື້ອຜືນໜຶ່ງໃຫ້ແກ້ຜົວໃໝ່ (ສິນມາມັນ) ມັນເອົາກໍບໍ່ຜິດສັງແລ ຢ່າວ່າທີ້ແກ່ກັນເທີ້ນ ຄໍາອັນນັ້ນເປັນສັນນີ້ ຜູ້ມີພະຫຍາກໍເພິ່ງຮູ້ ຕັດສັນນີ້ ເປັນສຸຄະຕິແລ.

ຍັງມີພານຜູ້ໜຶ່ງ ຊື່ວ່າເວລູພານ ມັນເປັນນາຍພານເນື້ອແຫ່ງພະຍາເວສາລີແລ ຍັງມີວັນໜຶ່ງນັ້ນ ມັນກໍໄປໄດ້ໄຂ່ນົກທີ່ຝັ່ງນໍ້າສະໝຸດສອງໜ່ວຍງາມນັກ ມັນກໍເອົາມາກວາຍແກ່ພະຍາເວສາລີ ຕົນເປັນເຈົ້າແຫ່ງມັນທັ້ນແລ ພະຍາກໍຖາມມັນວ່າ ໄຂ່ສອງໜ່ວຍນີ້ງາມນັກ ຈັກວ່າມີຊື່ດັ່ງລືຈາ ພານຂານວ່າ ໄຂ່ອັນນີ້ ຊື່ວ່າໄຂ່ນົກນໍ້າສະໝຸດແລ ພະຍາຖາມວ່າມຶງ ຍັງເຄີຍຮູ້ເຄີຍເຫັນແດ່ລື ພານຂານວ່າ ຂ້າບໍ່ເຄີຍຮູ້ເຄີຍເຫັນສັກເທື່ອແລ ຂ້າກໍຫລອນໄດ້ເທື່ອດຽວນີ້ແລມາກວາຍແກ່ມະຫາຣາຊະເຈົ້າແລ ພະຍາກ່າວວ່າ ໄຂ່ສອງໜ່ວຍນີ້ງາມນັກ ຈັກວ່າໜ່ວຍໃດໜ່ວຍແມ່ຈາ ໜ່ວຍໃດອອກມາກ່ອນຈາ ໜ່ວຍໃດອອກມາລຸນຈາ ພານຂານວ່າ ຄວນຖາມໄທບ້ານ ອັນຢູ່ຂ້າງສະໝຸດນັ້ນແລ ເຂົາຫາກເຄີຍຮູ້ເຄີຍເຫັນດາຍ ພະຍາກໍໃຫ້ໄປຖາມດູທັ້ນແລ ເຂົາກໍບອກຊູ່ປະການທັ້ນແລ ພະຍາຮູ້ແຈ້ງຈຶ່ງກ່າວວ່າໄຂ່ອັນບໍ່ທ່ອນມີ ແລະມາມີ ບໍ່ທ່ອນໄດ້ ແລະມາໄດ້ສັນນີ້ ບໍ່ຄວນໄວ້ແລ ດີທີ່ເອົາໄປເປັນບັນຫາສ່ຽງທວາຍພະຍາມູລະຕົນໄຕຄວນແລ ກ່າວດັ່ງນີ້ແລ້ວ ພະຍາກໍໃຊ້ໃຫ້ໄປສ່ຽງທວາຍດ້ວຍຄໍາວ່າ ໄຂ່ສອງໜ່ວຍນີ້ ມີຊື່ວ່າໄຂ່ນົກໄດ້ແຕ່ຝັ່ງນໍ້າສະໝຸດມາມີແຕ່ສອງໜ່ວຍ ສອງໜ່ວຍນີ້ແຕ່ງມາເປັນບັນຫາແລ ຜິວ່າພະຍາເຈົ້າວ່າໄຂ່ໜ່ວຍນີ້ຕົວຜູ້ ໜ່ວຍນີ້ເປັນຕົວແມ່ ໜ່ວຍນີ້ອອກມາກ່ອນໜ່ວຍນີ້ອອກມາລຸນດັ່ງນີ້ແທ້ ຈັກບູຊາຄໍາແສນໜຶ່ງ ວ່າດັ່ງນີ້ແລ້ວກໍໃຊ້ໄປທັ້ນແລ ຄັນວ່າຄົນໃຊ້ໄປຣອດແລ້ວກ່າວກິດຈະຄໍາທັງມວນໂດຍດັ່ງພະຍາສັ່ງຊູ່ປະການ ແກ່ພະຍາມູລະຕົນໄຕທັ້ນແລ ພະຍາໄດ້ຍິນແລ້ວກໍຖາມເສນາອາມາດທັງຫລາຍດູທັ້ນແລ ເສນາທັງຫລາຍຂານວ່າ ຕູຂ້າທັງຫລາຍບໍ່ອາດຈັກຮູ້ສັກຄົນແລ ພະຍາກ່າວວ່າ ໄຂ່ສອງໜ່ວຍນີ້ເຂົາເອົາມາເປັນບັນຫາແກ່ກູ ໄຂ່ອັນເປັນສັນນີ້ກໍບໍ່ທ່ອນມີ

แล แต่ງມາເປັນບັນຫາ ກໍດູຄອບເລິກແລບພໍໄດ້ຄຶດໄດ້ອ່າວແທ້ດີຫລີແລ ບຸກຄະລະຜູ້ຫາພະຫຍາບໍ່ໄດ້ດັ່ງນັ້ນ ກໍບໍ່ອາດຈັກຮູ້ໄດ້ແລ ທີ່ນັ້ນພະຍາກໍຕັດສະຣູ້ໃນໃຈແຈ້ງນັກ ເປັນດັ່ງເຄີຍຮູ້ເຄີຍເຫັນນັ້ນແລ ວັນລຸນພະຍາກໍໃຫ້ຊູມນຸມມາຍັງຄົນທັງຫລາຍ ກັບທັງຄົນໃຊ້ນັ້ນມາຮາຊະຄ່ອງຫລວງແທ່ງຄົນເພື່ອວ່າຈັກແກ້ບັນຫາອັນນັ້ນ ພະຍາກໍຄະນຶງໃນໃຈວ່າ ບັນຫາສັນນີ້ ບໍ່ຫ່ອນມີສັກເທື່ອແລ ເມື່ອກູຈັກແກ້ເປົ່າດາຍເຫດອັນບໍ່ມີສັກຂີນັ້ນບໍ່ຄອນແລ ເພິ່ງກູໃຫ້ມີສັກຂີອັນໃດອັນໜຶ່ງຈິ່ງຄອນແລ ຄະນຶງດັ່ງນີ້ແລ້ວຈິ່ງໄຫວ້ເທວະດາອັນຮັກສານ້ຳສະໝຸດນັ້ນວ່າດັ່ງນີ້ ດູລາເທວະດາເຈົ້າທັງຫລາຍ ບັດນີ້ຂ້າຈັກທວາຍໄຂ່ນົກນ້ຳສະໝຸດສອງໜ່ວຍນີ້ ອັນພະຍາເອສາລີຫາກໃຊ້ໃຫ້ມາເປັນບັນຫາສ່ລາມາທວາຍຂ້ານີ້ ດັ່ງໄຂ່ສອງໜ່ວຍນີ້ ກໍປາກົດແຕ່ນ້ຳສະໝຸດແລ ຜີຂ້າທວາຍຂອບ ເທວະດາເຈົ້າຈິ່ງໃຫ້ສັກຂີອັນໃດອັນໜຶ່ງແກ່ຂ້າຢ່າໃຫ້ມີຄຳສິນເໜແກ່ຄົນທັງຫລາຍເທີ້ນ ກ່າວດັ່ງນີ້ແລ້ວຈິ່ງກ່າວເຊິ່ງຄົນໃຊ້ວ່າ ລ້ຳໄຂ່ສອງໜ່ວຍນີ້ ໜ່ວຍມັນກໍລາງແລໃສງາມ ແລະມີລາຍອັນຫ່າງນີ້ອອກກ່ອນແລຈັກເປັນຕົວຜູ້ແລ ໜ່ວຍກ້ອນສອງນີ້ຫມິ່ນບໍ່ມີລາຍທີ່ກໍລວໄປມານີ້ ອອກລຸນຈັກເປັນຕົວແມ່ບໍ່ສິງໄສແລເມື່ອນັ້ນຄົນໃຊ້ຈິ່ງໄຫວ້ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ລ້ຳໄຂ່ສອງໜ່ວຍນີ້ ກໍງາມສະເຫມີກັນດີຫລີແລ ເຫດດັ່ງລີມະຫາຣາຊະເຈົ້າແລ ຮູ້ວ່າ ໜ່ວຍນີ້ອອກກ່ອນເປັນຕົວຜູ້ ໜ່ວຍນີ້ອອກລຸນຈັກເປັນຕົວແມ່ແລ ວ່າດັ່ງນີ້ ດ້ວຍເຫດສັນໃດ ກໍຂ້າຈາ ຂໍມະຫາຣາຊະເຈົ້າ ຈົ່ງໄຂຍັງຣາຊະກິດຈະອັນນີ້ ໃຫ້ແຈ້ງແກ່ຕູຂ້າທັງຫລາຍແດ່ເທີ້ນ ພະຍາກ່າວວ່າສູຫາກມາທວາຍກູດາຍພອຍເລົ່າມາຖາມກູສັ່ງຈາ ຄົນໃຊ້ກ່າວວ່າ ພະຍາເຈົ້າຝູງຂ້າທັງຫລາຍຫາກຮູ້ດ້ວຍຕົນເຈົ້າແລ ຝູງຂ້າທັງຫລາຍບໍ່ຮູ້ສັກຄົນແລ ທີ່ນີ້ຝູງຂ້າທັງຫລາຍຂໍຮູ້ຍ້ອນບຸນຍະສິມພານແຫ່ງມະຫາຣາຊະເຈົ້າແລ ພະຍາກ່າວວ່າ ຜີທ່ານທັງຫລາຍໄຄ່ຮູ້ດັ່ງນັ້ນ ກໍຈັກກ່າວໃຫ້ຮູ້ນຳແລ ວ່າດັ່ງນີ້ແລ້ວຈິ່ງກ່າວວ່າ ດູລາຄົນໃຊ້ ຊາຕິໄຂ່ອັນໃດກໍດີ ໜ່ວຍອັນອອກກ່ອນນັ້ນຫລມຍ່ອມກໍລາງ ແລະໃສເຫດວ່າຮູຫວານແມ່ມັນແຄບ ບໍ່ທັນກວາກເທື່ອ ຈິ່ງກໍລາງແລະໃສເພື່ອດັ່ງນັ້ນແລ ໄຂ່ໜ່ວຍອອກລຸນນັ້ນ ມັນຫມິ່ນບໍ່ກໍລາງບໍ່ໃສ ເຫດວ່າຮູຫວານຕົວແມ່ມັນກວ້າງເຫດດັ່ງນັ້ນ ມັນຈິ່ງບໍ່ກໍລາງບໍ່ໃສເພື່ອດັ່ງນັ້ນແລ ໄຂ່ໜ່ວຍມີລາຍອັນຫ່າງນັ້ນ ຈັກເປັນຕົວຜູ້ແລ ເຫດວ່າຊາຕິຜູ້ຊາຍຄົນກໍດີສັດກໍດີ ຕົວຜູ້ນັ້ນຫລມຍ່ອມມີວິຕົກບໍ່ແຮງມີໃຈອັນຫ່າງບໍ່ກີ່ ໂລພະຕັນຫາບໍ່ແຮງແລ ໜ່ວຍກ້ອນສອງນີ້ ມີລາຍອັນກີ່ເປັນຕົວແມ່ຊາຕິຕົວແມ່ນີ້ ຄົນກໍດີ ຫລມຍ່ອມມີປົກກະຕິໃຈກີ່ ໂລພະຕັນຫາກໍມາກກວ່າຜູ້ຊາຍແລ ອັນນີ້ຫາກເປັນນິດໄສແຫ່ງເຂົາແຕ່ທຳມະດາມາແລ ພະຍາກ່າວແກ້ບັນຫາອັນນີ້ຂອບວິໄສແຫ່ງໂລກດັ່ງນີ້ ເທວະດາກໍຜາຍດອກສະໝຸດລົງມາຊ້ອງໜ້າຄົນໃຊ້ທັ້ນແລ ຄົນໃຊ້ເຫັນແລ້ວ ກໍອັດສະຈັນມາກນັກເຂົາກໍຮູ້ກິດຈະແຫ່ງໄຂ່ນັ້ນແລ້ວ ກໍໄຫວ້ພະຍາສັ່ງອຳລາແລ້ວກໍຄືນເມືອສູ່ເມືອງແຫ່ງເຂົາແລ້ວ ກໍເມືອບອກເລົ່າແກ່ພະຍາເອສາລີ ຊູ່ປະການໂດຍດັ່ງພະຍາມູລະຕັນໄຕ ຫາກແກ້ນັ້ນແລ ພະຍາເອສາລີໄດ້ຍິນແລ້ວ ກໍຍິນດີມາກນັກ ກໍໃຊ້ໃຫ້ເອົາຄຳແສນໜຶ່ງໄປບູຊາ ພະຍາມູລະຕັນໄຕທັ້ນແລ ກ່າວບັນຫາໄຂ່ນົກນ້ຳສະໝຸດ ກໍແລ້ວທີ່ນີ້ແລ.

ທ້າວພະຍາປະເທສະຣາດ ເມືອງໃຫຍ່ ເມືອງນ້ອຍທັງຫລາຍກໍຫລມຍ່ອມແປງບັນຫາອັນໃຫຍ່ອັນນ້ອຍ ອັນເລິກອັນແລບ ອັນໜັກອັນເບົາມາສ່ລາງພະຍາມູລະຕັນໄຕຍະຣາດຕົນດລວຊູ່

ເມືອງ ບໍ່ຫລິສັກເມືອງ ບໍ່ຮາມສັກເມືອງມີແລ ກໍບໍ່ລະບອນແລ້ວແລ.

ບັດນີ້ ພະຍາມູລະຕັນໄຕ ຈັກແປງບັນຫາອັນໃຫຍ່ ອັນນ້ອຍ ອັນເລິກອັນແລບ ເປັນສັນ
ເປັນລໍາ ເປັນຮາກ ຝັງລຶງເລິກ ອັນປາກົດໃນຫີບທັງມວນໄປສົ່ງທ້າວພະຍາທັງຫລາຍຕອບ
ທັ້ນແລ ເມື່ອນັ້ນພະຍາມູລະຕັນໄຕກ່າວວ່າ ທ້າວພະຍາທັງຫລາຍໃນປະເທດເມືອງໃຫຍ່ເມືອງ
ນ້ອຍທັງຫລາຍ ກໍຫລົບຍ່ອມແປງບັນຫາມາສົ່ງມາທວາຍກູ ທຸກປີທຸກເດືອນສັນນີ້ ກູກໍແກ້ໄດ້ຊູ່ປະ
ການແທ້ດີຫລີແລ ບັດນີ້ ກູເພິ່ງແປງບັນຫາໄປຕອບເຂົາຄອນແລ ວ່າດັ່ງນີ້ແລ້ວຈິ່ງໃຫ້ຊ່າງຄໍາຫລໍ່
ຄໍານັ້ນໃຫ້ເປັນແທ່ງອັນຫນຶ່ງເປັນສີ່ຫລ່ຽມ ລວງສູງແປດຄືບປາຍສີ່ນິ້ວ ມື ເລົ່າຊໍ້າໃຫ້ຕີແທ່ງຄໍາອັນ
ນ້ອຍເຈັດແທ່ງ ກະທໍາໃຫ້ເປັນສີ່ຫລ່ຽມລວງສູງຄືບປາຍນິ້ວມື ຊໍ້າເລົ່າໃຫ້ຕີຄໍາເປັນແຜ່ນໃຫ້ກະ
ທໍາເປັນຮູບອູບມູງສີ່ຫລັງ ແລ້ວກໍໃຫ້ໄປເປັນບັນຫາສົ່ງທວາຍເຈົ້າພະຍາຊູ່ເມືອງດ້ວຍຄໍາສັ່ງວ່າ
ດັ່ງນີ້ ອັນວ່າວັດຖຸສິບສອງປະການນີ້ຈັກວ່າດັ່ງລືຈາ ໃຫ້ແກ້ມາດູເທີ້ນ ຜີວ່າທ້າວພະຍາທັງຫລາຍ
ຍັງອາດແກ້ໄດ້ແທ້ ເທວະດາກໍໃຫ້ສັກຂີແທ້ ດັ່ງເຮົາແກ້ເປດສະໜາບັນຫາອັນທ້າວພະຍາຫາກ
ໃຊ້ມານັ້ນແທ້ ດັ່ງບັນຫາສາມປະການນີ້ ລໍ້າຊັ້ນຟ້າຄືວ່າຈາຕູມລຶງມາຮອດແຜ່ນດິນນີ້ ກໍທໍ່ມີເຂົາ
ສາມປະການນີ້ແລ ປາກົດຮຸ່ງເຮືອງແກ່ຄົນທັງຫລາຍແລ ເທວະດາທັງຫລາຍມວນທົ່ວຊຸມພູທີບນີ້ແລ
ຜີສູເຈົ້າທັງຫລາຍບໍ່ຮູ້ແທ້ ກູຈັກກໍາຈັດບ້ານເມືອງສູທັງຫລາຍເສັຍຊູ່ເມືອງແລ ສັ່ງສັນນີ້ແລ້ວ ກໍໃຊ້
ໃຫ້ໄປຊູ່ເມືອງກໍມີທັ້ນແລ ຄັນວ່າຄົນໃຊ້ໄປຮອດບ້ານເມືອງທັງຫລາຍທຸກແຫ່ງ ແລ້ວເຂົາກໍກ່າວກິດ
ຈະທັງຫລາຍມວນໂດຍດັ່ງພະຍາມູລະຕັນໄຕຮາດຫາກສັ່ງເຂົາໄປນັ້ນແກ່ທ້າວພະຍາທັງຫລາຍ ຊູ່
ບ້ານຊູ່ເມືອງທັ້ນແລ ເມື່ອນັ້ນ ທ້າວພະຍາທັງຫລາຍເຫັນບັນຫາຝູງນັ້ນ ກໍບໍ່ອາດຈັກແກ້ໄດ້ສັກ
ເມືອງແລ ບັນຫາທັງຫລາຍຝູງນັ້ນ ກໍຢູ່ໃນເມືອງເຂົານານໄດ້ເຈັດປີປາຍເຈັດເດືອນປາຍເຈັດວັນ
ກໍບໍ່ອາດຈັກແກ້ໄດ້ສັກເທື່ອທັ້ນແລ ເຂົາກໍລວດຢ້ານສະທ້ານຕົກໃຈກົວຊູ່ເມືອງແລ ຄົນທັງຫລາຍ
ເຂົາກໍບັງເກີດອຶດຢາກເຂົ້າຂະໜອດທອດຫວິມາກນັກ ເຫດວ່າກົວໄພແຫ່ງພະຍາມູລະຕັນໄຕມາກ
ນັກແລ ເມື່ອນັ້ນທ້າວພະຍາທັງຫລາຍກໍບໍ່ອາດຈັກທະລົງຕົນຢູ່ ຈິ່ງໃຊ້ຂ່າວສານໄປເກິງຊູ່ເມືອງວ່າ
ດັ່ງນີ້ ດູລາເຈົ້າທັງຫລາຍ ບັນຫາອັນເຮົາໃຊ້ໄປທວາຍພະຍາມູລະຕັນໄຕ ພະຍາກໍແກ້ໄດ້ຊູ່ປະ
ການແລ ບັດນີ້ພະຍາກໍແປງບັນຫາມາສົ່ງເຮົາທິດລວ ເຮົາກໍເອົາໄວ້ໄດ້ເຈັດປີປາຍເຈັດເດືອນ
ປາຍເຈັດວັນແລ້ວ ກໍບໍ່ອາດຈັກແກ້ໄດ້ສັກຄົນແລ ເຮົາບໍ່ອາດຈັກຢູ່ໄດ້ແທ້ແລ ເຮົາເພິ່ງແຕ່ງບັນນາ
ການ ແລະ ເຄື່ອງຣາຊາພິເສກພະຍາມູລະຕັນໄຕຍະຣາດ ໃຫ້ເປັນເອກຣາດແກ່ເຮົາຄອນແລ
ບໍ່ດັ່ງນັ້ນມັນຈັກມາຍໍ່າຍີບ້ານເມືອງແຫ່ງເຮົາ ໃຫ້ວິນາດຈິບຫາຍເສັຍບໍ່ຢ່າຊະແລ ທ້າວພະຍາ
ທັງຫລາຍກໍພ້ອມກັນຊູ່ບ້ານຊູ່ເມືອງແລ້ວ ກໍແຕ່ງບັນນາການທັງຫລາຍ ແລະເມືອງລະແສນຄໍາ
ກັບທັງເຄື່ອງຣາຊາພິເສກກັບນາງກຸມາຣີ ແລະ ເມືອງລະຄົນ ກໍຫລົບຍ່ອມປະດັບດ້ວຍເຄື່ອງ
ເງິນຄໍາແກ້ວແຫວນຊູ່ປະການ ແລະ ສິ່ງແລະພັນຊູ່ເມືອງ ຄັນວ່າເຂົາແຕ່ງບໍລະບອນແລ້ວກໍນໍາໄປ
ສູ່ເມືອງພາຫາລະນະຄອນ ຄັນວ່າ ທ້າວພະຍາທັງຫລາຍໄປເກິງເມືອງແລ້ວ ກໍຕັ້ງຢູ່ທີ່ບໍ່ໄກພາ
ຫາລະນະຄອນທີ່ໃດ ແລ້ວກໍໃຊ້ຂ່າວສານອັນມາແຫ່ງເຂົານັ້ນໄປບອກແກ່ພະຍາມູລະຕັນໄຕວ່າ ຈັກ
ມາອະພິເສກທິດສິງໃຫ້ເປັນເອກຣາດນັ້ນໃຫ້ແຈ້ງແລ້ວ ເຂົາຈິ່ງໄປສູ່ເມືອງພາຫາລະນະຄອນທັ້ນ

ແລ ເຂົາກໍກະທຳໃຫ້ແວດລ້ອມອ້ອມດ້ວຍຂ່າຍແກ້ວມຸກດາຊູ່ປະການ ຍັງເມືອງພາຫາລະນະຄອນທັງມວນ ໃຫ້ງາມສະເຫມີດັ່ງເມືອງຟ້ານັ້ນແລ້ວ ພໍເມື່ອນັກຂັດຕະຣິກງາມຍາມດີແລ້ວ ເຂົາກໍອະພິເສກເຈົ້າພະຍາມູລະຕັນໄຕໃຫ້ເປັນເອກຣາດ ເປັນໃຫຍ່ແກ່ເຂົາທັງມວນທັ້ນແລ ເຂົາກໍກວາຍບັນນະການທັງຫລາຍ ເປັນຕົ້ນວ່າລູກຍິງ ແລະເມືອງແລະນາງ ຄຳແລະເມືອງແລະແສນ ກວາຍແກ່ພະຍາມູລະຕັນໄຕທັ້ນແລ ເຂົາກໍເສບດ້ວຍຕຸຣິຍະນົນຕີທັງຫລາຍສາທຸການມາກນັກ ເປັນປະດຸດຈະດັ່ງແຜ່ນດິນຈັກຂວ້ຳ ສະໜັ່ນກ້ອງຂຶ້ນເມືອອາກາດກາງຫາວ ທັງມວນທັ້ນແລ ຍາມນັ້ນເທວະດາທັງຫລາຍຝູງຢູ່ອາກາດທັງມວນ ກໍພາຍເຂົ້າຕອກດອກໄມ້ທິບລົງມາເປັນກ້ອງແກວບູຊາພະຍາທີ່ວອາກາດກາງຫາວທັງມວນຄົນທັງຫລາຍກໍຫລິ້ນມະໂຫລະສົບເຈັດວັນເຈັດຄືນແລ້ວ ທ້າວພະຍາທັງຫລາຍ ກໍເວນຍັງຣາຊະສົມປັດຕິບ້ານເມືອງ ແຫ່ງຕົນທັງມວນກວາຍແກ່ພະຍາມູລະຕັນໄຕດ້ວຍຄຳວ່າ ຕັ້ງແຮກແຕ່ນີ້ເມືອໜ້າ ມະຫາຣາຊະເຈົ້າ ຈິ່ງຮູ້ສະພາວະແຫ່ງມະຫາຣາຊະເຈົ້າ ອັນເປັນເອກຣາດແກ່ຝູງຂ້າທັງຫລາຍເທີ້ນ ທ້າວພະຍາທັງຫລາຍກໍຢູ່ໃນເມືອງພາຫາຣະນະຄອນທີ່ນັ້ນ ສອງເຈັດເດືອນ ແລ້ວເຂົາຈິ່ງພ້ອມກັນເມືອຂາບໄຫວ້ສັ່ງອຳລາກໍຈິ່ງກາມຫາຍັງກິດຈະແຫ່ງບັນຫາອັນນັ້ນວ່າ ຂ້າແກ່ມະຫາຣາຊະເຈົ້າ ສວນດັ່ງບັນຫາອັນມະຫາຣາຊະເຈົ້າ ຫາກໃຊ້ໄປແກ່ຝູງຂ້າທັງຫລາຍນັ້ນ ຝູງຂ້າທັງຫລາຍກໍບໍ່ຮູ້ສັກຄົນແລ ທີ່ນີ້ຂໍແກ່ມະຫາຣາຊະເຈົ້າ ຈິ່ງກ່າວກິດຈະອັນນັ້ນໃຫ້ແຈ້ງແກ່ຝູງຂ້າທັງຫລາຍແດ່ເທີ້ນ ເມື່ອນັ້ນ ພະຍາມູລະຕັນໄຕ ກ່າວວ່າ ດູລາທ້າວພະຍາທັງຫລາຍ ອັນວ່າວັດຖຸທັງຫລາຍສິບສອງປະການນີ້ ເປັນບັນຫາສາມອັນລ້ອງລັບນັກແລ ເຮົາຈັກກ່າວໃຫ້ແຈ້ງແກ່ເຈົ້າທັງຫລາຍແທ້ແລ ລ້ຳຊັ້ນຟ້າຈາຕູມມະຫາຣາຊິກາລົງມາແຜ່ນດິນນີ້ ກໍມີແຕ່ສາມອັນນີ້ແລ ແຫ່ງຄຳອັນໃຫຍ່ ແລະ ປະກອບໄປດ້ວຍຫລ່ອມສີ່ອັນ ສູງແປດຄືບປາຍສີ່ນິ້ວມືນີ້ ກໍຄືວ່າເຂົາສິເນໂລຣາດ ອັນສູງໄດ້ແປດໝື່ນສີ່ພັນໂຍຊະນະນັ້ນອັນວ່າແຫ່ງຄຳ ອັນນ້ອຍເຈັດອັນນັ້ນ ຄືເຂົາປະຣິວານເຈັດອັນນັ້ນແລ ຮູບອູບມຸງສີ່ຫລັງຄືທີບທັງສີ່ນັ້ນແລ ເຫດດັ່ງນັ້ນຈິ່ງກ່າວວ່າ ລ້ຳຊັ້ນຟ້າຈາຕູມມະຫາຣາຊິກາລົງມາເກິງແຜ່ນດິນນີ້ ກໍປາກົດແຕ່ເຂົາໝູ່ນີ້ແລ ຍາມນັ້ນເທວະດາອິນທາພົມມາທັງຫລາຍ ອັນໄດ້ຍິນຄຳພະຍາມູລະຕັນໄຕ ກ່າວແກ້ບັນຫາສາມອັນນັ້ນ ກໍຍິນດີມາກນັກ ກໍໃຫ້ຫ່າຝົນທິບຕົກລົງມາໃນຂະນະບັດດອວນັ້ນ ຊຸ່ມເຢັນແກ່ຄົນທັງຫລາຍ ແລ້ວກໍກັບຫາຍໄປບັດດອວນັ້ນແລ ເມື່ອນັ້ນ ພະຍາມູລະຕັນໄຕ ໄດ້ຍົດສັກອັນລືຊາປາກົດຊື່ວ່າ ເອກຣາຊະມູລະຕັນໄຕຍະຣາດນັ້ນ ກໍເພື່ອຜະຫຍາ ແລະ ເມື່ອໄດ້ເປັນເອກຣາດ ເປັນໃຫຍ່ແກ່ທ້າວພະຍາທັງຫລາຍແລ້ວກໍກ່າວວ່າ ດູລາທ້າວພະຍາທັງຫລາຍ ຕັ້ງແຕ່ນີ້ເມືອໜ້າ ເຈົ້າທັງຫລາຍ ຈິ່ງສະເຫວີຍຣາຊະສົມປັດຕິບ້ານເມືອງແຫ່ງຕົນຊູ່ເມືອງເທີ້ນ ຢ່າໄດ້ບອດບອູນແກ່ກັນຈິ່ງຮັກສາເສນາອາມາດຣາຊະມຸນຕີ ຄະຫະປະດີ ແລະ ໄພ່ຟ້າຂ້າໄທແຫ່ງຕົນສູ່ເມືອງເທີ້ນ ຊາຕິທ້າວພະຍານີ້ ມີບຸນຍະສົມພານຫາກໄດ້ທອມທັບນັບມາມາກນັກ ແຕ່ພາຍຫລັງພູ້ນ ຈິ່ງໄດ້ມາເປັນທ້າວພະຍາມະຫາກະສັດບັດນີ້ດາຍ ເຫດດັ່ງນັ້ນ ເພິ່ງຮັກສາໄພ່ໄທທັງຫລາຍ ອັນເຂົ້າມາໃນອານາຈັກແຫ່ງຕົນນັ້ນໃຫ້ດີເທີ້ນ ເມືອງໃດແລ ຮັກສາໄພ່ໄທໄດ້ດັ່ງນັ້ນ ກໍຫາກຈັກເປັນກຳລັງບ້ານເມືອງແຫ່ງຕົນແລ ຊາຕິທ້າວພະຍາຮັກສາໄພ່ໄທຕົນໃຫ້ດີ ໃຫ້ເປັນດັ່ງທວາຍຈາມມະລີ ຮັກສາຫາງມັນນັ້ນເທີ້ນ ຄັນວ່າຮັກສາໄດ້ຫາກຈັກວຸດທິສະຫວັດສະດີແກ່ບ້ານເມືອງແຫ່ງຕົນແລ ເມື່ອນັ້ນ

ທ້າວພະຍາໄດ້ຍິນແລ້ວ ກໍຍິນດີມາກນັກ ຈິ່ງຖາມຫາຍັງກິດຈະອັນຫວາຍຈາມມະລີ ຮັກສາຫາງມັນນັ້ນ ເຊິ່ງພະຍາມູລະຕັນໄຕເອກຮາດວ່າ ຂ້າແກ່ມະຫາຣາຊະເຈົ້າ ຄົນເປັນໃຫຍ່ແກ່ຄົນທັງຫລາຍຄົນທັງຫລາຍກໍຫອນຍ່ອມຈາກັນວ່າ ເປັນດັ່ງຫວາຍຈາມມະລີຮັກສາຫາງມັນດີຫລີແລ ຄົນທັງຫລາຍຫອນຍ່ອມກ່າວດັ່ງນີ້ແລ ທີ່ແທ້ເຄົ້າແຫ່ງຫວາຍຈາມມະລີຮັກສາຫາງມັນນັ້ນ ໃຜບໍ່ຮູ້ສັກຄົນແລ ທີ່ແທ້ຝູງຂ້າທັງຫລາຍຢາກຮູ້ ຂໍມະຫາຣາຊະເຈົ້າຈິ່ງກ່າວຍັງກິດຈະຄຳອັນນັ້ນ ໃຫ້ແຈ້ງແກ່ຝູງຂ້າທັງຫລາຍແດ່ເທີ້ນ ເມື່ອນັ້ນພະຍາເອກຮາດມູລະຕັນໄຕມຸນີ ຈິ່ງກ່າວວ່າ ດູລາທ້າວພະຍາທັງຫລາຍອັນວ່າຕຳນານນິທານ ຫວາຍຈາມມະລີຮັກສາຫາງມັນນັ້ນ ອາຈານເຈົ້າທັງຫລາຍແຕ່ກ່ອນ ກ່າວສືບງມາເທົ່າກາລະບັດນີ້ ກໍເປັນອັນກວ້າງຂວາງນັກດາຍ ຜີວ່າທ້າວພະຍາທັງຫລາຍຍັງໄດ້ຮູ້ດັ່ງນັ້ນ ເຮົາກໍຈັກກ່າວໃຫ້ແຈ້ງແກ່ທ້າວພະຍາທັງຫລາຍແລ ວ່າດັ່ງນີ້ແລ້ວ ຈິ່ງກ່າວວ່າ ດູລາເຈົ້າທັງຫລາຍ ສ່ວນຕຳນານນິທານອັນນີ້ ອາຈານເຈົ້າແຕ່ກ່ອນກ່າວສືບງມາ ເຮົາເພິ່ງຮູ້ດັ່ງນີ້ ແຕ່ປະຖົມມະກັບທີວທີອັນນັ້ນ ຍາມນັ້ນພິມຫາກແຮກເກີດເປັນສັດ ເປັນຄົນວັນນັ້ນ ເມື່ອນັ້ນ ຍັງມີເກາະອັນໜຶ່ງໃຫຍ່ແລະກວ້າງຍາວໄດ້ໂຍຊະນະເປັນທີ່ຢູ່ແຫ່ງສັດຕົວນ້ອຍຕົວໃຫຍ່ທັງມວນແລ ເກາະອັນນັ້ນກໍປາກົດຊື່ວ່າ ສັບພະອາກາສະເກາະແລ ເມື່ອນັ້ນສັດທັງຫລາຍທັງມວນຝູງ ຢູ່ໃນເຂດເກາະນັ້ນຫອນຍ່ອມຕະເດີນໄປຄວ່າຫາເຫຍື່ອອາຫານຈີໄຈວັງ ໄດ້ກິນກໍເປັນອັນຍິນຍາກມນັກແລ ຍາມນັ້ນຫວາຍຈາມມະລີກໍຂໍພອນແຫ່ງພິມວ່າ ຂ້າແກ່ມະຫາພິມເຈົ້າ ຂ້າກໍຂໍພອນເຊິ່ງເຈົ້າກູບັດນີ້ ແຮກແຕ່ນີ້ເມືອໜ້າຂ້ານີ້ ຂໍຈິ່ງໃຫ້ປະກອບໄປດ້ວຍຫາງອັນໃຫຍ່ ແລະ ຍາວແລະພວງງາມ ມີເສັ້ນຫາງກໍໃຫ້ແລບກລອງອ່ອນ ແລະ ຢອດດີນັກ ເມື່ອໃດຂ້າໄປຄວ່າຫາກິນໃຫ້ໄດ້ງ່າຍເມື່ອນັ້ນ ມະຫາພິມຈິ່ງກູນາມັນ ຈິ່ງໃຫ້ພອນແກ່ຫວາຍຈາມມະລີວ່າ ແຮກແຕ່ນີ້ເມືອໜ້າ ຜີມຶງຮັກສາຫາງມຶງໄດ້ແທ້ຈິ່ງໃຫ້ມຶງມີຫາງອັນໃຫຍ່ແລະພວງງາມນັກ ແລະ ແລບອ່ອນຢອດດີນັກເທີ້ນ ເມື່ອໃດຫາງມຶງແລະລະງອກອອກມາດັ່ງນັ້ນ ມຶງໄປຄວ່າຫາກິນຈິ່ງໃຫ້ອີ່ມອາຫານ ຢູ່ສໍາຣານປະໝານໄດ້ເຈັດວັນເທີ້ນ ຜີມຶງຮັກສາຫາງບໍ່ໄດ້ ໃຫ້ຂາດເສັຍແລະເສັ້ນດັ່ງນັ້ນ ໃຫ້ມຶງຢາກອາຫານ ປະໝານສາມວັນປະການໜຶ່ງຫາງມຶງໄປຫລົ່ນເທື່ອໜຶ່ງຮັກສາບໍ່ໄດ້ ແລະໃຫ້ຫລົ່ນເສັຍດັ່ງນັ້ນ ໃຫ້ມຶງຢາກອາຫານເຈັດວັນເທີ້ນ ຜີມຶງຮັກສາຫາງມຶງໄດ້ຊູ່ເສັ້ນ ຈິ່ງໃຫ້ມຶງບໍລະບວນ ດ້ວຍອາຫານຊູ່ອັນເທີ້ນ ມຶງໄປຫາກິນຈິ່ງໃຫ້ອີ່ມຊູ່ວັນເທີ້ນ ວ່າດັ່ງນີ້ແລ ເມື່ອນັ້ນຫວາຍຈາມມະລີກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ຂ້າກໍອາດເພື່ອຈັກຮັກສາໄດ້ ກໍຈິ່ງມາຂໍພອນເຊິ່ງເຈົ້າກູແລ ແຕ່ນັ້ນໄປພາຍໜ້າ ຄັນວ່າມັນຮັກສາຫາງມັນໄດ້ ບໍ່ໃຫ້ຂາດດັ່ງນັ້ນ ມັນໄປຫາກິນກໍດີ ບໍ່ໄປກໍດີ ກໍຫາກອີ່ມຢູ່ສັຽງເຈັດວັນ ຜີມັນຮັກສາຫາງມັນບໍ່ໄດ້ ມັນກໍຢາກອາຫານສັຽງເຈັດວັນແລ ເຫດແລມີດັ່ງນັ້ນ ມັນຈິ່ງກະທຳພອນຮັກສາຫາງມັນບໍ່ໃຫ້ຂາດເສັຍແລ ເສັ້ນໜຶ່ງກໍບໍ່ຫ່ອນມີ ອັນນີ້ເປັນຕຳນານນິທານຈາມມະລີຮັກສາຫາງມັນແລ ເມື່ອນັ້ນທ້າວພະຍາທັງຫລາຍໄດ້ຮູ້ກິດຈະແຫ່ງຫວາຍຈາມມະລີຮັກສາຫາງມັນດັ່ງນັ້ນແລ້ວ ກໍຍິນດີມາກນັກ ຈິ່ງບູຊາພະຍາຕັນໄຕເອກຮາດ ແລະເມືອງແລະພັນຄຳແລ້ວກໍສັ່ງອຳລາພະຍາ ແລ້ວກໍຄືນເມືອສູ່ເມືອງແຫ່ງຕົນທຸກຄົນແລ ແຮກແຕ່ນີ້ເມືອໜ້າ ທ້າວພະຍາກໍຢູ່ສະເຫວີຍຣາຊະສົມປັດຕິບ້ານເມືອງແຫ່ງຕົນຊູ່ຄົນຊູ່ຄົນແລ ເມື່ອນັ້ນ ນັກປາດທັງຫລາຍ ກໍສົນທະນາກັນວ່າດູລານັກປາດທັງຫລາຍ ສ່ວນວ່າພະຍາມູລະຕັນໄຕຍະຣາດນີ້ນາ ທ່ານກໍຍັງໜຸ່ມຍັງນ້ອຍນັກແລ

ມາເປັນພະຍາໃຫຍ່ກວ່າທ້າວພະຍາທັງຫລາຍ ໄດ້ຊື່ວ່າເອກຣາດມູລະຕັນໄຕນີ້ ຈັກວ່າໄດ້ເພື່ອອັນໃດຈາວ່າດັ່ງນີ້ ອາຈານເຈົ້າລາງພ່ອງກ່າວວ່າ ອັນໄດ້ເປັນພະຍາຕົນໃຫຍ່ນີ້ ກໍດ້ວຍເຫດບຸນຍະສົມພານແຕ່ຫລັງມາດາຍ ອາຈານເຈົ້າລາງພ່ອງກ່າວວ່າ ອັນໄດ້ເປັນພະຍາໃຫຍ່ກວ່າທ້າວພະຍາທັງຫລາຍຊູ່ເມືອງນີ້ ອັນວ່າບຸນຍະສົມພານແຕ່ຫລັງມານັ້ນ ແມ່ນວ່າມີກໍບໍ່ປາກົດແລ ພະຍາເຈົ້າຕົນນີ້ເຮົາກໍຮູ້ວ່າ ປາກົດດ້ວຍປະຫຍາສິ່ງດຽວແລ ອັນໄດ້ເປັນເອກຣາດນີ້ກໍເຫດປະຫຍາແລ ນັກປາດທັງຫລາຍມີຄໍາສົນທະນາຈາກັນດັ່ງນີ້ແລ ແຕ່ນີ້ເມືອໜ້າພະຍາມູລະຕັນໄຕເອກຣາດ ກໍຈໍາເຣີນສະເຫວີຍສໍາປັດຕິ ເປັນພະຍາໃຫຍ່ກວ່າທ່ານທັງຫລາຍ ໂດຍສຸຂະສໍາຣານແຫ່ງຕົນ ໂດຍໄນຍະດັ່ງກ່າວມານີ້ແລ ກ່າວທວາຍທະສະບັນທາ ກໍແລ້ວທໍ່ນີ້ແລ.

ທີ່ນີ້ ຈັກກ່າວຕໍານານ ອັນພະຍາມູລະຕັນໄຕ ຈັກຂ້າຫມໍຫູຣາແລ ນິຍາຍມີສັນນີ້ ຍັງມີວັນຫນຶ່ງນັ້ນ ພະຍາມູລະຕັນໄຕຄະນຶງໃຈວ່າ ບ້ານເມືອງແຫ່ງອາດຕະມານອນນີ້ ຈັກເປັນສັນໃດຈາພະຍາຈຶ່ງໃຫ້ຫມໍຫູຣາມາທວາຍດູເຄາະ ແລະ ໂຊກແຫ່ງຄົນທັງມວນ ຈັກມີເຄາະລືຮູ້ວ່າຈັກມີໂຊກຈາ ວ່າດັ່ງນີ້ ທີ່ນັ້ນຫມໍຫູຣາ ກໍທວາຍຕາມເດືອນຕາມວັນຊູ່ອັນແຫ່ງພະຍາ ມັນເຫັນນັກຂັດຕະຣິກເດືອນ ພະຍາອັນມີໂຊກ ມັນຈຶ່ງທວາຍວ່າຂ້າແກ່ມະຫາຣາຊະເຈົ້າ ແຮກແຕ່ນີ້ເມືອໜ້າ ເຖິງເຈັດວັນ ລາບພະອັນໃຫຍ່ຈັກເກີດມີແກ່ມະຫາຣາຊະເຈົ້າແລ ວ່າດັ່ງນີ້ແລ ພະຍາກໍຍິນດີນັກກໍໃຫ້ນາຍຫນັງສືກົດໄວ້ຕາມຄໍາຫັ້ນແລ ແຮກແຕ່ນັ້ນໄປໜ້າເຖິງເຈັດວັນ ງົວອຸສຸພະຣາດຕົວເປັນມັງຄະລະກໍຕາຍເສັຍແກ່ພະຍາຫັ້ນແລ ເມື່ອນັ້ນຂ່າວສານອັນນັ້ນ ກໍໄປເຖິງພະຍາທັງຫລາຍຮ້ອຍເອັດເມືອງຫັ້ນແລ ພະຍາຮ້ອຍເອັດເມືອງ ກໍແຕ່ງຍັງງົວອຸສຸພະຣາດ ຕົວເປັນມັງຄະລະ ແລະ ເມືອງແລະ ຕົວເປັນຮ້ອຍເອັດຕົວມາກວາຍແກ່ພະຍາຫັ້ນແລ ແຕ່ນັ້ນໄປພາຍໜ້າບໍ່ນານທໍ່ໃດ ພະຍາພັດໃຫ້ຫມໍຫູຣາທວາຍດ້ວຍຄໍາວ່າ ດູລາຫມໍຫູຣາແຮກແຕ່ນີ້ເມືອໜ້າຊາຕາເຮົາພະອົງຈັກເປັນດັ່ງລືຈາຫມໍຫູຣາວ່າລໍ້າເຈັດວັນເມືອໜ້າ ໂຊກອັນໃຫຍ່ຈັກເກີດມີແກ່ມະຫາຣາຊະເຈົ້າແລ ວ່າດັ່ງນີ້ແລ້ວພະຍາກໍໃຫ້ກົດເອົາຄໍາທວາຍອັນນັ້ນໄວ້ແລ ແຮກແຕ່ນັ້ນໄປໜ້າ ເຖິງວັນອັນຫມໍຫູຣາທວາຍນັ້ນມ້າມັງຄະລະພະຍາກໍຕາຍເສັຍຫັ້ນແລ ຂ່າວສານອັນນັ້ນ ກໍໄປເຖິງພະຍາຮ້ອຍເອັດເມືອງຫັ້ນແລທ້າວພະຍາກໍແຕ່ງມ້າອາຊາໄນ ຕົວເປັນມັງຄະລະເປັນຮ້ອຍເອັດຕົວ ມາກວາຍແກ່ພະຍາມູລະຕັນໄຕຫັ້ນແລ ເມື່ອພາຍລຸນ ພະຍາກໍໃຫ້ຫມໍຫູຣາມາທວາຍເລົ່າແລ ຫມໍຫູຣາກໍຫລິງດູນັກຂັດຕະຣິກພະຍາ ມັນກໍເຫັນໃນກະບວນຊາຕາດີນັກມັນຈຶ່ງທວາຍວ່າ ແຮກແຕ່ນີ້ເມືອໜ້າຮອດວັນກ້ອນເຈັດລາບພະອັນໃຫຍ່ ອັນເປັນຂອງມັງຄະລະ ຈັກເກີດມີແກ່ມະຫາຣາຊະເຈົ້າແລ ຢູ່ບໍ່ນານທໍ່ໃດເຖິງວັນກ້ອນເຈັດ ຊ້າງມັງຄະລະພະຍາກໍຕາຍເສັຍແລ ຂ່າວສານອັນນັ້ນ ກໍໄປເຖິງພະຍາຮ້ອຍເອັດເມືອງ ກໍແຕ່ງຊ້າງມັງຄະລະຮ້ອຍເອັດຕົວມາກວາຍແກ່ພະຍາມູລະຕັນໄຕພະຍາໄດ້ຊ້າງຮ້ອຍເອັດຕົວນັ້ນແລ້ວກໍມີໃຈຍິນດີມາກນັກແລ ພະຍາກໍຄະນຶງໃຈວ່າຫມໍຫູຣາອາດຕະມານີ້ ທວາຍຊາຕາອາດຕະມາວ່າ ຈັກໄດ້ລາບພະວ່າດັ່ງນັ້ນ ກໍດູຫລາກແທ້ນໍ ແຮກແຕ່ນີ້ເມືອໜ້າ ເຖິງເຈັດວັນຂອງອາດຕະມາ ອັນເປັນມັງຄະລະກໍເລົ່າຕາຍເສັຍຊູ່ທີ ຈັກເປັນສັນໃດແກ່ອາດຕະມາເມືອໜ້ານີ້ຈາວ່າດັ່ງນີ້ແລ ຢູ່ບໍ່ນານທໍ່ໃດພະຍາກໍ່ໃຫ້ທັນມາແລ້ວກ່າວວ່າ ຫມໍຫູຣາ ເມື່ອກ່ອນມຶງທວາຍກູວ່າຈັກໄດ້ລາບ

ພະ ອັນໃຫຍ່ວ່າດັ່ງນັ້ນ ຄືວ່າເກີງວັນມຶງຜັດນັ້ນ ຂອງກູອັນເປັນມັງຄະລະກໍເລົ່າຕາຍເສັຍຊູ່ທີແທ້
ດີຫລີແລ ເຫື່ອນີ້ມຶງຈິ່ງດູຣີກກັບເກນເມືອງເຂົ້າກັນເທີ້ນ ເມື່ອນັ້ນຫມໍຫູຮາ ກໍເອົາຊາຕາເມືອງ
ແລະ ຊາຕາພະຍາກັບທັງເກນມາຊູ່ອັນ ດັ່ງພະຍາກ່າວດັ່ງນີ້ແລ້ວ ມັນກໍທວາຍວ່າ ຂ້າແກ່ມະຫາ
ຣາຊະເຈົ້າລັກຄະນາ ແລະ ເກນບ້ານເມືອງຍັງບານງາມນັກ ແລະ ຊາຕາມະຫາຣາຊະເຈົ້າ ກໍ
ຍັງບານງາມນັກແລ ຊາຕາເມືອງ ແລະ ຊາຕາມະຫາຣາຊະເຈົ້າ ກໍສະເຫມີກັນ ໂຊກໃຫຍ່ຫໍ
ຈັກມີແກ່ມະຫາຣາຊະເຈົ້າແລ ຈັກເກີດມີໃນວັນກ້ອນເຈັດນັ້ນແລ ລ້ຳນັ້ນໄປຫນ້າ ເມືອງທັງມວນ
ກໍຈັກຕື່ນອຸກຄະຫລູກດ້ວຍມະໂຫລະສົບມາກນັກແລ ເມື່ອນັ້ນພະຍາກໍໃຫ້ກົດຄຳຫມໍຫູຮາທວາຍນັ້ນໄວ້
ທັ້ນແລ ແຮກແຕ່ນັ້ນໄປເກີງເຈັດວັນ ນາງຣາຊະເທວີພະຍາກໍຕາຍເສັຍທັ້ນແລ ເມື່ອນັ້ນຂ່າວສານ
ກໍເຣື້ອງລືໄປເກີງພະຍາຮ້ອຍເອັດເມືອງ ເອກະສະຕະ ຣາຊາໂນ ອັນວ່າທ້າວພະຍາທັງຫລາຍ
ຮ້ອຍເອັດເມືອງກໍຂໍາເຂືອກເບືອກຕື່ນອິນລະທີນມາກນັກ ດ້ວຍຄຳວ່າ ນາງພະຍາແຫ່ງເຮົາກໍຕາຍ
ເສັຍແລ້ວວ່າດັ່ງນັ້ນ ທ້າວພະຍາທັງຫລາຍຮ້ອຍເອັດເມືອງ ກໍແຕ່ງຣາຊກຸມາຣີທັງຫລາຍ ຝູງເປັນ
ເຊື້ອທ້າວພະຍານັ້ນ ແລະເມືອງແລະຮ້ອຍເອັດນາງກັບທັງຊ້າງມ້າ ແລະງົວຄວາຍ ອຸສຸພະຣາດ
ແລະເມືອງແລະຮ້ອຍເອັດຕົວ ກັບທັງຄຳແລະເມືອງລະແສນ ເຂົາກໍນຳມາຖວາຍແກ່ພະຍາ
ແລ້ວກໍອຸບພິເສກຍັງລູກຍິງ ລູກສາວໃຫ້ເປັນນາງພະຍາມູລະຕັນໄຕຍະຣາດ ແລ້ວກໍກະທຳມັງຄະ
ລະບາສີຕາບຕໍ່ເທົ້າເກີງເຈັດວັນແລ້ວ ຣາຊາໂນ ອັນວ່າທ້າວພະຍາທັງຫລາຍ ອາປຸດສິຕະວາ ກໍ
ສັ່ງອຳລາພະຍາມູລະຕັນໄຕແລ້ວ ກໍເມືອສູ່ເມືອງແຫ່ງຕົນກໍມີແລ ອະກະຕະທາ ໃນກາລະເມື່ອນັ້ນ
ພູມີປາໂລ ອັນວ່າພະຍາຕົນເປັນເຈົ້າແຜ່ນດິນ ອັນປາກົດຊື່ວ່າ ມູລະຕັນໄຕຣາດ ລະພິຕະວາໄດ້
ແລ້ວນາຣີໂຍ ຍັງນາງທັງຫລາຍດັ່ງນັ້ນ ກໍມີໃຈຊົມຊື່ນຍິນດີແລ້ວ ຈິນເຕສີພະຍາກໍຄຶດຄະນຶງໃນໃຈ
ວ່າອະຫັງ ອັນວ່າອາດຕະມານີ້ ກໍໄດ້ເປັນພະຍາກວ່າທ້າວພະຍາທັງຫລາຍແທ້ແລ ທໍ່ວ່າຫາລູກຍິງ
ຊາຍ ອັນຈະສືບເຊື້ອຊາດວົງສາບໍ່ໄດ້ ສ່ວນວ່າຣາຊະສີສິນບັດທັງມວນ ກໍຈັກຈິບຫາຍເສັຍສັ້ງແທ້
ແລ ດັ່ງລືກູຈັກໄດ້ຜູ້ມີຜະຫຍາອັນປະເສີດຍິ່ງກວ່າຄົນທັງຫລາຍ ອັນຈັກສືບເຊື້ອຊາດວົງສາ ເມແກ່
ກູນີ້ຈາ ວ່າດັ່ງນັ້ນແລ້ວ ພະຍາມັກໄຄ່ຮູ້ປະຫຍາແຫ່ງຄົນທັງຫລາຍຈິ່ງຈັກລອງດູເພື່ອໃຫ້ຮູ້ຈິ່ງໃຫ້ຊຸມ
ນຸມມາຍັງເສນາອາມາດ ນັກປາດປະໂຣຫິດທັງຫລາຍວ່າ ດູລາເສນາອາມາດນັກປາດທັງຫລາຍ
ໂຍປຸຄຄະໂລ ອັນວ່າບຸກຄະລະຜູ້ໃດ ອັນຈັກຄວນສືບເຊື້ອຊາດວົງສາ ມີປະຫຍາອັນປະເສີດ ແລະ
ຈັກອາດສາມາດຕັດຄຳຫມໍຫູຮາຜູ້ນີ້ໄດ້ ເຮົາຫາກຈັກຮູ້ປະຫຍາແຫ່ງເຂົາຊະແລ ວ່າອັນ ຣາຊາ
ອັນວ່າພະຍາຈິ່ງໃຫ້ທັນມາຍັງຫມໍຫູຮາຜູ້ນັ້ນ ປຸຣະໂຕ ແຕ່ຊ້ອງຫນ້າເສນາອາມາດ ອຸບປະຣາດ
ນັກປາດປະໂຣຫິດທັງຫລາຍ ອັນມາປະຊຸມນຸມກັນໃນຣາຊະວັງຫລວງ ຕັສສະ ຮັນໂຍ ແຫ່ງພະຍາ
ຕົນນັ້ນ ອາຫະ ພະຍາກໍກ່າວວ່າ ດູລາຫມໍຫູຮາ ມຶງກິນເຂົ້າຂອງສຳປັດຕິໃນໂຮງແຫ່ງກູກໍມາກນັກ
ດາຍມຶງທວາຍຫູຮາຊາຕາກູທີ່ຫນຶ່ງວ່າ ຈັກໄດ້ລາບພະອັນໃຫຍ່ປະເສີດນັກ ຄ້ອນວ່າເກີງເຈັດວັນ
ອັນມຶງຜັດ ງົວອຸສຸພະຣາດກູ ຕົວເປັນມັງຄະລະກໍຕາຍເສັຍມຶງຊໍ້າທວາຍທີ່ຫນຶ່ງວ່າ ເຈັດວັນເມືອ
ຫນ້ານີ້ລາບພະອັນໃຫຍ່ຈັກເກີດມີວ່າດັ່ງນັ້ນ ມ້າອາຊາໄນກູກໍຕາຍເສັຍ ມຶງທວາຍກູທີຫນຶ່ງ ຊ້າງກູ
ຕົວເປັນມັງຄະລະກໍຕາຍເສັຍ ມຶງທວາຍກູທີຫນຶ່ງ ນາງເທວີກູກໍຕາຍເສັຍ ສະເຫມີດັ່ງເສັຍເມືອງ
ເກິ່ງຫນຶ່ງແລ ມຶງທວາຍບໍ່ຊອບສັກອັນ ດັ່ງກູໄດ້ວັດກຸເຂົ້າຂອງສິນບັດທັງຫລາຍຝູງນີ້ ທ້າວພະຍາ

ທັງຫລາຍເຂົາເອົາມາຮັບຂວັນກູດາຍ ຕັສມາ ເຫດດັ່ງນັ້ນມຶງທວາຍຜິດໂທດຈັກເກີງເຊິ່ງອັນຄວນຂ້າເສັຍແລ ວ່າດັ່ງນັ້ນຣາຊາອັນວ່າພະຍາ ກໍບັງຄັບໃຫ້ເອົາຫມໍຫູຣາໄປໃສ່ຄອກຂັງ ຄັນວ່າວັນກ້ອນເຈັດເມື່ອໃດຈັກຂ້າເສັຍແລ ກ່າວດັ່ງນັ້ນຊ້ອງຫນ້າເສນາອາມາດອຸບປະຣາດນັກປາດປະໂຣຫິດທັງຫລາຍຫັ້ນແລ ພູມິນໂທ ອັນວ່າພະຍາຕົນເປັນເຈົ້າແຜ່ນດິນ ອາຫະ ຈິ່ງກ່າວວ່າ ໂພ ດູລາເສນາອາມາດທັງຫລາຍ ສ່ວນກູວ່າຫມໍຫູຣາຜູ້ນີ້ທວາຍຜິດກູຈັກຂ້າເສັຍ ເພື່ອດັ່ງນັ້ນກູວ່າມັນທວາຍຜິດ ກູຈັກຂ້າເສັຍຕາມໂທດ ກໍຫາຄວາມຕິຕອບບໍ່ໄດ້ ຜີວ່າມັນທວາຍບໍ່ຜິດ ກູຂ້າມັນເສັຍຄືນກໍຈັກນິນທາຕິຕອບກູຊະແລ ຕຸມເຫ ອັນວ່າສູທ່ານທັງຫລາຍ ຈິ່ງພິຈາລະນາດູໃຫ້ແຈ້ງໃນວັນກ້ອນເຈັດກູຈັກຂ້າເສັຍຊະແລ ຜີວ່າສູທ່ານທັງຫລາຍວ່າມັນມີໂທດແທ້ດັ່ງນັ້ນ ອະຫັງ ອັນວ່າກູ ທະເຣຍຍະກໍຈັກຂ້າເສັຍ ຕັງທິວະສັງ ໃນວັນກ້ອນເຈັດນັ້ນຊະແລ ວ່າດັ່ງນັ້ນ ອາມັຈຈາ ສ່ວນດັ່ງເສນາອາມາດທັງຫລາຍ ສັນນິປາຕິງສຸ ກໍໄປປະຊຸມນຸມກັນ ວິນິສສະເຍໃນກວ້ານທີ່ພິຈາລະນາກ້ອຍຄຳແລ້ວກໍພິຈາລະນາດູກ້ອນເຈັດວັນ ອັນຈັກປາກົດວ່າຫມໍຫູຣາບໍ່ມີໂທດ ນະອະລັງ ກໍບໍ່ຄວນຄາເຕຕຸງເພື່ອຈັກຂ້າເສັຍວ່າດັ່ງນັ້ນກໍດີ ອັນຫນຶ່ງກໍຫາສັກຂີບໍ່ໄດ້ ບໍ່ມີທີ່ຊີ້ຫລອນ ອັນຈັກຍົກມັນອອກຈາກໂພຍໄພອັນຕາຍ ອັນພະຍາຈັກຂ້າເສັຍນັ້ນ ນະທິສສັນຕິ ກໍບໍ່ປາກົດເຫັນມາ ຍາວະສັດຕາຫັງ ຕາບຕໍ່ເທົ້າສັອງເຈັດວັນ ເຂົາຈິ່ງກ່າວເຊິ່ງກັນວ່າ ອິມັງວະຈະນັງ ອັນວ່າກ້ອຍຄຳອັນນີ້ ອັມເຫທິ ອັນເຮົາທັງຫລາຍ ທິສສະຕິ ກໍເຫັນ ສັທທິງ ກັບ ຈັກຂຸນາ ດ້ວຍຕາ ອັມຫາກັງ ແຫ່ງເຮົາທັງຫລາຍແທ້ດີຫລີແລ ມະຍັງ ອັນວ່າເຮົາທັງຫລາຍຈະກ່າວວ່າຫມໍຫູຣາຜູ້ນີ້ ນະໂທສັງ ຫາໂທດບໍ່ໄດ້ພະຍາເຈົ້າພອຍວ່າຈັກຂ້າເສັຍ ນະອະລັງ ອັນບໍ່ຄວນຂ້າຜິດແທ້ດາຍວ່າດັ່ງນັ້ນ ກໍບໍ່ວ່າໄດ້ວ່າທ່ານທວາຍແກ່ພະຍາວ່າ ຈັກໄດ້ລາບພະອັນໃຫຍ່ວ່າດັ່ງນັ້ນ ພອຍເລົ່າເສັຍຂອງມັງຄະລະເລົ່າແລເມື່ອນັ້ນອຸບປະຣາດກ່າວວ່າດູລາເຈົ້າທັງຫລາຍ ໂທໂສ ອັນວ່າໂທດ ຕສັສະ ແຫ່ງຫມໍຫູຣາຜູ້ນັ້ນ ທິສສະຕິ ກໍປາກົດເຫັນມາແທ້ແລ ຄຸໂນ ອັນວ່າຄຸນ ອັສສະ ແຫ່ງຫມໍຫູຣາ ນະປາກະໂຕ ກໍບໍ່ປາກົດອັມຫາກັງແກ່ເຮົາທັງຫລາຍແລ ປຸພເພ ແມ່ນໃນກາລະເມື່ອກ່ອນມັນທາຍວ່າຈັກໄດ້ ລາພັງ ຍັງລາບພະອັນໃຫຍ່ ລະພິຕະວາ ກໍໄດ້ແທ້ແລ ບໍ່ຜິດສັກເທື່ອ ທີ່ນີ້ພະຍາເລົ່າວ່າມັນຜິດ ຄາເຕສີ ຈັກໃຫ້ຂ້າມັນເສັຍຫັ້ນແລ ອັມເຫທິ ອັນເຮົາທັງຫລາຍ ສິນທະເປສສາມະ ອັນຈັກຕັດ ອິມັງວະຈະນັງ ຍັງຄຳອັນນີ້ກໍຍັງຫ້າງໄວ້ ສັຕຕາຫັງ ໄດ້ເຈັດວັນ ມີສັນນີ້ຈັກຕັດກໍອາດໄດ້ ພະຍາເຈົ້າຈັກວ່າດີກໍບໍ່ຮູ້ ວ່າຮ້າຍກໍບໍ່ຮູ້ຈັກໃສ່ທັນດະກຳອັນໃດອັນຫນຶ່ງ ກໍ່ບໍ່ຮູ້ດາຍ ກ່າວດັ່ງນີ້ແລ້ວ ອັດຖະເມທິວະເສ ໃນເມື່ອວັນກ້ອນແປດ ສັມປັຕເຕ ແລມາເກີງ ສະຕິ ແລມີດັ່ງນັ້ນ ອາມັຈຈາ ອັນວ່າອາມາດທັງຫລາຍຝູງນັ້ນຄັດສັນຕິ ກໍໄປ ສັນນິປັຕຕິງ ສູ່ອັນຊຸມນຸມກັນໃນໂຮງຫລວງ ຮັ້ນໂຍ ແຫ່ງພະຍາແລ້ວ ວັນທິຕະວາ ກໍໄຫວ້ຣາຊັງເຊິ່ງພະຍາວ່າ ເທວະຂ້າໄຫວ້ມະຫາຣາຊະເຈົ້າຝູງຂ້າທັງຫລາຍ ກໍພິຈາລະນາຫາທີ່ອັນຈັກຕັດຄຳຫມໍຫູຣາຜູ້ນີ້ແລ ຊັກສາກສີ (ສັກຂີ) ມາແທບມາຫລອນ ກໍຫາບໍ່ໄດ້ສັກແຫ່ງແທ້ນາຝູງຂ້າທັງຫລາຍ ໄຫວ້ມະຫາຣາຊະເຈົ້າດັ່ງນີ້ ເມື່ອນັ້ນພະຍາກໍຄະນຶງໃນໃຈວ່າ ອິເມອາມຈັຈາອັນວ່າເສນາທັງຫລາຍແຫ່ງກູຝູງນີ້ ຕັດຄຳອັນນີ້ບໍ່ໄດ້ດັ່ງນັ້ນ ຕາງຂ້າເສຍ ຮູ້ວ່າຢ່າຂ້າດີຈາວ່າອັນປຸນະເມື່ອພາຍລຸນ ຈິ່ງຄະນຶງໃນໃຈວ່າ ອະຍັງໂທໂສ ອັນວ່າໂທດແຫ່ງຫມໍຫູຣາຜູ້ນີ້ ນະອະລັງ ກູຈັກຂ້າແທ້ແລ ທີ່ວ່າຈັກຮີບຂ້າດັ່ງນັ້ນ ອະລັງ ກໍໄປ່ຄວນແລ ພະຍາຈິ່ງໃຫ້ຕີກອງປ່າວ ໃນເມືອງ

ເກີງເຈັດວັນກໍຫາຄົນຜູ້ຈັກຕັດບໍ່ໄດ້ສັກຄົນ ເມື່ອນັ້ນ ມະນຸສສາ ອັນວ່າຄົນທັງຫລາຍຝູງຢູ່ໃນເມືອງ
ທັງມອນເປັນຕົ້ນວ່າ ພໍ່ຄ້າ ແລະ ພາມທັງຫລາຍ ສຸຕະວາ ໄດ້ຍິນແລ້ວ ເຂົາຈິ່ງຈາກັນວ່າ ອະ
ໂຫ ໂອນໍ ອັດສະຈັນແທ້ນໍ ຄຳທີ່ນີ້ຄົນທັງເມືອງບໍ່ອາດຈັກນັບໄດ້ແລ ໃພບໍ່ອາດຈັກຕັດຄຳຫມໍຫູຣາ
ໄດ້ນໍ ເມື່ອໂພຍໄພອັນໄຫຍ່ໃນຂົງເມືອງທັງມອນ ຫມໍຫູຣາກໍຍັງປ້ອງໄດ້ນາ ໃນເມື່ອຫມໍຫູຣາຜິດ
ສັນນີ້ ຄົນທັງຫລາຍໃນເມືອງທັງມອນນີ້ ນະສັກຂິງສຸ ກໍບໍ່ອາດຈັກປ້ອງເອົາໄດ້ນີ້ຈາ ຄຳເບື້ອງນີ້
ປາກະໂຕກໍປາກົດທົ່ວທັງເມືອງທັ້ນແລ ອະກະໃນກາລະເມື່ອນັ້ນ ຣາຊາ ອັນວ່າພະຍາ ຈິນເຕສິ
ກໍຄະນຶງໃນໃຈວ່າ ອະຫັງ ອັນວ່າກູ ຄາເຕສສາມິ ພີແລໃຫ້ຂ້າ ອີມັງ ຍັງຫມໍຫູຣາຜູ້ນີ້ເສັຍ ສຸເຂ
ນະ ດ້ວຍງ່າຍມະນຸສສາ ອັນວ່າຄົນທັງຫລາຍ ວິຄຄະຫິງສຸ ກໍຈັກຕິຕອນນິນທາ ມັງ ຍັງກູວ່າຫມໍຫູ
ຣາບໍ່ຜິດ ພະຍາບໍ່ພິຈາລະນາດູກີ້ ພອຍຂ້າເສັຍດ້ວຍອຳນາດອາດຍາແຫ່ງທ້າວພະຍາແທ້ນໍ ເຂົາ
ຈັກກ່າວດັ່ງນັ້ນແກ່ກູແທ້ແລພະຍາຄະນຶງດັ່ງນີ້ແລ້ວ ສັຕຕະເມ ທິວະເສ ໃນເມື່ອວັນກ້ອນເຈັດ ສັມ
ປັຕເຕແລມາເກີງ ອະຕິກກັນເຕ ແລະກ້າວລ່ວງແລ້ວ ອັດກະເມ ທິວະເສ ໃນເມື່ອວັນກ້ອນແປດ
ແລມາເກີງດັ່ງນັ້ນຣາຊາອັນວ່າພະຍາພອຍບອກໃຫ້ເອົາຄຳພັນຫນຶ່ງໃສ່ທົວຊ້າງແລ້ວໃຫ້ຕີກອງປ່າວ
ອ້ອມປະຕູວຽງທັງສີ່ອອກໄປພາຍນອກ ແລະດ້ານແລໂຍຊະນະ ດ້ວຍຄຳວ່າບຸກຄະລະຜູ້ໃດອາດຈະ
ຕັດຄຳຫມໍຫູຣາຜູ້ນີ້ ວ່າມັນມີໂທດຄວນພະຍາຂ້າເສັຍແທ້ແລວ່າດັ່ງນັ້ນ ມັນຜູ້ນັ້ນກໍພ້ອມຄຳກູແລ ຜູ້
ໃດກ່າວວ່າໂທດມັນບໍ່ມີແລ ພະຍາຈັກຂ້າມັນຜິດດາຍ ຜູ້ໃດມັນຕັດຄຳດັ່ງນີ້ ກໍຊອບແທ້ ດ້ວຍທຳມະ
ດາ ອັນເທວະດາຫາກສຳແດງເຫດອັນໃດອັນຫນຶ່ງແທ້ ກູກໍເພິງງຶດມັນຜູ້ນັ້ນແທ້ແລ ຜິວ່າບຸກຄະລະ
ຜູ້ນັ້ນຕັ້ງຢູ່ໃນມັດຊິມະປານກາງ ກູຈັກຕັ້ງໄວ້ໃນທີ່ອັນເປັນເສນາໄຫຍ່ແລ ຜິວ່າເຖົ້າແກ່ດັ່ງນັ້ນ ກູ
ຈັກໃຫ້ຄຳພັນຫນຶ່ງບູຊາ ແລ້ວຈັກຕັ້ງໄວ້ໃນທີ່ອັນເປັນນາຍໄຫຍ່ ແກ່ນາຍສ່ວຍທັງຫລາຍແທ້ແລ
ຜິວ່າຍັງເປັນກຸມານນ້ອຍຫນຸ່ມ ກູຈັກໃຫ້ຕັ້ງໄວ້ໃນທີ່ອັນເປັນຣາຊະບຸດ ຊະແລເມື່ອນັ້ນຄົນທັງຫລາຍ
ຝູງເຂົາ ໄດ້ຍິນກອງປ່າວດັ່ງນັ້ນ ກໍບໍ່ປາກົດສັກຄົນທັ້ນແລ ເມື່ອນັ້ນພະຍາກໍໃຫ້ຕີກອງປ່າວ ເມື່ອ
ພາຍຊ້ອຍນັ້ນ ທີ່ນັ້ນຍັງມີພາມຜູ້ຫນຶ່ງ ຊື່ວ່າພຸລິມະພາມ ວະສິ ກໍຢູ່ ເອກະຄາເມ ໃນບ້ານອັນຫນຶ່ງ
ໂຄລິກະຄາໂມນາມະ ຊື່ວ່າໂຄລິກະຄາມ ໂສ ອັນວ່າພາມຜູ້ນັ້ນ ມີລູກຊາຍນ້ອຍຜູ້ຫນຶ່ງອາຍຸໄດ້
ເຈັດປີຍັງບໍ່ກ້ອນ ຊື່ວ່າ ອາມັຕຕະກຸມານ ຕັງທິວະສັງ ໃນວັນອັນນັ້ນ ໂສກຸມາໂຣ ອັນວ່າກຸມານຜູ້
ນັ້ນ ໄປຫລິ້ນຫມາກບ້າກັບດອມເດັກນ້ອຍທັງຫລາຍໃນຂ່ວງບ້ານອັນນັ້ນ ສຸຕະວາ ໄດ້ຍິນ ເພລິສັທ
ທັງ ຍັງສຽງກອງອັນຄົນທັງຫລາຍປ່າວມາຮອດບ້ານນັ້ນ ອາມັຕຕະກຸມາໂຣ ອັນວ່າອາມັດຕະກຸ
ມານ ຈິ່ງຈາກັບດ້ວຍເດັກນ້ອຍທັງຫລາຍອັນເປັນເພື່ອນຫລິ້ນຄູ່ກັນນັ້ນ ວ່າດັ່ງນີ້ ໂພນໂຕ ດູລາ
ເພື່ອນທັງຫລາຍ ຄຳອັນຫມໍຫູຣາທວາຍແກ່ພະຍາເຈົ້າວ່າກ້ອນເຈັດວັນນີ້ ພະຍາເຈົ້າຈັກໄດ້ລາບ
ພະອັນໄຫຍ່ແລ ວ່າດັ່ງນັ້ນ ຂອງອັນເປັນມັງຄະລະພະຍາເຈົ້າສີ່ຈຳພວກ ຄືວ່າ ງົວອຸສຸພະຣາດ
ແລະ ມ້າອາຊາໄນ ແລະ ຊ້າງມູງຄຸນ ພ້ອມດ້ວຍນາງພະຍາອັນເປັນມັງຄະລະກໍຕາຍເສັຍແທ້ທັ້ນ
ແລ ເມື່ອເປັນດັ່ງນັ້ນ ພະຍາເຈົ້າກ່າວວ່າຫມໍຫູຣາທວາຍຜິດ ຈັກຂ້າຫມໍຫູຣາເສັຍວ່າດັ່ງນັ້ນ ເສ
ນາອາມາດອຸບປະຣາດ ມັກປາດປະໂຣຫິດທັງຫລາຍ ກິງ ດັ່ງລິ ບໍ່ພິຈາລະນາຕັດໄດ້ນັ້ນຈາ ຜິວ່າ
ພະຍາເຈົ້າຂ້າຫມໍຫູຣາເສັຍດັ່ງນັ້ນ ບ້ານເມືອງທັງມອນຈັກເປັນອຸກຄະຫລຸກມີ້ນັ້ນມາກນັກ ບໍ່ສຸກກະ
ເສີມຊະແລ ໂພ ດູລາເພື່ອນທັງຫລາຍ ຜິວ່າເຮົາບໍ່ເປັນເດັກນ້ອຍສັນນີ້ ຍັງພໍເຮົາປາກຈາລະຈາ

ກັບດອມພະຍາໄດ້ ເປັນດັ່ງເສນາເຈົ້າທັງຫລາຍນັ້ນ ກໍບໍ່ຫລ້າງວ່າຈັກໃຫ້ເຄືອງໃຈພະຍາເຈົ້າຊະແລ ທາຣະກາ ອັນວ່າເດັກນ້ອຍທັງຫລາຍ ຝູງເປັນເພື່ອນຫລິ້ນກ່າວວ່າ ດູລາເຈົ້າກຸມານດັ່ງຄໍາພະຍາໃຫ້ຕີກອງປ່າວນັ້ນ ດັ່ງຈັກຣິມເພີງດູນີ້ ເປັນຄໍາອັນໃຫຍ່ແລະເລິກນັກແລ ຜີເສນາເຈົ້າທັງຫລາຍ ອັນທະລິງຣາຊະອາດຍາພະຍາເຈົ້າຈັກຕັດກໍບໍ່ໄດ້ດາຍ ຜີວ່າເຈົ້າຕັດດັ່ງນັ້ນ ກໍຍັງຈັກໄດ້ອັນຊະລື ກຸມານກ່າວວ່າ ດູລາເພື່ອນທັງຫລາຍ ຜີແລະມີດັ່ງນັ້ນ ພະຍາເຈົ້າໃຫ້ເຮົາປາກຕ້ານຈາລະຈາກັບດອມພະຍາແທ້ ເຮົາກໍອາດຈັກຕັດຄໍາອັນນັ້ນໄດ້ແລ ມະນຸສສາ ເມື່ອນັ້ນຄົນທັງຫລາຍກ່າວວ່າ ຄໍາອັນນັ້ນກໍເລິກນັກໃຜບໍ່ອາດຈັກຕັດໄດ້ສັກຄົນດີຫລີດາຍ ເປັນດັ່ງແມ່ນໍ້າໃຫຍ່ແລະ ເລິກກວ້າງນັກ ເດັກນ້ອຍທັງຫລາຍດັ່ງລີຈັກດໍາລົງໄດ້ນັ້ນຈາ ເມື່ອນັ້ນກຸມານກ່າວວ່າ ດູລາເພື່ອນທັງຫລາຍ ຄໍາອັນສູວ່ານັ້ນ ໂຫຕຸ ກໍຈິ່ງໄວ້ທັ້ນກ່ອນເທີ້ນ ທີ ດ້ວຍມີແທ້ເປັນດັ່ງພານນໍ້າພານບົກນັ້ນແລ ອັນວ່າພານນໍ້າຜູ້ແກ່ກໍດີ ຜູ້ຫນຸ່ມກໍດີຜູ້ນ້ອຍກໍດີ ຄັສສັນຕິ ແລໄປເພື່ອວ່າຈັກດໍາ ອຸທະກັງຍັງນໍ້າໃນທີ່ເລິກດັ່ງນັ້ນ ກໍອາດໄດ້ແລ ພານບົກແມ່ນວ່າເຖົ້າແກ່ກໍດີ ຫນຸ່ມກໍດີ ກໍຫາກດູດັ່ງເປັນທີ່ເລິກທີ່ໄກນັ້ນແລ ເມື່ອນັ້ນຄົນໃຊ້ພະຍາຝູງຕີກອງປ່າວນັ້ນ ສຸຕະວາ ໄດ້ຍິນແລ້ວ ຍັງຄໍາອາມັດຕະກຸມານຈາລະຈາເປັນອິງອາດນັກດັ່ງນັ້ນ ເຂົາກໍກົດຫມາຍຄໍາອັນນັ້ນ ເມືອກ່າວແກ່ພະຍາສູ່ອັນທັ້ນແລ ເມື່ອນັ້ນ ພະຍາກໍໃຫ້ໄປຫາມາຍັງອາມັດຕະກຸມານຜູ້ນັ້ນທັ້ນແລ ທູໂຕ ອັນວ່າຄົນໃຊ້ພະຍາຄັສສະຕິ ກໍໄປ ຄະຣັງ ສູ່ເຮືອນ ຕັສສະ ແຫ່ງພານຜູ້ເປັນພໍ່ແຫ່ງກຸມານນັ້ນ ອາໂຣເຈຣີ ກໍບອກເລົ່າກິຍາອາການອັນພະຍາຫາກສັ່ງນັ້ນແກ່ພານກໍມີແລ ໂສພຣາຫະມະໂນ ອັນວ່າ ພູລິມະພານຜູ້ເປັນພໍ່ກຸມານນັ້ນ ອາຫະ ກ່າວແກ່ຄົນໃຊ້ວ່າດູລາເຈົ້າທັງຫລາຍ ມະມະປຸຕໂຕ ອັນວ່າລູກແຫ່ງຂ້ານີ້ຊາໂຕ ແຕ່ເກີດມາ ສັຕຕະວສັສະ ກໍໄດ້ເຈັດປີ ຍັງໄປ່ກ້ວນເຈັດວັນເທື່ອນາ ຂໍໃຫ້ລູກຜູ້ຂ້າໄດ້ເຈັດປີກ່ອນ ຂ້າຫາກຈັກໃຫ້ໄປຊະແລ ວະຈະເນ ໃນເມື່ອກ້ອຍຄໍາ ວຸຕເຕ ອັນພູລິມະພານຫາກກ່າວເອວັງດັ່ງນີ້ ສະຕິ ແລມີດັ່ງນັ້ນ ມະນຸສສາ ອັນວ່າຄົນທັງຫລາຍຝູງເປັນຄົນໃຊ້ພະຍານັ້ນເຂົາກໍເມືອໄຫວ້ພະຍາຕາມຄໍາພານຊູ່ອັນທັ້ນແລ ເມື່ອນັ້ນພະຍາກ່າວວ່າ ພານຜູ້ນີ້ຮອຍວ່າມັນຍັງມີຜະຫຍາບໍ່ຢ່າຊະແລ ຮອຍທີ່ອະທິບາຍມັນວ່າ ລູກກູໄປພິຈາລະນາຄໍາດ່າຍພະຍາພອຍໃຫ້ມາເອົາເປົ່າດາຍສັນນີ້ກູບໍ່ໃຫ້ລູກກູໄປແລ ຮອຍທີ່ມັນວ່າສັນນີ້ແລ ພະຍາກໍອານັດໃຫ້ທ້າງຊ້າງຕົວຫນຶ່ງ ອາເນຕະວາ ກໍໃຫ້ໄປເອົາມາທັ້ນແລ ເມື່ອນັ້ນຄົນທັງຫລາຍ ກໍທ້າງຊ້າງຄາດຄອນດີແລ້ວ ອາເນຕະວາກໍນໍາໄປສູ່ເຮືອນພູລິມະພານນັ້ນແລ ໂສກຸມາໂຣ ອັນກຸມານຜູ້ນັ້ນ ອັນຄົນໃຊ້ພະຍາຫາກຣາດທະນາດັ່ງນັ້ນ ອາຣຸຍຫະ ກໍຂຶ້ນ ຫັຕກີຂັນເທ ເຫນືອຄໍຊ້າງ ນິກຂະມິຕະວາ ກໍອອກໄປ ຄາມະໂຕ ຈາກບ້ານແຫ່ງຄົນປາຍາສີ ກໍໄຕ່ໄປ ມັຄຄັງ ສູ່ຫົນທາງມີຫມູ່ຄົນທັງຫລາຍແວດລ້ອມອ້ອມເປັນປະຣິວານອາຄະມາສີ ກໍເຂົ້າເມືອສູ່ຄຸ້ມແຫ່ງພະຍາທັ້ນແລຄັນວ່າກຸມານມາຮອດປາສາດແຫ່ງພະຍາແລ້ວ ພະຍາກໍໃຫ້ແປງທີ່ນັ່ງໃນທີ່ອັນດີແລ້ວ ປຸດສີ ພະຍາຈິ່ງຖາມວ່າ ດູລາກຸມານທ່ານເປັນຜູ້ຊື່ດັ່ງລີຈາ ກຸມາໂຣ ເມື່ອນັ້ນບັ້ນເຈົ້າກຸມານ ອາຫະ ກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ຜູ້ຂ້າເປັນລູກພານຜູ້ຊື່ວ່າ ພູລິມະພານສ່ວນຕົວຜູ້ຂ້າມີຊື່ວ່າ ອາມັດຕະກຸມານແລ ພໍ່ຜູ້ຂ້າເປັນນາຍໃຫຍ່ແກ່ພານທັງຫລາຍໄດ້ຫ້າຮ້ອຍຄົນອັນຢູ່ໃນບ້ານອັນຊື່ວ່າໂຄລິກະຄາມແລ ເມື່ອນັ້ນ ພະຍາຄະນຶງໃນໃຈວ່າ ກຸມານຜູ້ນີ້ຍັງນ້ອຍນັກ ຍັງຈັກມີຜະຫຍາ ແລະຕັດຄໍາຫມໍ່ຫູຣານີ້ໄດ້ກໍຫາກຈັກຮູ້ດ້ວຍກິດຈະບັນຫາຊະແລ ອາດ

ຕະມາຈັກການດ້ວຍຊື່ກໍບໍ່ຮູ້ຜະຫຍາແລ ອາດຕະມາຈັກການດ້ວຍລ້ອງອກ່ອນເທີ້ນ ຜີມັນມີປະຫຍາແທ້ ຊານິສ-ສາມິ ກໍຫາກຈັກຮູ້ຊະແລ ພະຍາຈິ່ງການດ້ວຍບັນຫາວ່າ ດູລາກຸມານຍັງມີແຫວນວັດຊິນຣະດວງໜຶ່ງເປັນມັງຄະລະດີຫລີ ທີ່ນີ້ເລົ່າປາສະຈາກໄປທີ່ກ່ອຍ ປຸນະ ເມື່ອພາຍລຸນບຸກຄະລະຜູ້ໜຶ່ງພອຍເອົາມາໃຫ້ເປັນຂອງມັງຄະລະ ເລົ່າຍັງຈັກຕັ້ງໄວ້ທີ່ອັນເປັນມັງຄະລະດັ່ງເກົ່າດີລືຮູ້ວ່າບໍ່ດີນັ້ນຈາ ກຸມາໂຣ ເມື່ອນັ້ນ ອາມັດຕະກຸມານ ກໍຂານພະຍາວ່າຂ້າແກ່ມະຫາຣາຊະເຈົ້າ ຂອງອັນເປັນມັງ ຄະລະ ຄືວ່າແຫວນວັດຊິນດວງວິເສດນັ້ນ ຜີວ່າ ເຈົ້າຂອງຫາກຍ້າຍໄປທີ່ກ່ອຍ. ເມື່ອພາຍລຸນບຸກຄະລະຜູ້ໜຶ່ງຈິ່ງເອົາມາໃຫ້ເປັນມັງຄະລະດັ່ງນັ້ນ ຕັງທະນັງ ອັນວ່າຂອງອັນນັ້ນ ກໍຍັງເປັນມັງຄະລະດັ່ງເກົ່າດາຍ ຜີວ່າເຈົ້າຂອງບໍ່ຍ້າຍຂອງອັນເປັນມັງຄະລະຫາກຍ້າຍ ປາສະຈາກໜີເສັຍທີ່ອັນເປັນມັງຄະລະ ໄປສູ່ທີ່ກ່ອຍດັ່ງນັ້ນເມື່ອພາຍລຸນແມ່ນບຸກຄະລະຜູ້ໃດແລເອົາມາ ໃຫ້ເລົ່າດັ່ງນັ້ນຂອງອັນນັ້ນກໍບໍ່ເປັນມັງຄະລະ ດັ່ງເມື່ອກ່ອນແລ ເຫດວ່າເຂົ້າຂອງອັນເປັນມັງຄະລະ ຫາກຢູ່ໃນເຮືອນຕົນແລ້ວ ຫາກຜ່າຍໜີເສັຍຈາກທີ່ອັນເປັນມັງຄະລະຄືວ່າເຂົ້າຂອງຫາກຢູ່ ຫາກໜີເສັຍຕົນດັ່ງນັ້ນ ອັນຕະຣາໂຍ ອັນວ່າອິນຕາຍ ອັນບໍ່ດີ ພະວິສສະຕິ ກໍຈັກເກີດມີແກ່ເຈົ້າຂອງເຮືອນນັ້ນດາຍວ່າດັ່ງນັ້ນ ເມື່ອນັ້ນພະຍາຄະນຶງໃຈວ່າດັ່ງນີ້ ອະຍັງກຸມາໂຣ ອັນວ່າ ກຸມານຜູ້ນີ້ ທະຫະໂຣອັນຍັງໜຸ່ມນ້ອຍກໍມາຮູ້ບັນຫາ ອັນມີສະພາວະປານດັ່ງນີ້ ດັ່ງຄຳໝໍທູຣານີ້ ມັນພິຈາລະນາຕັດກໍຈັກໄດ້ຊະແລ ພະຍາຄະນຶງໃຈດັ່ງນີ້ແລ້ວ ຈິ່ງກ່າວກິດຈະທັງມວນ ອັນໝໍກູຣາທວາຍແກ່ຕົນນັ້ນແລ້ວພະຍາຈິ່ງກ່າວວ່າ ດູລາກຸມານຂອງໆເຮົາຜູ້ກະສັດອັນເປັນມັງຄະລະສີ່ຈຳພວກ ຄືວ່າ ງົວອຸສຸພະຣາດ ແລະ ມ້າອາຊາໄນ ແລະ ຊ້າງມັງຄະລະ ແລະ ນາງພະຍາ ອັນເປັນມັງຄະລະໃນເມືອງເຮົານີ້ ກໍຕາຍ ເຮົາວ່າມັນທວາຍຜິດ ເຮົາຈະຂ້າເສັຍເພື່ອດັ່ງນັ້ນແລ ດູລາກຸມານ ທ່ານຍັງອາດສາມັດກະ ເພື່ອຈັກຮູ້ເຫດອັນນັ້ນບໍຈາ ເມື່ອນັ້ນອາມັດຕະກຸມານຂານພະຍາວ່າຂ້າແກ່ມະຫາຣາຊະເຈົ້າ ກາຣະນາອັນວ່າເຫດສະພາວະອັນທັງມວນ ຊານາມິ ຜູ້ຂ້າກໍຮູ້ດ້ວຍປະຫຍາ ມັຍຫໍ ແກ່ຜູ້ຂ້າຊູ່ອັນກໍຂ້າແລ ໂຂປະນະ ດ້ວຍມີແທ້ ເທົ່າວ່າຜູ້ຂ້າຍັງຂໍໄຫວ້ມະຫາຣາຊະເຈົ້າ ອັນໜຶ່ງກ່ອນແລຍັງມີແຫວນຄຳທຳມະໂຣງລູກໜຶ່ງອັນເປັນມັງຄະລະວິເສດນັກ ບຸກຄະລະຜູ້ເປັນເຈົ້າແຫ່ງຂອງນັ້ນແລ ຈັກເອົາໄປໄວ້ສະການທີ່ບໍ່ຄວນດັ່ງນັ້ນ ເມື່ອນັ້ນ ແຫວນຄຳທຳມະໂຣງລູກນັ້ນ ກໍບໍ່ເສົາບໍ່ໝອງຍັງໃສຢູ່ປົກກະຕິດັ່ງເກົ່າ ເລົ່າຍັງມີບຸກຄະລະຜູ້ໜຶ່ງ ພອຍເອົາແຫວນຄຳທຳມະໂຣງລູກນັ້ນມາໃຫ້ແກ່ເຈົ້າຂອງດັ່ງນັ້ນ ເມື່ອນັ້ນບຸກຄະລະຜູ້ເປັນເຈົ້າຂອງຍັງຄວນເອົາໄວ້ດັ່ງລືນັ້ນຈາ ອາມັດຕະກຸມານ ການພະຍາດ້ວຍບັນຫາສັນນີ້ແລ ຣາຊາອັນວ່າພະຍາອາຫະ ກໍກ່າວວ່າ ກຸມາຣະ ດູລາກຸມານ ຊາຕິຂອງອັນເປັນມັງຄະລະປະເສີດມີແຕ່ກ່ອນແລ້ວ ປຸນະເມື່ອພາຍລຸນ ບຸກຄະລະຜູ້ເປັນເຈົ້າຂອງຫາກໄປໄວ້ທີ່ກ່ອຍດັ່ງນັ້ນ ບຸກຄະລະຜູ້ໃດແລເອົາມາໃຫ້ດັ່ງເກົ່າເລົ່ານັ້ນ ບໍ່ຫ່ອນມີສັກເທື່ອແລ ບຸກຄະລະຜູ້ໃດ ປັນຍະວາ ແລມີປະຫຍາ ອາເນຕະວາ ແລະ ນຳມາໃຫ້ໄດ້ດັ່ງນັ້ນ ຕັງທະນັງ ອັນວ່າເຂົ້າຂອງອັນນັ້ນ ກໍຫາກເປັນຂອງມັງຄະລະແຕ່ກ່ອນດາຍ ບຸກຄະລະຜູ້ໜຶ່ງ ສາມິໂກ ອັນເປັນເຈົ້າຂອງ ປະນິຕກາຕັພພັງ ກໍເພິງຕັ້ງໄວ້ດັ່ງເກົ່າບໍ່ເທົ່າແຕ່ຈັກຕັ້ງເປັນຂອງອັນເປັນມັງຄະລະນັ້ນໄວ້ທີ່ເກົ່າສິ່ງດອງເລີຍ ແມ່ນວ່າບຸກຄະລະຜູ້ນຳມາໃຫ້ນັ້ນ ກໍຈັກເພິງຕັ້ງໄວ້ໃນທີ່ອັນໃຫຍ່ກວ່າຄົນທັງຫລາຍດາຍ ທະນັງ ອັນວ່າເຂົ້າຂອງສຳປັດຕິ ເສດກາ ອັນປະເສີດ ອະລັງ ກໍ

ຄວນໃຫ້ເປັນໃຫຍ່ແກ່ເຂົ້າຂອງທັງຫລາຍຝູງນັ້ນແລ ຣາຊາເມື່ອນັ້ນພະກະສັດ ວັຕຕະວານະ ຄັນວ່າກ່າວແລ້ວມີປະຫມານທໍ່ນັ້ນ ອາຫະ ກໍກ່າວອັນຫມໍຫູຣາທວາຍຜິດນັ້ນວ່າ ກຸມາຣະກູລາອາມັດຕະກຸມມານນ້ອຍດັ່ງຫມໍຫູຣາທວາຍຜິດນັ້ນກຸມານຍັງຈັກຕັດໄດ້ອັນຊະລື ກຸມາໂຣ ເມື່ອນັ້ນກຸມມານ ອາຫະ ກໍຂານພະຍາວ່າ ຂ້າແຕ່ມະຫາຣາຊະເຈົ້າ ຜູ້ຂ້າກໍອາດສາມາດຈັກຕັດຄໍາອັນນັ້ນ ບໍ່ໃຫ້ເຄືອງໃຈມະຫາຣາຊະເຈົ້າແລ ເທົ່າວ່າຜູ້ຂ້າຈັກມີຄໍາໄຫວ້ມະຫາຣາຊະເຈົ້າເບື້ອງຫນຶ່ງກ່ອນແລ ຊະນິນທະ ຂ້າໄຫວ້ມະຫາຣາຊະເຈົ້າ ຜູ້ຂ້າຈັກອຸບປະມາປຽບທຽບໃຫ້ມະຫາຣາຊະເຈົ້າຟັງກ່ອນເທີ້ນ ຍະກາອຸບປະມາດັ່ງລືນັ້ນຈາ ແທ້ແລ ເອໂກເສໂລ ຍັງມີຫີນກ້ອນຫນຶ່ງຈົມຢູ່ໃນພື້ນສະຫມຸດທີ່ເລິກນັກປາດເຈົ້າທັງຫລາຍຝູງເປັນເສນາກັບດ້ວຍມະຫາຣາຊະເຈົ້າເມື່ອກ່ອນນັ້ນຍັງສາມາດເອົາອອກມາຖວາຍແກ່ມະຫາຣາຊະເຈົ້າໄດ້ຊະລື ຣາຊາເມື່ອນັ້ນພະຍາອາຫະກ່າວວ່າ ເສໂລອັນວ່າຫີນຈົມຢູ່ໃນພື້ນສະຫມຸດນັ້ນ ບຸກຄະລະຜູ້ເປັນເສນາແຕ່ກ່ອນຜູ້ໃດຜູ້ຫນຶ່ງ ແລະຈັກອາດສາມາດວ່າຈັກເອົາອອກມາຖວາຍແກ່ເຮົາພະກະສັດດັ່ງນັ້ນ ນັຕຖິບໍ່ມີສັກຄົນແລ ກຸມາໂຣ ເມື່ອນັ້ນກຸມານອາຫະກໍຂານພະຍາວ່າ ຊະນິນທະ ຂ້າແກ່ມະຫາຣາຊະເຈົ້າ ອິທານີ ໃນກາລະບັດນີ້ ຜູ້ຂ້າກໍອາດສາມາດເອົາກ້ອນຫີນ ອັນມະຫາຣາຊະເຈົ້າຊັດລົງພື້ນສະຫມຸດຢູ່ແລ້ວນັ້ນ ອອກມາຖວາຍແທ່ມະຫາຣາຊະເຈົ້າໄດ້ດ້ວຍງ່າຍໃນວັນນີ້ຊະແລ ຊະນິນທະ ຂ້າແກ່ມະຫາຣາຊະເຈົ້າ ອະຍັງ ອັນນີ້ ຄືວ່າຕົວຜູ້ຂ້າຈັກເອົາຫມໍຫູຣາອອກຈາກຄອກຂັງກັງຄາໃນວັນນີ້ຊະແລ ພະຍາກ່າວວ່າ ກູລາກຸມານ ທ່ານເອົາຫີນໃນພື້ນສະຫມຸດອອກມາໃຫ້ແກ່ເຮົາແທ້ ຄືວ່າ ທ່ານຕັດຄໍາຫມໍຫູຣາໃຫ້ຊອບແທ້ດັ່ງນັ້ນ ເຮົາເລົ່າຈັກໃຫ້ສໍາປັດຕິອັນປະເສີດ ຄືວ່າຍົດອັນເປັນໃຫຍ່ແກ່ທ່ານຊະແລ ກຸມາໂຣເມື່ອນັ້ນບັນອາມັດຕະກຸມານກໍຂານພະຍາວ່າ ມະຫາຣາຊະ ຂ້າໄຫວ້ມະຫາຣາຊະເຈົ້າຕົນເປັນໃຫຍ່ແກ່ໄຮ່ນາ ອະຫັງອັນວ່າຜູ້ຂ້າ ສັກການີ ກໍອາດສາມາດຕັດຄໍາຫມໍກູຣາຜູ້ນີ້ໃຫ້ຊອບແລ ໃນວັນນີ້ ປັນຍາຍະ ດ້ວຍປະຫຍາມັຍຫັງ ແຫ່ງຂ້ານ້ອຍນີ້ຊະແລ ມະຫາຣາຊະ ຂ້າໄຫວ້ມະຫາຣາຊະເຈົ້າຕົນເປັນໃຫຍ່ ເທົ່າວ່າ ຜູ້ຂ້າຍາຈານີ ກໍຈັກຂໍຍັງພອນ ຕັສສາ ແຫ່ງເທວະດາເຈົ້າ ຕົນຢູ່ໃນພູມມະເສດຕະສັດ ແຫ່ງມະຫາຣາຊະເຈົ້ານັ້ນ ໃຫ້ເປັນສັກຂີ ທີ່ຊີ້ທີ່ທອມແກ່ຄົນທັງຫລາຍ ແລະ ວ່າດັ່ງນັ້ນແລ ກຸມາໂຣ ເມື່ອນັ້ນກຸມານຍາຈະຕິກໍຂໍວະຣັງຍັງພອນ ຕັສສາເທວະຕາຍະ ແກ່ເທວະດາຕົນນັ້ນ ອາຫະ ກໍກ່າວວ່າດັ່ງນີ້ ຂ້າໄຫວ້ເທວະດາຕົນເປັນເຈົ້າ ອະຫັງ ອັນວ່າຜູ້ຂ້າຍາຈານີວະຣັງ ກໍຂໍຍັງພອນ ຂ້າຈັກຕັດຍັງຄໍາຫມໍຫູຣາຜູ້ນີ້ ປັນຍາຍະ ດ້ວຍປະຫຍາ ມັຍຫັງ ແຫ່ງຂ້ານ້ອຍນີ້ຊະແລ ພີ່ວ່າຂ້າຕັດຄໍານີ້ຊອບແທ້ເທວະດາເຈົ້າຈົ່ງໃຫ້ສັກຂີອັນຫນຶ່ງ ປາກະໂຕ ໃຫ້ປາກົດແກ່ຄົນທັງຫລາຍເທີ້ນ ວ່າດັ່ງນີ້ແລ້ວ ອາມັດຕະກຸມານ ກໍໄຫວ້ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ດັ່ງຫມໍຫູຣາ ຜູ້ທວາຍມະຫາຣາຊະເຈົ້າວ່າໃນວັນກ້ອນເຈັດນີ້ ມະຫາຣາຊະເຈົ້າ ຈັກໄດ້ລາບພະອັນໃຫຍ່ຊະແລ ວ່າດັ່ງນັ້ນ ສັຕຕະເມທິວະເສ ໃນວັນກ້ອນເຈັດ ພະຍາເສັຍຂອງອັນເປັນມັງຄະລະສີ່ຈໍາພວກ ພະຍາເຈົ້າວ່າມັນທວາຍຜິດ ແລະຈັກຂ້າມັນເສັຍ ເປັນອັນບໍ່ຊອບຜິດໃນພະຍາເຈົ້າດາຍ ເຫດດັ່ງລື ແລະວ່າອັນຈາມະຫາຣາຊະເຈົ້າ ໃຫ້ມັນທວາຍ ມັນກໍຫາກທວາຍ ແຕ່ມະຫາຣາຊະເຈົ້າຄຶນດອວດາຍ ຊາຕິເສັຍຂອງນີ້ຍັງມີສອງຈໍາພວກ ຈໍາພວກຫນຶ່ງມີວິນຍານ ຈໍາພວກຫນຶ່ງຫາວິນຍານບໍ່ໄດ້ ຊະນິນທະ ຂ້າໄຫວ້ມະຫາຣາຊະເຈົ້າ ຊາຕິເສັຍຂອງຄືສັດສີ່ຕີນຈໍາພວກນີ້ ຍ່ອມເປັນຂອງມີວິນຍານດາຍ ເຫດວ່າມະຫາ

ຣາຊະເຈົ້າບໍ່ໃຫ້ດູຊາຕາເຂົາຟູງນັ້ນດາຍ ຍັສມາ ເຫດສັນໃດ ຕັສມາ ເຫດສັນນັ້ນ ຂັຕຕິຍາ ອັນ
ວ່ານາງພະຍາກໍດີ ຊາຕາລຶກປີເດືອນກໍຫາກມີດັ່ງສັດສາມຕົວຄື ງົວອຸສຸພະຣາດ ແລະມ້າອາຊາໄນ
ແລະ ຊ້າງມັງຄະລະນັ້ນ ລືກຍາມປີເດືອນ ວັນຍາມອັນເກີດມາແຫ່ງເຂົາກໍຫາກມີແລ ຊະນິນທະ
ຂ້າແກ່ມະຫາຣາຊະເຈົ້າ ຕະວັງ ອັນວ່າມະຫາຣາຊະເຈົ້າ ບໍ່ໄດ້ໃຫ້ດູປີເດືອນວັນຍາມເຂົາຟູງນັ້ນ
ດາຍ ອະປິຈະ ອີກປະການຫນຶ່ງ ຊະນິນທະ ຂ້າແກ່ມະຫາຣາຊະເຈົ້າ ສັງຂາຣາອັນວ່າອາຍຸສັງ
ຂານແຫ່ງເຂົາຟູງນັ້ນ ຫາກຫມົດຫາກສ້ອງທໍ່ນັ້ນດາຍ ມະຣະນາຍະ ເຂົາກໍຈິ່ງຕາຍເພື່ອດັ່ງນັ້ນແລ
ຊະນິນທະ ຂ້າແກ່ມະຫາຣາຊະເຈົ້າ ຣາຊາປີ ແມ່ນວ່າທ້າວພະຍາ ພູມີປາໂລ ອັນເປັນເຈົ້າແຜ່ນ
ດິນສັພພັງ ອັນທັງມວນ ເສນາຍະອາມັຈຈາປະຣິວຸຕໂຕ ອັນມີຫມູ່ເສນາ ອາມາດ ຣາຊະມຸນຕີ ມີ
ມີກີຫອກດາບ ຫນ້າກ້ອງກິ່ງທະນູສິນທັງຫລາຍ ຢາຍຢັງແອດລ້ອມອ້ອມຢູ່ ບໍ່ຮູ້ກີຮ້ອຍຊັ້ນ ວ່າບໍ່ໃຫ້
ຕາຍກໍບໍ່ໄດ້ ສັງຂາຣາ ໃນເມື່ອອາຍຸສັງຂານ ແລະຈັກຫມົດດັ່ງນັ້ນ ກໍຫາກຈຸຕິຕາຍໄປລະສໍາປັດຕິ
ເຂົ້າຂອງດີວິເສດ ເປັນຕົ້ນວ່າ ຣາຊະການບ້ານເມືອງເສັຍແທ້ທັ້ນແລ ຊະນິນທະ ຂ້າແກ່ມະຫາ
ຣາຊະເຈົ້າຕຸມເຫ ອັນວ່າມະຫາຣາຊະເຈົ້າໃຫ້ຫມໍ່ຫູຣາທວາຍວ່າຈັກໄດ້ລາບພະອັນໃຫຍ່ພອຍເສັຍ
ຂອງອັນຫາວິນຍານບໍ່ໄດ້ດັ່ງນັ້ນ ມະຫາຣາຊະເຈົ້າກໍເພິງຕິວ່າມັນທວາຍຜິດນັ້ນກໍຊອບແລ ແມ່ນ
ວ່າຈັກຂ້າເສັຍກໍບໍ່ຜິດແລ ອັນນີ້ຫາກເສັຍຂອງມີວິນຍານດາຍ ພະຍາເຈົ້າຕິມັນບໍ່ຄວນແລ ເຫດວ່າ
ມະຫາຣາຊະເຈົ້າ ບໍ່ໃຫ້ມັນດູຊາຕາເຂົາສີ່ຈໍາພວກນັ້ນແລ ພີວ່າມະຫາຣາຊະເຈົ້າ ຄາເຕຕິ ແລະ
ໄດ້ຂ້າຫມໍຫູຣາແທ້ ຣັຕກັງ ອັນວ່າບ້ານເມືອງແຫ່ງມະຫາຣາຊະເຈົ້ານີ້ ປະປັນຕິ ກໍຈັກເກີງອຸກຄະ
ຫລຸກມີ່ນັ້ນມາກນັກຊະແລ ເຫດວ່າມັນທວາຍຊາຕາມະຫາຣາຊະເຈົ້າຊອບເປັນກັບດ້ວຍປະໂຍຊະ
ນະອັນດີດາຍ ອະປິຈະ ອີກປະການຫນຶ່ງ ຊະນິນທະ ຂ້າແກ່ມະຫາຣາຊະເຈົ້າ ແຮກແຕ່ມັນທວາຍ
ມະຫາຣາຊະເຈົ້າ ອັນມີປະການສີ່ຈໍາພວກນີ້ ລາບພະສັກການອັນໃຫຍ່ ອັນວິເສດນັກ ເອກະສະ
ຕະມະຫາຣາຊາໂນ ອັນວ່າທ້າວພະຍາທັງຫລາຍຮ້ອຍເອັດເມືອງ' ໃນຊຸມພູທີບຫາກມາກວາຍມາກ
ນັກບໍ່ອາດຈັກນັບໄດ້ແລ ຊະນິນທະ ຂ້າແກ່ມະຫາຣາຊະເຈົ້າກິງ ດັ່ງລິມະຫາຣາຊະເຈົ້າພອຍເລົ່າ
ຈັກຂ້າຫມໍຫູຣາຜູ້ເປັນອາຈານເສັຍ ອະລັງ ບໍ່ຄວນແທ້ແລ ອາມັດຕະກຸມານ ຕັດຄໍາດັ່ງນັ້ນ ເທວະ
ຕາ ເມື່ອນັ້ນສ່ວນດັ່ງເທວະດາ ກໍພາຍເຂົ້າຕອກດອກໄມ້ທິບລົງມາບູຊາເປັນສັກຂີ ປຸຣະໂຕ ຊ້ອງ
ຫນ້າ ມະນຸສສານັງ ແຫ່ງຄົນທັງຫລາຍໂຫຕິ ກໍມີທັ້ນແລ ຣາຊາເມື່ອນັ້ນ ພະຍາມູລະຕັນໄຕຣາດ
ສຸຕະວາ ໄດ້ຍິນແລ້ວຍັງເປດສະຫນາ ບັນຫາຕັດຄໍາແຫ່ງເຈົ້າ ອາມັດຕະກຸມານນັ້ນແລ້ວ ປະໂມທິ
ຕະວາ ກໍມີໃຈຊົມຊື່ນຍິນດີມາກນັກແລ້ວ ກໍຈິ່ງໃຫ້ຫມໍຫູຣາອອກຈາກເຮືອນຄອກຂັງ ແລ້ວກໍໃຫ້ອາບ
ນໍ້າດໍາຫົວເສັຍແລ້ວ ປະຕິຕກະຕິ ກໍຕັ້ງໄວ້ຍັງຫມໍຫູຣາຜູ້ນັ້ນໃນທີ່ອັນເປັນຫມໍຫູຣາດັ່ງເກົ່າ ແລ້ວຈິ່ງ
ແກມບ້ານທັງຫລາຍ ຫ້າຮ້ອຍບ້ານໃຫ້ເປັນບ້ານສ່ວຍໄຣ ແກ່ຫມໍຫູຣາຍິ່ງກວ່າເກົ່າທັ້ນແລ ກຸມາໂຣ
ປີ ສ່ວນດັ່ງອາມັດຕະກຸມານນ້ອຍຜູ້ນັ້ນ ພະຍາກໍຕັ້ງໄວ້ໃຫ້ເປັນຣາຊະບຸດ ຄືວ່າເອົາເປັນລູກທັ້ນແລ
ຕະໂຕ ແຮກແຕ່ພະຍາມູລະຕັນໄຕຣາດ ໄດ້ເອົາອາມັດຕະກຸມານມາເປັນລູກ ຣັຕກັງ ອັນວ່າຣາ
ຊະການບ້ານເມືອງ ກໍຫມັ້ນຄົງນັກຄືດັ່ງໄດ້ຮ້ອຍເອັດເມືອງມາແກມເລົ່າແລ ກ່າວວັດກຸແຫ່ງພະຍາ
ມູລະຕັນໄຕ ຈັກຂ້າຫມໍຫູຣາ ແລະ ໄດ້ສິນທະນາກັບດ້ວຍອາມັດຕະກຸມານພະຍາເອົາເປັນລູກ ນິຕ
ກິຕັງ ກໍແລ້ວທໍ່ນີ້ກ່ອນແລ.

ທີນີ້ ຈັກກ່າວຕໍານານ ພະຍາມູລະຕັນໄຕຣາດ ຈັກແຕ່ງບັນຫາ ໄປທວາຍແກ່ພະຍາຮ້ອຍເອັດເມືອງເລົ່າແລ ເມື່ອນັ້ນພະຍາກໍໃຊ້ຍັງບັນຫາອັນຫນຶ່ງ ຄັມພີລັງ ອັນເລີກແລບນັກ ວະຈະເນ ນະ ດ້ວຍຄໍາວ່າດັ່ງນີ້ດູລາທ້າວພະຍາທັງຫລາຍ ອານາຣັດກັງ ອັນວ່າເຂດຂີງກິງເມືອງແຫ່ງເຮົາທັງມວນ ເອກະທີວະສັງ ຍັງມີໃນວັນຫນຶ່ງ ກໍໃຫ້ຕີກອງປ່າວໃນວຽງທັງມວນ ແລະ ແຜ່ໄປພາຍນອກໄດ້ໂຍຊະນະຫນຶ່ງ ສະມັນຕັງ ແຕ່ອັນຮອດທຸກກໍ້າທຸກພາຍ ເພລີສັດໂທ ອັນວ່າສຽງກອງອັນນັ້ນ ໄປເຖິງທ່າມກາງນໍ້າສະຫມຸດ ສະຕິ ແລະມີດັ່ງນັ້ນ ເອໂກເສໂລ ຍັງມີຫີນກ້ອນຫນຶ່ງຈົມຢູ່ໃນນໍ້າສະຫມຸດເລົ່າຟົງອອກມາ ດ້ວຍສຽງອັນນັ້ນ ຕັ້ງຢູ່ເຫນືອຜີວນໍ້າໃຫຍ່ ແລະເທື່ອແລະນ້ອຍເມື່ອກ້ອນເຈັດປີ ມັນເກີດເປັນແຜ່ນງາມນັກ ເມື່ອເຂົ້າເຖິງຝັ່ງນໍ້າສະຫມຸດ ພອຍແຜ່ກົມງາມ ມີວັນນະໃສເຫລື້ອມງາມນັກ ຊາຕິຫີນບໍ່ຫ່ອນຟູແລ ມາຟູນັ້ນເປັນຫນ້າອັດສະຈັນນັກແລ ຍັງຄວນໄວ້ເປັນຫີນມັງຄະລະດີ ລີຮູ້ວ່າບໍ່ຄວນນັ້ນຈາ ອຸທາຫຸ ຮູ້ວ່າຫີນບໍ່ຫ່ອນຟູ ຫອນຍ່ອມເປັນມັງຄະລະດີດາຍວ່າອັນຈາ ພະຍາທັງຫລາຍໄດ້ຮູ້ແຕ່ບູຮານລີເຍ້ອະກ່າວມາໃຫ້ເຮົາແຈ້ງ ຜີບໍ່ກ່າວໃຫ້ຊອບດັ່ງນັ້ນ ກໍຢ່າຕິເຮົາຮ້າຍດາຍ ຜີທ່ານກ່າວຊອບດີແທ້ ຣັຕກັງ ອັນວ່າບ້ານເມືອງແຫ່ງທ່ານທັງຫລາຍກໍຍັງຈັກສະຫວັດສະດີແລ ອະຍັງເສໂລ ອັນວ່າຫີນກ້ອນນີ້ເທວະດາຫາກໃຫ້ສໍາແດງດີຫລືດາຍ ວ່າດັ່ງນັ້ນ ອຸຍໂຍເຊສີ ກໍສົ່ງໄປທັ້ນແລ ທູໂຕ ເມື່ອນັ້ນຄົນໃຊ້ພະຍາມູລະຕັນໄຕຣາດ ຮ້ອຍເອັດຄົນກໍນໍາບັນຫາອັນນັ້ນໄປຮອດພະຍາຮ້ອຍເອັດຕົນ ຊູ່ເມືອງທັ້ນແລ ເຂົາຟູງໃຊ້ພະຍາໃຫ້ນໍາບັນຫາໄປນັ້ນ ວະສັນຕິ ກໍຢູ່ໃນເມືອງທ້າວພະຍາຮ້ອຍເອັດຕົນນັ້ນໄດ້ເຈັດປີ ບໍ່ທັນມາຄອບພະຍາມູລະຕັນໄຕເທື່ອ ພະຍາຊໍ້າແປງບັນຫາອັນຫນຶ່ງ ໃຊ້ໃຫ້ເອົາໄປແກ່ພະຍາຮ້ອຍເອັດເມືອງເລົ່າດ້ວຍຄໍາວ່າດັ່ງນີ້ ຍັງມີແຫວນວັດຊິນຣະດວງຫນຶ່ງໃຫຍ່ທີ່ພັນຜັກກາດ ເທວະດາຫາກນໍາເອົາມາໃຫ້ແກ່ເຮົາກໍຕັ້ງໄວ້ໃນທີ່ອັນເປັນມັງຄະລະແລ ວະຊິໂຣ ອັນວ່າແກ້ວວັດຊິນລູກນັ້ນ ເສຕໂກ ອັນປະເສີດ ພອຍໃຫຍ່ຂື້ນທີ່ລູກເດືອຍ ມີວັນນະງາມນັກ ເຮົາຈັກໄຄ່ໃຫ້ຂອດເປັນໂຮງວ່າອັນ ທີ່ວ່າຫາຄໍາອັນຈະຂອດບໍ່ໄດ້ ພະຍາທັງຫລາຍ ເຍ້ອະໃຫ້ໄດ້ຄໍາມາຂອດຈັກໃຫ້ເປັນໂຮງ ອະຍັງວະຊິໂຣ ອັນວ່າແກ້ວວັດຊິນດວງນີ້ບໍ່ມີຄໍາຈັກຂອດ ຈິ່ງໃຫ້ໃຊ້ມາຍັງຄໍາອັນຈັກຂອດແທ່ວນນັ້ນ ມັຍຫັງ ແກ່ເຮົາແດ່ເຫັນວ່າດັ່ງນັ້ນ ກໍໃຊ້ໄປບອກແກ່ທ້າວພະຍາທັງຫລາຍຊູ່ເມືອງທັ້ນແລ ອະທິບາຍພະຍາມູລະຕັນໄຕຣາດ ແປງເປດສະຫນາ ແກ່ທ້າວພະຍາທັງຫລາຍນັ້ນ ນັກປາດເຈົ້າທັງຫລາຍ ຊານີຕັພພັງ ກໍເພິງຮູ້ດັ່ງນີ້ ພະຍາມູລະຕັນໄຕ ໄດ້ເປັນທ້າວພະຍາໃນເມືອງພາຫາຣະນະຄອນ ສືບງກັນມານີ້ຈັກເປັນແຕ່ເຊື້ອພະຍາເອກຣາດ ນະທີ ກໍບໍ່ມີຊະແລ ອະຍັງ ອັນນີ້ຫອນ ຍ່ອມໄດ້ເປັນເພື່ອປັນຍານີ້ດາຍ ທີ່ນີ້ກູໄດ້ເປັນພະຍາສືບມາແລະໄດ້ເປັນເອກຣາດເປັນໃຫຍ່ກວ່າທ້າວພະຍາທັງຫລາຍ ກໍບໍ່ໄດ້ເປັນເຊື້ອເອກຣາດເລີຍ ທີ່ນີ້ກູໄດ້ເປັນເອກຣາດ ກໍໄດ້ເປັນເພື່ອປັນຍາແກ້ເປດສະຫນາບັນຫາດາຍ ທີ່ນີ້ກູເພິ່ງແປງເປດສະຫນາໄປສ່ຽງແກ່ທ້າວພະຍາທັງຫລາຍ ເພື່ອຈັກໃຫ້ເຂົາເຂົ້າມາໃນອໍານາດອາດຍາແຫ່ງຕົນຜູ້ດຽວດາຍ ອະກະ ໃນກາລະເມື່ອນັ້ນ ເອກະສະຕະຣາຊາໂນ ອັນວ່າທ້າວພະຍາທັງຫລາຍຮ້ອຍເອັດຕົນ ນະສັກການິງສຸ ກໍບໍ່ອາດ ຊານິຕຸງ ເພື່ອຈັກຮູ້ຍັງບັນຫາສອງປະການນັ້ນໄດ້ທ້າວພະຍາທັງຫລາຍຈິ່ງໃຊ້ໄປເຖິງກັນດ້ວຍຄໍາວ່າດັ່ງນີ້ ຍະກາ ໃນກາລະເມື່ອໃດ ຍັງຣັຕກັງ ອັນວ່າບ້ານເມືອງອັນໃດຫາກແກ້ບັນຫາສອງອັນນີ້ໄດ້ ກໍຈັກຮອນເອົາແລ້ວ

ຈັກບູຊາ ແລະບັນຫາແລະແສນຄຳແລ ເມື່ອນັ້ນຄົນໃຊ້ກໍໄປຮອດຊູ່ເມືອງໃນຮ້ອຍເອັດເມືອງນັ້ນ ກໍບໍ່ຮູ້ບັນຫາສອງອັນນັ້ນໃຫ້ປາກົດໃນປັນຍາແຫ່ງຄົນສັກເມືອງແລ ເມື່ອນັ້ນ ທ້າວພະຍາກໍຈິ່ງຂຳເຂືອກເສັຍຊູ່ເມືອງແລ້ວ ຈິ່ງກາມຄົນໃຊ້ພະຍາມູລະຕັນໄຕ ດ້ວຍຄຳວ່າດັ່ງນີ້ ດູລາຄົນໃຊ້ເມືອງເອກຣາດພຸ້ນ ຍັງມີເສນາອາມາດ ນັກປາດປະໂຣຫິຕະພາມທັງຫລາຍ ມີຄາວ່າຍັງຮູ້ແກ້ບັນຫາອັນນີ້ໄດ້ອື່ນຊະລື ຫູໂຕ ເມື່ອນັ້ນຄົນໃຊ້ກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າໃນເມືອງເອກຣາດພຸ້ນ ຄົນທັງຫລາຍເປັນຕົນວ່າ ເສນາອາມາດທັງຫລາຍ ກໍບໍ່ອາດຈັກຮູ້ດ້ວຍປັນຍາໄດ້ສັກຄົນກໍຂ້າແລ ທີ່ວ່າຍັງມີເຈົ້າຣາຊະບຸດລູກພະຍາເຈົ້າຕູຂ້າທັງຫລາຍນັ້ນ ກໍປາກົດຮຸ່ງເຮືອງດ້ວຍປັນຍາມາກນັກ ອາດຈັກຮູ້ແກ້ບັນຫາສອງອັນນີ້ໄດ້ຊະແລ ເອກະສະຕະຣາຊາໂນ ເມື່ອນັ້ນທ້າວພະຍາທັງຫລາຍຝູງນັ້ນອັນໄດ້ຮ້ອຍເອັດຕົນ ຊານິຕະວາ ຮູ້ແລ້ວ ຕັງວະຈະນັງ ຍັງຄຳຄົນໃຊ້ນັ້ນກໍຊົມຊື່ນຍິນດີຍິ່ງນັກ ຈິ່ງແຕ່ງຄຳ ແລະ ເມືອງແລະແສນຄຳ ໃຊ້ໃຫ້ນຳເມືອກັບຄົນໃຊ້ ພະຍາເອກຣາດນັ້ນ ວະຈະເນນະ ດ້ວຍຄຳວ່າ ຄຳສອງແສນນີ້ ຝູງຂ້າທັງຫລາຍນຳມາກວາຍແກ່ພະຍາເອກຣາດເຈົ້າແລ ອິເມປັນຫາອັນວ່າບັນຫາສອງອັນນີ້ ມະຍັງ ຝູງຂ້າທັງຫລາຍ ນະສັກກາ ບໍ່ອາດຈັກປາກົດໄດ້ດ້ວຍອະທິບາຍສັກອັນແລ ມະຫາຣາຊະເຈົ້າ ຈິ່ງໄຂໃນອະທິກອນແຫ່ງບັນຫາສອງອັນນີ້ມາໃຫ້ແຈ້ງແກ່ຝູງຂ້າທັງຫລາຍແດ່ເທີ້ນ ທະເວສຸວັນນະສະທັສສັງ ຍັງຄຳສອງແສນນີ້ ກໍໃຫ້ເປັນຄຳບູຊາແລ ວ່າດັ່ງນັ້ນ ເມື່ອນັ້ນ ຄົນໃຊ້ທັງຫລາຍກໍນຳເຄື່ອງບັນນະການ ເມືອຮອດພະຍາມູລະຕັນໄຕເອກຣາດ ແລ້ວກ່າວຄຳທັງມວນໃຫ້ພະຍາແຈ້ງສູ່ອັນ ອະສິ ກໍມີແລ ເມື່ອນັ້ນ ພະຍາເອກຣາດກ່າວວ່າ ດູລາທ່ານທັງຫລາຍ ຈິ່ງນຳເອົາຄຳສອງແສນນີ້ເມືອກວາຍລູກເຮົາ ເຈົ້າຣາຊະບຸດອາມັດຕະກຸມານພຸ້ນເທີ້ນ ເມື່ອນັ້ນຄົນໃຊ້ພະຍາຮ້ອຍເອັດຕົນ ກໍນຳເອົາຄຳສອງແສນນັ້ນ ໄປກວາຍແກ່ເຈົ້າຣາຊະບຸດເປັນຂອງບູຊາແລ້ວ ຈິ່ງໄຫວ້ເຈົ້າຣາຊະບຸດວ່າ ຂ້າແກ່ມະຫາຣາຊະບຸດເຈົ້າ ອັນວ່າບັນຫາສອງປະການນີ້ ອັນພະເຈົ້າເອກຣາດຕົນພໍ່ແຫ່ງເຈົ້າຫາກໃຫ້ເອົາໄປສ່ອງແກ່ພະຍາເຈົ້າຝູງຂ້າທັງຫລາຍຮ້ອຍເອັດເມືອງນີ້ ພະຍາເຈົ້າຝູງຂ້າທັງຫລາຍ ກໍບໍ່ແກ້ໄດ້ສັກເມືອງແລ ຈິ່ງໃຫ້ຝູງຂ້າທັງຫລາຍເອົາຄຳສອງແສນນີ້ມາກວາຍ ເພື່ອໃຫ້ເປັນດອກໄມ້ບູຊາແກ່ເຈົ້າກູແລ ຂໍເຈົ້າຣາຊະບຸດເຈົ້າຈິ່ງກ່າວອະທິບາຍ ໃນບັນຫາສອງອັນນີ້ໃຫ້ແຈ້ງແກ່ຝູງຂ້າທັງຫລາຍແດ່ເທີ້ນ ວ່າດັ່ງນັ້ນແລ້ວ ເມື່ອນັ້ນເຈົ້າຣາຊະບຸດຈິ່ງກ່າວວ່າ ດູລາຄົນໃຊ້ ບັນຫາອັນພະຍາເຈົ້າຕົນພໍ່ເຮົາໃຊ້ໄປນັ້ນ ມີປະການສັນໃດຈາ ທ່ານຈິ່ງກ່າວມາດູເທີ້ນ ຄົນໃຊ້ກ່າວກົດຈະບັນຫາສອງອັນນັ້ນ ໃຫ້ແຈ້ງແກ່ເຈົ້າຣາຊະບຸດໂດຍໄນດັ່ງບັນຫາກ່າວນັ້ນຊູ່ອັນແລ ເຈົ້າຣາຊະບຸດໄດ້ຍິນບັນຫາສອງອັນນັ້ນແລ້ວ ເຈົ້າກໍຕັດສະຮູ້ບັນຫາອັນນັ້ນງ່າຍນັກ ດ້ວຍປັນຍາແຫ່ງຕົນ ເປັນປະດຸດຈະດັ່ງເດັກນ້ອຍກິນນົມແລ ເຈົ້າຣາຊະບຸດເມື່ອຈັກແກ້ບັນຫາສອງອັນນັ້ນເຈົ້າກໍຂໍພອນເຊິ່ງເທວະດາວ່າ ຂ້າແກ່ເທວະດາເປັນເຈົ້າບັດນີ້ຂ້າຈັກແກ້ບັນຫາສອງອັນນີ້ ຜິວ່າຜູ້ຂ້າຍັງກ່າວຊອບຄອງໂລກທັງມວນ ເທວະດາເຈົ້າຈິ່ງໃຫ້ມີສັກຂີອັນຫນຶ່ງ ແກ່ຄົນທັງຫລາຍ ຫມາຍມີຄົນໃຊ້ພະຍາຮ້ອຍເອັດເມືອງນີ້ເທີ້ນ ກ່າວດັ່ງນີ້ແລ້ວ ຈິ່ງກ່າວວ່າ ດູລາຄົນໃຊ້ ບັນຫາວ່າ ຍັງມີຫີນກ້ອນຫນຶ່ງນ້ອຍໆ ຈົມຢູ່ໃນພື້ນສະຫມຸດນັ້ນ ຄັນວ່າໄດ້ຍິນສອງກອງແລ້ວ ກໍຟູອອກມາຢູ່ໃນກ້ຳກາງນ້ຳສະຫມຸດນັ້ນ ແລ້ວກໍໃຫຍ່ມາວັນແລະນ້ອຍ ເຖິງເຈັດປີກໍໃຫຍ່ມາເປັນແຜ່ນຄຳຣາບຮອງພອງງາມນັກ ແລ້ວເມື່ອເຂົ້າຮອດຝັ່ງນ້ຳສະຫມຸດນັ້ນ ພອຍເລົ່າ

★ ພິພິດທະພັນ ຫໍພະແກ້ວ

ກິນງານມັກ ບັນຫາອັນນັ້ນ ຈັກແມ່ນອັນໃດຈາ ຄືວ່າຕົນເຮົານີ້ເກີດມາໃນພໍ່ແມ່ ເມື່ອຍັງນ້ອຍນັ້ນ ກໍສະເໝີດັ່ງກ້ອນຫີນນ້ອຍຈົມຢູ່ໃນພື້ນສະໝຸດນັ້ນແລ ຄັນວ່າໄດ້ຍິນສຽງກອງແລ້ວ ກໍຟູອອກມາຢູ່ ກາງຜິວນ້ຳແລ້ວ ກໍໃຫຍ່ມາອັນແລະນ້ອຍນັ້ນ ຄືວ່າເຮົາໄດ້ຍິນກອງອັນພະຍາເຈົ້າໄດ້ປ່າວນັ້ນ ແລ້ວ ເຮົາກໍຈາລະຈາກັບດ້ວຍເດັກນ້ອຍທັງຫລາຍ ອັນເປັນເພື່ອນຫລິ້ນນັ້ນວ່າດັ່ງນີ້ ດູລາເພື່ອນ ທັງຫລາຍ ກູກໍອາດຈັກຕັດຄຳໝໍຫູຣານັ້ນໄດ້ແລ ວ່າດັ່ງນີ້ ເມື່ອນັ້ນຄົນທັງຫລາຍ ຝູງຕີກອງປ່າວ ນັ້ນ ເຂົາກໍໄດ້ຍິນຄຳອັນກ່າວນັ້ນ ເຂົາກໍເມືອບອກເລົ່າແກ່ພະຍາເຈົ້າ ພະຍາຈິ່ງໃຊ້ໃຫ້ມາເອົາ ເຮົາມາຢູ່ກາງເມືອງນີ້ ກໍຄືດັ່ງກ້ອນຫີນອັນຈົມຢູ່ໃນພື້ນສະໝຸດນັ້ນແລ ເມື່ອເຂົາເອົາມາຮອດຝັ່ງ ສະໝຸດແລ້ວເລົ່າກົມງານນັ້ນ ພະຍາເຈົ້າວ່າ ກູກ່າວຂ່າວສານມາຫາພະຍາເຈົ້າດັ່ງນີ້ແລ ຍັງຈັກ ຄວນເອົາມາອຸສາພິເສກລື ຮູ້ວ່າບໍ່ຄວນນັ້ນຈາວ່າດັ່ງນັ້ນດາຍ ອັນນີ້ເປັນອະທິບາຍແຫ່ງບັນຫາ ກ້ອນຫີນຟູນັ້ນແລ ອັນວ່າບັນຫາອັນໄດ້ແກ້ວອະຊິຣະເພັດລູກໜຶ່ງທີ່ພັນຜັກກາດ ອັນເທວະດາຫາກ ນຳມາໃຫ້ແຕ່ປ່າຫິມມະພານອັນນັ້ນ ກໍຄືເຮົາຢູ່ບ້ານນອກມາຍັງນ້ອຍນັ້ນ ອັນເທວະດາຫາກ ບັນດົນໃຫ້ໄດ້ມາຢູ່ໃນເມືອງທີ່ນີ້ແລ ແລ້ວກໍໃຫຍ່ມາທີ່ລູກເດືອຍນັ້ນ ·ຄືວ່າເຮົາຍັງນ້ອຍນັ້ນ ແລະ ໄດ້ມາຢູ່ໃນປາສາດ ດ້ວຍພາວະອັນເປັນລູກພະຍາເຈົ້າແລ້ວ ກໍຊ້ຳໄດ້ເປັນໃຫຍ່ສັນນີ້ແລ ອັນວ່າ ພະຍາເຈົ້າຈັກໄຄ່ຂອດໄວ້ໃຫ້ເປັນແຫວນອະຊິຣະມັງຄະລະນັ້ນ ຄືວ່າພະຍາເຈົ້າຈັກໄຄ່ໃຫ້ຫາເມັຍ ມາໃຫ້ແກ່ເຮົາແລ ອັນວ່າຫາຄຳຈັກແປງໂຮງບໍ່ໄດ້ນັ້ນ ຄືວ່າຫາຜູ້ຍິງອັນເປັນເຊື້ອທ້າວພະຍາບໍ່ໄດ້ ນັ້ນແລ ອັນວ່າໃຫ້ທ້າວພະຍາທັງຫລາຍຫາຄຳມາຈັກແປງໂຮງວ່າອັນ ຄືວ່າໃຫ້ທ້າວພະຍາ ທັງຫລາຍ ຫານາງມາໃຫ້ເປັນເມັຍເຮົາວ່າດັ່ງນີ້ແລ ກ່າວແກ້ບັນຫາແກ້ວອະຊິຣະມີສັນນີ້ແລ ທ່ານ ທັງຫລາຍ ຈິ່ງເອົາຄຳອັນນີ້ ເມືອກ່າວແກ່ທ້າວພະຍາທັງຫລາຍຊູ່ເມືອງເທີ້ນວ່າດັ່ງນີ້ ເມື່ອນັ້ນ ເທວະດາກໍຍິນດີມາກນັກ ກໍຜາຍເຂົ້າຕອກດອກໄມ້ທິບແລະແກ້ວເຈັດປະການ ລົງມາບູຊາເຈົ້າ ອະມັດຕະກຸມານ ຊ້ອງໜ້າຄົນໃຊ້ພະຍາຮ້ອຍເອັດເມືອງນັ້ນກໍມີແລ ຄົນໃຊ້ທັງຫລາຍກໍສັ່ງອຳລາ ເຈົ້າອະມັດຕະກຸມານ ແລ້ວກໍເມືອກ່າວກິດຈະການ ອະທິບາຍບັນຫາສອງອັນນັ້ນ ໂດຍໄນດັ່ງເຈົ້າ ຣາຊະບຸດກ່າວແກ່ຕົນຊູ່ອັນ ແກ່ທ້າວພະຍາຮ້ອຍເອັດເມືອງພັ້ນແລ ເມື່ອນັ້ນທ້າວພະຍາຮ້ອຍເອັດ ເມືອງໄດ້ຍິນຄຳດັ່ງນັ້ນແລ້ວກໍຍິນດີມາກນັກ ກໍແຕ່ງລູກຍິງນາງສາວທັງຫລາຍຝູງເປັນເຊື້ອສາຍ ທ້າວພະຍາ ແລະເມືອງແລະຮ້ອຍເອັດນາງ ກັບທັງຄຳ ແລະເມືອງແລະແສນຄຳ ມາອຸ ສາພິເສກໃຫ້ເປັນເມັຍເຈົ້າອາມັດຕະກຸມານ ແລ້ວຈິ່ງຕັ້ງໄວ້ໃນທີ່ອັນເປັນອຸບປະຣາດກິນເມືອງ ເກິ່ງເມືອງໜຶ່ງພັ້ນແລ ນັກປາດເຈົ້າທັງຫລາຍກໍເພິ່ງຮູ້ວ່ານາງທັງຫລາຍອັນເປັນເມັຍອຸບປະຣາດ ນັ້ນ ອັນເປັນລູກນາງສາວທ້າວພະຍາຮ້ອຍເອັດເມືອງນັ້ນ ແລະເມືອງແລະຮ້ອຍເອັດຊູ່ເມືອງ ເປັນໝື່ນປາຍຮ້ອຍເອັດນາງກໍມີແລ ນາງໃນເມືອງເອກຣາດພະຍາຕົນພໍ່ກໍດັ່ງດຽວນັ້ນ ແລ ໂຮມທັງມວນເປັນໝື່ນປາຍສອງຮ້ອຍປາຍສອງນາງແລ ທ້າວພະຍາທັງຫລາຍໃນຊົມພູທີບນີ້ ມີ ໝື່ນຫົກພັນນາງຊູ່ເມືອງແລ ຄົນທັງຫລາຍ ຫລິ້ນມະໂຫຣະສົບຄົບງັນກັບດ້ວຍພະຍາເອກຣາດມູລະ ຕັນໄຕນັ້ນ ໄດ້ເຈັດເດືອນປາຍເຈັດວັນແລ້ວ ກໍສັ່ງອຳລາພະຍາເອກຣາດເມືອສູ່ເມືອງແຫ່ງຕົນພັ້ນ ແລ ຍາມນັ້ນພະຍາມູລະຕັນໄຕຣາດຕົນພໍ່ລ້ຽງນັ້ນ ກໍປົງອາດຍາໄວ້ນັກ ແກ່ເຈົ້າອຸບປະຣາດອາມັດ ຕະກຸມານສູ່ປະການແລ ກ່າວຕຳນານກ້ອນຫີນ ກໍແລ້ວທີ່ນີ້ກ່ອນແລ.

ທີ່ນີ້ ຈັກກ່າວຕຳນານໄຫມແມ່ຫມ້າຍ ຍ້າຍຄັນນານັ້ນ ມາໃຫ້ແຈ້ງແລ ຍັງມີພໍ່ນາສອງຄົນ ແດນນາຂາຕິດກັນກໍມີແລ ພໍ່ນາຜູ້ຫນຶ່ງໄປຄ້າຜູ້ຫນຶ່ງຢູ່ບ້ານ ຜູ້ຢູ່ບ້ານນັ້ນກໍໄປລັກໄກເອົານາຜູ້ໄປຄ້ານັ້ນໄຮ່ຫນຶ່ງກໍມີແລ ພໍ່ນາຜູ້ໄປຄ້ານັ້ນມາຮອດບ້ານແລ້ວ ມັນກໍຈຶ່ງໄປຫລິງດູນາມັນກໍຈຶ່ງເຫັນພໍ່ນາຜູ້ຢູ່ບ້ານນັ້ນໄກເອົາໄຮ່ຫນຶ່ງດັ່ງນັ້ນ ມັນກໍ່ກາວວ່າ ດູລາສະຫາຍທ່ານລັກໄກເອົານາກູສັງຈາ ພໍ່ນາຜູ້ນັ້ນກ່າວວ່າ ນາໄຮ່ນັ້ນຫາກແມ່ນນາກູແຕ່ໃດມາດາຍ ວ່າດັ່ງນັ້ນແລ ຂາກໍຜິດກອງເຊິ່ງກັນຫັ້ນແລ ຂາກໍພາກັນໄປໃຫ້ເສນາພິຈາລະນາ ເສນາຈຶ່ງພາໄປໄຫວ້ເຈົ້າອາມັດຕະອຸບປະຣາດ ໃຫ້ຕັດແລ ເມື່ອນັ້ນເຈົ້າອຸບປະຣາດຕັດຄຳຂໍ້ນີ້ ເປັນຫົວທີ ຢຽວວ່າຄົນທັງຫລາຍບໍ່ເຊື່ອຄົນ ເຈົ້າຈຶ່ງອະທິການແກ່ເທວະດາ ແລ້ວກໍຈຶ່ງກະທຳຊັກເອົານິທານແຕ່ຫລັງນັ້ນມາວ່າ ດູລາເສນາທັງຫລາຍ ຍາມເມື່ອເຮົາຍັງນ້ອຍໄດ້ເຈັດປີອັນນັ້ນ ກໍໄດ້ຍິນຕຳນານແຕ່ບຸບເພພຸ້ນວ່າດັ່ງນີ້ ຍັງມີພານມະນະປະໂຣຫິດ ຜູ້ຫນຶ່ງ ຊື່ວ່າໂລລຸພານ ມັນນັ້ນເປັນປະໂຣຫິດແຫ່ງພະຍາໂກໄລຍະ ມັນນັ້ນກໍຮູ້ຕຳນານນິທານທ່ານຜິດກັນດ້ວຍລັກໄກນາກັນ ໃນເມືອງພິມມະປະຕິນະຄອນນັ້ນ ອັນແຈ້ງນັກແລ ຍາມນັ້ນມັນກໍຄາດຈາກອັນເປັນປະໂຣຫິດນັ້ນແລ້ວ ມັນກໍໄດ້ເປັນພໍ່ຄ້າກວຽນຫ້າຮ້ອຍເຫລັ້ມ ມັນກໍຕະເດີນໄປຕ່າງບ້ານຕ່າງເມືອງຂູ່ແຫ່ງ ຄັນມັນໄປເກິງບ້ານນ້ອຍເມືອງໃຫຍ່ທີ່ໃດກໍດີ ມັນກໍຫອນຍ່ອມກ່າວສັ່ງສອນເຕືອນຊາວເມືອງຂູ່ແຫ່ງດ້ວຍຄຳວ່າ ດູລາເຈົ້າທັງຫລາຍໃຜຢ່າໂລບລ້ຽວເອົາແດນໄຮ່ແດນນາແຫ່ງທ່ານຜູ້ອື່ນເນີຢ່າໄດ້ໄຫມແມ່ຫມ້າຍ ຢ່າໄດ້ຍ້າຍຄັນນາເນີ ຢ່າໄດ້ຫມາຍຫມັ້ນໃຫ້ເປັນເອນແກ່ກັນເນີ ເຫດດັ່ງລືແລວ່າອັນຈາ ເຮົາກໍຮູ້ມາແຕ່ເມືອງພິມມະປັດຕິພຸ້ນແລ ຍັງມີພານຜູ້ຫນຶ່ງຊື່ວ່າປະໂລມະພານ ແຮກຕັ້ງເປັນເມືອງແລ້ວກໍໃຫ້ລູກມັນຜູ້ຫນຶ່ງ ຊື່ວ່າໂລມະພານ ເປັນພະຍາໃນເມືອງພິມປັດຕິທີ່ນັ້ນແລ ເກິງເມື່ອກະທຳນາຍັງມີພານຜູ້ຫນຶ່ງ ຊື່ວ່າໂລລຸພານ ມັນນັ້ນເປັນໃຫຍ່ກວ່າພານທັງຫລາຍຫັ້ນແລ ເກິງລະດູຈັກກະທຳນາ ມັນກໍໄປແຮກໄກນາແຫ່ງມັນ ມັນກໍລວດລັກໄກເອົານາແມ່ຫມ້າຍຜູ້ແດນຕິດກັນແລ້ວ ມັນກໍຍ້າຍຄັນນາແມ່ຫມ້າຍຜູ້ນັ້ນເສັຍ ໃຫ້ດູແປກແກ່ຕາແມ່ຫມ້າຍຜູ້ນັ້ນ ແມ່ຫມ້າຍຜູ້ນັ້ນກໍຢູ່ບ້ານດຽວກັນຫັ້ນແລ ເມື່ອນັ້ນແມ່ຫມ້າຍຜູ້ນັ້ນ ກໍຮູ້ວ່າໂລລຸພານຜູ້ນັ້ນລັກຍ້າຍຄັນນາມັນເສັຍດັ່ງນັ້ນ ມັນກໍຍ່ອມໃຫ້ເສນາພິຈາລະນາ ເສນາຈຶ່ງຫັນມາຍັງໂລລຸພານ ມາຖາມ ມັນກໍວ່າໄດ້ລັກແທ້ຫັ້ນແລ ເສນາຈຶ່ງກ່າວວ່າ ດູລາ ໂລລຸພານຜູ້ກ່ອຍຮ້າຍ ມຶງມາກະທຳສັນນີ້ເປັນບາບຮ້າຍນັກ ບໍ່ທ່ອນມີແລະມາກະທຳສັນນີ້ຈາ ບ້ານເມືອງອັນນີ້ຈັກມ້າງເພເສັຍເພາະມຶງນີ້ບໍ່ຢ່າຊະແລ ວ່າດັ່ງນີ້ແລ້ວ ຈຶ່ງພາເອົາໄປໄຫວ້ພະຍາ ກ່າວກິດຈະທັງມວນໃຫ້ພະຍາແຈ້ງຫັ້ນແລ ພະຍາຮູ້ແຈ້ງແລ້ວ ຈຶ່ງກ່າວວ່າ ມຶງນີ້ຕັ້ງວ່າຈັກໃຫ້ບ້ານເມືອງແຫ່ງກູເກື່ອນເພເສັຍສັນນີ້ບໍ່ດີແລ ພະຍາຈຶ່ງເຊິງຕັດຄຳຫັ້ນແລ ໂສພຣາຫມະໂນ ອັນວ່າພານຜູ້ນັ້ນ ມັນກໍຮູ້ວ່າມັນມີໂທດມັນຈຶ່ງເອົາຄຳພັນຫນຶ່ງໄປໃຫ້ພະຍາໃນທີ່ສະຫງັດ ພະຍາກໍເຫັນແກ່ສິນຈ້າງຄຳພັນນັ້ນ ຈຶ່ງໃຫ້ພານຜູ້ນັ້ນແພ້ດ້ວຍຄຳວ່າ ມັນນີ້ເປັນແມ່ຫມ້າຍຕາຍຫັກດອກດາຍ ດັ່ງລືມັນຈັກແກວດກົດຫມາຍຮູ້ແດນນາຂອງມັນໄດ້ນີ້ຈາ ວ່າດັ່ງນັ້ນ ເມື່ອນັ້ນ ແມ່ຫມ້າຍກໍມີຄຳຕ່ຳນ້ອຍຄ້ອຍໃຈ ຫົວຫອດເວດທະນາມາກນັກແລ ເມື່ອນັ້ນເຫດອຸບບາດອັນຈະບັງເກີດອິນຕາຍໃນເມືອງມາກນັກ ເປັນຕົ້ນວ່າ ເທວະດາ ແລະຜີເສື້ອເມືອງ ແລະພິຄວ່າກາງຄືນ ແລະເທວະດາອັນຢູ່ໃນພູມປາສາດ ເສດຕະສັດແຫ່ງພະຍາກໍດີ ເຂົາກໍຄຽດໃຫ້ແກ່ພະຍາມາກນັກແລ ແຮກແຕ່ວັນອັນພະຍາຕັດຄຳອັນນັ້ນ ໄປ

ເກີງເຈັດວັນ ຂ່າວສານອັນນັ້ນກໍໄປເກີງພະຍານາກ ສ່ວນພະຍານາກກໍຄຽດມາກນັກ ຈິ່ງຍື້ງນ້ຳຂຶ້ນກ້ວມໂຮງພະຍາຈົມຢູ່ໃນພື້ນນ້ຳ ສ່ວນຕົນພະຍາກໍຈິບຫາຍຕາຍໄປຫັ້ນແລ ຄົນທັງຫລາຍເຂົາລຸອຳນາດພ້ອມພະຍາຕັດຄຳອັນນັ້ນ ຢ້າວເຮືອນຝູງນັ້ນກໍຈົມໄປສັ້ນດຽວໂຮງພະຍານັ້ນແລ ສ່ວນວ່າໂລລຸພານຜູ້ລັກໄກເອົານາແມ່ຫມ້າຍນັ້ນ ພະຍານາກກໍກ້ຽວ ເອົາໄປເມືອງນາກ ກະທຳລຳບາກເວດທະນາມາກນັກ ແລ້ວກໍໃຫ້ສັຽງຊີວິດຕາຍໄປຫັ້ນແລ ຄັນວ່າມັນຕາຍແລ້ວກໍເກີດເປັນເຜດ ຢູ່ໃນແຜ່ນດິນຍາມທ່ຽງຄືນ ມັນກໍມາກ່າວແກ່ເມັຍມັນວ່າ ໃຫ້ຄືນນາອັນນັ້ນໃຫ້ແມ່ຫມ້າຍເສັຽດັ່ງເກົ່າເທີ້ນ ມັນກໍຮ້ອງປ່າວຄົນທັງຫລາຍດ້ວຍຄຳວ່າດັ່ງນີ້ ຕັ້ງແຮກແຕ່ນີ້ເມືອຫນ້າ ຄົນທັງຫລາຍຢ່າກະທຳຍັງກຳອັນເປັນບາບຮ້າຍດັ່ງກູນີ້ເທີ້ນ ກູໄດ້ລັກໄກເອົານາແມ່ຫມ້າຍ ກູກໍໄດ້ຍ້າຍເອົາຄັນນາແມ່ຫມ້າຍ ກູກະທຳກຳສັນນີ້ ກໍເປັນບາບຮ້າຍກູກໍໄດ້ເກີດເປັນເຜດສັນນີ້ແລ ສ່ວນວ່າຕົນພະຍາຄັນວ່າຕາຍແລ້ວ ກໍໄດ້ເປັນເຜດ ແທ່ງຄຳອັນນັ້ນລຸກເປັນແປວໄຫມ້ປາກຢູ່ ເປັນທຸກຂະເວດທະນາມາກນັກ ເກີງຍາມທ່ຽງຄືນກໍມາຮ້ອງທົ່ວເມືອງວ່າ ຕັ້ງແຮກແຕ່ນີ້ເມືອຫນ້າ ຊາວເມືອງທັງຫລາຍເປັນຕົ້ນວ່າເສນາອາມາດ ນັກປາດປະໂຣຫິດທັງຫລາຍ ຝູງເປັນຂຸນພິຈາລະນາຕັດກ້ອຍຄຳອັນໃດໃຜຢ່າໄດ້ເຫັນແກ່ສິນຈ້າງທ່ານເປັນດັ່ງກູນີ້ເທີ້ນ ວ່າດັ່ງນີ້ແລ ເມື່ອນັ້ນຊາວບ້ານຊາວເມືອງທັງຫລາຍໄດ້ຍິນຄຳດັ່ງນີ້ແລ້ວ ກໍສະດຸ້ງຕົກໃຈກົວມາກນັກ ເຫດວ່າເຂົາໄດ້ຍິນຍັງສຽງຜີເຜດນັ້ນເປັນສຽງນ້ອຍສຽງເຢັນມາກນັກແລ ຄຳສອນຜີເຜດພະຍານັ້ນ ກໍລວດເປັນຄຳສອນຄົນຝູງຕັດຄຳຫັ້ນແລ ໂລລຸພານກ່າວວ່າ ດູລາເຈົ້າທັງຫລາຍ ເຫດໂລພະເກີດໃນໃຈລັກໄກເອົານາທ່ານ ແລະ ຍ້າຍຄັນນາທ່ານນີ້ເປັນບາບປະກຳອັນຫນັກແລ ແລະ ກະທຳບາບອັນໄຫມແມ່ຫມ້າຍຜູ້ຫາໂທດບໍ່ໄດ້ນັ້ນບຸກຄະລະຜູ້ໃດກະທຳກຳສັນນີ້ ເປັນບາບອັນຫນັກດາຍ ເຈົ້າທັງຫລາຍຢ່າໄດ້ກະທຳເທີ້ນ ໂລລຸພານພໍ່ຄ້າກວຽນ ສັ່ງສອນຊາວບ້ານຊາວເມືອງທັງຫລາຍ ດັ່ງກ່າວມາຮອດນີ້ແລ ເມື່ອນັ້ນຊາວບ້ານຊາວເມືອງທັງຫລາຍ ເຂົາໄດ້ຍິນຕຳນານນິທານອັນນີ້ແລ້ວ ເຂົາກໍຊື່ນຊົມຍິນດີ ຊູ່ບ້ານຊູ່ເມືອງແລ ແລະເມືອງນັ້ນບູຊາ ແລະພັນຄຳແລ ແລະບ້ານນັ້ນບູຊາ ແລະຮ້ອຍຄຳແລ ເຈົ້າອາມັດຕະກຸມານອຸບປະຣາດ ຊັກຕຳນານນິທານອັນນີ້ມາປຽບທຽມແລ ດູລາເສນາອາມາດ ຕຳນານນິທານອັນນີ້ອາຈານເຈົ້າທັງຫລາຍຮູ້ແຕ່ບູຮານ ບຸບເພ ເມື່ອພານແຮກໃຫ້ເປັນບ້ານເປັນເມືອງຈິ່ງກ່າວສືບໆມາໄວ້ໃຫ້ເປັນທີ່ທຽມແກ່ເສນາອາມາດທັງຫລາຍ ຝູງຈັກພິຈາລະນາກ້ອຍຄຳອັນນັ້ນແລ ດູລາເສນາທັງຫລາຍ ກະທຳສັນນີ້ເຫດໂລພະມາກນັກແລ ຄຳສັນນີ້ໄວ້ເປັນມູລະແທ່ງອັນລັກໄກເອົານາທ່ານກໍດີ ລັກແດນບ້ານແດນເມືອງທ່ານກໍດີ ຫາກເປັນທີ່ຄຽດຜິດໃຈແທ່ງພະຍານາກເປັນທີ່ຊັງແທ່ງອາຮັກເມືອງທັງຫລາຍ ເຂົາກໍກະທຳໃຫ້ຈິບຫາຍຕາຍເປັນດັ່ງພະຍາ ອັນຕັດຄຳໂລລຸພານລັກໄກເອົານາແມ່ຫມ້າຍ ແລະຍ້າຍຄັນນານັ້ນແລ ເຈົ້າອາມັດຕະອຸບປະຣາດ ຊັກຕຳນານນິທານອັນນີ້ມາກ່າວໄວ້ ໃຫ້ເປັນທີ່ທຽມແກ່ເສນາແລະນັກປາດທັງຫລາຍແລ້ວ ເຈົ້າຈິ່ງຕັດຄຳພໍ່ນາຜູ້ນັ້ນວ່າ ໃຫ້ເອົາໄກມັນລັກໄກນາທ່ານນັ້ນມາຊັ່ງດູຫນັກເທົ່າໃດ ໃຫ້ມັນເອົາຄຳມາຊັ່ງໃຫ້ຫນັກທໍ່ນັ້ນມາເປັນສິນໄຫມແກ່ເຈົ້ານາຜູ້ນັ້ນແລ ຈິ່ງສັ່ງສອນຜູ້ລັກໄກນາທ່ານນັ້ນວ່າ ແຕ່ນີ້ເມືອຫນ້າມຶງຢ່າໄດ້ກະທຳສັນນີ້ເທີ້ນ ເປັນການອັນບໍ່ດີເປັນບາບແທ້ດາຍວ່າດັ່ງນີ້ ເຈົ້າອາມັດຕະອຸບປະຣາດຕັດຄຳສັນນີ້ຊອບບູຮານມາແຕ່ກ່ອນແລ ເທວະດາກໍຍິນດີມາກນັກແລ້ວ ຈິ່ງພາຍດອກໄມ້ທິ..

ລີງມາບູຊາບັດດຽວນັ້ນໃຫ້ເປັນສັກຂີແກ່ຄົນທັງຫລາຍ ເຂົາກໍວັນນະນາຍ້ອງຍໍດ້ວຍຄຳສາທຸການ
ທຸກແຫ່ງ ວ່າເຈົ້າອາມັດຕະອຸບປະຣາດຕັດຄຳສັນນີ້ຊອບແລ ເຈົ້າກໍພິຈາລະນາກັບດ້ວຍອາມາດທັງ
ຫລາຍຝູງພິຈາລະນານັ້ນວ່າດັ່ງນີ້ ດູລາເຈົ້າທັງຫລາຍ ແຕ່ນີ້ເມືອໜ້າ ຜູ້ໃດລັກໄກ່ເອົານາທ່ານ
ສັນນີ້ ກໍໃຫ້ໃສ່ສິນໄໝໜັກເກົ່າອັນມັນລັກໄກ່ເອົານາທ່ານ ມາເປັນສິນໄໝໃຫ້ແກ່ເຈົ້ານາ ຊອບ
ແລ ຜິວ່າຜູ້ໃດເຫັນເຫືອກນາທ່ານດີງາມພອຍເລົ່າໄປໄກລອງຫລິ້ນດູ ວ່າດັ່ງນີ້ກໍດີ ກໍບໍ່ດີດາຍ ບໍ່
ຄວນແທ້ແລ ຜິວ່າເຈົ້ານາບໍ່ຍອມໃຫ້ແປງຂວັນເຈົ້ານາຕາມໂບຮານຊອບແລ ຜິວ່າຜູ້ໃດຈັກໄກ່ນາ
ມັນບໍ່ຮູ້ຈັກແດນນາມັນແຈ້ງດັ່ງນັ້ນ ຍັງມີບຸກຄະລະຜູ້ໜຶ່ງ ກໍບໍ່ຮູ້ແຈ້ງເລົ່າມາກະທຳຕີນເປັນດັ່ງຮູ້ນັ້ນ
ແລ້ວມາກະທຳເຊິ່ງກັນວ່າ ມຶງຈົ່ງໄກ່ໄຮ່ນີ້ໄປເທີ້ນວ່າດັ່ງນັ້ນ ຊາຍຜູ້ນັ້ນກໍໄປໄກ່ນາທີ່ນັ້ນ ຕາມຄຳ
ມັນບອກແທ້ ເມື່ອພາຍລຸນຈິ່ງຮູ້ວ່າບໍ່ແມ່ນດັ່ງນັ້ນກໍດີ ຜິເຈົ້ານາບໍ່ຍອມຈັກໄໝໃຫ້ຊັ່ງດູໄກ່ໜັກທໍ່
ໃດໃຫ້ປູນເປັນສີ່ສ່ວນ ໃຫ້ຜູ້ໄກ່ນາກັບຜູ້ບອກນັ້ນໃຊ້ສ່ວນໜຶ່ງ ໃຫ້ຂາເສັຍທໍ່ກັນຊອບແລ ຜິວ່າຂາ
ພ້ອມກັນກອງເຈົ້ານາ ພອຍເລົ່າບໍ່ແພ້ເຈົ້ານາດັ່ງນັ້ນ ໃຫ້ຂາໃຊ້ສອງສ່ວນໃຫ້ເສັຍທໍ່ກັນຊອບແລ
ຜິວ່າບໍ່ຮູ້ແທ້ກໍ່ໃສ່ໃຈວ່ານາຕີນແທ້ ແລະໄດ້ໄກ່ນາທ່ານດັ່ງນັ້ນ ເມື່ອເຈົ້ານາໄປກ່າວບອກມັນ ມັນ
ກໍບໍ່ກອງເຈົ້ານາ ກໍຢ່າວ່າສັ່ງແກ່ກັນເທີ້ນ ເຫດວ່າມັນບໍ່ຮູ້ ມັນກໍໃສ່ໃຈວ່າແມ່ນນາມັນແທ້ ມັນຈິ່ງ
ໄດ້ໄກ່ດາຍ ມັນບໍ່ໄດ້ໃສ່ໃຈລັກແລ ເຈົ້ານາມາຫວງມັນກໍບໍ່ກອງແລະບໍ່ເປັນໂທດເພື່ອດັ່ງນັ້ນແລ
ນັກປາດເຈົ້າທັງຫລາຍກໍວ່າ ສະກະສັນຍາຫາໂທດບໍ່ໄດ້ແລ ທອມດ້ວຍທຳ ແລະ ຕຳນານໂບຮານ
ມີສັນນີ້ແລ ໃນກາລະຍາມນັ້ນ ຄົນທັງຫລາຍກໍຍັງສຳຣິດທີເປັນດີມາກນັກແລ ແຕ່ນີ້ເມື່ອໜ້າເສນາ
ອາມາດນັກປາດທັງຫລາຍ ຝູງພິຈາລະນາກ້ອຍຄຳ ໃຫ້ຫລິງດູກາລະຄົນເປັນດີ ແລະຂະໜອດນັ້ນ
ເທີ້ນ ກ່າວຕຳນານລັກໄກ່ນາທ່ານ ແລະ ໄໝແມ່ໜ້າຍຍ້າຍຄືນນາ ກໍແລ້ວທໍ່ນີ້ແລ.

ທີ່ນີ້ຈັກກ່າວ ຕຳນານອຸບປະຣາດຣາຊະບຸດ ຕັດຄຳສອງຄົນຊິງກັນ ເອົາລູກກັນແລ ນິຍາຍ
ມີສັນນີ້ ຍັງມີມານະວະຜູ້ໜຶ່ງ ຊື່ວ່າ ຈິດຕະມານະວະ ມັນກໍມີລູກຍິງນ້ອຍຜູ້ໜຶ່ງເກີດມາໄດ້ສີ່ປີ
ແມ່ຕາຍເສັຍ ຍັງແຕ່ຈິດຕະມານະວະຜູ້ເປັນພໍ່ຫັ້ນແລ ມັນຈັກໄປຄ້າ ມັນກໍເອົາລູກມັນໄປຝາກໄວ້
ນຳປູ່ຍ່າຕານາຍ ແລ້ວມັນກໍເດີນໄປຄ້າໃນນິຄົມຕ່າງໆ ກໍມີແລ ແຕ່ນັ້ນຍັງມີຊາຍຜູ້ໜຶ່ງຕະເດີນມາ
ຄ້າ ເກິງບ້ານອັນຈິດຕະມານະວະເອົາລູກມາຝາກໄວ້ນັ້ນ ຊາຍຜູ້ນັ້ນເຫັນລູກຈິດຕະມານະວະຜູ້ນັ້ນ
ມັນກໍລັກເອົາເມືອເປັນລູກມັນຫັ້ນແລ ເມື່ອຈິດຕະມານະວະເມືອຮອດເຮືອນແລ້ວ ບໍ່ເຫັນລູກມັນ
ມັນຖາມຫາລູກມັນເຊິ່ງປູ່ຍ່າຜູ້ນ້ອຍນັ້ນ ປູ່ຍ່າຈິ່ງວ່າລູກເຈົ້າເສຍແລ້ວ ວ່າດັ່ງນັ້ນ ຄຳອັນນີ້ກໍປາກົດ
ວ່າເສັຍລູກຈິດຕະມານະວະແທ້ຫັ້ນແລ ຈິດຕະມານະວະຫາລູກບໍ່ໄດ້ມັນກໍເກິງຄຳທຸກຂະເວດທະນາ
ມາກນັກແລ ຢູ່ບໍ່ນານທໍ່ໃດຈິດຕະມານະວະເລົ່າໄປຄ້າ ມັນກໍໄປເກິງບ້ານຜູ້ລັກລູກມັນນັ້ນ ມັນກໍ
ເຫັນລູກມັນແລ້ວມັນກໍຖາມຊາຍຜູ້ນັ້ນວ່າ ດູລາສະຫາຍ ຍິງນ້ອຍຜູ້ນີ້ຫາກແມ່ນລູກຂ້າແທ້ດາຍ ສະ
ຫາຍເຈົ້າໄດ້ທີ່ໃດຈາ ຊາຍລັກກ່າວວ່າຍິງນ້ອຍຜູ້ນີ້ຫາກແມ່ນລູກກູດາຍ ສະຫາຍຢ່າວ່າສັນນີ້ເທີ້ນ
ຮອຍວ່າແປກຕາສະຫາຍແລ ຈິດຕະມານະວະກ່າວວ່າ ຫາກແມ່ນລູກກູແທ້ແລມຶງໄດ້ທີ່ໃດກໍວ່າມາ
ເທີ້ນ ຊາຍລັກກ່າວວ່າ ສະຫາຍຜູ້ໄປ້ ມຶງຢູ່ບ້ານໃດເມືອງໃດກູກໍບໍ່ຮູ້ມຶງ ທໍ່ມາຄ້າກິນດອກດາຍ
ເຫັນລູກກູພອຍເລົ່າມາວ່າລູກຕົວສັງບໍ່ຄວນແທ້ດາຍ ເມື່ອນັ້ນຈິດຕະມານະວະກ່າວວ່າ ດູລາຊາຍຜູ້

ກ່ອຍຮ້າຍ ມຶງຕະເດີນໄປຄ້າບ້ານກູພຸ້ນ ແລ້ວລັກເອົາລູກກູມາພີ້ແທ້ດາຍວ່າດັ່ງນັ້ນ ຂາບໍ່ຍອມກັນ ຈິ່ງພາກັນໄປໃຫ້ເສນາໄຕ່ ເສນາກໍພິຈາລະນາດູເຫດ ອັນຂາທັງສອງກລອງກັນແຈ້ງແລ້ວ ເສນາກໍເອົາຍິງນ້ອຍຜູ້ນັ້ນມາໄວ້ກ່ໍາກາງແຫ່ງຊາຍທັງສອງນັ້ນ ດ້ວຍອະທິບາຍວ່າ ມັນແມ່ນລູກໃຜມັນຫາກຈະໄປຫາຜູ້ນັ້ນວ່າດັ່ງນັ້ນ ຍິງນ້ອຍຜູ້ນັ້ນມັນພັດພາກພໍ່ມັນສ້ຽງເຈັ້ລະການນານນັກ ມັນກໍລືມພໍ່ມັນ ມັນກໍເຄີຍເຫັນແຕ່ຊາຍຜູ້ນັ້ນ ມັນກໍຮັກກໍແກວ່ນຊາຍຜູ້ລັກນັ້ນ ມັນໃສ່ໃຈວ່າເປັນພໍ່ແຫ່ງມັນແທ້ ມັນກໍແລ່ນໄປຫາຊາຍຜູ້ນັ້ນ ແລ້ວກໍນັ່ງຢູ່ໃນຕັກທັ້ນແລ ເມື່ອນັ້ນເສນາທັງຫລາຍເຫັນຜິດຕານັກ ຈັກຮີບຕັດຄໍາດ້ວຍງ່າຍກໍບໍ່ໄດ້ຈິ່ງຄະນຶງໃນໃຈວ່າ ເຮົາຈັກເອົາຍິງນ້ອຍຜູ້ນີ້ ເມືອຫາປູ່ຍ່າພຸ້ນແທ້ ດັ່ງນັ້ນຝູງເຂົາເພື່ອນບ້ານເພື່ອນເມືອງນັ້ນ ເຂົາກໍຈັກວ່າລູກຫລານແຫ່ງເຂົາແທ້ທັ້ນແລ ເມືອຈັກເອົາຍິງນ້ອຍຜູ້ນີ້ໄວ້ຊ້ອງຫນ້າປູ່ຍ່າແຫ່ງມັນ ດ້ວຍຄໍາໃສ່ໃຈວ່າ ແມ່ນປູ່ຍ່າມັນແທ້ມັນຫາກຈັກເຂົ້າໄປຫາທັ້ນແລ ດ້ວຍທີ່ແທ້ ຍິງນ້ອຍຜູ້ນີ້ກໍບໍ່ຫລ້າງວ່າຈັກເຂົ້າໄປຫາປູ່ຍ່າແຫ່ງມັນແລ ເສນາກໍຖາມຊາຍຜູ້ລັກນັ້ນກັບທັງເພື່ອນບ້ານ ຍາຕິແຫ່ງຊາຍຜູ້ລັກນັ້ນ ເຂົາກໍໃຫ້ສໍາຄັນແກ່ກັນເປັນອັນຫມັ້ນນັກ ເຂົາກໍພ້ອມກັນອໍາຊູ່ຄືນທັ້ນແລ ເສນາບໍ່ອາດຈັກຮູ້ໄດ້ ເສນາຈິ່ງກ່າວວ່າ ຄໍາຫາສັກຂີບໍ່ໄດ້ສັນນີ້ ແຕ່ກ່ອນເສັຍຂອງຫາວິນຍານບໍ່ໄດ້ ກໍທໍ່ຫລິງດູຜູ້ມີສີນ ແລະບໍ່ມີສີນນັ້ນດາຍ ອັນນີ້ເສັຍຂອງອັນມີວິນຍານສັນນັ້ນ ເຮົາກໍຫລິງດູຜູ້ມີສີນ ແລະບໍ່ມີສີນ ຂາກໍສະເຫມີກັນເສັຍ ເຮົາຈັກຕັດກໍບໍ່ໄດ້ແລ ເຮົາຄວນເອົາຄໍາອັນນີ້ເມືອໄຫວ້ພະຍາເຈົ້າ ແລະເຈົ້າອຸບປະຮາດກ່ອນເທີ້ນ ວ່າດັ່ງນີ້ແລ້ວ ຈິ່ງພາກັນໄປໄຫວ້ພະຍາມູລະຕັນໄຕ ກ່າວກິດຈະການທັງມວນແກ່ພະຍາໆກ່າວວ່າ ສູຈິ່ງເອົາຄໍາອັນນີ້ໄປໃຫ້ລູກກູເຈົ້າອຸບປະຮາດຕັດເທີ້ນ ເສນາທັງຫລາຍກໍເອົາຂາທັງສອງໄປໄຫວ້ເຈົ້າອຸບປະຮາດຮາຊະບຸດ ກ່າວກິດຈະການອັນຂາຜິດກັນນັ້ນຊູ່ອັນທັ້ນແລ ເມື່ອນັ້ນຄົນທັງຫລາຍກ່າວວ່າ ບັດນີ້ເຈົ້າອຸບປະຮາດຈັກຕັດຄໍານີ້ຊອບແທ້ດັ່ງນັ້ນ ເຮົາກໍເພິ່ງຈໍາໄວ້ແທ້ແລ ເມື່ອນັ້ນເຈົ້າອຸບປະຮາດຮາຊະບຸດກ່າວວ່າ ດູລາເສນາທັງຫລາຍ ຊາຕິເສັຍຂອງອັນມີວິນຍານ ແລະຫາວິນຍານບໍ່ໄດ້ ແລະຫາສັກຂີບໍ່ໄດ້ສັນນີ້ ແລະຈັກເອົາສິ່ງມາຕັດບໍ່ໄດ້ແລ ເພິ່ງເອົາໂລກະຊາຕາມາຫອມແລ້ວ ແລະຕັດຄວນແລວ່າດັ່ງນີ້ແລ້ວ ເຈົ້າອຸບປະຮາດຈິ່ງຖາມຊາຍຜູ້ລັກນັ້ນວ່າ ດູລາທ່ານຊາຍຍິງນ້ອຍຜູ້ນີ້ມຶງວ່າເປັນລູກມຶງແທ້ ມຶງຈິ່ງກ່າວບອກປີເດືອນວັນຍາມອັນເກີດແຫ່ງລູກມຶງມາແກ່ກູເທີ້ນ ຊາຍລັກຜູ້ນັ້ນມັນກໍພາງຄໍາແລ້ວກ່າວຕາມມັກແຫ່ງມັນ ເຈົ້າອຸປະຮາດກໍໃຫ້ເອົາຄໍາມັນວ່ານັ້ນຊູ່ອັນທັ້ນແລ ເຈົ້າອຸປະຮາດເລົ່າຖາມຊາຍຈິດຕະມານະວະຜູ້ເປັນພໍ່ຍິງນັ້ນສັບດອອກັນນັ້ນແລ ຈິດຕະມານະວະກ່າວປີເດືອນວັນຍາມອັນເກີດມາແຫ່ງລູກຕົນນັ້ນ ແກ່ເຈົ້າອຸບປະຮາດຊູ່ອັນທັ້ນແລ ເຈົ້າອຸບປະຮາດ ກໍກົດເອົາຄໍາມັນໄວ້ຊູ່ອັນ ແລ້ວຈິ່ງໃຫ້ຫມໍຫູຣາມາທວາຍຊາຕາດູ ເພື່ອໃຫ້ຮູ້ອັນຜິດອັນແມ່ນ ອັນມີເຄາະແລະມີໂຊກ ໃນຊາຕາສອງອັນທັ້ນແລ ຫມໍຫູຣາກໍທວາຍຕາມປີວັນຍາມແຫ່ງຊາຍລັກກ່າວນັ້ນ ຫມໍຫູຣາທວາຍວ່າ ຊາຕາກົງນີ້ ມີໂຊກແຕ່ຫລັງພຸ້ນມາຕາບຕໍ່ເທົ້າບັດນີ້ແລ ວ່າດັ່ງນີ້ ເລົ່າພັດທວາຍຕາມປີເດືອນວັນຍາມ ອັນຈິດຕະມານະວະວ່ານັ້ນ ຕາມດັ່ງຊາຕາກົງນີ້ແຕ່ຫລັງມາເທົ່າບັດນີ້ ມີເຄາະນັກຮອຍວ່າ ພັດພໍ່ແມ່ປູ່ຍ່າຕານາຍລູກເມັຍບໍ່ຢ່າຊະແລ ແຕ່ນີ້ເມື່ອຫນ້າຈັກຢູ່ສຸຂະສໍາຮານມີລາບພະ ແມ່ນວ່າເສັຍກໍຈັກໄດ້ຄືນມາດັ່ງເກົ່າ ແມ່ນວ່າພັດພໍ່ແມ່ປູ່ຍ່າຕານາຍກໍດີ ກໍຈັກຄືນມາເຫັນພໍ່ແມ່ປູ່ຍ່າຕານາຍມັນແລ ຊາຕາກົງນີ້ ເມື່ອນ້ອຍທຸກ ເມື່ອແກ່ດີດາຍ ຫມໍຫູຣາທວາຍຕາມປີເດືອນ

ວັນຍາມນັ້ນ ກໍກຶກຄຳຈິດຕະມານະວະນັ້ນແລ ທວາຍຕາມຊາຍລັກຜູ້ນັ້ນ ກ່າວກໍດູຜິດຊູ່ອັນແລ ເຈົ້າອຸບປະຣາດເອົາໂລກະຊາຕາ ຫມໍຫູຣາມາທວາຍຕາມປີເດືອນ ວັນຍາມອັນຈິດຕະມານະວະ ກ່າວນັ້ນ ກໍດູຊອບດູແມ່ນຊູ່ອັນສັນນີ້ມາເປັນສັກຂີແລ້ວ ເຈົ້າຈຶ່ງຕັດວ່າ ດູລາເສນາອາມາດທັງຫລາຍ ມັນຜູ້ເປັນເຈົ້າບ້ານກ່າວປີເດືອນວັນຍາມນີ້ ບໍ່ໃຊ່ພໍ່ມັນດາຍ ເຫດວ່າຫມໍຫູຣາທວາຍບໍ່ແມ່ນສັກອັນແລ ມັນຜູ້ນີ້ຫາກແມ່ນໂຈນ ລັກເອົາລູກທ່ານແທ້ດີຫລີແລ ດັ່ງຈິດຕະມານະວະນີ້ ມັນວ່າອັນໃດກໍມີດັ່ງຄຳມັນວ່ານັ້ນຊູ່ອັນແລ ເຫດວ່າຫມໍຫູຣາທວາຍຕາມປີເດືອນວັນຍາມກໍກຶກຊູ່ປະການແລ ມັນຜູ້ນີ້ເປັນພໍ່ແທ່ງຍິງນ້ອຍຜູ້ນີ້ແລ ວ່າດັ່ງນີ້ແລ້ວ ເຈົ້າຈຶ່ງຈາລະຈາກັບດ້ວຍເສນາທັງຫລາຍວ່າ ເມື່ອເຮົາຈັກໃສ່ສິນໄຫມແກ່ມັນດັ່ງນັ້ນ ຄົນທັງຫລາຍຈັກມັກເປັນໂຈນລັກເອົາລູກທ່ານຜູ້ອື່ນຫລາຍເທື່ອແລ ເຫດດັ່ງນັ້ນ ເພິ່ງຕັດຕີນສິນມືມັນເສັຍຄວນແລວ່າດັ່ງນີ້ແລ ກໍໃຫ້ຕັດຕີນສິນມືມັນເສັຍແລ້ວ ກໍໃຫ້ຕີກອງປ່າວທົ່ວທັງເມືອງດ້ວຍຄຳວ່າ ແຕ່ນີ້ເມືອຫນ້າຊາວບ້ານຊາວເມືອງທັງຫລາຍ ຜູ້ຍິງກໍດີ ຜູ້ຊາຍກໍດີ ໃຜຢ່າໄດ້ລັກລູກທ່ານສັນນີ້ ຈັກຕັດຕີນສິນມືເສັຍດັ່ງດອວນີ້ແລ ເຈົ້າອຸບປະຣາດ ຕັດຄຳສັນນີ້ ສຸຄະຕິແລ.

ບັດນີ້ຈັກກ່າວ ຕຳນານອັນພະຍາມູລະຕະນະຄອນ ແລະເສນາອາມາດ ຕັດຄຳຜິດບໍ່ຊອບທຳ ແລະເຫັນໂທດຕໍ່ຫນ້ານັ້ນ ຫາກກ່າວສືບໆມາ ແຕ່ເມື່ອພິມຫາກແຣກໃຫ້ບ້ານເມືອງ ເປັນທ້າວພະຍາເສນາວັນນັ້ນແລ ໃນກາລະເມື່ອນັ້ນ ຍັງມີເມືອງອັນຫນຶ່ງ ຊື່ ມູລະຕະນະຄອນແລ ຍັງມີສອງສະຫາຍໄປຄ້າຮ່ວມທາງກັນ ໄດ້ຄຳຄົນລະພັນຄຳ ແລ້ວພາກັນມາຮອດສາລານອກວຽງອັນຫນຶ່ງ ເມື່ອກາງຄືນສະຫາຍຜູ້ຫນຶ່ງພອຍລັກເອົາຄຳສະຫາຍພັນນັ້ນໄປເສັຍແລ ສະຫາຍເຈົ້າຄຳນັ້ນກໍຮູ້ວ່າ ສະຫາຍມັນລັກເອົາຄຳມັນແລ້ວ ເມື່ອວັນລຸນຮຸ່ງເຊົ້າ ສະຫາຍຜູ້ລັກນັ້ນ ມັນກໍຊວນຫນີມັນກໍບໍ່ຫນີ ມັນຈຶ່ງກ່າວວ່າຄຳກູເສັຍແລ້ວ ຣາຈັກນອນສາລາທີ່ນີ້ສັກສອງຄືນ ພໍຫາຄົນຜູ້ລັກຄຳໄດ້ກ່ອນ ວ່າດັ່ງນີ້ ໃນຄືນກ້ອນສອງນັ້ນ ຊາກໍນອນໃນສາລາ ທີ່ນັ້ນແທ້ ມາເຖິງຍາມເມື່ອມັນເສັຍຄຳນັ້ນມັນກໍເຫັນສະຫາຍຜູ້ມັນລັກຄຳນັ້ນນອນຫລັບຢູ່ ມັນຈຶ່ງຍອງໄປລັກເອົາຄຳສະພາຍຜູ້ມັນລັກເອົາຄຳກ່ອນນັ້ນພັນຫນຶ່ງແລ ຊາທັງສອງຄົນກໍລັກຄຳເຊິ່ງກັນທັ້ນແລ ຮຸ່ງເຊົ້າມາຊາກໍຜິດກັນ ຊູ່ຄົນຊູ່ວ່າເສັຍຄຳກູວ່າດັ່ງນັ້ນ ຊາບໍ່ຍອມກັນຈຶ່ງພາກັນໄປໃຫ້ເສນາໄຕ່ ເສນາກໍຮູ້ຊາລັກຄຳກັນ ແລະຄົນແລະພັນໂທດຊາກໍມີສະເຫມີກັນແລ ວ່າດັ່ງນີ້ແລ້ວ ຈຶ່ງໃຫ້ຊາຄືນຄຳແກ່ກັນແລ ສ່ວນວ່າໂທດອັນຊາລັກນັ້ນເສນາຈຶ່ງວ່າໂທດມີທໍ່ກັນ ເຫດວ່ານ້ຳຄຳຊາທໍ່ກັນ ຜິວ່າຊາບໍ່ຄືນແກ່ກັນເພິ່ງໄຫມສອງຕໍ່ນອກຄຳອັນຊາລັກກັນນັ້ນແລ ທີ່ນີ້ຊາຄືນແກ່ກັນແລ້ວສັນນີ້ ໄຫມເຄິ່ງຫນຶ່ງຄວນແລ ຜິວ່າໂທດອັນຫນັກອັນເບົາເລົ່າໄຫມສັນນີ້ບໍ່ຄວນແລ ໂທດອັນນີ້ຫນັກແທ່ງຜູ້ຫນຶ່ງດາຍວ່າດັ່ງນີ້ ເມື່ອນັ້ນເທວະດາກໍທອດກ່ານໄຟແດງລົງມາໃພະປາກຝູງເສນາຝູງພິຈາລະນາຄຳແລ ເຂົາກໍເມືອເຮືອນແທ່ງເຂົາ ໄກລໂຮງກວ້ານທີ່ພິຈາລະນາໄດ້ໂຍຊະນະຫນຶ່ງ ພາຍລຸນເຂົາກໍຊ້ຳເມືອສູ່ໂຮງພິຈາລະນາຄຳແລ ເທວະດາກໍຊ້ຳທອດກ່ານໄຟລົງໄຫມ້ປາກ ແລະເສື້ອຜ້າເນື້ອຕົນເຂົາກໍເປັນອັນລຳບາກຍິ່ງນັກ ເຂົາກໍເປັນອັນເນົ່າອັນເຫມັນ ໄດ້ທຸກວັນທຸກຄືນກິນເຂົ້າ ແລະກິນນ້ຳກໍບໍ່ໄດ້ ເປັນທຸກຂະເວດທະນາມາກນັກ ຄົນທັງຫລາຍກໍເມືອກ່າວແກ່ພະຍາແລ ພະຍາກໍກ່າວວ່າ ຮອຍທີ່ເຂົາຕັດຄຳບໍ່ຊອບເພິ່ງມີ

ຊະແລ ພະຍາກໍໃຫ້ຊຸມນຸມມາຍັງເສນາອາມາດຝູງພິຈາລະນາຄໍາ ຊໍ້າໃຫ້ພິຈາລະນາດູທັ້ນແລ ພະຍາຮູ້ເຫດດັ່ງນັ້ນແຈ້ງແລ້ວ ຈິ່ງກ່າວວ່າເຂົາກໍໄຕ່ດູໂທດຊອບສັນນີ້ ກໍຫາກຊອບແທ້ແລ ເຫດວ່າຂາທັງສອງແຂ່ງລັກເອົາຄໍາກັນ ຄືນລະພັນຄໍາດັ່ງນັ້ນ ກໍຫາກໃຫ້ຂາຄືນແກ່ກັນແລ້ວດັ່ງນັ້ນ ໂທດຂານັ້ນກໍຫາກໄໝຄືນລະພັນຄໍາ ເຂົາຕັດຄໍາສັນນີ້ກໍດູຊອບແລ ເຫດອັນເປັນໂທດແຫ່ງເຂົານັ້ນ ຣອຍວ່າເຂົາຫາກໍ່ຜິດກວ້ານອັນໃດອັນໜຶ່ງບໍ່ຢ່າຊະແລວ່າດັ່ງນັ້ນ ເມື່ອນັ້ນເທວະດາກໍຊໍ້າມີຄວາມຄ້ອດມາກນັກ ກໍທອດກ່ານໄຟແດງລົງມາໄໝ້ປາກແຫ່ງເຂົາທັງພະຍາທັ້ນແລ ເມື່ອນັ້ນຄົນທັງຫລາຍຝູງຢູ່ໃນເມືອງນັ້ນ ໃພກໍບໍ່ອາດຈັກຕັດຜໍາ ແຫ່ງຂາທັງສອງຄົນນັ້ນໄດ້ສັກຄົນ ດ້ວຍຄໍາວ່າ ຜູ້ນີ້ມີໂທດແຄວນໜັກ ຜູ້ນີ້ມີໂທດແຄວນເບົາແລ ວ່າດັ່ງນີ້ບໍ່ໄດ້ສັກຄົນແລ ເມື່ອນັ້ນພະຍາກໍເປັນອັນລໍາບາກມາກນັກກໍຈິ່ງໄປໄຫວ້ເຈົ້າຣັດສີ ອັນຈໍາສິນຢູ່ໃນສວນອຸດທິຍານແຫ່ງຕົນນັ້ນ ພະຍາກໍກ່າວກິດຈະຄໍາອັນຂາສອງສະຫາຍລັກຄໍາກັນຄືນລະພັນ ແກ່ເຈົ້າຣັດສີຊູ່ປະການທັ້ນແລ ເມື່ອນັ້ນເຈົ້າຣັດສີຮູ້ກິດຈະຄໍາແຈ້ງແລ້ວ ເຈົ້າຣັດສີຈິ່ງກ່າວວ່າມະຫາຣາຊະ ເຈົ້າຈິ່ງເອົາຄໍາອັນນັ້ນມາດູເທີ້ນ ພະຍາກໍໃຫ້ເອົາຄໍາຂານັ້ນມາໃຫ້ເຈົ້າຣັດສີດູທັ້ນແລ ເຈົ້າຣັດສີເຫັນຄໍາແລ້ວ ຈິ່ງຖາມພະຍາວ່າ ໃນເມື່ອຈັກຕັດຄໍານັ້ນ ມະຫາຣາຊະເຈົ້າຍັງໄດ້ໃຫ້ຊ່າງຄໍາມາເຊັດດູຄໍານັ້ນບໍຈາ ພະຍາກ່າວວ່າ ຂ້າແກ່ເຈົ້າຣັດສີຜູ້ຂ້າທັງຫລາຍບໍ່ໄດ້ໃຫ້ຊ່າງຄໍາມາເຊັດດູແລ ເຈົ້າຣັດສີກ່າວວ່າ ຜິຈັກໃຫ້ຊອບແທ້ດັ່ງນັ້ນ ມະຫາຣາຊະເຈົ້າ ຈິ່ງໃຫ້ຊ່າງຄໍາມາເຊັດຄໍານັ້ນເທີ້ນ ເມື່ອນັ້ນພະຍາໃຫ້ຊ່າງຄໍາມາເຊັດຄໍານັ້ນແລ້ວ ກໍເອົາມາທອມກັນແລ ຄໍາຜູ້ລັກກ່ອນນັ້ນເປັນຄໍາເນື້ອແປດ ຄໍາຜູ້ລັກລຸນນັ້ນເປັນຄໍາເນື້ອສິບແລ ເຈົ້າຣັດສີຮູ້ແຈ້ງແລ້ວຈິ່ງກ່າວວ່າ ມະຫາຣາຊະເຈົ້າ ແລະ ເສນາອາມາດທັງຫລາຍ ມາຕັດຄໍາສັນນີ້ບໍ່ຊອບແທ້ແລ ເຈົ້າຣັດສີຈັກຕັດຄໍາຕໍນີ້ ເຈົ້າຣັດສີກໍຣາດທະນາເທວະດາທັງຫລາຍ ຜິວ່າຜູ້ຂ້າຕັດຄໍາຕໍນີ້ຍັງຊອບແລ ເທວະດາເຈົ້າທັງຫລາຍຝູງຮັກສາສວນອຸດທິຍານທີ່ນີ້ ຈິ່ງສະແດງອັນໃດອັນໜຶ່ງໃຫ້ເປັນສັກຂີແດ່ເທີ້ນ ວ່າດັ່ງນີ້ແລ້ວ ເຈົ້າຣັດສີຈິ່ງກ່າວວ່າ ດູລາມະຫາຣາດດັ່ງເຮົາຮໍາເພິງດູນີ້ໂທດສະຫາຍຜູ້ລັກລຸນນັ້ນ ແຄວນໜັກມາກດາຍເຫດນໍ້າຄໍາມັນລັກເອົານັ້ນເປັນຄໍາເນື້ອສິບ ທີເປັນໝື່ນເງິນໜຶ່ງແລ ມັນກໍຮູ້ວ່າສະຫາຍຜູ້ຮ້າຍລັກຄໍາມັນກ່ອນແລ້ວ ມັນກໍບໍ່ເພິງວ່າລັກຕອບດາຍ ຜິມັນໃຫ້ເສນາອາມາດ ພິຈາລະນາດູໂທດຕາມຄອງລັກແທ້ດັ່ງນັ້ນ ມັນກໍຈັກໃສ່ສິນໄໝສາມຕໍ່ດາຍທີ່ນີ້ມັນພອຍມາລັກຕອບບໍ່ຄວນແລ ໂທດຜູ້ລັກກ່ອນນັ້ນແຄວນເບົາເພື່ອອັນແລ ເຫດວ່ານໍ້າຄໍາອັນມັນລັກເປັນຄໍາເນື້ອແປດແລ ທີເປັນເງິນແປດພັນເງິນແລ ເຈົ້າຣັດສີໃຫ້ຜູ້ລັກກ່ອນເສັຍທໍ່ຄ່າແປດພັນເງິນແລ ຜິວ່າບໍ່ໄດ້ຂອງເກົ່າຄືນແທ້ ຈັກໄດ້ໄໝສອງຕໍ່ ເປັນໝື່ນຫົກພັນແລ ສວນດັ່ງຜູ້ລັກລຸນນັ້ນເຈົ້າຣັດສີໄໝຕໍ່ໜຶ່ງເປັນໝື່ນເງິນແລ ເຫດວ່າຄໍາອັນມັນລັກນັ້ນ ເປັນຄໍາເນື້ອສິບແລ ຜິວ່າບໍ່ໄດ້ຄໍາເກົ່າຄືນແທ້ ຈັກໄດ້ໄໝສອງຕໍ່ເປັນສອງໝື່ນເງິນແລ ສ່ວນໂທດ ອັນມັນລັກນັ້ນບໍ່ຄວນລັກຕອບກັນດາຍ ເຈົ້າຣັດສີໄໝມັນຫ້າໝື່ນຫ້າພັນເບັ້ຍແລ ເພື່ອວ່າບໍ່ໃຫ້ຄົນໄປລັກຕອບກັນເມືອໜ້າທັ້ນແລ ບຸກຄະລະທັງຫລາຍລັກຂອງກັນ ບໍ່ຄວນລັກຕອບແທ້ດາຍ ເຈົ້າຣັດສີໃຫ້ໄໝຕາມໂທດ ໜັກໂທດເບົາສັນນີ້ ເທວະດາກໍຍິນດີມາກນັກ ກໍຜາຍເຂົ້າຕອກດອກໄມ້ທິບລົງມາບູຊາເຈົ້າຣັດສີວ່າໃຫ້ໄໝຜູ້ລັກລຸນນັ້ນເປັນເງິນຫ້າໝື່ນຫ້າພັນເບັ້ຍ ກໍຈິ່ງໄວ້ທັ້ນກ່ອນເທີ້ນ ດ້ວຍທີແທ້ຜູ້ມີປັນຍາ ກໍເພິ່ງພິຈາລະນາໃຫ້ກໍ່ດາຍ ພະຍາມູລະຕັນໄຕ ກ່າວຕໍານານອັນນີ້ ໃຫ້ເສນາອາມາດທັງຫລາຍຟັງ

ແລ້ວ ຈິ່ງສັ່ງສອນວ່າ ສູທັງຫລາຍຟູງພິຈາລະນາກ້ອຍຄໍາ ໃຫ້ດີຕາມຄໍາເຈົ້າຣັດສີຕັດຕໍນີ້ເທີ້ນ ບໍ່ໄດ້ໄປສູ່ອະບາຍແລ ເຈົ້າຣັດສີຕັດຄໍາສອງຄືນນີ້ດີນັກ ປາກແຫ່ງເສນາອາມາດ ແລະ ປາກແຫ່ງພະຍາກໍຫາຍໄປໃນວັນນັ້ນແລ ທ່ານທັງຫລາຍຈິ່ງຕັດຄໍາໂດຍໄນຍະດັ່ງເຈົ້າຣັດສີຕັດນີ້ເທີ້ນ ພະຍາມູລະຕັນໄຕກ່າວຕໍານານ ອັນພິຈາລະນາແຫ່ງເສນາອາມາດທັງຫລາຍ ຕັດຄໍາຜິດເຫັນໂທດຕໍ່ໜ້າທັນຕາກໍແລ້ວທີ່ນີ້ແລ ແຣກແຕ່ນີ້ເມືອໜ້າເສນາອາມາດທັງຫລາຍ ກໍຕັດກ້ອຍເປັນສຸຄະຕິຊອບນັກ ແລະ ບ້ານເມືອງກໍສຸຂະເສີມດີ ຝົນກໍຈໍາເຣີນຕົກຊອບລະດູ ບ້ານເມືອງຊຸມເຢັນມາກນັກແລ.

ທີ່ນີ້ຈັກກ່າວ ເຈົ້າອາມັດຕະກຸມານ ໄດ້ເປັນເອກຣາດແທນພໍ່ແລ້ວດັ່ງນີ້ ເມື່ອນັ້ນ ທ້າວພະຍາທັງຫລາຍຮ້ອຍເອັດເມືອງ ບໍ່ເຂົ້າມາສູ່ ແລະ ບໍ່ເຂົ້າມານ້ອມນົບຢໍາແຢງຕົນ ດັ່ງເມື່ອພະຍາມູລະຕັນໄຕຕົນພໍ່ຍັງນັ້ນ ເຈົ້າກໍມັກໄຄ່ໃຫ້ທ້າວພະຍາຮ້ອຍເອັດເມືອງມາສູ່ມາຫາຕົນ ດັ່ງເມື່ອພໍ່ຍັງນັ້ນ ກໍຈິ່ງພິຈາລະນາ ຫາຍັງບັນຫາສິບສອງປະການ ອັນຮູ້ແຈ້ງແຫ່ງຄໍາພຸດທະອາຈານເຈົ້າ ອັນກ່າວສືບໆ ມາແຕ່ປະຖົມມະກັບນັ້ນ ໄປສ່ອງແກ່ພະຍາຮ້ອຍເອັດເມືອງນັ້ນແລ ເມືອງພາຫາລະນະຄອນນີ້ ທ້າວພະຍາຕົນໃດໄດ້ສະເຫວີຍບ້ານເມືອງນີ້ແລ້ວຊອບທໍາສິບປະການດັ່ງນັ້ນ ທ້າວພະຍາຕົນນັ້ນ ຈິ່ງໄດ້ເປັນທ້າວພະຍາໃຫຍ່ກວ່າພະຍາຮ້ອຍເອັດເມືອງດາຍ ແຣກແຕ່ເຈົ້າໂຊຕິກະມານະວະ ອັນເປັນລູກວິທຸຣະພານ ມາເປັນລູກພະຍາພາຫາລະນະຄອນນັ້ນ ເມື່ອສັ້ງອາຍຸພະຍາພາຫາລະນະຄອນແລ້ວ ເຈົ້າໂຊຕິກະມານະວະນັ້ນ ໄດ້ສະເຫວີຍຣາດບ້ານເມືອງແທນພໍ່ ກໍຊອບທໍານັກຈິ່ງໄດ້ເປັນພະຍາເອກຣາດອັນເປັນໃຫຍ່ກວ່າທ້າວພະຍາຮ້ອຍເອັດເມືອງທັ້ນແລ ພະຍາຮ້ອຍເອັດເມືອງກໍເຂົ້າມາສູ່ມາຫາ ອ່ອນນ້ອມຊູ່ປະການ ຕາບຕໍ່ເທົ້າເຈົ້າມູລະຕັນໄຕ ໄດ້ມາເປັນລູກພະຍາໂຊຕິກະມານະວະນັ້ນ ເມື່ອຊົ່ວພະຍາໂຊຕິກະມານະວະນັ້ນ ເຈົ້າມູລະຕັນໄຕກໍໄດ້ສະເຫວີຍຣາຊະສົມບັດຕິແທນພໍ່ເປັນເອກຣາດ ທ້າວພະຍາຮ້ອຍເອັດເມືອງນັ້ນ ຍັງເຂົ້າມາສູ່ມາຫາອ່ອນນ້ອມຊູ່ປະການ ຕາບຕໍ່ເທົ່າເຈົ້າອາມັດຕະກຸມານ ໄດ້ມາເປັນລູກພະຍາມູລະຕັນໄຕເອກຣາດ ສຸດຊົ່ວເຈົ້າມູລະຕັນໄຕແລ້ວ ເຈົ້າອາມັດຕະກຸມານໄດ້ສະເຫວີຍຣາຊະການບ້ານເມືອງແທນພໍ່.

ທີ່ນີ້ທ້າວພະຍາຮ້ອຍເອັດເມືອງ ກໍບໍ່ເຂົ້າມາສູ່ມາຫາ ບໍ່ອ່ອນນ້ອມຄົມຣົບເມື່ອດັ່ງພໍ່ຍັງນັ້ນ ເຫດດັ່ງນັ້ນພະຍາອາມັດຕະຣາດ ຈິ່ງໄດ້ຄະນຶງຫາຍັງບັນຫາ ໄປສ່ອງທ້າວພະຍາຮ້ອຍເອັດເມືອງເພື່ອດັ່ງນັ້ນແລ ເຫດທ້າວພະຍາຮ້ອຍເອັດເມືອງບໍ່ມາສູ່ມາຫາດັ່ງເມື່ອພະຍາມູລະຕັນໄຕຍັງນັ້ນຈາແທ້ແລ ອາມັດຕະກຸມານ ອັນເປັນລູກເປັນຫລານເປັນເຫລັນ ແຫ່ງພະຍາຮ້ອຍເອັດເມືອງນັ້ນແລ ເມື່ອພະຍາຕົນພໍ່ນັ້ນ ເອົາທ້າວພະຍາຮ້ອຍເອັດເມືອງ ກັບທັງຣາຊະກຸມາຣີທັງຫລາຍ ມາອຸດສາພິເສກໃຫ້ເປັນເມັຍເຈົ້າອາມັດຕະກຸມານແຕ່ກ່ອນວັນນັ້ນແລ ໃນເມື່ອເຈົ້າອາມັດຕະກຸມານໄດ້ເປັນເອກຣາດແທນພໍ່ນັ້ນ ໃນກາລະຍາມນັ້ນພະຍາຮ້ອຍເອັດເມືອງ ມີມານະໃຫຍ່ ໃສ່ໃຈວ່າດັ່ງນີ້ ສ່ວນດັ່ງພະຍາອາມັດຕະນີ້ ກໍເປັນເອກຣາດແທນພໍ່ແທ້ແລ ທີ່ແທ້ກໍຫາກເປັນຫລານແຫ່ງເຮົາດອກດາຍ ເຮົາບໍ່ຄວນເຂົ້າໄປສູ່ໄປຫາດັ່ງເມື່ອພໍ່ຍັງນັ້ນດາຍ ພະຍາອາມັດຕະເອກຣາດກໍຮູ້ເຫດ ອັນພະຍາຮ້ອຍເອັດເມືອງອັນເປັນລຸງເປັນຕາເບື້ອງເມັຍແຫ່ງຕົນ ມີມານະອັນບໍ່ເຂົ້າມາຫາດັ່ງເມື່ອພະຍາຕົນພໍ່ຍັງນັ້ນ ພະຍາອາມັດຕະເອກຣາດກໍຂຶ່ມເພິງວ່າ ສ່ວນຕົນກູນີ້ກໍເປັນລູກເປັນຫລານເຂີຍ

ແຫ່ງເຂົາແທ້ແລ ກູຈັກມີຄຳຊອດ ແລະໄປຍຸດທະກຳປະຈິນແກ່ເຂົາກໍບໍ່ຄວນແລ ຊາຕິຜູ້ມີປັນຍານີ້ ບໍ່ທ່ອນປະຈິນແພ້ລູງຕາເບື້ອງເມັຍຕົນສັກເທື່ອແລ ອັນນີ້ເປັນທຳມະດາ ແຕ່ກາລະອັນມາເມື່ອກ່ອນ ແລ ກູຄວນປະຈິນແພ້ເຂົາຝູງນັ້ນດ້ວຍສະຕິປັນຍາແລ ກູຄວນແປງບັນຫາໄປສ່ອງເຂົາແລ ພະຍາ ອາມັດຕະເອກຣາດ ອັນຈັກແປງບັນຫາອັນໃໝ່ສັງກໍບໍ່ມີດາຍ ເມື່ອເຈົ້າຍັງເປັນຣາຊະບຸດອັນນັ້ນ ເຈົ້າກໍຫອນຍ່ອມປະກອບດ້ວຍສາດຕະສິນ ສິບປະຄຸນມາກນັກແລ ເຈົ້າກໍຫອນຍ່ອມ ເປດສະໜາບັນ ຫາອັນເປັນຄຳລັບຄຳແລບນັກ ເຈົ້າຈິ່ງຮູ້ໃນຕຳນານອັນອາຈານເຈົ້າຕົນມີປັນຍາຫາກກ່າວສືບໆມາ ແຕ່ປະຖົມມະກັບທີວທີນັ້ນພົມຫາກແຮກໃຫ້ເປັນສັດ ເປັນຄົນ ເປັນບ້ານເປັນເມືອງ ເປັນທ້າວພະ ຍາເສນາອາມາດ ໃຫ້ປາກົດແຈ້ງແກ່ທ້າວພະຍາ ອັນຈັກສ້າງບ້ານແປງເມືອງໃຫ້ອຸດທິສະຫວັດດີ ໃຫ້ຮູ້ທີ່ອັນຈັກຮັກສາອັນເປັນມັງຄະລະວ່າດັ່ງນີ້ ໃນເມື່ອບັນຫາສິບສອງປະການອັນພະຍາອາມັດຕະ ເອກຣາດ ຈັກໃຊ້ໃຫ້ໄປສ່ອງທວາຍແກ່ທ້າວພະຍາຮ້ອຍເອັດເມືອງມີສັນນີ້ແລ ອັນໜຶ່ງວ່າ ໃຫ້ຮັກ ສາລຳເມືອງໃຫ້ດີ ອັນໜຶ່ງວ່າໃຫ້ຮັກສາແທ້ງເມືອງຢ່າໃຫ້ຂາດ ອັນໜຶ່ງວ່າ ໃຫ້ຮັກສາຂຸ່ມ ເມືອງໃຫ້ດີ ອັນໜຶ່ງວ່າ ໃຫ້ຮັກສາຫູເມືອງໃຫ້ດີ ອັນໜຶ່ງວ່າ ໃຫ້ຮັກສາຕາເມືອງໃຫ້ດີ ອັນ ໜຶ່ງວ່າ ໃຫ້ຮັກສາໃຈເມືອງ ອັນໜຶ່ງວ່າ ໃຫ້ຮັກສາຝາເມືອງ ອັນໜຶ່ງວ່າ ໃຫ້ຮັກສາເມກ ເມືອງ ອັນໜຶ່ງ ໃຫ້ຮັກສາເຂື່ອນເມືອງ ແກ້ວທິກປະການໃຫ້ຄົມຮບຢ້າແຢງດ້ວຍດີຢ່າປະໝາດ ອັນໜຶ່ງ ໃຫ້ຮັກສາປະຕູເມືອງທັງສີ່ທັບໄວ້ໃຫ້ດີ ຢ່າໃຫ້ຂ້າເສິກສັດຕູມາຣາວີໄດ້ ອັນໜຶ່ງ ໃຫ້ ຫາເຫລັກອັນແຂງມາໃຫ້ຊ່າງເຫລັກຕີພ້າ ແລະ ຂວານແມ່ນຈັກມ້າງຫີນກໍໃຫ້ແຕກ ໄວ້ຕັດຫລັກ ຕໍສ້ອນໜາມຝູງອັນເກີດເປັນມອດເປັນແມງ ພາຍນອກເທັ້ນ ອັນໜຶ່ງ ໃຫ້ຮັກສາແກ່ນເມືອງ ໃຫ້ດີເທັ້ນ ພະຍາອາມັດຕະເອກຣາດແປງບັນຫາ ລຳດັບດັ່ງນີ້ແລ້ວ ກໍໃຊ້ໃຫ້ນຳໄປສ່ອງແກ່ທ້າວ ພະຍາຮ້ອຍເອັດເມືອງ ດ້ວຍຄຳສັ່ງສອນວ່າດັ່ງນີ້ ລູງອາວຊາວພໍ່ທັງຫລາຍຊູ່ບ້ານຊູ່ເມືອງ ເມື່ອພໍ່ ເຮົາຍັງນັ້ນ ເຈົ້າທັງຫລາຍກໍຍັງໝັ້ນມາຊູ່ມາຫາ ປາກຕ້ານຈາລະຈາຊູ່ບ້ານຊູ່ເມືອງດາຍ ເມື່ອ ສຸດຊີວພະຍາເຈົ້າຕົນພໍ່ນັ້ນເສັຍແລ້ວ ຍັງແຕ່ເຮົາຜູ້ເປັນລູກນີ້ ກໍບໍ່ມາຢ້ຽມຢາມຖາມຂ່າວເຮົານີ້ ດາຍ ຜີວ່າທ້າວພະຍາເຈົ້າທັງຫລາຍ ຈັກມັກຢູ່ໂທນດ້ວຍຕົນສະເຫວີຍຣາຊະການບ້ານເມືອງແຫ່ງ ຕົນ ໂດຍອັນມັກດັ່ງນັ້ນແທ້ ເຈົ້າທັງຫລາຍຈິ່ງຮັກສາບ້ານເມືອງເຈົ້າທັງຫລາຍ ຕາມດັ່ງບັນຫາ ອັນເຮົາໃຊ້ໃຫ້ນຳໄປນັ້ນເທັ້ນ ບ້ານເມືອງທ້າວພະຍາເຈົ້າທັງຫລາຍຮ້ອຍເອັດເມືອງ ກໍຈັກສຳຣິດ ທີ່ສູ່ປະການແລ ຜີວ່າເຈົ້າທັງຫລາຍບໍ່ຮູ້ກິດຈະອັນຮັກສາດັ່ງນັ້ນ ບ້ານເມືອງແຫ່ງເຈົ້າທັງຫລາຍກໍ ຈັກເປັນການອັນຍາກນັກແລ ເປັນດັ່ງລີ ຄືດັ່ງສັດຕົວນ້ອຍຈັກລອຍຂ້າມນ້ຳສະໝຸດໃຫ້ຮອດຝັ່ງກົ້າ ພຸ້ນ ເພື່ອໃຫ້ພົ້ນຈາກໄພອັນເປັນອາຫານແຫ່ງຈິແຂ້ ແລະປາໃຫຍ່ທັງຫລາຍນັ້ນແລ ມີໂດຍປະການ ສັນໃດ ເຈົ້າທັງຫລາຍບໍ່ຮູ້ກິດຈະອັນຈັກກະທຳແຫ່ງຕົນພົ້ນຈາກໄພແຫ່ງຂ້າເສິກສັດຕູນັ້ນ ກໍເປັນ ສັດຕົວນ້ອຍນັ້ນແລ ພະຍາອາມັດຕະເອກຣາດໃຊ້ໄປກຳຣາບພະຍາຮ້ອຍເອັດເມືອງ ດ້ວຍປັນຍາ ແຫ່ງຕົນສັນນີ້ ຄືວ່າຄົນໃຊ້ໄປຮອດທ້າວພະຍາຮ້ອຍເອັດເມືອງແລ້ວ ເຂົາກ່າວກິດຈະອັນພະຍາອາ ມັດຕະຫາກສັ່ງເຂົານັ້ນຊູ່ປະການແກ່ພະຍາຮ້ອຍເອັດເມືອງນັ້ນທັ້ນແລ ເມື່ອນັ້ນເຈົ້າພະຍາທັງ ຫລາຍຮ້ອຍເອັດເມືອງນັ້ນ ເຂົາກໍບໍ່ອາດຈັກຮູ້ກິດຈະໃນບັນຫາສິບສອງປະການນັ້ນ ໄດ້ສັກເທື່ອ ທັ້ນແລ ເຂົາກໍໃຊ້ຂ່າວສານໄປເກິງກັນຊູ່ເມືອງວ່າ ດູລາທ້າວພະຍາທັງຫລາຍ ເປດສະໜາບັນ

ຫາອັນພະຍາອາມັດຕະຄົນເປັນເອກຣາດແທນພໍ່ນັ້ນ ໃຊ້ມາສ່ອງແກ່ເຮົາທັງຫລາຍອູ່ເມືອງນີ້ ມີຊື່ວ່າຍັງຮູ້ແຈ້ງປາກົດແຫ່ງເຮົາທັງຫລາຍຈັກເມືອງແດ່ລື ແມ່ນວ່າຫາກປາກົດໃນເມືອງໃດ ເມືອງໜຶ່ງ ກໍດີເທີ້ນ ກໍສະເໜີດັ່ງປາກົດແກ່ເຮົາອູ່ເມືອງແລ ພີວ່າຍັງປາກົດແກ່ເຮົາແທ້ ກໍເພິງໃຊ້ໃຫ້ໄປຕອບພະຍາອາມັດຕະເອກຣາດ ໃຫ້ຮູ້ສະພາວະເຮົາແຈ້ງໃນກິດຈະແຫ່ງບັນຫານັ້ນຄອນແລ ພີວ່າຫາກບໍ່ປາກົດແຈ້ງແກ່ເຮົາໄດ້ສັກເມືອງແທ້ດັ່ງນັ້ນ ເຮົາຈັກທິງຄົນຢູ່ບໍ່ຄວນແລ ເພິງເຮົາເຂົ້າໄປສູ່ໄປຫາອ່ອນນ້ອມແກ່ພະຍາອາມັດຕະເອກຣາດ ເພື່ອຈັກຖາມເປດສະໜາບັນຫາສິບສອງປະການນີ້ໃຫ້ແຈ້ງແກ່ເຮົາຄວນແລ ທ້າວພະຍາຮ້ອຍເອັດເມືອງໃຊ້ຂ່າວສານໄປເຖິງກັນອູ່ເມືອງດັ່ງນີ້ແລ້ວ ເຂົາກໍບໍ່ອາດຈັກຮູ້ສັກເມືອງແລ ທີ່ນັ້ນທ້າວພະຍາທັງຫລາຍບໍ່ອາດທິງຄົນຢູ່ໄດ້ກໍພ້ອມກັນໄປສູ່ພະຍາເອກຣາດທັ້ນແລ ທ້າວພະຍາທັງຫລາຍກໍສັນຍາແກ່ກັນ ໃຫ້ໄດ້ຄໍາ ແລະເມືອງແລະແສນຄໍາ ທັງຮ້ອຍເອັດເມືອງນັ້ນເປັນຄໍາໂກດປາຍແສນໜຶ່ງ ເພື່ອໃຫ້ເປັນເຄື່ອງບູຊາພະຍາອາມັດຕະເອກຣາດແລ ຄັນວ່າໄປເຖິງແລ້ວ ກໍພ້ອມກັນເຂົ້າເມືອນະມັດສະການພະຍາເອກຣາດ ດ້ວຍອັນຄົນຮົບແລ້ວຈິ່ງຖາມວ່າ ຂ້າແດ່ມະຫາຣາຊະເຈົ້າຄົນເປັນເອກຣາດ ດັ່ງບັນຫາອັນມະຫາຣາຊະເຈົ້າໃຊ້ໃຫ້ໄປສ່ອງແກ່ຝູງຂ້າທັງຫລາຍຜູ້ເປັນລູງ ເປັນຕາ ເປັນອາວນັ້ນ ຝູງຂ້າທັງຫລາຍກໍບໍ່ປາກົດສັກເມືອງແລ ທີ່ນີ້ຝູງຂ້າທັງຫລາຍຂໍເຊີນມະຫາຣາຊະເຈົ້າຄົນເປັນເອກຣາດ ຈິ່ງແກ້ໄຂໃນກິດຈະຣາຊະບັນຫາສິບສອງປະການນັ້ນໃຫ້ແຈ້ງແກ່ຝູງຂ້າທັງຫລາຍແດ່ເທີ້ນ ວ່າດັ່ງນັ້ນແລ້ວ ເມື່ອນັ້ນພະຍາອາມັດຕະເອກຣາດ ຈິ່ງຈາລະຈາກັບດ້ວຍພະຍາຮ້ອຍເອັດປະເທດ ອັນເປັນພໍ່ລູງອາວເບື້ອງເມັຍແຫ່ງຄົນວ່າດັ່ງນີ້ ດູລາທ້າວພະຍາເຈົ້າທັງຫລາຍ ສອນດັ່ງເປດສະໜາບັນຫາສິບສອງປະການທັງຫລາຍຝູງນັ້ນ ບໍ່ວ່າຈະເກີດມີແດ່ກາລະບັດນີ້ດາຍ ແຕ່ຫາກມີແຕ່ປະຖົມມະກັບທີວທີອັນນັ້ນ ເມື່ອພົມຫາກແຣກໃຫ້ເປັນຄົນຕັ້ງບ້ານແປງເມືອງ ເປັນທ້າວພະຍາແລະເສນາອາມາດຣາຊະປະໂຣຫິດທັງຫລາຍອັນນັ້ນແລ ສ່ວນບັນຫາສິບສອງປະການນີ້ ອາຈານເຈົ້າຄົນເປັນນັກປາດຫາກກ່າວສືບໆມາເພື່ອໃຫ້ເປັນຮີດຄອງທໍານອງຫອມມາ ໄວ້ແກ່ທ້າວພະຍາຝູງຈັກສ້າງບ້ານເມືອງເມືອພາຍໜ້າ ທ້າວພະຍາຄົນໃດ ແລະປະຕິບັດຕາມຄອງເປດສະໜາ ບັນຫາສິບສອງປະການຝູງນີ້ໄດ້ແທ້ ບ້ານເມືອງກໍຈັກວຸດທີຈໍາເຣີນມາກນັກ ຊະນະພາບແພ້ຂ້າເສິກສັດຕູ ຢູ່ສະເຫວີຍຣາຊະການບ້ານເມືອງ ສໍາປັດຕິສຸກຂະສໍາຣານມາກນັກແທ້ດີຫລີແລ ຄັນວ່າບໍ່ຮູ້ກິດຈະແຫ່ງບັນຫາຝູງນີ້ບ້ານເມືອງກໍຈັກເກີດເປັນກາລະຂີນີເສັຍແລ ຄືວ່າຈັກກອຍຈາກເຂົ້າຂອງອູ່ເບື້ອງອູ່ປະການແລ ພີວ່າພໍ່ລູງ ອາວທັງຫລາຍ ຈັກໄຄ່ຮູ້ໃນກິດຈະທັງຫລາຍຝູງນີ້ແທ້ ຈັກບົວລະບັດຕາມໄດ້ແທ້ເຮົາກໍຈັກກ່າວໃຫ້ປາກົດແຈ້ງແກ່ພໍ່ລຸງ ອາວທັງຫລາຍຊະແລ ທີ່ນີ້ພະຍາອາມັດຕະເອກຣາດຈັກກ່າວບັນຫາສິບສອງປະການນັ້ນ ກໍຣາດທະນາເທວະດາທັງຫລາຍວ່າ ດູລາເທວະດາເຈົ້າທັງຫລາຍ ອັນຮັກສາໂລກທັງມວນເຈົ້າກູທັງຫລາຍ ອັນມີເຕຊະລິດທີມາກ ຜູ້ຂ້າຈັກແກ້ບັນຫາເປດສະໜາສິບສອງປະການນີ້ ອັນຂ້າຫາກຮູ້ອາຈານເຈົ້າທັງຫລາຍກ່າວສືບໆມານັ້ນ ພີວ່າຍັງຊອບບູຣານມາແທ້ ເທວະດາເຈົ້າທັງຫລາຍ ຈິ່ງໃຫ້ສັກຂີອັນໃດອັນໜຶ່ງໃຫ້ປາກົດແກ່ຄົນທັງຫລາຍແດ່ເທີ້ນ ຣາດທະນາເທວະດາດັ່ງນີ້ແລ້ວ ພະຍາອາມັດຕະເອກຣາດ ຈິ່ງກ່າວບັນຫາອັນເປັນປະຖົມວ່າ ດູລາພະຍາເຈົ້າທັງຫລາຍ ອັນໃຫ້ຮັກສາລໍາເມືອງນັ້ນ ຄືວ່າໃຫ້ຮັກສາຝົນນັ້ນແລ ເຫດໃດແລວ່າໃຫ້ຮັກສາຝົນ

ນັ້ນຈາ ເກີງເມື່ອຝົນຕົກ ແລະ ມາບໍ່ຕົກດັ່ງນັ້ນ ພືຊະເຂົ້າກ້າທັງຫລາຍກໍແຫ້ງເສັຍແລ ເມືອຝົນຕົກພົ້ນປະມານດັ່ງນັ້ນ ເຂົ້າກ້າກໍເນົ່າເສັຍແລ ເຫດດັ່ງນັ້ນ ຈິ່ງວ່າໃຫ້ຮັກສາຝົນເພື່ອດັ່ງນັ້ນແລ ເມື່ອນັ້ນທ້າວພະຍາຮ້ອຍເອັດເມືອງ ຈິ່ງກ່າວວ່າ ດູລາມະຫາຣາຊະເຈົ້າ ອັນວ່າໃຫ້ຮັກສາລໍາເມືອງຄືວ່າຝົນນັ້ນ ກໍປາກົດແກ່ຝູງຂ້າທັງຫລາຍແລ້ວແລ ອັນວ່າໃຫ້ຮັກສາຝົນນັ້ນກໍໄປ່ປາກົດແກ່ຝູງຂ້າທັ້ງຫລາຍເທື່ອແລ ເຫດວ່າຝົນນີ້ເກີງເມື່ອຕົກມາກ ຝົນກໍຫາກຕົກມາກເກີງເມື່ອຕົກນ້ອຍ ຝົນກໍຫາກຕົກນ້ອຍດາຍ ຈັກໃຫ້ຮັກສາດັ່ງລືຈາດັ່ງນີ້ ພະຍາເອກຣາດກ່າວວ່າ ດູລາພະຍາເຈົ້າທັງຫຼາຍເຫດອັນຈັກຫ້າມຝົນນີ້ ກໍຫາກມີໃນຕົນພະຍາເຈົ້າທັງຫລາຍ ຝູງສະເຫວີຍຣາດບ້ານເມືອງນັ້ນແລ ທ້າວພະຍາຕົນສະເຫວີຍຣາດບ້ານເມືອງນັ້ນແລ ຊອບທໍາດັ່ງນັ້ນ ເທວະດາຝູງຮັກສາບ້ານເມືອງນັ້ນກໍຍິນດີມາກນັກ ຈິ່ງໃຫ້ວຸດທິຈໍາເຣີນບ້ານເມືອງຊູ່ປະການແລ ເມື່ອອານາຈັກປະຈົນບ້ານເມືອງບໍ່ໃຫ້ຝົນຕົກຊອບລະດູນັ້ນ ເທວະດາກໍຫ້າມເສັຍຍັງມານແລ້ວ ກໍໃຫ້ຝົນຕົກຊອບລະດູ ຈໍາເຣີນເຂົ້າກ້າໄຮ່ນາດີທຸກແຫ່ງ ເຫດດັ່ງນັ້ນ ຈິ່ງໄດ້ວ່າໃຫ້ຮັກສາຝົນເພື່ອອັນແລ ດ້ວຍອະທິບາຍໃຫ້ຮັກສາຝົນນັ້ນ ກໍຄືວ່າ ໃຫ້ພະຍາຕົນສະເຫວີຍເມືອງນັ້ນຕັ້ງຢູ່ໃນທົດສະຣາຊະທໍາສິບປະການນັ້ນແລ ສ່ວນວ່າບັນຫາອັນກ້ວນສອງນັ້ນວ່າ ໃຫ້ຮັກສາແຫ້ງເມືອງນັ້ນ ຄືວ່າໃຫ້ຮັກສາແດດນັ້ນແລ ເມື່ອນັ້ນທ້າວພະຍາຮ້ອຍເອັດຕົນກ່າວວ່າ ດູລາມະຫາຣາຊະເຈົ້າ ອັນວ່າໃຫ້ຮັກສາແຫ້ງເມືອງ ຄືວ່າແດດນັ້ນ ກໍຫາກເປັນຣັດສະຫມີພະອາທິດດາຍ ດັ່ງລືໃຫ້ຮັກສາໄດ້ນັ້ນຈາ ພະຍາເອກຣາດກ່າວວ່າ ອັນວ່າໃຫ້ຮັກສາແດດນັ້ນ ຄືວ່າພະຍາຕົນສະເຫວີຍຣາຊະສົມບັດຕິບ້ານເມືອງນັ້ນ ມີສີນ ແລະ ມີສັດຈະຊອບທໍາທັງມວນດັ່ງນັ້ນ ແດດແລະລົມກໍສະເຫມີກັນແລ ອັນໜຶ່ງໃຫ້ຮໍາເພິງເກີງຣາຊະສົມບັດຕິອັນຕົນໄດ້ສະເຫວີຍນັ້ນ ດ້ວຍຄໍາວ່າ ຣາຊະສົມບັດຕິອັນອາດຕະມາໄດ້ເປັນທ້າວພະຍານີ້ ແລະ ໄດ້ເງິນຄໍາແກ້ວແຫວນ ນາງນັກສະຫນົມຫມື່ນຫົກພັນນາງນີ້ ແລະ ຊ້າງມ້າຂ້ອຍຂ້າຍິງຊາຍນີ້ກໍດີ ແລະ ໄດ້ເປັນເຈົ້າເປັນໃຫຍ່ແກ່ຣີພົນສະກົນລະໂຍທາກໍດີ ໄດ້ເປັນໃຫຍ່ແກ່ໄພ່ຟ້າຂ້າໄທທັງຫລາຍກໍດີ ອັນອາດຕະມາໄດ້ເປັນເຈົ້າແຜ່ນດິນນີ້ກໍດີ ກໍບໍ່ໄດ້ດ້ວຍບູກຄະລະຜູ້ໃດສັກຄົນແລ ອາດຕະມາກໍໄດ້ດ້ວຍເຫດພໍ່ແມ່ແຫ່ງອາດຕະມາ ໃຫ້ຮໍາເພິງເກີງຄຸນອັນນີ້ ໃນຕົນສັນນີ້ ເທວະດາທັງຫລາຍສີ່ຕົນ ອັນຮັກສາສີ່ແຈ່ງແຈເມືອງນັ້ນ ກໍຍິນດີມາກນັກ ກໍຈິ່ງຮັກສາບ້ານເມືອງໃຫ້ແດດ ແລະ ລົມສະເຫມີດີນັກແລ ເຫດດັ່ງນັ້ນຈິ່ງວ່າ ຮັກສາແຫ້ງເມືອງໃຫ້ດີ ເພື່ອດັ່ງນັ້ນແລ ເມື່ອນັ້ນພະຍາຮ້ອຍເອັດຕົນກ່າວວ່າ ມະຫາຣາຊະເຈົ້າໃຫ້ຮັກສາແຫ້ງເມືອງຄືວ່າ ແດດນັ້ນຝູງຂ້າທັງຫລາຍກໍປາກົດແລ ທີ່ວ່າມະຫາຣາຊະເຈົ້າ ກ່າວວ່າ ຣາຊະສົມບັດຕິ ແລະຍົດສັກທັງມວນແຫ່ງທ້າວພະຍາທັງຫລາຍ ອັນມີໃນສະກະລະຊຸມພູທີບນີ້ ພອຍເລົ່າວ່າໄດ້ດ້ວຍພໍ່ແມ່ພີ່ນ້ອງວ່າດັ່ງນີ້ ກໍບໍ່ປະກົດແກ່ຕູຂ້າທັງຫລາຍສັກອັນແລ ຝູງຂ້າທັງຫລາຍອັນເປັນລູກເຕົ້າຫລານເຫລັນນີ້ ກໍໄດ້ຣາຊະສົມບັດຕິບ້ານເມືອງທັງມວນນີ້ ກໍຫາກສືບວົງສາມາດາຍ ເມື່ອນັ້ນ ພະຍາເອກະຣາດຈິ່ງກ່າວວ່າດັ່ງນີ້ ສວນດັ່ງພະຍາເຈົ້າທັງຫລາຍ ຝູງໄດ້ສະເຫວີຍຣາຊະສົມບັດຕິ ກໍຫອນຍ່ອມສືບວົງສາມາກໍຈິ່ງໄດ້ເປັນພະຍາໃຕ້ເສດຕະສັດດາຍ ສ່ວນວ່າຕົນເຮົານີ້ໄດ້ເປັນພະຍາ ກໍບໍ່ໄດ້ສືບເຊື້ອຊາດວົງສາທ້າວພະຍາແຫ່ງຕົນສັງແລ ກໍຫາກເຊື້ອຊາດເມືອງດາຍ ທ້າວພະຍາທັ່ງຫລາຍ ກ່າວວ່າ ຄໍາອັນນີ້ກໍດູບໍ່ປາກົດແກ່ຝູງຂ້າສັກອັນ ກໍດູດັ່ງຍັງເປັນເປດສະຫນາອັນເລິກແລບຍິ່ງນັກແລ ຂໍມະຫາຣາຊະ

เจ้າຈິ່ງກ່າວກິດຈະແຫ່ງຄຳອັນນັ້ນໃຫ້ແຈ້ງ ແກ່ຝູງຂ້າທັງຫລາຍແດ່ເທີ້ນ ເມື່ອນັ້ນພະຍາເອກຣາດ ກ່າວວ່າ ດູລາພະຍາເຈົ້າທັງຫລາຍ ອັນວ່າໄດ້ສະເຫວີຍຣາຊສໍາປັດຕິເຫດພໍ່ແມ່ພີ່ນ້ອງນັ້ນ ຄໍາອັນ ນັ້ນກໍຍັງເປັນໂວຫານປະຣະມັດຖະແລ ທີ່ແທ້ອັນຈັກເປັນປະຣະມັດຖະນັ້ນບໍ່ມີເລີຍ ໄດ້ເປັນທ້າວພະ ຍາສະເຫວີຍຣາຊະສໍາປັດຕິທັງມວນນີ້ ກໍດ້ວຍເຫດແກ້ວສາມປະການ ຄືວ່າພະພຸດທະເຈົ້າ ພະທັມ ມະເຈົ້າ ແລະພະສັງຄະເຈົ້າແລ ເຫດດັ່ງລືແລະວ່າອັນຈາ ເມື່ອແກ້ວສາມປະການບໍ່ເກີດນັ້ນ ບຸກ ຄະລະທັງຫລາຍ ແລະ ຈັກໄດ້ເປັນທ້າວພະຍາກ່ອນນີ້ ບໍ່ທ່ອນມີແລ ຄືວ່າແກ້ວສາມປະການເກີດ ກ່ອນແລ້ວໄດ້ໃຫ້ທານແກ້ວສາມປະການ ດ້ວຍໃຈໃສສັດທາ ຮັກສາສີນ ຟັງທໍາແລ້ວ ໃນພາວະອັນ ລຸນຈິ່ງໄດ້ສະເຫວີຍຣາຊະສໍາປັດຕິດາຍ ສ່ວນວ່າຕົນເຮົານີ້ ບໍ່ໃຊ່ເຊື້ອທ້າວພະຍາດາຍ ຫລອນໄດ້ ເປັນທ້າວພະຍາເອກຣາດ ມີເຕຊະອະນຸພາບແລະຣິດທິກໍມາກນັກ ກໍເຫດຊາຕິພາວະກ່ອນນັ້ນເຮົາ ໄດ້ປະຈົບແພ້ມັດເສລະທໍາ ຄໍາກະຫນີ້ກໍ່ເສັຍແລ້ວແລສະສາງອາງເຂົ້າຂອງທັງຫລາຍມວນໄປໃຫ້ ເປັນທານໃນສາດສະຫນາພະພຸດທະເຈົ້າ ແຕ່ໃນພາວະຊາຕິປາງກ່ອນເປັນອັນມາກນັກແລ ໃນພາ ວະຊາຕິອັນລຸນນີ້ ເຮົາຈິ່ງໄດ້ສະເຫວີຍພະລະອັນນັ້ນໄດ້ມາເປັນພະຍາເອກຣາດ ສະເຫວີຍຣາຊະ ສໍາປັດຕິອັນຊອບຣາຊະທໍາຍິ່ງກວ່າທ້າວພະຍາທັງຫລາຍ ທ້າວພະຍາຕົນໃດ ບໍ່ອາດຈັກສະເຫມີໄດ້ ກໍເພື່ອບຸນອັນເຮົາໄດ້ປະຈົບມັດເສລະທໍາ ຄໍາກະຫນີ້ກໍ່ເຂົ້າຂອງແຕ່ກ່ອນນັ້ນແລ ຄໍາອັນນີ້ກໍເປັນ ປະຣະມັດຖະແທ້ແລ ອັນວ່າ ຄໍາວ່າໄດ້ສະເຫວີຍສໍາປັດຕິທັງມວນກໍເຫດພໍ່ແມ່ພີ່ນ້ອງນັ້ນ ເປັນພາ ສາແຫ່ງພາລະຄອນ ຄືວ່າ ຄໍາຂອມດ້ວຍມະຄະທະ ພາສາຫີນໄທ ໄດ້ສະເຫວີຍຣາດດ້ວຍເຫດ ແກ້ວສາມປະການ ພະຍາເອກຣາດແກ່ບັນຫາອັນກ້ອນສອງ ເປັນມະຄະທະພາສາແກ່ພະຍາຮ້ອຍ ເອັດເມືອງກໍຊອບບໍລະບວນທີ່ນີ້ແລ ທີ່ນີ້ພະຍາເອກຣາດຈັກແກ້ບັນຫາອັນກ້ອນສາມນັ້ນ ຈິ່ງກ່າວ ວ່າດັ່ງນີ້ ດູລາ ເຈົ້າພະຍາທັງຫລາຍ ອັນວ່າໃຫ້ຮັກສາຊຸ່ມເມືອງນັ້ນ ຄືວ່າໃຫ້ຮັກສາແມ່ນ້ຳໃຫຍ່ ແລະແມ່ນ້ຳນ້ອຍທັງຫລາຍ ອັນໄຫລມາຜ່າເມືອງແຫ່ງຕົນນັ້ນແລ• ຊາຕິແມ່ນ້ຳ ຄັນວ່າເຖິງເມື່ອ ລະດູຝົນນັ້ນ ນ້ຳຍ່ອມນອງມາເຕັມບ້ານເຕັມເມືອງ ມີກໍາລັງມາກນັກ ຝັ່ງຍ່ອມເພ ເກື່ອນ ບານເມືອງເສັຍ ມີຕົ້ນວ່າ ພືຊະເຂົ້າກ້າໄຮ່ນາ ເງິນຄໍາຊູ່ອັນແລ ເມື່ອລະດູນ້ຳແຫ້ງແລ້ວ ທ້າວພະຍາຕົນສະເຫວີຍເມືອງນັ້ນ ປົງອາດຍາ ໄວ້ແກ່ເສນາອາມາດ ໃຫ້ເອົາຊາວບ້ານ ຊາວເມືອງທັງຫລາຍ ໄປປ້ານຝັ່ງນ້ຳໄວ້ ໃຫ້ຫມັ້ນຊູ່ທີ່ຊູ່ແຫ່ງ ທີ່ໃດຄວນເອົານ້ຳໄປໃສ່ນາ ກໍ ຄວນໃຫ້ເອົາອອກໄປໃສ່ໄຮ່ນາ ໃຫ້ດີທຸກແຫ່ງແລ ເມື່ອນ້ຳນອງຕີຟອງມາທີ່ໃດກໍດີ ກໍບໍ່ອາດຈັກເພ ພັງໄປໄດ້ ທ່າອາບທ່າກິນຈິ່ງສະເຫມີດີງາມ ຄົນທັງຫລາຍຢູ່ກ່າງສ້າງໄຮ່ກະທໍານາ ຢູ່ສຸກກະເສີມ ດີແລ ເຫດດັ່ງນັ້ນຈິ່ງວ່າ ໃຫ້ຮັກສາຊຸ່ມເມືອງໃຫ້ດີ ເພື່ອດັ່ງນັ້ນແລ ອັນວ່າ ໃຫ້ຮັກສາຫູເມືອງນັ້ນ ຄືວ່າໃຫ້ຮັກສາອາຣັກຂະເທວະດາ ອີງເປັນມະເຫສັກ ຢູ່ຮັກສາບ້ານເມືອງໃຫ້ກະທໍາພະລີກໍາເຄົາ ຣົບຊູ່ອັນ ເທວະດາຈິ່ງຮັກສາບ້ານເມືອງໃຫ້ຫາອົນຕາຍບໍໄດ້ ເປັນຕົ້ນວ່າ ຂ້າເສິກຈັກມາກະທໍາ ຮ້າຍ ບອດບອນບ້ານເມືອງດັ່ງນັ້ນ ເທວະດາທັງຫລາຍຝູງນັ້ນ ກໍປະຈົບແພ້ຂ້າເສິກສັດຕູທັງຫລາຍ ຝູງນັ້ນ ບໍ່ອາດຈັກທໍາຮ້າຍແກ່ບ້ານເມືອງໄດ້ແລ ເຫດດັ່ງນັ້ນຈິ່ງກ່າວວ່າ ໃຫ້ຮັກສາຫູເມືອງໃຫ້ດີ ເພື່ອດັ່ງນັ້ນແລ ອັນວ່າໃຫ້ຮັກສາຕາເມືອງນັ້ນ ກໍຄືວ່າໃຫ້ຮັກສາເທວະດາອັນຢູ່ຮັກສາປະຕູທັງສີ່ ຄື ວ່າບູຊາພະລີກໍາເຄົາຣົບຢໍາແຢງຊູ່ອັນ ເມືອງໃດທ້າວພະຍາຕົນກິນເມືອງນັ້ນແລຊອບທໍາ ເທວະ

ດາທັງສີ່ຕົນນັ້ນ ກໍຫອ້ນຍ່ອມຮັກສາບ້ານເມືອງ ໃຫ້ອຸດທິຈຳເຣີນດີ ຂ້າເສິກສັດຕູ ອັນຈັກມາຮາວີ
ແກ່ບ້ານເມືອງ ແລະພະຍາດທີທັງມວນ ເປັນຕົ້ນວ່າໄຂ້ ແລະເຈັບຫົວ ຜີຫົວດຳ ແລະຜີຫົວແດງ
ຜີຫົວເຫລືອງ ຜີທັງຫລາຍສາມປະການນີ້ ຕົກບ້ານໃດເມືອງໃດ ຫອ້ນຍ່ອມປະຈົນແພ້ຮາວີໃຫ້ພິດ
ພະຍາດອັນຮ້າຍແກ່ຄົນທັງຫລາຍໃຫ້ຈິບຫາຍຕາຍມາກນັກແລ ເມື່ອໃດທ້າວພະຍາຕົນສະເຫວີຍ
ເມືອງນັ້ນ ແລະຊອບທຳສິບປະການ ແລະ ຮັກສາເທວະດາທັງສີ່ຕົນນັ້ນ ເທວະດາຝູງນັ້ນ ຈິ່ງ
ຫ້າມເສັຍຍັງອິນຕາຍຝູງນັ້ນ ບໍ່ໃຫ້ບັງເກີດມີໃນບ້ານເມືອງພະຍາຕົນນັ້ນແລ ເຫດດັ່ງນັ້ນ ຈິ່ງໄດ້
ວ່າໃຫ້ຮັກສາຕາເມືອງເພື່ອດັ່ງນັ້ນແລ ຕາເມືອງນັ້ນຄືວ່າເທວະດາທັງສີ່ຕົນນັ້ນແລ ອັນວ່າໃຫ້
ຮັກສາໃຈເມືອງນັ້ນ ເປັນຄຳແຫ່ງພາລະຄອ້ນ ຄືວ່າຄຳຂອມຕາມມະຄະທະພາສາ ທົນໄທວ່າໃຫ້
ຮັກສາເມັຍຜູ້ດີ ລູກຍິງລູກຊາຍຜູ້ດີ ກໍຫອ້ນຍ່ອມໄປປະຈົນແພ້ຂ້າເສິກສັດຕູ ແລະ ຮັກສາບ້ານ
ເມືອງຕົນນັ້ນ ກໍຈັກສຸຂະເສີມດີນັກແລ ເຫດດັ່ງນັ້ນຈິ່ງວ່າ ໃຫ້ຮັກສາໃຈເມືອງໃຫ້ດີ ຄືວ່າລູກຍິງ
ລູກຊາຍແລະເມັຍຜູ້ດີວ່າດັ່ງນັ້ນແລ ອັນວ່າໃຫ້ຮັກສາຝາເມືອງນັ້ນ ອາຈານເຈົ້າກ່າວວ່າ ເປັນ
ພາລະຄອ້ນ ຄືວ່າເປັນຄຳຂອມແລ ຄຳທົນໄທວ່າ ໃຫ້ຮັກສາໄພ່ໄທຊ້າງມ້າທັງຫລາຍ ອັນເກີດມາ
ໃນອາວິງຂົງເຂດປະເທດບ້ານເມືອງແຫ່ງຕົນໃຫ້ດີນັ້ນແລ ອັນວ່າໃຫ້ຮັກສາເມກເມືອງນັ້ນ ຄືວ່າ
ໃຫ້ນັບອ່ານດູຍັງເສນາອາມາດສະກະລະໂຍທາແຫ່ງຕົນ ໃຫ້ຮູ້ຈັກວ່າຫນ້ອຍຫລາຍ ແລະ ສຸກທຸກຂູ່
ແຫ່ງຂູ່ທີ່ ເຫດວ່າເຂົ້າຝູງນີ້ຫາກເປັນຮົ້ວເປັນວອ້ງແກ່ບ້ານເມືອງຕົນແລ ເຫດດັ່ງນັ້ນຈິ່ງວ່າ
ໃຫ້ຮັກສາເມກເມືອງເພື່ອດັ່ງນັ້ນແລ ອັນວ່າໃຫ້ຮັກເຂື່ອນເມືອງນັ້ນ ຄືວ່າແກ້ວສາມປະການແລ
ມີພະພຸດທະເຈົ້າ ພະທຳມະເຈົ້າ ພະສັງຄະເຈົ້າ ຕົນເປັນທີ່ເພິ່ງແກ່ໂລກທັງຫລາຍແລ ທ້າວພະ
ຍາຕົນໃດ ມີຈິດໃຈເຫລື້ອມໃສໃນແກ້ວສາມປະການ ແລະ ບໍ່ປະຫມາດ ແລະກະທຳສັກກາຣະບູ
ຊາໄຫວ້ນົບເຄົາຣົບຢຳແຢງບໍ່ຂາດດັ່ງນັ້ນ ບ້ານເມືອງອັນນັ້ນກໍຈັກຢູ່ວຸດທິສະຫວັດສະດີຈຳເຣີນສີ
ສີມບັດເຂົ້າຂອງທັງຫລາຍ ແລະ ຊະນະພາບແພ້ຂ້າເສິກສັດຕູທັງຫລາຍ ເທວະດາກໍຮັກສາບ້ານ
ເມືອງຍິນດີເຊິ່ງພະຍາຕົນນັ້ນແລ ຊາວບ້ານຊາວເມືອງກໍຈັກຢູ່ວຸດທິສະຫວັດດີສູຂະສຳຣານບານໃຈ
ມາກນັກແລ ເຫດດັ່ງນັ້ນ ຈິ່ງໃຫ້ຮັກສາເຂື່ອນເມືອງ ຄືວ່າແກ້ວສາມປະການນັ້ນແລ ອັນວ່າໃຫ້ຫັບ
ປະຕູເມືອງທັງສີ່ໃຫ້ຫມັ້ນ ຢ່າໃຫ້ຂ້າເສິກລ່ວງເຂົ້າມາຮາວີບ້ານເມືອງນັ້ນ ເປັນພາສາສີທະລະ
ທົບ ແລະ ມະຄະທະພາສາທົນໄທວ່າ ໃຫ້ຫັບປະຕູອະບາຍຍະພູມທັງສີ່ໄວ້ໃຫ້ດີ ເຫດໃດແລວ່າ
ໃຫ້ຫັບປະຕູອະບາຍທັງສີ່ໄວ້ນັ້ນຈາ ບຸກຄະລະຜູ້ມີປະຍາເພິງຮູ້ເທີ້ນ ທ້າວພະຍາຕົນສະເຫວີຍ
ຣາຊະສົມປັດຕິນັ້ນ ໃຫ້ຕັ້ງຢູ່ໃນທົດສະຣາຊະທຳສິບປະການແລ້ວແລ ສັ່ງສອນປັດຊານາຣັດທັງ
ຫລາຍໃຫ້ຕັ້ງຢູ່ໃນທຳສິບປະການ ລ້ຽງຊີວິດດ້ວຍສຳມາຊີໂວດ້ວຍດີດັ່ງນັ້ນ ຣອ້ກວ່າຫັບປະຕູອະ
ບາຍທັງສີ່ນັ້ນແລ ອັນວ່າໃຫ້ຫາເຫລັກອັນກ້າ ອັນອາດມ້າງທົນຜາກໍໄດ້ກໍແຕກດັ່ງນັ້ນ ເພິງເອົາ
ມາໃຫ້ຊ່າງເຫລັກມາກະທຳໃຫ້ເປັນພ້າຂວານ ມາຕັດມາສີນສ້ອ້ນຫນາມຫລັກຕໍອັນເກີດເປັນມອດ
ເປັນແມງພາຍໃນເມືອງ ແລະນອກເມືອງນັ້ນ ເປັນຄຳພາລະຄອ້ນ ຄືວ່າຄຳຂອມ ທົນພາສາໄທ
ວ່າ ໃຫ້ຄົນຜູ້ມີປະຫຍາຍາຕິພົງສາອັນປະກອບໃຈອັນມຸທຸກະຣຸນາ ແລະ ມີຈິດໃຈອັນຫມັ້ນຕັ້ງຢູ່ສະ
ເຫມີຄືມາໄວ້ໃຫ້ພິຈາລະນາ ພິນິດໄສກ້ອຍຄຳໃຫ້ສຸຄະຕິຄະມະນະ ຜູ້ຄວນແພ້ກໍໃຫ້ແພ້ ຜູ້ຄວນພ່າຍ
ກໍໃຫ້ພ່າຍ ຄັນວ່າເສນາອາມາດຜູ້ພິຈາລະນາກ້ອຍຄຳນັ້ນແລ ຕັ້ງຢູ່ໃນຄອງອັນຊອບສົມນີ້ແທ້ ເຫ

ວະດາຝູງຮັກສາບ້ານເມືອງທັງມວນ ແລະ ຣັດຊານາລັດໃຫ້ຢູ່ສຸຂະເສີມຊູ່ປະການແລ ອັນວ່າໃຫ້ຮັກສາແກ່ນເມືອງນັ້ນ ເປັນຄຳພາລະຄອນ ທີ່ນໄທວ່າໃຫ້ແປງຫອກດາບ ກົງກອນ ແລະ ໜ້າໄມ້ປືນຢາ ເຂາະຂ່າຍ ເຄື່ອງຍຸດທະກຳໃຫ້ມີໄວ້ພ້ອມຊູ່ປະການ ຝູງນີ້ວ່າເປັນແກ່ນເມືອງແລ ເມືອງອັນໃດຫາແກ່ນເມືອງບໍ່ໄດ້ ເມືອງອັນນັ້ນ ກໍຈັກເປັນອັນຈິບຫາຍຊູ່ປະການແລ ພະຍາອາມັດຕະເອກະຣາດແກ້ບັນຫາສິບສອງປະການນີ້ ແກ່ທ້າວພະຍາຮ້ອຍເອັດເມືອງດັ່ງນີ້ເປັນສຸຄະຕິຊອບນັກແລ ເທວະດາອັນຮັກສາເສດຕະສັດນັ້ນກໍຍິນດີຍິ່ງນັກ ຈິ່ງພາຍຕົນດຸລາບຸບຜາ ຄືວ່າດອກເຂົ້າສານລົງມາບູຊາພະຍາເອກຣາດເກີງເຈັດວັນເປັນອັດສະຈັນມາກນັກແລ ເມື່ອນັ້ນທ້າວພະຍາທັງຫລາຍຮ້ອຍເອັດເມືອງ ໄດ້ຍິນຣາຊະບັນຫາສິບສອງປະການນັ້ນແຈ້ງໃນໃຈຕົນມາກນັກ ກໍຍິນດີນັກແລແລ້ວຈິ່ງຂໍພອນເຊິ່ງພະຍາເອກຣາດວ່າ ຂ້າແກ່ມະຫາຣາຊະເຈົ້າ ຝູງຂ້າທັງຫລາຍຈັກປະຕິບັດຕາມບັນຫາສິບສອງປະການນີ້ຊູ່ເບື້ອງແລ ແຕ່ນີ້ເມື່ອໜ້າ ຝູງຂ້າທັງຫລາຍກໍເກີງຍັງໄວຍະອັນເຖົ້າແກ່ຊະຣາການ ຈັກໄປມາກໍເປັນອັນຍາກລຳບາກເພື່ອເມືອງໄກ ຈັກຫລອເຝົ້າບາດມະຫາຣາຊະເຈົ້າບໍ່ໄດ້ ຝູງຂ້າໄວ້ສົມພານຈັກຂໍຢູ່ໂທນ ຍ້ອນບຸນສົມພານພະບາດມະຫາຣາຊະເຈົ້າໃນເມືອງແຫ່ງຕົນແລ ຜິວ່າອິນຕາຍຫາກເກີດມີແກ່ຝູງຂ້າ ຂໍແກ່ມະຫາຣາຊະເຈົ້າຢ່າລະປະຝູງຂ້າທັງຫລາຍເສັຍແດ່ເທີ້ນ ເມື່ອນັ້ນພະຍາອາມັດຕະເອກຣາດສຳມຸດຕິ ກໍໃຫ້ປະຕິຍານຂານຕອບດ້ວຍຣາຊະໄມຕີອັນຍິ່ງ ຈິ່ງກ່າວວ່າເອີດີແລ ວ່າດັ່ງນີ້ແລ້ວ ຈິ່ງໃຫ້ທ້າວພະຍາຮ້ອຍເອັດເມືອງຝູງເປັນລຸງຕາ ອາບອົງສົງເກດ ແລ້ວກໍສົມມາຄາຣະວະພະຍາຮ້ອຍເອັດເມືອງ ຕົນເປັນພໍ່ລຸງອາວເບື້ອງເມັຍຕົນ ແລ້ວກໍສົ່ງໜີເມືອຫາເມືອງຊູ່ຕົນຊູ່ຄົນກໍມີອັນນັ້ນແລ ແຮກແຕ່ນັ້ນໄປພາຍໜ້າ ທ້າວພະຍາຮ້ອຍເອັດຕົນ ເຂົາກໍຢູ່ເມືອງແຫ່ງຕົນຕາມສຸກແລ ເກີງເມື່ອລະດູອອກວັດສາແລ້ວ ຈິ່ງໃຊ້ຣາຊະທູຕາທັງຫລາຍມາໄຫວ້ພະຍາເອກຣາດຊູ່ປີຊູ່ປີກໍມີແລ ກ່າວເປດສະໜາບັນຫາສິບສອງປະການ ກໍແລ້ວທີ່ນີ້ແລ.

ທີ່ນີ້ຈັກກ່າວ ຕຳນານນິທານໂລກທັງຫລາຍ ສຳມຸດຕິວ່າເປັນດັ່ງຂອນດອກພາເຮືອໄຫລນັ້ນບໍຈາ ວ່າດັ່ງນັ້ນແລ ອາຈານເຈົ້າຜູ້ມີປະຫຍາ ແລະເສນາອາມາດທັງຫລາຍ ຜິວ່າບຸກຄະລະຜູ້ໃດລູກຕ່າງປະເທດເຂດບ້ານເມືອງອື່ນແລ ຈັກມາເປັນບ່າວເປັນໄພ່ຕົນດັ່ງນັ້ນ ໃຫ້ພິຈາລະນາດູໃຫ້ຮູ້ຜູ້ມີເຊື້ອຊາດພົງສາ ແລະ ຜູ້ຮ້າຍອັນຈັກເປັນໂທດແກ່ຕົນເມືອພາຍໜ້າ ໃຫ້ຮຳເພິງດູໃຫ້ແຈ້ງແລ້ວຈິ່ງເພິງລ້ອງແລ ຄຳອັນນີ້ເປັນຕຳນານອາຈານເຈົ້າກ່າວມາ ໄວ້ໃຫ້ເປັນທີ່ຫລູມແກ່ຄົນທັງຫລາຍດັ່ງນີ້ແລ ເມື່ອນັ້ນຍັງມີເມືອງອັນໜຶ່ງ ຊື່ວ່າຫາລະການະຄອນ ແລະ ພະຍາເຈົ້າເມືອງນັ້ນມີຣາຊະບຸດຕີຜູ້ໜຶ່ງ ແລະ ຣາຊະບຸດຕີຜູ້ນັ້ນ ເລົ່າຍັງມີລູກຍິງຜູ້ໜຶ່ງຊື່ວ່າ ນາງລັດກາກຸມາຣີເກີດມາໄດ້ສິບສອງປີ ຍັງມີພານຜູ້ໜຶ່ງ ຊື່ວ່າ ປູບປີຕະທາຣຸ ຂັນທະພານ ແລະ ພານຜູ້ນັ້ນດ້ວຍອັດກະຄວາມທີ່ນໄທວ່າ ຂອນດອກແລ ພານຜູ້ນັ້ນມັນເຫັນນາງກຸມາຣີຜູ້ນັ້ນມີຮູບງາມນັກ ກໍມີໃຈປະຕິພັດກັບດ້ວຍນາງຜູ້ນັ້ນ ມັນກໍລັກເອົານາງຜູ້ນັ້ນດ້ວຍຣິດທີມົນແຫ່ງມັນໄດ້ແລ້ວ ກໍພາໜີໄປສູ່ເມືອງໂກລັບພະນະຄອນ ມັນກໍໄປເຊົາສາລາຣິມທ່າພະຍາທັ້ນແລ ເມື່ອນັ້ນຍັງມີເສນາຜູ້ໜຶ່ງຊື່ວ່ານາວາພານ ດ້ວຍອັດກະຄຳໄທວ່າເຮືອແລ ນາວາພານຜູ້ນັ້ນມັນເຫັນປຸບປີຕະທາຣຸ ຂັນທະພານ

และ นางลัดฤາກຸມາຣີ ເຊີາສາລາຮີມທ່ານັ້ນ ມັນກໍເອົາເມືອສູ່ເຮືອນແຫ່ງມັນແລ້ວຈິ່ງກາມວ່າ ດູລາເຈົ້າລູກຮັກທັງສອງເຮີຍ ! ເຈົ້າລູກຮັກທັງສອງນີ້ ຈັກວ່າພົວເມັຍກັນລື ຮູ້ວ່າພີ່ນ້ອງເຊື້ອຊາດດຽວກັນລື ໃນຂະນະຍາມນັ້ນ ອັນວ່າຣິດທີມີນແຫ່ງປຸບປີຕະທາຣຸ ຂັນທະພາມນັ້ນ ກໍທາຍເສັຍ ຍັງຄຳສະເໜທາປະຕິພັດກັນນັ້ນກໍທາຍເສັຍ ປຸບປີຕະທາຣຸ ຂັນທະພາມ ຈິ່ງກ່າວວ່າ ເພື່ອຂ້າທັງສອງເປັນພີ່ນ້ອງກັນແລ ພໍ່ແມ່ເພື່ອຂ້າທັງສອງຕາຍເສັຍແລ ເພື່ອຂ້າມາເຖິງທີ່ນີ້ກໍເຫດສະແຫວງຫາທີ່ເພິ່ງແລ ຄັນວ່າໄດ້ແລ້ວຈັກເອົາເປັນພໍ່ແມ່ເພື່ອຂ້າແລ ເມື່ອນັ້ນນາງວາພາມກ່າວວ່າ ດູລາປຸບປີຕະທາຣຸ ຂັນທະພວມ ເຊືອເຈົ້າສະແຫວງຫາພໍ່ແມ່ດັ່ງນັ້ນດີແລ ສ່ວນວ່າເຮົາຜູ້ນີ້ ກໍມີລູກຍິງດຽວແລ ເຮົາພໍ່ຈັກເອົາເຊືອເຈົ້າທັງສອງເປັນລູກແລ ວ່າດັ່ງນີ້ແລ້ວ ພາມນາງວາເສນາກໍໃຫ້ລູກຍິງຕົນເປັນເມັຍປຸບປີຕະທາຣຸ ຂັນທະພາມນີແລ ນາງລັດກະກຸມາຣີນັ້ນ ມັນກໍເອົາເມືອກວາຍແກ່ພະຍາໂກລັບພະນະຄອນ ຕົນເປັນເຈົ້າມັນທັ້ນແລ ຢູ່ບໍ່ນານເທົ່າໃດ ຂ່າວສານອັນນັ້ນກໍໄປເຖິງພະຍາລັດກະນະຄອນ ຕົນເປັນປູ່ແຫ່ງນາງລັດຖາກຸມາຣີທັ້ນແລ ພະຍາລັດກະຕົນເປັນປູ່ກໍພິຈາລະນາກັບດ້ວຍເສນາທັງຫລາຍວ່າ ສ່ວນດັ່ງຣາຊະກຸມາຣີຫລານເຮົານີ້ ຮອຍທີ່ບຸກຄະລະຜູ້ໃດຜູ້ໜຶ່ງຫາກມັກຮັກລັກເອົາດ້ວຍຣິດທີມີນແລ້ວ ແລະເອົາໄປໃນເມືອງໂກລັບພະນະຄອນບໍ່ຢ່າຊະແລ ເຮົາຈັກໃຊ້ເປດສະໜາບັນທາໄປສ່ອງແກ່ພະຍາໂກລັບພະນະຄອນ ໃຫ້ສົ່ງຫລານເຮົາມາແລ ຜິວ່າພະຍາພຸ້ນບໍ່ຮູ້ກິດຈະບັນທາອັນເຮົາໃຊ້ໄປນັ້ນ ແລະ ບໍ່ສົ່ງຫລານເຮົາມາໃຫ້ດັ່ງນັ້ນ ເຮົາຈັກໄປຮົບເອົາ ເສນາທັງຫລາຍກ່າວວ່າ ອັນມະຫາຣາຊະເຈົ້າກ່າວນັ້ນກໍຄວນແທ້ກໍຂ້າແລ ເມື່ອນັ້ນພະຍາລັດກະນະຄອນ ກໍແປງບັນທາໃຊ້ໃຫ້ໄປແກ່ພະຍາໂກລັບພະນະຄອນນັ້ນ ດ້ວຍຄຳວ່າດັ່ງນີ້ ວັດກຸອັນໜຶ່ງ ອັນເປັນໃຈເມືອງອັນປະເສີດແຫ່ງເຮົາແລ ເລົ່າຍັງມີພາລາຮ້າຍຕົວໜຶ່ງ ລັກເອົາໃບຕອງບົວ ທີ່ໃຈເມືອງເຮົາແລ້ວ ແລະ ນຳເມືອເມືອງພີ່ເຮົາເຈົ້າພະຍາໂກລັບພະນະຄອນແລ້ວ ກໍລີ້ລັບອັບຢູ່ ຂໍພີ່ເຮົາເຈົ້າພະຍາໂກລັບພະຣາດ ຈົ່ງສົ່ງຄືນມາຍັງວັດກຸ ອັນເປັນໃຈເມືອງແຫ່ງເຮົາອັນປະເສີດມາແກ່ເຮົາແດ່ເທີ້ນ ຜິແລຮູ້ກິດຈະແຫ່ງບັນທາອັນເຮົາໃຊ້ໄປນັ້ນແລ້ວ ແລະບໍ່ສົ່ງມາຍັງວັດກຸອັນເປັນໃຈເມືອງແກ່ເຮົາ ເຮົາຈັກໄປກະທຳຍຸດທະກຳແທ້ດີຫລີແລ ຄັນວ່າແຕ່ງບັນທາອັນນີ້ແລ້ວ ກໍໃຊ້ໃຫ້ນຳໄປກໍມີແລ ຄັນວ່າຄົນໃຊ້ໄປຮອດແລ້ວກ່າວກິດຈະແຫ່ງບັນທາອັນນັ້ນ ກວາຍແກ່ພະຍາໂກລັບພະຣາດ ໂດຍດັ່ງພະຍາເຊົາສັ່ງນັ້ນຊູ່ປະການທັ້ນແລ ເມື່ອນັ້ນພະຍາໂກລັບພະຣາດໄດ້ຍິນບັນທາອັນນັ້ນແລ້ວ ກໍບໍ່ປາກົດແຈ້ງໃນບັນທາອັນນັ້ນໄດ້ສັກອັນແລ ໃນວັນລຸນ ພະຍາກໍຊຸມນຸມມາຍັງເສນາອາມາດທັງຫລາຍ ໃຫ້ພິຈາລະນາດູຍັງບັນທາອັນນັ້ນກ້ອນເຈັດວັນ ກໍບໍ່ປາກົດຮູ້ແຈ້ງແຫ່ງບັນທາອັນນັ້ນໄດ້ສັກຄົນແລ ພະຍາໂກລັບພະຣາດນັ້ນ ອັນມີໂກທາຄຳຄອດທາກມາຄອບງຳແລ້ວ ກ່າວຍັງຄຳກຳຣາບນາບຂູ່ຍັງຄົນໃຊ້ທັງຫລາຍແຫ່ງພະຍາ ລັດກະທັ້ນແລ ເມື່ອນັ້ນຄົນໃຊ້ທັງຫລາຍ ຮູ້ວ່າພະຍາໂກລັບພະຣາດຄອດດັ່ງນັ້ນ ເຂົາກໍຢ້ານສະທ້ານຕົກໃຈກົວມາກນັກແລ້ວເຂົາກໍໜີດ້ວຍດ່ວນພະລັນທັ້ນແລ ຄັນວ່າຄົນໃຊ້ຄືນຄອບແລ້ວ ພະຍາລັດກະນະຄອນກໍຄອດນັກ ແລ້ວກໍຍໍຣີພົນໄປຮົບເອົາຍັງເມືອງທັງຫລາຍສິບສອງເມືອງ ອັນເປັນອານາລັດຖາແຫ່ງພະຍາໂກລັບພະຣາດ ໄດ້ສິບສອງເມືອງທັ້ນແລ ພະຍາເລົ່າຊ້ຳໃຊ້ໄປກ່າວແກ່ພະຍາໂກລັບພະຣາດວ່າສັນນີ້ ດູລາເຈົ້າພະຍາໂກລັບພະຣາດ ອັນວ່າບັນທາເຮົາໃຊ້ມາສ່ອງແກ່ພະຍາເຈົ້າ ແລະເສນາອາມາດທັງ

ຫລາຍແລ້ວ ກໍບໍ່ອາດຈັກແກ້ໄດ້ລີ ກໍບໍ່ສິ່ງຍັງວັດກຸໃຈເມືອງມາໃຫ້ແກ່ເຮົາສັນນີ້ ເຮົາກໍຮິບເອົາເມືອງພາຍນອກກໍໄດ້ສິບສອງເມືອງແລ້ວແລະຍັງສາມສິບເຈັດເມືອງ ຜີແລບໍ່ມາສິ່ງແກ່ເຮົາດັ່ງນັ້ນກໍຈັກຊ້ຳຮິບເອົາຍັງເມືອງທັງຫລາຍສາມສິບເຈັດເມືອງນັ້ນໃຫ້ສ້ອງແລ ເມື່ອນັ້ນ ພະຍາໂກລັບພະຣາດໄດ້ຍິນຄຳອັນນັ້ນແລ້ວ ກໍຊ້ຳຢ້ານສະທ້ານຕົກໃຈກົວຢ້ອວ່າຈັກເສັຍເມືອງແຫ່ງຕົນ ຈິ່ງຊຸມນຸມມາຍັງເສນາອາມາດທັງຫລາຍ ແລ້ວກໍຊ້ຳໃຫ້ພິຈາລະນາດູ ຍັງບັນຫາອັນນັ້ນ ເຖິງເຈັດວັນບໍ່ອາດຈັກຮູ້ໄດ້ສັກຄົນແລ ເມື່ອນັ້ນຍັງມີປະໂຣຫິດຜູ້ໜຶ່ງ ຊື່ວ່າ ສຸມະນະປຸໂຣຫິດ ຈິ່ງໄຫວ້ພະຍາໂກລັບພະຣາດວ່າ ຂ້າແກ່ມະຫາຣາຊະເຈົ້າ ສ່ວນດັ່ງບັນຫາອັນນີ້ ມະຫາຣາຊະເຈົ້າ ກໍໃຫ້ຝູງຂ້າທັງຫລາຍພິຈາລະນາເຖິງສອງທີ່ແລ້ວ ກໍບໍ່ປາກົດແຈ້ງສັກຄົນແລ ຜີວ່າເຮົາບໍ່ສະແຫວງຫາຍັງນັກປາດເຈົ້າ ຕົນຈີບເພດທັງມວນມາແກ້ໃຫ້ດັ່ງນັ້ນບໍ່ຄວນແລ ດັ່ງໄດ້ຍິນມານີ້ ຍັງມີເມືອງອັນໜຶ່ງຢູ່ຟາກນ້ຳສະໝຸດທິບວັນອອກນັ້ນ ຊື່ວ່າເມືອງພາຫາລະນະຄອນ ຍັງມີກຸມານຕົນໜຶ່ງ ຊື່ວ່າອາມັດຕະກຸມານ ເປັນລູກພະຍາມູລະຕັນໄຕເອກຣາດເອົາມາລ້ຽງ ເມື່ອບໍ່ນານ ກໍໄດ້ສະເຫວີຍເມືອງແທນພໍ່ລ້ຽງ ກໍລອດເປັນພະຍາເອກຣາດ ເປັນໃຫຍ່ກວ່າທ້າວພະຍາຮ້ອຍເອັດເມືອງແລ ທ່ານນັ້ນຍັງມີປະໜຍາຍິ່ງກວ່າຄົນທັງຫລາຍແລ ຈິ່ງໄດ້ເປັນເອກຣາດດາຍ ເຮົາເພິ່ງໃຊ້ຣາຊທູຕານຳບັນຫາອັນນີ້ໄປເຖິງເພິ່ນ ວ່າຈັກໃຫ້ແກ້ບັນຫາອັນນີ້ ໃຫ້ປາກົດແຈ້ງແກ່ເຮົາຄວນແລ ເມື່ອນັ້ນ ພະຍາໂກລັບພະຣາດກ່າວດີດີແລ ແລ້ວກໍໃຊ້ໃຫ້ເອົາຄຳແສນໜຶ່ງໄປເພື່ອວ່າໃຫ້ເປັນດອກໄມ້ບູຊາ ແກ່ພະຍາເອກຣາດ ແລ້ວກໍໃຊ້ໃຫ້ເມືອແລ ຄັນວ່າຄົນໃຊ້ເມືອຮອດພະຍາເອກຣາດແລ້ວກໍກ່າວກິດຈະທັງມວນຖວາຍແກ່ພະຍາເອກຣາດນັ້ນແລ ເມື່ອນັ້ນພະຍາເອກຣາດໄດ້ຍິນບັນຫາອັນນັ້ນແລ້ວກໍຕັດສະຣູ້ກິດຈະແຫ່ງບັນຫາອັນນັ້ນແຈ້ງນັກໃນໃຈຕົນກໍມີແລ ເມື່ອວັນລຸນນັ້ນ ພະຍາຈັກແກ້ບັນຫາກໍໃຫ້ຮອກຫາມາຍັງຄົນໃຊ້ພະຍາໂກລັບພະຣາດມາແລ້ວ ພະຍາເອກຣາດກໍຂໍພອນເຊິ່ງເທວະດາວ່າ ດູລາເທວະດາເຈົ້າ ບັດນີ້ຂ້າຈັກແກ້ບັນຫາອັນນີ້ແກ່ຄົນໃຊ້ພະຍາໂກລັບພະຣາດນີ້ ຜີວ່າຍັງຊອບຄຳພະຍາເຈົ້າກາລັດກະນະຄອນໃຊ້ມາສ່ອງນັ້ນແທ້ ເທວະດາເຈົ້າຈິ່ງໃຫ້ສັກຂີອັນໃດອັນໜຶ່ງ ໃຫ້ເປັນທີ່ເພິ່ງເຊື່ອແກ່ຄົນໃຊ້ທັງຫລາຍເທີ້ນ ວ່າດັ່ງນັ້ນແລ້ວ ຈິ່ງກ່າວວ່າ ດູລາຄົນໃຊ້ສ່ວນວ່າບັນຫາອັນພະຍາກາລັດກາເຈົ້າໃຊ້ມາສ່ອງນີ້ ເປັນສາມປະການດາຍ ອັນວ່າວັດກຸອັນໜຶ່ງເປັນໃຈເມືອງອັນປະເສີດນັ້ນ ເປັນປະການໜຶ່ງແລ ອັນວ່າພາລາຕົນນັ້ນ ເປັນອັນກ້ອນສອງປະການ ອັນວ່າລັກເອົາແລ້ວ ແລະທີ່ຕອງບືວນັ້ນ ກໍເປັນບັນຫາອັນກ້ອນສາມແລ້ວ ນຳມາເມືອງໂກລັບພະຣາດພຸ້ນແລ ວ່າດັ່ງນັ້ນ ອັນນັ້ນບໍ່ໃຊ່ອັນໃດເລີຍ ອັນວ່າພາລາຕົວນັ້ນ ກໍຄືວ່າຄົນຜູ້ສະຫລາດດ້ວຍມົນອັນປະເສີດນັກແລ ອັນວ່າໃບບືວນັ້ນຄືວ່າມົນແຫ່ງຊາຍຜູ້ນັ້ນແລ ອັນວ່າໃຈເມືອງອັນປະເສີດນັ້ນ ຄືວ່າຍິງມີຮູບອັນງາມເປັນທີ່ຮັກສະເໜີໃຈ ຄືວ່າລູກຍິງຫລານຍິງນັ້ນແລ ດູລາຄົນໃຊ້ທັງຫລາຍ ຈິ່ງຈຳທູນພະຣາຊະໂອວາດອາດຍາແຫ່ງເຮົານີ້ໃຫ້ໝັ້ນ ແລ້ວຈິ່ງກ່າວແກ່ພະຍາຕົນພີ່ເຮົາເຈົ້າພະຍາໂກລັບພະຣາດເທີ້ນ ແລ້ວຈິ່ງເອົາວັດກຸອັນເປັນໃຈເມືອງ ຄືວ່ານາງກຸມາຣີຜູ້ມີຮູບໂສມອັນງາມນັ້ນໄປສິ່ງແກ່ພະຍາກາລັດກາໂດຍພະລັນເທີ້ນ ຈິ່ງຈັກບໍ່ເສັຍເມືອງເຮົາແລ ຄັນວ່າຮິບຄືນແທ້ດັ່ງນັ້ນຄຳວຸດທິສະຫວັດດີກໍຈັກມີແກ່ເຮົາແລ ບັນຫາອັນນີ້ ພະຍາກາລັດກາກໍຫາກຄຶດຮຳເພິງເອົາດ້ວຍປະໜຍາແຫ່ງຕົນແລ້ວກໍໃຊ້ໃຫ້ມາສ່ອງແກ່ພີ່ເຮົາແລ ພະຍາອາມັດຕະເອກຣາດ

ແກ້ບັນຫາອັນນີ້ ດ້ວຍປະຫຍາແຫ່ງຕົນພະລັນນັກເປັນດັ່ງມີຜູ້ບອກນັ້ນແລ ເມື່ອນັ້ນເທວະດາຕົນຢູ່ຮັກສາພູມມະເສດຕະສັດພະຍາອາມັດຕະເອກຣາດນັ້ນ ກໍຍິນດີມາກນັກ ຈຶ່ງພາຍດອກຂະໜຸດທິບລົງມາບູຊາໃຫ້ເປັນສັກຂີແກ່ຄົນໃຊ້ທັ້ນແລ ເມື່ອນັ້ນຄົນໃຊ້ທັງຫລາຍ ເຫັນເທວະດາພາຍດອກໄມ້ລົງມາບູຊານັ້ນເປັນອັນອັດສະຈັນມາກນັກ ເຂົາກໍສາທຸການຍິນດີມາກນັກແລ້ວ ເຂົາກໍສັ່ງອໍາລາພະຍາ ແລ້ວກໍຄືນເມື່ອກ່າວກິດຈະແຫ່ງບັນຫາອັນນັ້ນຊູ່ປະການແກ່ພະຍາໂກລັບພະຣາດ ອັນເປັນເຈົ້າແຫ່ງເຂົາກໍມີແລ ພະຍາໂກລັບພະຣາດໄດ້ຍິນແລ້ວຈຶ່ງພິຈາລະນາດູ ກໍຮູ້ວ່ານາງລັດກາກຸມາຣີ ເປັນຫລານແຫ່ງພະຍາກາລັດກາ ພະຍາກໍຊໍ້າການນາງຜູ້ນັ້ນ ແລ້ວກໍເອົານາງລັດການັ້ນໄປສົ່ງແກ່ພະຍາກາລັດກາທັ້ນແລ ພະຍາໄດ້ຫລານຕົນຄືນມາແລ້ວ ກໍຍິນດີມາກນັກ ກໍຄືນເມືອງທັງຫລາຍສິບສອງເມືອງອັນຕົນຫາກຮິບໄດ້ນັ້ນ ແກ່ພະຍາໂກລັບພະຣາດດັ່ງເກົ່າທັ້ນແລ ເມື່ອນັ້ນພະຍາໂກລັບພະຣາດ ກໍຕ້ານຈາລະຈາດ້ວຍເສນາທັງຫລາຍວ່າ ສອນດັ່ງນາວາພາມ ແລະ ປຸບປິຕະທາຣຸຂັນທະພາມນີ້ ມັນເອົາມາເປັນລູກຊາຍມັນ ສອນດັ່ງນາງລັດການັ້ນ ເລົ່າມາພາງເຮົາວ່າ ເປັນລູກແຫ່ງມັນໃຫ້ມາຊ່ວງໃຊ້ຕົນມີເຮົາ ເຮົາກໍບໍ່ຮູ້ວ່ານາງນັ້ນເປັນຫລານແຫ່ງພະຍາກາລັດການັ້ນສັນນີ້ແທ້ດາຍ ບັດນີ້ເລົ່າມາເສັຍຄໍາເຮົາແສນໜຶ່ງ ອັນເອົາໄປບູຊາພະຍາເອກຣາດນັ້ນ ກໍຄອບຂາສອງຄົນນີ້ແລ ຂານີ້ບໍ່ດີບໍ່ຄວນໃຫ້ຂາຢູ່ເມືອງນີ້ແລ ພະຍາກໍໃຫ້ເອົາຂາສອງຄົນຄືວ່ານາວາພາມແລະ ປຸບປິຕະທາຣຸ ຂັນທະພາມນັ້ນ ໃສ່ແພໄຫລເສັຍຍັງແມ່ນໍ້າຄົງຄາກັບດ້ວຍກັນມີແລ ເມື່ອນັ້ນອາຈານເຈົ້າຈຶ່ງສິນທະນາກັບດ້ວຍກັນວ່າ ສ່ວນວ່າ ນາວາພາມນີ້ມັນເປັນເສນາພະຍາເຈົ້າແຫ່ງເຮົາມັນກໍເກິງເຊິ່ງອັນຈິບຫາຍສັນນີ້ ເຫດວ່າເອົາປຸບປິຕະທາຣຸຂັນທະນັ້ນມາເປັນລູກຕົນນັ້ນແລ້ວໄດ້ເອົານາງລັດກາມາກວາຍແກ່ພະຍາເຈົ້າແຫ່ງຕົນ ດ້ວຍອັນບໍ່ພິຈາລະນາດູກໍ່ ທ່ານກໍຈິບຫາຍໄປແທ້ແລ ອັນວ່າປຸບປິຕະທາຣຸ ຂັນທະພາມນັ້ນ ດ້ວຍຄໍາວ່າຂອນດອກແລ ອັນວ່ານາວາພາມນັ້ນ ຄໍາໄທວ່າເຮືອແລ ທີ່ນີ້ນັກປາດກ່າວວ່າ ຂອນດອກພາເຮືອໄຫລໄນຍະໜຶ່ງວ່າ ແພພາເຮືອໄຫລເຮືອພາຂອນດອກໄຫລແລ ຕັ້ງແຕ່ນີ້ເມືອໜ້າ ທ້າວພະຍາເສນາອາມາດນັກປາດປະໂຣຫິດທັງຫລາຍ ຝູງຕາງຕາທ້າວພະຍາກໍເພິງວ່າພິຈາລະນາດູກໍ່ ຍັງບຸກຄະລະຜູ້ໃດຜູ້ໜຶ່ງ ແລະມາແຕ່ແດນໄກໄທຕ່າງອື່ນກໍດີ ຜີແລຢູ່ເມືອງດຽວກັນກໍດີ ແລະ ມາອິສະຄຸ້ນເຄີຍເປັນມິດ ເປັນສະຫາຍກັນກໍດີ ກໍເພິງພິຈາລະນາດູກໍ່ຊູ່ປະການແທ້ດາຍ ຄວນໃຫ້ຢູ່ຈຶ່ງໃຫ້ຢູ່ ບໍ່ຄວນໃຫ້ຢູ່ຢ່າໃຫ້ຢູ່ແທ້ດາຍແມ່ນວ່າລູກຊາຍຕົນອອກຈາກເຮືອນໄປໄກໄດ້ສອງປີສາມປີຈຶ່ງຄືນມາເຮືອນດັ່ງນັ້ນກໍດີ ກໍເພິງພິຈາລະນາການດູກ່ອນດາຍ ລາງເທື່ອນັ້ນມັນໄປພາຍໜ້າພຸ້ນ ເລົ່າມີໂທດຈຶ່ງຄືນມາບໍ່ຮູ້ເດ ດັ່ງນັ້ນບຸກຄະລະຜູ້ເປັນພໍ່ເປັນແມ່ພີ່ນ້ອງ ກໍເພິ່ງລອງການດູໃຫ້ແຈ້ງແຫ່ງເຫດອັນມັນຄືນມາຫາເຮົານັ້ນລາງເທື່ອມັນກໍພາໜີ້ສິນພາໂທດພາໄພຍມາໃສ່ເຮົາດາຍ ເພິງການດູຊູ່ປະການແລ ລາງເທື່ອນັ້ນກໍຊັກເງືອກມາເຮືອຊັກເສືອມາຫາບ້ານດາຍ ກ່າວຕໍານານຂອນດອກພາເຮືອໄຫລ ກໍແລ້ວທີ່ນີ້ແລ.

ຢູ່ບໍ່ນານເທົ່າໃດ ພະຍາກາລັດກາຄະນຶງໃນໃຈວ່າ ພະຍາໂກລັບພະຣາດນີ້ ໄດ້ເປັນມິດກັບດ້ວຍພະຍາເອກຣາດ ຈັກກະທໍາໝາຍໝັ້ນແກ່ອາດຕະມາບໍ່ຢ່າຊະແລ ສອນດັ່ງນາງສາລັດກາກຸມາຣີຫຼານອາດຕະມານີ້ ນາງກໍຫາກໄດ້ເປັນເມັຍພະຍາໂກລັບພະຣາດແລ້ວແລ ຄວນອາດຕະມາເອົາຫຼານຜູ້ນີ້ ໄປອຸດສາພິເສກໃຫ້ເປັນເມັຍພະຍາໂກລັບພະຣາດດັ່ງເກົ່າຄວນແລ ຄະນຶງດັ່ງນີ້ແລ້ວກໍ

ເອົາຫລານຄືນໄປອຸດສາພິເສກໃຫ້ເປັນ ນາງອັກຄະມະເຫສີເທວີ ແກ່ພະຍາໂກລັບພະຣາດທັ້ນແລ ແຕ່ນັ້ນເມືອງທັງສອງກໍມີໄມຕີຮັກແພງກັບດ້ວຍກັນມາກນັກແລ ເມື່ອນັ້ນ ພະຍາກາລັດຖາຈຶ່ງຄະນຶງໃນໃຈວ່າ ອາດຕະມາ ໄດ້ຫລານອາດຕະມາມາຄືນນີ້ ກໍເພື່ອພະຍາເອກຣາດ ແກ້ບັນຫາອັນອາດຕະມາໃຫ້ໄປສ່ອງແກ່ພະຍາໂກລັບພະຣາດນັ້ນ ກໍຈຶ່ງຄືນຫລານອາດຕະມາ ມາແທ້ແລ ອາດຕະມາບໍ່ຄວນລືມຄຸນພະຍາເອກຣາດແລ ຄະນຶງດັ່ງນີ້ແລ້ວ ກໍເອົາຄຳແສນໜຶ່ງໃຊ້ໃຫ້ນຳໄປບູຊາປະຫຍາພະຍາເອກຣາດກໍມີແລ ອັນວ່າປະຫຍານີ້ກໍຫາກເປັນແກ່ນເປັນສານແຫ່ງຄົນທັງຫລາຍໃນໂລກນີ້ແລ ເມື່ອນັ້ນພະຍາໂກລັບພະຣາດ ໄດ້ນາງສາລັດຖາກຸມາຣີຄືນມາເປັນນາງມະເຫສີດັ່ງນັ້ນ ກໍມີຄວາມຍິນດີມາກນັກ ກໍຄະນຶງເຖິງນາອາພາມ ດ້ວຍຄຳຄະນຶງວ່າດັ່ງນີ້ ອາດຕະມາໄດ້ນາງສາລັດຖາກຸມາຣີມາເປັນເມັຍນີ້ ກໍເພື່ອນາອາພາມ ແລະ ປຸບປິຕະທາຣຸ ຂັນທະພາມນັ້ນແລ ຂານີ້ມີຄຸນແກ່ອາດຕະມາມາກນັກແລ ຄວນອາດຕະມາໄປນຳເອົາມາດີແລ ພະຍາກໍໃຊ້ໃຫ້ໄປນຳເອົາຂາທັງສອງມາ ສ່ວນວ່າ ນາອາພາມກໍໃຫ້ມັນເປັນເສນາດັ່ງເກົ່າທັ້ນແລ ສ່ວນປຸບປິຕະທາຣຸ ຂັນທະ ກໍໃຫ້ຢູ່ກັບນາອາພາມ ພະຍາກໍໃຫ້ຍົດສັກສຳປັດຕິແກ່ຂາທັງສອງມາກນັກແລ ດັ່ງພະຍາເອົາຂາທັງສອງຄືນມານີ້ ອາຈານເຈົ້າລາງຜ່ອງກໍວ່າຊອບ ລາງຜ່ອງກໍວ່າບໍ່ຊອບແລ ເຫດປຸບປິຕະທາຣຸຂັນທະນີ້ ມັນຫາກເອົາລູກເອົາຫລານເພິ່ນ ກໍຈຶ່ງເປັນຂຸ່ນເປັນມົວແກ່ບ້ານເມືອງ ພະຍາໂກລັບພະຣາດເຈົ້າ ກໍຈິບຫາຍບ້ານເມືອງມາກນັກແລ.

ທີ່ນີ້ຈັກກ່າວສອງນາງພີ່ນ້ອງຍາດກັນເອົາສ້ອຍສັງວານກ່ອນແລ ຍັງມີເສດຖີຜູ້ໜຶ່ງມີລູກຍິງສອງຄົນພີ່ນ້ອງ ເກີດຮ່ວມທ້ອງແມ່ດຽວກັນແລ ຍັງມີເສດຖີຜູ້ໜຶ່ງບໍ່ມີລູກ ກໍເປັນສະຫາຍຮັກເສດຖີຜູ້ມີລູກນັ້ນແລ ເມື່ອຫລົ້ມ ມະໂຫລະສົບ ເສດຖີຜູ້ບໍ່ມີລູກນັ້ນ ກໍໃຊ້ໃຫ້ເອົາສ້ອຍສັງວານຄຳ ແລະ ດອກໄມ້ຄຳອັນຄວນຄ່າໄດ້ແສນຄຳ ນຳໄປໃຫ້ດ້ວຍຄຳສັ່ງວ່າ ດູລາສະຫາຍ ເຄື່ອງປະດັບສອງປະການນີ້ ພໍວ່າສະຫາຍຍັງຮັກຜູ້ໃດແອນຍິ່ງ ສະຫາຍເຈົ້າຈຶ່ງໃຫ້ສັງວານຄຳແກ່ນາງຜູ້ນັ້ນເທີ້ນ ວ່າດັ່ງນີ້ແລ ແຕ່ນັ້ນເສດຖີຜູ້ເປັນພໍ່ໄດ້ຍິນຄຳອັນນັ້ນ ກໍຄະນຶງໃນໃຈວ່າ ລູກອາດຕະມາສອງຄົນນີ້ ອາດຕະມາກໍຮັກສະເໝີກັນ ອັນວ່າສ້ອຍສັງວານຄຳນີ້ ອາດຕະມາຈັກໃຫ້ຜູ້ພີ່ດັ່ງນັ້ນ ຜູ້ນ້ອງກໍຈັກມີຄຳເຫລືອໃຈດາຍ ອາດຕະມາຈັກໃຫ້ຜູ້ນ້ອງ ຜູ້ພີ່ກໍຈັກເຫລືອໃຈແລ ເສດຖີຜູ້ພໍ່ກໍບໍ່ອາດໃຫ້ເຄື່ອງປະດັບນັ້ນໄດ້ແກ່ຂາພີ່ນ້ອງທັງສອງນັ້ນແລ ເຖິງເມື່ອວັນຫລົ້ມມະໂຫລະສົບ ເສດຖີຜູ້ພໍ່ກໍເອົາເຄື່ອງປະດັບອັນນັ້ນ ໄປໄວ້ຊ້ອງໜ້າຂາພີ່ນ້ອງທັ້ນແລ ເມື່ອນັ້ນຂາພີ່ນ້ອງກໍຍາດຊິງກັນເອົາສ້ອຍສັງວານຄຳນັ້ນ ຊູ່ຄົນຊູ່ໄຄ່ໄດ້ນັກ ນາງຜູ້ພີ່ນັ້ນຍາດເອົາໄດ້ສັງວານຄຳ ນາງຜູ້ນ້ອງກໍເຂົ້າໄປໃນຜາສາດດ້ວຍຄຳວ່າ ພໍ່ຮັກພີ່ກວ່າກູດາຍວ່າດັ່ງນີ້ ຜູ້ພີ່ນັ້ນກ່າວວ່າ ດູລານ້ອງຮັກພີ່ ເຈົ້າຢ່າໄດ້ຄອດເທີ້ນ ພໍ່ຮັກຂາສະເໝີກັນແທ້ດາຍ ເຫດດັ່ງນັ້ນ ພໍ່ຣາຈັກປັນໃຫ້ຣາບໍ່ໄດ້ເພື່ອອັນແລ ນາງຜູ້ນ້ອງບໍ່ຟັງກ່າວວ່າ ຮອຍວ່າພໍ່ຫາກໄວ້ສຳຄັນແກ່ພີ່ແລ ນາງຜູ້ພີ່ກ່າວວ່າ ດູລານ້ອງຮັກພີ່ ພໍ່ຣາບໍ່ໄດ້ໃຫ້ສຳຄັນແກ່ເຮົາພີ່ສັງແທ້ນາ ນາງຜູ້ນ້ອງບໍ່ຟັງຄຳພີ່ກ່າວນັ້ນວ່າ ຂ້າບໍ່ເຊື່ອໄດ້ ຂ້າຈັກປ້ອຍກິນສະບົດຊະແລ ຜູ້ພີ່ກ່າວວ່າ ດູລາເຈົ້ານ້ອງເຮີຍ ຄຳອັນເຮົາພີ່ກ່າວນັ້ນມີແທ້ແລ ຈັກກ່າວວ່າຄຳປ້ອຍກິນສະບົດກໍດີເທີ້ນ ຈັກໃຫ້ຜາສາດຣາທັງສອງຂາດກາງກໍດີເທີ້ນ ເສດຖີຜູ້ພໍ່ກ່າວວ່າ ດູລາລູກຮັກພໍ່ທັງ

ສອງ ເຂືອຢ່າວ່າຈັກປ້ອຍສະບົດແກ່ກັນເທີ້ນ ຂາກໍ່ບໍ່ເຊື່ອຟັງຄຳເສດຖີ ທີ່ນັ້ນເສດຖີຜູ້ພໍ່ ກໍຈິ່ງເອົາຄຳອັນນັ້ນເມືອໄຫວ້ພະຍາ ພະຍາກໍກ່າວວ່າ ຂາທັງສອງບໍ່ຟັງຄຳພໍ່ດັ່ງນັ້ນ ທ່ານຈິ່ງເອົາມາທັງສອງກັບທັງເຄື່ອງປະດັບສອງອັນນັ້ນມາເທີ້ນ ເຮົາຫາກຈັກປັນໃຫ້ແກ່ຂາທັງສອງພີ່ນ້ອງແລ ເມື່ອນັ້ນ ເສດຖີກໍເອົາລູກຍິງທັງສອງພີ່ນ້ອງ ກັບທັງສັງວານຄຳ ແລະ ດອກໄມ້ຄຳເມືອສູ່ພະຍາທັ້ນແລ ພະຍາກໍປັນໃຫ້ແກ່ຂາ ແລະສ້ອຍສັງວານຄຳນັ້ນ ພະຍາກໍໃຫ້ແກ່ນາງຜູ້ນ້ອງນັ້ນແລ ເຫດວ່າຜູ້ນ້ອງມີໄວຍະແວນນ້ອຍ ຈິ່ງໃຫ້ສ້ອຍສັງວານເພື່ອອັນແລ ດອກໄມ້ຄຳນັ້ນກໍໃຫ້ແກ່ນາງຜູ້ພີ່ ເຫດວ່າຜູ້ພີ່ມີໄວຍະແກວນແກ່ ຄວນທັດທະລິງດອກໄມ້ຄຳແລ ພະຍາກໍສອນວ່າ ແຣກແຕ່ນີ້ເມືອຫນ້າ ເຂືອຢ່າໄດ້ຜິດກັນເທີ້ນ ຄັນວ່າເຂືອຜິດກັນກິນສະບົດແກ່ກັນສັນນັ້ນ ບໍ່ຄວນແທ້ແລ ຄັນເຂືອກິນສະບົດແກ່ກັນ ຜາສາດເຂືອກໍຈັກຂາດເສັຍ ແລະ ເກີງເຊິ່ງອັນຈິບຫາຍແທ້ແລ ຈັກເປັນດັ່ງພະຍາວອກສອງຕົວຍາດກັນໃນເກາະລັງການັ້ນແລ ພະຍາກໍຊັກຕຳນານພະຍາວອກສອງຕົວ ຍາດກັນໃນເກາະລັງການັ້ນວ່າ ດູລານາງທັງສອງຕຳນານອັນນີ້ ເຮົາໄດ້ແຕ່ອາຈານເຈົ້າທັງຫລາຍກ່າວສືບໆມາແລ ໃນເມື່ອພັດທະກັບອັນນີ້ຈິ່ງກໍ່ຕັ້ງທີວທີວັນນັ້ນ ຍັງມີພະຍາຕົນຫນຶ່ງໄດ້ເປັນພະຍາໃນເມືອງລັງກາ ແລະພາມມະນາ ມີລູກຜູ້ຫນຶ່ງເປັນປະໂຣຫິຕະພາມ ຫອນຍ່ອມແຕ່ງບ້ານແປງເມືອງຕົນໃນເມືອງລັງການັ້ນແລ ຄືວ່າແຕ່ງໃຫ້ຄົນ ແລະ ສັດທັງຫລາຍຢູ່ແລ ປະໂຣຫິຕະພາມກໍແຕ່ງໃຫ້ຄົນທັງຫລາຍຢູ່ຊູ່ແຫ່ງ ດັ່ງແຈ່ງເກາະທີບວັນອອກນັ້ນ ໃຫ້ພະຍາວອກຕົວຊື່ວ່າ ພາຫາລະມັກກະຕະຢູ່ ມີປະຣິວານໄດ້ແສນຕົວ ດັ່ງແຈ່ງເກາະທີບວັນຕົກນັ້ນ ໃຫ້ພະຍາວອກຕົວຊື່ວ່າ ສຸຈຸມັກກະຕະຢູ່ ມີປະຣິວານໄດ້ເກົ້າຫມື່ນຕົວແລ ຍັງມີຫມາກມ່ວງທັງຫລາຍໄດ້ພັນຕົ້ນແລ ປະໂຣຫິຕະພາມຜູ້ນັ້ນ ກໍປັນໃຫ້ແລະຕົວລະຫ້າຮ້ອຍຕົ້ນກໍມີແລ ເມື່ອຫມາກມ່ວງເປັນຫນ່ວຍ ວອກທັງຫລາຍກໍໄປກິນ ຕາມຄຳປະໂຣຫິດປັນໃຫ້ຊູ່ເດືອນແທ້ທັ້ນແລ ຍັງມີປີຫນຶ່ງນັ້ນພະຍາລັງກາຕົນຊອບທຳນັ້ນກໍຕາຍເສັຍ ຜູ້ນ້ອງນັ້ນກໍໄດ້ເປັນພະຍາບໍ່ຊອບທຳ ບໍ່ເອົາປະໂຣຫິດຜູ້ເກົ່າເປັນອາຈານ ແລະພອຍເລົ່າເອົາຜູ້ອື່ນມາເປັນອາຈານປ່ຽນທັ້ນແລ ແຕ່ນັ້ນເມືອຫນ້າ ເມື່ອຫມາກມ່ວງເປັນມາແລ້ວ ວອກທັງຫລາຍຝູງເປັນປະຣິວານພະຍາພາຫາລະມັກກະຕະນັ້ນ ກໍໄປລັກກິນຫມາກມ່ວງ ໃນເຂດພະຍາສຸຈຸມັກກະຕະ ຊູ່ປີທັ້ນແລ ເມື່ອນັ້ນບ່າວພະຍາສຸຈຸມັກກະຕະ ກໍໄປເລົ່າແກ່ພະຍາສຸຈຸມັກກະຕະອັນເປັນເຈົ້າແຫ່ງເຂົາທັ້ນແລ ເມື່ອນັ້ນພະຍາສຸຈຸມັກກະຕະ ກໍໃຊ້ໃຫ້ໄປເລົ່າແກ່ພະຍາພາຫາລະມັກກະຕະນັ້ນ ດ້ວຍຄຳວ່າ ດູລາສະຫາຍຫມາກມ່ວງອັນມີພາຍໃນເຂດແຫ່ງເຮົານັ້ນ ບ່າວແຫ່ງສະຫາຍກໍມາລັກກິນແລ ເມື່ອນັ້ນພະຍາວອກຕົວຊື່ວ່າ ພາຫາລະມັກກະຕະ ກໍກ່າວວ່າ ດູລາເຈົ້າສະຫາຍ ບ່າວແຫ່ງເຮົາບໍ່ໄດ້ໄປລັກກິນຫມາກມ່ວງສະຫາຍສັກເທື່ອແລ ສະຫາຍຢ່າໄດ້ວ່າດັ່ງນີ້ເທີ້ນ ເມື່ອນັ້ນພະຍາວອກຕົວຊື່ວ່າ ສຸຈຸມັກກະຕະກ່າວແກ່ວອກທັງຫລາຍຝູງເປັນບ່າວແຫ່ງຕົນວ່າ ຜິວ່າບ່າວພະຍາພາຫາລະມັກກະຕະນັ້ນຍັງເລົ່າມາກິນຫມາກມ່ວງເຮົາແທ້ ສູຈິ່ງຫຍຸບເອົາຕົວຫນຶ່ງໃຫ້ໄດ້ເປັນສັກຂີແກ່ເຮົາເທີ້ນ ເມື່ອນັ້ນບ່າວພະຍາສຸຈຸກໍຫຍຸບເອົາວອກຕົວຫນຶ່ງ ອັນມາລັກກິນຫມາກມ່ວງນັ້ນເມື່ອພາຍລຸນໄດ້ແລ້ວ ພະຍາສຸຈຸກໍໃຊ້ໃຫ້ໄປບອກເລົ່າພະຍາພາຫາລະມັກກະຕະນັ້ນ ດ້ວຍຄຳວ່າ ດູລາສະຫາຍ ບ່າວສະຫາຍໄປລັກກິນຫມາກມ່ວງແຫ່ງເຮົາ ເຂົາກໍຫຍຸບເອົາໄດ້ຕົວຫນຶ່ງໄວ້ໃຫ້ເປັນສັກຂີແລ ເມື່ອນັ້ນພະຍາວອກຕົວຊື່ວ່າ ພາຫາລະມັກກະຕະກ່າວວ່າ ດູລາສະຫາຍ ຫາກຫຍຸບໄດ້ຕົວຫນຶ່ງນັ້ນກໍດີ ກໍຈິ່ງໄວ້

ທັ້ນກ່ອນເທີ້ນ ມັນຕົວດຽວຈັກໄປລັກກິນນັ້ນບໍ່ຮ່າງວ່າຈັກມີແລ ຮອຍວ່າຫລາຍຕົວເຂົາພາກັນໄປລັກກິນບໍ່ຢາແລ ເຮົາຈັກຖາມດູກ່ອນວ່າດັ່ງນີ້ແລ້ວ ພະຍາພາຫາລະມັກກະຕະ ກໍຖາມບ່າວແຫ່ງຕົນວ່າ ສູພ້ອມກັນໄປລັກກິນໝາກມ່ວງໃນເຂດພະຍາສຸຈຸມັກກະຕະສະຫາຍກູນັ້ນລື ເມື່ອນັ້ນວອກທັງຫລາຍພ້ອມກັນຕົວະພາງພະຍາເຈົ້າແຫ່ງເຂົາວ່າ ຝູງຂ້າທັງຫລາຍ ບໍ່ໄດ້ໄປລັກກິນໝາກມ່ວງພາຍໃນເຂດພະຍານັ້ນສັກເທື່ອດາຍ ເມື່ອນັ້ນ ພະຍາວອກຕົວຊື່ວ່າ ພາຫາລະມັກກະຕະ ກໍໃຫ້ໄປກ່າວແກ່ພະຍາສຸຈຸວອກນັ້ນວ່າ ດູລາສະຫາຍ ເຮົາຖາມເຂົາ ເຂົາວ່າ ຝູງຂ້າທັງຫລາຍບໍ່ໄດ້ໄປລັກກິນສັກຕົວດາຍ ເຂົາວ່າດັ່ງນີ້ · ສັກສີເຂົາມິວ່າດັ່ງນີ້ແລ ບັດນີ້ສະຫາຍຫາກຫຍຸບເອົາບ່າວເຮົາເປົ່າດາຍໄດ້ແລ້ວ ເລົ່າມາຍົກໂທດວ່າມັນມາລັກກິນໝາກມ່ວງເປົ່າດາຍ ບໍ່ຊອບແທ້ແລ ສະຫາຍເຈົ້າຈິ່ງປ່ອຍມັນມາຫາເຮົາເທີ້ນວ່າດັ່ງນີ້ ເມື່ອນັ້ນພະຍາສຸຈຸມັກກະຕະກ່າວວ່າ ດູລາສະຫາຍ ຄໍາອັນສະຫາຍວ່າ ຈັກກິນສະບົດແກ່ກັນນັ້ນ ເຮົາກໍເພິ່ງໃຈແລ ທີ່ວ່າຈັກກິນສະບົດແກ່ກັນໃນແຜ່ນດິນອັນນີ້ ກໍເປັນເກາະທີ່ຢູ່ເຮົາແທ້ແລ ດ້ວຍທີ່ແທ້ກໍຫາກເປັນແຜ່ນດິນແຫ່ງພະຍາລັງກາດາຍ ເຮົາເພິ່ງໄປບອກເຈົ້າພະຍາລັງກາກ່ອນ ແລ້ວຈິ່ງເພິ່ງກິນສະບົດກັນເທີ້ນ ເມື່ອນັ້ນພະຍາພາຫາລະມັກກະຕະກ່າວວ່າ ດູລາສະຫາຍພະຍາສຸຈຸມັກກະຕະແຜ່ນດິນເກາະທີ່ນີ້ ປະໂຣທິຕະພາມຫາກໃຫ້ເປັນທີ່ຢູ່ແຫ່ງເຮົາທັງຫລາຍດາຍ ບໍ່ໃຊ່ແຜ່ນດິນພະຍາລັງກາແລ ພະຍາສຸຈຸມັກກະຕະກ່າວວ່າ ດູລາສະຫາຍ ແຜ່ນດິນເກາະທີ່ນີ້ ຫາກເປັນແຜ່ນດິນພະຍາລັງກາແທ້ດີຫລີດາຍ ດັ່ງປະໂຣທິຕະພາມ ກໍທໍ່ແຕ່ພໍແກວດກົດໝາຍໃຫ້ເຮົາຢູ່ຍ້ອນດອກດາຍ ແຜ່ນດິນນັ້ນກໍຍັງເປັນແຜ່ນດິນພະຍາລັງກາດາຍ ທີ່ນັ້ນພະຍາວອກທັງສອງກໍຊ້ໍາຜິດຖຽງເລວກັນມາກນັກແລ ເມື່ອນັ້ນຄົນກໍໄດ້ຍິນຄໍາພະຍາວອກພາຫາລະວ່າ ບໍ່ໃຊ່ແຜ່ນດິນພະຍາລັງກາດັ່ງນັ້ນ ເຂົາກໍໄປໄຫວ້ພະຍາລັງກາກ່າວຄໍາອັນນັ້ນແກ່ພະຍາລັງກາທັ້ນແລ ທີ່ນັ້ນພະຍາລັງກາກໍຄຽດໃຫ້ແກ່ພະຍາພາຫາລະມັກກະຕະມາກນັກ ພະຍາກໍບັງຄັບພານເນື້ອທັງຫລາຍວ່າ ສູຈິ່ງຍິງວອກໝູ່ຊື່ວ່າ ພາຫາລະມັກກະຕະນັ້ນໃຫ້ຕາຍໝົດຊູ່ຕົວເທີ້ນວ່າດັ່ງນັ້ນ ເມື່ອນັ້ນພານເນື້ອທັງຫລາຍເຂົາກໍກີເອົາໜ້າໄມ້ ແລະ ຢາຢ້າ ໂດຍປະສົງວ່າ ຈັກບໍາຍິງໜ້າຂ້າວອກໝູ່ພະຍາພາຫາລະມັກກະຕະ ໂດຍໄນຍະດັ່ງພະຍາລັງກາບອກນັ້ນແລ ເມື່ອນັ້ນພະຍາສຸຈຸມັກກະຕະ ເຫັນຄົນທັງຫລາຍມາເພື່ອວ່າຈັກຂ້າວອກທັງຫລາຍດັ່ງນັ້ນ ພາຍລຸນພະຍາສຸຈຸມັກກະຕະກໍບັງເກີດຍັງຄວາມກະຣຸນາ ກໍຂໍຫ້າມເສັຍຍັງນາຍພານທັງຫລາຍ ຝູງສະຫລາດດ້ວຍຍິງກິ່ງນັ້ນວ່າ ດູລາຄົນທັງຫລາຍເຮີຍ ບັດນີ້ເຮົາກໍມີຄໍາຂໍອິນທີຊີວິດສະຫາຍເຮົາ ກັບທັງໝູ່ວອກທັງຫລາຍ ເຊິ່ງເຈົ້າທັງຫລາຍເທີ້ນ ເຫດວ່າຕູຂ້າທັງຫລາຍຝູງເປັນວອກເປັນລິງນີ້ ຫາກຜິດກັນແລ້ວ ແລະໄດ້ກະທໍາຍຸດທະກໍາກັບດ້ວຍກັນ ກໍຈິບຫາຍຕາຍມາກນັກແລ້ວ ແລະ ຄໍາຈັກກິນສະບົດແກ່ກັນກໍມີມາກນັກ ເພື່ອວ່າໃຫ້ຮູ້ຈັກຜູ້ມີໂທດແລ ຂໍເຈົ້າທັງຫລາຍຈົ່ງເອົາຄໍາຂ້ານີ້ເມືອໄຫວ້ພະຍາລັງກາຊູ່ປະການ ໃຫ້ພະຍາເຈົ້າຮູ້ກິດຈະໃນຕູຂ້າທັງຫລາຍດັ່ງນີ້ເທີ້ນ ເມື່ອນັ້ນພານເນື້ອທັງຫລາຍ ເຂົາໄດ້ຍິນຄໍາພະຍາສຸຈຸມັກກະຕະ ກ່າວເປັນຄໍາຂໍ ແລະອີດູກູນາມາກນັກດັ່ງນັ້ນ ເຂົາກໍເອົາຄໍາອັນນັ້ນເມືອໄຫວ້ສາແກ່ພະຍາລັງກາຊູ່ປະການແລ ພະຍາກໍຮູ້ແຈ້ງ ໃນກິດຈະອັນວອກຫາກຜິດຖຽງກັນນັ້ນແລ້ວ ພະຍາກໍໃຫ້ອະນຸຍາດຍັງຊີວິດແຫ່ງວອກທັງຫລາຍແລ້ວ ກໍໃຫ້ເຂົາກິນສະບົດແກ່ກັນທັ້ນແລ ເມື່ອນັ້ນພະຍາວອກຕົວຊື່ວ່າສຸຈຸມັກກະຕະນັ້ນ ຈັກກິນສະບົດກ່ອນ ກໍຮາດທະນາເທວະດາທັງ

ຫຼາຍຝູງຮັກສາເກາະລັງກາທີ່ນັ້ນວ່າ ດູລາເທວະດາເຈົ້າທັງຫຼາຍອັນຮັກສາເກາະທີ່ນີ້ ຈົ່ງມາ ຟັງຍັງຄຳອັນຜູ້ຂ້າກ່າວກິນສະບົດແກ່ກັນນີ້ເທີ້ນ ກ່າວແລ້ວກໍຢາດນ້ຳຕົກແຜ່ນດິນແລ້ວກໍກ່າວວ່າ ຜີວ່າວອກທັງຫຼາຍ ອັນເປັນບ່າວສະຫາຍພະຍາພາຫາລະມັກກະຕະ ແລະບໍ່ມາລັກກິນໝາກມ່ວງໃນເຂດແດນແຫ່ງເຮົາແທ້ດັ່ງນັ້ນ ເຮົາຫາກກຸມເອົາວອກຕົວໜຶ່ງໄດ້ແລ້ວ ພອຍເລົ່າວ່າເຮົາ ຍົກໂທດຂຶ້ນວ່າ ຕູລັກກິນໝາກນັ້ນເປົ່າດາຍແທ້ດັ່ງນັ້ນ ເທວະດາເຈົ້າຈົ່ງໃຫ້ມີສັກຂີອັນໃດອັນໜຶ່ງ ໃຫ້ປາກົດແກ່ຄົນແລະສັດທັງຫຼາຍເທີ້ນ ຜີວ່າວອກທັງຫຼາຍ ຝູງເປັນບ່າວພະຍາພາຫາລະມັກກະຕະສະຫາຍ ຫາກມາລັກກິນໝາກມ່ວງໃນເຂດເຮົາແທ້ ເຮົານີ້ຈິ່ງກຸມເອົາຕົວໜຶ່ງໄວ້ ເປັນສັກຂີຊອບແທ້ດັ່ງນັ້ນ ຈົ່ງໃຫ້ມີຄຳວູດທີສີສະຫວັດສະດີແກ່ຕູຂ້າທັງຫຼາຍ ຈົ່ງໃຫ້ຕູຂ້າທັງຫຼາຍຢູ່ໃນແຜ່ນດິນແຫ່ງພະຍາລັງການີ້ເທີ້ນ ເກາະອັນນີ້ຊື່ວ່າເກາະລັງກາ ຈົ່ງເມດຕາໃນຕູຂ້າ ທັງຫຼາຍ ຈົ່ງໃຫ້ມີຄຳສີສຸກຂະສະຫວັດດີແກ່ຕູຂ້າທັງຫຼາຍເທີ້ນ ວ່າດັ່ງນີ້ແລ ເມື່ອນັ້ນພະຍາວອກ ຕົວຊື່ວ່າພາຫາລະມັກກະຕະຈັກກະທຳຄຳກິນສະບົດ ຈິ່ງຣາດທະນາເທວະດາ ອັນຮັກສາເກາະລັງກາອັນເປັນທີ່ຢູ່ແຫ່ງມັນນັ້ນວ່າ ດູລາເທລະດາເຈົ້າທັງຫຼາຍ ຈົ່ງມາຟັງຍັງຄຳອັນເຮົາຈັກກິນສະບົດນີ້ເທີ້ນ ແລ້ວກໍຢາດນ້ຳຕົກເໜືອແຜ່ນດິນດ້ວຍຄຳວ່າ ຜີວ່າບ່າວທັງຫຼາຍແຫ່ງເຮົາຫາກໄດ້ລັກ ກິນໝາກມ່ວງໃນເຂດສະຫາຍພະຍາສຸລຸມັກກະຕະແທ້ດັ່ງນັ້ນ ເຮົາຫາກປົກງຳອຳເອົາໄວ້ບໍ່ກ່າວ ໂທດແຈ້ງປາກົດແທ້ ຈົ່ງໃຫ້ເກາະລັງກາອັນເປັນທີ່ຢູ່ແຫ່ງເຮົານີ້ເກື່ອນເພພັງເສັຍ ຢ່າໃຫ້ເຮົາ ໄດ້ຢູ່ເທີ້ນ ວ່າດັ່ງນັ້ນແລ ດ້ວຍແທ້ເກາະອັນນັ້ນຫາກເປັນດິນພະຍາລັງກາດາຍ ວອກທັງຫຼາຍ ຫາກໄປລັກກິນໝາກມ່ວງກັນດັ່ງນັ້ນແລ້ວ ກໍກິນສະບົດແກ່ກັນໃຫ້ເສັຍແຜ່ນດິນແທ້ດາຍ ຢູ່ບໍ່ນານ ເກິງທົກວັນນັ້ນ ເກາະລັງກາອັນເປັນທີ່ຢູ່ແຫ່ງພະຍາພາຫາລະມັກກະຕະນັ້ນ ກໍເກື່ອນເພເສັຍ ບໍ່ຫຼໍ ສັກແຫ່ງ ວອກທັງຫຼາຍ ກໍຈິບຫາຍຕາຍເສັຍສ້ຽງບໍ່ຫຼໍສັກຕົວແລ· ສ່ວນດັ່ງພະຍາວອກຕົວຊື່ວ່າ ສຸລຸມັກກະຕະນັ້ນ ກໍບໍ່ເປັນສັງສັກອັນ ຫອນຍ່ອມຢູ່ສະຫວັດດີ ມີສຸກຸສຳຣານຊູ່ຕົວທັ້ນແລ ອັນນີ້ເປັນ ຕຳນານຜິດກອງກັນ ແລະໄດ້ກິນສະບົດນັ້ນແລ ອັນວ່າຄຳກິນສະບົດນີ້ ເປັນຄຳເຂັດຄຳຂອງນັກ ແລ ບໍ່ວ່າແຕ່ຄົນດາຍ ແມ່ນວ່າສັດເດັອຣະສານມີຕົນມີມີດັ່ງຄົນນັ້ນ ແລະມາກ່າວຄຳກິນສະບົດແກ່ ກັນ ກໍຍັງໃຫ້ເກາະລັງກາເກື່ອນເພພັງເສັອ ເພື່ອວ່າອຳໂທດໄວ້ນັ້ນແລ ສ່ວນວ່າຄົນທັງຫຼາຍຍິງ ຊາຍ ແລະ ຮູ້ກິນເຜັດກິນເຄັມ ກິນສົ້ມກິນຫວານນີ້ ແລະ ກ່າວຄຳກິນສະບົດແກ່ກັນນັ້ນ ກໍທ່ອງ ຈັກຈິບຫາຍຕາຍພະລັນນັກແລ ຜີວ່າພະຍາລັງກາຕົນນ້ອງນີ້ ຍັງປະກອບຊອບທຳດັ່ງພະຍາຕົນພີ່ນັ້ນ ແທ້ ການອັນຈັກຈິບຫາຍແຫ່ງສັດທັງຫຼາຍເຫັນມາປານດັ່ງນີ້ ບໍ່ຣ່າງວ່າຈັກໃຫ້ເຂົາກິນສະບົດແກ່ ກັນໃຫ້ເກາະລັງການນັ້ນເພພັງເສັອທັ້ນແລ ທີ່ນີ້ພະຍາລັງກາຕົນນ້ອງ ບໍ່ຊອບທຳ ບໍ່ອິດູກູນາ ບໍ່ຮູ້ ຮ່ຳເພິງ ກໍຈິ່ງວາງຄຳໃຫ້ວອກທັງຫຼາຍກິນສະບົດແກ່ກັນ ເກາະລັງກາກໍຈິ່ງເກື່ອນເພພັງເສັອ ເພື່ອບໍ່ຮູ້ພິຈາລະນາດູອັນຄວນແລະບໍ່ຄວນ ແຕ່ນີ້ເມືອໜ້າ ບຸກຄະລະທັງຫຼາຍ ທ້າວພະຍາເສນາອາມາດ ບໍ່ຄວນໃຫ້ຄົນທັງຫຼາຍ ເອົາເຂດດິນດອນຕອນເມືອງທ້າວພະຍາມາກິນສະບົດກັນ ດາຍ ຄຳກິນສະບົດນີ້ ບາບໜັກກວ່າແຜ່ນດິນດາຍ ແຜ່ນດິນນີ້ຫາວິນຍານບໍ່ໄດ້ ກໍຍັງເກື່ອນເພພັງ ເສັອດ້ວຍຄຳສະບົດອັນເປັນບາບນັ້ນແລ ເຂົາຫາກຜິດກັນ ບໍ່ຄວນເອົາແຜ່ນດິນທ້າວພະຍາມາກິນສະບົດບໍ່ຄວນແທ້ແລ. ເພິ່ງໃຫ້ເຂົາກິນສະບົດແກ່ກັນດ້ວຍອັນເປັນອິນຕາຍແກ່ຊີວິດແຫ່ງເຂົານັ້ນ

ເທີ້ນ ໃຫ້ເປັນສັນທິດຖິກຳຕໍ່ໜ້າ ແລະໃຫ້ກິນສະບິດດ້ວຍບຸນ ແລະບາບກຳອັນໄດ້ກະທຳແຕ່ຫລັງມາກິນສະບິດແກ່ກັນ ວ່າດັ່ງນີ້ ພິວ່າຂ້າໄດ້ກະທຳກຳເບື້ອງນີ້ ແທ້ດັ່ງນັ້ນ ອັນວ່າບຸນອັນຂ້າໄດ້ກະທຳມາແຕ່ຫລັງມາກນັກນັ້ນ ຈິ່ງໃຫ້ສ້ອງເສຍເທີ້ນ ຈິ່ງໃຫ້ຂ້າໄດ້ສະເຫວີຍວິບາກອັນມາກນັກໃນພາວະພາຍໜ້າພຸ້ນເທີ້ນ ເປັນຕົ້ນວ່ານະຣົກນັ້ນແລ ວ່າດັ່ງນີ້ແກ່ກັນຄອນແລ ພະຍາຊັກຕຳນານພະຍາວ້ອກສອງຕົວນັ້ນມາໃຫ້ຄົນທັງຫລາຍຟັງ ເປັນຕົ້ນວ່າເສດຖີ ແລະລູກຍິງເສດຖີສອງພີ່ນ້ອງ ຟັງເປັນອັນຊອບນັກແລ ເທວະດາກໍພາຍເຂົ້າຕອກດອກໄມ້ທິບລົງມາບູຊາພະຍາທັ້ນແລ ລູກເສກກີສອງນາງພີ່ນ້ອງ ອັນຍາດເອົາເຄື່ອງປະດັບນັ້ນ ກໍຍິນດີໃນຄຳພະຍາສັ່ງສອນຊູ່ອັນແລ.

ທີ່ນີ້ຈັກກ່າວ ຕຳນານຄົນຜູ້ຮູ້ກະທຳສອງພາສາສັບພະຫລີ້ ຂີ້ຄ້ານຫລີກການບ້ານການເມືອງນັ້ນ ນິຍາຍມີສັ້ນນີ້ແລ ຍັງມີເມືອງອັນໜຶ່ງ ຊື່ວ່າໂຫລັດຕະນະຄອນ ພະຍາຕົນສະເຫວີຍເມືອງນັ້ນກໍຊື່ວ່າ ໂຫລັດຕະຣາດ ເມືອງອັນນັ້ນມີໃນລະແວກແຄວ້ນເມືອງພາຫາລະນະຄອນ ແລະ ເມືອງໂຫລັດຕະນະຄອນນັ້ນ ເປັນສອງພາສາແລ ດັ່ງພາສາໜຶ່ງນັ້ນ ເປັນພາລະຄອນ ພາສາໜຶ່ງເປັນພາສາພາລະຊອນແລ ເລົ່າຍັງມີມານະວະຜູ້ໜຶ່ງ ຊື່ວ່າທະວາຣະມານະວະ ກໍຢູ່ໃນເມືອງໂຫລັດຕະນະຄອນທັ້ນແລ ມັນໄປຮຽນສາດຕະສິນໃນເມືອງຕັກກະສີລານະຄອນ ມັນກໍຮຽນສາດຕະສິນຕ່າງພາສາ ເຊິ່ງທິສາປາໂມກຂະອາຈານແລ ທີ່ນີ້ທິສາປາໂມກຂະອາຈານກ່າວວ່າ ດູລາມານະວະທ່ານຜູ້ດອວ ພອຍເລົ່າຈັກຮຽນສາດຕະສິນສອງພາສາ ອັນນີ້ບໍ່ດີ ບໍ່ເປັນມັງຄະລະແກ່ທ່ານແລ ມັນບໍ່ຟັງມັນກໍລັກໄປຮຽນສາດຕະສິນ ແຫ່ງພວກນ້ອຍທິສາປາໂມກຂະອາຈານ ບູຊາຄຳພັນໜຶ່ງໄດ້ແລ້ວ ມັນກໍຄືນມາຢູ່ໃນເມືອງໂຫລັດຕະນະຄອນທັ້ນແລ ເມື່ອນັ້ນ ພະຍາເຈົ້າເມືອງນັ້ນ ຈັກໃຫ້ຄົນທັງຫລາຍຫລົ້ນມະໂຫລະສົບ ຕາມພາສາສອງພາສານັ້ນແລ ພາສາພາລະຄອນນັ້ນຫລົ້ນທາງປ່າ ແລະພາສາພາລະຊອນນັ້ນຫລົ້ນໃນແມ່ນ້ຳແລ ພະຍາກໍໃຫ້ຕີກອງປ່າວຫລົ້ນທີນພາສາພາລະຄອນນັ້ນປ່າວໃຫ້ແປງຂອງຫລົ້ນມະໂຫສົບກະທຳໃຫ້ດີ ທີນພາສາພາລະຊອນໃຫ້ແປງແພໃນແມ່ນ້ຳທີ່ຈັກຫລົ້ນມະໂຫສົບວ່າດັ່ງນັ້ນແລ ເມື່ອຈັກຫລົ້ນນັ້ນ ພະຍາກໍໃຫ້ລ່າມ ເຂົາໄປປ່າວຊູ່ບ້ານຊູ່ເມືອງຊູ່ຄົນທັ້ນແລ ລ່າມພາຍພາລະຄອນໄປປ່າວເກິງບ້ານທ້າວລັດຕະມານະວະນັ້ນ ໃຫ້ໄປແຜ້ວປ່າແປງຂອງຫລົ້ນມະໂຫສົບ ວ່າດັ່ງນີ້ ທ້າວລັດຕະມານະວະນັ້ນມັນກໍນຸ່ງເຄື່ອງທີນພາລະຊອນຢູ່ແລ້ວ ມັນເລົ່າກ່າວວ່າ ດູລາເຈົ້າລ່າມ ຂ້ານີ້ຫາກແມ່ນພາຍພາລະຊອນດາຍ ວ່າດັ່ງນີ້ແລ້ວ ມັນກໍບໍ່ໄປເອົາການເມືອງແລ ລ່າມພາຍພາລະຊອນໄປປ່າວໃຫ້ມັນໄປຄາດແພໃນແມ່ນ້ຳທີ່ຈັກຫລົ້ນມະໂຫສົບນັ້ນ ມັນກໍນຸ່ງເຄື່ອງພາຍພາລະຄອນຢູ່ແລ້ວ ເລົ່າກ່າວວ່າ ດູລາເຈົ້າລ່າມຂ້ານີ້ຫາກແມ່ນພາຍພາລະຄອນດາຍ ວ່າດັ່ງນີ້ແລ້ວ ມັນກໍບໍ່ໄປແລ ເມື່ອນັ້ນລ່າມທັງສອງເມືອງໄດ້ຍິນຄຳທ້າວລັດຕະມານະວະກ່າວເຊິ່ງເຂົາດັ່ງນັ້ນ ເຂົາຈິ່ງຈາລະຈາກັນວ່າ ດູລາເຮົາທັງລຫາຍເຮີຍ ສ່ວນວ່າທ້າວລັດຕະມານະວະຜູ້ນັ້ນມາ ເມື່ອພາຍພາລະຄອນໄປປ່າວນັ້ນ ມັນກໍກ່າວວ່າ ຂ້ານີ້ແມ່ນພາຍພາລະຊອນແລວ່າດັ່ງນັ້ນ ເມື່ອພາຍພາລະຊອນໄປປ່າວນັ້ນ ມັນກໍກ່າວວ່າ ຂ້ານີ້ແມ່ນພາຍພາລະຄອນແລວ່າດັ່ງນັ້ນ ມັນຜູ້ນີ້ ສັບພະຫລີ້ຫລີກວອກ ຮູ້ກະທຳສອງພາສາອັນຕ່າງສັນນີ້ ເພິ່ງເຮົາເອົາຄຳອັນນີ້ເມືອໄຫວ້ພະຍາເຈົ້າຈິ່ງຄວນແລ ເຂົາກໍເມືອກ່າວບອກແກ່ພະຍາຊູ່ປະການທັ້ນແລ ເມື່ອນັ້ນພະຍາຈິ່ງໃຫ້ຊຸມ

ນຸມມາຍັງເສນາອາມາດທັງຫລາຍ ໃຫ້ພິຈາລະນາດູຍັງຄໍາອັນນັ້ນໃຫ້ຮູ້ແຈ້ງທັ້ນແລ ຍາມນັ້ນເສນາອາມາດທັງຫລາຍກໍໃຫ້ໄປຮອກຫາທັນມາ ເພື່ອຈະຕຶກແຕ່ງໃຫ້ຢູ່ປັກຂະພາຍໜຶ່ງດັ່ງນັ້ນ ມັນກໍນຸ່ງເຄື່ອງເປັນສອງພາສາ ຄືວ່າພາສາພາລະຄຽນແລະພາສາພາລະຊຽນ ມັນກໍເຂົ້າໄປສູ່ເສນາອາມາດທັງຫລາຍ ແລ້ວກໍຈາລະຈາກັບດ້ວຍເສນາອາມາດທັງຫລາຍວ່າ ດູລາເສນາອາມາດທັງຫລາຍຝູງທະລົງອາດຍາ ສ່ວນຂ້ານີ້ເປັນສອງພາສາດາຍວ່າດັ່ງນັ້ນ ເສນາທັງຫລາຍກໍເຫັນມັນນຸ່ງເຄື່ອງສອງພາສາແທ້ດັ່ງນັ້ນ ເສນາຈະແຕ່ງໃຫ້ຢູ່ຝ່າຍໃດກໍບໍ່ໄດ້ ເສນາຈິ່ງໄປໄຫວ້ພະຍາວ່າ ສວນດັ່ງທ້າວລັດຕະມານະວະຜູ້ນີ້ ຝູງຂ້າທັງຫລາຍຕຶກແຕ່ງບອກຕາມຄໍາມະຫາຣາຊະເຈົ້າບໍ່ໄດ້ ເຫດວ່າມັນນີ້ເປັນສອງພາສາແລ ເມື່ອນັ້ນພະຍາກ່າວວ່າ ດູລາເສນາທັງຫລາຍ ຄໍາສັນນີ້ບໍ່ທ່ອນມີໃນເມືອງເຮົາເມື່ອກ່ອນສັກເທື່ອແລ ຫາອັນຈັກມາທຽມບໍ່ໄດ້ ແລະເຮົາເພິ່ງເອົາຂ່າວສານອັນນີ້ໄປໄຫວ້ພະຍາອາມັດຕະເອກຣາດ ອັນຢູ່ໃນເມືອງພາຫາລະນະຄອນນັ້ນໃຫ້ແຕ່ງແກ່ມັນຄວນແລ ເມື່ອນັ້ນພະຍາກໍໃຫ້ຄໍາພັນໜຶ່ງ ໃຫ້ເສນາໄປບູຊາພະຍາເອກຣາດ ເພື່ອຈະໃຫ້ພິຈາລະນາດູຍັງທ້າວລັດຕະມານະວະຜູ້ນັ້ນແລ ຄັນວ່າຄົນໃຊ້ໄປຮອດແລ້ວ ກໍກອາຍກິດຈະທັງມອນແກ່ພະຍາເອກຣາດແລ ເມື່ອນັ້ນ ພະຍາອາມັດຕະເອກຣາດຮູ້ກິດຈະທ້າວລັດຕະມານະວະຜູ້ນັ້ນ ກະທໍາຊູ່ອັນແລ້ວ ກໍຈາລະຈາກັບຄົນໃຊ້ພະຍາໂຫລັດຕະຣາດນັ້ນວ່າ ດູລາຄົນໃຊ້ ຜີວ່າພະຍາເຈົ້າໂຫລັດຕະນັ້ນແລະເສນາທັງຫລາຍຕຶກແຕ່ງແກ່ມັນບໍ່ໄດ້ດັ່ງນັ້ນ ບັດນີ້ເຮົາຈັກພິຈາລະນາໃຫ້ຊອບຄອງນີ້ແລອັນວ່າບຸກຄະລະຜູ້ໃດມາຮູ້ຈັກກະທໍາເປັນສອງພາສາດັ່ງນີ້ ຄົນຜູ້ນັ້ນບໍ່ໃຊ່ສັບປຸຣິສະດາຍ ສ່ວນວ່າຄົນຜູ້ຮູ້ກະທໍາຫລາຍພາສາ ຄືວ່າຮ້ອຍເອັດພາສາດັ່ງນັ້ນແລ ອາຈານເຈົ້າທັງຫລາຍຈິ່ງຮຽກວ່ານັກປາດຜູ້ຮູ້ດາຍ ອັນວ່າຄົນຜູ້ຮູ້ກະທໍາສັບພະລັບສັບພະຫລີ້ ຂີ້ຄ້ານຫລີກວຽກການບ້ານເມືອງ ຄວນກະທໍາໂທດຕາມອັນມັນກະທໍານັ້ນແລ ເພິ່ງເຮົາເອົາໂປຣານາຈານເຈົ້າມາທຽມໃຫ້ເປັນສາກສີແລ້ວ ຈິ່ງຄວນຕັດດາຍ ທີ່ນັ້ນພະຍາເອກຣາດຈິ່ງຊັກເອົາຄໍາອັນຫລີກການບ້ານເມືອງ ມາກ່າວທຽມໃຫ້ເປັນສາກສີ ສັນນີ້ແລ ດູລາຄົນໃຊ້ ເມື່ອພໍ່ເຮົາພະຍາມູລະຕັນໄຕຍັງວັນນັ້ນ ຍັງມີມານະວະຜູ້ໜຶ່ງ ຊື່ວ່າສະມະນະວະແລ ມັນກໍຮູ້ຕໍານານອັນຄ້າງຄາວຫລີກການເມືອງນັ້ນ ມາໄຫວ້ພໍ່ເຮົາເຈົ້າພະຍາມູລະຕັນໄຕເອກຣາດວັນນັ້ນແລ ແຕ່ເມື່ອພັດທະກັບຈິ່ງກໍ່ຕັ້ງທີວທີວັນນັ້ນ ມະຫາຕາປະພານເປັນພະຍາລັງການັ້ນ ຍັງມີລູກຜູ້ໜຶ່ງ ຊື່ວ່າໂຣຫິຕະພານແລ ພະຍາກໍປົງອາດຍາໄວ້ໃຫ້ເປັນຜູ້ແຕ່ງບ້ານເບິ່ງເມືອງຕາງຕົນແລ ເຖິງເມື່ອຈັກຫລິ້ນມະໂຫສົບນັ້ນ ນັກການທັງຫລາຍໄປປ່າວເຖິງຮຸ້ງຄາວ ຄືວ່າເຈຍນັ້ນແລ ມັນນັ້ນມີຮູບຕົວເປັນສອງພາສາ ມີສົບອັນສ້ຽມດັ່ງສົບໜູ ມີຫາງກໍດັ່ງຫາງໜູ ມີຫູອັນຊ້ອງຂຶ້ນນັ້ນແລ ເລົ່າມີປີກບິນໄປໃນອາກາດເປັນດັ່ງນົກນັ້ນແລ ຈັກວ່ານົກລືກໍມາມີຫູ ຈັກວ່າໜູລືກໍມາມີປີກເສັຍ ເມື່ອນົກມາປ່າວນັ້ນ ມັນວ່າຂ້ານີ້ບໍ່ໃຊ່ນົກດາຍ ສູບໍ່ເຫັນຫູກູລືເມື່ອໜູມາປ່າວນັ້ນ ມັນວ່າຂ້ານີ້ມີປີກດາຍ ມັນກ່າວແລ້ວກໍບິນໄປ ເປັນດັ່ງນົກແລ ເມື່ອນັ້ນ ນົກແລະໜູທັງຫລາຍ ເຂົາກໍບໍ່ອາດຈັກບອກໄດ້ສັກອັນແລ ເຂົາຈິ່ງພ້ອມກັນໄປກ່າວແກ່ປະໂຣຫິຕະພານວ່າ ມັນນີ້ວ່ານົກກໍມີຫູ ຈັກວ່າໜູກໍມີປີກ ມັນກໍຫລີກວຽກການບ້ານເມືອງຢູ່ ຫາບ່ອນຫາທີ່ບໍ່ໄດ້ສັນນີ້ ບໍ່ເພິ່ງໃຫ້ມັນຢູ່ຕາມໃຈມັນດາຍ ປະໂຣຫິຕະພານກໍຕັດສົບມັນເສັຍ ຕັດຫາງມັນເສັຽແລ້ວກ່າວວ່າ ອັນນີ້ເປັນທັນດະກໍາແກ່ມຶງແລ ແຕ່ນີ້ເມື່ອໜ້າ ຢ່າໄດ້ຈັບໄມ້ເປັນດັ່ງນົກນັ້ນ ມຶງຈິ່ງ

ແຊວນໄມ້ນິໂຄດຕົ້ນໃຫຍ່ຢູ່ເທີ້ນ ວ່າດັ່ງນີ້ແລ້ວກໍປ່ອຍໄປທັ້ນແລ ແຮກແຕ່ນັ້ນມາ ຮຸ້ງຄາວຈຶ່ງແຊວນຢູ່ຕາບຕໍ່ເທົ່າບັດນີ້ ທາງມັນກໍຈຶ່ງບໍ່ມີແຕ່ນັ້ນມາແລ ພະຍາອາມັດຕະເອກຣາດຊັກຕຳນານອັນນີ້ມາຫອມ ແລ້ວຈຶ່ງກ່າວວ່າ ສອນດັ່ງທ້າວລັດຕະມານະວະນີ້ ກໍຄວນຕັດຕີນສີນມືເສັຽແທ້ແລ ເພື່ອວ່າບໍ່ໃຫ້ຄົນທັງຫລາຍດູເຍື້ອງດູຢ່າງຕາມມັນເທີ້ນ ທີ່ແທ້ນັກປາດເຈົ້າທັງຫລາຍ ກໍບໍ່ເພິງກະທຳກຳອັນທຶກ ຄືວ່າຕັດຕີນສີນມືດາຍ ເພິ່ງເຫຄືວມັນເສັຽແລ້ວ ໃຫ້ພະຍາເຈົ້າເອົາມັນມາຂົ່ມໃຫ້ເປັນຂ້ອຍ ແລ້ວປ່ອຍມັນເສັຽ ໃຫ້ມັນເອົາການບ້ານເມືອງດັ່ງທ່ານທັງຫລາຍນັ້ນຄວນແລ ເມື່ອນັ້ນຄົນທັງຫລາຍໄດ້ຍິນຄຳອາມັດຕະເອກຣາດໃຫ້ໂອວາດແກ່ເຂົາແລ້ວ ກໍສັ່ງອຳລາເມືອແລ ຄັນວ່າເມືອຮອດແລ້ວເຂົາກໍໄຫວ້ພະຍາເຈົ້າເຂົາຊູ່ປະການ ໂດຍດັ່ງພະຍາເອກຣາດຫາກສັ່ງເຂົາມານັ້ນແລ ພະຍາໂຫລັດກຸະຣາດ ກໍໃຫ້ອາມາດໄປເທເອົາຄືວແລ ເພາະມັນບໍ່ຢ້ານແຢງອາດຍາທ້າວພະຍາເສນາອາມາດ ຈຶ່ງໃຫ້ກະທຳຕາມໂທດເທີ້ນ.

ທີ່ນີ້ຈັກກ່າວ ຕຳນານຊາຕິບໍ່ສະເຫມີກັນດັ່ງນີ້ ຍັງມີບຸກຄະລະຜູ້ຫນຶ່ງ ແຄວນຍິ່ງດາຍ ຕຳນານມີສັນນີ້ ຍັງມີມານະວະ ຊື່ວ່າ ເສດກຸະມານະວະ ມັນກໍໄປຮຽນສາດຕະສິນໃນເມືອງຕັກກະສີລານະຄອນ ມັນກໍຮູ້ຊາຕິບໍ່ສະເຫມີກັນນັ້ນ ດ້ວຍທີ່ແທ້ກະກຸນເບື້ອງພໍ່ກໍຫາກແວນປະເສີດແລ ຄວນແກ່ຄົນທັງຫລາຍເຄົາຣົບແລ ຄັນວ່າມັນໄດ້ແລ້ວກໍຄືນມາສູ່ເມືອງພາຫາລະນະຄອນແລ ມັນກໍຈາລະຈາກັບດ້ວຍນັກປາດສີ່ຄົນ ອັນເປັນອາມາດແຫ່ງພະຍາມູລະຕັນໄຕນັ້ນແລ ນັກປາດສີ່ຄົນນັ້ນໄດ້ຟັງແລ້ວ ກໍຮູ້ກິດຈະໃນສາດຕະສິນອັນເສດກຸະມານະວະຜູ້ນັ້ນຮຽນແລ້ວ ເມື່ອນັກປາດສີ່ຄົນນັ້ນເມືອອຸບປະກາກພະຍາມູລະຕັນໄຕນັ້ນ ເຂົາກໍກ່າວກິດຈະອັນເສດກຸະມານະວະໄປຮຽນສາດຕະສິນແລຮູ້ຈັກອັນແວນຍິ່ງໃນກະກຸນວົງສານັ້ນແກ່ພະຍາມູລະຕັນໄຕດ້ວຍຄຳວ່າ ຂ້າແກ່ມະຫາຣາຊເຈົ້າ ຍັງມີຊາຍຜູ້ຫນຶ່ງຊື່ວ່າເສດກຸະມານະວະ ມັນໄປຮຽນສາດຕະສິນໃນເມືອງຕັກກະສີລານະຄອນ ມັນກໍໄດ້ຮຽນສາດຕະສິນ ຄືຄຸນອັນຍິ່ງໃນກະກຸນພໍ່ແມ່ຍາຕິວົງສາແຫ່ງຕົນ ຄວນໂຄຣົບຢ້ານແຢງແລເມືອງຕັກກະສີລານະຄອນນັ້ນ ເຂົາຫຽນຍ່ອມມີນ້ຳສົ້ມປ່ອຍແລະນ້ຳມັນ ນ້ຳອົບນ້ຳຫອມໃຫ້ພໍ່ແມ່ເຂົາອາບອົງສົງເກດເກົ້າເສັຽແລ້ວ ມີເຄື່ອງບູຊາທັງຫລາຍເປັນຕົ້ນວ່າ ເຂົ້າຕອກດອກໄມ້ ໄຫວ້ນົບຄົມຣົບຢ້ານແຢງຍັງພໍ່ແມ່ ຍາຕິວົງສາພີ່ນ້ອງແຫ່ງເຂົາຊູ່ປີຊູ່ຄົນທັ້ນແລ ຂ້າແກ່ມະຫາຣາຊະເຈົ້າອະທິບາຍເຫດອັນນັ້ນມີສັນນີ້ແລ.

ຍາມນັ້ນຍັງມີນາງກຸມາຣີຜູ້ຫນຶ່ງຊື່ວ່າ ສະມາທິຕະກຸມາຣີເປັນລູກສາວະພາມມະນະປະໂຣຫິຕະ ອາຈານພະຍາຕັກກະສີລານັ້ນແລ ສ່ວນວ່ານາງກຸມາຣີຜູ້ນັ້ນ ມີລູງສອງຄົນ ຜູ້ຫນຶ່ງເປັນພີ່ຊາຍພໍ່ ຜູ້ຫນຶ່ງເປັນພີ່ຊາຍແມ່ແລ ຍັງມີໃນວັນຫນຶ່ງ ນາງຈັກໄປຄົມຣົບຢ້ານແຢງຍັງລຸງທັງສອງນັ້ນ ນາງກໍຄະນຶງໃນໃຈວ່າ ສອນດັ່ງລຸງອາດຕະມາສອງຄົນນີ້ ຜູ້ຫນຶ່ງພີ່ພໍ່ ຜູ້ຫນຶ່ງພີ່ແມ່ ຂາທັງສອງນີ້ ຄວນອາດຕະມາຄົມຣົບຢ້ານແຢງສະເຫມີກັນແລ ວ່າດັ່ງນີ້ແລ້ວ ນາງກໍໃຫ້ເສື້ອຜ້າແກ່ລຸງທັງສອງ ແລະຄູ່ແລະມີຄ່າແສນຫນຶ່ງແລ ເພື່ອຈັກຄົມຣົບຢ້ານແຢງນັ້ນ ນາງກໍໃຫ້ລຸງທັງສອງໄປອາບນ້ຳອົບນ້ຳຫອມເສັຽ ແລ້ວນາງຈຶ່ງຄົມຣົບຢ້ານແຢງ ໃຫ້ລຸງທັງສອງຂະມາໂທດແຫ່ງຕົນ ແລ້ວນາງກໍໃຫ້ຜ້າ ແລະ

ເສື້ອແກ່ລູກທັງສອງຄົນຄູ່ແລ້ວ ນາງກໍຂວີສີວິກາຍຄຳເມືອແລ ເມື່ອນາງໄປເກິງກາງທົ່ງນາທີຫນຶ່ງ ນາງກຸມາຣີຜູ້ນັ້ນ ກໍພັດກະຈັດຕົກຈາກສີວິກາຍ ເປັນອັນເຈັບປວດເວດທະນາມາກນັກແລ ເມື່ອນັ້ນຂ່າວສານອັນນັ້ນກໍລືຊາປາກົດເມືອເຖິງພະຍາຕັກກະສີລານະຄອນ ຄວນອັດສະຈັນມາກນັກ ເມື່ອນັ້ນພະຍາຕັກກະສີລາກໍໃຫ້ໄປຮຽກຫາມາແລ້ວ ຈິ່ງຖາມວ່າ ດູລານາງມຶງໄປແຕ່ທີ່ໃດ ເຫດການເບື່ອງໃດແລມາຕົກຈາກສີວິກາຍນີ້ຈາ ທີ່ນັ້ນ ນາງກຸມາຣີກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ອັນວ່າເຫດການເບື່ອງໃດແກ່ຂ້າກໍບໍ່ຮູ້ໄດ້ແລ ນາງກໍກ່າວເຫດທັງມວນອັນຕົນໄດ້ຄົມຣິບຢາແຢງລູກທັງສອງນັ້ນ ແກ່ພະຍາຕັກກະສີລານະຄອນຊູ່ປະການທັ້ນແລ ຄັນວ່າພະຍາໄດ້ຍິນຄຳເບື່ອງນັ້ນກໍຄະນຶງໃນໃຈວ່າດັ່ງນີ້ ອາຈານເຈົ້າທັງຫລາຍ ຍັງກ່າວສືບໆມາສັນນີ້ ອັນວ່າລູກຜູ້ພີ່ພໍ່ນັ້ນຍັງແອນປະເສີດກວ່າລູກພີ່ແມ່ນັ້ນດາຍ ຄວນຄົມຣິບລູກພີ່ພໍ່ກ່ອນ ແລ້ວຈິ່ງຄົມຣິບລູກພີ່ແມ່ນັ້ນເມື່ອພາຍລຸນດາຍ ທີ່ນີ້ນາງຄົມຣິບລູກທັງສອງສະເຫມີກັນໃຫ້ເສື້ອຜ້າແລະຄຳກໍສະເຫມີກັນແລ ຜິດທຳມະດາເຫດດັ່ງນັ້ນ ເທວະດາກໍນ້ອຍໃຈນັກ ຈິ່ງສຳແດງຍັງເຫດອັນນາງທຳບໍ່ຊອບນັ້ນ ຈິ່ງໃຫ້ນາງກະຈັດຕົກຈາກສີວິກາຍເພື່ອຈັກໃຫ້ນາງປະຕິບັດຊອບຄອງເປັນສຸຄະຕິຄະມະນະ ຈິ່ງສຳແດງເພື່ອດັ່ງນັ້ນແລ ເມື່ອນັ້ນເສນາອາມາດທັງຫລາຍໄດ້ຍິນຄຳອັນນັ້ນແລ້ວ ຈິ່ງໄຫວ້ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າຈິ່ງກ່າວເຫດອັນນັ້ນໃຫ້ປາກົດແກ່ຝູງຂ້າທັງຫລາຍແດ່ເທີ້ນວ່າດັ່ງນີ້ ເມື່ອນັ້ນພະຍາຕັກກະສີລາຈັກກ່າວຕຳນານແຕ່ຫລັງນັ້ນມາໃຫ້ເປັນທີ່ຫອມແກ່ເສນາທັງຫລາຍດັ່ງນັ້ນ ພະຍາກໍຣາດທະນາເທວະດາຕົນຮັກສາເສດຕະສັດແຫ່ງຕົນດ້ວຍຄຳວ່າ ດູລາເທວະດາເຈົ້າ ຜູ້ຂ້າຈັກຊັກຕຳນານແຕ່ຫລັງມາໃຫ້ເປັນທີ່ຫອມ ຜິວ່າຍັງຊອບທຳມະດາແທ້ ເທວະດາເຈົ້າຈິ່ງໃຫ້ສັກຂີອັນຫນຶ່ງໃຫ້ປາກົດແກ່ຝູງຄົນທັງຫລາຍເທີ້ນ ວ່າດັ່ງນັ້ນແລ້ວ ຈິ່ງກ່າວວ່າ ດູລາເສນາອາມາດທັງຫລາຍ ເມື່ອເຮົາຍັງເປັນຣາຊະບຸດອັນນັ້ນ ຍັງມີໃນວັນຫນຶ່ງ ພະຍາຕົນພໍ່ເຮົາໄປຫລິ້ນມະໂຫສົບອັນນັ້ນ ຍັງມີພາມຜູ້ຫນຶ່ງຊື່ວ່າໂຊຕະພາມ ມັນກໍມາຈາລະຈາກັບພະຍາຕົນພໍ່ເຮົາອັນນັ້ນ ຍັງມີພາມຕົນຫນຶ່ງຊື່ວ່າ ມະຫາປະຊາປະຕິພົມເປັນຜູ້ແຣກຕັ້ງເມືອງຕັກກະສີລາອັນນັ້ນແລ ຍາມນັ້ນຫາຜູ້ຈັກຄອນເປັນພະຍາບໍ່ໄດ້ ມະຫາປະຊາທິປະຕິພົມຕົນນັ້ນ ກໍຈິ່ງກອດສາກຫາຜູ້ຈັກຄອນເປັນພະຍາ ໃນຫມູ່ພົມທັງຫລາຍ ຈິ່ງມາໄດ້ພົມຕົນຫນຶ່ງຊື່ວ່າສີລາທິດຈະກຸມານ ເປັນລູກແຫ່ງພະຍາພົມຜູ້ຫນຶ່ງຊື່ວ່າຊະໂລຊະພົມ ເມື່ອນັ້ນມະຫາປະຊາທິປະຕິພົມ ຈັກອຸດສາພິເສກຍັງສີລາທິດຈະກຸມານເປັນພະຍານັ້ນ ມະຫາປະຊາທິປະຕິພົມກໍສວາດທິຍາຍມົນຫນຶ່ງວ່າ ໂອມ ຣຸກຂາທິໄສຍະໂມກຂະທິ ດັ່ງນີ້ສາມທີແລ້ວແຜ່ນດິນກໍວະເປັນຊ່ອງໄວ້ໃຫ້ຕົ້ນໄມ້ຕົ້ນໃຫຍ່ນັກ ອັນປະກອບດ້ວຍໃບດົກຫນາແລະມີກິ່ງງ່າມາກນັກ ມີຮູບກົງາມກໍອອກມາໃນຂະນະບັດດຽວນັ້ນ ເທວະດາກໍຍິນດີກໍຈິ່ງທອດຫນັງສືລົງໃສ່ຊື່ຕົ້ນໄມ້ຕົ້ນນັ້ນວ່າ ຕັກກະຣຸກຂະ ວ່າດັ່ງນັ້ນແລ ຄົນທັງຫລາຍກໍຍິນດີສາທຸການມາກນັກແລ ມະຫາປະຊາທິປະຕິພົມ ຈິ່ງໃຫ້ໄປອຸດສາພິເສກສີລາທິດຈະກຸມານໃຫ້ເປັນພະຍາແທບເຄົ້າໄມ້ຕັກກະຣຸກຂະຕົ້ນນັ້ນແລ ໄມ້ຕົ້ນນັ້ນກໍຊື່ວ່າຕັກກະຣຸກຂະ ຜູ້ເປັນພະຍາກໍຊື່ວ່າສີລາທິດຈະ ເຫດດັ່ງນັ້ນ ມະຫາປະຊາທິປະຕິພົມຈິ່ງປົງນາມໃຫຍ່ໃສ່ຊື່ເມືອງນັ້ນວ່າ ຕັກກະສີລານະຄອນເພື່ອດັ່ງນັ້ນແລ ໄມ້ຕົ້ນຫນຶ່ງກໍເກີດມາດ້ວຍມົນທິບ ແລະອາດຕະມາຈັກຕັ້ງສາດສະຫນາມົນທິບໃນເມືອງຕັກກະສີລາທີ່ນີ້ເທີ້ນ ວ່າດັ່ງນີ້ແລ້ວ ພະຍາປະຊາທິປະຕິພົມ ຈິ່ງຕັ້ງໄວ້ຍັງກະອູບແກ້ວຫນ່ວຍຫນຶ່ງ ກວ້າງເຈັດສອກປາຍນິ້ວມື

ຂວານັ້ນແລ ຈິ່ງໃຫ້ພະຍາປ່າວຄົນທັງຫລາຍມາມາກນັກໃຫ້ມາປະຊຸມນຸມໃນເຄົ້າໄມ້ຕັກກະຣຸກຂະຕົ້ນນັ້ນແລ ມະຫາປະຊາທີປະຕິພົນຈິ່ງອະທິຖານ ເທວະດາທັງຫລາຍຝູງຢູ່ໃນອາກາດ ແລະແຜ່ນດິນ ແລະທິດທັງແປດນັ້ນ ດ້ວຍຄຳວ່າ ດູລາເທວະດາທັງຫລາຍຝູງ ມີອານຸພາບອັນມາກດັ່ງເມືອງອັນນີ້ ເຮົາຈັກຕັ້ງປີຕະກະມັນຕະທິບ ໄວ້ໃຫ້ເປັນທີ່ເພິ່ງແກ່ຄົນທັງຫລາຍໃນຮ້ອຍເອັດເມືອງນີ້ແລ ຜີຈັກສຳຣິດທີດັ່ງຄຳອະທິຖານແທ້ ຈິ່ງໃຫ້ມັນຕະທິບມາພ່ຳເພັງເຕັມກະອູບແກ້ວໜ່ວຍນີ້ເທີ້ນ ວ່າດັ່ງນີ້ແລ ໃນຂະນະບັດນັ້ນ ເທວະດາທັງຫລາຍກໍໃຫ້ມັນຕະທິບທັງຫລາຍເກີດມາພ່ຳເພັງເຕັມກະອູບແກ້ວໜ່ວຍນັ້ນແລ ເມື່ອນັ້ນມະຫາປະຊາທີປະຕິພົນ ຈິ່ງແປງຫໍປີຕະກະແກ້ວຫລັງໜຶ່ງໄວ້ໃນເມືອງຕັກກະສີລາ ແລ້ວກໍເອົາກະອູບແກ້ວອັນເຕັມໄປດ້ວຍມົນຕະທິບໃສ່ໃນຫໍປີຕະກະແກ້ວອັນນັ້ນ ແລ້ວມະຫາປະຊາທີປະຕິພົນ ຈິ່ງຄະນຶງໃຈວ່າ ອາດຕະມາຈັກໄປໄດ້ບຸກຄະລະຜູ້ໃດຜູ້ໜຶ່ງ ມາເປັນເຈົ້າມົນທິບນີ້ຈາ ວ່າດັ່ງນີ້ແລ້ວ ຈິ່ງອະທິຖານວ່າໃນເຈັດວັນ ບຸກຄະລະຜູ້ໃດຈັກມາເປັນເຈົ້າມົນທິບອັນນີ້ກໍຈິ່ງໃຫ້ປາກົດເທີ້ນວ່າດັ່ງນີ້ແລ ໃນວັນກ້ອນເຈັດນັ້ນ ຍັງມີລູກພາມຜູ້ໜຶ່ງຊື່ວ່າ ສີລາທິດຈະກຸມານ ຢູ່ໃນບ້ານອັນຊື່ວ່າ ປະຈິນນະໂມກຂະຄາມ ມີໃນທິສາທິນວັນອອກນັ້ນແລ ເມື່ອກຸມານຜູ້ນັ້ນຕະເດີນມາຮອດເມືອງຕັກກະສີລານະຄອນໃນວັນກ້ອນເຈັດນັ້ນ ມະຫາປະຊາທີປະຕິພົນກັບທັງພະຍາຕັກກະສີລາ ກໍໄປນຳເອົາມາຍັງກຸມານຜູ້ນັ້ນ ມາອຸດສາພິເສກໃຫ້ເປັນເຈົ້າມົນທິບອັນນັ້ນ ຈິ່ງໃສ່ຊື່ວ່າ ທິສາປາໂມກຂະອາຈານແລ ເຫດກຸມານຜູ້ມາແຕ່ບ້ານປາຈິນນະໂມກຂະຄາມແລ ມະຫາປະຊາທີປະຕິພົນ ກັບທັງພະຍາຕັກກະສີລາຈິ່ງໃຫ້ທິສາປາໂມກຂະອາຈານເປັນເຈົ້າຫໍປີຕະກະມົນທິບນັ້ນ ໃຫ້ເປັນອາຈານຜູ້ສອນມົນທິບນັ້ນແກ່ຄົນທັງຫລາຍໃນຊຸມພູທິບທັງມວນແລ ເມື່ອມ້ອນຊິວພະຍາຕັກກະສີລາທິດຈະກຸມານຜູ້ນັ້ນແລ້ວ ກໍຫາຜູ້ຊາຍແທນບໍ່ໄດ້ ທໍ່ຍັງມີແຕ່ລູກຍິງຜູ້ໜຶ່ງຍັງນ້ອຍນັກ ເລົ່າຍັງມີລຸງກຸມາຣີສອງຄົນ ຜູ້ໜຶ່ງເປັນລຸງພີ່ພໍ່ ຜູ້ໜຶ່ງເປັນລຸງພີ່ແມ່ ແຫ່ງກຸມາຣີຜູ້ນັ້ນແລ ເມື່ອນັ້ນເສນາອາມາດທັງຫລາຍ ເຂົາວ່າບໍ່ມີລູກຊາຍພະຍາອັນຈັກແທນເປັນພະຍາກໍບໍ່ໄດ້ ເຂົາຈິ່ງເສັງກັນວ່າ ພີ່ຊາຍພະຍຄກໍມີ ພີ່ຊາຍນາງພະຍາກໍມີ ເຮົາຈັກເພິງເອົາຜູ້ໃດເປັນພະຍາແກ່ເຮົານີ້ຈາ ແລ້ວເຂົາຈິ່ງຖາມ ນາງກຸມາຣີຜູ້ນ້ອຍນັ້ນວ່າ ດູລາເຈົ້ານາງຣາຊະທິດາ ອັນວ່າສອງຄົນນີ້ ຈັກຄວນໃຫ້ຜູ້ໃດເປັນພະຍາແທນພໍ່ເຈົ້ານີ້ຈາ ວ່າດັ່ງນີ້ ເມື່ອນັ້ນ ນາງກຸມາຣີກ່າວວ່າ ດູລາເສນາອາມາດທັງຫລາຍ ດັ່ງລຸງເຮົາສອງຄົນນີ້ ຜູ້ໜຶ່ງເປັນພີ່ພໍ່ ຜູ້ໜຶ່ງເປັນພີ່ແມ່ແຫ່ງເຮົາແລ ຂາກໍເປັນຄຸນແກ່ເຮົາທັງສອງແທ້ແລ ເຮົາຈັກວ່າຜູ້ນີ້ເປັນພະຍາດີແລ ຜູ້ນີ້ເປັນພະຍາບໍ່ດີບໍ່ຄວນແກ່ເຮົາແລ ອັນໃຫ້ຄວນແທ້ ເສນາອາມາດທັງຫລາຍກອດສາກເອົາດີດາຍ ບຸນແຫ່ງຂາຜູ້ໃດມີມາກຫາກຈັກໄດ້ເປັນພະຍາແລວ່າດັ່ງນີ້ ເມື່ອນັ້ນ ເສນາອາມາດທັງຫລາຍ ຈິ່ງກອດສາກເອົາຕາມຄຳນາງກຸມາຣີວ່ານັ້ນ ກໍໄດ້ລຸງພີ່ພໍ່ແລ ມັກວ່າພີ່ຊາຍພະຍາ ເຂົາອຸດສາພິເສກລຸງພີ່ພໍ່ນາງກຸມາຣີນັ້ນ ໃຫ້ເປັນພະຍາແທນພໍ່ນາງກຸມາຣີຕົນນັ້ນ ເມື່ອນັ້ນເທວະດາທັງຫລາຍກໍທອດໜັງສືລົງມາ ສັ່ງສອນຄົນທັງຫລາຍວ່າ ດູລາຄົນທັງຫລາຍ ອັນວ່າວົງສາຄົນທັງຫລາຍໃນໂລກນີ້ ຄືວ່າວົງສາພາຍພໍ່ນັ້ນ ຍັງແວນປະເສີດກວ່າວົງສາພາຍແມ່ດາຍ ແຣກແຕ່ນີ້ເມື່ອໜ້າ ເສນາອາມາດນັກປາດປະໂຣທິດແລ. ຄົນທັງຫລາຍຈິ່ງໃຫ້ຮູ້ວ່າ ວົງສາພາຍພໍ່ຍັງແວນປະເສີດກວ່າວົງສາພາຍແມ່ນັ້ນເທີ້ນ ແມ່ນວ່າຈັກກະທຳອັນໃດກໍດີ ຄືວ່າຈັກແຣກໄປຄ້າ

ທາງນ້ຳທາງບົກກໍດີ ຈິ່ງໃຫ້ເອົາຄຳພໍ່ໄປແຮກທືອທີເທີ້ນ ທາກຈັກສຳຣິດທີເປັນມັງຄະລະແກ່ຄົນທັງທລາຍເປັນຕົ້ນວ່າ ທ້າວພະຍານັ້ນແລ ຕຳນານອັນນີ້ເທວະດາທາກວ່າຊອບ ຈິ່ງທອດໜັງສືລົງມາກ່າວສອນຄົນທັງຫລາຍໄວ້ແລ ພະຍາຕັກກະສີລາ ຊັກຕຳນານອັນນີ້ ມາໃຫ້ເສນາອາມາດທັງຫລາຍຟັງດັ່ງນີ້ແລ້ວ ພະຍາຈິ່ງກ່າວວ່າ ດູລານາງສະມາທີກຸມາຣີ ອັນຈັກຄົມຣິບຢຳແຍງແກ່ລູງທັງສອງແລະໃຫ້ວັດກຸແກ່ລູງທັງສອງສະເໝີກັນນັ້ນ ວ່າຜິດທຳມະດາເພື່ອດັ່ງນີ້ແລ ເມື່ອນັ້ນເທວະດາອັນຢູ່ພູມມະເສດຕະສັດແຫ່ງພະຍານັ້ນ ກໍວ່າຊອບຈິ່ງກວາຍເຂົ້າຕອກດອກໄມ້ກຸສຸມາທິບ ລົງມາບູຊາພະຍາທ່າມກາງຄົນທັງຫລາຍທັ້ນແລ ເມື່ອນັ້ນ ນາງສະມາທີ ກໍຍິນດີໃນຄຳສອນພະຍາມາກນັກແລ້ວ ຈິ່ງຊ້ຳາໃຫ້ຜ້າພືນໜຶ່ງຄອນຄ່າພັນຄຳແກ່ລູງຜູ້ເປັນພີ່ພໍ່ນັ້ນແລ້ວ ເລົ່າຂໍຂະມາໂທດເຊິ່ງລູງພີ່ພໍ່ທັ້ນແລ ເມື່ອນັ້ນ ເທວະດາທັງຫລາຍກໍຊ່ອຍມະຫາປະຊາທິປະຕີພົມ ແຕ່ງບ້ານແປງເມືອງ ແລ້ວກໍໃຫ້ດອຍຄຳອັນໜຶ່ງອອກມາແກ່ນາງສະມາທີກຸມາຣີທັ້ນແລ ເມື່ອນັ້ນພະຍາກໍໃຫ້ເອົານາງສະມາທີມາອຸດສາພິເສກເປັນນາງອັກຄະມະເຫສີ ແລ້ວກໍໃຫ້ເປັນໃຫຍ່ກວ່ານາງທັງຫລາຍກໍມີແລ ເຫດວ່ານາງຄົມຣິບຢຳແຍງຜູ້ເກົ້າຜູ້ແກ່ທັງຫລາຍ ເປັນຕົ້ນວ່າ ລູງຜູ້ພີ່ພໍ່ນັ້ນແລ ເຫດດັ່ງນັ້ນ ອາຈານເຈົ້າທັງຫລາຍຈິ່ງກ່າວສືບໄວ້ ໃຫ້ເປັນທີ່ທອຸມແກ່ຄົນທັງຫລາຍໃນໂລກນີ້ແລ ບຸກຄະລະຜູ້ໃດກະທຳຕາມຕຳນານອັນນີ້ ອາຈານເຈົ້າທັງຫລາຍຫາກແປງໄວ້ສອນໂລກ ຫາກສຳຣິດທີ່ຊູ່ປະການແລ ພະຍາມູລະຕັນໄຕ ໄດ້ຍິນຄຳອາມາດຈາລະຈາຕໍ່ຕົນສັ້ນນີ້ ກໍຍິນດີມາກນັກແລ ແລ້ວກໍໃຫ້ຄຳພັນໜຶ່ງແກ່ເສດກະມານະວະຜູ້ນັ້ນເປັນຂອງບູຊາແຫ່ງມັນ ແລ້ວພະຍາມູລະຕັນໄຕກໍປົງອາດຍາໄວ້ໃຫ້ມັນເປັນຂຸນ ວິນິດສະຍາມັດຈາ ຄືວ່າ ໃຫ້ເປັນອາມາດຜູ້ຕັດແຕ່ງກ້ອຍຄຳ ຄົນທັງຫລາຍຝູງຮູ້ຄຶານັບຢຳແຍງຜູ້ເກົ້າຜູ້ແກ່ອັນເປັນເຊື້ອຊາດວົງສາແຫ່ງຕົນນັ້ນແລ ອັນນີ້ຕຳນານໃຫ້ຮູ້ວ່າ ເປັນເຊື້ອຊາດວົງສາພາຍພໍ່ ຫາກຍັງແອນປະເສີດກວ່າວົງສາພາຍແມ່ແຫ່ງຄົນທັງຫລາຍໃນໂລກນີ້ແລ ກ່າວຕຳນານອັນປະເສີດແອນຍິ່ງ ກໍແລ້ວທໍ່ນີ້ແລ.

ທີ່ນີ້ຈັກກ່າວ ຕຳນານບໍ່ວຢ່າໃຫ້ຊ້ຳາ ນ້ຳຢ່າໃຫ້ຂຸ່ນ ປາ ແລະ ງູຢ່າຄອດ ຂອດຢ່າໃຫ້ຕາຍໄມ້ຄ້ອນຢ່າຫັກ ຝັ່ງນ້ຳຢ່າເພພັງດັ່ງນັ້ນເປັນປະທັດສືບມາ ເພື່ອວ່າຈັກໃຫ້ໄວ້ເປັນທີ່ທອຸມແກ່ໂລກເມື່ອພາຍໜ້າເປັນຕົ້ນວ່າ ເສນາອາມາດນັກປາດປະໂຣຫິດທັງຫລາຍ ນິທານມີສັ້ນນີ້ແລ ຍັງມີເມືອງອັນໜຶ່ງຊື່ວ່າ ທຳມະປາລະນະຄອນ ເມືອງອັນນັ້ນມະຫາພົມຫາກແຮກຕັ້ງໃຫ້ເປັນບ້ານເປັນເມືອງແທບກັນທືອທີອັນນັ້ນແລ ຍັງມີພະຍາຕົນໜຶ່ງຊື່ວ່າ ມິດຕະທຳມະຣາດ ກໍຫາກສະເຫວີຍເມືອງອັນນັ້ນແລ ແຮກແຕ່ພະຍາຕົນນັ້ນໄດ້ສະເຫວີຍເມືອງອັນນັ້ນ ພະຍາກໍໃຫ້ຕີກອງຮ້ອງປ່າວໃຫ້ໂອວາດແກ່ຄົນທັງຫລາຍດ້ວຍຄຳວ່າ ດູລາຊາວບ້ານຊາວເມືອງທັງຫລາຍ ຝູງຢູ່ໃນອານາເຂດປະເທດບ້ານເມືອງແຫ່ງເຮົາທີ່ນີ້ ຕັ້ງແຮກແຕ່ມື້ນີ້ອັນນີ້ເມື່ອໜ້າ ບຸກຄະລະຍິງຊາຍນ້ອຍໃຫຍ່ທັງຫລາຍກະທຳອັນໃດກໍດີ ຫາເຄົ້າຫາມູນບໍ່ໄດ້ດັ່ງນັ້ນ ທ່ານທັງຫລາຍຢ່າກ່າວຈາລະຈາຢ່າກ່າວຄຳຕົວະ ຄຳລ່າຍ ຄຳພາງເປົ່າດາຍ ຄຳອັນໃດແລຫາສັກຂີທີ່ຊີ້ທີ່ທອຸມບໍ່ໄດ້ດັ່ງນັ້ນ ສູທັງຫລາຍຢ່າໄດ້ກ່າວສັກເທື່ອສັກຄົນເທີ້ນ ບຸກຄະລະຜູ້ໃດແລບໍ່ໂດຍດັ່ງພະຣາຊະໂອວາດແຫ່ງເຮົາດັ່ງນັ້ນ ຈັກໃສ່ທັນດະກຳແກ່ບຸກຄະລະຜູ້ນັ້ນແລ ວ່າດັ່ງນັ້ນ ພະຍາມິດຕະທຳມະຣາດ ກໍທອຸນຍ່ອມ

ໃຫ້ຄົນທັງຫລາຍຕີກອງປ່າວດັ່ງນັ້ນທຸກເດືອນ ຕາບຕໍ່ເທົ້າໄດ້ປີໜຶ່ງແລ ແຮກແຕ່ນັ້ນໄປພາຍໜ້າບໍ່ນານເທົ່າໃດ ຍັງມີເຈົ້າຣັດສີສີ່ຕົນຢູ່ໃນເມືອງພະຍາພິມມະປາລະນະຄອນນັ້ນ ກໍຫລົບຍ່ອມເມືອສູ່ໂຮງພະຍາພິມມະປາລະນັ້ນຊູ່ວັນແລ ເຈົ້າຣັດສີກໍຮູ້ຂ່າວສານວ່າ ບ້ານເມືອງພະຍາມິດຕະທຳມະຣາດນັ້ນຊອບທຳນັກ ເຈົ້າຣັດສີສີ່ຕົນ ກໍຕະເດີນມາໃນເມືອງພະຍາມິດຕະທຳມະຣາດພັ້ນແລ ເມື່ອນັ້ນພະຍາພິມມະປາລະນະຄອນກໍຮູ້ຂ່າວວ່າເຈົ້າຣັດສີສີ່ຕົນ ໜີເມືອເມືອງພະຍາມິດຕະທຳມະຣາດພຸ້ນ ພະຍາກໍຄຶດເກິງເສັອດາຍນັກໄຄ່ໃຫ້ເຈົ້າຣັດສີຄືນມາ ພະຍາຈຶ່ງໃຫ້ຂ່າວສານໄປຫາພະຍາມິດຕະທຳມະຣາດນັ້ນວ່າດັ່ງນີ້ ດູລາເຈົ້າມິດຕະທຳມະຣາດ ຈົ່ງສົ່ງເຈົ້າຣັດສີສີ່ຕົນນັ້ນມາແດ່ເທີ້ນ ພິບໍ່ສົ່ງມາເຮົາຈັກໄປຮົບເອົາແລ ວ່າດັ່ງນີ້ແລ້ວ ກໍໃຊ້ໃຫ້ໄປແລ ເມື່ອນັ້ນພະຍາມິດຕະທຳມະຣາດໄດ້ຍິນຂ່າວສານອັນນັ້ນແລ້ວ ກໍກ່າວເຊິ່ງຄົນໃຊ້ວ່າ ເຮົາບໍ່ໄດ້ເຄາະບໍ່ໄດ້ເກາະເອົາຣັດສີມາແລ ເຈົ້າຣັດສີ ຫາກຍິນດີເຊິ່ງບ້ານເມືອງແຫ່ງເຮົາຫາກມາດາຍ ຈັກໃຫ້ເຮົາສົ່ງເຈົ້າຣັດສີໄປນັ້ນບໍ່ຄວນແລ. ພິວ່າພະຍາຈັກມາຮົບເອົາເຈົ້າຣັດສີສີ່ຕົນນີ້ກໍຕາມໃຈເຍີ ວ່າດັ່ງນັ້ນ ເມື່ອນັ້ນຄົນໃຊ້ຄືນມາຄອບແລ້ວ ພະຍາພິມມະປາລະໄດ້ຍິນຄຳອັນນັ້ນແລ້ວ ກໍຄຽດມາກນັກບໍ່ພິຈາລະນາຕົນກີ່ກໍກີເອົາພົນໂຍທາທັງຫລາຍໄປມາກນັກ ເພື່ອວ່າຈັກຮົບພະຍາມິດຕະທຳມະຣາດເອົາເຈົ້າຣັດສີສີ່ຕົນນັ້ນກັບຄືນມາແລ ຄັນວ່າໄປເຖິງແດນເມືອງພະຍາມິດຕະທຳມະຣາດແລ້ວ ກໍຕັ້ງທັບຮາວຄາວຈອດຢູ່ບ່ອນໜຶ່ງແລ້ວອາມາດທັງຫລາຍ ກໍໄຫວ້ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ດັ່ງໄດ້ຍິນມານີ້ ຄົນທັງຫລາຍອັນຢູ່ໃນເມືອງພະຍາມິດຕະທຳມະຣາດນັ້ນເຂົາກໍຫລົບຍ່ອມຊອບທຳນັກດາຍເຮົາເພິ່ງພິຈາລະນາກີ່ກ່ອນເທີ້ນ ເມື່ອເຮົາແພ້ເຂົາ ກໍມີໄຊຢູ່ແທ້ແລເມື່ອເຮົາບໍ່ແພ້ເຂົານັ້ນ ກໍຈັກເສັອຝ່າຍເຮົາມາກນັກດາຍວ່າດັ່ງນັ້ນ ເມື່ອນັ້ນ ພະຍາພິມມະປາລະກ່າວວ່າ ພິວ່າສູທັງຫລາຍຍັງວ່າດັ່ງນັ້ນແທ້ ເຮົາເພິ່ງແປງບັນຫາອັນເລິກອັນແລບໄປສ່ອງແກ່ພະຍາຄວນແລ ພະຍາກໍກ່າວແກ່ເສນາທັງຫລາຍ ເລົ່າຍັງມີບັນຫາສອງອັນນັ້ນແລ ຄືວ່າດູກຂໍ້ມີຜູ້ຍິງຜູ້ຊາຍແລ ດ້ວຍມີແທ້ ອະທິບາຍວ່າສັນນີ້ ພິວ່າເຂົາແລຮູ້ດູກຂໍ້ມີຜູ້ຍິງຜູ້ຊາຍແທ້ ເຂົາຫາກຈັກຄືນມາແກ່ເຮົາແທ້ ເຂົາກໍກ້າຫານສະເໜີເຮົາແລ ວ່າດັ່ງນີ້ແລ້ວ ກໍໃຊ້ໄປດ້ວຍຄຳສັ່ງວ່າ ເສນາອາມາດນັກປາດປະໂຣຫິດທັງຫລາຍ ໝາຍມີພະຍາເຈົ້າມິດຕະທຳມະຣາດ ແລະຮູ້ດູກມີສອງອັນນີ້ວ່າ ອັນນີ້ດູກມີຜູ້ຍິງ ອັນນີ້ດູກມີຜູ້ຊາຍແລ ວ່າດັ່ງນັ້ນແທ້ ຈິ່ງຄືນມາອັນໜຶ່ງເທີ້ນ ພິບໍ່ຮູ້ແລະບໍ່ຄືນມາຫາເຮົາດັ່ງນັ້ນ ຕູຈັກຮົບເອົາເຈົ້າຣັດສີວ່າດັ່ງນີ້ແລ ເມື່ອນັ້ນເສນາອາມາດ ນັກປາດປະໂຣຫິດ ແລະ ພະຍາມິດຕະທຳມະຣາດ ກົວຈັກເສັອເມືອງແຫ່ງຕົນກໍເປັນອັນຮ້ອນໃຈຍິ່ງນັກ ກໍແຕ່ງຄຳແສນໜຶ່ງໃຫ້ໄປບູຊາພະຍາອາມັດຕະເອກຣາດ ຄັນວ່າຄົນໃຊ້ໄປຮອດແລ້ວຈຶ່ງໄຫວ້ພະຍາອາມັດຕະເອກຣາດວ່າ ຂໍມະຫາຣາຊະເຈົ້າຈົ່ງຊ່ອຍຮັກສາບ້ານເມືອງແຫ່ງຝູງຂ້າທັງຫລາຍແດ່ເທີ້ນວ່າດັ່ງນີ້ແລ້ວ ຄົນໃຊ້ກໍເອົາດູກຂໍ້ມີສອງອັນກັບທັງຄຳແສນໜຶ່ງກວາຍແກ່ເຈົ້າພະຍາອາມັດຕະເອກຣາດ ແລ້ວກ່າວໃນກິດຈະແຫ່ງບັນຫາ ດູກຂໍ້ມີສອງອັນນັ້ນຊູ່ປະການ ຕາມດັ່ງພະຍາພິມມະປາລະຫາກກ່າວນັ້ນຊູ່ປະການພັ້ນແລ ເມື່ອນັ້ນພະຍາອາມັດຕະເອກຣາດໄດ້ຍິນແລ້ວ ກໍເອົາດູກຂໍ້ມີສອງອັນນັ້ນມາພິຈາລະນາດູ ກໍຕັດສະຮູ້ໃນບັນຫາອັນນັ້ນແຈ້ງນັກ ດ້ວຍປັນຍາແຫ່ງຕົນໃນຂະນະບັດດຽວນັ້ນແລ້ວ ເຈົ້າກໍໃຫ້ຊຸມນຸມມາຍັງເສນາອາມາດທັງຫລາຍ ຝູງພິຈາລະນາກຳບ້ານຄຳເມືອງຕາງພະຍາເຈົ້າຕົນພໍ່ນັ້ນມາ ແລ້ວຈຶ່ງ

★ ທາດຫລວງ ວຽງຈັນ

ກ່າວວ່າ ດູລາເສນາອາມາດທັງຫລາຍ ບັນຫາອັນນີ້ແຕ່ກ່ອນເຈົ້າທັງຫລາຍຍັງເຄີຍໄດ້ຮູ້ໄດ້ແຈ້ງ
ເປັນປະການສັນໃດ ເມື່ອນັ້ນເສນາອາມາດທັງຫລາຍຂານວ່າ ຂ້າແກ່ມະຫາຣາຊະເຈົ້າ ຝູງຂ້າ
ທັງຫລາຍບໍ່ທ່ອນໄດ້ຍິນສັກເທື່ອແຕ່ກາລະເມື່ອກ່ອນເທົ່າບັດນີ້ ບໍ່ທ່ອນມີສັກເທື່ອແລ ທີ່ນັ້ນພະຍາ
ອາມັດຕະເອກຣາດກ່າວວ່າ ດູລາເສນາອາມາດທັງຫລາຍ ຊາຕິຣາຊະກິດຈະ ອັນເປັນຄຳບ້ານ
ຄຳເມືອງອັນເລີກອັນແລບ ອັນບໍ່ທ່ອນມີສັກເທື່ອແລະມາມີນັ້ນເປັນກັບດ້ວຍເຄາະເມືອງດາຍ
ລາງຄາບກໍເປັນກັບດ້ວຍໂຊກເມືອງກໍມີແລ ເກີດຂຶ້ນໃນກາງເມືອງກໍດີນອກເມືອງກໍດີ ລຸກແຕ່
ປະເທດຕ່າງເມືອງມາເກີດກໍດີ ຄຳເມືອງອັນໃຫຍ່ແລະເລີກແລບນັ້ນເມື່ອພະຍາແຫ່ງຕົນແລ
ເຄືອງໃຈ ກໍຫອນຍ່ອມມີເສນາອາມາດຝູງອາສາໃຫ້ແລ້ວຣາຊະກິດທັງມວນກໍເພິ່ງວ່າເສັງລິພິປອງ
ຊ່ອຍກັນຈຶ່ງຊອບດາຍ ສູເຈົ້າທັງຫລາຍ ພອຍວ່າບໍ່ພິຈາລະນາສະແຫວງຫາຍັງຄຸນນະຊາດແຫ່ງ
ຣາຊະກິດທັງມວນແທ້ແລ ຊາຕິຄຳເມືອງອັນຕ່າງອັນບໍ່ທ່ອນມີແລມາມີ ບໍ່ໃຫ້ຮູ້ແຈ້ງປາກົດໃນບັນຫາ
ແຫ່ງຕົນດັ່ງນັ້ນ ກໍຈັກຂາດເສີອຍັງເຂົ້າຂອງສິນບັດແລະຍົດສັກໄຮ່ນາ ກໍຈັກຄາດຄາຈາກທີ່ຢູ່
ແຫ່ງຕົນດາຍ ຫອນຍ່ອມໃຫ້ຕິປອງຄຳເມືອງອັນຫນັກອັນເບົາ ຕາງທ້າວພະຍາແຫ່ງຕົນໄດ້ດັ່ງນັ້ນ
ກໍຈັກເປັນຄອງວຸດທິຈຳເຣີນສີສະຫວັດສະດີ ສຳບັດຕິຍົດສັກປະຣິວານແຫ່ງຕົນມາກນັກແລ ເຫດ
ດັ່ງນັ້ນສູເຈົ້າທັງຫລາຍເພິ່ງໃຫ້ສະແຫວງຫາສາດຕະສິນ ໃຫ້ຮູ້ແຈ້ງໃນຣາຊະກິດແຫ່ງທ້າວພະຍາ
ທັງຫລາຍມວນແລ ເສນາອາມາດຜູ້ໃດແກ້ບັນຫາໄດ້ຈຶ່ງດີແລ ທີ່ນີ້ເຮົາຈັກແກ້ບັນຫາອັນນີ້ແລ
ທ່ານທັງຫລາຍຈົ່ງຈື່ຈຳໄວ້ເທີ້ນວ່າດັ່ງນີ້ ເຈົ້າກໍຣາດທະນາເທວະດາດ້ວຍຄຳວ່າ ດູລາເທວະດາ
ທັງຫລາຍ ຜີວ່າແກ້ບັນຫາດູກຂໍ້ມືສອງອັນນີ້ແລຊອບຄະດີໂລກທັງຫລາຍມາແທ້ດັ່ງນັ້ນ ເທວະ
ດາເຈົ້າຈົ່ງສຳແດງອັນໃດອັນຫນຶ່ງ ໃຫ້ປາກົດແຈ້ງເປັນສັກຂີແກ່ຄົນທັງຫລາຍເທີ້ນ ວ່າດັ່ງນີ້ແລ້ວ
ພະຍາອາມັດຕະເອກຣາດຈຶ່ງກ່າວວ່າ ດູລາຄົນໃຊ້ລ້ຳກະດູກຂໍ້ມືສອງອັນນີ້ ອັນໃດຈັກຮູ້ວ່າກະດູກ
ແມ່ຍິງ ຜູ້ຊາຍນີ້ຈາແທ້ແລ ແຕ່ປະຖົມມະກັບທີ່ວທີວັນນັ້ນ ຈຶ່ງກົດຫມາຍໃຫ້ຮູ້ຍັງອິງຄະຫນຶ່ງແຫ່ງ
ຜູ້ຍິງ ແລະ ຜູ້ຊາຍທັງຫລາຍ ຄັນວ່າຄົນທັງຫລາຍຕາຍໄປສູ່ບໍລະໂລກພາຍຫນ້າແລ້ວ ຍັງແຕ່ກະ
ດູກນັ້ນ ຜູ້ມີຜະຫຍາເພິ່ງເອົາດູກນັ້ນມາພິຈາລະນາດູແລ້ວ ກໍຮູ້ວ່າດູກອັນນີ້ເປັນດູກຂໍ້ມືຜູ້ຍິງແລ
ດູກອັນນີ້ແມ່ນດູກຂໍ້ມືຜູ້ຊາຍແລ ວ່າດັ່ງນີ້ ພະຍາອາມັດຕະເອກຣາດ ກໍບາຍເອົາດູກສອງອັນນັ້ນມາ
ພິຈາລະນາ ຊັ່ງດູດ້ວຍຝາມືທັງສອງແລ້ວກໍຮູ້ອັນຫນັກອັນເບົາແລ້ວ ເຈົ້າກໍກີເອົາດູກອັນຫນຶ່ງນັ້ນ
ຍົກຂຶ້ນດ້ວຍຄຳວ່າ ດູລາຄົນໃຊ້ ດູກຂໍ້ມືຜູ້ນີ້ແມ່ນດູກມືຜູ້ຊາຍ ອັນນີ້ດູກຜູ້ຍິງດາຍວ່າດັ່ງນັ້ນແລ ເມື່ອ
ນັ້ນຄົນໃຊ້ເຫັນພະຍາອາມັດຕະເອກຣາດແກ້ບັນຫາເປັນອັນງ່າຍນັກ ຈຶ່ງໄຫວ້ຖາມດ້ວຍຄຳວ່າເຈົ້າ
ກູແກ້ບັນຫາອັນນີ້ເປັນອັນງ່າຍພະລັນ ເຈົ້າກູຮູ້ດ້ວຍເຫດສັນໃດຈາ ຂໍມະຫາຣາຊະເຈົ້າຈົ່ງສຳແດງ
ເຫດອັນນັ້ນໃຫ້ປາກົດແກ່ຝູງຂ້າທັງຫລາຍແດ່ເທີ້ນ ເມື່ອນັ້ນພະຍາອາມັດຕະເອກຣາດກໍກ່າວດ້ວຍ
ສີຫະນາດອົງອາດແກ່ຕົນວ່າ ດູລາຄົນໃຊ້ທັງຫລາຍ ສາດຕະສິນອັນນີ້ ເຮົາກໍຮູ້ແຕ່ບຸບພາຈາຣະ
ຍະເຈົ້າທັງຫລາຍ ອັນກ່າວສືບໆມາແຕ່ປະຖົມມະກັບທີ່ວທີວັນນັ້ນ ອັນມະຫາພົມຫາກແຣກຕັ້ງໃຫ້
ເປັນບ້ານເປັນເມືອງວັນນັ້ນ ຊາຕິຜູ້ຍິງແລະຜູ້ຊາຍໃນໂລກນີ້ ມີໄວຍະບໍ່ສະເຫມີກັນ ເມື່ອຍັງມີ
ຊີວິດນັ້ນ ຜູ້ຍິງແວນເບົາກວ່າຜູ້ຊາຍດາຍ ແມ່ນວ່າຈິດໃຈກໍດີ ກໍຍັງແວນເບົາ ແມ່ນວ່າວິຕົກເຍືອງ
ໃດກໍດີ ກໍແວນເບົາບໍ່ເປັນຄຳເລີກດາຍ ແມ່ນວ່າຕາຍໄປສູ່ບໍລະໂລກພາຍຫນ້າແລລະດູກໄວ້ກໍດີ

ດູກອັນນັ້ນຍັງແອນເບົາກວ່າດູກຜູ້ຊາຍດາຍ ສ່ວນວ່າຜູ້ຊາຍແມ່ນວ່າຍັງເປັນກັບດ້ວຍຊີວິດຕົນກໍຫາກຍັງແອນໜັກ ແມ່ນວ່າວິຕົກແຫ່ງຜູ້ຊາຍເຍື່ອງໃດກໍດີແລ ພິຈາລະນາເຍື່ອງໃດກໍດີ ກໍຫາກແອນໜັກເປັນທີ່ເພິ່ງເຊື່ອກໍຈື່ຈໍາເອົາ ແມ່ນວ່າເຂົາຕາຍໄປສູ່ປໍລະໂລກພາຍໜ້າ ລະຊາກໄວ້ຍັງທີ່ແຕ່ກະດູກກໍຫາກຍັງແອນໜັກກວ່າດູກຜູ້ຍິງດາຍ ວ່າດັ່ງນີ້ແລ້ວ ພະຍາອາມັດຕະເອກຣາດຈິ່ງເອົາດູກຂໍ້ມືຜູ້ຍິງຜູ້ຊາຍມາກັບດ້ວຍກັນໃຫ້ຄົນທັງຫລາຍ ຄືວ່າຄົນໃຊ້ພະນາມິດຕະທໍາມະຣາດເຫັນຍັງດູກຂໍ້ມືອັນນັ້ນແລ້ວເຈົ້າກໍກ່າວວ່າ ດູກຂໍ້ມືຜູ້ຊາຍນັ້ນກໍຫາກດູໜັກກວ່າດູກຂໍ້ມືຜູ້ຍິງທັ້ນແລ ດູກຂໍ້ມືຜູ້ຍິງນັ້ນ ກໍຫາກແອນເບົາແທ້ທັ້ນແລ ພະຍາອາມັດຕະເອກຣາດ ຢອວ່າຄົນໃຊ້ບໍ່ເຊື່ອດັ່ງນັ້ນ ເຈົ້າຈິ່ງໃຫ້ເອົາພາຊະນະອັນໜຶ່ງໃສ່ນໍ້າມາ ແລ້ວກໍເອົາດູກມືສອງອັນນັ້ນວາງລົງໃສ່ພາຊະນະອັນນັ້ນພ້ອມກັນ ດູກຂໍ້ມືຜູ້ຊາຍແອນໜັກ ກໍຈົມລົງຮອດພື້ນກ່ອນ ດູກຂໍ້ມືແມ່ຍິງແອນເບົາ ກໍຈົມລົງຮອດພື້ນເມື່ອລຸນທັ້ນແລ ເຈົ້າອາມັດຕະເອກຣາດແກ້ບັນຫາອັນນີ້ຊອບນັກ ເທວະດາກໍພາຍເຂົ້າຕອກດອກໄມ້ທິບລົງມາບູຊາເຈົ້າອາມັດຕະເອກຣາດຊ້ອງໜ້າຄົນໃຊ້ທັງຫລາຍກໍເຫັນ ເຂົາກໍອັດສະຈັນມາກນັກ ເຂົາກໍຂາບໄຫວ້ພະຍາເອກຣາດສາມທີ ແລ້ວເຈົ້າກໍໃຫ້ໂອວາດຄໍາສອນແກ່ຄົນໃຊ້ວ່າ ເມື່ອເຈົ້າທັງຫລາຍ ຈັກຄືນດູກຂໍ້ມືໃຫ້ແກ່ພະຍາພົມມະປາລະນັ້ນ ຢ່າຄືນດູກຂໍ້ມືຜູ້ຊາຍເນີ ຈິ່ງໃຫ້ດູກຂໍ້ມືແມ່ຍິງແກ່ເຂົາເທີ້ນ ພະຍາພົມມະປາລະແລເຫັນກະດູກຂໍ້ມືຜູ້ຍິງຄືນມາດັ່ງນັ້ນ ກໍຫາກຈັກຮູ້ອະທິບາຍແຫ່ງພະຍາມິດຕະທໍາມະຣາດວ່າ ກ້າຫານສະຫລາດດ້ວຍເຄື່ອງຍຸດທະກໍາແທ້ແລ ເອົາດູກຂໍ້ມືແມ່ຍິງຄືນມາຍັງເຮົານີ້ ເປັນແມ່ຍິງດັ່ງສູມາສ່ອງນັ້ນແລ ເຂົາຈັກວ່າດັ່ງນີ້ແລ ເມື່ອນັ້ນຄົນໃຊ້ທັງຫລາຍ ເຂົາກໍຈໍາຍັງຄໍາໂອວາດພະຍາອາມັດຕະເອກຣາດໄດ້ແລ້ວ ກໍສັ່ງອໍາລາຄືນເມືອບອກເລົ່າແກ່ພະຍາມິດຕະທໍາມະຣາດຕົນເປັນເຈົ້າແຫ່ງເຂົາທັ້ນແລ ເມື່ອນັ້ນພະຍາມິດຕະທໍາມະຣາດ ກໍໃຫ້ຄົນໃຊ້ເອົາດູກຂໍ້ມືຜູ້ຍິງໄປຄືນແກ່ພະຍາພົມມະປາລະ ອັນມາຕັ້ງຢູ່ແດນເມືອງແຫ່ງຕົນນັ້ນແລ ເມື່ອນັ້ນພະຍາພົມມະປາລະ ເຫັນກະດູກຂໍ້ມືແມ່ຍິງອັນຄືນມານັ້ນ ກໍຈາລະຈາກັບດ້ວຍເສນາທັງຫລາຍວ່າ ພະຍາມິດຕະທໍາມະຣາດ ແລະ ເສນາອາມາດທັງຫລາຍເຂົາກໍແກ້ບັນຫາໄດ້ແລ້ວ ຈິ່ງຄືນດູກຂໍ້ມືຜູ້ຍິງມານາບດ້ວຍຄໍາວ່າດັ່ງນີ້ ຕູກໍກ້າຫານດັ່ງສູນັ້ນແລ້ວ ວ່າດັ່ງນີ້ດາຍ ເຫດດັ່ງນັ້ນ ເຮົາກໍບໍ່ຄວນໄປຮົບພະຍາມິດຕະທໍາມະຣາດນັ້ນ ເພື່ອຈັກເອົາເຈົ້າຣັດສີສີຕົນນັ້ນແລ ວ່າດັ່ງນີ້ແລ້ວພະຍາກໍພາເອົາຣີພົນຊ້າງມ້າກອຍຄືນມາສູ່ເມືອງແຫ່ງຕົນດັ່ງເກົ່າ ກໍມີແລ ສ່ວນວ່າເຈົ້າຣັດສີສີຕົນນັ້ນ ກໍຢູ່ໃນເມືອງພະຍາມິດຕະທໍາມະຣາດ ຕາມສຸຂະສໍາຣານແຫ່ງຕົນກໍມີແລ ເມື່ອນັ້ນຄົນທັງຫລາຍ ອັນຢູ່ໃນເມືອງພະຍາມິດຕະທໍາມະຣາດເຂົາຢູ່ແຫ່ງໃດກໍດີ ມີຕົ້ນວ່າຫລວງທາງແຫ່ງໃດກໍດີ ເຂົາກໍຫລົນຍ່ອມຈາກັນວ່າ ພະຍາເຈົ້າແຫ່ງເຮົາກໍແກ້ຂ້າເສິກສັດຕູ ດ້ວຍວຸດທິສະຫວັດດີ ບໍ່ໄດ້ຮົບໄດ້ເລວຄຸງຕົນຄຸງມີສັ່ງແທ້ແລ ເປັນດັ່ງຄໍາວ່າ ບົວຢ່າຊໍ້າ ນໍ້າຢ່າຂຸ່ນ ປາ ແລະງູຢ່າຄອດ ຂອດຢ່າຕາຍ ໄມ້ຄ້ອນຢ່າຫັກ ຝັ່ງນໍ້າຢ່າເພນັ້ນແລ ຄົນທັງຫລາຍຫລົນຍ່ອມຈາກັນດັ່ງນີ້ ທຸກທີ່ທຸກແຫ່ງທັ້ນແລ ຍັງມີໃນວັນໜຶ່ງ ພະຍາມິດຕະທໍາມະຣາດ ກໍໃຫ້ຫລິ້ນມະໂຫລະສົບ ໃນສວນອຸດທິຍານນັ້ນແລ້ວແລອອກມາກໍໄດ້ຍິນຄົນທັງຫລາຍຈາກັນທຸກແຫ່ງທຸກລະແວກທົນທາງດັ່ງນັ້ນ ພະຍາກໍຈາລະຈາກັບດ້ວຍອາມາດພັ້ງຫລາຍວ່າ ດັ່ງຄໍາອັນຄົນທັງຫລາຍຈາກັນນັ້ນ ກໍດູຫລາກນັກແທ້ດາຍ ສູຍັງເຄີຍໄດ້ຍິນແຕ່ໃນກາລະເມື່ອກ່ອນແດ່ລີ ເມື່ອນັ້ນອາມາດທັງຫລາຍຂານວ່າ ຕັ້ງແຮກແຕ່ຝູງຂ້າທັງຫລາຍເກີດມາ

ເປັນຄົນນີ້ ບໍ່ທ່ອນໄດ້ຍິນສັກເທື່ອແທ້ແລະຈິ່ງມາໄດ້ຍິນບັດນີ້ແລ ແຕ່ນັ້ນເມືອໜ້າບໍ່ນານເທົ່າໃດ ເລົ່າຍັງມີມານະວະສີ່ຄົນ ເຂົາກໍມາເຊົາສາລາທີ່ໜຶ່ງແລ້ວ ເຂົາເລົ່າເວົ້າຈາກັນດ້ວຍຄຳສັບດອວ ນັ້ນແລ ເມື່ອນັ້ນຄົນທັງຫລາຍໄດ້ຍິນຄຳມານະວະສີ່ຄົນນັ້ນ ເຂົາກໍໄປຖາມດູວ່າ ດູລາເຈົ້າມານະວະທັງຫລາຍ ຄຳອັນສູເວົ້າຈາກັນວ່າພະຍາເຈົ້າແຫ່ງເຮົາ ແລະພະຍາພິມມະປາລະຈັກຮັບກັນ ເລົ່າບໍ່ໄດ້ຮັບສັນນີ້ ເປັນດັ່ງບົວຢ່າຊ້ຳ ນ້ຳຢ່າຂຸ່ນ ປາແລະງູຢ່າຍອດ ຂອດຢ່າຕາຍ ໄມ້ຄ້ອນຢ່າຫັກ ຝັ່ງນ້ຳຢ່າເພພັງວ່າສັນນີ້ ເຈົ້າທັງຫລາຍຍັງຮູ້ເຄົ້າຮາກແຫ່ງຄຳເຫລົ່ານີ້ແດ່ລື ເມື່ອນັ້ນມານະວະສີ່ຄົນກ່າວວ່າ ດູຂ້າທັງຫລາຍກໍບໍ່ຮູ້ແຫ່ງເຄົ້າຮາກ ແລະ ທີ່ເກີດທີ່ເປັນແຫ່ງຄຳອັນນີ້ໄດ້ແລ ທໍ່ແຕ່ໄດ້ຍິນຄົນທັງຫລາຍຈາກັນສືບໆມາຊູ່ບ້ານຊູ່ເມືອງແລ ເມື່ອນັ້ນເຂົາທັງຫລາຍກໍເມືອໄຫວ້ພະຍາຊູ່ອັນທັ້ນແລ ທີ່ນັ້ນພະຍາກໍໃຫ້ຫາມາຍັງມານະວະສີ່ຄົນນັ້ນ ມາຖາມດູທັ້ນແລ ເຂົາກໍໄຫວ້ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ຕົວຂ້າທັງຫລາຍກໍທໍ່ໄດ້ຍິນແກ່ຄົນທັງຫລາຍກ່າວສືບກັນມາດາຍ ຕົວຂ້າທັງຫລາຍກໍບໍ່ຮູ້ທີ່ເກີດທີ່ເປັນແຫ່ງຄຳອັນນີ້ສັງແລ ເມື່ອນັ້ນພະຍາກ່າວວ່າ ຄຳອັນຫາເຄົ້າຫາມູນບໍ່ໄດ້ສັນນີ້ ແຕ່ເຮົາໄດ້ສະເຫວີຍເມືອງທົວທີ່ນັ້ນ ເຮົາກໍປົງອາດຍາໄປປ່າວສອນສັ່ງ ຍັງຊາວບ້ານຊາວເມືອງທັງຫລາຍແລເດືອນລະເທື່ອວ່າຢ່າໃຫ້ຄົນທັງຫລາຍຈາຄຳອັນຫາເຄົ້າຫາມູນບໍ່ໄດ້ ເປັນຄຳເປົ່າດາຍສັນນີ້ຊູ່ເດືອນແທ້ດີຫລີແລ ເປັນສັງເຂົາຈາກັນສັນນີ້ຈານໍ ພະຍາກໍຊ້ຳໃຫ້ໄປປ່າວສັ່ງສອນຊາວບ້ານຊາວເມືອງທັງຫລາຍທຸກແຫ່ງວ່າ ຢ່າໃຫ້ຄົນທັງຫລາຍກ່າວຄຳອັນຫາເຄົ້າຫາມູນບໍ່ໄດ້ນັ້ນແລ ເມື່ອນັ້ນຄົນທັງຫລາຍກໍຍັງວ່າບໍ່ເຊົາທັ້ນແລ ເມື່ອນັ້ນພະຍາກໍໃຫ້ເອົາເຂົາຝູງນັ້ນໄປໃສ່ເຮືອນຄອກໄວ້ ເພື່ອເຂົາກ່າວຄຳອັນນັ້ນແລ ດ້ວຍຄຳວ່າດັ່ງນີ້ ເມື່ອໃດແລະຍັງຮູ້ເຫງົ້າເຄົ້າມູນຄຳອັນນີ້ຈິ່ງຈັກເອົາເຂົາອອກຈາກເຮືອນຂັງທີ່ນັ້ນພີ້ແລ ບໍ່ຮູ້ເຫງົ້າເຄົ້າມູນຄຳອັນນີ້ໄວ້ຊົ່ວຊີວິດແຫ່ງເຂົານັ້ນເທີ້ນວ່າອັນ ແລ້ວພະຍາກໍເລົ່າໃຫ້ຕີກອງຮ້ອງປ່າວ ທີ່ວວຽງທຸກແຫ່ງວ່າ ຢ່າກ່າວຄຳລ່າຍພາງ ຢ່າກ່າວຄຳອັນເປັນຣະຫັດລ້ອລັບ ຢ່າກ່າວຄຳບໍ່ມີເຄົ້າມີມູນນັ້ນເນີ ວ່າອັນທັ້ນແລ ເມື່ອນັ້ນຍັງມີມານະວະຜູ້ໜຶ່ງຈິ່ງຄະນຶງໃນໃຈແຫ່ງມັນວ່າດັ່ງນີ້ ຊາຕິກ້ອຍຄຳອັນເປັນບູຮານທັງມວນມານີ້ ບໍ່ມີເຄົ້າມີມູນແລຫາກຈັກມີເຣື້ອງມາຈາກັນສັນນີ້ ບໍ່ຫລອນຮ່າງຈັກມີຊະແລ ຮອຍວ່າຍັງເກີດມີໃນບ້ານໃນເມືອງອັນໜຶ່ງບໍ່ຢ່າຊະແລ ເມື່ອວ່າໄປ່ປາກົດຈັກເຍື່ອງ ຄົນອັນຢູ່ໃນເຮືອນຂັງນັ້ນຈັກໄດ້ຢູ່ຊົ່ວຊີວິດແຫ່ງເຂົາບໍ່ຢ່າຊະແລ ກູຄວນຕະເດີນໄປເກິງບ້ານເມືອງທັງມວນ ເພິ່ງໃຫ້ຮູ້ຕຳນານນິທານຄຳອັນວ່າ ບົວຢ່າຊ້ຳ ນ້ຳຢ່າໃຫ້ຂຸ່ນ ປາແລະງູຢ່າຍອດ ຂອດຢ່າໃຫ້ຕາຍ ໄມ້ຄ້ອນຢ່າຫັກ ຝັ່ງນ້ຳຢ່າເພພັງເທີ້ນ ເມື່ອນັ້ນມານະວະຜູ້ນັ້ນ ມັນຄະນຶງໃນໃຈມັນສັນນີ້ ເປັນອັນແໜ້ນອັນແຈບແກ່ໃຈແລ້ວ ມັນກໍຕະເດີນໄປຮອດຫລາຍເມືອງນັກ ຄຳເມືອງນັ້ນ ກໍບໍ່ມີປາກົດສັກແຫ່ງທັ້ນແລ ທີ່ນັ້ນມັນກໍຕະເດີນໄປເກິງເມືອງຕັກກະສີລານະຄອນທັ້ນແລ ມັນກໍເຂົ້າໄປຢູ່ກະທຳວັດປະຕິບັດແກ່ທິສາປາໂມກຂະອາຈານແຫ່ງມັນ ແລະ ທີ່ຈັກກ່າວຕຳນານ ອັນມານະວະຜູ້ຢາກຮູ້ນິທານອັນບົວຢ່າຊ້ຳ ນ້ຳຢ່າຂຸ່ນ ປາແລະງູຢ່າຄອດ ຂອດຢ່າຕາຍ ໄມ້ຄ້ອນຢ່າຫັກ ຝັ່ງນ້ຳຢ່າເພພັງນັ້ນ ມານະວະຜູ້ນັ້ນ ເມື່ອມັນໄປເກິງທິສາປາໂມກຂະອາຈານແລ້ວ ທໍ່ປາກົດສາດຕະສິນອັນອື່ນ ຄຳອັນນັ້ນກໍບໍ່ປາກົດແກ່ມັນສັກອັນ ມານະວະຜູ້ນັ້ນ ຈິ່ງຕະເດີນໄປເກິງບ້ານໃຫຍ່ເມືອງຫລວງທັງຫລາຍ ເມື່ອກິດຈະຄຳອັນນັ້ນບໍ່ປາກົດແຫ່ງມັນ ມັນຕະເດີນໄປຍັງເມືອງອັນໜຶ່ງ ຊື່ວ່າໂກລັນທະ

ນະຄອນ ຍັງມີພາມຜູ້ໜຶ່ງ ຊື່ວ່າສາມັນທະພາມ ຈົບໄຕເພດທັງສາມ ໄດ້ເປັນປະໂຣຫິດແກ່ພະຍາເມືອງນັ້ນແລ ມານະວະຜູ້ນັ້ນຈຶ່ງເຂົ້າໄປອຸບປະກາກປາໄສໄປມາກັບປຸໂຣຫິດຜູ້ນັ້ນຊູ່ປະການ ເມື່ອນັ້ນສາມັນທະພາມປະໂຣຫິດຈຶ່ງຖາມວ່າ ດູລາມານະວະ ທ່ານລຸກແຕ່ປະເທດບ້ານເມືອງໃດມາອາໄສເຊິ່ງກູເພື່ອຈັກໄດ້ສາຕະສິນເບື່ອງໃດ ແລະຢາກໄດ້ຄຸນແຫ່ງກູເບື່ອງໃດນັ້ນຈາແລ ມາອຸບປະກາກກູເພື່ອປະໂຍຊະນະອັນໃດນີ້ຈາ ມານະວະກ່າວວ່າ ຂ້າແກ່ປະໂຣຫິດຕະພາມເຈົ້າ ຕົນຈົບເພດທັງມວນ ຂ້າມາແຕ່ເມືອງມິດຕະທຳມະຣາດພຸ້ນ ເພື່ອວ່າຈັກມາອຸບປະກາກເຈົ້າກູ ເພື່ອຈັກໄຄ່ໃຫ້ຮູ້ກິດຈະຄຳອັນເກີດແຫ່ງຕົວຂ້າທັງຫລາຍ ດ້ວຍຄຳວ່າດັ່ງນີ້ ບົວຢ່າຊ້ຳ ນ້ຳຢ່າຂຸ່ນ ປາແລະງູຢ່າຄອດ ຂອດຢ່າຕາຍ ໄມ້ຄ້ອນຢ່າຫັກ ຝັ່ງນ້ຳຢ່າເພພັງວ່າດັ່ງນີ້ແລ ອັນວ່າກິດຈະເຄົ້າເຫງົ້າກົກທີ່ເກີດທີ່ເປັນແຫ່ງຄຳອັນນີ້ ຄົນທັງຫລາຍຝູງຢູ່ໃນເມືອງຕູຂ້ານັ້ນ ບໍ່ມີຮູ້ສັກຄົນແລ ຂ້າມາອຸບປະກາກເຈົ້າກູນີ້ ເພື່ອວ່າໄຄ່ຮູ້ກິດຈະອຸບປັດຕິເຫດອັນບັງເກີດແຫ່ງຄຳອັນນັ້ນແລ ຂໍເຈົ້າກູຈົ່ງໄຂອະທິກອນແຫ່ງຄຳອັນນັ້ນໃຫ້ແຈ້ງແກ່ຂ້າແດ່ເທີ້ນ ວ່າດັ່ງນີ້ ເມື່ອນັ້ນສາມັນທະປະໂຣຫິດກ່າວວ່າ ດູລາມານະວະ ກິດຈະຄຳອັນນີ້ບໍ່ມີໃນເມືອງໂກລັນທະນະຄອນແຫ່ງເຮົານີ້ດາຍ ທີ່ຍັງມີໃນເມືອງໂກລັນທະນະຄອນພຸ້ນດາຍ ອຸບປັດຕິເຫດອັນຈັກເກີດມີດັ່ງນີ້ ຍັງມີເມືອງອັນໜຶ່ງ ຊື່ວ່າເວລັນຍະນະຄອນນັ້ນແລ ພະຍາຕົນສະເຫວີຍເມືອງນັ້ນ ກໍຊື່ວ່າເວລັນຍະຣາດແລ ພະຍາຕົນນັ້ນມີລູກຊາຍຜູ້ໜຶ່ງ ຊື່ວ່າ ສາລິກະທາຕະຣາຊະກຸມານ ກໍໄປຮຽນສາດຕະສິນໃນເມືອງຕັກກະສີລານະຄອນ ຈົບເພດທັງສາມແລ້ວກໍຄືນມາຮອດເມືອງໂກລັນທະນະຄອນທັ້ນແລ ສ່ວນວ່າສາລິກະທາຕະກຸມານ ກໍໄປສະໜຸກກັບດ້ວຍແມ່ຄຳຮາງຜູ້ໜຶ່ງ ມີຮູບອັນງາມໃນເມືອງນັ້ນ ຫາຜູ້ຈັກປຽບທຽບບໍ່ໄດ້ແລ ຜູ້ຊາຍຈັກໄປສະໜຸກກັບແມ່ຄຳຮາງຜູ້ນັ້ນ ກໍໃຫ້ຄຳ ແລະຄືນແລະພັນກໍມີແລ ພະຍາໂກລັນທະຣາດກໍຮູ້ຂ່າວວ່າແມ່ຄຳຮາງຜູ້ນັ້ນ ມີຮູບໂສມງາມນັກດັ່ງນັ້ນ ພະຍາກໍໃຫ້ຫາມາຍັງນາງແມ່ຄຳຮາງຜູ້ນັ້ນ ມາສະໜຸກກັບດ້ວຍວັນດ້ວຍຄືນແລ ແຮກແຕ່ນັ້ນໄປໜ້າ ໃຜກໍບໍ່ໄດ້ໄປສະໜຸກຍິນດີກັບດ້ວຍແມ່ຄຳຮາງຜູ້ນັ້ນໄດ້ແລ ເມື່ອນັ້ນສາລິກະທາຕະກຸມານ ໄປຮຽນສາດຕະສິນຄືນມາຮອດແມ່ຄຳຮາງຜູ້ນັ້ນ ກໍມີໃຈປະຕິພັດກັບດ້ວຍແມ່ຄຳຮາງຜູ້ນັ້ນ ກໍສວາດທິຍາຍ ມົນແຫ່ງຕົນໄປກຶກຕ້ອງເນື້ອຕົນແມ່ຄຳຮາງຜູ້ນັ້ນທັ້ນແລ ແຕ່ນັ້ນໄປພາຍໜ້າ ພະຍາໂກລັນທະໄປສະໜຸກກັບດ້ວຍແມ່ຄຳຮາງຜູ້ນັ້ນ ຕົນແຫ່ງພະຍາກໍເປັນອັນສະບັ້ນສັ່ນສາຍມາກນັກ ແມ່ນວ່າແມ່ຄຳຮາງກໍດີ ກໍສັ່ນສາຍມາກນັກແລ ທີ່ນັ້ນພະຍາກໍຈາລະຈາກັບດ້ວຍແມ່ຄຳຮາງວ່າ ດູລານາງອັນນີ້ດູຫລາກນັກແລ ຊູ່ມື້ຊູ່ຄືນນັ້ນກູມາສະໜຸກກັບດ້ວຍນາງບໍ່ເປັນສັນນີ້ແລ ນາງແມ່ຄຳຮາງກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ຊູ່ວັນຊູ່ຄືນ ກໍບໍ່ເປັນສັນນີ້ແທ້ ກໍຂ້າແລ ເປັນອັນຫລາກນັກແລ ມະຫາຣາຊະເຈົ້າຈັກໃຫ້ຜູ້ຂ້າກະທຳສັນໃດນີ້ຈາ ພະຍາກ່າວວ່າ ນາງຈົ່ງເມືອອາບນ້ຳຊຳຣະເນື້ອຕົນແລ້ວຈຶ່ງພັດມາເທີ້ນ ເມື່ອນັ້ນແມ່ຄຳຮາງກໍເມືອຊຳຣະເນື້ອຕົນໃນເຮືອນແຫ່ງມັນພຸ້ນແລ້ວ ກໍເສບກັບດ້ວຍສາລິກະທາຕະກຸມານຜູ້ນັ້ນໃນເຮືອນມັນກ່ອນແລ ສ່ວນວ່າແມ່ຄຳຮາງຜູ້ນັ້ນ ບໍ່ຖາມຫາສິນຈ້າງ ນຳສາລິກະທາຕະກຸມານຜູ້ນັ້ນ ເພື່ອວ່າຈັກເອົາສາລິກະທາຕະກຸມານເປັນຜົວແຫ່ງມັນແລ ແຕ່ກ່ອນຜູ້ໃດໄປສະໜຸກກັບດ້ວຍແມ່ຄຳຮາງຜູ້ນັ້ນ ມັນທໍ່ໃຫ້ກຶກນົມກ້ຳຂວາສິ່ງດຽວ ກ້ຳຊ້າຍກໍປົກໄວ້ບໍ່ໃຫ້ກຶກສັກຄົນແລ ໃນເມື່ອສາລິກະທາຕະກຸມານໄປສະໜຸກກັບດ້ວຍແມ່ຄຳຮາງຜູ້ນັ້ນ ມັນກໍສວາດທິຍາຍມົນແຫ່ງມັນອັນຊື່ວ່າ ກາມະ

ສາດຕະສິນນັ້ນແລ້ວ ກໍຈຶ່ງນອນກັບແມ່ຄຳຮາງຜູ້ນັ້ນແລ ແມ່ຄຳຮາງກໍເກີງເຊິ່ງອັນສະໜຸກຍິນດີມາກນັກ ກໍລວດລືມສະຕິເສັຽກໍບໍ່ປົກນິມກ້ຳຊ້າຍໄວ້ຫັ້ນແລ ເມື່ອນັ້ນສາລິກະທາຕະກຸມານກໍກຶກນິມສອງກ້ຳ ດັ່ງນັ້ນຕົນນາງກໍເຮັ່ງຊ້ຳກະສັນຍິນດີກວ່າເກົ່າ ນາງກໍລວດສະຫຍົບເປັນໄປດັ່ງຕາຍນັ້ນແລ ສາລິກະທາຕະກຸມານ ແລະ ແມ່ຄຳຮາງສະໜຸກກັບດ້ວຍກັນຢູ່ດັ່ງນັ້ນ ຍາມນັ້ນພະຍາກໍຄອງຫາແມ່ຄຳຮາງຢູ່ບໍ່ມາດັ່ງນັ້ນ ພະຍາກໍໃຫ້ຄົນໄປທັນມາຍັງແມ່ຄຳຮາງຜູ້ນັ້ນ ເມື່ອນັ້ນສາລິກະທາຕະກຸມານ ເຫັນຄົນໃຊ້ມາກໍລີ້ລັບອັບຢູ່ທີ່ໜຶ່ງແລ້ວບໍ່ໃຫ້ຄົນໃຊ້ພະຍາເຫັນແລ ດັ່ງຄົນໃຊ້ເຫັນແມ່ຄຳຮາງຜູ້ນັ້ນລືມສະຕິເນື້ອຕົນເສັຽ ແລະນອນຢູ່ດັ່ງນັ້ນ ຄົນໃຊ້ກໍເກີງເຊິ່ງອັນກະສັນກັບດ້ວຍນາງ ກໍລວດສະຫຍົບໍໄປນອນຢູ່ສັນດອນນາງນັ້ນແລ ພະຍາກໍຄອງຫາຄົນໃຊ້ຢູ່ບໍ່ມາດັ່ງນັ້ນ ພະຍາເລົ່າໃຊ້ປະໂຣຫິດຜູ້ໜຶ່ງໄປເລົ່າແລ ປະໂຣຫິດຜູ້ນັ້ນໄປແລ້ວກໍເຫັນເປັນອັນຣາຄະແຫ່ງນາງຜູ້ນັ້ນ ປະໂຣຫິດກໍກະສັນນັກ ກໍເລົ່າໄປເສບກັບດ້ວຍນາງ ແລ້ວກໍລວດສະຫລຶບໄປສັນດອນກັນນັ້ນແລ ເມື່ອນັ້ນນາງແມ່ຄຳຮາງໄດ້ສະຕິແລ້ວ ກໍລຸກນັ່ງຢູ່ ນາງກໍເຫັນຂາສອງຄົນຄືອາມາດ ແລະ ປະໂຣຫິດມາສະຫລຶບຢູ່ສັນນັ້ນ ນາງແມ່ຄຳຮາງກໍເມືອບອກແກ່ພະຍາ ພະຍາກໍໃຫ້ເອົາຂາສອງຄົນນັ້ນໃສ່ເຮືອນຄອກຂັງໄວ້ຫັ້ນແລ ເມື່ອນັ້ນພະຍາຈັກໄຄ່ສະໜຸກກັບດ້ວຍແມ່ຄຳຮາງ ເລົ່າແລນາງກໍບໍ່ໃຫ້ພະຍາສະໜຸກດ້ວຍງ່າຍແລ ເພື່ອວ່ານາງຈັກຕິອຸບບາຍເອົາສາລິກະທາຕະກຸມານມາເປັນຜົວນາງ ນາງຈຶ່ງກ່າວເຊິ່ງພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ຈັກສະໜຸກກັບດ້ວຍຜູ້ຂ້າໃນປາສາດທີ່ນີ້ ຂ້າກໍ່ບໍ່ອາດຈັກໃຫ້ສະໜຸກໄດ້ແລ ເພື່ອວ່າມະຫາຣາຊະເຈົ້າ ຈັກມັກໄຄ່ສະໜຸກກັບດ້ວຍຜູ້ຂ້າແທ້ຂໍມະຫາຣາຊະເຈົ້າຈຶ່ງໄປສະໜຸກກັບດ້ວຍຂ້າ ກາງສາລາຂ້າງສະດອກບົວມັງຄະລະແຫ່ງມະຫາຣາຊະເຈົ້າພຸ້ນເທີ້ນ ທີ່ນັ້ນພະຍາກໍກະສັນມາກນັກບໍ່ອາດຈັກອົດໄດ້ ຈຶ່ງເອົານາງໄປສະໜຸກໃນສາລາແທບຂ້າງສະດອກບົວ ອັນເປັນມັງຄະລະແຫ່ງຕົນຫັ້ນແລ ທີ່ນັ້ນນາງກໍໃຫ້ພະຍາກຶກນົມກ້ຳດອວ ປົກກ້ຳຊ້າຍໄວ້ຫັ້ນແລ ຍາມນັ້ນພະຍາມັກໄຄ່ກຶກກະນາ* ທັງສອງເຕົ້າ ພະຍາກໍກ່າວວ່າ ດູລານາງ ແຮກແຕ່ເຮົາເອົານາງມາສະໜຸກນີ້ເຮົາກໍກຶກກະນາເບື້ອງດອວດອກດາຍ ນາງຈຶ່ງໃຫ້ແກ່ເຮົາທັງສອງເຕົ້າເທີ້ນ ທີ່ນັ້ນນາງແມ່ຄຳຮາງກໍກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ເພື່ອວ່າມະຫາຣາຊະເຈົ້າ ຈັກມັກໄຄ່ກຶກນົມທັງສອງເຕົ້າແທ້ດັ່ງນັ້ນ ສ່ວນດັ່ງມະຫາຣາຊະເຈົ້າ ກໍຈັກໄດ້ສະໜຸກກັບດ້ວຍຜູ້ຂ້າທິດດອວນີ້ແລ ເມື່ອນັ້ນພະຍາກໍບັງເກີດໃຈຍິນດີເປັນອັນກະສັນຍິ່ງນັກ ຈຶ່ງຄະນຶງໃຈວ່າ ອາດຕະມາຈັກພາງແມ່ຄຳຮາງຜູ້ນີ້ກ່ອນແລ ຈຶ່ງກ່າວວ່າ ດູລານາງໃນວັນນີ້ ກູຈັກເສບທີ່ດອວນີ້ ກໍຄຳແລ້ວເທີ້ນ ເມື່ອນັ້ນນາງແມ່ຄຳຮາງ ກໍໃຫ້ພະຍາກຶກນົມທັງສອງເຕົ້າແລ ທີ່ນັ້ນພະຍາກໍເປັນອັນລືມສະຕິແຫ່ງຕົນ ລະຣາຊະເພດເສັຽບັດດອວເປັນດັ່ງຕາຍນັ້ນ ຜ້ານຸ່ງທະລົງກໍຫລູດຈາກເນື້ອຕົນເສັຽຫັ້ນແລ ທີ່ນັ້ນແມ່ຄຳຮາງເຫັນແກ້ວຂວັນພະຍານັ້ນ ນາງກໍເອົາແກ້ວລູກນັ້ນໜີເມືອສູ່ເຮືອນແຫ່ງຕົນນັ້ນແລ້ວ ກໍໃຫ້ແກ້ວລູກນັ້ນແກ່ສາລິກະທາຕະກຸມານ ອັນເປັນຊູ້ແຫ່ງມັນນັ້ນແລ້ວ ມັນຈຶ່ງຄືນມາສູ່ພະຍາທີ່ເກົ່າຫັ້ນແລ້ວກໍຢູ່ເປັນປະດຸດຈະດັ່ງບໍ່ຮູ້ສັງສີກອັນນັ້ນແລ ເມື່ອນັ້ນພະຍາໄດ້ສະຕິດີແລ້ວ ນາງກໍແປງຕົກົນລະຫົນມາຍາ ຕິຕົ່ນດ້ວຍຄຳວ່າ ຂ້າແກ່ມະຫາຣາຊະເຈົ້າທີ່ນີ້ມະຫາຣາຊະເຈົ້າກະທຳອັນໃຫ້ຜູ້ຂ້າສັງຊີວິດເສັຽແທ້ລື ທີ່ນັ້ນພະຍາບໍ່ຮູ້ຈັກເຫດອັນມັນກະທຳມາຍາກົນລະຫົນກ່າວສັນນັ້ນ ພະຍາກໍກ່າວວ່າ ດູລານາງເຮີຍ ເຮົາບໍ່ໄດ້ກະທຳໃຫ້ນາງຈິບຫາຍສັງສີກອັນດາຍ

ເຮົາກໍເມື່ອຍຫລັບຢູ່ດອກດາຍ ຄຳສັ່ນນີ້ນາງຢ່າໄດ້ກ່າວສຳແດງແກ່ບຸກຄະລະຜູ້ໃດເທີ້ນ ອັນວ່າ
ແກ້ວຂວັນເຮົານັ້ນ ນາງໄດ້ເອົາໄວ້ເຮົາກໍໃຫ້ແກ່ນາງແລ ອັນແກ້ວລູກນີ້ ຄັນວ່າຢູ່ນຳບຸກຄະລະຜູ້
ໃດກໍດີ ແມ່ນວ່າຜູ້ຍິງກໍດີ ຜູ້ຊາຍກໍດີ ກໍຈັກໄດ້ເປັນພະຍາແລ ອະທິບາຍພະຍາວ່າ ກູໃຫ້ແກ້ວລູກ
ນີ້ແກ່ມັນນີ້ມັນກໍຈັກໄດ້ເປັນເມັຽແຫ່ງກູແລ ພະຍາຄະນິງດັ່ງນີ້ແລ້ວ ພະຍາຈຶ່ງກ່າວວ່າ ນາງເອົາ
ແກ້ວລູກນີ້ໄວ້ເທີ້ນກູກຶກໃຈເຮົານັກແລ ແມ່ຄຳຣາງຜູ້ນັ້ນ ຄັນວ່າໄດ້ແກ້ວຂວັນພະຍາ ກໍເອົາໄປ
ໃຫ້ແກ່ສາລິກະທາຕະ ຊູ້ແຫ່ງມັນທັ້ນແລ ແຮກແຕ່ພະຍາເສັຽແກ້ວຂວັນພະຍາກໍລວດເປັນອັນຫລີງງ
ເສັຽສະຕິ ອັນເປັນເພດພະຍາເສັຽທັ້ນແລ ແມ່ຄຳຣາງເຫັນພະຍາເສັຽສະຕິດັ່ງນັ້ນ ມັນຈຶ່ງຕິ
ອຸບບາຍໃຫ້ສາລິກະທາຕະກຸມານ ຜູ້ເປັນຊູ້ມັນນັ້ນໃຫ້ໄດ້ເປັນຜົວມັນບໍ່ໃຫ້ພະຍາຮູ້ ມັນຈຶ່ງຈາລະ
ຈາກັບດອມສາລິກະທາຕະດັ່ງນີ້ ດູລາເຈົ້າຈິ່ງໄປຢູ່ໃນກະພູ່ມດອກບົວພະຍາ ດອກໃຫຍ່ທີ່ກິງຈັກໃນ
ສະມັງຄະລະແຫ່ງພະຍາຍາມຫ່ອງວັນນັ້ນແລ້ວ ເຈົ້າກູຈິ່ງກວັດແກວ່ງດອກບົວນັ້ນໃຫ້ພັດເປັນດັ່ງພະ
ມ່ອນນັ້ນເທີ້ນວ່າດັ່ງນີ້ ເມື່ອນັ້ນສາລິກະທາຕະ ກໍກະທຳຕາມຄຳແມ່ຄຳຣາງຫາກບອກນັ້ນ ຊູ່ອັນແລ
ເມື່ອວັນຫ່ອງນັ້ນ ພະຍາກໍເຫັນດອກບົວດອກນັ້ນພັດຢູ່ເຖິງທ້າວັນທີກວັນ ເປັນອັນອັດສະຈັນມາກ
ນັກ ພະຍາຈຶ່ງຈາລະຈາກັບເສນາອາມາດທັງຫລາຍວ່າ ພູ່ມດອກບົວແຫ່ງເຮົາບໍ່ທ່ອນພັດສັກເທື່ອ
ແຕ່ໃນກາລະເມື່ອກ່ອນດາຍ ບັດນີ້ແລະມາພັດຢູ່ສັ່ນນີ້ຈາ ເມື່ອນັ້ນເສນາອາມາດທັງຫລາຍກ່າວວ່າ
ຂ້າແກ່ມະຫາຣາຊະເຈົ້າ ດອກບົວດອກນີ້ຫາວິນຍານບໍ່ໄດ້ ພອຍເລົ່າມາພັດສັ່ນນີ້ ກໍຮອກວ່າເປັນ
ເຂັນ ບໍ່ເປັນມັງຄະລະແກ່ມະຫາຣາຊະເຈົ້າສັງແລ ເມື່ອນັ້ນພະຍາກ່າວວ່າ ສະອັນນັ້ນກໍເປັນເຂັດ
ເພື່ອດອກບົວດອກດວງນັ້ນແລ ເຮົາຈັກກະທຳສັ່ນໃດນີ້ຈາ ເມື່ອນັ້ນເສນາກ່າວວ່າ ຜິວ່າເຫດອັນບໍ່
ດີນີ້ແລເກີດມີ ກໍຄວນມ້າງສະອັນນັ້ນໃຫ້ນ້ຳແຫ້ງເສັຽ ໃຫ້ດອກບົວອັນນີ້ຫ່ຽວດ້ວຍຣັດສະໝີ
ພະອາທິດນັ້ນເສັຽດີແລ ທີ່ນັ້ນພະຍາກ່າວວ່າ ສະອັນນັ້ນປະກອບດ້ວຍນ້ຳໃສບໍລະສຸດເຢັນນັກ
ຝັ່ງກໍຮາບຮຽງພຽງງາມນັກ ປາຕົວໃຫຍ່ຕົວນ້ອຍກໍມີມາກນັກແລ ງູຕົວໃຫຍ່ຕົວນ້ອຍກໍມີມາກນັກ
ດາຍ ເມື່ອເຮົາແລະມ້າງສະອັນນີ້ແທ້ດັ່ງນັ້ນ ປາ ແລະງູທັງຫລາຍກໍຈັກຕາຍມາກນັກແລ ປະການ
ໜຶ່ງ ງູຕົວໃຫຍ່ຕົວນ້ອຍກໍຈັກແລ່ນຂຶ້ນເມືອເຮືອນຄົນທັງຫລາຍມາກນັກແລ ເມື່ອນັ້ນເສນາທັງ
ຫລາຍກ່າວວ່າ ຜິວ່າມະຫາຣາຊະເຈົ້າມີຄຳຕິຄະນິງສັ່ນນີ້ກໍຊອບແລ ທີ່ວ່າມະຫາຣາຊະເຈົ້າຈິ່ງໃຫ້
ຕີກອງປ່າວຊາວບ້ານຊາວເມືອງທັງຫລາຍ ມາພ້ອມກັນກືໄມ້ຄ້ອນ ອັນໃຫຍ່ອັນນ້ອຍຢູ່ກ້າຕີງນັ້ນ
ລາງຜ່ອງໃຫ້ເອົາມ່າງ ແລະນາມ ຊ້ອນ ແລະແຫ ມາທ້າງແວດລ້ອມສະນັ້ນ ແລ້ວກໍມ້າງສະມັງ
ຄະລະເອົາປາ ແລະດອກບົວນັ້ນເທີ້ນ ທີ່ນັ້ນພະຍາກໍໃຫ້ຄົນໄປປ່າວຊາວບ້ານ ຊາວເມືອງທັງ
ຫລາຍຊູ່ຄົນ ຕາມຄຳພະຍາແລ ເສນາກ່າວສັ່ນນັ້ນ ເຖິງເມື່ອວັນຈັກມ້າງສະອັນນັ້ນ ຄົນທັງຫລາຍ
ຊາວບ້ານຊາວເມືອງທັງຫລາຍ ເຂົາກໍກືເອົາເຄື່ອງຂ້າມາທຸກຄົນ ດັ່ງພະຍາຫາກປ່າວນັ້ນຊູ່ຄົນມີ
ແລ ທີ່ນັ້ນ ແມ່ຄຳຣາງເຫັນໂອກາດ ອັນຈັກມ້າງສະອັນນັ້ນເສັຽ ມັນຈຶ່ງໄຫວ້ພະຍາວ່າ ຂ້າແກ່ມະ
ຫາຣາຊະເຈົ້າ ຄັນວ່າມ້າງສະດອກບົວມັງຄະລະແຫ່ງມະຫາຣາຊະເຈົ້າເສັຽ ຕາມຄຳເສນາກ່າວ
ນັ້ນແທ້ ບ້ານເມືອງແຫ່ງມະຫາຣາຊະເຈົ້ານີ້ ກໍຈັກເກີດເປັນກິຍຸກກິນລະທົນມາກນັກດາຍ ເຫດວ່າ
ສະອັນນີ້ຫາກເປັນສະມັງຄະລະແຫ່ງມະຫາຣາຊະເຈົ້າ ແຕ່ບຸບເພມາດາຍ ສະອັນນີ້ມີນ້ຳກໍໃສ
ເຢັນບໍລະສຸດນັກ ມີຝັ່ງທ່າກໍຮາບຮຽງພຽງງາມນັກແລ ເດັຽລະດາດເຕັມໄປດ້ວຍດອກບົວທັງຫຼາຍ

ກິງາມນັກແລ ມະຫາຣາຊະເຈົ້າກໍຟັງຄໍາເສນາທັງຫລາຍ ແລະມາຣິດສະອັນນີ້ເສັຽ ດັ່ງນີ້ແທ້ ດອກບົວກໍຈັກຊໍ້າ ນໍ້າກໍຈັກຂຸ່ນ ປາແລະງູກໍຈັກຄຽດ ຂຽດກໍຈັກຕາຍ ໄມ້ຄ້ອນກໍຈັກຫັກ ຝັ່ງນໍ້າກໍຈັກເພພັງເສັຽແລ ພີມະຫາຣາຊະເຈົ້າ ແລະ ເສນາອາມາດທັງຫລາຍ ໄດ່ຈັກຮູ້ເຫດເປັນມັງຄະລະແຫ່ງດອກບົວນັ້ນແທ້ ຂ້າຈັກກ່າວຍັງເຫດອັນນັ້ນ ໃຫ້ປາກົດແກ່ມະຫາຣາຊະເຈົ້າ ແລະ ເສນາອາມາດທັງຫລາຍຮູ້ແລວ່າດັ່ງນີ້ ເມື່ອນັ້ນພະຍາກ່າວວ່າ ແຕ່ກ່ອນນັ້ນບໍ່ທ່ອນມີສິ່ງນີ້ສັກເທື່ອແລ ເສນາທັງຫລາຍຈຶ່ງຈາກັນວ່າສະອັນນີ້ບໍ່ເປັນມັງຄະລະສັນນີ້ກ່າວວ່າຈັກມ້າງຣິດເສັຽດາຍ ເພື່ອວ່າໃຫ້ຮູ້ເຫດໃນດອກບົວນັ້ນເສັຽແລ ພີວ່ານາງແລະຮູ້ເຫດອັນນັ້ນແທ້ ຈຶ່ງສໍາແດງຍັງເຫດອັນນັ້ນແກ່ຕູທັງຫລາຍເທີ້ນ ຕູບໍ່ຮູ້ກິດຈະອັນນັ້ນແຈ້ງຕູຈັກມ້າງເສັຽແທ້ແລ້ວວ່າດັ່ງນັ້ນ ນາງແມ່ຄໍາຣາງຈຶ່ງອຸບາຍວ່າ ຂ້າແກ່ມະຫາຣາຊະເຈົ້າ ຊາຕິດອກບົວມັງຄະລະທັງຫລາຍນີ້ ເປັນອັນຫມັ້ນຄືງບໍ່ຮູ້ຍົກຮູ້ຍ້າຍໄດ້ ເປັນຕົ້ນວ່າບານຊ້ອງຂຶ້ນສິ່ງດຽວແລ ສວນອຸດທິຍານກໍດີ ສະພັງວັງໂບກຂະຣະນີທັງຫຼາຍກໍດີ ບໍ່ທ່ອນເກີດເປັນອັດສະຈັນສັນນີ້ ຈັກວ່າບໍ່ເປັນມັງຄະລະນັ້ນບໍ່ໄດ້ດາຍ ສ່ວນວ່າດອກບົວ ອັນມີໃນສະມັງຄະລະມະຫາຣາຊະເຈົ້າຫວັ່ນໄຫວໄປມາດັ່ງພູມອນສັນນີ້ ເຫດສັນນີ້ກໍຈັກເປັນປະໂຍຊະນະແກ່ມະຫາຣາຊະເຈົ້າອັນໃດອັນຫນຶ່ງບໍ່ຢ່າຊະແລ ໃນກະພູ່ມຈູມດອກບົວນັ້ນ ຮອຍວ່າມີບຸກຄະລະຜູ້ໃດຜູ້ຫນຶ່ງອັນມີບຸນຍະສົມພານມີເຕຊະອານຸພາບ ປາກົດດ້ວຍສາດຕະສິນມາກນັກບໍ່ຢ່າຊະແລ ເພື່ອວ່າຈັກສໍາແດງສາດຕະສິນແຫ່ງຕົນ ເພື່ອວ່າຈັກມາເປັນຜູ້ອຸບປະຖາກ ມະຫາຣາຊະເຈົ້າບໍ່ຢ່າຊະແລ ພະຍາໄດ້ຍິນແມ່ຄໍາຣາງກ່າວໂດຍປະການດັ່ງນັ້ນ ກໍມີຄໍາຍິນດີມາກນັກ ແລ້ວຈຶ່ງກ່າວວ່າດູລານາງ ພີວ່າມີດັ່ງຄໍານາງວ່ານັ້ນແທ້ ເຮົາຈັກໃຫ້ຍົດສັກສໍາປັດຕິມາກນັກແກ່ບຸກຄະລະຜູ້ນັ້ນແລທໍວ່າຈັກໄດ່ໃຫ້ຮູ້ເຫດອັນນັ້ນດາຍດ້ວຍປະການສັນໃດຈາ ເມື່ອນັ້ນແມ່ຄໍາຣາງກ່າວວ່າຂ້າແກ່ມະຫາຣາຊະເຈົ້າ ພີວ່າມະຫາຣາຊະເຈົ້າໄດ່ຮູ້ເຫດສັນນັ້ນ ໂດຍອັນພະລັນແທ້ດັ່ງນັ້ນ ຄວນມະຫາຣາຊະເຈົ້າໃຫ້ຕີຄ້ອງປ່າວເສັຽ ຢ່າໃຫ້ຄົນທັງຫລາຍມ້າງເພສະອັນນັ້ນແລ ເມື່ອດັ່ງນັ້ນ ເທວະດາທັງຫລາຍສີ່ຕົນອັນຮັກສາສີ່ແຈສະອັນນັ້ນ ກໍຈັກຍິນດີມາກນັກແລ ພະຍາກໍຮີບໃຫ້ປ່າວແທ້ຫັ້ນແລ ໃນຂະນະບັດນັ້ນ ສາລິກະທາຕະຣາຊະກຸມານ ກໍເລີກເພີກເສັຽຍັງກະພູ່ມດອກບົວດອກນັ້ນແລ້ວ ກໍອອກມາຈາກສະອັນນັ້ນດ້ວຍອານຸພາບສາດຕະສິນແຫ່ງຕົນແລ້ວກໍໄປກົ້ມກາບໄຫວ້ພະຍາຫັ້ນແລ ເມື່ອນັ້ນພະຍາເຫັນແລ້ວກໍອັດສະຈັນມາກນັກ ເຫດວ່າບໍ່ທ່ອນມີໃນກາລະເມື່ອກ່ອນສັກເທື່ອແລ ທີ່ນີ້ພອຍເລົ່າເກີດມາສັນນີ້ ຮອຍວ່າບຸກຄະລະຜູ້ນີ້ ມີບຸນຍະສົມພານມາກນັກຊະແລ ພະຍາກໍເກີງເຊິ່ງອັນຍິນດີມາກນັກແລ ເປັນດັ່ງລູກພັດພໍ່ແມ່ເຫິງນານແລ້ວ ຈຶ່ງມາຈອບກັນນັ້ນແລ ພະຍາກໍໃຫ້ປະດັບປະດາເນື້ອຕົນສາລິກະທາຕະຣາຊະກຸມານແລ້ວ ກໍໃຫ້ນັ່ງຢູ່ໃນທີ່ອັນຄວນ ແລ້ວພະຍາຈຶ່ງຖາມວ່າ ດູລາມານະວະ ທ່ານນີ້ມີຊື່ດັ່ງລືຈາ ເປັນລູກຫລານບຸກຄະລະຜູ້ໃດ ລຸກແຕ່ປະເທດເຂດບ້ານເມືອງໃດມານັ້ນຈາ. ທີ່ນັ້ນສາລິກະທາຕະກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ຂ້ານີ້ຊື່ວ່າ ສາລິກະທາຕະເປັນລູກພະຍາເວລັນຍະນະຄອນ ຂ້າກໍຍິນດີເຊິ່ງບ້ານເມືອງມະຫາຣາຊະເຈົ້າ ຈຶ່ງຕະເດີນມາແລພະຍາຖາມວ່າ ທ່ານເປັນລູກພະຍາເວລັນຍະນະຄອນນັ້ນ ທ່ານເດີນມາເມືອງເຮົາ ມີດ້ວຍປະໂຍຊະນະອັນໃດຈາ ສາລິກະທາຕະກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ພະຍາເຈົ້າຕົນພໍ່ຂ້ານັ້ນ ມີລູກຫລານຫລາຍຄົນນັກ ຂ້ານີ້ເປັນນ້ອງຫລ້າທັງຫລາຍ ພີ່ຊາຍແຫ່ງຂ້າທັງຫລາຍຝູງນັ້ນ ພະຍາເຈົ້າ

ຕົນພໍ່ກໍເອົາເມັຽໃຫ້ກູ່ຄົນແລ ສ່ວນວ່າຕົນຂ້ານີ້ໄປຮຽນສາດຕະສິນໃນເມືອງຕັກກະສິລານະຄອນ ແລ້ວຄືນມາຮອດເມືອງຕົນ ພະຍາເວລັມຍະເຈົ້າຕົນພໍ່ກໍເອົາເມັຽໃຫ້ແກ່ຂ້າ ຂ້າກໍບໍ່ເພິງໃຈ ຂ້າໄດ້ຍິນຂ່າວສານວ່ານາງແມ່ຄໍາຮາງຜູ້ໜຶ່ງ ມີຮູບໂສມຕະໂນມພັນອັນນະອັນງາມນັກ ວ່າມີໃນບ້ານເມືອງມະຫາຣາຊະເຈົ້ານີ້ ຜູ້ຂ້າຈຶ່ງຕະເດີນມາ ເພື່ອວ່າມາຂໍອາສາຕາງມະຫາຣາຊະເຈົ້າ ເພື່ອວ່າຈັກຂໍເອົານາງແມ່ຄໍາຮາງຜູ້ນັ້ນດອມມະຫາຣາຊະເຈົ້າກໍຂ້າແລ ຂໍມະຫາຣາຊະເຈົ້າ ຈົ່ງໃຫ້ແມ່ຄໍາຮາງຜູ້ນັ້ນແກ່ຂ້າຜູ້ຍິນດີມາອາສາຕາງມະຫາຣາຊະເຈົ້ານີ້ເທີ້ນ ພະຍາໄດ້ຍິນຄໍາແຫ່ງສາລິກະທາຕະກຸມານຜູ້ນັ້ນແລ້ວ ກໍຄະນຶງໃນໃຈວ່າ ມານະວະຜູ້ມີຊື່ວ່າສາລິກະທາຕະ ມັນວ່າເປັນລູກພະຍາເວລັມຍະນະຄອນວ່າດັ່ງນັ້ນ ທີ່ວ່າເປັນລູກທ້າວພະຍາແທ້ກູກໍບໍ່ຮູ້ໄດ້ເພື່ອກູຊອມເບິ່ງດ້ວຍອິຣິຍາບົດ ເມື່ອໄປມາແຫ່ງມັນກ່ອນເທີ້ນ ຜິວ່າມັນເປັນລູກທ້າວພະຍາແທ້ ກູຫາກຈັກຮູ້ແລ ພະຍາກໍຖາມວ່າ ດູລາສາລິກະທາຕະມານະວະ ທ່ານໄດ້ແມ່ຄໍາຮາງແລ້ວ ທ່ານຈັກຢູ່ທີ່ເປັນດັ່ງລືຈາ ສາລິກະທາຕະກ່າວວ່າ ຜິມະຫາຣາຊະເຈົ້າ ແລະ ອິດູກູນາຜູ້ຂ້າແລະໃຫ້ແມ່ຄໍາຮາງຜູ້ນີ້ແກ່ຜູ້ຂ້າ ຜູ້ຂ້າກໍຂໍເຮືອນຫລັງໜຶ່ງດອມມະຫາຣາຊະເຈົ້າແລ ຂໍມະຫາຣາຊະເຈົ້າຈົ່ງໃຫ້ເຮືອນຫລັງໜຶ່ງແກ່ຂ້າແດ່ເທີ້ນ ເພື່ອຂ້າທັງສອງໄດ້ຢູ່ເຮືອນແລ້ວ ເປດສະໜາເບື່ອງໃດມີຂ້າຫາກຈັກແກ້ຕາງມະຫາຣາຊະເຈົ້າບໍ່ໃຫ້ເຄື່ອງມະຫາຣາຊະເຈົ້າສັງແລ ພະຍາຄະນຶງໃນໃຈວ່າ ສາລິກະທາຕະນີ້ ຮອຍວ່າມັນເປັນລູກທ້າວພະຍາແທ້ແລ ເພິງອາດຕະມາຖາມບັນຫາອັນລ້ຽວລັບດູກ່ອນເທີ້ນ ຜິມັນສະຫລາດດ້ວຍບັນຫາແທ້ອາດຕະມາຈັກໃຫ້ນາງແມ່ຄໍາຮາງແກ່ມັນ ແລ້ວອາດຕະມາຈັກໃຫ້ເຮືອນຫລັງໜຶ່ງແກ່ມັນແລ ວ່າດັ່ງນີ້ແລ້ວ ພະຍາຈຶ່ງແປງບັນຫາອັນໜຶ່ງ. ອັນເທວະດາຫາກບອກພະຍານັ້ນແລ້ວ ຈຶ່ງໃຊ້ເສນາຜູ້ໜຶ່ງເອົາໄປທວາຍແກ່ສາລິກະທາຕະແລ ບັນຫາອັນນັ້ນວ່າສັນນີ້ ຍັງມີນາງຜູ້ໜຶ່ງທະລຶງຄັບພະໄດ້ສິບເດືອນ ບໍລະບວນແລ້ວ ກໍປະສູດໄດ້ລູກຊາຍຜູ້ໜຶ່ງແລ ລູກຊາຍຜູ້ນັ້ນກໍປາກົດວ່າ ມີຕາສີ່ໜ່ວຍ ມີແມ່ກໍສີ່ຄົນມີລູກສິບຫົກຄົນໂຮມເຂົ້າກັນໄດ້ຊາວຫົດແລ ເຂົາຝູງນັ້ນມີຕົນບໍ່ສະເໝີກັນ ຄືວ່າພ່ອງຕໍ່າ ພ່ອງສູງ ພ່ອງນ້ອຍ ພ່ອງໃຫຍ່ ແລະ ມີຕາສີ່ໜ່ວຍສ່ວນວ່າຕາສອງໜ່ວຍນັ້ນເປັນກັບດ້ວຍປະສາດຕາແອນຍິ່ງ ສອງໜ່ວຍນັ້ນຫາປະສາດຕາບໍ່ໄດ້ແລ ມີໃນເມືອງຄົນເຮົານີ້ແລ ເມືອງເຮົານີ້ກໍມີແລ ພະຍາແປງບັນຫາອັນນີ້ແລ້ວ ກໍໃຫ້ເສນາເອົາໄປສ່ຽງແກ່ອາມາດທັງຫລາຍ ກໍບໍ່ອາດຈັກຮູ້ສັກຄົນແລ ດ້ວຍຄໍາຕິຄະນຶງໃນໃຈພະຍາວ່າສັນນີ້ ເມື່ອອາດຕະມາບໍ່ກ່າວແກ່ເສນາທັງຫລາຍນັ້ນ ແລະ ຮີບໄປສ່ຽງແກ່ສາລິກະທາຕະນັ້ນແທ້ ຄຸນນະວິເສດແຫ່ງສາລິກະທາຕະນັ້ນ ກໍບໍ່ຈັກປາກົດແກ່ມັນໄດ້ແລ ເມື່ອອາດຕະມາສ່ຽງແກ່ເສນາອາມາດທັງຫລາຍແລ້ວ ເສນາທັງຫລາຍແກ້ບໍ່ໄດ້ອາດຕະມາຈຶ່ງໄປສ່ຽງແກ່ສາລິກະທາຕະ ມັນແກ້ໄດ້ຄຸນນະວິເສດແຫ່ງສາລິກະທາຕະກໍຈັກປາກົດມາກນັກ ຜິວ່າສາລິກະທາຕະແກ້ບໍ່ໄດ້ດັ່ງນັ້ນ ກໍຮຽກວ່າສາລິກະທາຕະບໍ່ມີປັນຍາແລ ໃນເມື່ອເສນາອາມາດທັງຫລາຍແກ້ບໍ່ໄດ້ດັ່ງນັ້ນ ອາມາດກໍເອົາບັນຫາອັນນັ້ນໄປສ່ຽງແກ່ສາລິກະທາຕະໂດຍດັ່ງຄໍາພະຍາຫາກບອກຊູ່ປະການ ແກ່ສາລິກະທາຕະທັ້ນແລ ຄັນວ່າສາລິກະທາຕະໄດ້ຍິນບັນຫາອັນນັ້ນແລ້ວ ກໍຕັດສະຮູ້ແຈ້ງໃນບັນຫາອັນນັ້ນ ດ້ວຍປັນຍາແຫ່ງຕົນແຈ້ງນັກ ສາລິກະທາຕະຈຶ່ງຈາລະຈາກັບດ້ວຍອາມາດທັງຫລາຍວ່າ ບັນຫາອັນນີ້ອຸບປະມາດັ່ງແມ່ນໍ້າກວ້າງແລະເລິກນັ້ນແລ ບຸກຄະລະທັງຫລາຍບໍ່ເຄີຍຂ້າມດັ່ງນັ້ນ ກໍບໍ່ອາດຈັກຂ້າມໄດ້ແລ

ບຸກຄະລະຜູ້ເຄີຍຂ້າມເລີ່ງໆກໍຈຶ່ງຂ້າມໄດ້ແລ ກໍຈຶ່ງຮູ້ທີ່ເລິກທີ່ຕື້ນ ທີ່ກວ້າງທີ່ແຄບດາຍ ບັນຫາອັນນີ້ ກໍເປັນດັ່ງແມ່ນ້ຳນັ້ນແລ ດູລາເຈົ້າອາມາດຈຶ່ງເມືອໄຫວ້ພະຍາເຈົ້າເຮົາກ່າວວ່າ ເລິກກໍດີ ຕື້ນກໍດີ ຈຶ່ງກັບຄືນມາເທີ້ນ ເມື່ອວ່າຕື້ນດັ່ງນັ້ນ ເສນາອາມາດທັງຫລາຍ ກໍບໍ່ແກ້ໄດ້ ກໍສະເໝີດັ່ງເລິກ ແລະ ກວ້າງນັ້ນແລ ເຈົ້າອາມາດຈຶ່ງຄືນເມືອໄຫວ້ພະຍາເຈົ້າເຮົາກ່ອນເທີ້ນ ພະຍາເຈົ້າກ່າວສັນ ໃດຈຶ່ງຄືນມາເລົ່າຂ້າກ່ອນ ຂ້າຈັກແກ້ບັນຫາອັນນີ້ເມື່ອພາຍລູນເມືອກາບພະຍາເຈົ້າແລ ອາມາດ ຜູ້ນັ້ນກໍເມືອໄຫວ້ພະຍາ ຕາມຄຳສາລິກະທາຕະຫາກສັ່ງນັ້ນແລ ເມື່ອນັ້ນພະຍາກ່າວວ່າ ດູລາເສ ນາອາມາດຈຶ່ງໃຫ້ສາລິກະທາຕະຜູ້ນັ້ນ ແກ້ບັນຫາອັນນັ້ນມາກາບເຮົາຕາມຜະຫຍາມັນເທີ້ນວ່າດັ່ງ ນັ້ນແລ ອາມາດຜູ້ນັ້ນກໍຄືນມາເລົ່າແກ່ສາລິກະທາຕະຜູ້ນັ້ນ ຕາມຄຳພະຍາສັ່ງນັ້ນແລ ສາລິກະທາ ຕະກ່າວວ່າ ສາທຸດີໆແລວ່າດັ່ງນີ້ແລ້ວ ຈຶ່ງກ່າວວ່າ ດູລາເຈົ້າອາມາດ ບັດນີ້ຂ້າຈັກແກ້ບັນຫາອັນ ນັ້ນແລ ດູລາອາມາດ ນາງຜູ້ວ່າມາທະລຶງຄັບນັ້ນ ກໍຫາກແມ່ນຄົນຍິງອັນທະລຶງຄັບຜູ້ເປັນແມ່ນັ້ນ ຜູ້ເປັນລູກມັນນັ້ນ ຄືວ່າແມ່ນຄົນຍິງ ຄົນຊາຍນີ້ແລ ຍັງຕາສີ່ໜ່ວຍແຫ່ງຄົນຜູ້ເປັນລູກນັ້ນ ສ່ວນວ່າ ຕາສອງໜ່ວຍມີປະສາດແຈ້ງແທ້ນັ້ນ ຄືວ່າມີໃນໜ້າຄົນເຮົານີ້ແລ ອັນວ່າຕາສອງໜ່ວຍບໍ່ມີປະ ສາດນັ້ນ ຄືວ່າຕາຕີນເຮົານີ້ແລ ແມ່ສີ່ແມ່ນັ້ນຄືວ່າແມ່ຕີນທັງສອງແມ່ມືທັງສອງນັ້ນແລ ລູກສິບທີກ ຄົນນັ້ນ ຄືວ່ານິ້ວຕີນແປດນິ້ວ ນິ້ວມືແປດນິ້ວນັ້ນແລ ເຂົາບໍ່ສະເໝີກັນນັ້ນ ຜ່ອງຕ່ຳ ຜ່ອງສູງ ຜ່ອງ ນ້ອຍ ຜ່ອງໃຫຍ່ ນັ້ນຄືວ່ານິ້ວຕີນນິ້ວມືເຮົາ ອັນນ້ອຍອັນໃຫຍ່ ອັນສັ້ນອັນຍາວນັ້ນແລ ສາລິກະທາ ຕະ ແກ້ບັນຫາອັນນີ້ກໍຊອບມາກນັກແລ ເທວະດາອັນຢູ່ໃນອາກາດນັ້ນກໍຍິນດີມາກນັກ ກໍຜາຍ ດອກສະໝຸດທິບລົງມາບູຊາສາລິກະທາຕະກຸມານເຈັດດອກກໍມີແລ ອາມາດຜູ້ນັ້ນເຫັນກໍເປັນອັດສະ ຈັນມາກນັກ ກໍເມືອບອກເລົ່າແກ່ພະຍາຊູ່ອັນທັ້ນແລ ພະຍາໄດ້ຍິນວ່າ ສາລິກະທາຕະແກ້ບັນຫາອັນ ນັ້ນໄດ້ ກໍຍິນດີນັກແລ ພະຍາຈຶ່ງກ່າວເຊິ່ງອາມາດວ່າ ຜີວ່າສາລິກະທາຕະມັກໄຄ່ໄດ້ແມ່ຄຳຮາງຜູ້ ນີ້ແທ້ດັ່ງນັ້ນຈຶ່ງໃຫ້ສາລິກະທາຕະຫາວອກຕົວໜຶ່ງ ຕົວຮູ້ເຍື່ອງດີ ຕົວບໍ່ຮູ້ກ່າຍໜັກກ່າຍເບົາບໍ່ຮູ້ກິນ ອາຫານນັ້ນ ຄັນວ່າໄດ້ຍິນແລ້ວ ໃຫ້ຮີບເອົາມາກາບເຮົາ ເຮົາຈັກສອນໃຫ້ມັນຕີກອງຫລິ້ນແລ ເມື່ອນັ້ນອາມາດຜູ້ນັ້ນ ກໍນຳອາດຍາບັນຫາອັນນັ້ນໄປເລົ່າແກ່ສາລິກະທາຕະທັ້ນແລ ທີ່ນັ້ນສາລິກະ ທາຕະໄດ້ຍິນບັນຫາອັນພະຍາໃຊ້ມາສ່ອງ ກໍຕັດສະຮູ້ແຈ້ງພະລັນນັກແລ ສາລິກະທາຕະກໍໃຫ້ໄປຫາ ໜັງວອກ ອັນນາຍພານຫາກເກືອໄວ້ທັງຕົວເປັນຮູບຕົວຢູ່ນັ້ນມາແລ້ວ ກໍໃຫ້ແກ່ເສນານຳເມືອ ກາບແກ່ພະຍາທັ້ນແລ ພະຍາເຫັນໜັງວອກຕົວນັ້ນແລ້ວ ກໍກ່າວວ່າ ສາລິກະທາຕະນີ້ມີຜະຫຍາ ນັກແທ້ນໍ ແກ້ບັນຫາອັນເຮົາໄປສ່ອງນີ້ໄດ້ບາດດຽວດີຫລີແລ ພະຍາກໍໃຫ້ປຸກເຮືອນຫລັງໜຶ່ງໃນຄຸ້ມ ນ້ອຍແຫ່ງຕົນທັ້ນແລ ກໍໃຫ້ສາລິກະທາຕະຢູ່ທັ້ນແລ ພະຍາກໍບໍ່ອາດຮັກສານາງແມ່ຄຳຮາງຜູ້ນັ້ນໄວ້ ໄດ້ ຈຶ່ງປະດັບປະດາແມ່ຄຳຮາງຜູ້ນັ້ນດ້ວຍເຄື່ອງກະນິມມະອາພອນທັງຫລາຍມວນ ພ້ອມຊູ່ປະການ ໃຫ້ດູງາມເປັນດັ່ງນາງຟ້ານັ້ນແລ ນາງນັ້ນຫາກເປັນທີ່ກິກເນື້ອເພິງໃຈແຫ່ງຜູ້ຊາຍແທ້ດີຫລີແລ ເຫດດັ່ງນັ້ນຈຶ່ງໃສ່ຊື່ວ່າ ນາງກາມມະຄັນທີແມ່ຄຳຮາງເພື່ອດັ່ງນັ້ນແລ ພະຍາກໍໃຊ້ອາມາດຜູ້ໜຶ່ງ ໄປຫາສາລິກະທາຕະກຸມານ ດ້ວຍຄຳສັ່ງເປັນບັນຫາວ່າ ວັນພຸ່ງໜ້າພໍເມື່ອພະອຸທະຍະຣາຊະອອກ ມາຕ້ອງຕົນສາລິກະທາຕະນັ້ນແລ້ວ ຈຶ່ງໃຫ້ສາລິກະທາຕະຮີບມາພະລັນເທີ້ນ ວ່າດັ່ງນັ້ນແລ້ວກໍໃຊ້ ໄປທັ້ນແລ ສາລິກະທາຕະໄດ້ຍິນແລ້ວ ກໍຕັດສະຮູ້ຍາມດຽວນັ້ນດ້ວຍຜະຫຍາຕົນແລ້ວ ຈຶ່ງຄະນຶງ

ໃນໃຈວ່າ ຮອຍທີ່ພະຍາເວົ້າວ່າ ຄັນວ່າພະອາທິດອອກມາພົ້ນດອຍແລ້ວ ຣັດສະໝີພະອາທິດມາກົກຕ້ອງຕົນອາດຕະມານີ້ແລ້ວ ໃຫ້ຣີບເມືອໄຫວ້ພະຍາເຈົ້າວ່າດັ່ງນັ້ນແລ ໃນເມື່ອວັນພຸ່ງເຊົ້ານັ້ນ ຄັນວ່າຣັດສະໝີພະອາທິດອອກມາພົ້ນຈາກດອຍແລ້ວ ສາລິກະທາຕະກໍເມືອໄຫວ້ພະຍາແທ້ທັ້ນແລ ພະຍາເຫັນສາລິກະທາຕະມາແກ້ບັນຫາອັນນັ້ນຊອບຍາມນັ້ນ ພະຍາຄະນຶງໃຈວ່າ ສາລິກະທາຕະຜູ້ນີ້ມີໄວຍະອັນຍັງໜຸ່ມນ້ອຍນີ້ແລ ມີຜະຫຍາຍິ່ງກວ່າຄົນທັງຫລາຍໃນເມືອງອາດຕະມາດັ່ງນີ້ ເພິ່ງອາດຕະມາເອົາໄວ້ເປັນລູກແຫ່ງອາດຕະມາຄອນແລ ພະຍາຄະນຶງດັ່ງນີ້ແລ້ວ ພະຍາກໍໃຫ້ສາລິກະທາຕະມານະວະຜູ້ນັ້ນກິນເຂົ້ານ້ຳ ອັນປະກອບດ້ວຍໂພຊະນະອາຫານ ມີຣົດສະຫລາຍປະການຕ່າງໆ ແລ້ວພະຍາກໍຈຶ່ງໃຫ້ນາງແມ່ຄຳຣາງຜູ້ນັ້ນ ແກ່ສາລິກະທາຕະຜູ້ນັ້ນແລ ພະຍາກໍໃຫ້ແມ່ຄຳຣາງແຫຍ່ນິ້ວມືອອກຮູເປັນສອງອັນແລ້ວ ກໍໃຫ້ສາລິກະທາຕະໄປຫຍຸບດູ ຢູ່ໜ້ອຍໜຶ່ງແລ້ວຈຶ່ງໃຫ້ທວາຍທັ້ນແລ ພະຍາກໍກາມວ່າ ດູລາທ່ານສາລິກະທາຕະ ນິ້ວມືອັນແຫຍ່ອອກປ່ອງເປັນສອງຮູນັ້ນ ຈັກວ່າມີຜູ້ດຽວລືຮູ້ວ່າສອງຄົນນັ້ນຈາ ທ່ານຈຶ່ງທວາຍດູເທີ້ນ ສາລິກະທາຕະທວາຍວ່າ ຂ້າແກ່ມະຫາຣາຊະເຈົ້າ ດັ່ງຜູ້ຂ້າຈັກພິຈາລະນາດູນີ້ ຫາກແມ່ນນິ້ວມືຜູ້ດຽວແທ້ດີຫລີແລ ພະຍາກາມວ່າດັ່ງລື ແລະ ຮູ້ວ່າເປັນມີຜູ້ດຽວນັ້ນຈາ ສາລິກະທາຕະກ່າວວ່າ ຂ້ກແກ່ມະຫາຣາຊະເຈົ້າ ຊາຕິອິງຄະຜູ້ດຽວ ຜູ້ຍິງກໍດີ ຜູ້ຊາຍກໍດີ ອຸ່ນກໍອຸ່ນສະເໝີກັນ ເຢັນກໍເຢັນສະເໝີກັນດາຍ ນິ້ວມືນີ້ເປັນອັນອຸ່ນສະເໝີກັນ ຜູ້ຂ້າກໍຮູ້ວ່າເປັນນິ້ວມືຜູ້ດຽວເພື່ອດັ່ງນັ້ນແລ ທີ່ນັ້ນພະຍາກໍເຊື່ອຄຳນັກແລ ພະຍາກໍຄະນຶງໃຈວ່າ ສາລິກະທາຕະຜູ້ນີ້ຈົບດ້ວຍສາດຕະສິນແທ້ແລ ພະຍາຈຶ່ງໃຫ້ນາງເຖົ້ານາງແກ່ ນຳສາລິກະທາຕະກຸມານໄປໃນເຮືອນຫລັງພະຍາໃຫ້ປູກຄຸ້ມນ້ອຍນັ້ນແລ້ວ ກໍອຸດສາພິເສກນາງແມ່ຄຳຣາງຜູ້ນັ້ນໃຫ້ເປັນເມັຽສາລິກະທາຕະໃນເຮືອນທີ່ນັ້ນ ຄືວ່າສູ່ຂວັນນັ້ນແລ ແຕ່ນັ້ນເມືອໜ້າບໍ່ນານເທົ່າໃດ ພະຍາເວລັ້ມຍະນະຄອນຕົນເປັນພໍ່ສາລິກະທາຕະກຸມານຜູ້ນັ້ນ ບໍ່ຮູ້ເມື່ອລູກຕົນສາລິກະທາຕະກຸມານ ມາຢູ່ໃນເມືອງໂຄລັມທະນະຄອນທີ່ນັ້ນແລ ພະຍາກໍທໍ່ຮູ້ຂ່າວວ່າ ພະຍາໂຄລັມທະນະຄອນນັ້ນ ຫາລູກຍິງລູກຊາຍບໍ່ໄດ້ນັ້ນສິ່ງດຽວແລ ພະຍາຈຶ່ງແປງບັນຫາໄປສ່ຽງແກ່ພະຍາໂຄລັມທະນະຄອນ ດ້ວຍຄຳວ່າ ດູລາພະຍາໂຄລັມທະນະຄອນ ຈົ່ງໃຫ້ແປງສະອັນໃຫຍ່ໃນຄຸ້ມນ້ອຍແລ້ວ ຈົ່ງໃຫ້ປູກດອກບົວທັງຫລາຍ ໃຫ້ໄດ້ໝື່ນຫົກພັນປາຍສອງຮ້ອຍປາຍສອງກໍ ລ້ຳດອກບົວທັງຫລາຍຝູງນັ້ນ ອັນວ່າດອກບົວສອງກໍອັນປາຍນັ້ນໃຫ້ໃຫຍ່ກວ່າດອກບົວທັງຫລາຍແລະງາມນັກແລ ແຮກແຕ່ພະຍາເຈົ້າ ປູກດອກບົວໃນສະນັ້ນທໍ່ມີແຕ່ຈູມດອກບົວງາມເປົ່າດາຍ ກໍບໍ່ອາດຈັກຄວີ່-ໄຂກາບຈັກບານໄດ້ ໄກສອນກໍບໍ່ໃຫຍ່ເປັນໜ່ວຍເປັນລູກແລ ແຜ່ໄປເປັນເຊື້ອເປັນແນວໄດ້ ແມ່ນວ່າງາມທໍ່ໃດກໍດີກໍທໍ່ເປັນດອກບົວຢູ່ເປົ່າດາຍ ບໍ່ເປັນມັງຄະລະສັງແລ ບັນຫາອັນນີ້ ຜີພະຍາໂຄລັມທະນະຄອນແກ້ໄດ້ຈຶ່ງກ່າວມາເທີ້ນ ຜີວ່າແກ້ບໍ່ໄດ້ຕູຈັກໄປຣີບເອົາເມືອງແລວ່າດັ່ງນັ້ນ ທີ່ນັ້ນພະຍາໂຄລັມທະນະຄອນບໍ່ຮູ້ກົດຈະແຫ່ງບັນຫາອັນນັ້ນໄດ້ ພະຍາຈຶ່ງໃຫ້ຊຸມນຸມມາຍັງເສນາອາມາດທັງຫລາຍ ມາພິຈາລະນາດູສ້ຽງທຶກວັນທຶກຄືນແລ້ວ ກໍບໍ່ອາດຈັກແກ້ໄດ້ສັກຄົນທັ້ນແລ ພະຍາກໍໃຫ້ຫາມາຍັງຊາວບ້ານຊາວເມືອງທັງຫລາຍ ຝູງມີໄວຍະເຖົ້າແກ່ນັ້ນມາກາມດູ ເຂົາກໍກ່າວວ່າແຕ່ໂບຮານມາແຕ່ກ່ອນພຸ້ນຂ້າທັງຫລາຍບໍ່ໄດ້ຍິນສັກເທື່ອແລ ທີ່ນັ້ນພະຍາແລະເສນາອາມາດທັງຫລາຍ ເຂົາກໍກົວເສັຽເມືອງນັກ· ກໍສະຫລົບຢູ່ທຸກຄົນທັ້ນແລ ເຫດວ່າແກ້ບັນຫາບໍ່ໄດ້ແລ ຈັກເສັຽເມືອງແກ່ທ່ານແທ້ແລເລົ່າຍັງ

ມີອາມາດໃຫຍ່ຜູ້ຫນຶ່ງ ມັນກໍຄະນຶງເກິງ ສາລິກະທາຕະພົວແມ່ຄຳຮາງຜູ້ນັ້ນແລ້ວ ມັນກໍເມືອໄຫວ້
ພະຍາວ່າ ຂ້າແກ່ມະຫາຣາຊະເຈົ້າ ຜູ້ຊາຍທັງຫລາຍໃນເມືອງເຮົານີ້ກໍຫາກໄດ້ຖາມຫມົດທຸກ
ຄົນແລ້ວແທ້ດີຫລີແລ ທີ່ຍັງໄປ່ໄດ້ຖາມແຕ່ສາລິກະທາຕະພົວແມ່ຄຳຮາງຜູ້ດຽວແລ ເມື່ອນັ້ນ ພະ
ຍາກໍໃຫ້ໄປຫັນມາຍັງສາລິກະທາຕະກຸມານມາຖາມວ່າ ບັນຫາອັນເປັນສັນນີ້ ທ່ານຍັງຈັກແກ້ໄດ້ບໍ
ຈາ ທີ່ນັ້ນ ສາລິກະທາຕະກ່າວວ່າ ບັນຫາອັນນີ້ຂ້າແກ້ບໍ່ຍາກສັງແລ ກໍຫາກມີໃນມະຫາຣາຊະເຈົ້າ
ທັ້ນດາຍ ພະຍາກ່າວວ່າ ດູລາສາລິກະທາຕະ ຜິທ່ານຍັງອາດແກ້ບັນຫາອັນນີ້ໄດ້ແທ້ ທ່ານຈິ່ງແກ້ດູ
ເທີ້ນ ທີ່ນັ້ນສາລິກະທາຕະຈັກແກ້ບັນຫາອັນນັ້ນກໍໄຫວ້ເທວະດາວ່າ ຂ້າແກ່ເທວະດາເປັນເຈົ້າ
ຂ້າຈັກແກ້ບັນຫາອັນນີ້ ຜິວ່າຍັງຊອບແທ້ດັ່ງນັ້ນເທວະດາເຈົ້າຈິ່ງໃຫ້ສັກຂີອັນໃດອັນຫນຶ່ງໃຫ້ປາ
ກົດແກ່ຄົນທັງຫລາຍເທີ້ນ ວ່າດັ່ງນີ້ແລ້ວ ສາລິກະທາຕະຈິ່ງກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ອັນ
ວ່າໃຫ້ແປງສະພັງໃນຄຸ້ມນ້ອຍນັ້ນ ບໍ່ໃຊ່ອັນໃດດາຍ ຄືວ່າໃຫ້ມະຫາຣາຊະເຈົ້າ ແປງຜາສາດອັນ
ເປັນທີ່ທະລົງແຫ່ງມະຫາຣາຊະເຈົ້ານັ້ນແລ ອັນວ່າໃຫ້ປູກດອກບົວໄວ້ຫມື່ນທຶກພັນປາຍສອງຮ້ອຍກໍ
ນັ້ນ ຄືວ່ານາງສະຫນົມຫມື່ນທຶກພັນນາງ ກໍເປັນປາທະປະຣິຈາກແຫ່ງມະຫາຣາຊະເຈົ້ານັ້ນນແລ
ອັນວ່າປາຍສອງກໍໃຫ້ໃຫຍ່ກວ່າທັງຫລາຍນັ້ນ ຄືວ່າຕົນມະຫາຣາຊະເຈົ້າ ແລະ ນາງເທວີ ນັ້ນ
ແລ ອັນວ່າມີແຕ່ຈູມດອກບົວອັນປະກອບດ້ວຍພຸ່ມງາມເປົ່າດາຍ ບໍ່ອາດຈັກຄວີ່ຈັກບານໄດ້ ໄກສອນ
ກໍບໍ່ອາດເປັນຫນ່ວຍເປັນລູກແຜ່ໄປໄດ້ເລີຍ ອັນນີ້ຄືວ່ານາງອັກຄະມະເຫສີ ກັບມະຫາຣາຊະເຈົ້າ
ແລະ ນາງທັງຫລາຍຫມື່ນທຶກພັນກໍດີ ບໍ່ມີລູກຍິງລູກຊາຍອັນຈັກສືບເຊື້ອພົງສາສັກຄົນແລ ເຫດດັ່ງ
ນັ້ນ ເຂົາກໍຈັກມາຮິບເອົາບ້ານເມືອງມະຫາຣາຊະເຈົ້າເພື່ອບໍ່ມີລູກນັ້ນແລ ສາລິກະທາຕະແກ້ບັນ
ຫາອັນນີ້ ກໍກຶກອະທິບາຍຄຳບັນຫາແຫ່ງພະຍາເວລັນຍະນະຄອນນັ້ນແລ ທີ່ນັ້ນເທວະດາກໍຍິນດີມາກ
ນັກແລ້ວ ກໍຜາຍແກ້ວເຈັດຈຳພວກລົງມາບູຊາສາລິກະທາຕະໃຫ້ເປັນສັກຂີແກ່ຄົນທັງຫລາຍ ກັບ
ທັງພະຍາໂຄລັນທະນະຄອນເປັນຕົ້ນແລ ຄົນໃຊ້ພະຍາເວລັນຍະນະຄອນນັ້ນ ເຂົາກໍເອົາຄຳແກ້ບັນ
ຫາອັນນັ້ນ ເມືອບອກແກ່ພະຍາເວລັນຍະອັນເປັນເຈົ້າແຫ່ງເຂົາທັ້ນແລ ພະຍາເວລັນຍະກໍຮູ້ວ່າ
ພະຍາໂຄລັນທະນະຄອນແກ້ບັນຫາຕົນໄດ້ ກໍລວດບໍ່ມາຮິບເອົາເມືອງພະຍາໂຄລັນທະນະຄອນທັ້ນ
ແລ ພະຍາໂຄລັນທະນະຄອນ ບໍ່ເສັຽບ້ານເສັຽເມືອງແຫ່ງຕົນກໍມີໃຈຍິນດີມາກນັກແລ້ວ ກໍຈິ່ງຕັ້ງ
ໄວ້ຍັງສາລິກະທາຕະນັ້ນ ໃນທີ່ອັນເປັນຣາຊະບຸດ ຄືວ່າເປັນລູກຕົນ ເປັນດັ່ງເກີດແຕ່ຫົວອົກແຫ່ງ
ຕົນນັ້ນແລ ພະຍາໂຄລັນທະນະຄອນ ກໍຈິ່ງໃຊ້ຣາຊະທູດຕາທັງຫລາຍໄປເປັນແຂກໃນເມືອງເວລັນ
ຍະນະຄອນນັ້ນ ເພື່ອໃຫ້ຮູ້ສະພາວະສາລິກະທາຕະ ເປັນລູກພະຍາເວລັນຍະນະຄອນອັນຕະເດີນ
ມາເກິງເມືອງຕົນແລ ໄດ້ເອົາເປັນລູກນັ້ນໃຫ້ແຈ້ງແກ່ພະຍາເວລັນຍະນະຄອນນັ້ນແລ້ວ ແຣກແຕ່ນີ້
ເມືອຫນ້າເມືອງທັງສອງ ຄືວ່າເມືອງໂຄລັນທະນະຄອນ ແລະ ເມືອງເວລັນຍະນະຄອນນັ້ນ ກໍ
ເປັນຣາຊະໄມຕີຕິດຕໍ່ກັບດ້ວຍກັນມາກນັກ ກໍມີທັ້ນແລ ແຕ່ນັ້ນຊາວເມືອງໂຄລັນທະນະຄອນ ກໍມີ
ຄຳຍິນດີມາກນັກ ເຂົາກໍສາທຸການດ້ວຍຄຳວ່າດັ່ງນີ້ ອິນຕາຍຈັກເກີດມີໃນບ້ານເມືອງແຫ່ງເຮົາ ຄື
ວ່າຈັກຍຸດທະກຳກັບດ້ວຍກັນກໍຫາຍເສັຽ ເພື່ອຜະຫຍາຄຳຮູ້ເຈົ້າສາລິກະທາຕະຣາຊະບຸດນັ້ນແລ
ອັນຫນຶ່ງອິນຕາຍກໍຈັກເກີດມີໃນສະດອກບົວມັງຄະລະແຫ່ງພະຍາເຮົາ ຄືວ່າຈັກມ້າງເສັຽຍັງສະມັງ
ຄະລະວັນນັ້ນ ກໍຫາຍເສັຽ ເພື່ອຜະຫຍາເຈົ້າຣາຊະບຸດຜູ້ດຽວນີ້ດາຍ ດອກບົວກໍຈິ່ງບໍ່ຊ້ຳ ນ້ຳກໍບໍ່

ຂຸ່ນ ປາແລະງູກໍບໍ່ຄອດ ຂອດກໍບໍ່ຕາຍ ໄມ້ຄ້ອນກໍບໍ່ຫັກ ຝັ່ງນ້ຳກໍບໍ່ເພພັງແລ ອັນນີ້ກໍເປັນຄຳແຫ່ງ ຊາວເມືອງໂຄລັນທະນະຄອນ ກ່າວປະສັງສິດກິດຕະນາຍ້ອງຍໍພະຫຍາ ສາລີກະທາຕະຣາຊະບຸດ ນັ້ນແລ ສາມັນທະພາມຜູ້ເປັນປະໂຣຫິດພະຍາໂຄລັນທະນະຄອນ ຊັກເອົາຕຳນານອັນນີ້ມາກ່າວແກ່ ຊາຍປະຈັນຕະມານະວະຜູ້ລຸກແຕ່ເມືອງພະຍາມິດຕະທຳມະຣາດນັ້ນມາ ເພື່ອວ່າສະແຫວງຫາຣອນ ເອົາຕຳນານບົວຢ່າຊ້ຳ ນ້ຳຢ່າຂຸ່ນ ປາແລະງູຢ່າຄອດ ຂອດຢ່າຕາຍ ໄມ້ຄ້ອນຢ່າຫັກ ຝັ່ງນ້ຳຢ່າ ເພພັງນັ້ນແລ ຄັນວ່າປະຈັນຕະມານະວະຜູ້ນັ້ນໄດ້ຕຳນານອັນນີ້ແລ້ວ ກໍຄືນມາເມືອງຕົນ ແລ້ວກໍ ເອົາຕຳນານອັນນີ້ ເມືອກ່າວບອກແກ່ພະຍາມິດຕະທຳມະຣາດທັ້ນແລ ຄັນວ່າພະຍາມິດຕະທຳມະ ຣາດໄດ້ຍິນຄຳຕຳນານອັນນີ້ແລ້ວ ກໍໃຫ້ປ່ອຍຄົນທັງຫລາຍຝູງໃສ່ຄອກໄວ້ນັ້ນສ້ອງຊູ່ຄົນທັ້ນແລ ຄົນ ທັງຫລາຍຝູງອັນປ່ອຍພົ້ນຈາກເຮືອນຄອກຂັງນັ້ນ ກໍເພື່ອເມດຕາແຫ່ງປະຈັນຕະມານະວະຜູ້ນັ້ນ ອັນ ຕະເດີນໄປຫາກິດຈະຄຳອັນນັ້ນໄດ້ແລ້ວ ກໍມາບອກເລົ່າແກ່ພະຍາມິດຕະທຳມະຣາດ ຈິ່ງປ່ອຍຄົນ ທັງຫລາຍຝູງນັ້ນເສັຽກໍມີແລ ຕຳນານອັນນີ້ ຄົນທັງຫລາຍຫາກກ່າວສືບໆກັນມາວ່າ ບົວຢ່າຊ້ຳ ນ້ຳ ຢ່າຂຸ່ນ ປາ ແລະ ງູຢ່າຄອດ ຂອດຢ່າຕາຍ ໄມ້ຄ້ອນຢ່າຫັກ ຝັ່ງນ້ຳຢ່າເພພັງນັ້ນ ກໍແລ້ວເທົ່ານີ້ ກ່ອນແລ.

ທີ່ນີ້ຈັກກ່າວ ຕຳນານນິທານ ພະຍາຣາມະຣາດໃຫ້ເອົາດູກຫົວຄົນໄປສ້ອງແກ່ພະຍາເກສະ ຣາດ ອັນເປັນສະຫາຍແຫ່ງຕົນທັ້ນແລ ດ້ວຍທີ່ແທ້ ຍັງມີເມືອງອັນໜຶ່ງຊື່ວ່າ ອຸທະຍະນະຄອນ ພະ ຍາຕົນສະເຫວີຍເມືອງນັ້ນຊື່ວ່າ ຣາມະຣາດແລ ເລົ່າຍັງມີເມືອງອັນໜຶ່ງ ຊື່ວ່າ ຣຳມະຕິນະຄອນ ແລ ພະຍາຕົນສະເຫວີຍເມືອງນັ້ນ ຊື່ວ່າ ເກສະຣາດແລ ພະຍາທັງສອງເປັນມິດສະຫາຍກັນດ້ວຍ ສາມາດກະອັນເປັນອະທິດກະສະຫາຍກັນ ຕ່າງຄົນຕ່າງຢູ່ ສະເຫວີຍເມືອງໂດຍອັນຊອບທຳມະ ສືບປະການໃນເມືອງແຫ່ງຕົນແລ ຍັງມີກາລະປາງໜຶ່ງ ພະຍາຣາມະຣາດຄະນຶງໃຈວ່າດັ່ງນີ້ ສ່ວນວ່າພະຍາເກສະຣາດສະຫາຍຮັກອາດຕະມານີ້ແລະເສນາອາມາດທັງຫລາຍ ຍັງປະກອບໄປ ດ້ວຍຜະຫຍາ ອັນອາດຈັກແກ້ບັນຫາອັນເລີກແລບໄດ້ບໍຈາ ຄະນຶງດັ່ງນີ້ແລ້ວ ຈິ່ງໃຊ້ໄປຍັງຣາຊະທູ ຕາຄົນໃຊ້ ໃຫ້ເອົາບັນນະການທັງຫລາຍມວນ ກັບທັງກະດູກຫົວຄົນຕາຍແລ້ວນັ້ນສາມຫົວ ໄປສ້ອງ ແກ່ພະຍາເກສະຣາດກັບທັງເສນາອາມາດທັງຫລາຍ ດ້ວຍຄຳສັ່ງວ່າດັ່ງນີ້ ລ້ຳກະດູກສາມຫົວນີ້ ເມື່ອເຂົາຍັງເປັນຄົນວັນນັ້ນ ຜູ້ໜຶ່ງປະກອບໄປດ້ວຍຜະຫຍາມາກນັກ ຄວນຄ່າໄດ້ແສນຄຳແລ ຜູ້ ໜຶ່ງປະກອບໄປດ້ວຍຜະຫຍາມັດຊິມະພໍຜ້ານກາງ ຄວນຄ່າໄດ້ໝື່ນຄຳແລ ຜູ້ໜຶ່ງຫາຜະຫຍາບໍ່ໄດ້ ເປັນຄົນທີ່ນະຊາດກ່ອຍນັກ ມີຄຳປາກຈາລະຈາບໍ່ເປັນປະໂຍຊະນະສັງສັກອັນ ເມື່ອມັນມີຊີວິດມີຄ່າ ຄຳດອວຍັງວ່າແພງເສັຽແລ ລ້ຳກະດູກຫົວສາມອັນນີ້ ຈັກວ່າດູກຫົວຄົນຜູ້ມີຜະຫຍາມາກນັກນັ້ນແມ່ນ ຫົວໃດຈາ ຜູ້ມີຜະຫຍາຜ້ານກາງນັ້ນແມ່ນຫົວໃດຈາ ຜູ້ທີ່ນະຊາດກ່ອຍນັກນັ້ນ ແມ່ນຫົວໃດຈາວ່າດັ່ງ ນີ້ແລ ບັນຫາອັນເທວະດາຫາກບອກແກ່ພະຍາຣາມະຣາດຈິ່ງຮູ້ແລ ຄັນວ່າຄົນໃຊ້ເມືອຮອດແລ້ວ ກໍ ກວາຍບັນນະການຂອງຝາກແກ່ພະຍາເກສະຣາດ ແລ້ວຈິ່ງເອົາກະດູກຫົວສາມອັນນັ້ນ ກວາຍເປັນ ບັນຫາສ້ອງແກ່ພະຍາ ແລະເສນາອາມາດທັງຫລາຍ ກ່າວກິດຈະໃນບັນຫາອັນນັ້ນ ກວາຍໂດຍ ດັ່ງພະຍາຣາມະຣາດຫາກສັ່ງເຂົາມາຊູ່ປະການທັ້ນແລ ເມື່ອນັ້ນພະຍາເກສະຣາດ ແລະເສນາອາ

ມາດທັງຫລາຍ ພ້ອມກັນພິຈາລະນາດູດູກຫົວສາມອັນນັ້ນ ກໍບໍ່ອາດຈັກຮູ້ກິດຈະໃນບັນຫາອັນນັ້ນໄດ້ ສັກຄົນທັ້ນແລ ພະຍາຈຶ່ງບັງຄັບໃຫ້ເອົາຄຳພັນໜຶ່ງໃສ່ຫລັງຊ້າງ ໄປປ່າວໃນລະແວກທີນທາງ ເມືອງຣາມະຕິນະຄອນຊູ່ແຫ່ງ ດ້ວຍຄຳວ່າ ບຸກຄະລະຜູ້ໃດແລະຮູ້ກິດຈະໃນບັນຫາອັນນີ້ ກໍຈັກ ໃຫ້ຄຳພັນນີ້ ເປັນເຂົ້າຕອກດອກໄມ້ບູຊາແກ່ຄົນຜູ້ນັ້ນແລ ວ່າດັ່ງນີ້ກໍໃຫ້ປ່າວທຸກແຫ່ງມີແລ ຍາມນັ້ນ ຍັງມີຊາຍໂກງເຫລົ້າຜູ້ໜຶ່ງຊື່ວ່າ ສຸຣາສານຕະມານະວະ ມັນໄດ້ຮຽນສາດຕະສິນຕ່າງໆແຕ່ບຸບເພ ຈະຣິຍະເຈົ້າທັງຫລາຍແຕ່ກ່ອນມາແລ ໃນວັນອັນພະຍາໃຫ້ປ່າວຄ້ອງນັ້ນ ມານະວະຜູ້ນັ້ນກໍໄປນັ່ງ ກິນເຫລົ້າຢູ່ໃນຮ້ານເຫລົ້າກັບດ້ວຍໂກງເຫລົ້າທັງຫລາຍ ມັນກໍໄດ້ຍິນ ຄຳອັນພະຍາໃຫ້ປ່າວນັ້ນ ມານະວະຜູ້ນັ້ນຈຶ່ງຈາລະຈາກັບດ້ວຍຄົນໃຊ້ທັງຫລາຍ ດູລາເຈົ້າທັງຫລາຍ ສ່ວນວ່າບັນຫາສາມອັນ ນີ້ຂ້າກໍຍັງອາດຈັກແກ້ໄດ້ດາຍ ບໍ່ຍາກສັງແລ ຄົນໃຊ້ກ່າວວ່າ ດູລາມານະວະ ທ່ານຈັກແກ້ໄດ້ແທ້ ລີ ເມື່ອນັ້ນມານະວະກ່າວວ່າ ບັນຫາອັນນີ້ຂ້າຈັກແກ້ໄດ້ແທ້ແລ ຍາມນັ້ນໂກງເຫລົ້າທັງຫລາຍ ກ່າວວ່າ ມຶງນີ້ກິນເຫລົ້າເມົາຢ່າຊູຮ່າວອັນ ຮ່າວວ່າດັ່ງນີ້ບໍ່ດີດາຍ ເມື່ອນັ້ນ ມານະວະກ່າວວ່າ ດູ ລາສະຫາຍທັງຫລາຍ ຂ້າກໍເມົາແທ້ແລ ເທົ່າວ່າຂ້າຍັງຮູ້ຄືງແດ່ດາຍ ບັນຫາອັນນີ້ດັ່ງລືຂ້າບໍ່ຮູ້ນັ້ນ ຈາວ່າດັ່ງນີ້ ເມື່ອນັ້ນຄົນໃຊ້ພະຍາໄດ້ຍິນຄຳມານະວະຜູ້ນັ້ນເປັນອິງອາດ ເຂົາຈຶ່ງເອົາມານະວະຜູ້ ນັ້ນ ເມືອສຳແດງບອກພະຍາທັ້ນແລ ພະຍາກໍຖາມວ່າ ດູລາມານະວະ ທ່ານຍັງຈັກແກ້ບັນຫາອັນນີ້ ໄດ້ແທ້ລີ ມານະວະຂານພະຍາວ່າ ຂ້າໄຫວ້ມະຫາຣາຊະເຈົ້າ ຂ້ານີ້ຊື່ວ່າ ສຸຣາສານຕະມານະວະ ແລ ກິດຈະບັນຫາອັນນີ້ ຂ້າກໍອາດຮູ້ແຈ້ງດີຫລີແລ ທີ່ວ່າຂ້ານີ້ເປັນໂກງເຫລົ້າ ມີເສື້ອຜ້ານຸ່ງກໍຜາງ ຮ້າຍນັກ ບັນຫາອັນນີ້ເປັນອັນເລິກແລບນັກ ໄປ່ຄວນຜູ້ຂ້າແກ້ບັດນີ້ເທື່ອແລ ເມື່ອພຸ່ງເຊົ້າວັນລຸນ ນັ້ນ ພະຍາກໍໃຫ້ມານະວະຜູ້ນັ້ນອາບນ້ຳຊຳຣະເນື້ອຄີງເສັຽແລ້ວ ແລະໃຫ້ກິນເຂົ້ານ້ຳໂພຊະນະ ອາຫານ ແລ້ວພະຍາກໍໃຫ້ເສື້ອຜ້າອາພອນ ເຄື່ອງໄລ້ລາທາ ຂອງຫອມແລ້ວ ມີໝູ່ຄົນອັນມາກ ຫາກແວດລ້ອມ ອ້ອມເປັນປະຣິວານແລ້ວ ກໍເມືອສູ່ພາສາດພະຍາທັ້ນແລ ເມື່ອສຸຣາສານຕະ ມານະວະ ຈັກແກ້ບັນຫາດັ່ງນັ້ນ ມານະວະກໍໄຫວ້ເທວະດາວ່າ ຂ້າແກ່ເທວະດາເປັນເຈົ້າ ບັດນີ້ຜູ້ ຂ້າຈັກແກ້ບັນຫາສາມອັນນັ້ນ ພີວ່າຜູ້ຂ້າແກ້ຍັງຊອບຄະດີໂລກກ່າວມາແທ້ ເທວະດາເຈົ້າຈຶ່ງໃຫ້ສັກ ຂີອັນໃດອັນໜຶ່ງ ໃຫ້ເປັນທີ່ເຊື່ອແຫ່ງຄົນທັງຫລາຍເທີ້ນ ວ່າດັ່ງນີ້ແລ້ວ ມານະວະຜູ້ນັ້ນກໍໃຫ້ຄົນ ເຫລົາຫວາຍໄດ້ສາມເສັ້ນມາແລ້ວ ມານະວະກໍເອົາຫວາຍເສັ້ນໜຶ່ງ ແຫຍ່ເຂົ້າຮູຫູດູກຫົວອັນໜຶ່ງ ຫວາຍເສັ້ນນັ້ນກໍຊອດອອກມາຮູຄໍທັ້ນແລ ມານະວະກໍຫວາຍວ່າ ຂ້າແກ່ມະຫາຣາຊະເຈົ້າກະດູກຫົວ ອັນນີ້ເມື່ອມັນຍັງເປັນຄົນວັນນັ້ນ ຄັນວ່າມັນໄດ້ຍິນກ້ອຍຄຳເຍື່ອງໃດກໍດີ ມັນຫອຽນຍ່ອມພິຈາລະນາ ດ້ວຍຜະຫຍາຕົນແຈ້ງນັກ ຮູ້ອັນໜັກອັນເບົາ ອັນຄວນຈາ ແລະບໍ່ຄວນຈາ ອັນຕື້ນ ແລະອັນເລິກ ອັນຮ້າຍ ແລະອັນດີ ຊູ່ອັນດາຍ ເມື່ອມັນເປັນຄົນວັນນັ້ນ ຄວນຄ່າໄດ້ແສນຄຳກໍຍັງກີກດາຍ ມາ ນະວະພັດເລົ່າເອົາຫວາຍແຫຍ່ຮູຫູກະດູກຫົວອັນກ້ອນສອງນັ້ນ ຫວາຍເສັ້ນນັ້ນກໍຊອດແຜ່ວອອກທາງ ດັງ ມານະວະຈຶ່ງກ່າວວ່າ ຂ້າແກ່ມະຫາຣາຊະເຈົ້າ ສວນດັ່ງດູກຫົວອັນນີ້ ແຫຍ່ຮູຫູຊອດອອກທາງ ດັງດັ່ງນີ້ ເມື່ອມັນຍັງເປັນຄົນວັນນັ້ນມັນໄດ້ສູບດົມຣົດສະອັນໃດກໍດີ ໄດ້ຍິນຄຳອັນໜັກອັນເບົາກໍດີ ມັນຫອຽນຍ່ອມພິຈາລະນາແທ້ດາຍ ຄວນຈາກໍຈຶ່ງຈາດາຍ ເມື່ອມັນຍັງເປັນຄົນນັ້ນ ຄວນຄ່າໄດ້ໝື່ນ ຄຳແລ ມານະວະເລົ່າເອົາຫວາຍແຫຍ່ຮູຫູກະດູກຫົວອັນກ້ອນສາມນັ້ນ ຫວາຍເສັ້ນນັ້ນກໍຊອດອອກ

ທາງປາກ ມານະວະກໍໄຫວ້ພະຍາວ່າ ກະດູກທິວອັນນີ້ ແຫຍ່ຫູຊອດອອກທາງປາກດັ່ງນີ້ ເມື່ອມັນຍັງເປັນຄົນນັ້ນ ມັນໄດ້ຍິນກ້ອຍຄຳອັນໃດກໍດີ ມັນບໍ່ຮູ້ກິດຈະອັນໜັກອັນເບົາສັງສັກອັນ ມັນເປັນຄົນຂີ້ມາກປາກຫລາຍ ປາກຈາອັນໃດບໍ່ໝັ້ນບໍ່ທ່ຽງແລ ເມື່ອມັນຍັງເປັນຄົນ ມີຄ່າເກົ່ງຄຳກໍຍັງວ່າແພງເສັ້ຽດາຍ ສຸຣາສານຕະມານະວະແກ້ບັນຫາອັນນີ້ ກໍກຶກອະທິບາຍອັນພະຍາຣາມະຕິຣາດນັ້ນແທ້ ເທວະດາກໍຍິນດີກໍພາຍດອກໄມ້ທິບລົງມາບູຊາ ສຸຣາສານຕະມານະວະຊ້ອງໜ້າຄົນທັງຫລາຍເປັນຕົ້ນວ່າ ຄົນໃຊ້ພະຍາຣາມະຣາດນັ້ນແລ້ວ ເຂົາກໍໃຫ້ສຽງສາທຸການມາກນັກ ແກ່ສຸຣາສານຕະມານະວະນັ້ນແລ້ວ ເຂົາກໍອຳລາພະຍາເກສະຣາດແລ້ວ ກໍຄືນເມືອໄຫວ້ພະຍາຣາມະຣາດຊູ່ອັນທັ້ນແລ ອັນວ່າສຸຣາສານຕະມານະວະຜູ້ນັ້ນ ພະຍາເກສະຣາດກໍໃຫ້ກາມັນຕະຣະສັກ ຕັ້ງໄວ້ໃນທີ່ອັນເປັນເສນາໃຫຍ່ ໃຫ້ຍົດສັກສຳປັດຕິປະຣິວານກໍມາກນັກ ຂຶ້ນຊື່ໃໝ່ວ່າ ສຸມະນະກິດຕະເສນາທັ້ນແລ ພະຍາຣາມະຣາດ ກໍຮູ້ຂ່າວສານວ່າ ມານະວະຜູ້ນັ້ນມີພະໜຍາມາກນັກດັ່ງນັ້ນ ກໍຈິ່ງໃຊ້ມາໄຫວ້ ຂໍເອົານຳພະຍາເກສະຣາດນັ້ນດ້ວຍຄຳວ່າດັ່ງນີ້ ດູລາພະຍາເຈົ້າເກສະຣາດສະຫາຍຮັກສ່ວນວ່າມານະວະຜູ້ຮູ້ແກ້ບັນຫານັ້ນ ພິວ່າສະຫາຍບໍ່ໃຫ້ກາມັນຕະຣະສັກທີ່ອັນເປັນໃຫຍ່ດັ່ງນັ້ນ ຂ້າກໍຂໍດອມມະຫາຣາຊະເຈົ້າມາຕັ້ງໄວ້ໃນທີ່ອັນເປັນເສນາໃຫຍ່ ເພື່ອວ່າໄວ້ໃຫ້ແກ້ບັນຫາຕາງຫູຕາງຕາແທ່ງຂ້າສະຫາຍດາຍ ເມື່ອນັ້ນພະຍາເກສະຣາດກ່າວວ່າ ດູລາຄົນໃຊ້ ສ່ວນວ່າມານະວະຜູ້ນີ້ເຮົາກໍຕັ້ງໄວ້ໃນທີ່ກາມັນຕະຣະສັກອັນໃຫຍ່ໃສ່ສູງແລ້ວ ທ່ານຈິ່ງເມືອກ່າວຄອບພະຍາສະຫາຍເຮົາພຸ້ນດັ່ງຍີ້ເທີ້ນ ວ່າດັ່ງນີ້ແລ້ວ ກໍສົ່ງຄົນໃຊ້ເມືອແລ ຕັ້ງແຮກແຕ່ສຸຣາສານຕະມານະວະ ໄດ້ເປັນເສນາໃຫຍ່ແລ້ວ ກໍລະເສັ້ຽຍັງກຳອັນກະທຳຜິດ ທຸດຈະຣິດຊູ່ປະການ ມີເຫລົ້າແລະຢາເປັນຕົ້ນທັ້ນແລ ຫອນຍ່ອມປະກອບໄປດ້ວຍສະຕິພະໜຍາປັນຍາມາກນັກ ເປັນວິຣິຍະສະຕິສັດທາສັບປຸຣິສະຜູ້ດີ ມີຈິດໃຈກວ້າງຂວາງມາກນັກແລ ຫອນຍ່ອມໃຫ້ໂອວາດຄຳສອນທຸກຄົນວ່າ ໃຫ້ລະເສັ້ຽຍັງທຸດຈະຣິດອັນບໍ່ດີເສັ້ຽ ແລ້ວກໍເອົາລ້ຽງໄວ້ໃຫ້ເປັນອາສາຣາຊະກິດຈະການຕົນຊູ່ອັນທັ້ນແລ້ວ ແຕ່ພະຍາເກສະຣາດໄດ້ເສນາຜູ້ດີມີພະໜຍາດັ່ງນັ້ນ ພະຍາທັງສອງກໍມີໃຈອາໄລໄມຕິອັນຍິ່ງ ຈິ່ງໃຊ້ຂ່າວສານຢື້ຢາມຖາມຂ່າວຫາກັນຊູ່ປີບໍ່ຂາດສາຍ ເປັນນິຣັນຕະຣະທັ້ນແລ ພະຍາເກສະຣາດກໍໄດ້ລາບພະສັກການອັນມາກຫລາຍທຸກວັນແລ ກ່າວຕຳນານກະດູກທິວຄົນ ກໍແລ້ວທໍ່ນີ້ກ່ອນແລ ຊາຕິທ້າວພະຍາ ເສນາອາມາດທັງຫລາຍຄືດບ້ານຄືດເມືອງນີ້ ເພິງສະແຫວງຫາບຸກຄະລະຜູ້ມີພະໜຍາ ປັນຍາອັນກ້າອັນຄົມສະຫລາດອາດຮູ້ໃນຣາຊະກິດທັງມວນ ມີຕົ້ນວ່າແຂກບ້ານນາຍເມືອງມານັ້ນແລ ເຫດດັ່ງນັ້ນ ອາຈານເຈົ້າຈິ່ງກ່າວໄວ້ໃຫ້ເປັນທີ່ຫອມແກ່ຄົນທັງຫລາຍເມືອໜ້າແລ ຈິ່ງພິຈາລະນາດູໃນກິດຈະທັງມວນທຸກອັນໃຫ້ແຈ້ງກໍ່ເທີ້ນ ກ່າວຕຳນານມູລະຕັນໄຕ ກໍສະເດັດບໍລະບວນຄວນເທົ່ານີ້ກ່ອນແລນາ ນິດຖິຕັງ ກໍແລ້ວເທົ່ານີ້ກ່ອນແລ.

THE TOYOTA FOUNDATION

ພິມທີ່ ໂຮງພິມແຫ່ງລັດ